| ໝວດວິຊາສະເພາະ | ສາຍສ້າງຄູມັດທະຍົມ |
| --- | --- |

# ວັນນະຄະດີປັດຈຸບັນ




ສົກ 2023

# ວັນນະຄະດີປັດຈຸບັນ

| ສາຍ ພາສາລາວ ລະບົບ 4 ປີ | ປີທີ 3 | ພາກຮຽນ2 |
|---|---|---|

ຮຽບຮຽງໂດຍ:

ທ່ານ ພູວົງ ຄໍາມະນີວົງ

ທ່ານ ສຸລິໄຊ ສີຜາຣາດ

ກວດແກ້ໂດຍ:

ທ່ານ ອຈ ປທ ນ ຂັນຄໍາ ຈັນທະວົງສັກ

ທ່ານ ອຈ ນ ຄໍາສະຫວັນ ຈັນສີຍະວົງ

ທ່ານ ຊອ ປທ ນ ບົວສະຫວັນ ທອນສີສົມບັດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ວິທະຍາໄລຄູສາລະວັນ
ຫ້ອງການວິທະຍາສາດສັງຄົມ

ເລກທີ 025 /ສຄ

# ໃບຮັບຮອງ
# ການກວດແກ້ການຮຽບຮຽງປຶ້ມປະກອບການສອນ
# ຫົວຂໍ້: ວັນນະຄະດີປັດຈຸບັນ ລະບົບ 12+4 ສາຍພາສາລາວ ປີ3

**ຫ້ອງການ:** ວິທະຍາສາດສັງຄົມ

**ຜູ້ຮຽບຮຽງປຶ້ມປະກອບການສອນ:**

ທ່ານ ພູວົງ ຄຳມະນີວົງ

ທ່ານ ສຸລິໄຊ ສີພາຣາດ

| **ຄະນະກຳມະການກວດສອບ** | **ລາຍເຊັນ** |
|---|---|
| ທ່ານ ອຈ ປທ ນາງ ຄຳຊຽງ ຈັນທະວົງສັກ | (signature) |
| ທ່ານ ອຈ ນາງ ຄຳສະຫວັນ ຈັນສີຍະວົງ | (signature) |
| ທ່ານ ຊອ ປທ ນາງ ບົວສະຫວັນ ທອນສີສົມບັດ | (signature) |

**ທີ່ສາລະວັນ, ວັນທີ** 4.5.2023

**ຫ້ອງການວິທະຍາສາດສັງຄົມ**

ນ. ຄຳຊຽງ ຈັນທະວົງສັກ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

໙໙໙໙໑໑໑໑

ວິທະຍາໄລຄູສາລະວັນ

ສະພາວິທະຍາສາດ

ເລກທີ 88 /ສພ.ວສ

# ໃບຮັບຮອງ

## ອະນຸມັດຜ່ານການຮັບຮອງການຮຽບຮຽງປຶ້ມປະກອບການສອນ

## ຫົວຂໍ້: ວັນນະຄະດີປັດຈຸບັນ ລະບົບ 12+4 ສາຍພາສາລາວ ປີ3

- **ອີງຕາມ:** ວິໄສທັດຮອດປີ 2030 ຍຸດທະສາດຮອດປີ 2025 ແລະແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ.
- **ອີງຕາມ:** ແຜນປັບປຸງຄຸນນະພາບ QA ຂອງກະຊວງສຶກສາທິການ ແລະ ກິລາ, ໃນມາດຕະຖານທີ 10 ຕົວຊີ້ວັດທີ 48-50 ການຄົ້ນຄວ້າວິທະຍາສາດ ແລະ ການບໍລິການ.
- **ອີງຕາມ:** ຂໍ້ຕົກລົງວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ ສະພາວິທະຍາສາດຂອງວິທະຍາໄລຄູສາລະວັນ ສະບັບເລກທີ 0640/ວຄວ, ລົງວັນທີ 17 ກຸມພາ 2022.

ຈາກຜົນການກວດສອບ-ກວດກາທາງດ້ານເນື້ອໃນ ແລະ ຫຼັກການ, ອະນຸກຳມະການສະພາເຫັນວ່າ ການຮຽບຮຽງເອກະສານປະກອບການສອນວິຊາ: ວັນນະຄະດີປັດຈຸບັນ ລະບົບ 12+4 ສາຍພາສາລາວ ປີທີ 3 ປະຈຳສົກຮຽນ 2022-2023 ສະພາວິທະຍາສາດຈຶ່ງໄດ້ຮັບຮອງເອົາປຶ້ມເຫຼັ້ມນີ້ເປັນສ່ວນໜຶ່ງຂອງຜົນງານທາງວິທະຍາສາດ ແລະ ເປັນລິຂະສິດຂອງວິທະຍາໄລຄູສາລະວັນ.

| **ຄະນະກຳມະການກວດສອບ** | **ລາຍເຊັນ** |
| --- | --- |
| ທ່ານ ອຈ ປທ ນາງ ຄຳຊີງ ຈັນທະວົງສັກ | ________ |
| ທ່ານ ອຈ ນາງ ຄຳສະຫວັນ ຈັນສີຍະວົງ | ________ |
| ທ່ານ ຊອ ປທ ນາງ ບົວສະຫວັນ ທອມສີສົມບັດ | ________ |

ວິທະຍາໄລຄູສາລະວັນ

**ທີ່ສາລະວັນ, ວັນທີ** 04 MAY 2023

**ປະທານສະພາວິທະຍາສາດ**

ອຈ. ນ ສົມປອງ ແສນທະວິສຸກ

# ຄຳນຳ

ເອກະສານປະກອບການຮຽນ-ການສອນ ວິຊາ ວັນນະຄະດີປັດຈຸບັນ ປີ 3 ສາຍຄູພາສາລາວ-ວັນນະຄະດີ ເຫຼັ້ມນີ້ ໄດ້ຮັບການຮຽບຮຽງຂຶ້ນຕາມຫຼັກສູດສ້າງຄູມັດທະຍົມ ລະບົບ 12+4. ການຄົ້ນຄວ້າຮຽບຮຽງເອກະສານ ວິຊາ ວັນນະຄະດີປັດຈຸບັນນີ້ ໄດ້ອີງໃສ່ເອກະສານທັງພາຍໃນ ແລະ ຕ່າງປະເທດ ໂດຍໄດ້ຮັບການຮ່ວມມືຈາກຫຼາຍ ພາກສ່ວນ.

ໂຄງສ້າງບົດສອນ ວິຊາ ວັນນະຄະດີປັດຈຸບັນ ຫຼັກສູດສ້າງຄູມັດທະຍົມ ລະບົບ 12+4 ປະກອບມີ 4 ບົດຄື ບົດທີ1 ບົດກອນສວຍງາມຮັ່ງມີ, ບົດທີ2 ບົດກະວີ ຫອມກິ່ນຈຳປາ, ບົດທີ3 ບົດນະວະນິຍາຍ ກອງພັນທີສອງ, ບົດ ທີ4 ບົດເລື່ອງ ຜູ້ສືບທອດ. ຫຼັງຈາກທີ່ໄດ້ຮຽນຕາມຫຼັກສູດ ຫຼື ເນື້ອໃນທີ່ບັນຈຸໃນເອກະສານປະກອບການຮຽນ-ການ ສອນ ວິຊາ ວັນນະຄະດີປັດຈຸບັນ ແລ້ວ ນັກຮຽນຄູຈະໄດ້ຮັບຮູ້ຄື:

ວັນນະຄະດີປັດຈຸບັນ ເຊິ່ງປະກອບມີຊີວະປະຫວັດຫຍໍ້ ແລະ ພາລະກິດປະດິດແຕ່ງຂອງນັກປະພັນ ແລະ ນັກກະວີ, ເຄົ້າກຳເນີດ ແລະ ການວິໄຈບົດເລື່ອງ, ບົດກະວີ.

ຜູ້ຮຽບຮຽງຫວັງຢ່າງຍິ່ງວ່າ ເອກະສານປະກອບການຮຽນ-ການສອນວິຊາວັນນະຄະດີປັດຈຸບັນ ເຫຼັ້ມນີ້ຈະ ເປັນ ປະໂຫຍດໃຫ້ແກ່ການສຶກສາຮ່ຳຮຽນ ເຖິງຢ່າງໃດກໍຕາມຖ້າວ່າຍັງມີບ່ອນໃດບໍ່ຖືກຕ້ອງຊັດເຈນຂໍໃຫ້ທ່ານສົ່ງຂໍ້ ຄວາມ ແລະ ຂ້າພະເຈົ້າດ້ວຍເພື່ອຈະໄດ້ນຳໄປພິຈາລະນາປັບປຸງໃຫ້ດີຂຶ້ນໃນການຮຽບຮຽງຄັ້ງໜ້າ

# ສາລະບານ


ຄຳນຳ ................................................................ a
ສາລະບານ ................................................................ b
ບົດທີ 1 ................................................................ 1
ບົດກອນ "ເມືອງລາວສວຍງາມຮັ່ງມີ" ................................................................ 1
1. ປະຫວັດຫຍໍ້ ແລະ ພາລະກິດປະດິດແຕ່ງຂອງນັກກະວີ "ພູມີ ວົງວິຈິດ" ................................................................ 1
3. ການວິໄຈບົດກະວີ "ເມືອງລາວສວຍງາມຮັ່ງມີ" ................................................................ 2
4. ສິລະປະການປະດິດແຕ່ງ ................................................................ 8
ບົດກອນ "ເມືອງລາວສວຍງາມຮັ່ງມີ" ................................................................ 11
ບົດຕົວຢ່າງ ................................................................ 18
ບົດວິໄຈບົດກອນ "ສິ້ນແມ່" ................................................................ 18
1. ທີ່ມາຂອງບົດກອນ ................................................................ 18
2. ເນື້ອໃນລວມ ................................................................ 18
3. ແບ່ງຕອນ ................................................................ 18
4. ວິເຄາະ ................................................................ 18
5. ສະຫຼຸບ ................................................................ 19
ບົດກອນ "ສິ້ນແມ່" ................................................................ 19
ບົດຕົວຢ່າງ ................................................................ 20
ບົດວິໄຈບົດກອນ "ຄະຕິສອນໃຈ" ................................................................ 20
1. ທີ່ມາຂອງບົດກອນ ................................................................ 20
2. ເນື້ອໃນລວມ ................................................................ 20
3. ແບ່ງຕອນ ................................................................ 20
4. ວິເຄາະ ................................................................ 20
5. ສະຫຼຸບ ................................................................ 21
ບົດກອນ "ຄະຕິສອນໃຈ" ................................................................ 21
ບົດຕົວຢ່າງ ................................................................ 22
ບົດວິໄຈບົດກອນ "ຮອຍອະດີດ" ................................................................ 22
1. ທີ່ມາຂອງບົດກອນ ................................................................ 22
2. ເນື້ອໃນລວມ ................................................................ 22
3. ແບ່ງຕອນ ................................................................ 22
4. ວິເຄາະ ................................................................ 22
5. ສະຫຼຸບ ................................................................ 24
ບົດກອນ "ຮອຍອະດີດ" ................................................................ 24
ບົດຕົວຢ່າງ ................................................................ 26
ບົດວິໄຈບົດກອນ "ໜ້າທີ່ຂອງຊາວໜຸ່ມ" ................................................................ 26
2. ເນື້ອໃນລວມ ................................................................ 26
3. ແບ່ງຕອນ ................................................................ 26
4. ວິເຄາະ ................................................................ 26
5. ສະຫຼຸບ ................................................................ 27

ບົດກອນ “ໜ້າທີ່ຂອງຊາວໜຸ່ມ” ........ 27
ບົດທີ 2 ........ 28
ບົດກອນ “ຫອມກິ່ນຈຳປາ” ........ 28
1. ປະຫວັດ ແລະ ພາລະກິດການປະດິດແຕ່ງຂອງ ທ່ານ ຄຳພໍ ພອງສະບາ ........ 28
2. ເຄົ້າກຳເນີດ ຫຼື ທີ່ມາຂອງບົດກະວີ “ຫອມກິ່ນຈຳປາ” ........ 28
1. ເນື້ອໃນໃຈຄວາມຂອງບົດ ........ 29
2. ແບ່ງຕອນ ........ 29
3. ການວິໄຈບົດກະວີ “ຫອມກິ່ນຈຳປາ” (ວິໄຈຕາມເນື້ອໃນໃຈຄວາມຂອງບົດ) ........ 29
4. ສີລະປະການປະດິດແຕ່ງ ........ 32
ບົດຕົວຢ່າງ ........ 33
ບົດວິໄຈບົດກອນ “ຄຸນພໍ່ ແລະ ແມ່” ........ 33
1. ທີ່ມາຂອງບົດກອນ ........ 33
2. ເນື້ອໃນລວມ ........ 33
3. ການແບ່ງຕອນ ........ 33
4. ການວິເຄາະ ........ 33
5. ດ້ານສະຫຼຸບ ........ 34
ບົດຕົວຢ່າງ ........ 35
ບົດກອນ “ຄຸນພໍ່ ແລະ ແມ່” ........ 35
ບົດຕົວຢ່າງ ........ 35
ບົດວິໄຈບົດກອນ “ ຄົມກະວີ ” ........ 35
1. ທີ່ມາຂອງບົດກອນ ........ 35
2. ເນື້ອໃນລວມ ........ 35
3. ການແບ່ງຕອນ ........ 35
4. ການວິເຄາະ ........ 36
5. ດ້ານສະຫຼຸບ ........ 36
ບົດກອນ “ຄົມກະວີ” ........ 37
ບົດຕົວຢ່າງ ........ 37
ບົດວິໄຈບົດກອນ "ແມ່" ........ 37
1. ທີ່ມາຂອງບົດກອນ ........ 37
2. ເນື້ອໃນລວມ ........ 37
3. ການແບ່ງຕອນ ........ 37
4. ວິເຄາະ ........ 38
5. ສະຫຼຸບ ........ 38
ບົດຕົວຢ່າງ ........ 39
ບົດວິໄຈບົດກອນ “ຮັກ ແລະ ຄິດເຖິງ” ........ 39
1. ທີ່ມາຂອງບົດກອນ ........ 39
2. ເນື້ອໃນລວມ ........ 39
3. ແບ່ງຕອນ ........ 39
4. ການວິເຄາະ ........ 39
4. ດ້ານສະຫຼຸບ ........ 40
ບົດກອນ “ຮັກ ແລະ ຄິດເຖິງ” ........ 40

1. ທີ່ມາຂອງບົດກອນ ..... 41
2. ເນື້ອໃນລວມ ..... 41
3. ການແບ່ງຕອນ ..... 41
4. ວິເຄາະ ..... 41
5. ສະຫຼຸບ ..... 42
ບົດຕົວຢ່າງ ..... 43
ບົດວິໄຈບົດກອນ “ຄົນຮຸ່ນໃໝ່” ໂດຍ ດາວວຽງ ບຸດນາໂຄ ..... 43
ບົດຕົວຢ່າງ ..... 44
ບົດວິໄຈບົດກອນ ຮັກຊາດຕ້ອງໃຊ້ເງິນກີບ” ..... 44
1. ທີ່ມາຂອງບົດກອນ ..... 44
2. ເນື້ອໃນລວມ ..... 44
3. ການແບ່ງຕອນ ..... 44
4. ວິເຄາະ ..... 44
5. ສະຫຼຸບ ..... 45
ບົດກອນ ..... 46
“ຮັກຊາດຕ້ອງໃຊ້ເງິນກີບ” ໂດຍ ສົມໃຈ ຈັນທະວົງ ..... 46
ບົດທີ 3 ..... 47
ບົດນະວະນິຍາຍ ກອງພັນທີສອງ ..... 47
1. ປະຫວັດຫຍໍ້ຂອງນັກແຕ່ງ ແລະ ພາລະກິດປະດິດແຕ່ງຂອງນັກປະພັນ ສ.ບຸບຜາ ນຸວົງ ..... 47
2. ເນື້ອໃນກອງພັນທີສອງ 4 ເຫຼັ້ມໂດຍຫຍໍ້ ..... 49
3. ສິລະປະການປະດິດແຕ່ງ ..... 53
ບົດຕົວຢ່າງ ..... 54
ບົດວິໄຈບົດເລື່ອງ “ກຸຫຼາບປ່ຽນສີ” ..... 54
1. ທີ່ມາຂອງເລື່ອງ ..... 54
2. ເນື້ອໃນລວມຂອງເລື່ອງ ..... 54
3. ແບ່ງຕອນ ..... 54
4. ວິເຄາະ ..... 54
5. ສະຫຼຸບ ..... 55
ບົດເລື່ອງ ກຸຫຼາບປ່ຽນສີ ..... 55
ບົດຕົວຢ່າງ ..... 60
ບົດວິໄຈນະວະນິຍາຍ ..... 60
ເລື່ອງ “ສອງຟາກຝັ່ງ” ເຫຼັ້ມທີ 1 ແຕ່ງໂດຍ ສ. ບຸບຜານຸວົງ ..... 60
ນະວະນິຍາຍເລື່ອງ ..... 64
“ສອງຟາກຝັ່ງ” ໂດຍ ສ. ບຸບຜານຸວົງ ..... 64
ບົດອ່ານເພີ່ມ ..... 84
ບົດເລື່ອງ “ເສັ້ນທາງແຫ່ງຊີວິດ” ..... 84
ບົດທີ 4 ..... 88
ເລື່ອງ “ຜູ້ສືບທອດ” ..... 88
1. ຊີວະປະຫວັດຫຍໍ້ ແລະ ຜົນງານການປະດິດແຕ່ງຂອງ ທ່ານ ບົວແກ້ວ ຈະເລີນລັງສີ ..... 88
2. ເຄົ້າກຳເນີດ ຫຼື ທີ່ມາຂອງບົດເລື່ອງ “ຜູ້ສືບທອດ” ..... 88
3. ດ້ານສິລະປະການແຕ່ງ ..... 91

ບົດເລື່ອງ "ຜູ້ສືບທອດ"...92
ບົດຕົວຢ່າງ...100
ບົດວິໄຈບົດເລື່ອງ "ແຍກທາງຄືແຍກຮັກ"...100
ບົດອ່ານເພີ່ມ...104
ເລື່ອງ ບ່າວລາວ-ສາວຫວຽດ...104
ບົດຕົວຢ່າງ "ບົວໃນຕົມ"...108
ເອກະສານອ້າງອີງ...112

# ບົດທີ 1

# ບົດກອນ "ເມືອງລາວສວຍງາມຮັ່ງມີ"

## 1. ປະຫວັດຫຍໍ້ ແລະ ພາລະກິດປະດິດແຕ່ງຂອງນັກກະວີ "ພູມີ ວົງວິຈິດ"



ທ່ານ ພູມີ ວົງວິຈິດ ເກີດເມື່ອວັນທີ 6 ເມສາ ປີ 1909 ທີ່ບ້ານ ຄາຍ, ຕາແສງຍອດງື່ມ, ເມືອງແປກ, ແຂວງຊຽງຂວາງ. ເປັນບຸດຂອງ ທ່ານ ແພງ ວົງວິຈິດ ແລະ ແມ່ ບຸນເທດ ວົງວິຈິດ. ພາຍຫຼັງທ່ານຮຽນ ຈົບຊັ້ນມັດທະຍົມປີ 1 ທ່ານໄດ້ເປັນສະໝຽນ ອະທິບໍດີຜູ້ປົກຄອງ ແຂວງໃນປີ 1927. ຕໍ່ມາໄດ້ຮັບແຕ່ງຕັ້ງເປັນ ອຸປະຣາດຊັ້ນທີ 1 ແຫ່ງ ລາຊະການປົກຄອງເມືອງທັງເປັນຫົວໜ້າ ສານປະຈໍາເມືອງຄູນ ແຂວງ ຊຽງຂວາງ. ປີ 1942 ເປັນເຈົ້າເມືອງ ເມືອງວຽງຈັນ. ໃນກອງປະຊຸມ ໃຫຍ່ແນວລາວຕໍ່ຕ້ານທົ່ວປະເທດ ປີ 1950 ທ່ານໄດ້ຖືກເລືອກຕັ້ງເປັນ ກໍາມະການສູນກາງແນວລາວ ອິດສະຫຼະ ແລະ ໄດ້ຖືກແຕ່ງຕັ້ງເປັນ ລັດຖະມົນຕີວ່າການ ກະຊວງມະຫາດໄທຂອງລັດຖະບານລາວຕໍ່ຕ້ານປີ 1991 ອີງໃສ່ ອາຍຸກະສຽນ ແລະ ຄວາມມຸ່ງມາດປາຖະໜາຂອງທ່ານເອງກອງ ປະຊຸມໃຫຍ່ຄັ້ງທີ 5 ຂອງພັກປະຊາຊົນ ປະຕິວັດລາວໄດ້ແຕ່ງຕັ້ງ ໃຫ້ເປັນທີ່ເປີກສາຄະນະບໍລິຫານງານສູນກາງພັກເຊິ່ງທ່ານກໍໄດ້ ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນ ການນໍາພາລວມຂອງໝູ່ຄະນະດ້ວຍການອຸທິດເຫື່ອແຮງ, ສະຕິປັນຍາ, ຄວາມຮູ້ ຄວາມສາມາດ ແລະ ບົດຮຽນອັນອຸດົມ ຮັ່ງມີຈາກພຶດຕິກໍາແຫ່ງການປະຕິວັດຈົນເຖິງວິນາທີສຸດທ້າຍຂອງຊີວິດ. ດ້ວຍຜົນງານ ແລະ ຄຸນງາມຄວາມດີອັນໃຫຍ່ ຫຼວງຂອງທ່ານທີ່ມີຕໍ່ພາລະກິດປະຕິວັດ, ຮັບໃຊ້ປະເທດຊາດ ແລະ ປະຊາຊົນ ພັກ ແລະ ລັດໄດ້ມອບຫຼຽນຄໍາແຫ່ງຊາດ ເຊິ່ງເປັນຫຼຽນກຽດຕິຄຸນສູງສຸດຂອງຊາດເຮົາ, ທັງໄດ້ມອບຫຼຽນ ໄຊ, ຫຼຽນກາຈໍານວນຫຼວງຫຼາຍ.

**+ ພາລະກິດການປະດິດແຕ່ງ**

ທ່ານ ພູມີ ວົງວິຈິດ ເປັນຜູ້ນໍາທີ່ດີເດັ່ນຜູ້ໜຶ່ງຂອງການປະຕິວັດເຊິ່ງປະຊາຊົນລາວທັງຊາດນັບຖື ແລະ ຮັກແພງເລີ່ມແຕ່ ໄລຍະຕົ້ນຂອງການປະຕິວັດເພິ່ນໄດ້ຂຽນບົດທິດສະດີຫຼາຍເຫຼັ້ມ, ເພື່ອຕໍ່ສູ້ກັບສັດຕູອິບຣິມ ພະນັກງານ-ນັກຮົບປະຕິວັດ ແລະ ໂຄສະນາຕໍ່ຕ່າງປະເທດແຕ່ໜ້າເສຍດາຍບົດທີ່ທ່ານຂຽນໃນສະໄໝນັ້ນຖືກສູນ ເສຍໄປຫຼາຍ.

ຄຽງຄູ່ກັບການຂຽນບົດວິຈານການເມືອງ (ເປັນນັກການເມືອງ) ເພິ່ນຍັງເປັນນັກກະວີປະຕິວັດຜູ້ອາວຸໂສ, ເປັນ ນັກວັດທະນະທໍາທີ່ມີບົດຮຽນທ່ານມີຄວາມຮູ້ເລິກເຊິ່ງກວ້າງຂວາງກ່ຽວກັບວັດທະນະທໍາຂອງຊາດລາວໂດຍ ສະເພາະ ແມ່ນປະຫວັດສາດ, ວັນນະຄະດີສິລະປະກໍາ, ອັກສອນສາດຄວາມດີເດັ່ນ. ອີກດ້ານໜຶ່ງແມ່ນທ່ານກໍາແໜ້ນສິລະປະການ ແຕ່ງກອນ-ໂຄງສ້າງຕາມແບບມູນເຊື້ອທັນປ່ຽນໃຫ້ມີເນື້ອໃນປະຕິວັດເພື່ອຮັບໃຊ້ພາລະກິດຂອງ ການປະຕິວັດໄດ້ເວົ້າວ່າ ທ່ານ ພູມີ ວົງວິຈິດ ເປັນຜູ້ລິເລີ່ມນໍາເອົາທິດສະດີສັດຈະທັດສັງຄົມນິຍົມເຂົ້າມາສູ່ວັນນະ ຄະດີລາວໂດຍສະເພາະແມ່ນ ປະເພດກາບກອນ. ທ່ານເລີ່ມແຕ່ງບົດກອນ-ບົດປະພັນແຕ່ລະໄລຍະກ່ອນບໍ່ທັນອອກ ເຮັດການປະຕິວັດແຕ່ບົດເຫຼົ່ານັ້ນ ສູນຫາຍເກືອບໝົດຈົນເພິ່ນເອງກໍ່ບໍ່ສາມາດຈື່ຈໍາສໍານວນໄດ້ເມື່ອເຖິງສະໄໝທີ່ໄປ ກໍ່ສ້າງພື້ນຖານປະຕິວັດຢູ່ພາກເໜືອ (1946-1950) ເພິ່ນກໍ່ໄດ້ຂຽນຫຼາຍບົດໂດຍໃສ່ນາມປາກກາວ່າ ນາຍຄາຍຄາ ລູກເມືອຍັງ.

ປີ 1967 ເພິ່ນໄດ້ແຕ່ງປຶ້ມໄວຍາກອນລາວເຊິ່ງເປັນປຶ້ມໄວຍາກອນເຫຼັ້ມທໍາອິດຂອງລາວໃນເຂດປົດປ່ອຍ ເພື່ອຊ່ວຍໃຫ້ການນໍາໃຊ້ຫຼັກໄວຍາກອນ ລາວ-ພາສາລາວໃຫ້ຖືກຕ້ອງ ແລະ ນໍາໃຊ້ເຂົ້າໃນການສິດສອນໃນ

ໂຮງຮຽນທຸກຊັ້ນບັນດາບົດທີ່ທ່ານຂຽນມາຮອດປະຈຸ ບັນນີ້ບໍ່ຫຼາຍເທົ່າໃດສ່ວນບົດທີ່ຍັງເຫຼືອແມ່ນບັນດາບົດທີ່ພິມໄວ້ໃນປຶ້ມໄວຍາກອນລາວ, ບົດກອນເມືອງລາວສວຍງາມ ຮັ່ງມີ, ກ້ຽວສາວແບບໃໝ່, ໜ້າທີ່ອາຍຸເຍົາວະຊົນ, ໜ້າທີ່ຊາວໜຸ່ມ, ໜ້າທີ່ກອງຫຼອນ.

ບັນດາບົດກອນທີ່ຍັງເຫຼືອນີ້ໄດ້ກາຍເປັນແບບຢ່າງອັນເດັ່ນຊັດໃຫ້ແກ່ນັກປະພັນນັກກະວີລາວໃນຣຸ່ນຕໍ່ໆມານັບ ທັງເນື້ອໃນແນວຄິດການເມືອງ-ສິລະປະການປະດິດແຕ່ງການໃຊ້ສັບພາສາຄຳເວົ້າຈຶ່ງເຮັດໃຫ້ມະຫາຊົນເຂົ້າໃຈບົດຂອງ ເພິ່ນໄດ້ງ່າຍເມື່ອອ່ານແລ້ວສາມາດທ່ອງຂຶ້ນໃຈໄດ້. ສະນັ້ນ, ຈຶ່ງສາມາດຊຶມເລິກເຂົ້າໃນໝູ່ມະຫາຊົນເປັນການ ປຸກລະດົມມະຫາຊົນໃຫ້ມີຄວາມຕື່ນຕົວປະຕິວັດກາຍເປັນພະລັງແຮງອັນໜຶ່ງຊຸກຍູ້ໃຫ້ເຂົາເຈົ້າລຸກຂຶ້ນເຮັດການປະຕິວັດ ເພື່ອຂັບໄລ່ພວກຣຸກຣານ.

ສັງລວມແລ້ວເຫັນວ່າໃນບົດກອນຂອງເພິ່ນຕົ້ນຕໍແມ່ນສຸມໃສ່ແກ້ໄຂບັນຫາທັດສະນະກ່ຽວກັບຄວາມງາມເຊິ່ງ ກາບກອນມຸນເຊື້ອຂອງລາວເຄີຍເວົ້າເຖິງຄວາມງາມແບບໃໝ່ຂອງນັກຈິດຕະວິທະຍາມາກ-ເລນິນຄວາມງາມນີ້ໄດ້ຕິດ ພັນກັບເນື້ອໃນແນວຄິດແລະຮູບການປະດິດແຕ່ງກາບກອນເປັນຄວາມງາມທີ່ຕິດພັນກັບຄວາມຮັກທຳມະຊາດຮັກບ້ານ ເກີດເມືອງນອນ, ຮັກເພື່ອນມິດສະຫາຍ. ດັ່ງນັ້ນ, ຈຶ່ງເຫັນວ່າການແກ້ໄຂບັນຫາກ່ຽວກັບຄວາມງາມນີ້ແມ່ນບັນຫາ ໃຫຍ່-ບັນຫາໃໝ່ເພື່ອຊ່ວຍແກ້ໄຂບັນຫາແນວຄິດ-ທັດສະນະຫຼັກໝັ້ນໂລກະທັດ-ຊີວະທັດ ແລະ ວາດດຳລົງຊີວິດຂອງ ທຸກຄົນໃນດ້ານສິລະປະການແຕ່ງໄດ້ເວົ້າວ່າ ບັນດາວັນນະກຳຕ່າງໆຂອງ ທ່ານ ພູມີ ວົງວິຈິດ ເປັນບົດກອນແບບຢ່າງ, ເປັນບົດກອນຂັ້ນອາຈານໃນການໝູນໃຊ້ສິນລະປະພາສາຄຳເວົ້າໃນກາບກອນເພິ່ນໄດ້ປະສົບຜົນສຳເລັດຢ່າງງົດງາມໃນ ການນຳໃຊ້ຮູບແບບການແຕ່ງກາບກອນແບບເກົ່າເພື່ອເອົາເນື້ອໃນປະຕິວັດເຂົ້າໃສ່ຜົນສຳເລັດດັ່ງກ່າວນັ້ນເປັນການ ຫັນປ່ຽນຢ່າງໃຫຍ່ຫຼວງໃນມູນເຊື້ອກາບກອນລາວເຮັດໃຫ້ກາບກອນລາວຕິດພັນກັບເນື້ອໃນປະຕິວັດກາຍເປັນກອນ ປະຕິວັດເປັນກາບກອນແບບສັດຈະທັດສັງຄົມນິຍົມໄດ້ຢ່າງມະຫັດສະຈັນ.

## 2. ເຄົ້າກຳເນີດ ຫຼື ທີ່ມາຂອງບົດກະວີ “ເມືອງລາວສວຍງາມຮັ່ງມີ”




ບົດກອນ “ເມືອງລາວສວຍງາມຮັ່ງມີ” ຂອງທ່ານພູມມີວົງວິຈິດ ໄດ້ປະດິດແຕ່ງອອກໃນສະໄໝຕໍ່ຕ້ານພວກຈັກກະພັດອາເມລິກາໃນຊຸມປີ 60 ຂອງສະຕະວັດທີ XX ຄັດຈາກປຶ້ມໄວຍາກອນລາວຈັດພິມເທື່ອທີ່ໜຶ່ງ, ພະແນກສຶກ ສາກົມການພິມ ແລະ ຈຳໜ່າຍ ໃນປີ ຄສ 1967 (ຢູ່ເຂດປົດປ່ອຍເມືອງວຽງໄຊ ແຂວງຫົວພັນ) ໜ້າ 221-234.

## 3. ການວິໄຈບົດກະວີ “ເມືອງລາວສວຍງາມຮັ່ງມີ”

### 1. ເນື້ອໃນໃຈຄວາມຂອງບົດ

ບົດກະວີ “ເມືອງລາວສວງາມຮັ່ງມີ ” ເວົ້າເຖິງຄວາມສວຍງາມຮັ່ງມີດ້ານຊັບພະກອນທຳມະຊາດ, ຮີດຄອງປະເພນີ, ປູສະນີຍະສະຖານ ແລະ ອື່ນໆ. ແຕ່ປະຊາຊົນລາວທຸກຍາກຍ້ອນການຣຸກຮານຂອງພວກລ່າເມືອງຂຶ້ນ

ແບບເກົ່າ ແລະ ໃໝ່. ເມື່ອອິດບໍ່ລົນທົນບໍ່ໄດ້ຕໍ່ການກົດຂີ່ຂູດຮີດຂອງພວກຈັກກະພັດດັ່ງກ່າວປະຊາຊົນລາວຈຶ່ງຂຶ້ນຕໍ່ສູ້ຕາມຄວາມຮຽກຮ້ອງຂອງການປະຕິວັດເພື່ອປົດປ່ອຍຊາດ ແລະ ປົດປ່ອຍຕົນເອງ.

**2. ການແບ່ງຕອນ**

ບົດກະວີ "ເມືອງລາວສວຍງາມຮັ່ງມີ" ລວມທັງໝົດ 280 ວັກ ຫຼື 70 ກອນ ແບ່ງອອກເປັນ 4 ຕອນຄື:

**+ຕອນທີ 1** ແຕ່ຕົ້ນ ເຖິງ ບໍ່ຍອມໃຫ້ຮຸກຮານ ປະກອບມີ 40 ວັກ ຫຼື 10 ບາດຄຳກອນ

ເນື້ອໃນ ເວົ້າເຖິງທີ່ຕັ້ງຂອງປະເທດລາວທີ່ມີຊາຍແດນຕິດຈອດກັບຫຼາຍປະເທດແຕກຕ່າງກັນ.

**+ຕອນທີ 2** ແຕ່ເມືອງລາວ ເຖິງ ລາວໃຫ້ບໍ່ຈະເລີນ ປະກອບມີ 100 ວັກ ຫຼື 25 ບາດຄຳກອນ.

ເນື້ອໃນ ເວົ້າເຖິງຄວາມສວຍງາມຮັ່ງມີຂອງເມືອງລາວ.

**+ຕອນທີ 3** ແຕ່ເຮົານີ້ເກີນຮູ້ວ່າ ເຖິງ ວາງໄວ້ທີ່ວນະຄອນ ປະກອບມີ 116 ວັກ ຫຼື 29 ບາດຄຳກອນ.

ເນື້ອໃນ ເວົ້າເຖິງໂທດກຳຂອງຈັກກະພັດທີ່ກໍ່ຂຶ້ນເທິນແຜ່ນດິນລາວ.

**+ຕອນທີ 4** ແຕ່ລາວນີ້ທຸກເດືອດຮ້ອນ ເຖິງ ເມືອງບ້ານອອກຈາກມານ, ປະກອບມີ 24 ວັກ ຫຼື 6 ບາດຄຳກອນ.

ເນື້ອໃນ ເວົ້າເຖິງການລຸກຮື້ຂຶ້ນຂອງປະຊາຊົນຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງການປະຕິວັດເພື່ອປົດ ປ່ອຍປະເທດຊາດ, ປົດປ່ອຍຕົນເອງ ແລະ ສ້າງສາປະເທດຊາດໃຫ້ຈະເລີນຮຸ່ງເຮືອງ.

**+ ການວິໄຈບົດກະວີ ເມືອງລາວສວຍງາມຮັ່ງມີ"ວິໄຈຕາມການແບ່ງຕອນເພາະເຫດການບໍ່ຕໍ່ເນື່ອງ**

**ກ. ທີ່ຕັ້ງຂອງປະເທດລາວມີຊາຍແດນຕິດຈອດຫຼາຍປະເທດແຕກຕ່າງກັນ**

ປະເທດລາວລ້ານຊ້າງເປັນປະເທດໜຶ່ງທີ່ຕັ້ງຢູ່ແຫຼມອິນດູຈີນມີຊາຍແດນຕິດຈອດຫຼາຍປະເທດເຊັ່ນ:

- ທິດເໜືອຕິດກັບປະເທດຈີນກວ້າງໃຫຍ່ຕັ້ງຂະໜົງເໜັ່ງໄວ້ຂວາງຂັ້ນເຂດແດນ.
- ທິດບໍວລະພາ (ທິດຕາເວັນອອກ) ຕິດກັບປະເທດຫວຽດນາມ, ສະແດງອອກໃນບົດກອນຕອນໜຶ່ງທີ່ວ່າ:

  "...ມີປ່າດົງພູຜາ ພູຫຼວງເປັນແດນໃຫ້
  ສາມັກຄີຢູ່ເລື້ອຍ ຊໍ່ຊຸ້ນລຽນຊັ້ນ
  ຫວຽດນາມລາວນ້ອງພີ່ ບໍ່ມີມື້ຈືດຈາງ "

- ທາງທິດໃຕ້ ຫຼື ພາກໃຕ້ຕິດກັບປະເທດກຳປູຊາກໍເປັນປະເທດໜຶ່ງທີ່ນອນຢູ່ໃນວົງຄະນະຍາດບ້ານໃກ້ເຮືອນ ຄຽງປະຫວັດຄວາມສາມັກຄີກັນໃນການຕໍ່ສູ້ຕ້ານຈັກກະພັດລ່າເມືອງຂຶ້ນແບບເກົ່າ ແລະ ແບບໃໝ່ໃນຊຸມ ຄອງດຽວກັນ, ແຕ່ກ່ອນກໍ່ເຄີຍເດີນຕາມສັນຕິພາບເປັນກາງ.
- ປະເທດບ້ານໃກ້ເຮືອນຄຽງມີປະເພນີ ແລະ ວັດທະນະທຳຄ້າຍຄືກັນ. ດັ່ງຄຳກອນຕອນໜຶ່ງທີ່ວ່າ:

  "... ໂດຍເອົາລຳແມ່ນ້ຳ ນະທີຂອງໄຫຼຜ່ານ
  ຕັ້ງຢູ່ຄົນລະດ້ານ ສອງເບື້ອງແປງແດນ

ປະເທດໄທກໍ່ເປັນປະເທດໜຶ່ງທີ່ຖືກພວກຈັກກະພັດອາເມລິກາຮຸກຮານ ແລະ ເອົາປະເທດເປັນຖານທັບຂອງ ອາເມລິກາເພື່ອຮຸກຮານບັນດາປະເທດໃນແຫຼມອິນດູຈີນ ແຕ່ປະຊາຊົນໄທເຄີຍຊ່ວຍເຫຼືອໃຫ້ແກ່ການປະຕິວັດປົດປ່ອຍ ຊາດຂອງລາວເຮົາໄລຍະກ່ອນປີ 1945.

ທາງທິດຕາເວັນຕົກສ່ຽງເໜືອ (ພາຍັບ) ຕິດກັບປະເທດພະມ້າ (ມຽນມ້າ) ສະແດງອອກໃນບົດກອນທີ່ວ່າ:

ທາງຟາກຫ້ອງ ກ້ຳຝ່າຍພາຍັບ
ລາວກໍພົວພັນກັບ ເຂດແດນດິນກວ້າງ
ອັນຢູ່ທາງເທິງເບື້ອງ ນະທີຂອງໄຫຼຜ່ານ
ປະເທດມອນພະມ້າ ປະຊາເຊື້ອຮັ່ງມີ

ແຕ່ໃດມາປະເທດພະມ້າກໍເດີນຕາມເສັ້ນທາງສັນຕິພາບເປັນກາງ. ເມື່ອສັດຕູມາຮຸກຮານປະຊາຊົນພະມ້າກໍໄດ້ພ້ອມກັນລຸກຮື້ຂຶ້ນເຊັ່ນ ຕໍ່ສູ້ຕ້ານພວກຟາຊິດຍີ່ປຸ່ນໃນໄລຍະສົງຄາມໂລກຄັ້ງທີ 2 ແລະ ຕ້ານການຮຸກຮານຂອງພວກຈັກກະພັດອາເມລິກາ ອາດເວົ້າໄດ້ວ່າ ລາວກໍແມ່ນປະເທດໜຶ່ງທີ່ນອນຢູ່ໃນບັນດາປະເທດຕາເວັນຕົກສ່ຽງໃຕ້ມີຊາຍ ແດນທັງສີ່ຕິດກັບຫ້າປະເທດ ເຊິ່ງມີຄວາມສະດວກໃນການແລກປ່ຽນການຄ້າຂາຍ ແລະ ວັດທະນະທຳ

ສັງຄົມເຮັດ ໃຫ້ການສ້າງສາບູລະນະບ້ານເມືອງລາວໄດ້ຈະເລີນຮຸ່ງເຮືອງ, ຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການແກ້ໄຂດີຂຶ້ນເທື່ອລະກ້າວ.

ທຸກຢ່າງທຸກຂໍ້ຄວາມທີ່ຍົກຂຶ້ນມາລ້ວນແຕ່ສາມາດເປັນບົດພິສູດໃຫ້ພວກເຮົາເຫັນໄດ້ວ່າ ທ່ານ ພູມີ ວົງວິຈິດ ໄດ້ສະເໜີຄວາມສວຍງາມທາງດ້ານທຳມະຊາດອັນໂດດເດັ່ນ ເມືອງທີ່ປາກົດຢູ່ໃນທຸກພາກແຕ່ເໜືອຕະຫຼອດໃຕ້ຂອງ ປະເທດລາວ, ທຳມະຊາດດັ່ງກ່າວມີຄຸນປະໂຫຍດຢ່າງຫຼວງຫຼາຍຕໍ່ການດຳລົງຊີວິດຂອງຄົນລາວ ແລະ ມີຄຸນປະໂຫຍດຕໍ່ ການສ້າງສາບູລະນະປະເທດລາວໃຫ້ຮຸ່ງເຮືອງຖາວອນໃນອານາຄົດ. ບໍ່ສະເພາະແຕ່ເທົ່ານັ້ນ ປະຊາຊົນລາວຍັງມີຄວາມ ສວຍງາມທາງດ້ານສະຕິປັນຍາໃນການສ້າງສາບູລະນະບ້ານເມືອງອີກດ້ວຍ.

**ຂ. ດ້ານພູມປັນຍາຂອງປະຊາຊົນລາວ**

ເມືອງລາວອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດ ແລະ ສິ່ງຜົນສະທ້ອນໄປໃນທາງທີ່ດີ, ປະຊາຊົນຜູ້ ອອກແຮງງານກໍ່ໄດ້ພ້ອມພຽງກັນສ້າງສາບູລະນະບ້ານເມືອງໃຫ້ຮຸ່ງເຮືອງດ້ວຍສີໄມ້ລາຍມື, ຫົວຄິດປະດິດສ້າງ ແລະ ມັນ ສະໝອງດ້ວຍຄວາມບາກບັ່ນພະຍາຍາມທັງກາຍ ແລະ ໃຈ, ເພາະສະນັ້ນຜົນງານຕ່າງໆທີ່ເຂົາເຈົ້າສ້າງມາໄດ້ຈຶ່ງປາກົດ ອອກມາຢັ້ງຢາຍຢູ່ທຸກຂົງເຂດໃນທົ່ວປະເທດ, ເຊິ່ງສະແດງອອກຜ່ານສິລະປະໃນການສ້າງກໍ່, ຄວັດແຕ້ມລວດລາຍ, ປັ້ນ ຫຼໍ່ກໍ່ສ້າງວັດວາອາຮາມ, ພະທາດເຈດີດ້ວຍຄວາມລະອຽດອ່ອນປານີດບັນຈົງ ແລະ ມະຫັດສະຈັນ, ເປັນບູຮານສະຖານທີ່ ເລືອງລືທັງຄ້າຍ, ສິ່ງດັ່ງກ່າວໄດ້ກາຍເປັນມູນມັງມໍລະດົກ ແລະ ເປັນຂອງມິ່ງເມືອງຂອງລາວຈົນເຖິງປັດຈຸບັນເຊັ່ນ:

| | |
|---|---|
| ພູສີໃສສ່ອງແຈ້ງ | ອົງພະບາງຄຳຕັນ |
| ຕັ້ງຢູ່ຫຼວງພະບາງ | ມິ່ງເມືອງເປັນເຄົ້າ... |
| ພະທາດຫຼວງຜ່ານຟ້າ | ທາງວັດຈັນອິນແປງ |
| ຕັ້ງຢູ່ວຽງຈັນ | ອຸບໂມງອົງຕື້ |
| ມີຊື່ລືຊາລ້ຳ | ຊຽງຍືນສີສະເກດ |
| ເປັນປະເພດໃຫຍ່ກວ້າງ | ງາມລົ້ນລວດລາຍ |
| ຊຽງຂວາງເປັນແດນຄ້າຍ | ທົ່ງໃຫຍ່ໄຫຫີນ |
| ຕັ້ງຢູ່ຕີນພູຜາ | ອະເນກນອງງາມລົ້ນ |
| ເຂົາວ່າຄົນເຈືອງສ້າງ | ສະໄໝເປີງປາງເກົ່າ |
| ໃນເມື່ອເຂົາຢູ່ເຜົ່າ | ເປັນເຈົ້ານັ່ງປອງ |
| ທາດອິງຮັງຢູ່ຫ້ອງ | ສະຫວັນນະເຂດລາວກາງ |
| ເປັນບ່ອນປາງບຸນງັນ | ຊູ່ປີບໍ່ມີເວັ້ນ |
| ບໍລິເວນແຂວງໃຕ້ | ຈຳປາສັກຕັ້ງຢູ່ |
| ມີວັດພູໃຫຍ່ກວ້າງ | ທາງຂຶ້ນກໍ່ຫີນ |

ຄວາມງາມຂອງເມືອງລາວທາງດ້ານທຳມະຊາດກໍຄືຄວາມງາມທາງດ້ານສະຕິປັນຍານັ້ນທ່ານ ພູມີ ວົງວິຈິດໄດ້ ສະຫຼຸບໃນບົດກອນ ເມືອງລາວສວຍງາມຮັ່ງມີ ຢ່າງຄົບຖ້ວນ.

| | |
|---|---|
| ...ນີ້ແຫຼະເພິ່ນວ່ານ້ຳ | ເພິ່ນວ່ານາ |
| ເຕັມແຕ່ປູປາ | ເຕັມແຕ່ຮວງເຂົ້າ |
| ເພິ່ນວ່າພູເຂົາກວ້າງ | ຈວງຈັນເຕັມປ່າ |
| ຫີນສີລາຢູ່ນ້ຳ | ເປັນແກ້ວຄ່າແພງ |

ຄວາມງາມຂອງບ້ານເມືອງປະກອບກັບຄວາມດຸໝັ່ນຂະຫຍັນພຽງ ແລະ ພູມປັນຍາອັນສະຫຼາດຂອງປະຊາຊົນ ລາວນັ້ນແທນທີ່ປະເທດລາວຈະມີຄວາມຮຸ່ງເຮືອງສີວິໄລ, ປະຊາຊົນຈະຢູ່ເຢັນເປັນສຸກ ແຕ່ກົງກັນຂ້າມປະເທດລາວພັດຕົກຢູ່ໃນສະພາບຫຼ້າຫຼັງ ປະຊາຊົນພັດຕົກທຸກໄດ້ຍາກກວ່າເວລາໃດໆທັງໝົດ.

**ຄ. ໂທດກຳຂອງຈັກກະພັດທີ່ໄດ້ກໍ່ຂຶ້ນບົນຜືນແຜ່ນດິນອັນຄົບຖ້ວນຂອງລາວ**

ສິ່ງທີ່ເປັນເງື່ອນໄຂກີດກັ້ນການສ້າງສາບູລະນະບ້ານເມືອງລາວ ບໍ່ໃຫ້ມີຄວາມຈະເລີນກ້າວໜ້າ ແລະ ຊີວິດການເປັນ ຢູ່ຂອງປະຊາຊົນກໍຕົກທຸກໄດ້ຍາກຂາດໆເຂີນໆ, ມີຄວາມລຳບາກກາກກຳໃນການດຳລົງຊີບທຳມາຫາກິນ

ຕ່າງໆນັ້ນ ບັນຫາຕົ້ນຕໍແມ່ນມາຈາກການຮຸກຮານຂອງພວກສັດຕູພາຍນອກ, ໂດຍສະເພາະແມ່ນພວກຈັກກະພັດລ່າເມືອງຂຶ້ນຝຣັ່ງ ແລະ ອາເມລິກາ, ເຊິ່ງພວກມັນຫວັງຍຶດເອົາປະເທດຊາດທີ່ແສນຮັກຂອງພວກເຮົາເປັນຫົວເມືອງຂຶ້ນແບບເກົ່າ ແລະ ແບບໃໝ່ຂອງພວກມັນ. ພວກມັນໄດ້ກົດໜ່ວງທຸກຮູບການ ເພື່ອໃຫ້ຄົນລາວຕົກຢູ່ໃນເງົາມືດ, ໂງ່ຈ້າລ້າຫຼັງ, ບໍ່ມີ ໂອກາດໄດ້ຊອກຮູ້ຮໍ່າຮຽນເພື່ອປົກຄອງຊາດລາວໄດ້ງ່າຍ, ພວກມັນຍັງສວຍໃຊ້ຄົນລາວມາເປັນຂ້ອຍຂ້າມ້າຕ່າງໃຫ້ແກ່ ພວກມັນຢ່າງໄຮ້ມະນຸດສະທຳ, ຮ້າຍແຮງກວ່າໝູ່ແມ່ນໄລຍະພວກຈັກກະພັດອາເມລິກາປົກຄອງດັ່ງສະແດງອອກໃນ ບົດກອນທີ່ວ່າ:

| | |
|---|---|
| ....ເຮົາຕໍ່ສູ້ອອກພົ້ນ | ອາເມລິກາເລີຍ |
| ແອກຝຣັ່ງຄືນມາ | ແຊກແຊງມາເຕົ້າ |
| ຄົນລາວເປັນຫຸ່ນ | ໃຫ້ເຂົາປຸ້ນວຸ້ນວາຍ |
| ເອົາເງິນຄຳມາຊື້ | ແລ້ວກໍປຸ່ນຍົວະເຍົ້າ |
| ອາເມລິກາໂຫດຮ້າຍ | ກົດຂີ່ມປະຊາຊົນ |
| ເຮັດໃຫ້ຄົນລາວທຸກ | ບໍ່ມີທາງເວົ້າ |
| ເອົາລາວເປັນເມືອງຂຶ້ນ | ທັງເປັນຖານທັບໃຫຍ່ |
| ກຽມກຳລັງຮົບໄວ້ | ໄປປຸ້ນຮຸກຮານ |

ຍ້ອນເຫດການດັ່ງກ່າວປະຊາຊົນລາວຈຶ່ງບໍ່ມີເວລາສ້າງບ້ານແປງເມືອງຂອງຕົນ, ຊ້ຳບໍ່ໜຳຍັງຖືກພວກຈັກກະພັດກົດຂີ່ມເຫັງຢ່າງແສນສາຫັດ, ທັງບີບບັງຄັບ ແລະ ຖືກປຸ້ນລະດົມເອົາຊັບສິນເງິນຄຳເຂົ້າຂອງ ແລະ ສົມບັດອື່ນໆທີ່ມີຄ່າຂອງປະຊາຊົນລາວໄປຮັບໃຊ້ເພື່ອສ້າງບ້ານແປງເມືອງຂອງພວກມັນຈົນໝົດສິ້ນ, ເຮັດໃຫ້ບ້ານເມືອງຂອງລາວມຸ່ນທະລາຍ, ປະເທດຊາດສູນເສຍຄວາມເປັນເອກະລາດເສຍຄວາມເປັນເຈົ້າຕົນເອງ. ພວກມັນບໍ່ຮູ້ເລື່ອງ ສິນທຳ ເຊິ່ງຍາມໃດກໍ່ໄດ້ແຕ່ອອກແຮງງານປາບປາມນາບຂູ່ທາລຸນປະຊາຊົນລາວຢ່າງປ່າເຖື່ອນ. ສະແດງອອກໃນບົດກອນຂຽນວ່າ:

| | |
|---|---|
| ...ມັນອອກແຮງນາບເກັ່ງ | ປ້ອຍດ່າປະຊາຊົນ |
| ຈັບເອົາຄົນໄປຂັງ | ໃສ່ຄ່າຂຸມໄວ້ |
| ຂັງຢູ່ໃນຮູພື້ນ | ດິນດອນຄຸກມືດ |
| ຄຶດອອກມາກໍຂ້າ | ຍິງມ້ຽນມອດຊີວັງ |
| ຈັກກະພັດພວກນີ້ | ບໍ່ຮູ້ເລື່ອງສິນທຳ |
| ກໍ່ແຕ່ກໍທຳແຕ່ເຂັນ | ບໍ່ກະດຽມມີໄດ້ |
| ລູກເມຍໃຜມັນກໍ່ຫຼິ້ນ | ກຸມເອົາກົດຂີ່ |
| ເຫັນຂອງດີມັນກໍຄິດຢາກປຸ້ນ | ເອົາໄດ້ຈຶ່ງເຊົາ |

ຢູ່ໃນເຂດຄຸມຄອງຂອງຈັກກະພັດອາເມລິກາ ພວກມັນຍັງໄດ້ບັງຄັບເກນເອົາຊາຍໜຸ່ມຊາຍສະກັນໄປເປັນທະຫານຮັບຈ້າງເປັນຈຳນວນບໍ່ໜ້ອຍ, ເຮັດໃຫ້ບ້ານເມືອງແຕກແຊກຂາດຜົວພາກເມຍ, ລູກພັດພາກຈາກພໍ່ແມ່, ປະໄຮ່ນາຮົ້ວສວນ, ປະເຮືອນຊານບ້ານຊ່ອງບໍ່ໄດ້ປົວແປງ, ເຮືອນຊານເປ່ເພຊະຊາຍ, ໄຮ່ນາຮົ້ວສວນກາຍເປັນປ່າຮົກເຮື້ອ, ປະຊາຊົນໄດ້ພາກັນອຶດຫິວ, ຊີວິດການເປັນຢູ່ຝືດເຄືອງມີຄວາມລຳບາກໃນການລ້ຽງຊີບເຊິ່ງນັບມືນັບທະວີຂຶ້ນ. ດັ່ງຄຳກອນໃນບົດໄດ້ຂຽນວ່າ:

| | |
|---|---|
| ...ໄຮ່ນາເຮັດບໍ່ໄດ້ | ຖິ້ມປ່ອຍວາງປະ |
| ເຮືອນຊານເພພັງຊະ | ບໍ່ປົວແປງໄດ້ |
| ຄົນມີກາຍເປັນໄຮ້ | ຈົນໃຈອຶດຢາກ |
| ຊອກລ້ຽງປາກລ້ຽງທ້ອງ | ເປັນມື້ກໍ່ຝືດເຄື່ອງ |

ພວກຈັກກະພັດອາເມລິກາຍັງໃຊ້ກຳລັງທະຫານບຸກໂຈມຕີບຽດຍຶດເດປົດປ່ອຍຝ່າຍກຳລັງຮັກຊາດ, ຂ້າຟັນລັນແທງພີ່ນ້ອງປະຊາຊົນບັນດາເຜົ່າ, ຈຸດເຄົ້າເຜົາຜານເຮືອນຊານບ້ານຊ່ອງ, ວັດວາອາຮາມ, ໂຮງຮຽນໂຮງໝໍດ້ວຍລະເບີດທຸກຊະນິດຂອງພວກໂຈນອາກາດອາເມລິກາຢ່າງປ່ວງບ້າ ແລະ ໄຮ້ມະນຸດສະທຳ, ເພາະສະນັ້ນ, ຈຶ່ງເຮັດໃຫ້

ບ້ານເມືອງລາວ ໃນເຂດປົດປ່ອຍຂອງບັນດາກຳລັງຮັກຊາດຈຶ່ງຕົກຢູ່ໃນສະພາບທາງຽບເຫງົາ, ຢ້ານກົວດັ່ງບົດກອນຕອນໜຶ່ງຂຽນວ່າ:

...ທາງຝ່າຍດ້ານ ອາກາດເວຫາ
ມັນກໍເອົາຍົນມາ ເວິ່ນຍິງກະທຳຮ້າຍ
ຍິງທຳລາຍເມືອງບ້ານ ເຮືອນຊານສັດສິ່ງ
ຍິ່ງຈູດເຜົາເພມ້າງ ບໍ່ວາງໄວ້ສິ່ງໃດ
ນັບແຕ່ບ້ານຖືກໄໝ້ ເປັນຖ່ານໄຟເຜົາ
ເຮືອນຊານຍັງພຽງເສົາ ກໍ່າດຳຊໍ່ຊ້ອງ
ງຽບເຫງົາເປັນທັງຫ້ອງ ຄາເມກວ້າງໃຫຍ່
ແມ່ນບໍ່ນັບອ່ານໄດ້ ຫຼາຍລົ້ນອະເນການອງ
ທຸກແຫ່ງຫ້ອງ ລາວໝັ້ນເຄີຍນັບຖື
ຄືວັດວາອາຮາມ ພະທາດເຈດີກວ້າງ
ມັນກໍມາຍິງມ້າງ ທຳລາຍດ້ອຍລະເບີດ
ຂອງປະເສີດມີ່ງບ້ານ ກໍ່ເພມ້າງຢຸ່ນເມີນ
ທຳລາຍໝົດທຸກສິ້ນ ໂຮງຮໍ່ໂຮງຮຽນ
ມັນບຽດບຽນໂຮງໝໍ ເປ່ເພພັງມ້າງ
ຝູງຄົນເຈັບທີ່ໄດ້ວາງຕົວໄວ້ ເຢົາຢາປົວພະຍາດ
ມັນກໍ່ອາລະວາດ ຍິງ້ໍບໍ່ອິດ...

ຮ້າຍແຮງໄປກວ່ານັ້ນແມ່ນພວກຈັກກະພັດອາເມລິກາ ໄດ້ເຂັ່ນຂ້າຮາວີຕໍ່ພວກລູກເລັກເດັກແດງທີ່ບໍ່ທັນຮູ້ດຽງສາ, ບໍ່ຮູ້ຜິດພາດ ຫຼື ຖືກຕ້ອງໃດໆທັງໝົດຕໍ່ການດຳລົງຊີວິດໃນສັງຄົມ ແລະ ວຽກການເມືອງເຊິ່ງພວກເຮົາໄດ້ພາກັນຢູ່ແບບປຸງປາງຕາມພາສາເດັກນ້ອຍແລ້ວກໍ່ພາກັນໄປໂຮງຮຽນເພື່ອຮ່ຳຮຽນເອົາຄວາມຮູ້ເທົ່ານັ້ນແຕ່ພວກຈັກກະພັດອາເມລິກາກໍ່ຍັງໃຊ້ລະເບີດຖິ້ມລົງໃສ ຊິງເອົາຊີວິດພວກເຂົາໄປຢ່າງໜ້າເວດທະນາ. ດັ່ງຄຳກອນທີ່ວ່າ:

...ເດັກນ້ອຍທີ່ບໍ່ຮູ້ ບໍ່ຜິດພາດແນວໃດ
ພາກັນໄປໂຮງຮຽນ ຮ່ຳຮຽນຄວາມຮູ້
ມັນກໍ່ດູແຄນແມ່ງ ຊິງຊັງຄຽດຄັ່ງ
ລະເບີດເລັ່ງທອດຖິ້ມ ໃຫ້ຕາຍມ້ອຍອະເນການອງ

ການກະທຳດັ່ງກ່າວຂອງພວກຈັກກະພັດຕໍ່ເຂດປົດປ່ອຍຂອງຝ່າຍກຳລັງຮັກຊາດໂດຍແມ່ນຈັກກະພັດອາເມລິກາເປັນຫົວໂປ່ນັ້ນ ໄດ້ເຮັດໃຫ້ສະຖານຖິ່ນດິນລາວທີ່ຮັ່ງມີສວຍງາມພັງທະລາຍໄປເຖິງຊີວິດການເປັນຢູ່ຂອງປະຊາຊົນລາວຕ້ອງຕົກລະກຳລຳບາກທຸກຍາກາດເຂັນ. ສະພາບການເຄື່ອນໄຫວໃນສັງຄົມມີຄວາມໝົ່ນໝອງຫງອມເຫງົາ, ເຮັດຄອບຄົວຜົວເມຍມີຄວາມແຕກແຍກກາຍເປັນຮ້າງເປັນໝ້າຍນັບຈຳນວນບໍ່ຖ້ວນ. ເຫດການດັ່ງກ່າວ ເປັນໜ້າສະຫຼົດໃຈ ແລະ ໄດ້ສ້າງຄວາມເຈັບແຄ້ນແໜ້ນໃຈໃຫ້ແກ່ປະຊາຊົນລາວຜູ້ທີ່ຮັກຫອມຄວາມເປັນທຳ, ປຸກລະດົມ ຄວາມສາມັກຄີຕໍ່ສູ້ກູ້ຊາດຂອງປະຊາຊົນລາວອີກບາດກ້າວໜຶ່ງພາຍໃຕ້ການນຳພາຂອງແນວລາວນັກຊາດດັ່ງຄຳກອນ ຂຽນວ່າ:

...ດຽວນີ້ໃນເຂດຫ້ອງ ສະຖານຖິ່ນດິນລາວ
ອັນທີ່ແວວວ່າງາມ ຮັ່ງມີມຸນລົ້ນ
ກັບທຸກຈົນພັນຊົ້ນ ບໍ່ມີອັນຊີປຸ່ນປຽບ
ປຸ່ນດັ່ງສອນສຽບໄວ້ ແທງເຂົ້າໜ່ວຍໃຈ
ຄົນກໍ່ແສນທຸກໄຮ້ ເຂັນຊາດແລງງາຍ
ຊ້ຳພັດວາຍຊີວາ ມີ່ງມອນໄປ
ມັນກະທຳເວນໃຫ້ ລາວເຮົາຫງອມເຫງົາ
ນັບມື້ອຸກອັ່ງຖ້ວມ ບໍ່ມີມື້ມຸ່ງໝາຍ

ຍິງຊາຍເປັນໝາຍຮ້າງ ເຂີນຂາດຜົວເມັຍ
ພໍ່ແມ່ຕອມໃຈເສຍ ລູກແພງພັນຊົ້ນ
ຈຳນວນພັນເດັກນ້ອຍ ກຳພອຍທົນທຸກຍາກ
ລຳບາກເສຍເຜົ່າຄົນ ພຽນລ້ຽງພໍ່ແມ່ຄີງ
ຫຼິງລ່ຳດຸພາບນີ້ ເປັນສິ່ງສະຫຼົດໃຈແທ້ແລ້ວ
ໃຜຫາກມີສິນທຳ ແມ່ນບໍ່ແລດູໄດ້
ເປັນທີ່ເຈັບໃຈແທ້ ສັດຕູຫີນະໂຫດ
ເຮັດໂທດກຳໃຫຍ່ກວ້າງ ວາງໄວ້ທົ່ວນະຄອນ

ຕາມທິດສະດີມາກຊິດໄດ້ໃຫ້ຮູ້ວ່າ: ບ່ອນໃດກໍດີຂໍ່ຂູດຮີດໜັກບ່ອນນັ້ນຍ່ອມມີຂະບວນການຕໍ່ສູ້ກຳເນີດຂຶ້ນ ດ້ວຍເຫດນັ້ນເມື່ອປະຊາຊົນລາວຖືກພວກຈັກກະພັດເຂົ້າຮຸກຮານຮາວີ, ຂຸດເນື້ອເຊືອໜັງ, ຢຽບຢ່ຳອະທິປະໄຕ, ເຂົາເຈົ້າ ຈຶ່ງພາກັນລຸກຂຶ້ນຕໍ່ສູ້ຕ້ານການຮຸກຮານຂອງພວກຈັກກະພັດຢູ່ໃຕ້ຮົ່ມທຸງຂອງການປະຕິວັດ, ມີແນວລາວຮັກຊາດ ເປັນຜູ້ນຳພາເພື່ອປົດປ່ອຍປະເທດຊາດຂອງຕົນເອງຢ່າງອົງອາດກະຫານ.

**ງ. ການລຸກຮື້ຂຶ້ນຕໍ່ສູ້ຂອງປະຊາຊົນລາວ**

ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງການປະຕິວັດ, ເພື່ອປົດປ່ອຍຊາດ, ປົດປ່ອຍຕົນເອງ ແລະ ສ້າງສາປະເທດຊາດໃຫ້ມີຄວາມຈະເລີນຮຸ່ງເຮືອງວັດທະນາ, ຄວາມເຈັບຊ້ຳລະກຳໃຈຂອງປະຊາຊົນ ລາວທີ່ມີຕໍ່ພວກ ຈັກກະພັດຜູ້ຮຸກຮານ, ໂດຍສະເພາະແມ່ນພວກຈັກກະພັດອາເມລິກາທີ່ເປັນຫົວໂປ້ປະຕິການນັ້ນໄດ້ຝັງເລິກເຂົ້າຢູ່ໃນ ສ່ວນເລິກຂອງປະຊາຊົນລາວເຮົາບໍ່ມີຍາມເຫືອດຫາຍ, ການກະທຳທີ່ປວງປ້ອງມັນ, ໂທດກຳທີ່ພວກມັນມຕໍ່ປະຊາຊົນລາວໃນຜືນແຜ່ນດິນລາວແຫ່ງນີ້ດ້ວຍຄວາມປ່າເຖື່ອນ ແລະ ໂຫດຮ້າຍສາມັນນັ້ນໄດ້ກາຍເປັນສິ່ງທີ່ປຸກລະດົມນ້ຳໃຈຮັກຊາດ, ຄວາມຄຽດແຄ້ນສັດຕູຜູ້ຮຸກຮານຂອງປະຊາຊົນລາວທັງຊາດ. ດັ່ງນັ້ນ, ເມື່ອໄດ້ມີແສງສະຫວ່າງ ແລະ ການຊີ້ທິດເບືອງທາງຈາກການປະຕິວັດແລ້ວປວງຊົນລາວໄດ້ພ້ອມກັນລຸກຂຶ້ນຕໍ່ສູ້ຕ້ານສັດຕູຜູ້ຮຸກຮານ ຢ່າງອົງອາດກ້າຫານ ຍອມເສຍສະຫຼະທຸກຢ່າງທັງກາຍ ແລະ ໃຈເຂົ້າໃນວຽກງານປົດປ່ອຍຊາດປົດປ່ອຍຕົນເອງ ເພື່ອ ກອບກູ້ເອົາຊາດຄືນມາ ດັ່ງໃນບົດກອນຂຽນວ່າ:

...ລາວນີ້ທຸກເດືອດຮ້ອນ ແສນສ່ວນມາກອນ
ຈຶ່ງໄດ້ລວມກັນລຸກ ຮ່ວມແຮງຕໍ່ຕ້ານ
ໂຮມເຮັດການຕໍ່ສູ້ ສັດຕູກູ້ປະເທດ
ກູ້ເອົາຂົງເຂດດ້າວ ລາວໃຕ້ຢູ່ສະບາຍ

ຂະບວກການຕໍ່ສູ້ກູ້ຊາດຂອງພວກປະຊາຊົນລາວໄດ້ລະເບີດເຕີບໃຫຍ່ຢ່າງແຂງແຮງ ແລະ ອົງອາດກ້າຫານ, ສາມາດດັບສູນກຳລັງສັດຕູກໍ່ຄືຈັກກະພັດທີ່ບຸກໂຈມຕີບຽດຍຶດດິນແດນປົດປ່ອຍໃນທຸກວິທີ, ທັງທາງໜ້າດິນ ແລະ ທາງອາກາດເພື່ອເອົາໄຊຊະນະມາສູ່ການປະຕິວັດຢ່າງສະຫງ່າງາມ, ປົກປັກຮັກສາເຂດປົດປ່ອຍໄວ້ໄດ້ຢ່າງໝັ້ນຄົງ, ເຂດປົດປ່ອຍຈຶ່ງກາຍເປັນເຂດທີ່ໝັ້ນອັນແໜ້ນໜາຂອງການປະຕິວັດ, ທັງເປັນພື້ນຖານ ແລະ ໝາກຫົວໃຈຂອງການ ປະຕິວັດ, ການປົດປ່ອຍຊາດໃນທົ່ວປະເທດ. ໝາກຜົນຂອງການໄດ້ຮັບໄຊຊະນະຂອງການປະຕິວັດດັ່ງກ່າວ ນັກກະວີ ພູມີ ວົງວິຈິດ, ໄດ້ພັນລະນາຢ່າງກ້ອງແກ້ວລະອຽດຜ່ານພາສາວັນນະຄະດີທີ່ມ່ວນວ່າ:

....ເມື່ອໄດ້ພົບເຫດຮ້າຍ ຫຼາຍຊົ່ວສິບປີ
ລາວກໍ່ມີໄຊຫຼາຍ ສາມາດຕີມັນໃຫ້
ປາບມານລົງໄດ້ ຕາຍໄປນັບຕັ້ງໝື່ນ
ປົດປ່ອຍເອົາດິນຄືນ ສອງສ່ວນສາມເຂດບ້ານທາງບກວ້າງປະເທດລາວ
ການຍິງຍົນກໍກ້າວ ເຖິງຂີດຊຳນານ
ປະຊາຊົນທະຫານ ຮ່ວມໃຈກັນແທ້
ແນໃສ່ຍົນລົງຂວ້ຳ ຕຳດິນຕົກມຸ່ນ
ເປັນຝຸ່ນເຖິງສີ່ຮ້ອຍ ຕາຍແລ້ວບໍ່ຕ່າວຄືນ

ເພື່ອກໍ່ສ້າງເຂດປົດປ່ອຍໃຫ້ເປັນທີ່ໝັ້ນທີ່ແຂັ້ມແຂງຂອງການປະຕິວັດນັ້ນ, ໜ້າທີ່ຂອງປະຊາຊົນ ແລະ ກອງທັບຕ້ອງປະສົມປະສານກັນ, ຊ່ວຍກັນປະຕິບັດໜ້າທີ່ຂອງໃຜລາວໃຫ້ຫຼອມລະຫວ່າງກອງທັບ ຫຼື ອ້າຍນ້ອງນັກຮົບກໍ່ເອົາໃຈໃສ່ປັບປຸງສ້າງປ່ຽນແປງໄປພ້ອມໆກັນ ເພື່ອເຮັດໃຫ້ໃບໜ້າຂອງການປະຕິວັດໃນເຂດປົດປ່ອຍມມີການ ປ່ຽນແປງໃໝ່, ສ້າງໃຫ້ປະຊາຊົນມີຄວາມເຊື່ອໝັ້ນຕໍ່ການປະຕິວັດຫຼາຍຂຶ້ນດັ່ງຄໍາກອນຂຽນວ່າ:

**…**ລາວເຮົານີ້ທັງຮົບທັງຊິຟື້ນ ສ້າງຊາດຄືນມາ
ຊິໄດ້ພາກັນຂຸດ ກົ້ນກອງແປງສ້າງ
ທັງສອງທາງບໍ່ວາງໄດ້ ກະທໍາໄປພ້ອມພໍ່າ
ສັດຕູນໍາບອບບີ້ ກໍຕີໃຫ້ຊະນະມັນ

ໃນຕອນທ້າຍຂອງບົດກອນ ນັກກະວີ ພູມີ ວົງວິຈິດ ໄດ້ອະທິບາຍເຖິງສາເຫດທີ່ພາໃຫ້ຄົນລາວທຸກຍາກຂາດເຂີນໃນການຄອງຊີບ ແລະ ຮຽກຮ້ອງມາຍັງປວງຊົນລາວທັງຊາດທຸກທົ່ວໜ້າຈົ່ງພ້ອມພຽງກັນໃຫ້ເປັນກອງກໍາລັງ ແຂງແກ່ນ, ລຸກຂຶ້ນຕໍ່ໃຕ້ຮົ່ມຄັນທຸງຂອງການປະຕິວັດເພື່ອຍາດເອົາໄຊຊະນະກັບພວກຈັກກະພັດຜູ້ຮຸກຮານ. ພ້ອມກັນ ເຮັດສໍາເລັດໜ້າທີ່ຂອງການປະຕິວັດຊາດປະຊາທິປະໄຕໃນຂອບເຂດທົ່ວປະເທດ ດັ່ງຄໍາກອນຂຽນວ່າ:

…ເປັນດັ່ງນັ້ນແຫຼະເຈົ້າ ພໍ່ແມ່ທັງຫຼາຍ
ລາວຈຶ່ງກາຍເປັນທຸກ ຍາກຈົນໃຈແຄ້ນ
ໝົດທັງແດນດິນດ້າວ ເມືອງລາວທຸກແຫ່ງ
ບໍ່ໄດ້ຕົກແຕ່ງສ້າງ ເສີມປ້ອງໃຫ້ຈະເລີນ
ເຮົາຈຶ່ງຂໍຮຽກເອີ້ນ ມວນໝູ່ປະຊາກອນ
ຈົ່ງຢ່ານອນຕາລັບ ຮົບຕື່ນມາດຽວນີ້
ສາມັກຄີກັນເຂົ້າ ເລົ່າດຽວເປັນໝູ່
ລວມກໍາລັງກອບກູ້ ເມືອງບ້ານອອກຈາກມານ

ເປັນອັນວ່າດ້ວຍສາຍຕາອັນແຫຼມຄົມຂອງນັກປະຕິວັດຜູ້ອາວຸໂສຄົນໜຶ່ງ, ນັກກະວີ ພູມີ ວົງວິຈິດ ໄດ້ເປີດສາຍຫູສາຍຕາໃຫ້ປະຊາຊົນລາວທັງຊາດໄດ້ຮູ້ແຈ້ງເຫັນຈິງ ເຖິງຄວາມອຸດົມຮັ່ງມີຂອງຊາດລາວເໝືອນກັບວ່າຊາດລາວໄດ້ປຸສາມາດພັນລະນາຄົບຖ້ວນໄດ້, ແທນທີ່ຄົນລາວທຸກຄົນຈະໄດ້ມີຄວາມສຸກໃນການດໍາລົງຊີວິດໃນສັງຄົມ, ກົງກັນຂ້າມຜົນພົມສິຂຽວຕັ້ງແຕ່ເໜືອຕະຫຼອດໃຕ້ ຜ່ານບົດກອນ “ເມືອງລາວສວຍງາມຮັ່ງມີ” ຄວາມຮັ່ງມີດັ່ງກ່າວຂອງຊາດລາວບໍ່ ປວງຊົນລາວທັງຊາດຍັງໄດ້ຮັບແຕ່ຄວາມທຸກທໍລະມານໃນການດໍາລົງຊີວິດ, ນັ້ນກໍເນື່ອງມາຈາກວ່າປວງຊົນລາວຖືກ ພວກຈັກກະພັດຕ່າງດ້າວເຂົ້າປຸ້ນບ້ານຊິງເມືອງ, ເຂັ່ນຂ້າຮາວີຕໍ່ພໍ່ແມ່ປະຊາຊົນ, ປວງຊົນລາວຈຶ່ງບໍ່ມີເວລາສ້າງສາ ພັດທະນາບ້ານເມືອງຂອງຕົນໃຫ້ຈະເລີນກ້າວໜ້າ.

ຢາກໃຫ້ປະເທດຊາດມີຄວາມຈະເລີນຮຸ່ງເຮືອງ ກ່ອນອື່ນໝົດປະຊາຊົນລ່ວທັງຊາດຕ້ອງສາມັກຄີກັນຕໍ່ສູ້ບໄລ່ສັດຕູຜູ້ຮຸກຮານອອກຈາກປະເທດ, ຈຶ່ງຈະເຮັດໃຫ້ປະຊາຊົນລາວເຮົາມີຄວາມເປັນເອກະລາດເປັນເຈົ້າຕົນເອງ, ປະເທດ ຊາດຈະມີຄວາມສະຫງົບສຸກ ແລະ ເພື່ອຢາກບັນລຸຕາມຈຸດປະສົງດັ່ງກ່າວປະຊາຊົນລາວເຮົາມີແຕ່ເສັ້ນທາງດຽວຄື: ຮ່ວມ ມືກັນຕໍ່ສູ້ເພື່ອປົກປັກຮັກສາປະເທດຊາດຢູ່ພາຍໃຕ້ການນໍາພາຂອງແນວລາວຮັກຊາດເທົ່ານັ້ນ. ທັງໝົດນີ້ແມ່ນເນື້ອໃນ ສ່ອງແສງທີ່ ທ່ານ ພູມີ ວົງວິຈິດ ນັກກະວີເອກຂອງລາວໄດ້ພັນລະນາໃຫ້ພວກເຮົາເຫັນໄດ້ທຸກປະກົດການຜ່ານບົດກອນ ເມືອງລາວສວຍງາມຮັ່ງມີ.

## 4. ສີລະປະການປະດິດແຕ່ງ

- ດ້ານກະທູ້ (ຫົວຂໍ້) ກ່ຽວກັບເມືອງລາວສວຍງາມຮັ່ງມີກ່ຽວກັບກະທູ້ທີ່ເວົ້າເຖິງເມືອງລາວສວຍງາມຮັ່ງມີນັ້ນ, ມີນັກກະວີທີ່ມີຊື່ສຽງໂດ່ງດັງຫຼາຍທ່ານໄດ້ນໍາສະເໜີ ແລະ ນໍາໃຊ້ການແຕ່ງກາບກອນຂອງຕົນເຊັ່ນ ທ່ານ ສຸວັນທອນ ບຸບຜານຸວົງ ( ສ. ບຸບຜານຸວົງ )ໃນເລື່ອງ “ພື້ນເມືອງລາວ" ; ທ່ານໂສມສີ ເດຊາຄໍາພູ (ສ. ເດຊາ) ໃນເລື່ອງ “ປະເທດ ລາວສວຍງາມ” ; ທ່ານ ທອງອິນ ພົມກອງ ໃນເລື່ອງ “ປະເທດລາວຮັ່ງມີ” ແຕ່ເປັນຫຍັງປະຊາຊົນລາວທຸກຍາກ ແລະ ທ່ານພູມີ ວົງວິຈິດ ໃນເລື່ອງ “ເມືອງລາວສວຍງາມຮັ່ງມີ” ແຕ່ລະທ່ານອາດເບິ່ງເຫັນຄວາມສວຍງາມຂອງເມືອງລາວໃນ ສ່ວນເລີກແຕກຕ່າງກັນ. ບາງທ່ານອາດເບິ່ງເຫັນຄວາມສວຍງາມທາງດ້ານປະຫວັດສາດສົມທົບ

ກັບທຳມະຊາດ ແລະ ມູນເຊື້ອຕໍ່ສູ້ຂອງຄົນລາວ ແລະ ອື່ນໆ. ແຕ່ບັນດາທ່ານນັກກະວີທັງຫຼາຍລ້ວນແຕ່ເປັນເອກະພາບກັນຢູ່ບ່ອນວ່າ ເມືອງ ລາວງາມ ແລະ ຮັ່ງມີທາງດ້ານທຳມະຊາດແທນທີ່ປະຊາຊົນຈະຢູ່ເຢັນສຸກ, ແຕ່ກົງກັນຂ້າມປະຊາຊົນພັດຕົກທຸກໄດ້ຍາກ ຍ້ອນຈັກກະພັດເຂົ້າມາຮຸກຮານ.

ໃນບົດກອນ "ປະເທດລາວຮັ່ງມີແຕ່ປະຊາຊົນລາວຈິ່ງທຸກຍາກ" ຂອງທ່ານທອງອິນ ພົມກອງ ສ່ອງແສງອອກບາງຕອນດັ່ງນີ້:

...ເກັບມາກິນຢູ່ເລື້ອຍ ຂະໜຸນມີ້ມ່ວງມັນ
ມີຫຼາຍອັນນຳຜົນໃຫ້ ປະຊາຊົນມອນມາກ
ເກີດຢູ່ນຳປ່າກວ້າງ ມັນພ້າວມ່ວງສະຄູ
ເຖິງລະດູມັນມີຂຶ້ນ ຜັກນາງຢູ່ໃນປ່າ
ຂີງຂາທັງລຸກໄມ້ ຫຼາຍແທ້ນັບບໍ່ຫົມ
ແຕ່ຄົນລາວນັ້ນ ເປັນຫຍັງຈິ່ງທຸກຍາກ
ອຶດຢາກຖືກເຄາະຮ້າຍ ຕາຍຖິ້ມນັບບໍ່ໄຫວ
ເປັນຍ້ອນໃຜວ່າຕິຊັ້ນ ຄົນລາວຈິ່ງທຸກຍາກ
ຫາກຊິເວົ້າໃຫ້ຖືກຕ້ອງ ແມ່ນເປັນຍ້ອນຜູ້ຮຸກຮານ
ພວກໝາພານຫົວດື້ ປະຕິການຂາຍຊາດ
ເຮັດໃຫ້ຍາດພີ່ນ້ອງ ເຮົານັ້ນແມ່ນທຸກຈົນ
ນຳເອົາຄົນຕ່າງດ້າວ ຈັກກະພັດໂຕການ
ມາເຜົາຜານທຳລາຍ ຈູດເມືອງເພມ້າງ...

ນັກກະວີ ທອງອິນ ພົມກອງ ໄດ້ເນັ້ນເຖິງຄວາມງາມທາງດ້ານທຳມະຊາດ, ເວົ້າເຖິງພືດພັນທີ່ງອກງາມຕາມລະດູການທີ່ປະກອບເປັນເຄື່ອງອຸປະໂພກ, ບໍລິໂພກ ເພື່ອລ້ຽງຂອງປະຊາຊົນລາວໄດ້ຢ່າງພຽງພໍ ແລະ ອຸດົມສົມບູນ. ແຕ່ ຍ້ອນພວກປະຕິການຂາຍຊາດສົມທົບກັບພວກຈັກກະພັດ ເຂົ້າມາຮຸກຮານລາວເອົາຊາວລາວເປັນເມືອງຂຶ້ນຢ່າງໜ້າບໍ່ ອາຍ, ປະຊາຊົນລາວຈິ່ງຖືກເຄາະຮ້າຍ ແລະ ຕົກທຸກໄດ້ຍາກ ດ້ອຍສິ່ງທີ່ບໍ່ປາຖະໜານັ້ນເອງ.

ສ່ວນນັກກະວີ ໂສມສີ ເດສາຄຳພູ ພັດໄດ້ສະເໜີຄວາມງາມຂອງພູຜາປ່າດົງ ແລະ ທົ່ງພຽງອັນຍາວຢຽດສຸດສາຍຕາອັນເປັນອູ່ເຂົ້າອູ່ປາທີ່ອຸດົມສົມບູນຂອງຊາວລາວ. ນອກນັ້ນຍັງໄດ້ພັນລະນາເຖິງຄວາມສວຍງາມຂອງບູຮານສະຖານບາງແຫ່ງ ເຊິ່ງເປັນສັນຍາລັກແຫ່ງວັດທະນະທຳອັນດີງາມຂອງຊາວລາວອີກ ສະແດງອອກຜ່ານຄຳກອນຕອນໜຶ່ງວ່າ:

....ແນມເມື່ອເໜືອງພຸ້ນ ເຫັນພູຜາງາມສະຫງ່າ
ດົງປ່າຂຽວອື່ມຄຶ້ມ ສີເຂັ້ມດັ່ງຄາມ
ຄວາມງາມເມືອງລາວນີ້ ບໍ່ມີຫຍັງຈະປຸນປຽບ
ແນມລຽບຕາມທົ່ງກວ້າງ ຂວາງຂັ້ນຜ່ານຕາ
ເຫັນໄຮ່ນາທັງນໍ້າ ບຶງໜອງຫ້ວຍຮ່ອງ
ແດດສ່ອງຍາມມື້ເຊົ້າ ສີເຂັ້ມດັ່ງຄຳ
ຊັບໃນດິນສິນໃນນໍ້າ ເງິນຄຳວັດຖຸທາດ
ທຳມະຊາດຕົກແຕ່ງໄວ້ ບໍ່ມີໄຮ້ສິ່ງຂອງ
ວັດວາວັງວຽງແກ້ວ ກຳແພງພະທາດໃຫຍ່
ທາດຫຼວງໃສສອງເຫຼື້ອມ ຕາເວັນຕ້ອງແຫ່ງຕື່ມງາມ
ຄົນລາວມີມູນເຊື້ອ ຕີສັດຕູບາກບັ່ນ
ສາມັກຄີຕໍ່ສູ້ ເພື່ອຊູຊ້ວານຊາດຄືນ.....

ຈາກນັ້ນທ່ານ ສຸວັນທອນ ບຸບຜານຸວົງ ກໍ່ໄດ້ກ່າວເຖິງຄວາມສວຍງາມ ແລະ ອຸດົມຮັ່ງມີຂອງຊາດລາວຜ່ານບົດ ກອນ "ພື້ນເມືອງລາວ" ແຕ່ທ່ານໄດ້ພັນລະນາທີ່ເປັນເອກະລັກມູນເຊື້ອຂອງຄົນລາວຕັ້ງແຕ່ບູຮານນະການຈົນເຖິງ ປັດຈຸບັນ, ສ່ວນໃຫຍ່ຈະເລັ່ງໃສ່ການຕໍ່ສູ້ປ້ອງກັນປະເທດຊາດແຕ່ສະໄໝກ່ອນຈົນມາຮອດສະໄໝປະຊາຊົນ

ລຸກຮື້ຂຶ້ນຕໍ່ສູ້ ກັບຈັກກະພັດຜູ້ຮຸກຮານໃຕ້ການນຳພາຂອງພັກປະຊົນປະຕິວັດລາວ, ເນື້ອໃນລະອຽດເປັນຄືແນວໃດ ນັ້ນໃຫ້ທ່ານອ່ານ ໃນບົດກອນ ພື້ນເມືອງລາວ ເພາະໃນປຶ້ມເຫຼັ້ມນີ້ຈະບໍ່ໄດ້ນຳມາສະເໜີ.

ບົດກອນ "ເມືອງລາວສວຍງາມຮັ່ງມີ" ທ່ານ ພູມີວົງວິຈິດ ໄດ້ສະເໜີ ແລະ ພັນລະນາປະເທດຊາດຢ່າງຄົບຖ້ວນ, ນັບແຕ່ທິດໃດຕິດຈອດກັບປະເທດໃດ ທ່ານໄດ້ພັນລະນາຢ່າງລະອຽດ, ບັນຫາຕົ້ນຕໍແມ່ນທ່ານໄດ້ພັນລະນນາທຳ ມະຊາດແຕ່ລະປະເພດເຊັ່ນ ຜູຜາປ່າດົງ, ເຊິ່ງແມ່ນບ່ອນເພິ່ງອາໄສ ແລະ ດຳງຊີວິດຢູ່ຮ່ວມກັນຂອງບັນດາສັດສາວາສິ່ງ ປະກອບເປັນຮູບພາບອັນສວຍງາມດ້ວຍການເຄື່ອນໄຫວ ແລະ ສີສັນຂອງມັນ ແມ່ນໍ້າລຳເຊກໍ່ມີປູ, ປາ ຫຼາບຊະນິດອາໄສ ຢູ່ເປັນສິ່ງປະກອບພາບເພື່ອສະແດງໃຫ້ເຫັນເຖິງຄວາມອຸດົມສົມບູນ. ທົ່ງພຽງກໍມີຕົ້ນເຂົ້າ, ຮວງເຂົ້າທີ່ສຸກເຫຼືອງເຕັມກາງ ທົ່ງທີ່ກວ້າງໃຫຍ່, ມີສາຍລົມພັດຕາມລະດູການເຮັດໃຫ້ຮວງເຂົ້າໂອນເອ່ນໄປຕາມຈັງຫວະຂອງສາຍລົມ, ຢູ່ຕາມ ສະຖານທີ່ຕ່າງໆກໍ່ມີວັດວາອາຮາມ, ຢູສະນິຍະສະຖານຕ່າງໆເປັນສິ່ງປະກອບທັງເປັນພາບທີ່ສວຍງາມເກີດຂຶ້ນດ້ວຍພູມ ປັນຍາຂອງປະຊາຊົນລາວບັນດາເຜົ່າ ເພາະສະນັ້ນ ທ່ານ ພູມີ ວົງວິຈິດ ຈຶ່ງສະຫຼຸບລວມເຖິງຄວາມສວຍງາມຂອງເມືອງ ລາວຜ່ານບົດກອນຕອນໜຶ່ງວ່າ:

...ນີ້ແຫຼະເພິ່ນວ່ານໍ້າ        ເຕັມແຕ່ປູປາ
ເພິ່ນວ່ານາ        ເຕັມແຕ່ຮວງເຂົ້າ
ເພິ່ນວ່າພູເຂົາກວ້າງ        ຈວງຈັນເຕັມປ່າ
ຫີນສີລາຢູ່ນໍ້າ        ເປັນແກ້ວຄ່າແພງ

ສະຫຼຸບຄວາມວ່າ ດ້ານກະທູ້ບັນຫານັກກະວີທັງຫຼາຍລ້ວນແຕ່ເປັນເອກະພາບກັນທາງດ້ານຄວາມງາມ, ຄວາມ ຮັ່ງມີຂອງເມືອງລາວໃຕ້ສາຍຕາຂອງນັກກະວີແຕ່ລະທ່ານທີ່ແຕກຕ່າງກັນເຊິ່ງບາງທ່ານກໍ່ລົງທາງເລິກ, ບາງທ່ານກໍ່ລົງ ທາງກວ້າງ ແຕ່ທຸກທ່ານກໍ່ລ້ວນແຕ່ຍົກຍົກໃຫ້ເຫັນຄວາມສວຍງາມຂອງເມືອງລາວທັງນັ້ນ, ອີກປະການໜຶ່ງບັນດານັກ ກະວີທັງຫຼາຍແມ່ນໄດ້ເປັນເອກະພາບກັນ, ຍົກໃຫ້ພວກເຮົາຮູ້ເຖິງສາເຫດທີ່ພາໃຫ້ປະຊາຊົນລາວຕົກທຸກໄດ້ຍາກແມ່ນ ເປັນຍ້ອນການຮຸກຮານຂອງພວກຈັກກະພັດຕ່າງດ້າວທີ່ໄດ້ກໍ່ຂຶ້ນບົນຜືນແຜ່ນດິນຂອງລລາວເຮົາ, ເຮັດໃຫ້ປະຊາຊົນລາວ ທັງຊາດຕ້ອງຖືກຮັບເຄາະຮ້າຍຢ່າງແສນສສາຫັດ.

**- ຫຼັກການວິທີແຕ່ງກອນ**

ທ່ານ ພູມີ ວົງວິຈິດ ເປັນນັກກະວີທີ່ດີເດັ່ນຜູ້ໜຶ່ງທີ່ຍຶດຖືການແຕ່ກອນຢ່າງຖືກຕ້ອງ, ທ່ານໄດ້ນຳໃຊ້ຫຼັກການເນື່ອງສຽງ, ຄຳເອກ, ຄຳໂທ, ສຳຜັດເອກ, ສຳຜັດໃນ ແລະວິທີການໃຊ້ຄຳບຸບພະບົດ, ຄຳສ້ອຍທ້າຍໄດ້ດີ.ຈາກນັ້ນທ່ານຍັງໃຊ້ກອນ 7, 8, 9, 10 ແລະ 11 ເປັນສິ່ງສັດເຈນ. ສັບພາສາທີ່ໃຊ້ໃນການປະດິດແຕ່ງກາບກອນຂອງທ່ານແມ່ນສັບທີ່ເຂົ້າໃຈງ່າຍ ແລະ ມີຄວາມໝາຍໃນການໃຊ້ຄຳບຸບພະບົດສ່ວນໃຫຍ່ແມ່ນຄຳ ຫຼື ວະລີທີ່ບົ່ງການແຈ້ງການ ແຈ້ງຂ່າວ ແລະ ລ່ວງໜ້າເຊັ່ນ ປົດປ່ອຍເອົາດິນຄືນ, ສອງສ່ວນສາມເຂດຫ້ອງ, ທາງກວ້າງປະເທດລາວ. ຄຳບຸບພະບົດ ອາດເປັນໝວດຄຳ ຫຼື ວະລີທີ່ຕັ້ງໄວ້ທາງໜ້າຂອງວັກຄຳກອນທີ່ຍົກມາຂ້າງເທິງ, ເພື່ອຍົກໃຫ້ເຫັນເຖິງວຽກທີ່ຜ່ານມາ ເນັ້ນໜັກສິ່ງໃດສິ່ງໜຶ່ງທາງດ້ານເນື້ອໃນຂອງຄຳກອນ, ຄ່າສ້ອຍທີ່ຕັ້ງຢູ່ທາງທ້າຍຂອງວັກຄຳກອນ, ຄ່າສ້ອຍທີ່ມັກເຄີຍ ໃຊ້ມີ: ພຸ້ນເຍີ, ແດ່ນາ, ແທ້ແລ້ວ, ດອກນາ, ຮຽມເອີຍ, ແທ້ດາຍ ແລະ ອື່ນໆ.

ຕົວຢ່າງ ໃນບົດກອນ "ເມືອງລາວສວຍງາມຮັ່ງມີ" ຂອງທ່ານພູມີ ວົງວິຈິດ ໄດ້ໃຊ້ຄຳສ້ອຍເຂົ້າໃນກບົດຂຽນຂອງຕົ້ນລວມມີສາມເທື່ອເຊັ່ນ:

ຟ້າຍິນທາດໆພັຽງ        ກ້ອງປ່າໄພໜາ ພຸ້ນເຍີ
ລຳບາກທັງເດືອດຮ້ອນ        ບໍ່ມີມື້ຊິແບ່ງເບົາ ທ່ານເອີຍ
ຫຼີງລຳດູພາບນີ້        ເປັນສິ່ງສະຫຼົດໃຈ ແທ້ແລ້ວ

ການນຳໃຊ້ຄຳສຳຜັດ ທ່ານ ພູມີ ວົງວິຈິດ ເປັນນັກກະວີທີ່ໃຊ້ຄຳສຳຜັດໄດ້ດີໃນປະເພດກອນ 7, 8, 9, 10 ແລະ 11 ການສຳຜັດລວມມີ ສຳຜັດນອກ, ສຳຜັດໃນ (ສຳຜັດລຽນອັກສອນ ແລະ ລຽນສະຫຼະ ເປັນຢ່າງດີ) ເຊັ່ນ:

... ເດັກນ້ອຍທີ່ບໍ່ຮູ້        ບໍ່ຜິດພາດແນວໃດ
ພາກັນໄປໂຮງຮຽນ        ຮໍ່າຮຽນຄວາມຮູ້
ມັນກໍ່ດູແຄນແມ້ງ        ຊິງຊັງຄຽດຄັ່ງ
ລະເບີດເລັ່ງທອດຖິ້ມ        ໃຫ້ຕາຍມ້ອຍອະເນກນອງ

ການສຳຜັດໃນ ໃນບາດຄຳກອນນີ້ແມ່ນ ບໍ່ຮູ້ສຳຜັດກັບບໍ່ພິດ ໂຮງຮຽນສຳຜັດກັບຮ່ຳຮຽນ, ແຄນແມ້ງ ສຳຜັດ ກັບຊິງຊັງ ສ່ວນການສຳຜັດນອກແມ່ນ ແນວໃດ ສຳຜັດກັບ ການໄປ, ຮູ້ສຳຜັດກັບ ກຳດ, ຄຽດເຄັ່ງ ສຳຜັດກັບ ເລັ່ງ ແລະ ອື່ນໆ. ຈາກການແຕ່ງກອນທີ່ຖືກຕາມຫຼັກການໄດ້ດີຄືແນວນັ້ນບົດກອນຂອງທ່ານ ພູມີ ວົງວິຈິດ ຈຶ່ງກາຍເປັນ ແມ່ນແບບທີ່ໃຫ້ແກ່ນັກຮຽນຮູ້ຕໍ່ມາສືບທອດເອົາບົດຮຽນໃຫ້ເຂົາເຈົ້າ. ບົດກອນ "ເມືອງລາວລາວສວຍງາມຮັ່ງມີ ແລະ ບົດກອນ "ກ້ຽວສາວແບບໃໝ່" ທ່ານຈຶ່ງໄດ້ຮັບຄວາມນິຍົມຊົມຊອບຈາກນັກສິລະປິນທັງຫຼາຍນຳໄປຂັບລຳໃນຈັງຫວະ ຕ່າງໆຢ່າງມ່ວນຊື່ນ.

ການໃຊ້ສັບພາສາໃນການແຕ່ງ, ຮຸບພາບສັບພາສາທີ່ທ່ານ ພູມີ ວົງວິຈິດນຳໃຊ້ເຂົ້າໃນການແຕ່ງກອນຂອງທ່ານ ສ່ວນໃຫຍ່ແມ່ນສັບພາສາທີ່ມີຮູບພາບແຕ່ເຂົ້າໃຈງ່າຍດາຍເຊັ່ນວ່າ: ດູແຄນແມ້ງ, ທອດຖິ້ມ, ຕາຍມ້ອຍ, ອະເນການອງ....ດັ່ງນັ້ນ, ເນື້ອໃນສ່ອງແສງຈາກບົດກອນຂອງເພິ່ນຈຶ່ງສາມາດເຮັດໃຫ້ຜູ້ອື່ນເຂົ້າໃຈແຈ້ງເຖິງຮູບເຫດການທີ່ນັກກະວີຢາກເວົ້າເຖິງ.

ຜ່ານຮູບການນຳໃຊ້ຫຼັກການແຕ່ງກາາບກອນທີ່ຖືກຕ້ອງ ບົດກອນ "ເມືອງລາວສວຍງາມຮັ່ງມີ" ຂອງທ່ານ ພູມີ ວົງວິຈິດ ເປັນບົດກອນທີ່ພັນລະນາເຖິງປະເທດລາວຢ່າງຄົບຖ້ວນກວ່າໝູ່ດ້ອຍຄວາມຮູ້ ແລະ ຄວາມປີຊາສາມາດສູງມີ ທຶນຮອນຊີວິດທີ່ຫຼວງຫຼາຍ. ທ່ານ ພູມີ ວົງວິຈິດ ຈຶ່ງໄດ້ກັ່ນກອງເອົາຈຸດທີ່ເດັ່ນຂອງສະພາບການບ້ານເມືອງລາວ, ເພື່ອ ຈຸດປະສົງສັນລະເສີນການຕໍ່ສູ້ອັນອົງອາດກະຫານຂອງປະຊາຊົນລາວຕ້ານພວກຈັກກະພັດຕ່າງດ້າວ, ກ່າວປະນາມໂທດ ກຳຂອງພວກມັນທີ່ມີຕໍ່ປະເທດລາວ. ສຸດທ້າຍນັກແຕ່ງໄດ້ຮຽກຮ້ອງໃຫ້ປະຊາຊົນລາວຈົ່ງລຸກຂຶ້ນເພື່ອຕໍ່ສູ້ເປັນຈິດໜຶ່ງໃຈດຽວກັນຂັບໄລ່ພວກຈັກກະພັດອາເມລິກາອອກຈາກດິນແດນລາວ. ຈົກນັ້ນ, ລາວຈຶ່ງຈະເປັນເຈົ້າຂອງປະເທດຊາດ, ເຈົ້າຂອງຕົນເອງ ແລະ ຍູ້ທາງພ້ອມກັນສ້າງສາພັດທະນາປະເທດຊາດໃຫ້ມີຄວາມຮຸ່ງເຮືອງເທື່ອລະກ້າວ.

## ບົດກອນ "ເມືອງລາວສວຍງາມຮັ່ງມີ"

ຟັງເຍີພວກພີ່ນ້ອງ    ພໍ່ແມ່ລຸງຕາ
ຫຼົ່ນຊີວາຈາຍົກ    ເລື່ອງລາວມາເວົ້າ
ພໍ່ເປັນເລົ່າໆໃຫ້    ຈົດຈຳຄຶດຮ່ຳ
ແລ້ວຈິ່ງນຳອອກແຈ້ງ    ສະແດງໃຫ້ໝູ່ຟັງ
ປະເທດລາວແມ່ນຕັ້ງ    ຢູ່ແຫຼມອິນດູຈີນ
ມີແຜນດິນດອນຜີນ    ໃຫຍ່ຍາວໄກກວ້າງ
ກ້ຳຝ່າຍທາງເໜືອພຸ້ນ    ດິນຈີນກວ້າງໃຫຍ່
ຕັ້ງຂະໜົງເນັ່ງໄວ້    ຂວາງຂັ້ນເຂດແດນ
ທາງຝ່າຍແຄວ້ນ    ແດນດ່ານບົວລະພາ
ມີປ່າດົງພູຜາ    ຊໍ່ຊັ້ນລຽນຊັ້ນ
ພູຫຼວງເປັນແດນໃຫ້    ຫວຽດນາມລາວນ້ອງພີ່
ສາມັກຄີຢູ່ເລື້ອຍ    ບໍ່ມີມື້ຈືດຈາງ
ທາງພາກໃຕ້    ຕິດຕໍ່ກຳພູຊາ
ປະເທດເພົາພົງສາ    ເພື່ອນແພງພັນຊັ້ນ
ຜູກສຳພັນທາງດ້ານ    ການເມືອງບໍ່ມີຕ່າງ
ຢູ່ເປັນກາງທ່ຽງແທ້    ສະເໝີດ້າມດັ່ງລາວ
ທາງດ່ານດ້າວ    ກ້ຳຝ່າຍປັດສິເມ
ຕາມບຸບເພເຄີຍຕິດ    ປະເທດໄທຄຽງໃກ້
ຢູ່ຝາກໃນລຳນ້ຳ    ນະທີຂອງໄຫຼຜ່ານ
ຕັ້ງຢູ່ຄົນລະດ້ານ    ສອງເບື້ອງແບ່ງແດນ
ເຂດນີ້ຍັງທຸກແຄ້ນ    ແສນຍິ່ງອະວິໄສ

ປວງປະຊາຊົນໄທ
ອາເມລິກາເຂົ້າ
ສົນລະວົນບົບບີ້
ມັນໜີບເຕັງພີ່ນ້ອງ
ຍົວະໃຫ້ຄົນໄທລົບ
ເອົາທະຫານມາສ້າງ
ຫວັງຊິເອົາໃຫ້ໄດ້
ພີ່ນ້ອງໄທຈຶ່ງປັ້ນ
ລຸກຂຶ້ນຕີເລວລົບ
ພວກມັນຕາຍໄປຍ້ອນ
ທະຫານມັນມອດມ້ຽນ
ທາງຟາກຫ້ອງ
ລາວກໍພົວພັນກັບ
ອັນຢູ່ທາງເທິງເບື້ອງ
ປະເທດມອນພະມ້າ
ປະເທດນີ້
ມີແນວທາງຄືດຽວ
ເຂົາກໍ່ເຄີຍຕີສູ້
ອາເມລິກາມາ, ເຂົາກໍ່ປູນຕໍ່ຕ້ານ
ເມືອງລາວເປັນເຂດບ້ານ
ທາງເໜືອມີພູຜາ
ຍິນສະອອນດົງໄມ້
ເປັນດັ່ງອຸດທິຍານໃຫຍ່ກວ້າງ
ເດືອນສໍ່ປານມາລາ
ແສນສາປານມາລາ
ສີຕ່າງແດງຕໍ່າແຫ້ມ
ເໝືອນດັ່ງດາວສ່ອງຟ້າ
ຍາມເມື່ອລົມປິ່ນເບື້ອງ
ໄປສູ່ຈອມພູສູງ
ຝູງໝູ່ດົງດອນດ້າວ
ຫອມກິ່ນດວງດອກໄມ້
ນັບແຕ່ໃນເຂດແຄວ້ນ
ບໍ່ອາດພັນລະນານັບ
ອະເນການອງລໍາໄມ້
ສາມາດຂາຍແລກຄ້າ
ຢູ່ໃນຂົງເຂດນັ້ນ
ມີງົວຄວາຍທັງໝູ
ອໍແອເຕັມດົງກວ້າງ
ມີທັງເສືອແຮດຊ້າງ
ກະຕ່າຍແລຍລົ້ນລີ້
ຝູງກະເລັນງູເຫຼືອມ

ທຸກບໍ່ມີທາງເວົ້າ
ຮາວີບີປີ່ນ
ຕີຂ້າຂົ່ມເຫັງ
ຝູງໝູ່ປະຊາຊົນ
ພຸງກັນຝັນມ້າງ
ແປງເປັນຖານທັບໃຫຍ່
ໄປຂຶ້ນແກ່ມັນ
ເປັນໝູ່ສາມັກຄີ
ປາບມັນມານຮ້າຍ
ປະຊາກອນກໍາກັນ
ໄປແລ້ວອະເນການອງ
ກໍ້າຝ່າຍພາຍັບ
ເຂດແດນດິນກວ້າງ
ນະທີຂອງໄຫຼຜ່າ
ປະຊາເຊື້ອຮັ່ງມີ
ກໍ່ຕັ້ງຢູ່ເປັນກາງ
ດັ່ງລາວເຮົາພີ້
ສັດຕູພວກຍີ່ປຸ່ນ
ບໍ່ຍອມໃຫ້ຮຸກຮານ
ສະຖານຖິ່ນງາມຕາ
ໜ່ວຍພະນອມລຽນຊ້ອນ
ໄພສິນແສນຍານ
ຂຽວສະອຸ້ມຊູ່ຍາມ
ເອົ້າອຸ່ນລະດູບານ
ເບີກເບີຍບານແຍ້ມ
ເຫຼືອງກະຈາຍເຕັມປ່າ
ປະດາເຫຼື້ອມເຮື່ອເຮືອງ
ພັດຝຸ່ນລະອອງຫອມ
ກິ່ນກະຈອນຟອງຟື້ງ
ຕະການຕາກາກວ້າງໃຫຍ່
ກະຈາຍກໍ່ວທົ່ວແດນ
ພະນອມປ່າໄພໜາ
ອ່ານປຸ່ນໄປໄດ້
ແນວດີມີຄ່າ
ຊອງໃຊ້ເຄື່ອງດົງ
ສັດສິ່ງກໍ່ມີຫຼາຍ
ໝູ່ກະທິງເຍືອງແບ້
ກວາງຟານມ້ານັ່ງ
ໝີເໝັ້ນຄ່າງທະນີ
ໝູໝູລີງເຫງັນ
ເຈົ່າກະແຕແມງໄມ້

ໄກໆພຸ້ນ
ຄັບປ່າດົງດ່ານໄມ້
　　　　สັບພະພັນຫຼາກລ້ຳ
ສັກກຸນີມີຫຼາຍ
ມີແນວຂົນເຫຼືອງສື້ວ
ກະໂດດຄອນໄຕເຕັ້ນ
　　　　ຟັງຍິນທາດໆພ້ຽງ
ນັ້ນແມ່ນອາໂປໂຕນ
ຕົກໃສ່ກາງວັງນ້ຳ
ເຫັນແຕ່ຄວັນມືດກຸ້ມ
　　　　ຕົກບໍ່ຮູ້ຂາດສ່ຽງ
ໄຫຼກະຈາຍລົງໄປ
ໄຫຼເປັນທາງວຽນລ້ອມ
ລອດປ່ອງນັ້ນປ່ອງນີ້
　　　　ກ້ຳຝ່າຍຫ້ອງ
ລຽງລາຍຕິດ
ເປັນບ່ອນຄົນແປງສ້າງ
ສຸກສຳລານຍິ່ງລ້ຳ
　　　　ພວກນີ້ປຸນປຽບໄດ້
ທຸກປະການມີຄົບ
ມີປູປາໃນນ້ຳ
ຢູ່ທ່າງນ້ຳອອກຄ້າ
　　　　ຈັ່ງແມ່ນມັນມ່ວນແທ້
ເປັນທົ່ງຍາວໄກສຸດ
ຕາມທຳນຽມເມືອງບ້ານ
ເປັນບ່ອນພິງພີ່ນ້ອງ
　　　　ເຖິງເມື່ອຍາມແດດຕ້ອງ
ຕາລໍ່າມອງຍັງແຖວ
ຈັ່ງແມ່ນງາມຮວງເຂົ້າ
ຕະຫຼອດໄປທົ່ວແຄວ້ນ
　　　　ນອກຈາກເຂົ້າ ແລະ ນ້ຳ
ຍັງມີຂອງບູຮານ
ອັນທີ່ຄົນໃນດ້າວ
ໄຫຼຫຼັ່ງມາຫໍ່ຫຸ້ມ
　　　　ພູສີໃສສ່ອງແຈ້ງ
ອີງພະບາງຄຳຕັນ
ອັນທີ່ເນົາໃນຫ້ອງ
ມີປະຫວັດບອກໄວ້
　　　　ພະມາດຫຼວງຜ່ານຟ້າ
ທັງວັດຈັນອິນແປງ
ມີຊື່ລືຊາລ້ຳ
ຍຸງຍອງຮ້ອງສິ່ງ
ສະເນືອນກ້ອງໄກ່ຂັນ
ຫຼາຍສຳປັກສີ
ໝື່ນແນວງາມລົ້ນ
ຂຽວເທົາແດງອ່ອນ
ແຈຈົ້ວສິ່ງສຽງ
ກ້ອງປ່າໄພໜາ ພຸ້ນເຍີ
ຕາດສູງແສນທ້າງ
ເຫວຊັນເປັນຫຼັ່ນ
ຟອຝຟົ້ງສິ່ງສຽງ
ໄຫຼເລັ່ງເປັນສາຍ
ສູ່ນະທີທານກວ້າງ
ໂງເງກ້ຽວກອດ
ລົງເຂົ້າສູ່ຂອງ
ໃຕ້ຕ່ຳດິນພຽງ
ຕໍ່ກັນຍາວກວ້າງ
ກະທຳນາກ້າຫວ່ານ
ຂອງເຂົ້າມັ່ງມູນ
ສາງໃຫຍ່ມະຫາສານ
ເຄື່ອງກິນສິນສ້າງ
ອະນັນຕັງລ້ານສໍ່າ
ຂາຍຊື້ຊູ່ວັນ
ທ້ອງຖິ່ນດິນລາວ
ຊົ່ວຕາຕົງຢັ້ງມ
ສະຖານທ່ອງທ່ຽວ
ທຽວຢື້ຢ່ອງຢາມ
ລະດູດ່ານເດືອນສິບສອງ
ທົ່ງນາຕອນເຊົ້າ
ເຫຼືອງລຽນເປັນແຜ່ນ
ສະເໜີປັ້ນປ່ຽງຄຳ
ສັດສິ່ງເດຍລະສານ
ມິ່ງເມືອງງາມລົ້ນ
ປະກອບໂລກລຸ່ມ
ຢາມຢັ້ງມຊູ່ປີ
ຕັ້ງຢູ່ຫຼວງພະບາງ
ມິ່ງເມືອງເປັນເຄົ້າ
ອາຮາມຫຼວງວັດໃຫຍ່
ໃຫ້ເຮົາຮູ້ສືບມາ
ຕັ້ງຢູ່ວຽງຈັນ
ອຸບມຶງອິງຕື້
ຊຽງຍືນສີສະເກດ

ເປັນປະເພດໃຫຍ່ກວ້າງ ງາມລົ້ນລອດລາຍ
ຊຽງຂວາງເປັນເຂດຄ້າຍ ທົ່ງໃຫຍ່ໄຫຫີນ
ຕັ້ງຢູ່ຕີນພູຜາ ອະເນການອງງາມລົ້ນ
ເຂົາວ່າຄົນເຈືອງສ້າງ ສະໄໝປາງເປີງເກົ່າ
ໃນເມື່ອເຂົາຢູ່ເຝົ້າ ເປັນເຈົ້າຄອບຄອງ
ກັບທັງວັດບ້ານນ້ອງ ຫຼາຍແບບລີງລາຍ
ວັດບ້ານຄາຍສີພົມ ພະທອງອີງຕື້
ມີຊື່ລືຊາແທ້ ບຸນກອງທາດຝຸ່ນ
ບ່ອນທີ່ປາງກ່ອນພຸ້ນ ມີເຈົ້ານັ່ງປອງ
ທາດອີງຮັງຢູ່ຫ້ອງ ສະຫວັນນະເຂດລາວກາງ
ເປັນບ່ອນປາງບຸນງັນ ຊື່ປີບໍ່ມີເວັ້ນ
ບໍລິເວນແຂວງໃຕ້ ຈຳປາຕັ້ງຢູ່
ມີວັດພູໃຫຍ່ກວ້າງ ທາງຂຶ້ນກໍ່ຫີນ
ນັ້ນແມ່ນເປັນຊັ້ນໆ ຂອງປະເສີດບາງອັນ
ທີ່ໄດ້ບັນຍາຍຍົກ ອອກເປັນຕົວຕັ້ງ
ແຕ່ວ່າຍັງຫຼາຍລົ້ນ ຈົນໃຈບໍ່ໄດ້ຈື່
ໃຜຫາກໄປຢ່ອງຢື້ ຢາມແທ້ຫາກຊິເຫັນ
ເມືອງລາວນີ້, ຊ້ຳພັດເປັນເຂດບ້ານ ສະຖານມັ່ງມູນດີ
ໃນດິນມີເຫຼັກຂາງ ກົ່ວເງິນຄຳແກ້ວ
ມີຊູ່ແນວຂອງໃຊ້ ທອງຊືນນ້ຳມັນກາດ
ຂີ້ເຈຍມາດ ແລະ ເຜີ້ງ ປຸນແປ້ງຖ່ານຫີນ
ທັງເຄື່ອງກິນເຄື່ອງໃຊ້ ຂອງປະເສີດມີຫຼາຍ
ມີຢູ່ຢາຍຕາມທຸກ ທົ່ວແດນດິນດ້າວ
ແຜ່ນດິນລາວເຮົານີ້ ດີໄປໝົດທຸກຢ່າງ
ທັງບ່ອນແຄບບ່ອນກວ້າງ ກໍ່ເປັນແທ້ຄ່າຄຳ
ນີ້ແຫຼະເພິ່ນວ່ານ້ຳ ເຕັມແຕ່ປູປາ
ເພິ່ນວ່ານາ ເຕັມແຕ່ຮວງເຂົ້າ
ເພິ່ນວ່າພູເຂົາກວ້າງ ຈວງຈັນເປັນປ່າ
ຫີນສີລາຢູ່ນ້ຳ ເປັນແກ້ວຄ່າແພງ
ເມືອງລາວເຮົາ,ຄວນສະໜຸກຍິ່ງແມ້ງ ສ້າງຊາດຈະເລີນຫຼາຍແທ້ດາຍ
ຄວນລ່ວງກາຍເກີນຝູງ ປະເທດຄົນຄຽງໃກ້
ແຕ່ວ່າ ໃນແດນດ້າວ ເມືອງລາວຊ້ຳທຸກຍາກ
ລຳບາກທັງເດືອດຮ້ອນ ບໍ່ມີມື້ຊິແບ່ງເບົາທ່ານເອີຍ
ເລື່ອງນີ້ເຮົາຊິເວົ້າ ວ່າເປັນເພາະອັນໃດ
ວ່າແມ່ນເປັນນຳໃຜ ກີດກັນເຮົາໄວ້
ໃຜບໍ່ຍອມວາງໃຫ້ ລາວເຮົາກ້າວຢ່າງ
ໃຜກີດຂວາງແກ່ທົ້ນ ລາວໃຫ້ບໍ່ຈະເລີນ
ເຮົານີ້ເກີນວ່າຮູ້ ແຈ້ງແຈບປານຫຍັງ
ເຮົາຄຽດຊັງມັນມາ ຮອດບໍ່ມີຍາມເວັ້ນ
ຕັ້ງແມ່ນເປັນໄປຍ້ອນ ຜີມານຈັກກະພັດ
ມັນຜູກມັດແກ່ຂື້ນ ລາວນີ້ໃຫ້ທຸກຈົນ

ໝົດຊູ່ຄົນຍ່ອມຮູ້ ແປ້ນຝຣັ່ງປົກຄອງ
ມັນຜີປອງກຸ່ມກົດ ຂົ່ມຄໍລາວໄວ້
ເອົາລາວໄປເປັນຂ້າ ທາສາໃຊ້ຊ່ວງ
ປວງປະຊາລາດແຄ້ນ ແສນຊົ້ນຍາກຈົນ
ເຮົາຕໍ່ສູ້ອອກພົ້ນ ແອກຝຣັ່ງຄືນມາ
ອາເມລິກາເລີຍ ແຊກແຊງມາເຕົ້າ
ເອົາເງິນຄຳມາຊື້ ຄົນລາວເປັນຫຸ່ນ
ແລ້ວກໍປຸນຍົວະເຍົ້າ ໃຫ້ເຂົາປຸ້ຮວຸ່ນວາຍ
ອາເມລິກາໂຫດຮ້າຍ ກົດຂົ່ມປະຊາຊົນ
ເຮັດໃຫ້ຄົນລາວທຸກ ບໍ່ມີທາງເວົ້າ
ເອົາລາວເປັນເມືອງຂຶ້ນ ທັງເປັນຖານທັບໃຫຍ່
ກຽມກຳລັງລົບໄວ້ ໄປປຸ້ນຮາກຖານ
ສ່ອນວ່າບ້ານ ສະຖານຖິ່ນດິນລາວ
ບໍ່ວ່າຄາວໃດໆ,ມັນບໍ່ມີໃຈຄິດ ຊິປາກປຸນແປງສ້າງ
ມີແຕ່ຈິງໃຈມ້າງ ທຳລາຍເຜົາຈູດ
ຂູດຮີດເອົາຊັບໄວ້ ໄປສ້າງປະເທດມັນ
ພວກມັນຕັ້ງບີບຄັ້ນ ປະຊາລາດລາວເຮົາ
ແມ່ນບໍ່ມີຍາມເຊົາ ຕະຫຼອດຈົນດຽວນີ້
ສິບເອັດປີປາຍແລ້ວ ລາວເຮົາຮ້ອນຂະໜາດ
ເອກະລາດຖືກມ້າງ ເມືອງບ້ານມຸ່ນທະລາຍ
ເວົ້າເຖິງຄວາມໂຫດຮ້າຍ ຫົວໂປ່ອາເມລິກາ
ທີ່ກະທຳມາເຖິງ ສູ່ວັນດຽວນີ້
ຈັ່ງແມ່ນມີຫຼາຍລົ້ນ ອະນັນຕັງລ້ານສ່ຳ
ເປັນບາບກໍໃຫຍ່ກວ້າງ ດິນຟ້າກໍ່ບໍ່ປານ
ມັນຮຸກຮານທັບມ້າງ ເຜົາຈູດເຮືອນຊານ
ທໍລະມານປວງຊົນ ຍ້ຳຍີ້ຕີປຸ້ນ
ທຳລາຍມູນມັງເຂົ້າ ງົວຄວາຍເປັດໄກ່
ພົບຫຍັງແມ່ນບໍ່ໄວ້ ເຜົາລ້າງມຸ່ນມິນ
ໃນແຜ່ນດິນເຂດແຄວ້ນ ພວກມັນຢູ່ປົກຄອງ
ມັນສົ່ງກອງທະຫານ ອອກໄປຕີປຸ້ນ
ໄປທາລຸນພີ່ງເຊື້ອ ປະຊາຊົນປັດກວາດ
ໃຊ້ອຳນາດບອບບີ້ ຕີຂ້າຂົ່ມເຫັງ
ມັນອອກສຽງນາບເປັ້ງ ປ້ອຍດ່າປະຊາຊົນ
ຈັບເອົາຄົນໄປຂັງ ໃສ່ຄາຄຸມໄວ້
ຂັງຢູ່ໃນຮູ້ພື້ນ ດິນດອນຄອກມືດ
ຄິດອອກມາກໍຂ້າ ຍິງມ້ຽນມອດຊີວັງ
ຊູມື້ນີ້, ຄົນແມ່ນໄຫ້ຊັ້ງໆ ອຸກອັ່ງມະໂນໃນ
ໃຈບໍ່ມີຍາມຫວາງ ໂສກລະທົມທວງມ້າງ
ບໍ່ໄດ້ປຸງແປງສ້າງ ທຳນາກໍຫວ່ານ
ມີແຕ່ອຸກອັ່ງຢ້ານ ເຂົາຊິຂາດ່າຕີ
ຈັກກະພັດພວກນີ້ ບໍ່ຮູ້ເລື່ອງສິນທຳ

ກໍ່ແຕ່ກຳເຂັນ    ບໍ່ກະດຽມມືໄດ້
ລູກເມຍໃຜມັນກະຫຼົ້ນ    ກຸ່ມເອົາກົດຂີ່
ເຫັນຂອງດີ, ມັນກໍ່ຢຶດຍາດປຸ້ນ    ເອົາໄດ້ຈຶ່ງເຊົາ
    ນອກຈາກເຂົ້າ ແລະ ນ້ຳ    ສັດສິ່ງເງິນທອງ
ມັນຍັງປອງເກນເອົາ    ໜຸ່ມລາວຊາວບ້ານ
ເອົາໄປເປັນທະຫານໃຊ້    ໃນການປັດກວາດ
ໃຫ້ຊາດລາວແຕກມ້າງ    ບໍ່ແປງສ້າງຢ່າງໃດ
    ຢູ່ໃນເຂດຈັກກະພັດຢຶດໄດ້    ກໍຢູ່ໃນມື
ຈັ່ງແມ່ນຄືນອນຄຸກ    ຄວບຄຸມພັນດ້ານ
ການກິນນອນຈາຕ້ານ    ການເດີນຍ້າຍຍ່າງ
ທຸກຢ່າງມີແຕ່ຢ້ານ    ລະວັງໄວ້ຊູ່ຍາມ
    ຢາກເຮັດຫຍັງ, ມັນກໍ່ມີແຕ່ຫ້າມ    ມັດທຸກກຸ່ມກົດ
ທຸກສິ່ງອັນມີໂທດ    ບໍ່ມີທາງເວັ້ນ
ເປັນຄືນໃນແດນນັ້ນ    ສະເໝີເປັນສັດສິ່ງ
ຢາກເໜັງຕິງກໍ່ບໍ່ໄດ້    ກົວຢ້ານໂທດໄພ
    ໄຮ່ນາເຮັດບໍ່ໄດ້    ຖິ້ມປ່ອຍວາງປະ
ເຮືອນຊານເພພັງຊະ    ບໍ່ປົວແປງໄດ້
ຄົນມີກາຍເປັນໄຮ    ຈົນໃຈອຶດຢາກ
ຊອກລ້ຽງປາກ ແລະ ທ້ອງ    ເປັນມື້ກໍ່ຝືດເຄືອງ
    ທາງຝ່າຍເບື້ອງ    ເຂດປົດປ່ອຍລາວເຮົາ
ອາເມລິກາ, ມັນກໍເອົາທະຫານ    ມາກມາຍມາເຕົ້າ
ຫວັງຢຶດເອົາດິນດ້າວ    ປະຊາຊົນປັດກວາດ
ຍາດແຍ່ງເອົາໃຫ້ໄດ້    ໄປຂຶ້ນແກ່ມັນ
    ນອກຈາກນັ້ນ    ມັນຍັງຫຼອກລວງຕົວະ
ຍົວະແກ່ເອົາຄົນລາວ    ປະກອບເປັນກອງປຸ້ນ
ມາວຸ້ນວາຍເພມ້າງ    ເຮືອນຊານບ້ານຊ່ອງ
ຂ້າພວກພີ່ງພີ່ນ້ອງ    ປະຊາເຊື້ອຊາດດຽວ
    ແຕ່ມັນທຽວລັກປຸ້ນ    ເຜົາຈູດເຮືອນຊານ
ໃຊ້ໝູ່ກອງທະຫານ    ວຸ່ນວາຍເມືອງບ້ານ
ຖືກພວກເຮົາຕີຕ້ານ    ຜົງກະຈອນເປັນຝຸ່ນ
ຈົນວ່າຝຸ່ນຄຽດແຄ້ນ    ກະຈາຍມ້າງແຕກກັນ
    ດຽວນີ້ມັນພັດບັ້ນ    ຫາເລື່ອງໂຄສະນາ
ຫວານສອດແນມລົງມາ    ອະເນກນອງເນືອງລົ້ນ
ມາຜິປອງປຸນຄົ້ນ    ຫາຄວາມປິດລັບ
ມາຊອກຈັບຈ່ອງຂ້າ    ທຳຮ້າຍພະນັກງານ
    ທາງຝ່າຍດ້ານ    ອາກາດເວຫາ
ມັນກໍເອົາຍົນມາ    ເວີ່ນຍິງທຳຮ້າຍ
ຍິງທຳລາຍເມືອງບ້ານ    ເຮືອນຊານສັດສິ່ງ
ຍິງຈູດເຜົາເປ່ມ້າງ    ບໍ່ວາງໄວ້ສິ່ງໃດ
    ນັບແຕ່ບ້ານຖືກໄໝ້    ເປັນຖ່ານໄຟເຜົາ
ເຮືອນຊານຍັງພຽງເສົາ    ກໍ່ດຳຊໍຊ້ອງ

ງຽບເຫງົາໄປທັງຫ້ອງ ຄາເມກກວ້າງໃຫຍ່
ແມ່ນບໍ່ນັບອ່ານໄດ້ ຫຼາຍລົ້ນອະເນກນອງ
ທຸກແຫ່ງຫ້ອງ ລາວໜັ້ນເຄີຍນັບຖື
ຄືວັດວາອາຮາມ ພະທາດເຈດີກວ້າງ
ມັນກໍມາຍິງມ້າງ ທຳລາຍດ້ວຍລະເບີດ
ຂອງປະເສີດມີ່ງບ້ານ ກໍ່ເພມ້າງມຸ່ນມິນ
ທຳລາຍໝົດທຸກຊັ້ນ ໂຮງຮໍ່າໂຮງຮຽນ
ມັນບຽດບຽນໂຮງໝໍ ເປ່ເພພັງມ້າງ
ຝູງຄົນເຈັ່ຍ, ທີ່ໄດ້ອາງຕົວໄວ້ ເຢົາຢາປົວພະຍາດ
ມັນກໍອາຄາດລົ້ ຍິງຂ້າບໍ່ອິດູ
ດຽວນີ້ໃນເຂດຫ້ອງ ສະຖານຖິ່ນດິນລາວ
ອັນທີ່ແວວວາວງາມ ຮັ່ງມີມວນລົ້ນ
ກັບທຸກຈິນພັນຊົ້ນ ບໍ່ມີອັນຊິປຸນປຽບ
ປຸນດັ່ງສອນສຽບໄວ້ ແທງເຂົ້າໝ່ອຍໃຈ
ຄົນກໍແສນທຸກໄຮ້ ເຂີນຂາດແລງງາຍ
ຊໍ້າພັດວາຍຊີວາ ມີ່ງມອນໄປຊໍ້າ
ມັນກະທຳເວນໃຫ້ ລາວເຮົາເຫງົາຫງ່ວມ
ນັບມື້ອຸກອັ່ງຖ້ວມ ບໍ່ມີມື້ຊິມັ່ງມາຍ
ຍິງຊາຍເປັນໝ້າຍຮ້າງ ເຂີນຂາດຜົວເມຍ
ພໍ່ແມ່ຕອມເສຍໃຈ ລຸກແພງພັນຊົ້ນ
ຈຳນວນເດັກນ້ອຍໆ ກຳພອຍທົນທຸກຍາກ
ລຳບາກເສຍເຜົ່າຜູ້ ພຽນລ້ຽງພໍ່ແມ່ຄີງ
ຫຼີງລໍ່າດຸພາບນີ້ ເປັນສີ່ງສະຫຼົດໃຈແທ້ແລ້ວ
ໃຜຫາກມີສິນທຳ ແມ່ນບໍ່ແລດໄດ້
ເປັນທີ່ເຈັບໃຈແທ້ ສັດຕູຫີນະໂຫດ
ເຮັດໂທດກຳໃຫຍ່ກວ້າງ ວາງໄວ້ທົ່ວນະຄອນ
ລາວນີ້ທຸກເດືອດຮ້ອນ ແສນສ່ວນມາກວມ
ຈັ່ງໄດ້ລວມກັນລູກ ຮ່ວມແຮງຕິຕ້ານ
ໂຮມເຮັດການຕີສູ້ ສັດຕູກູປະເທດ
ກູ້ເອົາຂົງເຂດດ້າວ ລາວໃຫ້ຢູ່ສະບາຍ
ເມື່ອໄດ້ພົ້ນໂຫດຮ້າຍ ຫຼາຍຊົ່ວສິບປີ
ລາວກໍ່ມີໄຊຫຼາຍ ປາບມານລົງໄດ້
ສາມາດຕີມັນໃຫ້ ຕາຍໄປນັບຕັ້ງໝື່ນ
ປົດປ່ອຍເອົາດິນຄືນ, ສອງສ່ວນສາມເຂດຫ້ອງ ທາງກວ້າງປະເທດລາວ
ການຍິງຍົນກໍ່ກ້າວ ເຖິງຂີດຊຳນານ
ປະຊາຊົນທະຫານ ຮ່ວມໃຈກັນແທ້
ແນ່ໃສ່ຍົນລົງຂວໍ້າ ຕໍ່ດິນຕົກມຸ່ນ
ເປັນຝຸ່ນເຖິງສີ່ຮ້ອຍ ປາຍແລ້ວບໍ່ຕາວຄືນ
ລາວເຮົານີ້, ທັງລົບທັງຊີຟື້ນ ສ້າງຊາດຄືນມາ
ຊິໄດ້ພາກັນຊຸດ ກົ່ນປອງແປງສ້າງ
ທັງສອງທາງບໍ່ວາງໄດ້ ກະທຳໄປພ້ອມພໍ່າ

ສັດຕູນໍາບອບບີ້ | ກໍ່ຕິໃຫ້ຊະນະມັນ
---|---
ເປັນດັ່ງນັ້ນ ແລະ ເຈົ້າ | ພໍ່ແມ່ທັງຫຼາຍ
ລາວຈຶ່ງກາຍເປັນທຸກ | ຍາກຈົນໃຈແຄ້ນ
ໝົດທັງແດນດິນດ້າວ | ເມືອງລາວທຸກໆແຫ່ງ
ບໍ່ໄດ້ຕົກແຕ່ງສ້າງ | ເສີມປ້ອງໃຫ້ຈະເລີນ
ເຮົາຈຶ່ງຂໍຮຽກເອີ້ນ | ມວນໝູ່ປະຊາກອນ
ຈົ່ງຢາກນອນຕາຫຼັບ | ຮີບຕື່ນມາດຽວນີ້
ສາມັກຄີກັນເຂົ້າ | ເລົາດຽວເປັນໝູ່
ລວມກໍາລັງກອບກູ້ | ເມືອງບ້ານອອກຈາກມານ...

# ບົດຕົວຢ່າງ
# ວິໄຈບົດກອນ "ສິ້ນແມ່"

## 1. ທີ່ມາຂອງບົດກອນ

ບົດກອນ "ສິ້ນແມ" ແມ່ນບົດກອນໜຶ່ງທີ່ນອນຢູ່ໃນປຶ້ມໂຮມບົດກອນ "ໂຫດແຫ່ງກາເມ" ເຊິ່ງປະດິດຄິດແຕ່ງໂດຍ "ຊາຍດອນໃຕ້" ເຊິ່ງຈັດພິມທີ່ສໍານັກພິມ ວັນນະສິນ ກະຊວງຖະແຫຼງຂ່າວ-ວັດທະນະທໍາ ປີ 2004, ໜ້າທີ 7-8 ເຊິ່ງລວມທັງໝົດ 5 ບາດດ້ອຍກັນ.

## 2. ເນື້ອໃນລວມ

ເວົ້າເຖິງວັດທະນະທໍາອັນດີງາມຂອງປະຊາຊົນລາວ ກໍຄືຊາດລາວເຮົາທີ່ເຄີຍປະຕິບັດກັນຕັ້ງແຕ່ໃດໆມາເຊິ່ງເວລາ ໃດກໍຕ້ອງຕໍ່າຫູກ, ຫຍິບປັກຖັກແສວໄວ້ໃຫ້ລູກຫຼານໄດ້ຊົມໃຊ້ ແລະ ສືບທອດມູນມັງມໍລະດົກຂອງພໍ່ແມ່ກໍຄືຂອງຊາດ ແລະ ຍັງເວົ້າເຖິງການກ່າວປະນາມໂຈມຕີແມ່ຍິງລາວຈໍານວນໜຶ່ງໃນຍຸກສະໄໝໃໝ່ ທີ່ເປັນລູກອະກະຕັນຍູ, ປະລະ ວັດທະນະທໍາລາວ ແລະ ຫັນໄປຊົມໃຊ້ວັດທະນະທໍາຂອງຄົນອື່ນໂດຍບໍ່ຄໍານຶງເຖິງຜົນທີ່ຈະຕາມມາ.

## 3. ແບ່ງຕອນ

ບົດກອນດັ່ງກ່າວແບ່ງອອກເປັນ 2 ຕອນຄື:

- ຕອນທີ 1 ນອນຢູ່ໃນບາດທີ 1 ແລະ 2

ເນື້ອໃນເວົ້າເຖິງປະເພນີ-ວັດທະນະທໍາຂອງລາວ ແລະ ມູນເຊື້ອດຸໝັ່ນຂະຫຍັນພຽນຂອງຄົນລາວໃນການຕໍ່າຫູກ, ຕໍ່າຜ້າແພ, ເຂັນຝ້າຍ ແລະ ອື່ນໆໄວ້ເປັນມໍລະດົກໃຫ້ລູກຫຼານໄດ້ສືບທອດກັນມາ.

- ຕອນທີ 2 ນອນຢູ່ໃນບາດທີ 3-4 ແລະ 5

ເນື້ອໃນເວົ້າເຖິງແມ່ຍິງລາວຈໍານວນໜຶ່ງໃນລາວທີ່ນິຍົມວັດທະນະທໍາຕາເວັນຕົກ ຈົນເຖິງຂັ້ນນໍາເອົາວັດທະນະທໍາ ຂອງເຂົາມານໍາໃຊ້ໃນລາວ ແລະ ຍັງລືມວັດທະນະທໍາລາວອີກ.

## 4. ວິເຄາະ

- **ວັດທະນະທໍາອັນດີງາມຂອງປະຊາຊົນລາວ**

ຊາດລາວເຮົາເປັນຊາດໜຶ່ງທີ່ມີຄວາມຈະເລີນກ້າວໜ້າທາງດ້ານວັດທະນະທໍາ ແລະ ປະເພນີມາແຕ່ດຶກນານແລ້ວ ໂດຍສະເພາະແມ່ນມູນເຊື້ອດຸໝັ່ນຂະຫຍັນພຽນ, ຫ້າວຫັນ ແລະ ປະຕິບັດສືບທອດວັດທະນະທໍາຂອງຊາດມາແຕ່ສະ ໄໝ ປູ່ຍ່າຕາຍາຍພຸ້ນ. ເປັນຕົ້ນແມ່ນການຕໍ່າຫູກ, ຕໍ່າຜ້າແພ, ເຂັນຝ້າຍ, ຫຍິບປັກຖັກແສ່ວ...ທີ່ສ້າງຂຶ້ນມາໂດຍສີມືຂອງຄົນ ລາວນັ້ນເອງ ເຊິ່ງປະກອບມີຫຼາຍລາຍສະຫຼັບສັບສີ, ມີສີສັນຢ່າງສວຍງາມເບິ່ງແລ້ວຈັບອົກຈັບໃຈ. ທັງນັ້ນກໍເພື່ອເສີມ ສ້າງໄວ້ໃຫ້ລູກຫຼານໄດ້ຊົມໃຊ້ນຸ່ງຫົ່ມ, ແລກປ່ຽນສິນຄ້າ ແລະ ໄວ້ເປັນມູນມັງມໍລະດົກຂອງພໍ່ແມ່. ນີ້ຄືປະເພນີທີ່ເຄີຍປະຕິບັດກັນມາ ດັ່ງບົດກອນຕອນທີ່ວ່າ:

ແມ່ລາວແພງຜືນຜ້າ ໂຮມກັນເອົາໄວ້ຫີບ

ໄວ້ປັນລູກເມື່ອໃຫຍ່ຂຶ້ນ　　　　ພໍຊິໄດ້ນຸ່ງຖື

- **ການນິຍົມຊົມໃຊ້ວັດທະນະທຳຕາເວັນຕົກຂອງແມ່ຍິງລາວຈຳນວນໜຶ່ງ**

ພໍຕົກມາເຖິງຍຸກປັດຈຸບັນກໍເລີ່ມເກີດມີຜູ້ຄົນທີ່ແຕກຕ່າງໄປຈາກເດີມ ໂດຍສະເພາະແມ່ນແມ່ຍິງລາວຈຳນວນນຶ່ງທີ່ ປ່ຽນຈາກການຊົມໃຊ້ວັດທະນະທຳແບບດັ່ງເດີມແລ້ວຫັນໄປຊົມໃຊ້ວັດທະນະທຳຂອງຊາດອື່ນເຊັ່ນ ນຸ່ງໂສ້ງຮັດໆສັ້ນໆ, ນຸ່ງກະໂປງ, ສະເກີດ, ທາເຂົ້າແປ້ງນ້ຳແດງເກີນຂອບເຂດ, ປ່ຽນສີຜົມເປັນສີເຫຼືອງສີແດງ...ຊ້ຳພັດຍ້ອງຕົນເອງວ່າງາມ, ເສັກສີ, ທັນສະໄໝ, ໄວລຸ້ນ ບໍ່ດ້ອຍພັດທະນາຄືພໍ່ແມ່ປູ່ຍ່າຕາຍາຍ. ດັ່ງບົດກອນຕອນທີ່ວ່າ:

ພັດໄປນຸ່ງໂສ້ງເຂົ້າ　　　　ຮັດຮຸ່ນຕາມສະໄໝ
ໃສ່ກະໂປງຊິງສະເກີດ　　　　ຍ່າງໂຊໂຕເນື້ອ
ຮອດບໍ່ເຫຼືອຫຍັງໄວ້　　　　ທາງໃນແມ່ປັ້ນແຕ່ງ
ເລື່ອງໝໍ້ແກງໝໍ້ນາ　　　　ບໍ່ສົນເວົ້າຫວງໃຍ

## 5. ສະຫຼຸບ

➢ **ດ້ານເນື້ອໃນ**

ບົດກອນດັ່ງກ່າວໄດ້ຍົກໃຫ້ພວກເຮົາເຫັນວັດທະນະທຳອັນດີງາມຂອງຊາດລາວ ແລະ ກ່າວປະນາມແມ່ຍິງລາວ ຈຳນວນໜຶ່ງທີ່ຫຼົງລືມ ແລະ ປະລະວັດທະນະທຳຂອງຕົນເອງແລ້ວໄປນິຍົມຊົມໃຊ້ວັດທະນະທຳຕາເວັນຕົກ.

➢ **ດ້ານສິລະປະ**

ບົດກອນດັ່ງກ່າວຜູ້ແຕ່ງໄດ້ໃຊ້ສັບພາສາທຳມະດາ, ເຂົ້າໃຈງ່າຍ, ເກາະກາຍກັນ, ສອດຄ່ອງກັບຫຼັກຄຳປະຈຳປອນ ແລະ ສາມາດດຶງດູດຈິດໃຈຂອງຜູ້ອ່ານຜູ້ຟັງໄດ້.

# ບົດກອນ "ສິ້ນແມ່"

ຕັ້ງແຕ່ຄາວແມ່ລ້ຽງ　　　　ຕ່ຳແຜ່ນແພຜືນ
ຕະໂລງລາຍລາວຕັດ　　　　ຕ່ຳໆເຕັມບ້ານ
ພໍນຸ່ງໄປຫາຫຼິ້ນ　　　　ໄປງານໄປຊຸມໝູ່
ມີທັງໄໝ ແລະ ຝ້າຍ　　　　ແພອີໂປ້ມັດແອວ
ສ່ວນແມ່ແພສິ້ນ　　　　ລາຍດອກສັບສີ
ມີທັງໄໝຜືນງາມ　　　　ຕ່ຳຕົນຕັດໄວ້
ແມ່ລາວແພງຜືນຜ້າ　　　　ໂຮມກັນເອົາໄວ້ຫີບ
ໄວ້ບັນລຸກເມື່ອໃຫຍ່ຂຶ້ນ　　　　ພໍຊິໄດ້ນຸ່ງຖື
ບາດລູກໃຫຍ່ໃຈແຕກມ້າງ　　　　ວ່າຄົນໃໝ່ຕາມສະໄໝ
ອາໄລແພຜືນ　　　　ແມ່ຕ່ຳເກັບໄວ້
ລູກລະອາຍບໍ່ຫານເວົ້າ　　　　ເອົາຖືບໍ່ຄືໝູ່
ດຽວນີ້ໂລກກ້າວໜ້າ　　　　ຂີ້ງາເຈົ້າ ຂ້ອຍບໍ່ເອົາ ວ່າຊັ້ນ
ພັດໄປນຸ່ງໂສ້ງເຂົ້າ　　　　ຮັດຮຸ່ນຕາມສະໄໝ
ໃສ່ກະໂປງຊິງສະເກີດ　　　　ຍ່າງໂຊໂຕເນື້ອ
ຮອດບໍ່ເຫຼືອຫຍັງໄວ້　　　　ທາງໃນແມ່ປັ້ນແຕ່ງ
ເລື່ອງໝໍ້ແກງໝໍ້ນ້ຳ　　　　ບໍ່ສົນເວົ້າຫວງໃຍ
ສິ້ນແມ່ຮອດບໍ່ໃກ້　　　　ເອົາມານຸ່ງຊິເສຍສີ
ເກັບທ້ອນໂຮມບາດລາວຕາຍ　　　　ຊິສິ່ງບັງສະກຸນໃຫ້
ບໍ່ເຫຼືອລາຍລາວແຕ້ມ　　　　ສີມີມັດໝີ
ບາດເທື່ອທີ່ຢາກໄດ້　　　　ໄຟພັດໄໝ້ຮອດບໍ່ຍັງ ນ້ອງເອີຍ.

## ບົດຕົວຢ່າງ
## ວິໄຈບົດກອນ “ຄະຕິສອນໃຈ”

### 1. ທີ່ມາຂອງບົດກອນ

ບົດກອນ “ຄະຕິສອນໃຈ” ໂດຍ ອິນທະສານສອນລູກ ແມ່ນບົດກອນສັ່ງສອນຄົນເຮົາບົດໜຶ່ງທີ່ນອນຢູ່ໃນປຶ້ມ ພາສາລາວ-ວັນນະຄະດີ ສໍາລັບກຽມສອບເສັງຈົບຊັ້ນ ແລະ ເສັງເຂົ້າໂຮງຮຽນວິຊາຊີບ ຂອງ ອ.ຈ ສຽວສະຫວາດ ສິດທິ ໂສມ ປີ 2006 ໜ້າທີ 39 ເຊິ່ງລວມມີທັງໝົດ 4 ບາດດ້ວຍກັນ.

### 2. ເນື້ອໃນລວມ

ເວົ້າເຖິງເດັກທີ່ເກີດໃໝ່ໃຫຍ່ລຸນໃນສະໄໝປະຈຸບັນທີ່ເປັນຄົນດີດ້ານຫົວແຂງບໍ່ຟັງຄວາມພໍ່ແມ່ພີ່ນ້ອງແຕ່ພັດມັກ ຈະຫຼົງເຊື່ອຄົນອື່ນ ແລະ ຍັງເວົ້າເຖິງບຸນຄຸນຂອງພໍ່ແມ່ທີ່ມີຕໍ່ລູກອັນຊອກຫາສິ່ງໃດໃນໂລກມາປຽບບໍ່ໄດ້ເຊິ່ງວ່າເວລາໃດ ເພິ່ນກໍຄອຍໃຫ້ຄໍາສັ່ງສອນຕັກເຕືອນລູກໃຫ້ລູກກາຍເປັນຄົນດີ ຖ້າຫາກລູກບໍ່ຈົດຈໍາຄໍາສັ່ງສອນ, ເຄົາລົບປະຕິບັດ ແລະ ນໍາໃຊ້ໃຫ້ຖືກຕ້ອງຈະພາໃຫ້ລູກຕົກໄປໃນທາງທີ່ບໍ່ດີໄດ້.

### 3. ແບ່ງຕອນ

ບົດກອນ “ຄະຕິສອນໃຈ” ແບ່ງອອກເປັນ 3 ຕອນຄື:

ຕອນທີ 1 ນອນຢູ່ໃນບາດທີ 1

ເນື້ອໃນເວົ້າເຖິງ ເດັກທີ່ເກີດໃໝ່ໃຫຍ່ລຸນທີ່ເປັນຄົນດີດ້ານຫົວແຂງບໍ່ຟັງຄວາມພໍ່ແມ່ພີ່ນ້ອງແຕ່ພັດມັກຈະຫຼົງເຊື່ອ ຄົນອື່ນ.

ຕອນທີ 2 ກວມເອົາບາດທີ 2 ແລະ ບາດທີ 3

ເນື້ອໃນເວົ້າເຖິງເຖິງບຸນຄຸນ ແລະ ຄໍາສັ່ງສອນຕັກເຕືອນຂອງພໍ່ແມ່ທີ່ມີຕໍ່ລູກ ຍ້ອນຢາກໃຫ້ລູກກາຍເປັນຄົນດີ, ຮູ້ຈັກເຄົາລົບນັບຖືພໍ່ແມ ແລະ ປະຕິບັດຕົນໃຫ້ຖືກຕ້ອງ.

ຕອນທີ 3 ນອນຢູ່ໃນບາດທີ 3

ເນື້ອໃນເວົ້າເຖິງ ຄວາມຫວັງດີຈາກໃຈຜູ້ແຕ່ງຈຶ່ງໄດ້ເຕືອນໃຫ້ລູກທຸກຄົນບໍ່ຄວນເປັນຄົນອະກະຕັນຍູເພາະກໍາມັນ ຈະຕາມສະໜອງ.

### 4. ວິເຄາະ

**ເດັກທີ່ເກີດໃໝ່ໃຫຍ່ລຸນທີ່ເປັນຄົນດີດ້ານຫົວແຂງບໍ່ຟັງຄວາມພໍ່ແມ່ພີ່ນ້ອງແຕ່ພັດມັກຈະຫຼົງເຊື່ອຄົນອື່ນ**

ເດັກທີ່ເກີດໃໝ່ໃຫຍ່ລຸນໃນສະໄໝປັດຈຸບັນສ່ວນຫຼາຍແລ້ວແມ່ນເດັກໄວລຸ້ນໄຟແຮງບໍ່ມັກຟັງຄົນອື່ນສັ່ງສອນ, ເອົາແຕ່ໃຈຕົນເອງ ຫາກວ່າໃຜເວົ້າໃຫ້ຫຼາຍແມ່ນຈະຖືກກຽດຊັງ ແລະ ຕອບໂຕ້ຄືນຢ່າງບໍ່ຮູ້ອັບອາຍ ອີກຈໍານວນໜຶ່ງ ແມ່ນແຕ່ພໍ່ແມ່ກໍຍັງບໍ່ເຄົາລົບນັບຖື ຍັງຝືນດື້ໄປເຮັດສິ່ງທີ່ບໍ່ເໝາະສົມຕາມການຊັກຊວນຂອງຄົນອື່ນໂດຍບໍ່ຄໍານຶງເຖິງ ຜົນເສຍທີ່ຈະຕາມມາ. ດັ່ງຄໍາກອນຕອນທີ່ວ່າ

ບໍ່ຖືຄໍາສອນປ່າ ລຸງຕາພໍ່ ແລະ ແມ່
ເຖົ້າແກ່ເຕືອນຕອບໂຕ້ ປະໂຫດ້ານບໍ່ຕື່ນໃຈ

**➢ ບຸນຄຸນ ແລະ ຄໍາສັ່ງສອນຕັກເຕືອນຂອງພໍ່ແມ່ທີ່ມີຕໍ່ລູກ ຍ້ອນຢາກໃຫ້ລູກເປັນຄົນດີ**

ບຸນຄຸນຂອງພໍ່ແມ່ນີ້ ແມ່ນຍິ່ງໃຫຍ່ທີ່ສຸດໃນໂລກເຊິ່ງຊອກຫາສິ່ງໃດມາປຽບບໍ່ໄດ້ ສະນັ້ນ, ເຮົາເປັນລູກຕ້ອງຮູ້ຈັກຮັກ ແລະ ເຄົາລົບນັບຖືພໍ່ແມ່ໃຫ້ສົມກຽດ ສົມທີ່ເພິ່ນໄດ້ລ້ຽງດູ ດູແລຕົນເອງຕັ້ງແຕ່ນ້ອຍຈົນໃຫຍ່ໂຕມີເຮື່ອມີແຮງ, ມີຄວາມ ຮູ້ຄວາມສາມາດ ແລະ ຢູ່ຫຼອດນໍາສັງຄົມໄດ້ຄືທຸກວັນນີ້ ຖ້າຈະໃຫ້ໄຊ້ບຸນຄຸນຂອງພໍ່ແມ່ແມ່ນຊິໄຊ້ຈັກຊາດກໍບໍ່ໝົດເພາະວ່າບຸນຄຸນຂອງພໍ່ແມ່ແມ່ນເທົ່າຟ້າກັບແຜ່ນດິນ ຍ້ອນຄວາມຮັກ ແລະ ຄວາມຫ່ວງໃຍຂອງພໍ່ແມ່ທີ່ມີຕໍ່ລູກ ພໍ່ແມ່ຈິ່ງ ສັ່ງສອນຕັກເຕືອນສະຕິຂອງລູກເປັນປະຈໍາເພື່ອໃຫ້ລູກເຂົ້າໃຈ ແລະ ຈົດຈໍາໄດ້ ແລ້ວນໍາໄປໝູນໃຊ້ ແລະ ປະຕິບັດໃຫ້ ຖືກຕ້ອງ ດັ່ງຄໍາກອນຕອນທີ່ວ່າ:

ຄຸນຂອງພໍ່ແມ່ນີ້ ໜັກເກິ່ງທໍລະນີທ່ານເອີຍ
ຄວນທີ່ຄົນຄະນຶງນຶບ ແນບປະນົມນຽມນ້ອມ

| | |
|---|---|
| ຫອມຮັກແພງພຽນລ້ຽງ | ຖະໜອມແລຫຼີງລໍ່າ |
| ຄໍາເພິ່ນສອນສັ່ງໃຫ້ | ຈືດຈໍາໄວ້ຢ່າລືມ |

➢ **ຄວາມຫວັງດີຈາກໃຈຜູ້ແຕ່ງ ຈຶ່ງໄດ້ເຕືອນສະຕິໃຫ້ລູກທຸກຄົນບໍ່ຄວນເປັນຄົນອະກະຕັນຍູ ເພາະກໍາມັນຈະຕາມສະໜອງ**

ຕະຫຼອດໄລຍະເວລາອັນຍາວນານ ແລະ ປະສົບການຕົວຈິງທີ່ຜູ້ແຕ່ງໄດ້ພົບເພາະເຫັນມາ ຜູ້ແຕ່ງຈຶ່ງໄດ້ແຕ່ງກອນ ບົດນີ້ຂຶ້ນມາເພື່ອເປັນຄະຕິສອນໃຈໃຫ້ຄົນເຮົາບໍ່ຄວນເປັນລູກອະກະຕັນຍູ, ຫຼົງລືມບຸນຄຸນ ຫຼື ໃຊ້ອາລົມກັບພໍ່ແມ່ ເປັນອັນຂາດ ເພາະວ່າການກະທໍາສິ່ງທີ່ບໍ່ດີກັບຜູ້ໃຫ້ກໍາເນີດເຮົາມັນມີບາບມີກໍາຕາມສະໜອງຈິງແທ້ ດັ່ງບົດກອນ ຕອນທີ່ວ່າ:

| | |
|---|---|
| ໃຜຫາກຄິດເຄັ່ງຮ້າຍ | ລືມຝ່າຍບິດາ |
| ທັງແມ່ມານດາ | ປະປ່ອຍເສຍໂສຖິ້ມ |
| ຕັດຂາດກຸດສູນແລ້ວ | ລາໄລໄກຫ່າງ |
| ທາງຊີວິດທ່ານຊີຮ່າງ | ເວນຊິຈໍາຈ່ອງຂ້າງ ຄາງຮ້ອງຮັບແຕ່ກ່າ ແລ້ວນໍ |

## 5. ສະຫຼຸບ

### ກ. ດ້ານເນື້ອໃນ

ຜູ້ແຕ່ງໄດ້ສອງແສງໃຫ້ພວກເຮົາເຫັນເຖິງ ເດັກທີ່ເປັນຄົນດີດ້ານຫືອແຂງບໍ່ຟັງຄວາມພໍ່ແມ່ພີ່ນ້ອງ ແລະ ສ່ອງແສງ ເຖິງບຸນຄຸນຂອງພໍ່ແມ່ທີ່ມີຕໍ່ລູກເຊິ່ງວ່າເວລາໃດ ເພິ່ນກໍສັ່ງສອນຕັກເຕືອນລູກໃຫ້ລູກກາຍເປັນຄົນດີ ເພາະການເປັນ ລູກອັກກະຕັນຍູກໍມັນຈະຕາມສະໜອງ.

### ຂ. ດ້ານສິລະປະ

ບົດກອນດັ່ງກ່າວຜູ້ແຕ່ງໄດ້ໃຊ້ສັບພາສາທໍາມະດາ, ເຂົ້າໃຈງ່າຍ, ເກາະກ່າຍກັນ, ສາມາດເຮັດໃຫ້ຜູ້ອ່ານຜູ້ຟັງເກີດອາລົມຈິດສະເທືອນໃຈ ແລະ ຈິນຕະນາການເຫັນຮູບພາບລະຫວ່າງພໍ່ແມ່ ກັບ ລູກໄດ້ໂດບທຽບໃສ່ຕົວເອງ ພ້ອມກັນນັ້ນຍັງເປັນບົດກອນທີ່ສາມາດດຶງດູດຈິດໃຈຂອງຜູ້ອ່ານຜູ້ຟັງທີ່ເຄີຍກະທໍາສິ່ງທີ່ບໍ່ດີຕໍ່ພໍ່ແມ່ໃຫ້ກັບຕົວກັບໃຈ ໄປຂໍໂທດ ແລະ ຮັກພໍ່ແມ່ຫຼາຍເທົ່າກວ່າເກົ່າໄດ້.

## ບົດກອນ "ຄະຕິສອນໃຈ"

| | |
|---|---|
| ສາວເອີຍສາວສໍ່ານ້ອຍ | ຖືກເຂົາອອຍອອຍໜັກ ລະວັງເນີ |
| ມັກໄຝ່ຝັນຢາກຝືນລອງ | ລ່ອງລາມລອງດີ້ |
| ບໍ່ຖືຄໍາສອນປ່າ | ລຸງຕາພໍ່ ແລະ ແມ່ |
| ເຖົ້າແກ່ເຕືອນຕອບໂຕ້ | ປະໂຫດ້ານບໍ່ຕື່ນໃຈ |
| ຄຸນຂອງພໍ່ແມ່ນີ້ | ໜັກເຖິງທໍລະນີທ່ານເອີຍ |
| ຄວນທີ່ຄົນຄະນຶງນຶບ | ແນບປະນົມນຽມພ້ອມ |
| ຫອມຮັກແພງພຽນລ້ຽງ | ຖະໜອມແລຫຼີງລໍ່າ |
| ຄໍາເພິ່ນສອນສັ່ງໃຫ້ | ຈືດຈໍາໄວ້ຢ່າລືມ |
| ຄໍາປາກພໍ່ແມ່ເຈົ້າ | ວອນເລົ່າລົມສອນ |
| ໃຫ້ຂອມຄອນໆຄິດ | ຄອຍຄະນຶງມະໂນນ້ອມ |
| ຖະໜອມຈໍາຈິດແຕ້ມ | ຢາໂລເລລວນລ່ອງ |
| ຍ້ອນເພິ່ນຫວງຮັກເຈົ້າ | ເອົາຄວາມດີຊ່ອຍສ້າງບໍ່ວາງຕໍ່ຕອນຄໍ່າ |
| ໃຜຫາກຄິດເຄັ່ງຮ້າຍ | ລືມຝ່າຍບິດາ |
| ທັງແມ່ມານດາ | ປະປ່ອຍເສຍໂສຖິ້ມ |
| ຕັດຂາດກຸດສູນແລ້ວ | ລາໄລໄກຫ່າງ |
| ທາງຊີວິດທ່ານຊີຮ້າງ | ເວນຊິຈໍາຈ່ອງຂ້າງ ຄາງຮ້ອງຮັບແຕ່ກໍາ ແລ້ວນໍ |

# ບົດຕົວຢ່າງ
# ວິໄຈບົດກອນ “ຮອຍອະດີດ”

## 1. ທີ່ມາຂອງບົດກອນ

ບົດກອນ “ ຮອຍອະດີດ ” ເປັນບົດກອນທີ່ສ່ອງແສງໃຫ້ເຫັນເຖິງເຫດການຕົວຈິງ ຫຼື ຮ່ອງ ຮອຍໃນອະດີດ ທີ່ ບັນດາທ່ານຜູ້ນໍາລາວພົບພໍ້, ເຊິ່ງແມ່ນຜົນງານການປະດິດຄິດແຕ່ງຂອງທ່ານ ຄໍາພໍ ພອງສະບາ ຄັດຈາກປຶ້ມ ລວມ ບົດ ແຂ່ງຂັນກາບກອນລະນຶກມື້ສ້າງຕັ້ງກອງທັບປະຊາຊົນລາວຄົບຮອບ 45 ປີ “ ຮັກຈາກໃຈ " ຈັດພິມໂດຍ ພະ ແນກວັດ ທະນະທໍາກອງທັບ, ປີ 1995 ໜ້າທີ 5-7 ລວມມີທັງໝົດ 10 ບາດ.

## 2. ເນື້ອໃນລວມ

ເວົ້າເຖິງທໍາມະຊາດໃນເມືອງລາວທີ່ອຸດົມສົມບູນເຕັມໄປດ້ວຍຕົ້ນໄມ້ໃບຫຍ້າອັນດົກໜາເຊິ່ງເປັນທີ່ພັກ ເຊົາ- ຂົນຂວາຍກໍາລັງຮັກສາດ່ານຂອງແນວລາວຮັກຊາດ, ສັນລະເສີນຄວາມເກັ່ງກ້າສາມາດສະຫຼາດຫຼັກແຫຼມຂອງ ບັນດາ ທ່ານຜູ້ນໍາລາວທີ່ໂຕນອອກຈາກຄຸກໂພນເຄັງວຽງຈັນ ດ້ວຍນໍ້າໃຈປະຕິວັດອັນເດັດດ່ຽວໝຽວແໜ້ນບໍ່ມີວັນ ຫ່ຽວແຫ້ງ ແລະ ມີຍຸດທະວິທີໃນການຕໍ່ສູ້ ຫຼົບຫຼີກສັດຕູ ຈຶ່ງສາມາດກັບຄືນສູ່ເຂດທີ່ໝັ້ນໄດ້ຢ່າງປອດໄພ. ນອກນັ້ນ , ຍັງເວົ້າເຖິງ ການປຸກລະດົມນໍ້າໃຈຂອງປະຊາຊົນລາວໃຫ້ຮູ້ຈັກຮັກປະເທດຊາດ ແລະ ປົກປັກຮັກສາຮ່ອງຮອຍ ຂອງທ່ານຜູ້ນໍາໄວ້ຮຽງ ຄຽງຄູ່ຊາດລາວຕະຫຼອດໄປ.

## 3. ແບ່ງຕອນ

ບົດກອນ “ ຮອຍອະດີດ " ຂອງທ່ານ ຄໍາພໍ ພອງສະບາ ແບ່ງອອກເປັນ 3 ຕອນຄື:

ຕອນທີ 1 ກວມເອົາບາດທີ 1 - 3

ເນື້ອໃນ ເວົ້າເຖິງທໍາມະຊາດ ກົກໄຮ-ຂາມ ອັນມີໃບດົກໜາສະຫງ່າງາມດັ່ງເຮືອນຫໍ ເຊິ່ງເປັນບ່ອນພັກເຊົາ ແລະ ຂົນຂວາຍກາງລັງຮັກຊາດເພື່ອຕໍ່ສູ້ຕ້ານສັດຕູທີ່ລ່ວງແດນ.

ຕອນທີ 2 ກວມເອົາບາດທີ 4 - 7

ເນື້ອໃນ ເວົ້າເຖິງຄວາມສະຫຼາດຫຼັກແຫຼມ, ມີພິກໄຫວໃນການເດີນທາງ ແລະ ຊ້ອນຕົວເອົາຕົວຫຼອດໄດ້ໃນ ເວລາ ອອກຈາກຄຸກໂພນເຄັງກັບສູ່ເຂດທີ່ໝັ້ນຂອງບັນດາຂອງບັນດາທ່ານຜູ້ນໍາລາວ ທັງໄດ້ຮັບການຮັບຕ້ອນ-ຂົນສົ່ງ ໂດຍ ປະຊາຊົນລາວທີ່ຮັກຊາດ.

ຕອນທີ 3 ກວມເອົາບາດທີ 8 – 9

ເນື້ອໃນ ເວົ້າເຖິງການອະທິບາຍເຫດການຕ່າງໆທີ່ທ່ານຜູ້ນໍາລາວໄດ້ພົບພໍ້ຕົວຈິງໃນອະດີດ ຂອງນັກແຕ່ງ ແລະ ນັກແຕ່ງຍັງໄດ້ປຸກລະດົມນໍ້າໃຈຂອງຄົນລາວເຮົາ ໃຫ້ຮູ້ຈັກຮັກປະເທດຊາດ-ບ້ານເກີດເມືອງນອນ ແລະ ພ້ອມ ກັນປົກ ປັກຮັກສາສັບສົມບັດ ຫຼື ຮອຍອະດີດຂອງທ່ານຜູ້ນໍາໄວ້.

## 4. ວິເຄາະ

**- ທໍາມະຊາດ ກົກໄຮ-ຂາມ ອັນມີໃບດົກໜາສະຫງ່າງາມດັ່ງເຮືອນຫໍຫ້ອງ ເຊິ່ງເປັນບ່ອນພັກເຊົາ ແລະ ຂົນຂວາຍ ກໍາລັງຮັກຊາດໄປຕໍ່ສູ້ຕ້ານສັດຕູທີ່ລ່ວງແດນ.**

ປະເທດລາວເຮົາ ເປັນປະເທດທີ່ອຸດົມສົມບູນເຕັມໄປດ້ວຍຊັບພະຍາກອນທໍາມະຊາດອັນມີຄ່າ, ມີຕົ້ນໄມ້ ໃບຫຍ້າ ຫຼາກຫຼາຍຊະນິດທີ່ຂຽວງາມອຸ້ມທຸ້ມຕະຫຼອດປີ. ອັນເວົ້າໄດ້ວ່າ ປະຊາຊົນລາວໃນສະໄໝນັ້ນແມ່ນ ອາໄສທໍາມະຊາດ ເປັນບ່ອນທໍາມາຫາກິນ, ພັກພາອາໄສ ແລະ ທັງເປັນບ່ອນຊ້ອນຕົວ-ຂົນຂວາຍນັກຮົບປະຕິວັດໄປ ຮັກສາດ່ານດິນແດນ ເພື່ອຕໍ່ສູ້ຕ້ານສັດຕູຜູ້ຮຸກຮານ. ພິເສດຍັງມີກົກໄຮກົກໜຶ່ງເຊິ່ງເກີດຢູ່ໃກ້ກັບກົກຂາມໃນດິນ ດອນຕອນໜຶ່ງເຂດນາຊາຍທອງ ແຄມສາຍນໍ້າຊ່ວງບ່ອນທີ່ຄົນສ່ວນຫຼາຍບໍ່ພົບເພາະອັນມີໃບດົກໜາປົກຫຸ້ມຢ່າງ ສວຍງາມ ເປັນບ່ອນພັກເຊົາໃຫ້ ຮົ່ມແກ່ປະຊາຊົນໃນຂົງເຂດນັ້ນ ແລະ ທັງເປັນບ່ອນຂົນຂວາຍກໍາລັງຂອງຝ່າຍ ປະຕິວັດລາວໄປຮັກສາດິນດອນຕອນຫຍ້າ ເພື່ອບໍ່ໃຫ້ສັດຕູເຂົ້າມາທໍາລາຍເຂດທີ່ໝັ້ນຂອງແນວລາວຮັກຊາດໄດ້. ດັ່ງບົດກອນຕອນໜຶ່ງທີ່ວ່າ:

ຄາວນັ້ນຍັງມີຖຽງໜຶ່ງນ້ອຍ ຢູ່ໃຕ້ຮົ່ມໄຮສີ
ເປັນຖຽງລຸງສາລີ ຕັ້ງຕໍ່ຂຶ້ນຂວາຍສ້າງ
ພັກເຊົາເນົາຢັ້ງ ວາງກໍາລັງຮັກສາຕາມ
ຕ້ານສັດຕູໃຫຍ່ນ້ອຍ ທີ່ຄອຍລໍ້າລ່ວງແດນ "

- **ຄວາມສະຫຼາດຫຼັກແຫຼມ, ມີພິກໄຫວໃນການເດີນທາງ ແລະ ຊ້ອນຕົວເອົາຕົວຫຼອດໄດ້ໃນເວລາອອກຈາກຄຸກໂພນ ເກັ່ງກັບສູ່ເຂດທີ່ໝັ້ນຂອງບັນດາຂອງບັນດາທ່ານຜູ້ນໍາລາວ ທັງໄດ້ຮັບການຮັບຕ້ອນ-ຂົ່ນສົ່ງໂດຍປະຊາຊົນລາວທີ່ຮັກ ຊາດ.**

ໃນເວລາທີ່ບັນດາທ່ານຜູ້ນໍາລາວໂຕນອອກຈາກຄຸກໂພນເຄັ່ງວຽງຈັນ ເພື່ອຈະກັບໄປສູ່ເຂດທີ່ໝັ້ນນັ້ນ ພໍ່ແຕ່ມາເຖິງເຂດແດນໃກ້ຕົ້ນໄຮ-ຂາມລຸງສາລີກໍຕ້ອນຮັບຢ່າງອົບອຸ່ນ ແລະ ນໍາພາຜູ້ນໍາລາວໄປເຊື່ອງຊ້ອນໃນຕົ້ນໄຮ-ຂາມອັນ ເຮັດໃຫ້ສັດຕູທີ່ນໍາຫຼັງຕາມກົ້ນມາຫວັງຈະຈັບທ່ານຜູ້ນໍາເຂົ້າຄຸກເປັນຮອບທີສອງໄປຂັງໄວ້ ຫຼື ຫວັງຈະດັບສູນທ່ານຜູ້ນໍາ ນັ້ນ ຕາມບໍ່ຈອບຊອກບໍ່ເຫັນ ຍ້ອນກົກໄຮຂາມທີ່ມີໃບດົກໜານັ້ນປົດບັງເອົາໄວ້. ທັງຖືກອ້າຍນ້ອງຂອງຝ່າຍປະຕິວັດ ຕໍ່ຕ້ານຕີຄືນຈົນແຕກຊະແຕກຊາຍເກືອບຈະດັບສູນ ຜູ້ບໍ່ຕາຍກໍປົບໜີຈົນບໍ່ກ້າຈະຫຼຽວຄືນຫຼັງໄດ້ອີກ. ດັ່ງບົດກອນຕອນທີ່ວ່າ:

" ສັດຕງົມທົ່ວດ້າວ ຫາວຮອດເຄືອຫວາຍ
ໝາຍຈະຈັບຜູ້ນໍາເຮົາ ຮອບສອງຂັງໄວ້
ແຕ່ໄຮ-ຂາມຜື້ງ ເປັນວົງອາຍອຸ່ນ
ສັດຕູສູນຕື່ງໆ ເພາະຄໍາສີ້ນບໍ່ເຫັນ "

ເຫດການດັ່ງກ່າວໃນວັນນັ້ນໄດ້ກາຍເປັນບົດຮຽນ, ເປັນແບບຢ່າງອັນດີເດັ່ນ ແລະ ເປັນພາບຕິດຕົວຕິດໃຈປະຊາຊົນລາວຕະຫຼອດມາ ບໍ່ວ່າເວລາໃດກໍຍັງຄິດຄະນຶງຫາພາບຂອງການນໍາລາວຜູ້ເກັ່ງກ້າສາມາດຮອບດ້ານທີ່ໄດ້ເດີນທາງຜ່ານ ແລະ ມາພັກເຊົາໃນຕົ້ນໄຮ-ຂາມທີ່ນັ້ນ. ພໍແຕ່ຄະນຶງຫາເຫດ ການໃນວັນນັ້ນ ກໍເກີດຄວາມຄຽດແຄ້ນກຽດຊັງສັດຕູຜູ້ຮຸກຮານ ທີ່ທໍາລາຍເຜົາຜ່ານເຮືອນຊານ ບ້ານຊ່ອງ ແລະ ທໍາລາຍຄວາມຢູ່ເຢັນເປັນສຸກຂອງປະຊາຊົນລາວນັ້ນ ຈົນກວ່າບໍ່ມີອັນທຽບເທົ່າໄດ້ ແລະ ເກີດນໍ້າໃຈປະຕິວັດ, ຕໍ່ສູ້ຕ້ານສັດຕູຢ່າງເດັດດ່ຽວໜຽວແໜ້ນບໍ່ຍອມຈໍານົນໃຫ້ສັດຕູເຂົ້າມາແຊກແຊງ ຮຸກຮານອີກ. ເພື່ອໃຫ້ຊາດລາວເຮົາໄດ້ຢູ່ຢ່າງສັນຕິສຸກ ແລະ ໄດ້ໃຊ້ຊີວິດຢ່າງເຕັມທີ່ເຂົ້າ ໃນການພັດທະນາປະເທດຊາດໃຫ້ຈະເລີນກ້າໜ້າ. ດັ່ງບົດກອນຕອນທີ່ວ່າ:

" ແຕ່ນໍ້າໃຈປະຕິວັດບໍ່ແລ້ງ ແຫ້ງຂອບຍອມຈໍານົນ ດອກນາ
ຫົນແກ່ນແຂງເໝືອນເພັດ ເພື່ອອຸດົມການກ້າວ
ຫວັງເພື່ອລາວເຮົາໄດ້ ສັນຕິປອງປາງປະເສີດ
ເໜີດໝູ່ມານທ່ານທ້າວ ທີ່ມາເຂົ້າແຊກແຊງ ເຈົ້າເອີຍ "

- **ການອະທິບາຍເຫດການຕ່າງໆທີ່ທ່ານຜູ້ນໍາລາວໄດ້ພົບພໍ້ຕົວຈິງໃນອະດີດ ຂອງນັກແຕ່ງ ແລະ ນັກແຕ່ງຍັງໄດ້ປຸກລະດົມນໍ້າໃຈຂອງຄົນລາວເຮົາ ໃຫ້ຮູ້ຈັກຮັກປະເທດຊາດ-ບ້ານເກີດເມືອງນອນ ແລະ ພ້ອມກັນປົກປັກຮັກສາ ສັບສົມບັດ ຫຼື ຮອຍອະດີດຂອງທ່ານຜູ້ນໍາໄວ້**

ບົດກອນນີ້ໄດ້ປະດິດຄິດແຕ່ງຂຶ້ນມາຕາມຄວາມເປັນຈິງ ທີ່ຜູ້ແຕ່ງໄດ້ພົບພໍ້ ຫຼື ຮັບຮູ້ເຫດການໃນໄລຍະທີ່ທ່ານ ຜູ້ນໍາລາວໂຕນອອກຈາກຄຸກແລ້ວມາພັກເຊົາ, ຫຼົບຫຼີກສັດຕູທີ່ນໍາມາຈັບທ່ານຜູ້ນໍາໃນກົກໄຮ-ຂາມທີ່ນັ້ນ. ດັ່ງນັ້ນ, ພັກ- ລັດເຮົາຈຶ່ງຫວງແຫນປົກປັກຮັກສາສະຖານທີ່ດັ່ງກ່າວ ໄວ້ໃຫ້ຄົນລາວທີ່ເກີດໃໝ່ໃຫຍ່ລຸນໄດ້ແວ່ຊົມ ແລະ ລະນຶກພາບ ອະດີດທີ່ຜູ້ນໍາລາວໄດ້ສ້າງວິລະກໍາ-ພົ້ນຈາກຄວາມຕາຍໃນທີ່ນັ້ນ. ດັ່ງບົດກອນຕອນທີ່ວ່າ:

" ຕັ້ງແຕ່ພຸ້ນຮອດນີ້ ກໍຫຼາຍຊົ່ວປາງປີ ມາແລ້ວ
ຄັນທ່ານມີເວລາ ໄປແວ່ຊົມກໍ່ຍັງໄດ້
ຈະຊ່ອຍເບີ່ງແຍງໃຫ້ ເຫັນຮອຍພາບອະດີດ
ຄິດໄຄ່ຄວນເມື່ອຄັ້ງ ຜູ້ນໍາສ້າງວິລະກໍາ "

ບົດກອນຍັງໄດ້ປຸກລະດົມນໍ້າໃຈຂອງຄົນລາວເຮົາໃຫ້ຮູ້ຈັກຮັກຊາດ, ຮັກບ້ານເກີດເມືອງນອນ, ຮັກເຊື້ອຊາດເຜົ່າ ພັນລາວດ້ວຍກັນ, ຢ່າໄດ້ແບ່ງແຍກຊົນຊັ້ນວັນນະຖານະກຽດຕິຍົດ, ຢ່າທໍລະຫົດປະເທດຊາດ, ລະປະໃຫ້ຊົນຊາດອື່ນມາ ຄອບຄອງ, ຫຼົງລືມຄວາມສໍາຄັນຂອງປະເທດຊາດເຫັນແກ່ວັດຖຸເງິນຄໍາເປັນອັນຍິ່ງ... ເຮົາເປັນຄົນລາວຕ້ອງເປັນເຈົ້າ ຂອງຂອງປະເທດລາວ, ທັງພ້ອມກັນປົກປັກຮັກສາບໍ່ໃຫ້ຊາດອື່ນເຂົ້າມາແຊກແຊງປາບປາມໄດ້. ຫາກພວກເຮົາບໍ່ຮ່ວມ ແຮງຮ່ວມໃຈກັນປົກປ້ອງຮັກສາບ້ານເມືອງປະເທດຊາດໄວ້ ຊື່ທີ່ວ່າປະເທດລາວກໍຈະເຊື່ອມເສຍແທ້ໄດ. ດັ່ງບົດກອນ ຕອນທີ່ວ່າ:

| | |
|---|---|
| " ເຊົ້າຄໍ່າຄືນຢູ່ຊົ້ນ | ໄຮປ່າຫີນທຸກ |
| ປຸກລະດົມນໍາພາ | ຜ່າຜະເຊີນຫັນຫ້າວ |
| ເຈົ້າຜູ້ນອນເຮືອນຫ້າງ | ວຽງວັງກາງຜາສາດ ຮຽມເອີຍ |
| ຄວາມຮັກຊາດຢ່າລອຍເບ້ຍ | ຊິເສຍເຊື້ອຊື່ວ່າລາວ ເຈົ້າເອີຍ " |

## 5. ສະຫຼຸບ

➢ **ດ້ານເນື້ອໃນ**

ບົດກອນ " ຮອຍອະດີດ " ຜູ້ແຕ່ງໄດ້ສະທ້ອນຄືນກ່ຽວກັບເຫດການໃນອະດີດທີ່ທ່ານຜູ້ນ□າລາວໂຕນອອກຈາກ ຄຸກໂພນເຄັງມາພັກພາອາໄສທີ່ກົກໄຮ-ຂາມອ່ອນບ່ອນໜຶ່ງທີ່ຄົນບໍ່ພົບພໍ້ ເຊິ່ງແມ່ນຕ້ອນຮັບຂອງລຸງສາລີ ແລະ ຍັງ ສະທ້ອນເຖິງນໍ້າໃຈອັນເດັດດ່ຽວໝຽວແໜ້ນ, ຮັກປະເທດຊາດຢ່າງແທ້ຈິງ ທັງປຸກລະດົມຈິດໃຈຄົນລາວໃຫ້ຊ່ວຍກັນ ປົກປັກຮັກສາຮອຍອະດີດຂອງທ່ານຜູ້ນໍາໄວ້ ແລະ ເປັນຄົນທີ່ຮູ້ຈັກຮັກປະເທດຊາດບ້ານເກີດເມືອງນອນອີກດ້ວຍ.

➢ **ດ້ານສິລະປະ**

ບົດກອນດັ່ງກ່າວ ທ່ານ ຄໍາພໍ ພວງສະບາ ໄດ້ແຕ່ງໄປຕາມເຫດການທີ່ມີຈິງໃນໄລຍະນັ້ນ, ນໍາໃຊ້ສັບທໍາມະດາ ເຂົ້າໃນການປະດິດຄິດແຕ່ງ, ສາມາດຈັດລຽງເນື້ອໃນໄປຕາມເຫດການ, ມີເນື້ອໃນເລິກເຊິ່ງສ່ອງແສງເຖິງທ່ານຜູ້ນໍາ ແລະ ປະເທດຊາດ, ແຕ່ງຖືກຕ້ອງຕາມຫຼັກຄໍາປະຈໍາບ່ອນ, ອ່ານມ່ວນເຂົ້າໃຈໄວ ແລະ ຍັງສາມາດເຮັດໃຫ້ຜູ້ອ່ານ-ຜູ້ ຟັງສໍານຶກພາບໃນອະດີດທີ່ທ່ານຜູ້ນໍາລາວມາພັກເຊົາໃນກົກໄຮ-ຂາມອ່ອນນັ້ນໄດ້ ຕາມວາດເວົ້າຂອງແຕ່ງທັງເກີດນໍ້າ ໃຈຮັກຊາດ ກຽດຊັງສັດຕູຜູ້ຮຸກຮານລາວອີກດ້ວຍ.

# ບົດກອນ "ຮອຍອະດີດ"

| | |
|---|---|
| ❖ ເລື່ອງນີ້ປານນິຍາຍວ່າໄວ້ | ໄຮໃຫຍ່ໃບດົກ |
| ກົກເກີດໃນດົງດອນ | ບ່ອນຄົນບໍ່ພານພໍ່ |
| ໃກ້ມໍ່ຮຽງໄຮນີ້ | ມີຂາມງາມຕົ້ນໜຶ່ງ |
| ພຶງແຜ່ຜາຍຮົ່ມໃຫ້ | ຄົນໄດ້ເພິ່ງພາ |
| ❖ ອະດີດຍົກອ່ານອ້າງ | ຕາງຕື່ມເຕືອນສະຕິ |
| ວິລະກໍາໄຮ-ຂາມ | ງ່າງາມເງົາຍ້ອງ |
| ເໝືອນດັ່ງເຮືອນຫໍຮ້ອງ | ວິມານທອງເນົານັ່ງ |
| ບັງເມກແດດຕ້ອງ | ສະໜອງຄໍ້າຄູ່ຄຽງ |
| ❖ ຄາວນັ້ນຍັງມີຖຽງໜຶ່ງນ້ອຍ | ຢູ່ໃຕ້ຮົ່ມໄຮສີ |
| ເປັນຖຽງລຸງສາລີ | ພັກເຊົາເນົ່າຢັ້ງ |
| ຕັ້ງຕໍ່ຂົນຂວາຍສ້າງ | ວາງກໍາລັງຮັກສາດານ |
| ຕ້ານສັດຕູໃຫຍ່ນ້ອຍ | ທີ່ຄອຍລໍ້າລ່ວງແດນ |
| ❖ ແມ່ນວ່າຄັ້ງໜຶ່ງນັ້ນ | ຜູ້ນໍາຈາກວຽງຈັນ |
| ອອກຕະລາງເຂົາຂັງ | ຄໍ່າຄືນເດືອນອໍາ |
| ສຽງສົມ ນໍາທາງເທົ່າ | ໄປເຊົາໄຮ-ຂາມອ່ອນ ນີ້ແລ້ວ |
| ລຸງສາລີຮັບຕ້ອນ | ຄືນນັ້ນຊື່ນຊົມ |

❖ ສັດຕາງົມທົ່ວດາວ    ທາວຮອດເຄືອຫວາຍ
ໝາຍຈະຈັບຜູ້ນຳເຮົາ    ຮອບສອງຂັງໄວ້
ແຕ່ໄຮ-ຂາມຜຶ້ງ    ເປັນວົງອາຍອຸ່ນ
ສັດຕູສູນຕິ່ງໆ    ເພາະຄຳສິນບໍ່ເຫັນ
❖ ດຽວນີ້ຮອຍອະດີດຂີດເສັ້ນ    ເປັນດັ່ງແວ່ນບໍ່ແຍງ
ແມ້ງເມື່ອຮຽມພານພົບ    ຮົ່ມໄຮ-ຂາມນ້ອຍ
ຫົວໃຈຄ້ອຍຄະນຶງພື້    ຜູ້ນຳເຮົາພັກເພິ່ງ ຄາວນັ້ນ
ເອົາເວົ້ງດົງດ່ານດ້າວ    ເປັນເຮືອນຢ້າວຢູ່ແຝງ
❖ ແຕ່ນ້ຳໃຈປະຕິວັດບໍ່ແລ້ງ    ແຫ້ງຂອບຍອມຈຳນົນ ດອກນາ
ຫີນແກ່ນແຂງເໝືອນເພັດ    ເພື່ອອຸດົມການກ້າວ
ຫວັງເພື່ອລາວເຮົາໄດ້    ສັນຕິປອງປາງປະເສີດ
ເໜີດໝູ່ມານທ່ານທ້າວ    ທີ່ມາເຂົ້າແຊກແຊງ ເຈົ້າເອີຍ
❖ ອັນນີ້ຮຽມບໍ່ໄດ້ແຕ່ງແຕ້ມ    ເປັນພາບລວງຕາ ດອກນາ
ຢູ່ເຂດນາຊາຍທອງ    ທ່ອງໄປກໍຄົງພໍ້
ໃກ້ມໍ່ທາງທຽວຜ້າຍ    ເລາະສາຍທານນ້ຳຊ່ວງ
ເພິ່ນຫວງແຫນຮັກໄວ້    ບໍ່ມີໃຫ້ເສື່ອມສູນ
❖ ຕັ້ງແຕ່ພຸ້ນຮອດ    ກໍຫຼາຍຊົ່ວປາງປີ ມາແລ້ວ
ຄັນທ່ານມີເວລາ    ໄປແວ່ຊົມກໍຍັງໄດ້
ຈະຊ່ວຍເບີ່ງແຍງໃຫ້    ເຫັນຮອຍພາບອະດີດ
ຄຶດໄຄ່ຄວນເມື່ອຄັ້ງ    ຜູ້ນຳສ້າງວິລະກຳ
❖ເຊົ້າຄ່ຳຄືນຢູ່ຊຶ້ນ    ໄຮປ່າຫີນທຸກ
ປຸກລະດົມນຳພາ    ຜ່າຜະເຊີນຫັນຫ້າວ
ເຈົ້າຜູ້ນອນເຮືອນຫ້າງ    ວັງກາງຜາສາດ ຮຽມເອີຍ
ຄວາມຮັກຊາດຢ່າລ່ອຍເບ້ຍ    ຊິເສຍເຊື້ອຊື່ວ່າລາວ ເຈົ້າເອີຍ

# ບົດຕົວຢ່າງ
# ວິໄຈບົດກອນ "ໜ້າທີ່ຂອງຊາວໜຸ່ມ"

## 1. ທີ່ມາຂອງບົດກອນ



ຄັດມາຈາກປຶ້ມ "ໄວຍາກອນ" ພິມເທື່ອທີ 1, ພະແນກສຶກສາສູນກາງພິມຈຳໜ່າຍ, ພິມທີ່ໂຮງພິມສູນກາງແນວ ລາວຮັກຊາດພິມເທື່ອທີ 1 ຈຳນວນ 6000 ຫົວ, ຂະໜາດ 13×19 ປີ 1967 (ໜ້າທີ 255-256)

## 2. ເນື້ອໃນລວມ

ເວົ້າເຖິງຊາວໜຸ່ມເປັນກ້ອນກຳລັງອັນສຳຄັນມະຫາສານເປັນຜູ້ທີ່ຈະປົກປັກຮັກສາ ແລະ ສ້າງສາພັດທະນາໃຫ້ຈະ ເລີນຮຸ່ງເຮືອງ. ສະນັ້ນ, ຈິ່ງຮຽກຮ້ອງໃຫ້ຊາວໜຸ່ມເຢົາວະຊົນຈົ່ງເຝິກຝົນຫຼໍ່ຫຼອມຕົນເອງໃຫ້ກາຍເປັນບຸກຄົນທີ່ດີເດັ່ນເປັນໜໍ່ແໜງຜູ້ທີ່ຈະສືບເຊື້ອແທນແນວພັດທະນາໃຫ້ກ້າວໜ້າໄປເລື້ອຍໆ.

## 3. ແບ່ງຕອນ

ບົດກອນ "ໜ້າທີ່ຊາວໜຸ່ມ" ໄດ້ແບ່ງອອກເປັນ 2 ຕອນຄື

+ ຕອນທີ 1 ແຕ່ຕົ້ນ ຈົນເຖິງ ໃຫ້ມັນໄດ້ສູ່ແນວ. ບາດທີ 1 ຫາປາດ ທີ 3

- ເນື້ອໃນ ເວົ້າການສະແຫວງຫາຄວາມຮູ້, ຊອກຮູ້ຮ່ຳຮຽນເພາະວ່າຊາວໜຸ່ມເປັນກ້ອນກຳລັງຂອງປະເທດຊາດເພື່ອເຝິກຝົນຫຼໍ່ຫຼອມຕົນເອງໃຫ້ເປັນຜູ້ເກັ່ງກ້າສາມາດ.

+ ຕອນທີ 2 ແຕ່ຄາວນີ້ຊາວໜຸ່ມໄດ້ ຈົນເຖິງ ສຸດທ້າຍ. ບາດທີ 4 ຫາ ບາດທີ 6

ເນື້ອໃນ ເວົ້າເຖິງເມື່ອເຮົາຮ່ຳຮຽນຈົບມາກໍ່ຕ້ອງກັບຄືນມາຮັບໃຊ້ປະເທດຊາດມາເຮັດໜ້າທີ່ຊາວໜຸ່ມໃຫ້ສົມກັບວ່າ" ຊາວໜຸ່ມລາວ"

## 4. ວິເຄາະ

ເຮົາເກີດມາເປັນຄົນລາວ, ລູກຫຼານລາວ, ເປັນຊາວໜຸ່ມລາວ ໂດຍແມ່ນປະຊາຊົນປະຕິວັດລາວເປັນຜູ້ຈັດຕັ້ງ, ນຳພາ ສຶກສາອົບຮົມເພື່ອພາລະກິດປົກປັກສາ ແລະ ສ້າງສາພັດທະນາປະເທດຊາດຕາມທິດທາງສັງຄົມນິຍົມ. ດັ່ງນັ້ນ, ຈິ່ງໄດ້ ກໍ່ສ້າງ, ເຝິກຝົນຫຼໍ່ຫຼອມໃຫ້ມີຄວາມດຸໝັ່ນຂະຫຍັນພຽນ, ມີຄວາມພະຍາຍາມຄວາມອົດທົນຊອກສະແຫວງຫາຄວາມຮູ້ ເພາະຊາວໜຸ່ມເປັນກະດູກສັນຫຼັງຂອງຊາດເປັນແຂວນຂວາຂອງປະເທດເມື່ອເຮົາເປັນຊາວໜຸ່ມກໍ່ຕ້ອງມີຄວາມຮູ້ຄວາມ ສາມາດ, ກ້າຫານ, ອົດທົນ, ທຸກຍາກພຽງໃດກໍ່ຕ້ອງບຸກບືນຜ່ານຜ່າເພື່ອພັດທະນາປະເທດຊາດດັ່ງຄຳເວົ້າທີ່ວ່າ ບ່ອນໃດ ຍາກຊາວໜຸ່ມເຮົາບຸກ, ບ່ອນໃດທຸກຊາວໜຸ່ມຜ່ານຜ່າ, ບ່ອນໃດຊາດຕ້ອງການຊາວໜຸ່ມຂານອາສາ" ປະຊາຊົນປະຕິວັດລາວປະກອບດ້ວຍຊາວໜຸ່ມບັນດາເຜົ່າຜູ້ມີຄວາມຫາວຫັນ, ດີເດັ່ນ ແລະ ມີຄວາມຕື່ນຕົວສະໝັກໃຈປະກອບສ່ວນເຂົ້າ ໃນຂະບວນການມະຫາຊົນເພາະວ່າຊາວໜຸ່ມແມ່ນຄົນທີ່ພວມສ້າງແປງທາງຊີວິດໃໝ່ຖ້າຫາກຄົນເຮົາຫາກຂາດແຂນຂາ ກໍ່ລຳບາກທີ່ຈະໄປມາຖ້າຫາກປະເທດຊາດຫາກຂາດກ້ອນກຳລັງ, ຂາດຄວາມສາມັກຄີ, ຂາດຄວາມຮູ້ຄວາມສາມາດ, ຂາດສະຕິປັນຍາກໍ່ຈະເຮັດໃຫ້ປະເທດຊາດບ້ານເມືອງລົ້ມຈົມ. ດັ່ງນັ້ນ , ເມື່ອເຮົາມີໂອກາດໄດ້ຮ່ຳຮຽນ, ຍັງໜຸ່ມນ້ອຍກໍ່ ຕ້ອງຫ້າວຫັນໃນການປະຕິວັດອົງການຈັດຕັ້ງໃຫ້ເຂັ້ມແຂງຂຶ້ນເລື້ອຍໆ.

ເມື່ອເຮົາກ້າວເຂົ້າສູ່ອົງການຈັດຕັ້ງຕ່າງໆໂດຍສະເພາະແມ່ນອົງການຈັດຕັ້ງຊາວໜຸ່ມລາວກໍ່ຕ້ອງຊຸກຍູ້ເສີມຂະຫຍາຍລັດທິວິລະປະຕິວັດກ້າວເຂົ້າສູ່ໄລຍະໃໝ່ຈິ່ງລະດົມໃຫ້ຄົນລາວທຸກຄົນເປັນເຈົ້າການໃນການສ້າງຂະບວນ

ການ ກໍ່ຕັ້ງພັກ-ລັດໃຫ້ເຂັ້ມແຂງເຮັດໃຫ້ສົມກັບວ່າຊາວໜຸ່ມຄືແຂນຂວາຂອງປະເທດປຽບເໝືອນດັ່ງນົກອິນຊີທີ່ບໍ່ຫວັ່ນກວາ ຕໍ່ພາຍຸລົມແດງຈຶ່ງສົມວ່າຊາວໜຸ່ມຄືກະດູກສັນຫຼັງຂອງຊາດ.

ດັ່ງນັ້ນ, ຈຶ່ງຮຽກຮ້ອງໃຫ້ຊາວໜຸ່ມເຍົາວະຊົນລາວບັນດາເຜົ່າປະຕິບັດຈຸດແຫ່ງການປະຕິວັດຂອງພັກຄືສ້າງ ແລະ ເສີມຂະຫຍາຍລະບອບປະຊາທິປະໄຕປະຊາຊົນຕາມຈຸດໝາຍສັງຄົມນິຍົມແນ່ໃສ່ເຮັດໃຫ້ປະຊາຊົນຮັ່ງມີຜາສຸກປະ ເທດຊາດເຂັ້ມແຂງ, ສັງຄົມປອງດອງສາມັກຄີ, ມີປະຊາທິປະໄຕ, ຍຸດຕິທຳ ແລະ ມີຄວາມສີວິໄລ.

**5. ສະຫຼູບ**

**ກ. ດ້ານເນື້ອໃນ**

ເວົ້າລວມແລ້ວບົດກອນໜ້າທີ່ຊາວໜຸ່ມສອງແສງໃຫ້ເຮົາເຫັນເຖິງຄວາມດຸໝັ່ນຂະຫຍັນພຽນ, ຮູ້ຈັກຂົນຂວາຍ ຊອກຫາຄວາມຮູ້ດອົບທົນພະຍາຍາມ, ຮູ້ຈັກປຸກລະດົມໃຫ້ຊາວໜຸ່ມບັນດາເຜົ່າໃຫ້ກ້າຫານຫ້າວຫັນຕໍ່ໜ້າທີ່ວຽກງານ ເພື່ອພັດທະນາປະເທດຊາດໃຫ້ຮຸ່ງເຮືອງສີວິໄລໄປເລື້ອຍໆ.

**ຂ. ດ້ານສິລະປະ**

ບົດກອນ "ໜ້າທີ່ຊາວໜຸ່ມ" ແຕ່ງຕາມເຫດການຕົວຈິງໃຊ້ສັບທີ່ມ່ວນອ່ອນຊອນ, ສຳຜັດເກາະກ່າຍກັນດີ, ໃຊ້ສັບ ພາສາທີ່ສຸພາບ, ອ່ານແລ້ວເຂົ້າໃຈງ່າຍ, ສາມາດເຮັດໃຫ້ຜູ້ອ່ານຜູ້ຟັງເກີດມີຈິນຕະນາການ ຫຼື ນຶກເຫັນພາບໃນບົດກອນໄດ້.

## ບົດກອນ "ໜ້າທີ່ຂອງຊາວໜຸ່ມ"

ຊາວໜຸ່ມເປັນສາຍເຊື້ອ ກຳລັງໃຫຍ່ສຳຄັນ
ມັນແມ່ນອະນາຄົດ ແກ່ນກຳລັງເມືອງບ້ານ
ທັງແມ່ນຊຸມຊົນຊັ້ນ ພະລັງແຮງກຳກັ່ນ
ເປັນຫົວຈັກຊຸກຍູ້ ໃຫ້ຄົນຕັ້ງແຕ່ງການ
ບໍ່ວ່າປະເທດບ້ານ ສະຖານຖິ່ນດິນໃດ
ກໍ່ຍ່ອມມີຄົນຫານ ໜຸ່ມຄະນອງເນືອງລົ້ນ
ມັນແມ່ນຄົນພວມສ້າງ ແປງທາງຊີວິດໃໝ່
ຍາກທໍ່ໃດກໍ່ໄດ້ ປະສິງສູ້ຊອກຊົນ
ຄາວເມື່ອຍັງໜຸ່ມນ້ອຍ ສະແຫວງຮ່ຳຮຽນໜັງສື
ຍາກກໍ່ພັນພຽນອົດ ຮ່ຳຮຽນຈົບແລ້ວ
ໝົດສູ່ອັນຮຽນໄດ້ ຈົດຈຳຈົນວ່າຈື່
ບັດນີ້ນຳອອກໃຊ້ ໃຫ້ມັນໄດ້ສູ່ແນວ
ຄາວນີ້ຊາວໜຸ່ມໄດ້ ຄືນມາຢູ່ໃນປາງ
ມາເຮັດການແປງປຸກ ກົ່ນນາຕາກຳ
ຄວນທີ່ພາຕົວຕັ້ງ ປຸນເປັນຕົວຢ່າງ
ຊີ້ຊ່ອງທາງບອກໃຫ້ ປະຊາເຊື້ອເພິ່ງນາ
ຊາວໜຸ່ມຄວນເກັ່ງກ້າ ການເພີ່ມຜະລິດຜົນ
ການຮ່ຳຮຽນການເມືອງ ເສບລຳຟ້ອນ
ກັບທັງການທົນສູ້ ສັດຕູທີ່ມາຈົນ
ໂຄສະນາຮຽກຮ້ອງ ຂະຫຍັນຕ້ານສັ່ງສອນ
ເຮັດໃຫ້ໄດ້ດັ່ງນັ້ນ ຈຶ່ງສົມວ່າເຍົາວະຊົນ
ສົມວ່າເປັນຄົນລາວ ທີ່ສືບແທນມູນເຊື້ອ
ເປັນກຳລັງຫຼວງສ້າງ ແປງເມືອງຊຸດກົ່ນ
ເຮັດໃຫ້ລາວຢ່າງກ້າວ ຈະເລີນຂຶ້ນຍຶດເຍື້ອ.

# ບົດທີ 2
# ບົດກອນ "ຫອມກິ່ນຈຳປາ"

## 1. ປະຫວັດ ແລະ ພາລະກິດການປະດິດແຕ່ງຂອງ ທ່ານ ຄຳພໍ ພວງສະບາ



ນັກກະວີຄຳພໍ ພວງສະບາ ມີນາມປາກກາວ່າ ພ. ພວງ ສະບາ ເພິ່ນເກີດເມື່ອວັນທີ 11/6/ 1939 ທີ່ ບ້ານເວີນໄຊ ເມືອງໂພນທອງ ແຂວງຈຳປາສັກ ໃນຄອບຄົວຊາວນາຜູ້ທຸກ ຍາກ. ພໍ່ຊື່ວ່າ ທ້າວ ໝັ້ນ, ແມ່ຊື່ວ່ານາງ ແຈ່ມ , ມີອ້າຍ ນ້ອງນຳກັນທັງມົດ 4 ຄົນ, ທ່ານຄຳພໍ ພວງສະບາ ແມ່ນລູກ ຜູ້ທີສາມ ແລະ ເງື່ອນໄຂທີ່ພາໃຫ້ທ່ານເປັນນັກກະວີນັ້ນກໍ່ ຍ້ອນວ່າທ່ານໄດ້ຮັບ ຜົນສະທ້ອນມາຈາກເຊື້ອສາຍຄື ນ້ອງ ຊາຍຂອງແມ່ເປັນນັກກະວີ.

ຊີວິດສ່ວນໜຶ່ງຂອງຄຳພໍ ພວງສະບາໄດ້ໃຫຍ່ຂຶ້ນໃຕ້ ຮົ່ມຂອງຜ້າກາສາວະພັດ (ຜ້າເຫຼືອງ) ດ້ານການສຶກສາ ທ່ານ ໄດ້ຮຽນຈົບຊັ້ນມັດທະຍົມເອກຈາກໂຮງຮຽນປາລີ ປະລິຍັດຕິທຳ (ໂຮງຮຽນຝ່າຍສົງ). ກ່ອນທີ່ຈະເຂົ້າມານັກ ກະວີ ເພິ່ນເປັນຜູ້ໜຶ່ງທີ່ມັກການຂັບລຳ, ສະໄໝຍັງເປັນນັກຮຽນໄດ້ຂຽນກອນລຳໃຫ້ໝໍລຳທີ່ມີຊື່ສຽງຫຼາຍບົດພໍສົມຄວນ.

ຄຳພໍ ພວງສະບາໄດ້ເລີ່ມເຂົ້າສູ່ວົງການຂ່າວ, ໜັງສືພິມ, ນັກປະພັນ ແລະ ນັກກະວີຕັ້ງແຕ່ປີ 1964 ຈຸດເລີ່ມຕົ້ນ ໃນຖະໜົນຄອງປາກກາຂອງທ່ານແມ່ນ ຂຽນບົດລະຄອນວິທະຍຸ; ຈາກນັ້ນທ່ານກໍເຂົ້າສູ່ວົງການໜັງສືພິມ ເຊິ່ງເລີ່ມແຕ່ ໜັງສືພິມລາຍເດືອນ, ລາຍສັບປະດາ ແລະ ລາຍວັນນັບເປັນຫຼາຍສະບັບ.ທ່ານເຄີຍເປັນນັກຂ່າວ ແລະ ຮອງ ບັນນາທິການ; ທ່ານໄດ້ຂຽນບົດຂ່າວ, ບົດຄວາມ, ບົດວິຈານ, ບົດສາລະຄະດີ, ບົດເລື່ອງສັ້ນ, ບົດກາບກອນ, ນິທານ ສຳລັບເດັກນ້ອຍ ແລະ ອື່ນໆ.

- **ຜົນງານການປະດິດແຕ່ງຂອງທ່ານຄຳພໍ ພວງສະບາ**

ນັບແຕ່ປະເທດຊາດໄດ້ຮັບການປົດປ່ອຍເມື່ອປີ 1975 ເປັນຕົ້ນມາ ທ່ານມີຜົນການປະດິແຕ່ງທີ່ດີເດັ່ນຫຼາກຫຼາຍ ບົດພໍສົມຄວນເຊັ່ນ ການປະພັນທີ່ພິມເປັນເຫຼັ້ມສ່ວນຕົວ ແລະ ໂຮມກັບໝູ່ເພື່ອນ 20 ເຫຼັ້ມ ເຊິ່ງປະກອບມີເລື່ອງ "ເດືອນຄ້າງທີ່ເຊລະປາ" ( 1982 ), ບົດກະວີ " ຫອມກິ່ນຈຳປາ (1984) ແລະ ອື່ນໆ. ນອກຈາກນັ້ນກໍພິມອອກຕາມ ໜ້າໜັງສືພິມ ( ລາຍວັນ, ລາຍສັບປະດາ ແລະ ລາຍເດືອນ ), ອອກວິທະຍຸກະຈາຍສຽງ ແລະ ໂທລະພາບເກືອບ 2000 ບົດເຊັ່ນ ບົດກອນ "ປິຕຸພູມທີ່ຮັກ" ( 1984 ), "ໂພນສະຫວັນວັນໃໝ່" ( 1996 ), "ຄ່າຂອງເງິນກີບ" ( 1996 ) ປຶ້ມ "ຄົມກະວີ" ( 1996) ແລະ ບົດອື່ນໆອີກ.

ຜົນງານການປະພັນຂອງທ່ານ ຍັງໄດ້ແປ ແລະ ພິມຈຳໜ່າຍອອກເປັນພາສາລັດເຊຍ, ພາສາຝຣັ່ງ ໃນຊຸມປີ 80, ເປັນພາສາຫວຽດນາມ ( 1990 ) ແລະ ເປັນພາສາໄທອີກດ້ວຍ. ອາດສຳນວນລີລາການປະພັນຂອງທ່ານແມ່ນ ນຶ້ມ ນວນ ອ່ອນຫວານສະທ້ອນໃຈ ທັງໃຫ້ອຸດົມການຕໍ່ຜູ້ອ່ານ; ການປະພັນຂອງທ່ານເປັນແບບເອກະລັກຂອງຕົນເອງໂດຍ ສະເພາະ, ຄະຕິຊີວິດໃນການປະພັນສຳລັບຕົວຂອງທ່ານນັ້ນ ຍາມໃດກໍຄິດສະເໜີວ່າ ບົດປະພັນ-ບົດກະວີທີ່ດີຂອງທ່ານ ນັ້ນຄືບົດທີ່ພວມລົງມືຂຽນ ແລະ ບົດທີ່ຈະຂຽນຕໍ່ໆໄປໃນອະນາຄົດ.

## 2. ເຄົ້າກຳເນີດ ຫຼື ທີ່ມາຂອງບົດກະວີ "ຫອມກິ່ນຈຳປາ"

ບົດກອນ "ຫອມກິ່ນຈຳປາ" ເປັນໜຶ່ງໃນຈຳນວນຜົນງານການປະດິດແຕ່ງອັນດີເດັ່ນຂອງນັກກະວີ ຄຳພໍ ພວງ ສະບາທີ່ປະດິດແຕ່ງຂຶ້ນໃນໄລຍະທີ່ປະເທດຊາດໄດ້ຮັບການປົດປ່ອຍຢ່າງສົມບູນ, ທັງແມ່ນໄລຍະທີ່ປະຊາຊົນລາວທັງ ຊາດກຳລັງປັບປຸງບູລະນະສ້າງສາບ້ານເມືອງຈາກການທຳລາຍຂອງສັດພາຍນອກມາເປັນເວລາດົນນານ, ທ່ານ ຄຳພໍ ພວງສະບາ ເປັນຜູ້ໜຶ່ງທີ່ມີຈິດໃຈຮັກຊາດ, ຮັກບ້ານເກີດເມືອງນອນ, ທ່ານມີຄວາມພູມໃຈຕໍ່ການດຳລົງຊີວິດອັນສຸກສຳ ລານຂອງປະຊາຊົນລາວບັນດາເຜົ່າ ແລະ ເຫັນໄດ້ຄວາມອຸດົມຮັ່ງມີຂອງປະເທດຊາດທີ່ເຕັມໄປດ້ວຍຊັບພະຍາກອນ ອັນລ້ຳຄ່າ, ມີວັດທະນະທຳຮີດຄອງປະເພນີອັນດີງາມມາແຕ່ບູຮານນະການ. ດັ່ງນັ້ນ, ທ່ານຈຶ່ງໄດ້ປະດິດແຕ່ງບົດກອນ "ຫອມກິ່ນຈຳປາ" ຂຶ້ນມາ ໂດຍຢືມເອົາຮູບພາບ ແລະ ກິ່ນຫອມຂອງດອກຈຳປາມາເປັນຕົວແທນໃຫ້ແກ່ ນນ້ຳໃຈຮັກ ຊາດອັນສູງສົ່ງຂອງຄົນລາວທັງຊາດ. ບົດກອນດັ່ງກ່າວຖືກບັນທຶກໄວ້ໃນປຶ້ມໂຮມກະວີຊື່:

ຫອມກິ່ນຈຳປາ ເຊິ່ງລວມທັງ ໝົດ 6 ບົດ, ໃນນັ້ນມີບົດທີ່ເປັນຜົນງານຂອງການປະດິດແຕ່ງຂອງທ່ານ ຄຳພໍ ພອງສະບາ 1 ບົດ, ບົດທີ່ເປັນຜົນງານ ຂອງທ່ານ ດຣ ທອງຄຳ ອ່ອນມະນີສອນ 2 ບົດ, ບົດທີ່ເປັນຜົນງານຂອງທ່ານ ທະນົງສັກ ວົງສັກດາ 3 ບົດ. ໃນຈຳນວນ 6 ບົດນັ້ນ, ບົດກອນ "ຫອມກິ່ນຈຳປາ" ຂອງທ່ານ ຄຳພໍ ພອງສະບາ ເປັນບົດທີ 1 ທັງເປັນຊື່ຂອງປຶ້ມ ເຊິ່ງພິມທີ່ໂຮງພິມແຫ່ງລັດປີ 1984 ໜ້າທີ 1.

## 3. ການວິໄຈບົດກະວີ "ຫອມກິ່ນຈຳປາ"




**1. ເນື້ອໃນໃຈຄວາມຂອງບົດ**

ບົດກອນ "ຫອມກິ່ນຈຳປາ" ເປັນບົດກອນອາລົມຈິດບໍ່ມີຕົວລະຄອນ ເຊິ່ງນັກແຕ່ງໄດ້ຢືມເອົາຮູບພາບກິ່ນຫອມຂອງດວງຈຳປາມາປຽບທຽບໂດຍຈຸດປະສົງຫຼັກແມ່ນ ຢາກເວົ້າເຖິງຄວາມຮັກຊາດ, ຮັກບ້ານເກີດເມືອງນອນຂອງ ຄົນລາວ. ດອກຈຳປາແມ່ນດອກໄມ້ຊະນິດໜຶ່ງ ທີ່ເກີດຂຶ້ນບົນແຜ່ນດິນລາວລ້ານຊ້າງມາແຕ່ດົນນານທັງເປັນດອກໄມ້ປະ ຈຳຊາດ, ເປັນຕົວແທນແຫ່ງວັດທະນະທຳອັນດີງາມຂອງຊາດ ແລະ ເປັນສັນຍາລັກແຫ່ງນ້ຳໃຈຮັກບ້ານເກີດເມືອງນອນ ຂອງຄົນລາວທຸກຄົນ. ທ່ານ ຄຳພໍ ພອງສະບາ ຢາກສຶກສາອົບຮົມແນວຄິດຂອງຜູ້ອ່ານກໍຄືນັກສຶກສາທຸກຄົນ ໃຫ້ຮູ້ຈັກ ຮັກປະເທດຊາດຂອງຕົນຫຼາຍຂຶ້ນ.

**2. ແບ່ງຕອນ**

ບົດກອນ "ຫອມກິ່ນຈຳປາ" ລວມມີ 16 ວັກ ຫຼື 4 ບາດກອນ ແປງອອກເປັນ 3 ຕອນຄື:

**+ຕອນທີ 1** ແຕ່ຕົ້ນ - ຍາມລົມຕ້ອງກິ່ນມາ (ນອນໃນບາດທີ່ໜຶ່ງ)

ເນື້ອໃນ ເວົ້າເຖິງ ກິ່ນຫອມຂອງດວງຈຳປາ ທີ່ມີກິ່ນຫອມແຕກຕ່າງກັບດອກໄມ້ຊະນິດອື່ນໆເຊິ່ງບໍ່ມີກິ່ນຫອມຂອງດອກໄມ້ຊະນິດໃດໃນໂລກນີ້ທຽບໄດ້.

**+ຕອນທີ 2** ເລີ່ມແຕ່ ຫອມຫຼາຍເດດວງດອກໄມ້ - ຄືໄຂ່ບົ່ມໃນ (ກວມເອົາບາດທີ 2, 3)

ເນື້ອໃນ ເວົ້າເຖິງ ຄວາມຫອມຂອງດວງຈຳປາ ເຊິ່ງຍາມໃດກໍຕິດພັນກັບແນວຄິດຈິດໃຈຂອງຄົນລາວບໍ່ມີຍາມຈືດຈາງໄປໄດ້. ໝາຍວ່າ ຄົນລາວທຸກຄົນລ້ວນແຕ່ຮັກຫອມ ແລະ ຜູກພັນກັບປະເທດຊາດຂອງຕົນມາແຕ່ດົນນານ ເຊິ່ງບໍ່ມີຍາມຈະເຫີນຫ່າງໄປໄດ້ເຖິງແມ່ນວ່າຈະຕົກຢູ່ແຫ່ງຫົນໃດກໍຍັງຄິດຮອດ ຄິດເຖິງບ້ານເກີດເມືອງນອນຂອງຕົນ.

**+ຕອນທີ 3** ເລີ່ມແຕ່ ຫົວໃຈຄິດໄຄ່ພໍ້ - ສຸດທ້າຍ (ນອນໃນບາດສຸດທ້າຍ)

ເນື້ອໃນ ເວົ້າເຖິງ ປະເທດລາວ ເປັນປະເທດທີ່ອຸດົມຮັ່ງມີ, ເປັນບ່ອນເພິ່ງພາອາໄສຂອງຄົນລາວທຸກຄົນ. ເພາະສະນັ້ນ, ຄົນລາວລ້ວນແຕ່ມີໜ້າທີ່ປົກປັກຮັກສາປະເທດຊາດໄວ້ໃຫ້ໝັ້ນຄົງ ແລະ ກຽມພ້ອມທຸກເວລາທີ່ຈະເສຍສະຫຼະຊີວິດເລືອດເນື້ອຂອງຕົນເພື່ອປົກປ້ອງປະເທດຊາດບໍ່ໃຫ້ຊາດອື່ນເຂົ້າມາແຊກແຊງ.

**3. ການວິໄຈບົດກະວີ "ຫອມກິ່ນຈຳປາ" (ວິໄຈຕາມເນື້ອໃນໃຈຄວາມຂອງບົດ)**

ບົດກອນ "ຫອມກິ່ນຈຳປາ" ແມ່ນບົດກອນອາລົມຈິດເຊິ່ງນັກກະວີ ຄຳພໍ ພອງສະບາ ໄດ້ຢືມເອົາຮູບພາບກິ່ນຫອມຂອງດວງຈຳປາມາເປັນຕົວແທນແຫ່ງວັດທະນະທຳອັນດີງາມຂອງຊາດ ທັງເປັນຕົວແທນແຫ່ງນ້ຳໃຈຮັກຊາດ, ຮັກ ບ້ານເກີດເມືອງນອນຂອງຄົນລາວ. ດອກຈຳປາເປັນດອກໄມ້ຊະນິດໜຶ່ງທີ່ເກີດໃນພື້ນແຜ່ນດິນລາວລ້ານ

ຊ້າງມາແຕ່ດົນນານເຊິ່ງແມ່ນຊົນເຜົ່າຈາມ ເອົາມາປູກໄວ້ແຕ່ກ່ອນດອກຈຳປາມີຊື່ວ່າ: "ຈາມປະ" ເນື່ອງຈາກວ່າຊົນຈາມເອົາມາປູກປະໄວ້ ຈາກນັ້ນຈຶ່ງປ່ຽນຊື່ມາເປັນຈຳປາ,

ດອກຈຳປາແມ່ນດອກໄມ້ທີ່ມີກິ່ນຫອມອ່ອນໆ ແລະ ຫອມໄປທົ່ວທຸກບ່ອນທຸກທີ່ຕາມສາຍລົມ ທີ່ໄດ້ໂບຍໂບກຕາມລະດູການ ເພື່ອເປັນການຈູງໃຈແກ່ຜູ້ໄດ້ເບິ່ງໄດ້ຊົມ. ໂດຍທົ່ວໄປແລ້ວກິ່ນຫອມຂອງດອກຈຳປາຄືກັນກັບດອກໄມ້ນາໆຊະນິດທີ່ເກີດໃນດິນແດນລາວລ້ານຊ້າງແຫ່ງນີ້, ແຕ່ເປັນຫຍັງນັກກະວີ ຄຳພິພວງ ສະບາຈຶ່ງຍົກເອົາກິ່ນຫອມຂອງດອກຈຳປາມາເປັນກິ່ນຫອມກວ່າທຸກສິ່ງທີ່ຢ່າງໃນໂລກດັ່ງສະແດງອອກໃນບົດກອນຕອນໜຶ່ງຂຽນວ່າ:

... ຫອມໃດໃນໂລກນີ້ ບໍ່ປຸນປຽບຈຳປາ ດອກນາ
ຫອມທົ່ວເຖິງເວຫາ ເມກຂະຫຼາແດນດ້າວ
ຫອມມີເປົາບາງໄດ້ ພໍພຽງຍາມຍົບ
ຫອມຈົບດວງລົ້ນລົ້ນ ຍາມລົມຕ້ອງກິ່ນມາ...

ກໍຍ້ອນວ່າດອກຈຳປາແມ່ນດອກໄມ້ປະຈຳຊາດລາວ, ກິ່ນຫອມດອກຈຳປາເປັນກິ່ນທີ່ປວງຊົນລາວທັງຊາດປາຖະໜາ ແລະ ຮັບຊົມດົມກິ່ນຕະຫຼອດເວລາ ເມື່ອໃດເຖິງລະດູການທີ່ໄຂກີບເບັ່ງບານຄົນລາວທຸກຄົນທີ່ມີນ້ຳໃຈຮັກ ຊາດ ຈະແມ່ນຢູ່ຫົນແຫ່ງໃດດຳລົງຊີວິດຢູ່ພາຍໃນຫຼືຕ່າງປະເທດ ກໍຈະລະນຶກເຖິງບ້ານເກີດເມືອງນອນຂອງຕົນ, ເພາະວ່າ , ກິ່ນຂອງດອກຈຳປາທີ່ທ່ານ ພ ພວງສະບາ ໄດ້ຍົກຂຶ້ນມານັ້ນ, ມັນຄືສັນຍາລັກແຫ່ງນ້ຳໃຈຮັກຊາດຂອງຄົນລາວ ເຊິ່ງບໍ່ມີວັນຫ່າງເຫີນອອກຈາກຫົວໃຈຂອງຄົນລາວໄປໄດ້.

ນອກນັ້ນທ່ານ ຄຳພໍ ພວງສະບາ ຍັງສົມທຽບປະເທດລາວ ຫຼື ອານາຈັກລາວລ້ານຊ້າງສະໄໝອານາຈັກລາວລ້ານຊ້າງຈະເລີນຮຸ່ງເຮືອງ ແລະ ຊຸດໂຊມ (ສູນເສຍຄວາມເປັນເອກະລາດ) ເປັນຕົ້ນແມ່ນສະໄໝສະຕະວັດທີ 17 ເຊິ່ງ ເປັນສະໄໝອານາຈັກລາວລ້ານຊ້າງມີຄວາມຈະເລີນຮຸ່ງເຮືອງສຸລະດັບສູງ, ປະຊາຊົນລາວທັງຊາດຕ່າງກໍທຳມາຫາກິນຢ່າງ ມີຄວາມສຸກ, ຟົດຟື້ນມ່ວນຊື່ນຕໍ່ການດຳລົງຊີວິດອັນເປັນເງື່ອນໄຂ ເຮັດໃຫ້ເສດຖະກິດວັດທະນະທຳມີການຂະຫຍາຍຕົວຢ່າງວ່ອງໄວ ແລະ ກວ້າງຂວາງ, ທັງສ້າງຊື່ສຽງໂດ່ງດັງແຫ່ງຄວາມຮຸ່ງເຮືອງໄປທົ່ວທຸກມຸມໂລກ ເໝືອນກັບ ວ່າໄລຍະນີ້ເປັນໄລຍະທີ່ດອກຈຳປາພວມໄຂກີບເບັ່ງບານສົ່ງກິ່ນຫອມໄປທົ່ວສາລາທິດ, ທຸກຫົນແຫ່ງບໍ່ມີຍາມຈືດຈາງດັ່ງສະແດງອອກໃນບົດກອນຕອນໜຶ່ງຂຽນວ່າ:

ຫອມຫຼາຍເດດວງດອກໄມ້ ຈຳປາເບັ່ງບານສີລາວເອີຍ
ຫອມບໍ່ເຫີຍຫາຍຮັກ ບໍ່ຈືດຈາງວາງເວັ້ນ
ຫອມກິ່ນຈອງຈັບຄູ່ ສະເໜ່ຫາຮັກຫໍ່
ຂໍຂອດກອນການສ້ອຍ ເປັນພວງຫ້ອຍຮອດງານ ດອມແລ້ວ.

ສະແດງວ່າຊື່ສຽງໂດ່ງດັງແຫ່ງຄວາມຈະເລີນທາງດ້ານວັດທະນະທຳ, ອະລິຍະທຳ, ຄວາມອຸດົມຮັ່ງມີຂອງຊາດ ລາວມັນໄດ້ດັງກ້ອງໄປທົ່ວທຸກຫົນແຫ່ງອັນສ້າງຄວາມເພິ່ງພໍໃຈໃຫ້ແກ່ຄົນລາວທັ່ງຊາດມີຄວາມປິຕິຊົມຊື່ນ, ມີກຳລັງ ໃຈໃນການທຳມາຫາກິນ ຫຼື ປະກອບອາຊີບເພື່ອເປັນການປະກອບສ່ວນສ້າງສາພັດທະນາປະເທດຊາດໃຫ້ມີຄວາມກ້າວ ໜ້າຂຶ້ນຢ່າງບໍ່ຢຸດຢັ້ງ.

ເມື່ອມາເຖິງທ້າຍສະຕະວັດທີ 18 ຫາຕົ້ນສະຕະວັດທີ 20 ອານາຈັກລາວລ້ານຊ້າງທີ່ເຄີຍມີຊື່ສຽງໂດ່ງດັງມາເປັນເວລາດົນນານນັ້ນຖືກລົບຖົມໄປ. ຍ້ອນເງື່ອນໄຂປະຫວັດສາດຊາດລາວໄດ້ສູນເສຍຄວາມເປັນເອກະລາດໃຫ້ແກ່ ຊາດອື່ນ, ໃນເວລານີ້ສະພາບສັງຄົມຕົກຢູ່ໃນຄວາມສັບສົນວຸ້ນວາຍ, ຄວາມຈະເລີນຮຸ່ງເຮືອງທີ່ເຄີຍມີມາກ່ອນຖືກ ຊຸດໂຊມຢ່າງບໍ່ໜ້າເຊື່ອໃນສາຍຕາ, ແຕ່ປະຊາຊົນລາວທັງຊາດກໍບໍ່ໄດ້ປະລະ ແລະ ທໍ້ຖອຍທຸກຄົນໄດ້ຕັ້ງໜ້າປະກອບສ່ວນເຂົ້າໃນການຕໍ່ສູ້ເພື່ອຕ້ານການຮຸກຮານຂອງພວກສັດຕູຢ່າງໝັ້ນຄົງທະນົງແກ່ນຍິ່ງເຫັນສະພາບສັງຄົມມີ ຄວາມເດືອດຮ້ອນກໍຍິ່ງເພີ່ມທະວີນ້ຳໃຈຮັກຊາດຄຽດແຄ້ນສັດຕູຫຼາຍຂຶ້ນເປັນຮ້ອຍເປັນພັນເທົ່າ. ພວກເຂົາໄດ້ຕໍ່ສູ້ທຸກ ຮູບແບບທຸກວິທີເພື່ອປົກປ້ອງຜືນແຜ່ນດິນແຫ່ງດອກຈຳປາໄວ້, ເຖິງວ່າຈະມີອັນຕະລາຍຕໍ່ຊີວິດແຕ່ເຂົາເຈົ້າກໍກຽມພ້ອມ ທີ່ຈະອຸທິດເລືອດເນື້ອຂອງຕົນເພື່ອປົກປ້ອງປະເທດຊາດອັນແສນຮັກດັ່ງສະແດງອອກໃນບົດກອນໜຶ່ງຂຽນວ່າ:

...ຂໍເອົາຊີວາປ້ອງ ປອງແຮຮຽງຮ່ວມ
ໃຕ້ຮົ່ມດວງດອກໄມ້ ຈຳປາຕົ້ນກິ່ນຫອມ ນີ້ແລ້ວ

ທ່ານ ຄໍາພໍ ພວງສະບາ ໄດ້ຍົກໃຫ້ເຫັນຢ່າງຈະແຈ້ງເຖິງນໍ້າໃຈຮັກຊາດ, ຮັກບ້ານເກີດເມືອງນອນຂອງຄົນລາວ, ເຖິງວ່າປະເທດຊາດຈະຕົກຢູ່ໃນສະພາບໃດກໍ່ຕາມ, ປະຊາຊົນລາວທຸກຄົນກໍພ້ອມທີ່ຈະຕໍ່ສູ້ປົກປັກຮັກສາປະເທດຊາດ ຂອງຕົນໃຫ້ມີຄວາມໝັ້ນຄົງຖາວອນຢູ່ສະເໝີ.

ເມື່ອປະເທດຊາດໄດ້ຮັບການປົດປ່ອຍຢ່າງສົມບູນໃນປີ 1975 ເປັນຕົ້ນມາ, ຊື່ສຽງຄວາມສວຍງາມແຫຼ່ງອະລິຍະທໍາຂອງປະເທດຊາດໄດ້ດັງກ້ອງກັງວານໄປທົ່ວທຸກມຸມໂລກ, ໃບຂອງຊາວລາວ ແລະ ຄົນລາວໄດ້ມີຊື່ສຽງໃນ ເວທີສາກົນ. ເພາະສະນັ້ນ, ຈຶ່ງເວົ້າໄດ້ວ່າ ກິ່ນຫອມຂອງດອກຈໍາປາ ທີ່ນັກກະວີ ຄໍາພໍ ພວງສະບາ ໄດ້ຍົກຂຶ້ນມານັ້ນ, ມີ ຊື່ສຽງມັນຄືຊື່ສຽງຂອງຊາວລາວນັ້ນເອງຊື່ສຽງດັ່ງກ່າວມັນແມ່ນມູນເຊື້ອອັນອົງອາດກ້າຫານໃນການຕໍ່ສູ້ເພື່ອປົກປ້ອງປິ ຕຶພູມອັນແສນຮັກຂອງຕົນທັງແມ່ນມູນເຊື້ອທີ່ໜ້າຍົກຍ້ອງສັນລະເສີນ ແລະ ເປັນໜ້າຊື່ນຊົມຕໍ່ກັບວຽກງານປ້ອງ ກັນຊາດປ້ອງກັນຄວາມສະຫງົບຂອງຊາດລາວໃຫ້ມີຄວາມໝັ້ນຄົງຕະຫຼອດໄປ.

ທ່ານ ຄໍາພໍ ພວງສະບາ ຍັງໄດ້ຢັ້ງຢືນເອົາກິ່ນຫອມ ແລະ ຄວາມສວຍງາມຂອງດອກຈໍາປາຂຶ້ນມາເພື່ອສ່ອງແສງ ໃຫ້ເຫັນຄວາມສວຍງາມທາງດ້ານວັດທະນາທໍາຮີດຄອງປະເພນີອັນດີງາມຂອງຊາດເຊັ່ນ ວັດຖຸບູຮານ, ວັດວາອາຮາມ ສະຖານທີ່ທ່ອງທ່ຽວຕະຫຼອດຮອດຄວາມດຸໝັ່ນໃນການອອກແຮງງານການຕໍ່າຫູກທໍໄໝ, ການນຸ່ງຖື ແລະ ນໍ້າໃຈ ບໍລິສຸດພຸດພ່ອງງອງປະຊາຊົນບັນດາເຜົ່າທີ່ມີຕໍ່ກັນໃນສັງຄົມກໍ່ຄືແຂກຄົນທີ່ເຂົ້າມາທ່ຽວຊົມຊາດລາວ. ທັງໄດ້ສ່ອງແສງ ໃຫ້ເຫັນຄວາມສວຍງາມທາງດ້ານຊັບພະຍາກອນທໍາມະຊາດອັນອຸດົມສົມບູນເຊັ່ນ ບໍ່ເງິນ, ບໍ່ຄໍາ, ພູຜາປ່າໄມ້ ແລະ ຫ້ວຍນໍ້າລໍາເຊຕ່າງໆ ທີ່ສວຍສົດງົດງາມຕັ້ງແຕ່ເໜືອເຖິງໃຕ້, ເໝືອກັບວ່າຊາດລາວທັງຊາດປູໄປດ້ວຍຜືນຜົມສີຂຽວ,

ເຊິ່ງທັງໝົດທີ່ເລົ່ານີ້ມັນໄດ້ເປັນສິ່ງເອກອ້າງທະນົງໃຈໃຫ້ແກ່ປວງຊົນລາວທັງປະເທດ, ນອກນັ້ນຍັງໄດ້ເປັນສິ່ງກະຕຸກສຸກ ຍູ້ໃຫ້ແກ່ລູກໆຫຼານໆຂອງປະຊາຊົນລາວທີ່ດໍາລົງຊີວິດຢູ່ຫ່າງໄກຈາກບ້ານເກີດເມືອງນອນໄດ້ມີຄວາມຄິດຮອດຄິດເຖິງ

ບ້ານເກີດເມືອງນອນບ່ອນຝັງສາຍແຮ່ແຜ່ສາຍບືຂອງຕົນຈົນເຮັດໃຫ້ຈິດໃຈບໍ່ເປັນສຸກກະວົນກະວານເໝືອນກັບວ່າຖືກີງ ໄຂ້ ຫຼື ເຈັບປ່ວຍດັ່ງບົດກອນຕອນໜຶ່ງຂຽນວ່າ:

| | |
|---|---|
| ແມ່ນຊິຕົກຟາກຟ້າ | ສະໝຸດຂອບຈັກກະວານ ກໍ່ຕາມທ້ອນ |
| ຍັງໄປລືມຈໍາປາ | ກິ່ນຫອມລາວນີ້ |
| ຍາມເມື່ອໜີໄກຂ້າງ | ຮາມເຫັນດວງດອກ |
| ຈິດຮຽມເປັນວ່າວຸ້ນ | ຄືໄຂ້ປິ່ມໃນ |

ໃນເມື່ອທຸກຄົນຄໍານຶງເຖິງຈິດວິນຍານຂອງຕົນ ແລະ ຂອງຊາດໝາຍເຖິງປະເທດຊາດເປັນສິ່ງທີ່ສູງສົ່ງແລ້ວ ບໍ່ອາດຈະຫ່າງເຫີນຈາກຄວາມສະໜິດຕິດພັນກັບຊີວິດຂອງທຸກຄົນໄປໄດ້ ປະເທດຊາດປຽບແມ່ຜູ້ໃຫ້ກໍາເນີດພວກເຮົາ. ເມື່ອພວກເຮົາໄດ້ພັດພາກຈາກປະເທດຊາດຕາມຈຸດປະສົງໃດໜຶ່ງແນ່ນອນວ່າຄວາມຄິດຮອດຄິດເຖິງ, ຄວາມອາໄລອາ ວອນຍອມກໍາເນີດເກີດຂຶ້ນ ບໍ່ອາດມີສິ່ງໃດມາຂວາງຂັ້ນໄດ້ ໂດຍສະເພາະແມ່ນຄົນທີ່ເຮົາຮັກ ແລະ ຫວງແຫນຍິ່ງເຮັດ ໃຫ້ເຮົາມີຄວາມອາໄລຫ່ວງຫາເພີ່ມຂຶ້ນເປັນຫຼາຍຮ້ອຍເທົ່າ. ໃນບົດກອນ ຫອມກິ່ນຈໍາປາ ນັກແຕ່ງ ຄໍາພໍ ພວງສະບາ ໄດ້ພົບເຫັນດອກຈໍາປາທີ່ກໍາລັງໄກົບເບັ່ງບານ ແລະ ສົ່ງກິ່ນຫອມຫວນ ເຮັດໃຫ້ນັກແຕ່ງຄິດຮອດຄິດເຖິງບ້ານເກີດເມືອງ ນອນອັນເປັນບ່ອນເຄີຍຢູ່ເຄີຍນອນຂອງຕົນ, ຄວາມຖະໜອມຫອມຮັກຂອງນັກແຕ່ງນັ້ນບໍ່ມີວັນຈະຈືດຈາງຈາກໂລກນີ້ ໄປໄດ້, ປຽບດັ່ງກ້ອນເກືອເຖິງແມ່ນວ່າຈະເປັນພຽງເມັດນ້ອຍໆແຕ່ເວລາຖິ້ມລົງມະຫາສະໝຸດ ຫຼື ບ່ອນໃດມັນກໍຍັງ ຮັກສາຄວາມເຄັມຂອງມັນໄວ້ຄືເກົ່າ ນໍ້າໃຈຮັກຫອມປະເທດຊາດຂອງນັກແຕ່ງກໍເຊັ່ນດຽວກັນ ເມື່ອປະເທດຊາດພົບກັບ ອຸປະສັກມີຄວາມລໍາບາກຍາກເຂັນ ຫຼື ສະດວກສະບາຍ ນັກແຕ່ງກໍຄືຄົນລາວທັງຊາດພ້ອມທີ່ຈະຮ່ວມທຸກຮ່ວມສຸກຄຽງ ບ່າຄຽງໄຫຼ່ພ້ອມກັນແກ້ບັນຫາຕ່າງໆໃຫ້ໝົດສິ້ນໄປ. ໂດຍສະເພາະປະເທດຊາດຖືກຮຸກຮານຈາກສັດຕູພາຍນອກ. ນັກ ແຕ່ງກໍຄືຄົນລາວທຸກຄົນໄດ້ພ້ອມກັນຕໍ່ສູ້ປົກປ້ອງບໍ່ໃຫ້ປະເທດຊາດຫຼົ້ມຈົມ, ແມ່ນແຕ່ຊີວິດເລືອດເນື້ອຂອງຕົນກໍ ກຽມພ້ອມທີ່ຈະເສຍສະຫຼະເພື່ອປະເທດຊາດ ເຮັດໃຫ້ປະເທດຊາດມີຄວາມໝັ້ນຄົງທະນົງແກ່ນຕະຫຼອດໄປຊົ່ວກາລະນານ.

ລວມຄວາມແລ້ວ, ບັນຫາຕ່າງໆທີ່ໄດ້ສ່ອງແສງໃຫ້ພວກເຮົາເຫັນໂດຍຜ່ານບົດກອນຫອມກິ່ນຈຳປາ ນັ້ນເປັນສະແດງເຖິງນ້ຳໃຈເສຍສະຫຼະອັນສູງສົ່ງຂອງນັກແຕ່ງທີ່ມີຕໍ່ປະເທດຊາດຕໍ່ຜືນແຜ່ນດິນອັນຄົບຖ້ວນຂອງລາວຢ່າງແທ້ຈິງ.

## 4. ສິລະປະການປະດິດແຕ່ງ

ບົດກອນ "ຫອມກິ່ນຈຳປາ" ຂອງນັກກະວີ ຄຳພໍ ພວງສະບາ ເປັນບົດກອນທີ່ສັ້ນກະທັດຮັດແຕ່ມີຄວາມໝາຍ ເລິກເຊິ່ງ, ການໃຊ້ສັບສຳນວນພາສາຄຳເວົ້າມີລັກສະນະນີ້ມນວນຄ່ອງແຄ້ວ ແລະ ເຂົ້າໃຈງ່າຍ, ຫຼັກການສຳພັດແມ່ນ ການສຳພັດນອກ - ສຳພັດໃນເກາະກ່າຍກັນເປັນຢ່າງດີ, ສາມາດສ້າງຄວາມສະທ້ອນໃຈໃຫ້ອະດົມການຕໍ່ຜູ້ອ່ານເປັນຢ່າງ ສູງ ເພາະທ່ານໄດ້ສືບທອດເອົາຂໍ້ມູນອັນນະຄະດີລາວບູຮານມາປະດິດແຕ່ງ, ໂດຍໃຊ້ວິທີປຽບທຽບຄວາມໝາຍຂອງ ດອກໄມ້ນາໆຊະນິດ ເພື່ອເວົ້າເຖິງນ້ຳໃຈຮັກຊາດຂອງຄົນລາວ, ເຊິ່ງມູນເຊື້ອອັນນະຄະດີດັ່ງກ່າວນັ້ນ, ມັນໄດ້ສະແດງ ອອກຜ່ານບົດກອນບາງບົດດັ່ງນີ້:

| | |
|---|---|
| ຫອມດອກຈິກ | ຄິດຮອດບັ້ນຫຼັງ |
| ຫອມດອກຮັງ | ຄິດຮອດບັ້ນເກົ່າ |
| ຫອມດອກຄັດເຄົ້າ | ຄືຊິເຖົ້າບໍ່ເປັນ ແທ້ເດ່ |

ດອກຈິກ, ດອກຮັງເປັນດອກໄມ້ທີ່ມັກເກີດຢູ່ຕາມໂຄກ, ມັນອອກດອກຍາມເດືອນ 3-4 ທັງເປັນດອກໄມ້ທີ່ ມີກິ່ນຫອມຍາມເມື່ອລົມພັດກິ່ນຫອມຂອງມັນກະຈາຍໄປທົ່ວທຸກທົບທຸກແຫ່ງອັນໄດ້ເຮັດໃຫ້ຜູ້ທີ່ຢູ່ຫ່າງໄກບ້ານເກີດເມືອງນອນມີຄວາມຄິດຮອດຄິດເຖິງບ້ານເກີດເມືອງນອນຂອງຕົນ. ບໍ່ພຽງເທົ່ານັ້ນຢູ່ຕາມຖິ່ນຖານບ້ານເກີດຂອງຄົນ ລາວຍັງປະກອບມີດອກໄມ້ຫຼາຍຊະນິດທີ່ເຄີຍຜູກພັນກັບຈິດວິນຍານຂອງໃຜລາວ ເມື່ອມັນສົ່ງກິ່ນຫອມກໍ່ຈະເຮັດໃຫ້ ລະນຶກເຖິງບ້ານເກີດເມືອງນອນອັນເປັນທີ່ຮັກ ແລະ ຫວງແຫນຂອງຕົນເຊັ່ນກັນ. ດັ່ງທ່ານ ຄຳພໍ ພວງສະບາ ເພິ່ນໄດ້ຮັບ ກິ່ນຫອມຂອງດອກຈຳປາກໍເຮັດໃຫ້ເພິ່ນຄິດຮອດຄິດເຖິງບ້ານເກີດເມືອງນອນ. ດັ່ງນັ້ນ, ການປະດິດແຕ່ງບົດກອນ ຫອມກິ່ນຈຳປາ ເພິ່ນຈຶ່ງໃຊ້ຄຳສັບວ່າ ຫອມ ພຽງຄຳດຽວເປັນການເນັ້ນໄປເນັ້ນມາຫຼາຍເທື່ອ, ເພື່ອເນັ້ນໜັກເຖິງຄວາມ ຄິດຮອດຄິດເຖິງປະເທດຊາດຢ່າງບໍ່ມີວັນລືມ.

ທ່ານ ຄຳພໍ ພວງສະບາ ຍັງໄດ້ຍົກໃຫ້ເຫັນຮູບພາບດອກຈຳປາ ເຊິ່ງເປັນດອກໄມ້ທີ່ສວຍງາມ ແລະ ກິ່ນຫອມ ກວ່າດອກໄມ້ຊະນິດອື່ນໆໃນໂລກ, ໝາຍຄວາມວ່າໃນໂລກນີ້ບໍ່ມີສິ່ງໃດຈະຫອມກວາດອກຈຳປາຕົວແທນແຫ່ງປະເທດ ຊາດຂອງຕົນໄດ້ອີກແລ້ວ. ເພາະສະນັ້ນ, ທ່ານຈຶ່ງໄດ້ກູ້ຢືມ ແລະ ຝາກຝັງນ້ຳໃຈຮັກຊາດຮັກບ້ານເກີດເມືອງນອນອັນສູງ ສົ່ງໄວ້ກັບກິ່ນຫອມຂອງດອກຈຳປາ ເຊິ່ງສະແດງອອກຜ່ານບົດກອນ ຫອມກິ່ນຈຳປາ ດ້ວຍອາດແຕ່ງທີ່ມ່ວນອ່ອນຊອນ ຈັບອົກຈັບໃຈແກ່ຜູ້ຟັງ, ທັງສະທ້ອນໃຫ້ເຫັນຄວາມໝາຍອັນເລິກເຊິ່ງເຖິງນ້ຳໃຈຮັກຊາດຮັກບ້ານເກີດເມືອງນອນຂອງ ຄົນລາວທຸກຄົນ, ເຖິງວ່າລູກໆຫຼານໆຂອງຄົນລາວຈະເຫີນຫ່າງຈາກບ້ານເກີດເມືອງນອນໄປສູ່ຂອບຟ້າແດນໄກແຕ່ໄດ້ ກິ່ນຫອມຂອງຜູ້ເປັນແມ່ຄື ດອກຈຳປາ ບໍ່ອາດຈະເຫີນຫ່າງຈາກດວງວິນຍານຂອງລູກຫຼານທີ່ເປັນເລືອດເນື້ອເຊື້ອສາຍ ຂອງຄົນລາວໄປໄດ້. ເມື່ອແມ່ພົບອຸປະສັກລູກທຸກຄົນຂໍອຸທິດຊີວິດເພື່ອປົກປ້ອງແມຕະຫຼອດໄປ "ຫອມກິ່ນຈຳປາ".

### ບົດກອນ ຫອມກິ່ນຈຳປາ

| | |
|---|---|
| ຫອມໃດໃນໂລກນີ້ | ບໍ່ປຸນປຽບຈຳປາ ດອກນາ |
| ຫອມທົ່ວເຖິງເວຫາ | ເມກຂະຫຼາແດນດ້າວ |
| ຫອມມີເປົ່າບາງໄດ້ | ພໍພຽງຍາມຍິບ |
| ຫອມຈິບດວງລົ້ນລົ້ນ | ຍາມລົມຕ້ອງກິ່ນມາ... |
| ຫອມຫຼາຍເດດວງດອກໄມ້ | ຈຳປາເບັ່ງບານສີລາວເອີຍ |
| ຫອມບໍ່ເຫີຍຫາຍຮັກ | ບໍ່ຈືດຈາງວາງເວັ້ນ |
| ຫອມໝື່ນຈອງຈັນຄູ່ | ສະເໜ່ຫາຮັກຫໍ່ |
| ຂໍຂອດກອນການຂ້ອຍ | ເປັນພວງທ້ອຍຮອດງາມ ດອມແລ້ວ. |
| ແມ່ນຊິຕົກຟາກຟ້າ | ສະໝຸດຂອບຈັກກະວານ ກໍ່ຕາມທ້ອນ |

ຍັງໄປລືມຈຳປາ ກິ່ນຫອມລາວນີ້
ຍາມເມື່ອໜີໄກຂ້າງ ຮາມເຫັນດວງດອກ
ຈິດຮຽມເປັນວ່າວຸ້ນ ຄືໄຂ່ປົ່ມໃນ
ຫືວໃຈຄິດໄລ່ພໍ້ ຢາກຮຽງຮ່ອມແດ່ຈຳປາ
ໄດ້ກິ່ນດວງບຸບຜາ ຕື່ນຫອມກໍຫາຍເສົ້າ
ຂໍເອົາຊີວາປ້ອງ ປອງແຮຮຽງຮ່ອມ
ໃຕ້ຮົ່ມດວງດອກໄມ້ ຈຳປາຕົ້ນກິ່ນຫອມ ນີ້ແລ້ວ

# ບົດຕົວຢ່າງ

# ວິໃຈບົດກອນ “ຄຸນພໍ່ ແລະ ແມ່”

## 1. ທີ່ມາຂອງບົດກອນ

ບົດກອນ "ຄຸນພໍ່ ແລະ ແມ່ " ແມ່ນໄດ້ຄັດຈາກປຶ້ມສຸພາສິດສອນໃຈໃນອິນທິຍານສອນລູກ, ເຫຼັ້ມສອງ ແລະ ຈຳໜ່າຍປຶ້ມແຫ່ງລັດ, ພິມທີ່ໂຮງພິມ:ສຳນັກພິມ (ຫວັນໃຈການພິມ) ປີ 2009 ໜ້າທີ 21-23.

## 2. ເນື້ອໃນລວມ

ເວົ້າເຖິງຄວາມຮູ້ ບຸນຄຸນ, ເຄົາລົບນັບຖື, ເທີດທູນ ແລະ ຄວາມກະຕັນຍູບູຊາຂອງຜູ້ເປັນລູກ, ທີ່ຄວນມີຕໍ່ພໍ່ ແລະແມ່ ຂອງຕົນ ແລະ ເວົ້າເຖິງຄົນເຮົາທຸກຄົນຕ້ອງມີສະຕິຕື່ນຕົວກຽມພ້ອມຕໍ່ສູ້ກັບອຸປະສັກແລະຄວາມ ຫຍຸ້ງຍາກສັບສົນ,ບົນ ເສັ້ນທາງຖະໜົນຂອງຊີວິດທີ່ດົ້ນຮົນຊອກສະແຫວງຫາລ້ຽງຊີບເພື່ອບໍ່ຫວັ່ນໄຫວຄອນແຄນ ອ່ອນແອທໍ້ຖອຍຕໍ່ອຸປະສັກ ຂອງຊີວິດ.

## 3. ການແບ່ງຕອນ

ບົດກອນ ຄຸນພໍ່ ແລະ ແມ່ ນີ້ເປັນບົດກອນທີ່ສະທ້ອນເຖິງອາລົມຈິດສູງຂອງຜູ້ແຕ່ງ. ອ່ານແລ້ວຮູ້ສຶກ ຊາບຊຶ້ງ.ນອກ ນີ້ນັກແຕ່ງຍັງໄດ້ຍົກເອົາຮູບພາບຄວາມຮູ້ບຸນຄຸນຂອງພໍ່ແມ່ຂຶ້ນມາປະດິດແຕ່ງເພື່ອເປັນການຕັກເຕືອນ ສະຕິໃຫ້ທຸກຄົນຢ່າ ໄດ້ຄິດຫຼົງລືມບຸນຄຸນຂອງພໍ່ແມ່ຕົນເອງ. ໃນບົດກອນດັ່ງກ່າວເພິ່ນໄດ້ແບ່ງອອກເປັນ 2 ຕອນຄື:

ຕອນທີ 1 ແມ່ນນອນຢູ່ໃນບາດທີ 1-2

ມີເນື້ອໃນເວົ້າເຖິງ ຄວາມຮູ້ບຸນຄຸນເຄົາລົບນັບຖືຄວນເທີດທູນກະຕັນຍູ ບູຊາ ຂອງຜູ້ເປັນລູກທີ່ຄວນຕໍ່ພໍ່ ແລະ ແມ່.

ຕອນທີ 2 ແມ່ນນອນຢູ່ໃນບາດທີ 3-4

ມີເນື້ອໃນເວົ້າເຖິງ ຄົນເຮົາທຸກຄົນຕ້ອງມີສະຕິຕື່ນຕົວກຽມພ້ອມຕໍ່ສູ້ກັບອຸປະສັກ ແລະ ຄວາມ ຫຍຸ້ງຍາກ ສັບສົນບົນເສັ້ນທາງຖະໜົນຂອງຊີວິດທີ່ດົ້ນຮົນຊອກສະແຫວງຫາລ້ຽງຊີບເພື່ອບໍ່ໃຫ້ຫວັ່ນໄຫວ ຄອນແຄນອ່ອນ ແແອທໍ້ຖອຍຕໍ່ອຸປະສັກຂອງຊີວິດ.

## 4. ການວິເຄາະ

### 1. ຄວາມຮູ້ບຸນຄຸນຂອງລູກທີ່ມີຕໍ່ພໍ່ແມ່

ຄວາມກະຕັນຍູຂອງຄົນລາວມີມາຕັ້ງແຕ່ບູຮານຮຸ່ນປູ່ຍ່າຕາຍາຍໄດ້ຢັ້ງຢືນອັນເປັນເອກະລັກວັດທະນະທຳ ທາງ ຈິດໃຈກ່ຽວກັບການຍ້ອງຍໍສັນລະເສີນວ່າ ບິດາມານດາເປັນຜູ້ກຳເນີດເກີດຄົນຮຸ່ນໃໝ່ຂຶ້ນມານັ້ນກໍ່ຄືລູກຂອງ ຕົນເອງ. ແລະ ພໍ່ແມ່ຄື ປູຊະນີຍະບຸກຄົນທີ່ມີບຸນຄຸນຕໍ່ຜູ້ເປັນລູກ. ສະນັ້ນ, ຜູ້ເປັນລູກຄວນເຄົາລົບບູຊາ. ດັ່ງບົດ ກອນຕອນໜຶ່ງ ຂຽນເອົາໄວ້ວ່າ:

ຄຸນຂອງພໍ່ແມ່ນີ້ ມີມາກເຫຼືອຫຼາຍ
ຄວນທີ່ຍິງຊາຍເປັນ ລູກຄິງຄະນຶງນ້ອມ

ຍ້ອນແນວນັ້ນໃຜໆກໍ່ຍ່ອມຮູ້ດີວ່າພໍ່ແມ່ຄືຜູ້ມີພະຄຸນອັນລົ້ນເຫຼືອຢ່າງໃຫຍ່ຫຼວງອັນໄດ້ສ້າງອຸປະການະຄຸນ ໄວ້ ໃຫ້ແກ່ລູກຢ່າງລົ້ນເຫຼືອ. ດັ່ງຄຳເວົ້າຕອນໜຶ່ງຂຽນເອົາໄວ້ວ່າ:

ຄຸນຂອງພໍ່ເທົ່າພູເຂົາກ້າ ຄຸນຂອງແມ່ເທົ່າຟ້າກັບດິນ

ຍ້ອນແນວນັ້ນຜູ້ເປັນລູກຄວນຈະຕ້ອງຮູ້ກະຕັນຍູຕອບແທນບຸນຄຸນຂອງພໍ່ແມ່ຢ່າງບໍ່ມີວັນຈະໝົດໄປຈາກໂລກນີ້. ເວລາພໍ່ ແລະ ແມ່ຍັງມີຊີວິດຢູ່ພວກເຮົາຄວນຈະຕ້ອງຮູ້ອຸປະຖຳຄ້ຳຊູລ້ຽງດູເບິ່ງແຍງບໍ່ຄວນໃຫ້ເພິ່ນທຸກຍາກລຳບາກ. ເວລາເພິ່ນມໍລະນະຈາກໄປແລ້ວກໍ່ຕ້ອງຮູ້ລະນຶກເຖິງຄຸນງາມຄວາມດີ ແລະ ເທີດທູນບູຊາໄວ້ ເໜືອຂະໜອມຈອມຂວັນຢູ່ ທຸກວັນເວລາ. ດັ່ງບົດກອນໄດ້ຂຽນໄວ້ວ່າ:

| | |
|---|---|
| ຫອມຮັກຫວງແຫນໄວ້ | ກາງໃຈຈິນຕະຫຼອດ |
| ຄິດຮອດຕ້ອງກໍ່ສ້າງ | ຄຸນຄວາມດີເດັ່ນອ້າງ ຢ່າຈາງຈ້ອຍໃຫ້ຈື່ຈຳ. |

**2. ຄົນເຮົາຕ້ອງມີສະຕິຕື່ນຕົວຕໍ່ອຸປະສັກ**

ຄົນເຮົາທຸກຄົນທີ່ດຳລົງຊີວິດຢູ່ໃນສັງຄົມບໍ່ວ່າຈະເຮັດວຽກງານຫຍັງກໍ່ແລ້ວແຕ່ ກໍຂໍໃຫ້ມີສະຕິລະວັງຕົວກຽມພ້ອມຕໍ່ສູ້ກັບອຸປະສັກຕ່າງໆນາໆຂອງຊີວິດທີ່ເຮົາບໍ່ອາດຮັບຮູ້ໄດ້ວ່າມັນຈະເກີດຂຶ້ນໃນເມື່ອໃດ. ສະນັ້ນ, ໃຫ້ກຽມພ້ອມຢູ່ສະເໝີຂໍ້ສຳຄັນແມ່ນໃຫ້ສ້າງຄວາມຫວັງໃຫ້ກຳລັງໃຈເພື່ອໃຫ້ເຂັ້ມແຂງບໍ່ຫວັ່ນໄຫວຄອນແຄນຫຍໍ້ທໍ້ເມື່ອ ພົບພໍ້ກັບອຸປະສັກຕ່າງໆນາໆຂອງຊີວິດ. ເຖິງວ່າຈະເຄີຍຢູ່ສະໜຸກສຸກສະບາຍບໍ່ເຄີຍທຸກຍາກກໍຕາມເມື່ອເວລາເງິນຄຳໝົດໄປ ຫຼື ວ່າຖືກຜູ້ຮ້າຍຊາຍໂຈນປຸ້ນຈີ້ງັດແງະລັກລອບເອົາໄປ ຫຼື ວ່າຖືກໄຟໄໝ້ເຜົາຜານຈົນກ້ຽງມອດໄປໝົດກໍຕາມ ເພື່ອໃຫ້ຄົນເຮົາໄດ້ມີສະຕິລະວັງຕົວຕໍ່ອຸປະສັກຕ່າງໆນາໆ. ດັ່ງບົດກອນຕອນໜຶ່ງກ່າວເອົາໄວ້ວ່າ:

| | |
|---|---|
| ຍາມເມື່ອທຸກຍາກຫຍຸ້ງ | ຄຸງຄັງຄາຕິດ |
| ພົບບັນຫາຊີວິດ | ຊຸດໂຊມຊົ່ວຮ້າຍ |
| ອັນຕະລາຍຫຼາຍດ້ານ | ມານຕາຕິໜໍ່າ |
| ເງິນຄຳມອດໝົດສ້ຽງ | ສຽງເຍີ້ຍກ່າວປະນາມ. |

ກໍ່ຍ້ອນແນວນັ້ນເພິ່ນຈຶ່ງໃຫ້ສ້າງກຳລັງໃຈເຂັ້ມແຂງບໍ່ຫວັ່ນໄຫວຄອນແຄນອ່ອນແອ ໃຫ້ເຊີດຊູກຳລັງໃຈ, ໃຫ້ ຄິດວ່າສິ່ງເຫຼົ່ານັ້ນເສຍໄປແລ້ວແຕ່ຂວັນກຳລັງໃຈ, ຮ່າງກາຍຕີນມືເຮົາຍັງມີຄືເກົ່າ ເຮົາຈະຕ້ອງລຸກຢືນດ້ວຍລຳແຄ່ງລຳຂາ ຕໍ່ສູ້ໃຫ້ສັບສົນບັດເຫຼົ່ານັ້ນກັບຄືນມາຄືເກົ່າ ເຊິ່ງປຽບດັ່ງໃບໄມ້ທີ່ຢູ່ເທິງລຳຕົ້ນເຫຼືອງຫຼາ,ຫຼົ່ນລົງຈົນກ້ຽງເຫຼືອແຕ່ກິ່ງງ່າຊີ້ ຟ້າຄອຍຝົນ. ແຕ່ສິ່ງສຳຄັນລຳຕົ້ນ ແລະ ສາຂາງ່າຕ່າງໆບໍ່ທັນຕາຍ, ຍັງບໍ່ແຫ້ງຫ່ຽວເຫຼືອງຫຼົ່ນເໝືອນໃບ ແລະ ນີ້ຄືຄວາມ ຫວັງ, ຄືຊີວິດທີ່ມີພະລັງທີ່ຈະປົ່ງຊໍ່ຈາວແຕກໜໍ່ຈໍ່ໃບໃນບໍ່ທໍ່ໃດວັນຂ້າງໜ້າ ໃບຂອງມັນກໍຈະກັບມາປົ່ງອອກຄືເກົ່າດັ່ງ ບົດກອນຕອນໜຶ່ງຂຽນເອົາໄວ້ວ່າ:

| | |
|---|---|
| ທ່ານຢ່າໄດ້ໂສດເສົ້າ | ຫງ່ວມເຫງົາຜິດຫວັງ |
| ຊີວິດຍັງບໍ່ທັນຕາຍ | ໃຫ້ຕື່ນຕົວຕື່ນສະດຸ້ງ |

ຈາກບົດກອນດັ່ງກ່າວເຫັນວ່າ ນັກແຕ່ງໄດ້ເວົ້າເຖິງການທີ່ຄົນເຮົາພົບກັບອຸປະສັກຕ່າງໆນາໆ ກໍຢ່າໄດ້ທໍ້ຖອຍຫຼື ອ່ອນແອ ໃຫ້ຕໍ່ສູ້ກັບບັນຫາເພື່ອອານາຄົດຈະໝົດລົມຫາຍໃຈ.

## 5. ດ້ານສະຫຼຸບ

### ກ. ດ້ານເນື້ອໃນ

ບົດກອນຄຸນພໍ່ ແລະ ແມ່ ແມ່ນມີເນື້ອໃນເວົ້າເຖິງ ຄວາມຮູ້ບຸນຄຸນເຄົາລົບນັບຖືເທີດທູນຄວາມກະຕັນຍູ ແລະ ບູຊາຂອງຜູ້ເປັນລູກທີ່ຄວນມີຕໍ່ພໍ່ແມ່ ແລະ ເວົ້າເຖິງຄົນເຮົາທຸກຄົນຕ້ອງມີສະຕິຕື່ນຕົວກຽມພ້ອມຕໍ່ສູ້ກັບອຸປະສັກຕ່າງໆນາໆ.

### ຂ. ດ້ານສິລະປະ

ຜູ້ແຕ່ງໄດ້ໃຊ້ສັບພາສາທີ່ສຸພາບອ່ອນໂຍນມີສຳນວນໂວຫານອ່ານງ່າຍເຂົ້າໃຈຄວາມໝາຍໄດ້ຢ່າງເລິກເຊິ່ງ ແລະ ເປັນບົດກອນທີ່ມີອາລົມຈິດສູງ.

## ບົດຕົວຢ່າງ
## ບົດກອນ "ຄຸນພໍ່ ແລະ ແມ່"

ໂອ້ນໍ ຄຸນຂອງພໍ່ແມ່ນີ້ ມີໝາກເຫຼືອຫຼາຍ
ຄວນທີ່ຍິງຊາຍເປັນ ລູກຄິງຄະນຶງພ້ອມ
ຫອມຮັກຫວງແຫນໄວ້ ກາງໃຈຈີນຕະຫຼອດ
ຄິດຮອດຕ້ອງກໍ່ສ້າງ ຄຸນຄວາມດີເດັ່ນອ້າງ ຢ່າຈາງຈ້ອຍໃຫ້ຈື່ຈໍາ
ຄັນລູກຄິດແຄບສັ້ນ ຕັນມືດມົວໝອງ
ບໍ່ສ່ອງໃສຊີເສຍຫຼັກ ລ່ວງຄອງທີ່ຄວນຮູ້
ກະຕັນຍຸບໍ່ຍໍຍູ້ ລືມຄຸນພໍ່ແລະແມ່
ກໍາຊີກຸມແກ່ເຈົ້າ ຢ່າຝືນຄວາມຜູ້ເຖົ້າ ທີ່ຈາເວົ້າສັ່ງສອນ
ຍາມເມື່ອທຸກຍາກຫຍຸ້ງ ຄຶງຄັ່ງຄາຕິດ
ພົບບັນຫາຊີວິດ ຊຸດໂຊມຊົ່ວຮ້າຍ
ອັນຕະລາຍຫຼາຍດ້ານ ມານຕໍາຕີນໍາ
ເງິນຄໍາມອດມິດສ້ຽງ ສຽງເຍີ້ຍກ່າວປະນາມ
ທ່ານຢ່າໄດ້ໂສກເສົ້າ ຫງ່ວມເຫງົາຜິດ
ຊີວິດຍັງບໍ່ທັນຕາຍ ໃຫ້ຕື່ນຕົວຕີສະດຸ້ງ
ມຸ້ງມາດໝາຍມະໂນໝັ້ນ ແຂ່ງຂັນສະກັ້ນແກ່ນ
ລຸກແລ່ນຈີນບໍ່ກັ້ນ ດຸໝັ່ນພຽງບໍ່ຄັ້ນ ມັນຫາກຊີເບັ່ງບານດອກນາ.

## ບົດຕົວຢ່າງ
## ວິໄຈບົດກອນ " ຄົມກະວີ "

### 1. ທີ່ມາຂອງບົດກອນ

ບົດກອນ ຄົມກະວີ ໄດ້ຄັດຈາກປຶ້ມວັນນະຄະດີຊັ້ນມໍ 6 ຂອງ ພ. ພວງ ສະບາໃນນັ້ນແມ່ນບົດທີ່ 7 ແມ່ນ ຫອມ ກິ່ນຈໍາປາ ( ພິມທີ່ກະຊວງສຶກສາທິການສະຖາບັນການຄົ້ນຄວ້າວິທະຍາສາດການສຶກສາປີ 2009 ) ໜ້າທີ 99 ຮຽບຮຽງໂດຍ ອ່ອນແກ້ວ ນວນນະວົງ.

### 2. ເນື້ອໃນລວມ

ບົດກອນ ຄົມກະວີ ແມ່ນມີເນື້ອໃນລວມເວົ້າເຖິງ ການຍົກຍ້ອງ, ສັນລະເສີນຜູ້ທີ່ມີຄວາມຮູ້ຄວາມສາມາດ, ໃນ ການແຕ່ງກາບແຕ່ງກອນທີ່ມີເນື້ອໃນຄວາມໝາຍອັນສໍາຄັນເລິກເຊິ່ງທີ່ເປັນລັກສະນະປິດບັງ, ເຊື່ອງຊ້ອນຄວາມ ໝາຍ ເພາະວ່າຄົມກະວີປຽບເໝືອນຄົມປັນຍາອັນຮອບຮູ້ປິ່ງໃສຂອງຄົນ. ສະນັ້ນ, ຖ້າເຮົາສົມທຽບໃສ່ວັດຖຸຄົມ ກະວີກໍ່ບໍ່ແຕກ ຕ່າງຫຍັງກັບວັດຖຸທີ່ມີຄ່າລາຄາແພງເຊັ່ນແກ້ວແຫວນເງິນຄໍາເພັດນິນຈິນດາອັນມີມູນຄ່າມະຫາສານ.

### 3. ການແບ່ງຕອນ

ບົດກອນ ຄົມກະວີ ນີ້ເປັນບົດກອນອາລົມຈິດ, ບໍ່ມີຕົວລະຄອນແຕ່ນັກແຕ່ສາມາດຍົກເອົາຮູບນາມມະທໍາ ມາເປັນ ຈຸດປະສົງຫຼັກເພື່ອໃຫ້ຜູ້ອ່ານ ຫຼື ວ່າຜູ້ນໍາໃຊ້ຮັບຮູ້ເພື່ອສາມາດຕີຄວາມໝາຍອອກ ແລະ ຮູ້ສົມທຽບ, ປຽບທຽບ. ບົດກອນຄົມກະວີໄດ້ແບ່ງອອກເປັນ 2 ຕອນຄື:

+**ຕອນທີ 1** ແມ່ນນອນຢູ່ໃນບາດທີ 1-2

ເນື້ອໃນເວົ້າເຖິງ ຄໍາເວົ້າທີ່ເປັນອາວຸດທີ່ແຫຼມຄົມເພາະວ່າເປັນຄໍາເວົ້າທີ່ມີເນື້ອໃນສໍາຄັນກວ້າງຂວາງເລິກເຊິ່ງ ແລະ ຖ້າສົມທຽບໃສ່ວັດຖຸກໍ່ຄືກັບອາວຸດທີ່ມີຄົມ

+**ຕອນທີ 2** ແມ່ນນອນຢູ່ໃນບາດທີ 3-4

ເນື້ອໃນເວົ້າເຖິງ ຄວາມໝາຍອັນສຳຄັນຂອງຄົມກະວີ ແລະ ຖ້າຫາກວ່າມີບຸກຄົນໃດໜຶ່ງທີ່ສາມາດອ່ານ ຫຼື ຕີຄວາມໝາຍຂອງຄຳເວົ້າໄດ້ກໍ່ສາມາດຮັບຮູ້ເຖິງຄວາມໝາຍໄດ້ຢ່າງຈະແຈ້ງ.

## 4. ການວິເຄາະ

### 1. ຄົມກະວີ ແລະ ວັດຖຸທີ່ມີລາຄາແພງ

ຍ້ອນວ່າຄົມກະວີເປັນຄຳເວົ້າທີ່ມີເນື້ອໃນຄວາມໝາຍອັນສຳຄັນ ແລະ ເລິກເຊິ່ງເຖິງວ່າຈະເປັນຄຳເວົ້າທີ່ລຶກລັບຊັບຊ້ອນ, ເປັນລັກສະນະປິດບັງເຊື່ອງຊ້ອນຄວາມໝາຍ ແຕ່ກໍ່ມີຄວາມໝາຍສຳຄັນຖ້າທຽບໃສ່ວັດຖຸກໍ່ແມ່ນວັດຖຸທີ່ມີ ລາຄາແພງເຊັ່ນ: ແກ້ວແຫວນ, ເງິນທອງ, ເພັດພອຍຕ່າງໆ ຍ້ອນແນວນັ້ນ ນັກກະວີ ພ. ພວງສະບາ ຈຶ່ງໄດ້ຍົກເອົາຄຳ ເວົ້າຕອນໜຶ່ງຂຶ້ນມາເວົ້າວ່າ:

| | |
|---|---|
| ໂອ້ ຄົມກະວີເຊື່ອງຊ້ອນ | ຊອນສອດອັກສອນສິນ ງາມເດ |
| ປານເພັດນິນຈິນດາ | ຄ່າແພງພໍ່ຕື້ |

ຍ້ອນແນວນັ້ນຄົມກະວີຈຶ່ງເປັນຄຳເວົ້າທີ່ມີຄວາມໝາຍອັນສຳຄັນ,ເພາະວ່າຄົມກະວີມີເນື້ອໃນຄວາມໝາຍອັນເລິກເຊິ່ງ ເຖິງວ່າຈະເປັນຄຳເວົ້າທີ່ລຶກລັບສັບຊ້ອນຖ້າຫາກມີການຄົ້ນຄິດ, ພິຈາລະນາກໍ່ຮັບຮູ້ຄວາມໝາຍໄດຢ່າງຈະແຈ້ງ ວ່າມັນເວົ້າກ່ຽວກັບຫຍັງ ແລະ ເປັນຫຍັງເພິ່ນຈຶ່ງເອົາບົດກອນຄົມກະວີເຂົ້າມາກ່ຽວກັບວັດຖຸທີ່ມີຄ່າ, ລາຄາແພງຍ້ອນວ່າຄຳເວົ້າຄົມກະວີມີຄວາມສຳຄັນ ແລະ ມີປະໂຫຍດເທົ່າກັບວັດຖຸທີ່ມີຄ່າ ແລະ ເວົ້າອີກຢ່າງໜຶ່ງວ່າຄົມກະວີກໍ່ປຽບເໝືອນ ອາວຸດທີ່ແຫຼມຄົມ. ດັ່ງບົດກອນຕອນໜຶ່ງຂຽນເອົາໄວ້ວ່າ:

| | |
|---|---|
| ປຽບດັ່ງຫຼາວຫອກງ້າວ | ຄົມທັ່ງແທງປັກ |
| ວາດທ່າທາງຄົມສິນ | ຕື່ມເຖິງຖະແຫຼງຖ້ອຍ. |

### 2. ຄວາມໝາຍອັນເລິກເຊິ່ງຂອງຄົມກະວີຖ້າສົມທຽບໃສ່ມີການຄົ້ນຄິດ

ຍ້ອນວ່າ ຄົມກະວີ ມີຄວາມໝາຍອັນສຳຄັນຢ່າງເລິກເຊິ່ງ ແລະ ເປັນຄຳເວົ້າທີ່ມີລັກສະນະປິດບັງ, ເຊື່ອງຊ້ອນຄວາມໝາຍຖ້າຫາກຄົນເຮົາມີການຄົ້ນຄິດພິຈາລະນາເບິ່ງໃຫ້ຖີ່ຖ້ວນກໍ່ຈະຮັບຮູ້ເຖິງເນື້ອໃນຂອງບັນຫາດັ່ງກ່າວວ່າມັນສອງແສງເຖິງຫຍັງຍ້ອນແນວນັ້ນ ນັກກະວີ ພ. ພວງສະບາ ຈຶ່ງໄດ້ຍົກເອົາບົດກອນຕອນໜຶ່ງຂຶ້ນມາເວົ້າວ່າ:

| | |
|---|---|
| ມີບ່ອນໄຂບ່ອນອ້ຳ | ອຳເງື່ອນເພື່ອນຂົມ |
| ເປັນຄຳຄົມເຄັມປັກ | ສຽບຊອນລາຍໄວ້ |
| ໃຜຜູ້ປັນຍາສ້ຽມ | ຈິງທຽມທັນແທງຊອດ |
| ສອດຊ່ອງຊີຊອກນັ້ນ | ເຫັນສິ້ນສ່ວນຄົມ. |

ຍ້ອນວ່າ ຄົມກະວີ ເປັນຄຳເວົ້າທີ່ມີເນື້ອໃນຄວາມໝາຍ ຄວາມສຳຄັນເຖິງວ່າຈະເປັນລັກສະນະປິດບັງ, ເຊື່ອງຊ້ອນຄວາມໝາຍຖ້າຫາກວ່າຄົນເຮົາບໍ່ມີການຄົ້ນຄິດ, ພິຈາລະນາກໍ່ຈະບໍ່ຮັບຮູ້ເຖິງເຫດ ແລະ ຜົນວ່າມັນຢາກສ່ອງແສງເຖິງຫຍັງແຕ່ຖ້າຄົນເຮົາອ່ານແລ້ວມີການສົມທຽບປຽບທຽບ, ມີການຄົ້ນຄິດພິຈາລະນາຢ່າງລະອຽດອ່ອນກໍ່ຈະຮູ້ເຖິງສາເຫດດັ່ງກ່າວວ່າມັນເວົ້າເຖິງຫຍັງ. ດັ່ງບົດກອນຂຽນເອົາໄວ້ວ່າ:

| | |
|---|---|
| ສົມຊື່ຄົມບໍ່ຫຸ້ຍ | ລໍ່ລື່ນດວງຕາວ |
| ເບິ່ງເຂົ້າໄປໃນໆ | ແກ່ນໃຈຈຳຈື້ |
| ມີຫຼາຍຄົມຄຳເຂັ້ມ | ລິງລາຍວາດທ່າ |
| ຄົມປັນຍາຮອບຮູ້ | ທັງຄົມຊັ້ນສາດຕະສິນ ເຈົ້າເອີ້. |

## 5. ດ້ານສະຫຼຸບ

### ກ. ດ້ານເນື້ອໃນ

ຄົມກະວີ ເປັນຄຳເວົ້າທີ່ມີເນື້ອໃນຄວາມໝາຍສຳຄັນກວ້າງຂວາງ ແລະ ເລິກເຊິ່ງເຖິງວ່າຈະເປັນຄຳເວົ້າທີ່ລຶກລັບຊັບຊ້ອນເປັນລັກສະນະປິດບັງເຊື່ອງຊ້ອນຄວາມໝາຍ ແລະ ຄຳວ່າ ຄົມກະວີ ຈະເປັນພຽງຄຳເວົ້າທຳມະດາກໍ່ຕາມແຕ່ທ້າ ທຽບໃສ່ວັດຖຸສິ່ງຂອງຕ່າງໆຄົມກະວີກໍ່ມີຄ່າເທົ່າກັບວັດຖຸທີ່ມີຄ່າລາຄາແພງ.

**ຂ. ດ້ານສິລະປະ**

ບົດກອນ ຄົມກະວີ ແມ່ນນັກແຕ່ງໄດ້ໃຊ້ສັບພາສາທຳມະດາອ່ານແລ້ວເຮັດໃຫ້ມີອາລົມຈິດ ແລະ ຍັງມີການໃຊ້ ຊັບສຳນຽງໂວຫານແບບອ່ອນໂຍນອ່ານແລ້ວເຮັດໃຫ້ເຂົ້າໃຈງ່າຍ.

## ບົດກອນ "ຄົມກະວີ"

| | |
|---|---|
| ໂອ້ ຄົມກະວີເຊື່ອງຊ້ອນ | ຊອນສອດອັກສອນສິນ ງາມເດ |
| ປານເພັດນິນຈິນດາ | ຄ່າແພງພໍຕື້ |
| ເປັນສື່ສາຍສຳພັນສາງ | ວາງໝາຍແນປະໂຫຍດ |
| ບົດກະວີອາດໄວ້ | ໄຂຂໍ້ຂອດໃຈ |
| ປຽບດັ່ງຫຼາວຫອກງ້າວ | ຄົມທັ່ງແທງປັກ |
| ອາດທ່າທາງຄົມສິນ | ຕື່ມເຖິງຖະແຫຼງຖ້ອຍ |
| ຮອຍເປັນຖັນແຖວຖ້ານ | ກະວີຂານໄຂຂ່າວ |
| ແຍ້ມຍ້າວຄົມສາດຊ້ອນ | ສະອອນແກ້ວກາບກອນ |
| ມີບ່ອນໄຂບ່ອນອໍ່າ | ອຳເຖື່ອນເຟືອນຂົມ |
| ເປັນຄຳຄົມເຄັມປັກ | ສຽບຊອນລາຍໄວ້ |
| ໃຜຜູ້ປັນຍາສ້ຽມ | ຈິ່ງທຽມທັນແທງຊອດ |
| ສອດຊ່ອງຊີຊອກນັ້ນ | ເຫັນສິ້ນສ່ອນຄົມ |
| ສົມຊື່ຄົມບໍ່ຫຸ້ຍ | ລົ້ຳລື່ນດວງຕາວ |
| ເບິ່ງເຂົ້າໄປໃນໆ | ແກ່ນໃຈຈຳນີ້ |
| ມີຫຼາຍຄົມຄຳເຂັ້ມ | ລີງລາຍອາດທ່າ |
| ຄົມປັນຍາຮອບຮູ້ | ທັງຄົມຊັ້ນສາດຕະສິນ ເຈົ້າເຮີຍ. |

## ບົດຕົວຢ່າງ

## ບົດວິໄຈບົດກອນ "ແມ່"

### 1. ທີ່ມາຂອງບົດກອນ

ບົດກອນ ແມ່ ໄດ້ຄັດປຶ້ມໂຮມກະວີຊື່ວ່າ "ໂທດແຫ່ງກາເມ" ໂດຍ "ຊາຍດອນໃຕ້" ທີ່ມີຊື່ຈິງວ່າ "ບຸນເຕີມ ສີບຸນ ເຮືອງ" ( ພິມທີ່ສຳນັກພິມວັນນະສິນ ປີ 2004 ໜ້າທີ 42 ) ທັງໝົດມີ 6 ບາດ.

### 2. ເນື້ອໃນລວມ

ເວົ້າເຖິງ ບຸນຄຸນຂອງແມ່ທີ່ມີຕໍ່ລູກມັນຊ່າງມາກລົ້ນເຫຼືອຫຼາຍຈົນຫາອັນປຽບບໍ່ໄດ້, ຄວາມທຸກອຸກອັ່ງຄັ່ງແຄນໃນຫົວໃຈ ແລະ ທຸກກາຍເພື່ອຍອມເສຍສະຫຼະທຸກສິ່ງທຸກຢ່າງໃຫ້ເພື່ອລູກ, ສັດທີ່ມີຈິດໃຈຮັກລູກຍອມສະຫຼະຊີວິດເພື່ອປົກປ້ອງລູກ. ສະນັ້ນ, ຄຳວ່າແມ່ນີ້ບໍ່ສະເພາະຄົນເທົ່ານັ້ນທີ່ໃຊ້ສັດກໍ່ໃຊ້ຄືກັນ. ສະນັ້ນ, ເຮົາບໍ່ຄວນທຳລາຍແນວຄິດຈິດໃຈ ຫຼື ຂ້າພໍ່ຕີແມ່ເດັດຂາດເພາະຈະເຮັດໃຫ້ບາບນັ້ນຕິດຕົວເຮົາໄປຈົນຕະຫຼອດຊີວິດ.

### 3. ການແບ່ງຕອນ

ກອນບົດນີ້ໄດ້ແບ່ງອອກເປັນ 3 ຕອນຄື:

**+ຕອນທີ 1** ແຕ່ບາດທີ1 → ບາດທີ 2

ເນື້ອໃນ ເວົ້າເຖິງບຸນຄຸນຂອງແມ່ທີ່ມີຕໍ່ລູກມັນຊ່າງມາກລົ້ນເຫຼືອຫຼາຍເຊິ່ງຫາອັນປຽບບໍ່ໄດ້.

**+ຕອນທີ 2** ບາດທີ 3

ເນື້ອໃນ ເວົ້າເຖິງຄວາມທຸກໃຈ ແລະ ທຸກກາຍທີ່ແມ່ຍອມເສຍສະຫຼະໃຫ້ລູກ.

**+ຕອນທີ 3** ແຕ່ບາດທີ 4 ບາດທີ 6

ເນື້ອໃນ ເວົ້າເຖິງສັດທີ່ມີຈິດໃຈຮັກລູກຍອມເສຍສະຫຼະຊີວິດເພື່ອປົກປ້ອງລູກຄຳວ່າ ແມ່ ນີ້ບໍ່ສະເພາະຄົນເທົ່ານັ້ນທີ່ໃຊ້ສັດກໍໃຊ້ຄືກັນ. ດັ່ງນັ້ນ, ເຮົາບໍ່ຄວນຂ້ຳພໍ່ຕີແມ່ເດັດຂາດເພາະຈະເຮັດໃຫ້ເຮົາ ມີບາບຕິດຕົວໄປຕະຫຼອດຊີວິດ.

## 4. ວິເຄາະ

ແມ່ຄືຜູ້ໃຫ້ກຳເນີດເກີດເຮົາມາສອນໃຫ້ຮູ້ທຸກສິ່ງທຸກຢ່າງສອນແຕ່ສິ່ງດີໆໃຫ້ລູກ, ປ້ອນເຂົ້າປ້ອນນົມ, ສອນໃຫ້ຍ່າງ ບຸນຄຸນຂອງແມ່ນີ້ມັນຊ່າງງົດງາມ, ຍິ່ງໃຫຍ່, ກວ້າງຂວາງຫາອັນມາປຽບກໍບໍ່ໄດ້ເພາະແມ່ຍັງເປັນຫຼັກເປັນແຫຼ່ງໃຫ້ລູກ ໃຫ້ພໍໃຫ້ຄອບຄົວເຮັດໜ້າທີ່ເປັນແມ່ເຮືອນທຸກສິ່ງທຸກຢ່າງບຸນຄຸນແມ່ນີ້ປະເສີດເລີດລ້ຳແມ່ນແຕ່ກອງທັບເຂົາກໍຍັງໃຊ້ ຄຳວ່າ "ແມ່ທັບ" ແມ່ນີ້ສະຫຼະໃຫ້ລູກ, ຍອມທົນ, ຍອມເຈັບເຖິງແມ່ນວ່າແມ່ຈະອຸກອັ່ງຂັງແຄ້ນໃນຫົວໃຈແມ່ກໍ່ຍັງຕ້ອງ ທົນເພື່ອລູກເພື່ອຄອບຄົວຍອມທຸກສິ່ງທຸກຢ່າງແມ່ທຳໄດ້ທຸກປະການດັ່ງກອນຂຽນວ່າ:

"ແມ່ຄືພະຜູ້ໃຫ້ ທຸກຢ່າງບໍ່ມີເຫຼືອ
ແມ່ມີອຸປະກາລະ ແຕ່ລູກຕົນທັງສິ້ນ
ຄວາມເຈັບເປັນແສນເສົ້າ ແມ່ຍອມຕົນເພື່ອລູກອ່ອນ
ຄວາມຫິວໂຫຍເມື່ອຍລ້າ ແມ່ທຳໄດ້ສູ່ປະການ

ຄຳວ່າ ແມ່ ນີ້ບໍ່ສະເພາະຄົນເທົ່ານັ້ນດອກທີ່ໃຊ້ສັດກໍ່ໃຊ້ຄືກັນຂະໜາດຄວາຍມັນເກີດລູກອອກມາມັນຍັງໃຫ້ລູກດູດນົມສອນໃຫ້ກິນຫຍ້າ, ລີງເອງຊີໄຕ່ງ່າໄມ້ໄປມັນຍັງເປ້ລູກ 2 ໂຕ 3 ໂຕ ແລະ ສັດອື່ນໆກໍ່ຍອມສະລະຊີວິດເພື່ອປົກປ້ອງລູກບໍ່ໃຫ້ສັດຮ້າຍມາທຳລາຍຫຼືມາກິນລູກຕົນເອງ.

ສະນັ້ນ, ຄວາມຮັກທີ່ແມ່ມີໃຫ້ລູກມັນຊ່າງງົດງາມກ່ວາສິ່ງໃດໆໃນໂລກນີ້ຖ້າເຮົາບໍ່ເກັບຮັກສາແຖມຍັງເຮັດໃຫ້ແມ່ທຸກໃຈ, ເຈັບຕົວເພາະລູກ, ລູກຜູ້ນັ້ນກໍ່ຈະມີບາບຕິຕົວໄປຕະຫຼອດຊີວິດ. ດັ່ງກອນຂຽນວ່າ:

"ໃຜຜູ້ປະໝາດມ້າງ ຄຸນແມ່ມານດາ
ກໍ່ຫາກເປັນປາປັງ ບາບເວນວຽນຕ້ອງ

## 5. ສະຫຼຸບ

### ກ. ດ້ານເນື້ອໃນ

"ແມ່" ເປັນເຄົ້າກຳເນີດຂອງຕະກຸນແມ່ເປັນຜູ້ໃຫ້ເຮົາເກີດມາແມ່ຄືທຸກສິ່ງທຸກຢ່າງໃນຄອບຄົວແມ່ຈະຍອມອົດທົນ,ເສຍສະຫຼະ, ປອບໃຈ, ຊ່ວຍເຫຼືອ, ສັ່ງສອນ, ຊີ້ນຳ ແລະ ບໍ່ສະເພາະຄົນເທົ່ານັ້ນທີ່ເອີ້ນວ່າ ແມ່ ສັດກໍ່ໃຊ້ຄືກັນ ສັດກໍ່ຮັກ ລູກຄືກັນ. ສະນັ້ນ, ບຸນຄຸນແມ່ມີກວ້າງຂວາງ ຍິ່ງໃຫຍ່ເອົາທະເລມະຫາສະໝຸດມາທຽບກໍ່ຄືງບໍ່ພໍດັ່ງນັ້ນຄົນເຮົາກໍ່ຄວນບໍ່ ເຮັດໃຫ້ແມ່ເສຍໃຈ, ບໍ່ຄວນຂ້ຳພໍ່ຕີແມ່ມັນຈະເຮັດໃຫ້ເຮົາມີບາບກໍ່ຕິດຕົວຕະຫຼອດໄປ. ດັ່ງບົດກອນຂຽນວ່າ:

ໃຜຜູ້ປະມາດມ້າງ ຄຸນແມ່ມານດາ
ກໍ່ຫາກເປັນປາປັງ ບາບເວນວຽນຕ້ອງ
ໃນຫຼັກທຳສອນຊີ້ ໃນທາງພຸດທະສາດ
ປະຕິບັດຖືກຕ້ອງ ພາຍໜ້າຊີຮຸ່ງເຮືອງ ແທ້ເນີ

### ຂ. ດ້ານສິລະປະການແຕ່ງ

ກອນບົດນີ້ຜູ້ແຕ່ງໄດ້ໃຊ້ສັບທຳມະດາສຳນວນສຸພາບເກາະກ່າຍກັນ, ອ່ານງ່າຍເຂົ້າໃຈງ່າຍ, ສາມາດດຶງດູດຈິດໃຈຜູ້ ອ່ານ ແລະ ຜູ້ຟັງ, ອ່ານແລ້ວເກີດມີຈິນຕະນາການ, ເປັນຄະຕິເຕືອນໃຈແກ່ຜູ້ອ່ານ.

## ບົດກອນ "ແມ່"

"ແມ່" ຄຳດຽວແຕ່ກວ້າງ ຍິ່ງໃຫຍ່ໄພສານ
ຍິ່ງກ່ວາວັງທະເລຫຼວງ ແຜ່ນດິນ ແລະ ບົນຟ້າ
ຈັກຊິຫາຫຍັງແຕ້ມ ພັນລະນາຄຸນທ່ານ
ໃຫ້ສົມຄຳຄ່າເຄົ້າ ຄຸນແກ້ວແມ່ເຮົາ ເຈົ້າເອີຍ

“ແມ່”ຄຳດຽວປະກອບກວ້າງ ໃຫ້ສົມຊື່ເປັນຫຼັກ
ຄືແມ່ເຫຼັກແມ່ຂາງ ແມ່ນະທີວັງນໍ້າ
ແມ່ທັບກອງນາຍໜ້າ ກໍ່ຍັງເອົາຊື່ແມ່
ຄຳວ່າແມ່ຈັ່ງແມ່ກວ້າງ ຄຳນີ້ປະເສີດສູງ
“ແມ” ຄືພະຜູ້ທີ່ໃຫ້ ທຸກຢ່າງບໍ່ມີເຫຼືອ
ຄວາມເຈັບເປັນແສນເສົ້າ ແມ່ຍອມຕົ້ນເພື່ອລູກອ່ອນ
ຄວາມຫິວໂຫຍເມື່ອຍລ້າ ແມ່ທຳໄດ້ຊຸ່ປະການ
ຄຳວ່າແມ່ໆນີ້ ບໍ່ມີແຕ່ແມ່ໃນຄົນ
ແມ່ນແຕ່ແນວນາມສັດ ກໍ່ແມ່ນມີສົມເວົ້າ
ເຮົາເຫັນຄວາຍກິນຫຍ້າ ລູກດູດນົມຂອງແມ່
ໂຕລີງເຕັ້ນງ່າໄມ້ ທາງທ້ອງລຸກບໍ່ວາງ
ປານົນເກີດລູກນ້ອຍ ຍັງເອົາປາກມັນອົມ
ປາຝາໄລຢູ່ລ່າຂອງ ແມ່ນະທີວັງກວ້າງ
ລູກຢູ່ດັ່ງຫວັງປົກປ້ອງ ຢ້ານສັດຕູກິນລູກ
ນີ້ຄືຄຸນທາດແທ້ ໃນຄຳເວົ້າວ່າແມ່ຈິງ

## ບົດຕົວຢ່າງ
## ວິໄຈບົດກອນ “ຮັກ ແລະ ຄິດເຖິງ”

### 1. ທີ່ມາຂອງບົດກອນ

ບົດກອນ "ຮັກແລະຄິດເຖິງ" ແມ່ນໄດ້ຄັດຈາກປຶ້ມຄົນບູຮານສະທ້ານຍຸກ ໂດຍ ທອງຫຼໍ່ ຄຸນສະຫວັດ ວິທະຍາໄລຄູ ຫຼວງພະບາງ 2007 ໜ້າທີ 6.

### 2. ເນື້ອໃນລວມ

ເວົ້າເຖິງ ຄວາມຄິດຮອດຄິດເຖິງເປັນຫວ່ງເປັນໃຍ,ພໍ່ແມ່ອາວອາລຸງຕາ ທີ່ຢູ່ທາງບ້ານເກີດເມືອງນອນ ແລະ ເວົ້າ ເຖິງກ່ຽວການສຶກສາຂອງຕົນເອງ, ທີ່ມີຄວາມສັບສົນວຸ້ນວາຍທີ່ຕ້ອງຕໍ່ສູ້ຜ່ານຜ່າອຸປະສັກໃຫ້ສຳເລັດ, ເພື່ອຫວັງຈະໄປ ສ້າງສາ,ພັດທະນາບ້ານເກີດເມືອງນອນຂອງຕົນ.

### 3. ແບ່ງຕອນ

ບົດກອນບົດນີ້ເປັນບົດກອນອາລົມຈິດ,ແຕ່ນັກແຕ່ງສາມາດຍົກເອົາຮູບພາບຂອງຄົນຂຶ້ນມາເປັນຈຸດປະສົງຫຼັກເພື່ອ ໃຫ້ບຸກຄົນອື່ນໆຮູ້ຈັກຄົ້ນຄິດພິຈາລະນາ, ຮູ້ຈິນຕະນາການໃນການອາດພາບໄດ້ດ້ວຍຕົນເອງ.

ໃນບົດກອນດັ່ງກ່າວໄດ້ແບ່ງອອກເປັນ 2 ຕອນຄື:

ຕອນທີ 1 ແມ່ນກວມເອົາບາດທີ 1 - 2

ມີເນື້ອໃນເວົ້າເຖິງ: ຄວາມຄິດຮອດຄິດເຖິງເປັນຫວ່ງເປັນໃຍພໍ່ແມ່ລຸງຕາອາວອາທີ່ຢູ່ທາງບ້ານມີຄວາມສຸກກາຍ ສະບາຍໃຈ ຫຼື ບໍ.

ຕອນທີ 2 ແມ່ນກວມເອົາບາດທີ 3 - 4

ມີເນື້ອເວົ້າເຖິງ:ກ່ຽວກັບການສຶກສາຮໍ່າຮຽນເຖິງວ່າຈະພົບກັບກັບຄວາມຫຍຸ້ງຍາກສັບສົນພຽງໃດກໍ່ຕາມໃຫ້ ອົດທົນສູ້ຊົນບາກບັ່ນໃຫ້ສຳເລັດ ເພື່ອຫວັງຈະມາສ້າງສາພັດທະນາບ້ານເກີດເມືອງນອນຂອງຕົງເອງໃຫ້ມີຄວາມຈະເລີນ ສີວິໄລ.

### 4. ການວິເຄາະ

**1. ຄວາມຄິດຮອດຄິດເຖິງຂອງຄົນທີ່ພັດພາກຈາກພໍ່ ແລະ ແມ່**

ທຸກໆຄົນກໍ່ອາດຈະເຂົ້າໃຈດີວ່າການທີ່ເຮົາຕ້ອງພັດພາກຈາກບ້ານເກີດເມືອງນອນ,ບ່ອນທີ່ເຄີຍຫຼິ້ນລ້ຽງເຕີບໃຫຍ່ ແລະ ຈາກພໍ່ແມ່, ລຸງຕາ, ອາວອາຄົນທີ່ເຄີຍລ້ຽງດູ,ເບິ່ງແຍງປ້ອນເຂົ້າປ້ອນອາຫານ. ຕັ້ງແຕ່ເມື່ອຄາວຍັງໜ້ອຍ

ແລະ ເບິ່ງແຍງຍາມເມື່ອເຮົາເຈັບເປັນເພິ່ນໄດ້ເບິ່ງແຍງ. ເມື່ອເຮົາຈາກເພິ່ນມາເພື່ອມາສຶກສາຮ່ຳຮຽນ,ຢູ່ໃນເມືອງໃຫຍ່ ມັນກໍ່ ຕ້ອງມີຄວາມຄິດຮອດຄິດເຖິງ,ຜູກພັນຫວ່ງໃຍພໍ່ ແລະ ແມ່, ລຸງຕາອາວອາຂອງຕົນ, ວ່າເພິ່ນເປັນແນວໃດ ສະບາຍດີບໍ່ຢູ່ກິນແນວໃດ. ດັ່ງບົດກອນຂຽນເອົາໄວ້ວ່າ:

| | |
|---|---|
| ຫຼາຍຄືນລູກນັ່ງນຶ້ງ | ຄະນຶງຄ່ຳຄວນຫາ |
| ເຖິງບິດາມານດາ | ພໍ່ອາວອາບ້າ |

ຍ້ອນວ່າເຮົາຈາກບ້ານເກີດເມືອງນອນ, ບ່ອນທີ່ເຄີຍໄດ້ຢູ່ອາໄສຈາກມາ, ເພື່ອສຶກສາຮ່ຳຮຽນຈຶ່ງມີແນວຄວາມຄິດຮອດຄິດເຖິງ, ພໍ່ແມ່ລຸງຕາ, ອາວອາຫຼາຍ, ຈົນທຸກຄ່ຳຄືນລູກນັ່ງນຶ່ງຈິດໃຈຄິດຫາແຕ່ນຳພວກເພິ່ນທີ່ຕອນຍາມລ້ຽງດູ ເບິ່ງແຍງຍ້ອນຄວາມຜູກພັນກັນມາແຕ່ຄາວຍາມນ້ອຍ. ດັ່ງບົດກອນຂຽນເອົາໄວ້ວ່າ:

| | |
|---|---|
| ຄິດຮອດຊຸມພວກນຳ | ທັງຍາຍແລະຍາ |
| ຜູ້ເພິ່ນຊຸບຫູ່ລ້ຽງ | ໃຫ້ເຮົາໄດ້ໃຫຍ່ມາ ນັ້ນນາ |

**2. ການສຶກສາຮ່ຳຮຽນພົບກັບຄວາມຫຍຸ້ງຍາກ**

ການສຶກສາຮ່ຳຮຽນ, ບໍ່ວ່າຈະຢູ່ໃສກໍ່ລ້ວນແລ້ວແຕ່, ມີຄວາມຫຍຸ້ງຍາກສັບສົນ, ຖ້າຄົນເຮົາບໍ່ຮູ້ຈັກຕໍ່ສູ້ຜ່ານຜ່າ,ອົດທົນພະຍາຍາມຊອກຫາຄົ້ນຄິດມັນກໍ່ຈະບໍ່ພົບກັບທາງອອກທີ່ແທ້ຈິງ. ເພາະວ່າຄົນເຮົາທຸກຄົນກໍ່ຕ້ອງຊອກຮູ້ຫາຂໍ້ມູນອັນໃໝ່ໆຢູ່ສະເໝີບໍ່ແມ່ນວ່າຢູ່ຫຼ້າໆເຮົາຫາກຈະຮູ້ທຸກສິ່ງທຸກຢ່າງ. ຢູ່ບົນໂລກນີ້ທຸກສິ່ງທຸກຢ່າງທີ່ໃດມາລ້ວນແລ້ວແຕ່ໄດ້ດີ້ນຮົນຊອກຫາຈຶ່ງຈະຮັບຮູ້ໄດ້ດ້ວຍຕົນເອງ. ຖ້າຫາກເຮົາຍັງຢືນຢູ່ກັບທີ່ຕະຫຼອດເວລາກໍ່ຈະບໍ່ສາມາດຮັບຮູ້ຄວາມ ເຄື່ອນໄຫວຂອງສັງຄົມ ແລະ ຄົນຜູ້ນັ້ນກໍ່ຈະບໍ່ພັດທະນາຕົນເອງ. ດັ່ງຄຳເວົ້າຕອນໜຶ່ງກ່າວເອົາໄວ້ວ່າ:

| | |
|---|---|
| ຄັນບໍ່ອອກຈາກບ້ານ | ບໍ່ເຫັນດ່ານແດນໄກ |
| ຄັນບໍ່ໄປຫາຮຽນ | ບໍ່ຫ່ອນມີຄວາມຮູ້ |

ຍ້ອນແນວນັ້ນ, ເພິ່ນຈຶ່ງເວົ້າວ່າຄົນເຮົາຖ້າຢູ່ແຕ່ບ້ານຫຼືຢູ່ບ່ອນເກົ່າ, ກໍ່ຈະບໍ່ຮູ້ວ່າບ້ານອື່ນເມືອງອື່ນເພິ່ນເປັນແນວໃດ. ຖ້າເຮົາອອກຈາກບ້ານໄປກໍ່ຈະເຫັນແຕ່ສິ່ງໃໝ່ໆ. ດັ່ງນັ້ນ, ຄົນເຮົາຈຶ່ງຕ້ອງຊອກຮູ້ຮ່ຳຮຽນຈາກອັນເກົ່າໄປຫາສິ່ງໃໝ່ໆຢູ່ສະເໝີ. ເຖິງວ່າພົບຄວາມຫຍຸ້ງຍາກກໍ່ຕ້ອງສູ້ຊົນ. ດັ່ງຄຳກອນຂຽນເອົາໄວ້ວ່າ:

| | |
|---|---|
| ສ່ວນວ່າການຮຽນນັ້ນ | ຍັງເດີນດີບໍ່ເບື່ອໜ່າຍ |
| ເຖິງຫຍຸ້ງຍາກລູກກໍ່ຄິດຕັ້ງຕໍ່ | ເດີນໃຫ້ຮອດຈຸດໝາຍ ພຸ້ນແລ້ວ. |

ຍ້ອນແນວນີ້ເຮົາຄວນໝັ່ນສຶກສາຮ່ຳຮຽນອົດທົນພະຍາຍາມຕໍ່ສູ້ກັບບັນຫາເຖິງວ່າຈະມີຄວາມຫຍຸ້ງຍາກສັບສົນກໍ່ຕາມໃຫ້ອົດທົນຕໍ່ສູ້ຈົນສຳເລັດໜ້າທີ່ການງານ.

## 4. ດ້ານສະຫຼຸບ

### ກ. ດ້ານເນື້ອໃນ

ບົດກອນ "ຮັກ ແລະ ຄິດ" ເຖິງມີເນື້ອໃນເວົ້າເຖິງຄວາມຄິດຮອດຄິດເຖິງພໍ່ ແລະ ແມ່, ອາວອາ ທີ່ເຄີຍໄດ້ຊຸບລ້ຽງຕົນມາແຕ່ຄາວຍັງນ້ອຍ ແລະ ເວົ້າເຖິງການສຶກສາຮ່ຳຮຽນທີ່ພົບກັບຄວາມສັບສົນທີ່ຕ້ອງຜ່ານຜ່າໃຫ້ສຳເລັດເພື່ອຫວັງໄປສ້າງສາພັດທະນາບ້ານເກີດເມືອງນອນໃຫ້ມີຄວາມສີວິໄລ.

### ຂ. ດ້ານສິລະປະການແຕ່ງ

ຜູ້ແຕ່ງໄດ້ໃຊ້ສັບພາສາທີ່ສຸພາບອ່ອນໂຍນ, ມີສຳນວນໂວຫານທີ່ນິ້ມນວນ, ອອນຊ້ອຍອ່ານແລ້ວເຮັດໃຫ້ເຂົ້າໃຈງ່າຍ, ມີອາລົມຈິດສູງ.

## ບົດກອນ “ຮັກ ແລະ ຄິດເຖິງ”

| | |
|---|---|
| ຫຼາຍຄືນລູກນັ່ງນຶ່ງ | ຄະນຶງຄ່ຳຄວນຫາ |
| ເຖິງບິດາມານດາ | ພໍ່ອາວອາປ້າ |
| ຄິດຮອດຊຸມພວກໜ້າ | ທັງຢາຍ ແລະ ຍາ |
| ຜູ້ເພິ່ນຊຸບຫູ່ລ້ຽງ | ໃຫ້ເຮົາໄດ້ໃຫຍ່ມາ ນັ້ນນາ |
| ເປັນສັນໃດພວກປ່າ | ພໍ່ແມ່ມານດາ |

ຍັງຄອຍສຸກສຳລານ
ພ້ອມພໍ່າພຽງຮຽງໜ້າ
ສ້າງຊີວິດໃຫ້ແກ່ນກຳ
ສ່ວນວ່າລູກຢູ່ພີ້
ບໍ່ໄດ້ມີໂພຍໄພ
ສ່ວນວ່າການຮຽນນັ້ນ
ເຖິງຫຍຸ້ງຍາກລູກກໍຄິດຕໍ່ຕັ້ງ
ພໍເມື່ອສຳເລັດແລ້ວ
ລູກຈະກັບຄືນມາ
ມາເພື່ອພັດທະນາສ້າງ
ໃຫ້ຈະເລີນຮຸ່ງແຈ້ງ

ອາຫານຊານກ້າ
ສ້າງຕົວໃຫ້ມີຄ່າ
ສືມແມ້ງປາຖະໜາ ຢູ່ບໍ
ຍັງຄ່ອຍສຸກສະບາຍ
ບຽດບຽນທຳຮ້າຍ
ຍັງເດີນດີບໍ່ເບື່ອໜ່າຍ
ເດີນໃຫ້ຮອດຈຸດໝາຍ ພຸ້ນແລ້ວ
ໜ້າທີ່ການສຶກສາ
ຢູ່ນຳອາວອາປ້າ
ດິນແດນບ້ານປ່າ
ລືເທົ່າທົ່ວປະຊາ.

## ບົດຕົວຢ່າງ
## ວິໄຈບົດກອນ "ຄົນຮຸ່ນໃໝ່"

### 1. ທີ່ມາຂອງບົດກອນ

ບົດກອນ "ຄົນຮຸ່ນໃໝ່" ໄດ້ຄັດມາຈາກປຶ້ມວິທີແຕ່ງ ກາບ, ກອນ, ເພງ ແບບງ່າຍ ສຳລັບເຍົາວະຊົນໄວໜຸ່ມ ແລະ ຜູ້ໃຫຍ່ ຂຽນໂດຍ ດາວວຽງ ບຸດນາໂຄ ຮຽບຮຽງໂດຍ ພັນນາລີ ເທບພະວົງສາ( ພິມປີ 2007: ໜ້າທີ 9-10 )

### 2. ເນື້ອໃນລວມ

ບົດກອນ ຄົນຮຸ່ນໃໝ່ ແມ່ນມີເນື້ອໃນເວົ້າເຖິງຄົນລາວຍຸກໃໝ່ ເຊິ່ງພັກ ແລະ ລັດຖະບານກໍ່ໄດ້ເອົາໃຈໃສ່ບົນຈິດໃຈຄວາມສະເໝີພາບ ຍົກໃຫ້ເຮົາເຫັນເຖິງບົດບາດຂອງຍິງ-ຊາຍໃນຍຸກປັດຈຸບັນ ເຊິ່ງຍິງຍຸກໃໝ່ນີ້ກໍສາມາດຢືນຄຽງຄູ່ທຽບທັນກັບເພດຊາຍໄດ້ ສາມາດເປັນຮອດເຈົ້າຮອດນາຍ ແລະ ເຮັດວຽກນ້ອຍວຽກໃຫຍ່ໄດ້ເໝືອນກັນໂດຍບໍ່ຈຳແນກວຽກໜັກເບົາ.

### 3. ການແບ່ງຕອນ

ບົດກອນບົດນີ້ ຜູ້ແຕ່ງໄດ້ຍົກໃຫ້ເຮົາເຫັນເຖິງ ບົດບາດຄວາມສຳຄັນຂອງຍິງລາວໃນສັງຄົມຍຸກໃໝ່ ແລະ ຄວາມເອົາໃຈໃສ່ຂອງພັກປະຊາຊົນລາວເຮົາ ເຊິ່ງໄດ້ຍົກໃຫ້ເຮົາເຫັນເຖິງຄຸນຄ່າຂອງສິດທິຍິງ-ຊາຍໃນຍຸກປັດຈຸບັນ. ບົດ ກອນ ຄົນຮຸ່ນໃໝ່" ບົດນີ້ ໄດ້ແບ່ງອອກເປັນ 2 ຕອນຄື:

ຕອນທີ 1 ແມ່ນນອນໃນບາດທີ 1

ເນື້ອໃນ ຕອນນີ້ເວົ້າເຖິງ ສັງຄົມໃນຍຸກໃໝ່ທີ່ເອົາໃຈໃສ່ສິດທິຂອງແມ່ຍິງ ເຊິ່ງພັກ-ລັດຖະຍານກໍໄດ້ຍົກໃຫ້ເຮົາ ເຫັນເຖິງຄຸນຄ່າ ແລະ ຄວາມສຳຄັນຂອງແມ່ຍິງລາວໃນຍຸກໃໝ່. ສະນັ້ນ, ພັກ-ລັດຖະບານຈຶ່ງໄດ້ເອົາໃຈໃສ່ສິດທິຂອງ ຍິງ-ຊາຍ.

ຕອນທີ 2 ແມ່ນນອນໃນບາດທີ 2 – 4

ເນື້ອໃນ ຕອນນີ້ເວົ້າເຖິງ ຄວາມສະເໝີພາບລະຫວ່າງຍິງ-ຊາຍ ເຊິ່ງຜູ້ແຕ່ງໄດ້ຍົກໃຫ້ເຮົາເຫັນເຖິງຍິງລາວໃນຍຸກໃໝ່ ຖ້າທຽບໃສ່ກັບອ້າຍນ້ອງຊາຍແລ້ວບໍ່ວ່າວຽກງານໃດຈະນ້ອຍ ຫຼື ໃຫຍ່ແມ່ຍິງລາວເຮົາກໍສາມາດຜ່ານຜ່າມາໄດ້ແລະ ຢືນຄຽງຄູ່ກັບເພດຊາຍມາຈົນເປັນຮອດເຈົ້າຮອດນາຍໄດ້.

### 4. ວິເຄາະ

#### 1. ສັງຄົມໃນຍຸກໃໝ່ເອົາໃຈໃສ່ສິດທິຂອງແມ່ຍິງ

ໃນສະໄໝສັງຄົມລາວຍຸກປັດຈຸບັນນີ້ ໄດ້ຍົກໃຫ້ເຮົາເຫັນຢ່າງແຈ່ມແຈ້ງວ່າ ແມ່ຍິງລາວເຮົາໃນຍຸກນີ້ບໍ່ວ່າຈະ ພົບຄວາມຫຍຸ້ງຍາກລຳບາກສໍ່າໃດ ກໍຍັງຢືນຄຽງຄູ່ກັບເພດຊາຍເຮົາຢ່າງບໍ່ທໍ້ຖອຍ ສູ້ຊົນເອົາໃຈໃສ່ເຮັດໜ້າທີ່ຂອງຕົນ ຈົນປາກົດຜົນເປັນຈິງ ສາມາດນຳພາປະຊາຊົນເອື້ອຍນ້ອງເຮົາອອກແຮງແຂ່ງຂັນ ເພື່ອສ້າງສາປະເທດຊາດ ແລະ ສ້າງສາ ອານາຄົດຂອງຕົນຢ່າງບໍ່ຢ້ານກົວ ຈົນເຮັດໃຫ້ພັກ-ລັດຖະບານເຮົາເຫັນຄວາມສຳຄັນຂອງແມ່ຍິງໃນຍຸກ

ປັດຈຸບັນ. ດັ່ງນັ້ນ ພັກ-ລັດເຮົາຈຶ່ງໄດ້ເອົາໃຈໃສ່ສິດທິຂອງແມ່ຍິງ ແລະ ຍົກບົດບາດຂອງແມ່ຍິງລາວໃຫ້ທຽບທັນກັບເພດຊາຍ. ດັ່ງບົດ ກອນຕອນໜຶ່ງວ່າ:

| | |
|---|---|
| ໃນສະໄໝ | ສັງຄົມຍຸກໃໝ່ |
| ເອົາໃຈໃສ່ | ສິດທິຂອງຍິງ |
| ພັກແລຫຼີງ | ແນມເຫັນຄຸນຄ່າ |
| ພັກບອກວ່າ | ສິດທິຍິງຊາຍ |

**2. ຄວາມສະເໝີພາບລະຫວ່າງຍິງ-ຊາຍ**

ປັດຈຸບັນນີ້ ໄດ້ຍົກໃຫ້ເຮົາເຫັນແລ້ວວ່າ ບົນຈິດໃຈຂອງແຕ່ລະຄົນຢູ່ໃນສັງຄົມລາວ ແມ່ນມີຄວາມສະເໝີພາບ ລະຫວ່າງຍິງ-ຊາຍ ຍ້ອນວ່າແມ່ຍິງລາວເຮົາໃນຍຸກໃໝ່ນີ້ໄດ້ເຮັດໃຫ້ເຮົາເຫັນວ່າວຽກງານອັນໃດຈະຫຍຸ້ງຍາກສັບສົນວົນ ວາຍປານໃດເຮົາກໍສາມາດເຮັດໄດ້ ແລະ ຜ່ານຜ່າມັນມາໄດ້ເໝືອນກັນກັບເພດຊາຍ ບໍ່ວ່າຈະເປັນທະຫານຕໍາຫຼວດຍິງ ລາວຍຸກໃໝ່ກໍສາມາດເປັນໄດ້ ສາມາດປ້ອງກັນຄວາມສະຫງົບປົກປ້ອງປະເທດຊາດໄດ້ເໝືອນກັນກັບເພດຊາຍເຖິງວ່າ ຈະໄປເປັນຄູ ແມ່ຍິງລາວເຮົາກໍສາມາດສິດສອນຄວາມຮູ້ໃຫ້ກັບນັກຮຽນ-ນັກສຶກສາໄດ້ເໝືອນກັນ ຖ້າເປັນແພດມີຄົນເຈັບມາ ກໍສາມາດປິ່ນປົວໄດ້ຄືກັນ ບໍ່ຕ່າງຫຍັງກັບເພດຊາຍ ເຮັດໄຮ່ເຮັດນາເຮົາກໍເຮັດໄດ້ບໍ່ເຄີຍຈະທັນຫຼັງໜີ້ ເຖິງວ່າຈະເຮັດ ວຽກໜັກ ຫຼັງສູ້ຟ້າໜ້າສູ້ດິນ ຕ້ອງຕາກແດດ ຕ້ອງແຊ່ງຝົນ ກໍບໍ່ເຄີຍຖອຍ ເອື້ອຍນ້ອງຍິງເຮົາກໍ່ພາກັນອອກແຮງແຂງ ຂັນຈົນປາກົດຜົນເປັນຈິງ ແລະ ສໍາເລັດ ເຖິງວ່າວຽກຈະໜັກໜາສາຫັດ ວຽກນ້ອຍວຽກໃຫຍ່ ຍິງລາວຍຸກໃໝ່ກໍມີນໍ້າ ໃຈຕໍ່ສູ້ຄຽງຄູ່ກັບເພດຊາຍເຮົາມາໂດຍຕະຫຼອດ. ດັ່ງບົດກອນຕອນນີ້ວ່າ:

| | |
|---|---|
| ວຽກອັນໃດ | ວຽກນ້ອຍວຽກໃຫຍ່ |
| ຍິງຍຸກໃໝ່ | ເຮັດໄດ້ເໝືອນກັນ |
| ນາງນາງແພດ | ນາຍທະຫານ |
| ສູ້ຝົນແດດ | ເຮັດໄຮ່ທໍານາ |

ນີ້ມັນໄດ້ຍົກໃຫ້ເຮົາເຫັນເຖິງບົດບາດຄວາມສໍາຄັນຂອງແມ່ຍິງລາວໃນຍຸກປັດຈຸບັນ ບໍ່ວ່າຈະມີວຽກງານໃດເຂົ້າ ມາ ແມ່ຍິງເຮົາກໍອອກໜ້າອາສາກ່ອນໝູ່ ຢືນຄຽງຄູ່ກັບເພດຊາຍ ບໍ່ວ່າຈະເປັນເຈົ້າເປັນນາຍ ແມ່ຍິງລາວກໍສາມາດເປັນ ໄດ້ ສາມາດນໍາພາປະເທດຊາດກ້າວຂຶ້ນສູ່ຄວາມຈະເລີນໃນຕໍ່ໜ້າໄດ້ ຍິງຍຸກໃໝ່ນີ້ສູ້ຊົນໃຫ້ໄດ້ຂຶ້ນເປັນໃຫຍ່ ຍິງຍຸກໃໝ່ ມີຄວາມເກັ່ງກ້າສາມາດ. ດັ່ງບົດກອນຕອນນີ້ວ່າ:

| | |
|---|---|
| ຍິງອາສາ | ອອກໜ້າກ່ອນໝູ່ |
| ຢືນຄຽງຄູ່ | ທຽບທັນເພດຊາຍ |
| ຍິງລາວສຸມໃສ່ | ເປັນຮອດນາຍ |
| ຍິງຍຸກໃໝ່ | ເກັ່ງແທ້ອີຫຼີ |

## 5. ສະຫຼຸບ

**1. ດ້ານເນື້ອໃນ**

ບົດກອນ "ຄົນຮຸ່ນໃໝ່"ແມ່ນເວົ້າເຖິງຄົນລາວຍຸກໃໝ່ ເຊິ່ງພັກ ແລະ ລັດກໍໄດ້ເອົາໃຈໃສ່ ບົນຈິດໃຈຄວາມສະ ເໝີພາບ ຍົກໃຫ້ເຮົາເຫັນເຖິງບົດບາດຂອງຍິງ-ຊາຍໃນຍຸກປັດຈຸບັນ ເຊິ່ງຍິງຍຸກໃໝ່ນີ້ກໍສາມາດຢືນຄຽງຄູ່ທຽບທັນກັບ ເພດຊາຍໄດ້ ສາມາດເປັນຮອດເຈົ້າຮອດນາຍ ແລະ ເຮັດວຽກນ້ອຍວຽກໃຫຍ່ໄດ້ເໝືອນກັນ ໂດຍບໍ່ຈໍາແນກວຽກໜັ ກວຽກເບົາ. ນອກນີ້ຜູ້ແຕ່ງຍັງໄດ້ຍົກໃຫ້ເຮົາເຫັນອີກວ່າ ຍິງລາວຍຸກໃໝ່ນີ້ສູ້ຊົນເພື່ອຍົກບົດບາດຄວາມສໍາຄັນຂອງ ແມ່ຍິງລາວຂຶ້ນສູງ ແລະ ເພື່ອກ້າວເຂົ້າສູ່ການເປັນຜູ້ນໍາໃນຕໍ່ໜ້າ.

2. ດ້ານສິລະປະການແຕ່ງ

ບົດກອນບົດນີ້ ຜູ້ແຕ່ງໄດ້ໃຊ້ສັບພາສາທີ່ເຂົ້າໃຈງ່າຍຖືກຕ້ອງຕາມຫຼັກໄວຍາກອນ ຜູ້ແຕ່ງໄດ້ແຕ່ງຕາມໂຄງສ້າງ ກົກ 3 ປາຍ 4. ໃນນີ້ຜູ້ແຕ່ງຍັງໄດ້ຍົກໃຫ້ຜູ້ອ່ານເຫັນເຖິງບົດບາດຄວາມສໍາຄັນຂອງຍິງລາວໃນຍຸກປັດຈຸບັນ ແລະ ຄວາມສໍາພັນລະຫວ່າງບົດບາດຍິງ-ຊາຍ.

# ບົດຕົວຢ່າງ

## ວິໄຈບົດກອນ "ຄົນຮຸ່ນໃໝ່" ໂດຍ ດາວວຽງ ບຸດນາໂຄ

ໃນສະໄໝ ສັງຄົມຍຸກໃໝ່
ເອົາໃຈໃສ່ ສິດທິຂອງຍິງ
ພັກແລຫຼິງ ແນມເຫັນຄຸນຄ່າ
ພັກບອກວ່າ ສິດທິຍິງຊາຍ
ບົນຈິດໃຈ ຄວາມສະເໝີພາບ
ຮຽນໃຫ້ຊາບ ບົດບາດຊາຍຍິງ
ຄວາມເປັນຈິງ ຍິງລາວຍຸກໃໝ່
ຖ້າທຽບໃສ່ ທຽມພວກຜູ້ຊາຍ
ວຽກອັນໃດ ວຽກນ້ອຍວຽກໃຫຍ່
ຍິງຍຸກໃໝ່ ເຮັດໄດ້ເໝືອນກັນ
ນາຍທະຫານ ນາງຄຸນາງແພດ
ສູ້ຝົນແດດ ເຮັດໄຮ່ທຳນາ
ຍິງອາສາ ອອກໜ້າກ່ອນໝູ່
ຢືນຄຽງຄູ່ ທຽບທັນເພດຊາຍ
ເປັນຮອດນາຍ ຍິງລາວສຸມໃສ່
ຍິງຍຸກໃໝ່ ເກັ່ງແທ້ອີ່ຫຼີ

# ບົດຕົວຢ່າງ
# ວິໄຈບົດກອນ ຮັກຊາດຕ້ອງໃຊ້ເງິນກີບ”

## 1. ທີ່ມາຂອງບົດກອນ



ບົດກອນ “ ຮັກຊາດຕ້ອງໃຊ້ເງິນກີບ” ໄດ້ຄັດມາຈາກປຶ້ມ ແບບຮຽນ ພາສາລາວ ຊັ້ນມັດທະຍົມສຶກສາ ປີທີ 1 ເຊິ່ງຮຽບຮຽງໂດຍ ນາງ ສົມເໜາະ ປັນຍາວົງ ແລະ ທ່ານ ສີພອນ ສຸມັນທາ; ແຕ່ງໂດຍ ສົມໃຈ ຈັນທະວົງ ( ພິມປີ 2010; ໜ້າທີ 50 )

## 2. ເນື້ອໃນລວມ

ບົດກອນ ຮັກຊາດຕ້ອງໃຊ້ເງິນກີບ ແມ່ນເວົ້າເຖິງເງິນກີບ ເຊິ່ງເປັນເງິນປະຈຳຊາດຂອງຊາດລາວເຮົາ ທີ່ໃຊ້ສຳລັບແລກປ່ຽນສິນຄ້າ ແລະ ວັດຖຸສິ່ງຂອງປະເພດຕ່າງໆ. ເຮົາເປັນຄົນລາວບໍ່ຄວນໄປຍ້ອງຍໍເງິນຂອງຊາດອື່ນ ແລະ ບໍ່ ຄວນໄປຍົກສູງເງິນຂອງພວກເຂົາ ເພາະມັນຈະເຮັດໃຫ້ເສດຖະກິດຂອງປະເທດເຮົາຕົກຕໍ່າ ເຮົາເປັນຄົນລາວຕ້ອງພ້ອມ ກັນປົກປັກຮັກສາ ຢູ່ເມືອງລາວຕ້ອງໃຊ້ເງິນກີບຂອງເຮົາໄວ້ ໃຫ້ຍືນຍົງຄົງຕົວຢູ່ຄູ່ກັບຄົນລາວຕະຫຼອດໄປ.

## 3. ການແບ່ງຕອນ

ບົດກອນບົດນີ້ຜູ້ແຕ່ງຢາກສຶກສາແນວຄິດ ແລະ ຄຸນສົມບັດຂອງຄົນລາວເຮົາ ເຊິ່ງຜູ້ແຕ່ງໄດ້ຍົກເອົາເງິນກີບຂຶ້ນມາ ເວົ້າ ເພື່ອໃຫ້ຄົນລາວເຮົາໄດ້ຮູ້ວ່າ “ເງິນກີບ" ເປັນເງິນປະຈຳຊາດ ແລະ ມີຄວາມສຳຄັນຕໍ່ຊາດຂອງລາວເຮົາ. ບົດກອນ" ຮັກຊາດຕ້ອງໃຊ້ເງິນກີບ ” ບົດນີ້ ໄດ້ແບ່ງອອກເປັນ 2 ຕອນຄື:

ຕອນທີ 1 ແມ່ນນອນໃນບາດທີ 1 - 3

ເນື້ອໃນ ຕອນນີ້ເວົ້າເຖິງ ຄົນລາວເຮົາບໍ່ຄວນໄປຍ້ອງຍໍເງິນຂອງຊາດອື່ນ ແລະ ບໍ່ຄວນໄປຍົກສູງເງິນຂອງພວກເຂົາ ເພາະມັນຈະເຮັດໃຫ້ເສດຖະກິດຂອງປະເທດເຮົານັ້ນຕົກຕໍ່າ.

ຕອນທີ 2 ແມ່ນນອນໃນບາດທີ 4

ເນື້ອໃນ ຕອນນີ້ເວົ້າເຖິງ ພວກເຮົາເປັນຄົນລາວຕ້ອງພ້ອມກັນປົກປັກຮັກສາເງິນກີບຂອງຕົນ ຢູ່ເມືອງລາວຕ້ອງ ໃຊ້ເງິນກີບຂອງເຮົາໄວ້ໃຫ້ຍືນຍົງຄົງຕົວຢູ່ຄູ່ກັບຄົນລາວເຮົາຕະຫຼອດໄປ.

## 4. ວິເຄາະ

**1. ເຮົາເປັນຄົນລາວບໍ່ຄວນໄປຍ້ອງຍໍເງິນຂອງຊາດອື່ນ**

ໃນເມື່ອເຮົາເກີດເປັນຄົນລາວ ເຮົາຕ້ອງຮັກເຊື້ອຊາດບ້ານເກີດເມືອງນອນຂອງຕົນ ພູມໃຈໃນສິ່ງທີ່ຕົນເອງມີ ສາມັກຄີກັນຊົມໃຊ້ໃນສິ່ງທີ່ຕົນເອງຜະລິດ ເງິນກໍ່ເຊັ່ນດຽວກັນ ເງິນກີບເປັນເງິນປະຈຳຊາດລາວຂອງພວກເຮົາ ສະນັ້ນ ເຮົາເປັນຄົນລາວຕ້ອງພາກັນນຳໃຊ້ເງິນກີບຂອງລາວ ດັ່ງຄຳເວົ້າທີ່ວ່າ ລາວເຮັດ ລາວໃຊ້ ລາວໄດ້ ລາວຈະເລີນ ເຮົາຄວນ ຈະຍົກຍ້ອງສັນລະເສີນເງິນກີບຂອງລາວເຮົາ ບໍ່ແມ່ນໄປຍ້ອງຍໍເງິນຂອງຊາດອື່ນ ແລ່ນນຳແຕ່ເງິນຕາຕ່າງປະເທດຈົນເຮັດ ໃຫ້ເສດຖະກິດບ້ານເມືອງຕົກຕໍ່າດັ່ງບົດກອນຕອນນີ້ວ່າ:

| | |
|---|---|
| ຢ່າມົວເມົາຍົກຍ້ອງ | ຍໍຍື່ນເງິນເຂົ້າ ຫຼາຍເດີ |
| ຫາວ່າເງິນກີບເຮົາ | ຕໍ່າຄຸນມອງຂ້າມ |
| ນາມຊື່ຄົນລາວແທ້ | ເງິນລາວບໍ່ໂອ້ອ່າວ |
| ເສດຖະກິດບໍ່ຫ່ອນກ້າວ | ເມືອງບ້ານບໍ່ຮຸ່ງເຮືອງ |

ທັງທີ່ເຮົາເປັນຄົນລາວແທ້ໆ ຖ້າຫາກໄປຍ້ອງຍໍເງິນເຂົາຫຼາຍກວ່າເງິນກີບຂອງຕົນ ປະເທດຊາດ ແລະ ເສດຖະກິດຂອງບ້ານເມືອງ ກໍ່ບໍ່ຫ່ອນຈະຮຸ່ງເຮືອງ ແລະ ຈະເລີນກ້າວໜ້າໄດ້ ຖ້າເຮົາເພີດເພີນນຳແຕ່ເງິນເຂົ້າຫຼາຍ ແລ້ວເມີນເສີຍຕໍ່ເງິນລາວຂອງເຮົາ ກໍ່ມີແຕ່ຊິເຮັດໃຫ້ປະເທດຊາດຫຼົ້ມຈົມດັ່ງບົດກອນຕອນນີ້ວ່າ:

| | |
|---|---|
| ຈົ່ງໄດ້ຄິດຕໍ່ເຕື້ອງ | ໃນເລື່ອງຂອງເງິນ |
| ຢ່າເພີດເພີນເມີນເສີຍ | ນອນລະເມີມອງມຸ້ງ |
| ຢູ່ຊີງຊີມເຊື້ | ເງິນເຂົ້າຫຼົ່ງຫຼົ່ມ |
| ຊາດຊິຈົມຈຸ່ມໄໝ້ | ມຸດນ້ອຍມອດມົວ ແທ້ແລ້ວ! |

**2. ເຮົາເປັນຄົນລາວຕ້ອງຮັກສາມູນເຊື້ອ ແລະ ຊົມໃຊ້ເງິນກີບ**

ຕັ້ງແຕ່ໃດມາ ລາວເຮົາກໍເປັນອີກຊາດໜຶ່ງທີ່ມີສະກຸນເງິນເປັນຂອງຕົນເອງເຊິ່ງເອີ້ນວ່າ ເງິນ ກີບ. ເງິນກີບຂອງລາວເຮົາກໍມີຮູບຮ່າງໜ້າຕາ ແລະ ມູນຄ່າແຕກຕ່າງກັນອອກໄປ ນັບຕັ້ງແຕ່ໃນໄລຍະຕ່າງໆທີ່ຜ່ານມາຈົນເຖິງປັດຈຸບັນ. ໃນເມື່ອເຮົາເກີດເປັນຄົນລາວແລ້ວ ເຮົາຕ້ອງຮັກສາມູນເຊື້ອ ພາກັນສານສືບຕໍ່ນຳໃຊ້ເງິນກີບຂອງລາວໃຫ້ໝັ້ນແກ່ນຍາວ ນານຈົນຊົ່ວລູກຊົ່ວຫຼານ ຖ້າຫາກວ່າໃຜບັງອາດລືມສະກຸນເງິນຂອງປະເທດຕົນເອງ ກໍ່ບໍ່ຕ່າງຍັງກັບລືມເຊື້ອຊາດບ້ານເກີດເມືອງນອນຂອງຕົນ ດັ່ງບົດກອນຕອນນີ້ວ່າ:

| | |
|---|---|
| ພາກັນສານສືບໄວ້ | ເງິນກີບຂອງລາວ |
| ໝັ້ນແກ່ນຍາວຍືນເທິງ | ຊ່ວຍກັນຊົມໃຊ້ |
| ໃຜຫາກລືມໄລສິ້ນ | ສະກຸນເງິນຂອງຊາດ |
| ຖືວ່າບັງອາດເອື້ອມ | ລືມເຊື້ອເຜົ່າລາວ ແທ້ແລ້ວ! |

## 5. ສະຫຼຸບ

**1. ດ້ານເນື້ອໃນ**

ບົດກອນ " ຮັກຊາດຕ້ອງໃຊ້ເງິນກີບ " ເງິນກີບແມ່ນເງິນປະຈຳຊາດຂອງຊາດລາວເຮົາ ທີ່ໃຊ້ສຳລັບແລກປ່ຽນສິນຄ້າ ແລະ ວັດຖຸສິ່ງຂອງປະເພດຕ່າງໆ. ດັ່ງນັ້ນ, ເຮົາເປັນຄົນລາວບໍ່ຄວນຈະໄປຍ້ອງຍໍສັນລະເສີນເງິນຂອງຊາດອື່ນ ແລະ ບໍ່ຄວນຈະໄປຍົກສູງເງິນຂອງພວກເຂົາ ເພາະມັນຈະເຮັດໃຫ້ເສດຖະກິດຂອງປະເທດເຮົາຕົກຕໍ່າ. ເຮົາເປັນຄົນລາວ ຕ້ອງພ້ອມກັນປົກປັກຮັກສາເງິນກີບຂອງລາວ ຢູ່ເມືອງລາວຕ້ອງໃຊ້ແຕ່ເງິນກີບ ເພື່ອໃຫ້ເງິນກີບຍືນຍົງຄົງຕົວຢູ່ຄູ່ກັບຄົນ ລາວຕະຫຼອດໄປ.

**2. ດ້ານສິລະປະການແຕ່ງ**

ບົດກອນບົດນີ້ ຜູ້ແຕ່ງໄດ້ໃຊ້ສັບພາສາທີ່ເຂົ້າໃຈງ່າຍ ມີເນື້ອໃນສຶກສາທາງດ້ານແນວຄິດ ແລະ ຄຸນສົມບັດຂອງຜູ້ ອ່ານເປັນຢ່າງດີ. ເຊິ່ງຜູ້ແຕ່ງໄດ້ຍົກເອົາເງິນກີບຂຶ້ນມາເວົ້າ ເພື່ອໃຫ້ຄົນລາວເຮົາໄດ້ຮູ້ວ່າ "ເງິນກີບ" ເປັນເງິນປະຈຳຊາດ ແລະ ມີຄວາມສຳຄັນຕໍ່ຊາດລາວຂອງພວກເຮົາ.

## ບົດກອນ

## “ຮັກຊາດຕ້ອງໃຊ້ເງິນກີບ” ໂດຍ ສົມໃຈ ຈັນທະວົງ

ຮັກຫອມແຊງຊາດເຊື້ອ ຕະກຸນແກ່ນຂອງຕົນ
ຢ່າວົນວຽນເງິນເຂົ້າ ບາດໂດລາຫາເວົ້າ
ເງິນກີບເຮົາໂຮມໄວ້ ເຊີນຊວນໃຊ້ຈ່າຍ
ຊຳລະຂາຍແລກຊື້ ສິນຄ້າເຄື່ອງຂອງ
ຢ່າມົວເມົາຍົກຍ້ອງ ຍໍຍື່ນເງິນເຂົ້າ ຫຼາຍເດີ
ຫາວ່າເງິນກີບເຮົາ ຕ່ຳຄຸນມອງຂ້ວາມ
ນາມຊື່ຄົນລາວແທ້ ເງິນລາວບໍ່ໂອ້ອ່າວ
ເສດຖະກິດບໍ່ຫ່ອນກ້າວ ເມືອງບ້ານບໍ່ຮຸ່ງເຮືອງ
ຈິ່ງໄດ້ຄິດຕໍ່ເຕື້ອງ ໃນເລື່ອງຂອງເງິນ
ຢ່າເພີດເພີນເມີນເສີຍ ຢູ່ຊືງຊຶມເຊື້
ນອນລະເມີມອງມຸ້ງ ເງິນເຂົ້າຫຼົງຫຼົ່ມ
ຊາດຊິຈົມຈຸ່ມໄໜ້ ມຸດນ້ອຍມອດມົວ ແທ້ແລ້ວ!
ພາກັນສານສືບໄວ້ ເງິນກີບຂອງລາວ
ໝັ້ນແກ່ນຍາວຢືນເທິງ ຊ່ວຍກັນຊົມໃຊ້
ໃຜຫາກລືມໄລສິ້ນ ສະກຸນເງິນຂອງຊາດ
ຖືວ່າບັງອາດເອື້ອມ ລືມເຊືອເຜົ່າລາວ ແທ້ແລ້ວ!

# ບົດທີ 3
# ບົດນະວະນິຍາຍ ກອງພັນທີສອງ

## 1. ປະຫວັດຫຍໍ້ຂອງນັກແຕ່ງ ແລະ ພາລະກິດປະດິດແຕ່ງຂອງນັກປະພັນ ສ.ບຸບຜາ ນຸວົງ

### 1.1 ປະຫວັດຫຍໍ້ຂອງທ່ານ ສ.ບຸບຜານຸວົງ



ສ ບຸບຜານຸວົງ ມີນາມປາກກາວ່າ "ຊາຍເຊໂປນ" ແລະ ມີຊື່ເຕັມວ່າ "ສຸວັນທອນ ບຸບຜານຸວົງ" ທ່ານເກີດ ເມື່ອວັນທີ 13 ເມສາ 1925 ທີ່ບ້ານ ເຊໂປນ ເມືອງ ເຊ ໂປນ ແຂວງ ສະຫວັນນະເຂດ, ທ່ານເປັນລູກຜູ້ທີ 6 ຂອງພໍ່ ແກ່ນຈັນ ບຸບຜານຸວົງ ແລະ ແມ່ບຸດສະດີ ບຸບຜາ ນຸວົງ, ພໍ່ແມ່ເປັນຂ້າລາຊະການຊັ້ນຕ່ຳໃນລະບອບປົກຄອງຂອງພວກລ່າເມືອງຂຶ້ນເຄິ່ງສັກດີນາລາວ ເຊິ່ງ ແມ່ເປັນຜູ້ທີ່ມັກເລົ່ານິທານ ແລະ ສັ່ງສອນລູກດ້ວຍ ສຳນວນວັນນະຄະດີພື້ນເມືອງເຮັດໃຫ້ລູກທັງຫົກເປັນຄົນ ສະຫຼາດ ແລະ ມີຄວາມຮູ້.

ທ່ານ ສຸວັນທອນ ບຸບຜານຸວົງ ໄດ້ເຂົ້າໂຮງຮຽນ ແຕ່ອາຍຸ 6 ປີ ທ່ານຮຽນຈົບຊັ້ນປະຖົມຢູ່ວຽງຈັນໃນປີ 1937 ຈາກນັ້ນທ່ານໄດ້ມາຮຽນຕໍ່ຊັ້ນມັດທະຍົມຢູ່ເມືອງເວ້ ຂອງຫວຽດນາມ ຈົນເຖິງປີ 1944 ສົງຄາມໂລກຄັ້ງທີ ສອງໄດ້ແຜ່ລາມມາຮອດອິນດູຈີນ ຍີ່ປຸ່ນໄດ້ຖິ້ມລະເບີດໃສ່ເມືອງເວ້ ຂອງຫວຽດນາມ, ທ່ານຈິ່ງໄດ້ກັບຄືນເມືອງລາວ ເມື່ອອາຍຸໄດ້ 17 ປີ ທ່ານເປັນຄູສອນ. ມາໃນປີ 1946 ທ່ານໄດ້ເຂົ້າຮ່ວມຂະບວນການປະຕິວັດ-ເປັນທະຫານຕໍ່ຕ້ານ ກັບຝຣັ່ງ ທ່ານໄດ້ເຂົ້າຮ່ວມກອງປະກອບອາວຸດ ສົມທົບກັບກອງອາສາສະໝັກຫວຽດນາມຕີເມືອງຕ່າງໆ.

ໃນເວລາຢູ່ເຂດທີ່ໝັ້ນທ່ານໄດ້ເປັນພະນັກງານໜັງສືພິມ "ສາມັກຄີທຳ" ແຕ່ບໍ່ດົນກໍໄດກໍ່ໄດ້ລົງໄປເຊໂປນເມືອງບົວລະພາ ເວລານັ້ນໄດ້ມີການເປີດບັ້ນກວດສອບການປະດິດແຕ່ງ ກາບກອນຂຶ້ນໃນທົ່ວພາກຕາເວັນອອກ ຈຶ່ງເປັນໂອກາດດີໃຫ້ທ່ານໄດ້ສົ່ງບົດເຂົ້າກວດສອບໃນຄັ້ງນີ້ທ່ານໄດ້ຮັບລາງວັນປະເພດໜຶ່ງຂອງເຂດ.

ຍ້ອນມີພອນສະຫວັນໃນດ້ານນີ້ ເມື່ອ ທ່ານ ສຸພານຸວົງ ກັບມາຈາກຝັ່ງໄທ ໄດ້ຈັດຕັ້ງກອງປະຊຸມແນວລາວອິດສະຫຼະ ແລະ ຈັດຕັ້ງໜັງສືພິມອິດສະຫຼະຂຶ້ນ ທ່ານ ສຸວັນທອນ ໄດ້ຖືກສົ່ງໄປປະຈຳຢູ່ໜັງສືພິມອິດສະຫຼະ ທ່ານໄດ້ ຂຽນບົດຂ່າວສານ, ບົດບັນທຶກ, ບົດກາບກອນຢ່າງຫຼວງຫຼາຍ ແລະ ພິມອອກໃນໜ້າໜັງສືພິມປະຈຳວັນ (ເວລານັ້ນ ແມ່ນ ທ່ານ ສີຊະນະສີສານ ເປັນບັນນາທິການ)

ມາໃນປີ 1955 ທ່ານໄດ້ໄປຮຽນຢູ່ໂຮງຮຽນກໍ່ສ້າງພະນັກງານຊັ້ນກາງທີ່ນາແມວ ແຂວງຫົວພັນ ແຕ່ຮຽນບໍ່ທັນຈົບກໍຖືກສົ່ງໄປເປັນໂຄສົກ ພາສາລາວຢູ່ວິທະຍຸກະຈາຍສຽງຫວຽດນາມ ທ່ານໄດ້ຮຽບຮຽງ ແລະ ຂຽນບົດຂ່າວອອກທາງອາກາດ. ກ່ອນປີ 1960 ທ່ານໄດ້ກັບມາຊຳເໜືອ ແລະ ແປຂ່າວໃຫ້ໜັງສືພິມ "ລາວຮັກຊາດ"

ພາຍຫຼັງເຫດການວັນທີ 9/8/1960 ທ່ານໄດ້ຮັບໜ້າທີ່ຄັງໄຂ ແຂວງຊຽງຂວາງ ເວລານີ້ ທ່ານໄດ້ຮຽບຮຽງ ແລະ ຂຽນບົດຫຼາຍທີ່ສຸດ. ມາປີ 1975 ທ່ານໄດ້ເຮັດວຽກຢູ່ບັນນາທິການໜັງສືພິມ "ສຽງປະຊາຊົນ". ມາປີ 1979 ທ່ານໄດ້ເປັນຜູ້ລິເລີ່ມກໍ່ຕັ້ງໜັງສືພິມ "ວັນນະສິນ". ມາປີ 1980 ທ່ານຖືກຍ້າຍໄປຢູ່ຄະນະກຳມະການຄົ້ນຄວ້າ-ແປ-ຮຽບ ຮຽງປຶ້ມລັດທິມາກ-ເລນິນ.

ນັບແຕ່ປີ 1980 ເປັນຕົ້ນມາ ທ່ານໄດ້ຖືກເລືອກຕັ້ງເປັນປະທານສາມະຄົມນັກປະພັນລາວຜູ້ທຳອິດ. ທ່ານໄດ້ເຖິງແກ່ມໍລະນະກຳໄປໃນວັນທີ 6/12/2003.

### 1.2. ພາລະກິດປະດິດແຕ່ງ

- ກາບກອນ ປຶ້ມກອນ "ພື້ນເມືອງລາວ" ແຕ່ປີ 1973.
- ເລື່ອງສັ້ນ ປຶ້ມໂຮມເລື່ອງສັ້ນ "ປະເທດຊາດຂອງພວກເຮົາ" (ສາມເຫຼັ້ມ) ແຕ່ປີ 1971.




- ນະວະນິຍາຍທອນຄືນຫຼັງ (ສອງເຫຼັ້ມ) ແຕ່ປີ 1974
- ສອງເອື້ອຍນ້ອງ (ສາມເຫຼັ້ມ) ເຫຼັ້ມ 1 ແຕ່ປີ 1975, ເຫຼັ້ມ 2 ແຕ່ປີ 1980, ເຫຼັ້ມ 3 ແຕ່ປີ 1981
- ກອງພັນທີສອງ (ສີ່ເຫຼັ້ມ) ເຫຼັ້ມ 1-2 ແຕ່ປີ 1980, ເຫຼັ້ມ 3-4 ແຕ່ປີ 1983 ສອງຟາກຝັ່ງ (ສາມເຫຼັ້ມ) ເຫຼັ້ມ 1 ແຕ່ປີ 1982, ເຫຼັ້ມ 2-3 ແຕ່ປີ 1987
- ລູກສາວຂອງພັກ (ສາມເຫຼັ້ມ) ແຕ່ປີ 1982
- ບ່າວລາວ-ສາວຫວຽດ ແຕ່ປີ 1987

ສາມບາດຄ້ອນຍຸດທະສາດ ແຕ່ປີ 1987 ຜົນງານການປະດິດແຕ່ງຂອງທ່ານທີ່ໄດ້ແປເປັນພາສາ ຫວຽດນາມ, ກຳປູເຈຍ, ລັດເຊຍ ກໍ່ມີຫຼາຍເລື່ອງເຊັ່ນ: "ກອງພັນທີສອງ", "ສອງເອື້ອຍນ້ອງ"...

**1.3. ທ່າອ່ຽງດ້ານແນວຄິດໃນວິວັດການປະດິດແຕ່ງຂອງ ທ່ານ ສຸວັນທອນ ບຸບຜານຸວົງ**

ສິ່ງທີ່ໄດ້ກະຕຸກຊຸກຍູ້ໃຫ້ຄວາມສາມາດ ພອນສະຫວັນທີ່ມີໃນຕົວຂອງທ່ານ ສຸວັນທອນ ບຸບຜານຸວົງ ໃຫ້ປະກົດເປັນຈິງ ແລະ ເກີດດອກອອກຜົນມານັ້ນແມ່ນຍ້ອນ:

ຜົນສະທ້ອນຈາກຄວາມຫຍຸ້ງຍາກສັບສົນຂອງຄອບຄົວ-ບ້ານເມືອງ ໄດ້ພາໃຫ້ທ່ານ ສຸວັນທອນ ບຸບຜານຸວົງ ຕົກໄປຫຼາຍແຫ່ງຫົນ ພົບພໍ້ກັບຫຼາຍເຫດການ-ຫຼາຍປະເພດຄົນ ຕັ້ງແຕ່ຄາວຍັງນ້ອຍ ເປັນຕົ້ນແມ່ນເຄີຍເຫັນພວກເຈົ້າ ນາຍສັກດີນາປະພຶດຮ້າຍ-ຂູດຮີດຂົ່ມເຫັງຊົນຊັ້ນຊາວຜູ້ອອກແຮງງານທີ່ຫຍຸ້ງຍາກ. ເຫັນກະທັ່ງເຈົ້າຊີວິດຫຼວງພະບາງກໍ່ ໄດ້ກົ້ງຫຼັງຕໍ່ບາດແສ້ຂອງຝຣັ່ງ. ຈາກເຫດການນັ້ນ ເຮັດໃຫ້ ສຸວັນທອນ ບຸບຜານຸວົງ ຈຳແນກໄດ້ຜູ້ຮ້າຍຜູ້ດີ ແລະ ມີ ຄວາມຄຽດແຄ້ນສັກດີນາທີ່ເປັນລູກແລ້ງຕີນມືຂອງຝຣັ່ງ.

ການທີ່ທ່ານໄດ້ຫ່າງໄກຄອບຄົວ ພັດພາກຈາກບ້ານເກີດເມືອງນອນເລື້ອຍໆ ນັ້ນຈຶ່ງເກີດໃຫ້ມີຄວາມຮັກບ້ານ ເກີດເມືອງນອນຂຶ້ນ ເວົ້າໄດ້ວ່າ ຄວາມຮັກຊາດທ່ານແມ່ນເລີ່ມຈາກຈຸດນັ້ນມາ ພ້ອມທັງສົມທົບໃສແວ່ວສະຫຼາດໃນ ການຮ່ຳຮຽນທີ່ເມືອງເວ້ (ຫວຽດນາມ) ຈາກທຳມະຊາດຂອງເມືອງເວ້ ໄດ້ພາໃຫ້ ສຸວັນທອນ ບຸບຜານຸວົງ ຄະນຶງຫາບ້ານເກີດເມືອງນອນ ຈຶ່ງໄດ້ແຕ່ງເປັນກາບກອນຫຼາຍທີ່ສຸດ ເພື່ອຢາກມອບໃຫ້ໝູ່ຄູ່ທີ່ຮັກແພງ. ເນື້ອໃນກາບກອນສ່ວນຫຼາຍ ແມ່ນພັນລະນາເຖິງຄວາມງາມທີ່ປະທັບໃຈຂອງທຳມະຊາດເມືອງເວ້ ແລະ ບ້ານເກີດເມືອງນອນຂອງຕົນ.

ໝາຍຄວາມວ່າແນວຄິດຮັກຊາດແມ່ນແນວຄິດທຳອິດ ແລະ ກໍ່ແມ່ນແນວຄິດສຸດທ້າຍໃນບົດປະພັນຂອງ ສຸວັນທອນ ບຸບຜານຸວົງ ບາດກ້າວທຳອິດແມ່ນເລີ່ມຢູ່ໃນບັ້ນແຕ່ງກອນເຂົ້າກວດສອບຢູ່ທາງພາກໃຕ້ຂອງລາວ.

ສ່ວນບົດທີ່ເປັນກະບອກສຽງຂອງການຕໍ່ສູ້ກູ້ຊາດທີ່ແທ້ຈິງ ແລະ ມີພົນສັກສິດແມ່ນເລີ່ມຂຶ້ນດ້ວຍບົດເລື່ອງ " ທອນຄືນຫຼັງ ", " ຢາກຂ້າເພິ່ນໂຕຕາຍ " ເຊິ່ງເປັນໄລຍະທີ່ກົ້ງເກືອກລີເລືອໃນສະໜາມຮົບຕໍ່ສູ້ກູ້ຊາດໃນວຽກງານໂຄສະນາສືບຂ່າວການເຮັດວຽກຢູ່ວິທະຍຸທີ່ຄັງໄຂໄດ້ເຜີຍແບບໜ້າກາກຂອງປະຕິການນັ້ນໄດ້ເປັນມິດດວງແຫຼມຕົມດວງທຳອິດຂອງ ສຸວັນທອນ ບຸບຜານຸວົງ ເພື່ອແລກປ່ຽນໃຫ້ເຫັນທາດແທ້ຂອງສັດຕູພ້ອມທັງຍົກໃຫ້ເຫັນຄອນໄຟປະຕິວັດໃນບົດປະພັນນັ້ນ. ຮອດຊຸມປີ 70 ປະລິມານບົດກອນແມ່ນຫຼາຍຂຶ້ນ ຂອບເຂດການສ່ອງແສງກໍຫຼາຍພິເສດ ແມ່ນລັກສະນະສູ້ຮົບໃນບົດປາກົດເດັ່ນ.

ມາຮອດໄລຍະທີ່ປະເທດຊາດໄດ້ຮັບການປົດປ່ອຍ ການປະພັນຂອງທ່ານກໍ່ໄດ້ຫັນປ່ຽນໄປຕາມການປ່ຽນແປງໃໝ່ຂອງປະເທດຊາດຢ່າງທັນການ ແລະ ປະລິມານບົດກອນກໍນັບມື້ນັບຫຼາຍຂຶ້ນ, ຄວາມໄວຂອງການຮຽນໄດ້ ເປັນຈຸດພົ້ນເດັ່ນຂອງທຸກໆໄລຍະທີ່ປະດິດແຕ່ງສະແດງອອກໃນປີໜຶ່ງຂຽນໄດ້ຫຼາຍເລື່ອງໃນເວລາດຽວກັນພ້ອມກັນ ຫຼາຍເລື່ອງ.

ສ່ວນດ້ານຮູບການກໍ່ໄດ້ເປັນແບບຢ່າງໃນວັນນະຄະດີສະໄໝໃໝ່ຂອງລາວ. ຖ້າເບິ່ງແງ່ຕົວລະຄອນຈະເຫັນວ່ານັກປະພັນມັກຍົກເອົາຕົວລະຄອນແມ່ຍິງເປັນຕົວລະຄອນໃຈກາງຂອງເລື່ອງ. ຕໍ່ບັນຫານີ້ ຜູ້ແຕ່ງກໍໄດ້ເຜີຍທັດສະນະຂອງ ຕົນອອກວ່າ " ຊົນຊັ້ນທີ່ຖືກກົດຂີ່ຂູດຮີດຂອງລາວຕັ້ງແຕ່ໃດມາແມ່ນທຸກເພດທຸກໄວລ້ວນແຕ່ໄດ້

ຮັບຄວາມທຸກຍາກລຳ ບາກ ແລະ ທໍລະມານທີ່ສຸດ ແຕ່ໃນນັ້ນຜູ້ທີ່ທຸກທໍລະມານກວ່າໝູ່ ຄັນເວົ້າເຖິງເພດແມ່ນເພດຍິງ, ເວົ້າເຖິງແມ່ນໄວເດັກ ເຖິງວ່າເຂົາເປັນເພດ ແລະ ໄວທີ່ຖືກຂົ່ມເຫັງ ແຕ່ເຂົາຊ້ຳພັດມີມານະຈິດອັນດີງາມສູງສົ່ງມີຄວາມສາມາດມີຄວາມ ສະຫຼາດພິກໄຫວສູງ ແລະ ມີຄວາມຊື່ສັດກວ່າຖ້າທຽບໃສ່ເພດກົງກັນຂ້າມ. ດັ່ງນັ້ນ, ເຂົາເຈົ້າຈຶ່ງຄວນໄດ້ຮັບຄວາມເຫັນ ອົກເຫັນໃຈ ສົມຄວນຍ້ອງຍໍສັນລະເສີນ ".

ຈາກບັນຫານີ້, ຈຶ່ງຢັ້ງຢືນໄດ້ວ່າ ນັກປະພັນ ສຸວັນທອນ ບຸບຜານຸວົງ ເປັນຜູ້ມີສາຍຕາອັນແຫຼມຄົມມີນ້ຳໃຈມະນຸດສະທຳສູງ, ພວກເຮົາມີຄວາມພາກພູມໃຈເປັນຢ່າງຍິ່ງທີ່ມີນັກປະພັນຜູ້ທີ່ດີເດັ່ນ, ທັງເປັນນັກຮົບວັດທະນະທຳຜູ້ອາວຸໂສ, ເປັນນັກປະຕິວັດຜູ້ດີເລີດ ຕະຫຼອດໄລຍະທີ່ຕໍ່ສູ້ກູ້ຊາດຈົນເຖິງໄລຍະສ້າງສາປະເທດຊາດທ່ານເປັນຜູ້ທີ່ນຳໜ້າ ໃນຖັນແຖວນັກປະດິດແຕ່ງວັນນະຄະດີສະໄໝໃໝ່ຂອງລາວໃນການເດີນຕາມວິທີແຕ່ງແບບສັດຈະທັດສັງຄົມນິຍົມເຊິ່ງ ເປັນຜູ້ປູພື້ນ (ລິເລີ່ມ) ໃນວັນນະຄະດີປະເພດລີລິດ ທີ່ນຳເອົາວັນນະຄະດີສະໄໝໃໝ່ຂອງລາວກ້າວຂຶ້ນສູ່ເວທີສາກົນ.

## 2. ເນື້ອໃນກອງພັນທີສອງ 4 ເຫຼັ້ມໂດຍຫຍໍ້

+ ເຫຼັ້ມ I ບົດເລື່ອງໄດ້ພັນລະນາເຖິງກອງພັນທີສອງຂອງຝ່າຍປະເທດລາວ ລົງມາປະຈຳຢູ່ທົ່ງໄຫຫີນແຂວງຊຽງຂວາງ ເພື່ອເຂົ້າປະສົມກັບກຳລັງທະຫານຝ່າຍວຽງຈັນຕາມສັນຍາວຽງຈັນ 1957 ແຕ່ບໍ່ພໍເທົ່າໃດເດືອນພວກ ທະຫານຫຸ່ນວຽງຈັນ ໂດຍປະຕິບັດຕາມຄຳສັ່ງຂອງຈັກກະພັດອາເມລິກາ ກໍ່ໄດ້ເລີ່ມລົງມືປະຕິບັດກົນອຸບາຍທີ່ວັງກິດກິນ ກອງພັທີສອງຂອງຝ່າຍປະເທດລາວ ໂດຍວິທີຊື້ຈ້າງຈອບອອຍດ້ອຍຍົດຖາບັນດາສັກດ້ອຍເງິນ. ແຕ່ກົນອຸບາຍຂອງພວດ ເຂົາບໍ່ໄດ້ຮັບຜົນຈຶ່ງປ່ຽນມາໃຊ້ການຂົ່ມຂູ່, ໃຊ້ຫຼາຍກອງພັນປິດລ້ອມກອງພັນທີສອງຢ່າງໜັກແໜ້ນເຂົາໄດ້ສ້າງຄວາມ ເຄັ່ງຕຶງຂຶ້ນທຸກມື້. ແຕ່ສຳລັບກອງພັນທີສອງແມ່ນຍັງອຸ່ນອ່ຽງທຸ່ນທ່ຽງບໍ່ໄດ້ຫວັ່ນໄຫວແຕ່ປະການໃດ. ໂດຍວິທີສະຫຼາດ ພິກໄຫວຂອງອ້າຍນ້ອງກອງພັນທີສອງ ແລະ ຜູ້ບັນຊາການ ຈຶ່ງເຮັດໃຫ້ພວກສັດຕູຍອມເລີກວົງປິດລ້ອມອອກພາຍໃນ ຄືນທີ່ກອງພັນທີສອງປະຕິບັດແຜນການຜ່າວົງປິດລ້ອມຂອງສັດຕູອອກໄປພ້ອມທັງຄອບຄົວລູກເຕົ່າທີ່ຍັງອ່ອນນ້ອຍ ມີທັງແມ່ມານໄດ້ຜ່ານຜ່າວົງປິດລ້ອມອອກຈາກເຂດທົ່ງໄຫຫີນ ປານກັບວ່າທຸກຄົນໄດ້ມີປີກເຫຼັກ ເພື່ອບິນໜີໄປເຊິ່ງໄດ້ ສ້າງຄວາມງຶດງໍ້ ແລະ ຄວາມຫວັ່ນໄຫວສັ່ນສະທ້ານຢ້ານກົວໃຫ້ແກ່ທະຫານຫຸ່ນວຽງຈັນ.




+ ເຫຼັ້ມ II ພັນລະນາເຖິງກອງພັນທີສອງບິນ ເສັ້ນທາງອອກຈາກທົ່ງໄຫຫີນໄປສູ່ເຂດທີ່ໝັ້ນ. ບົນເສັ້ນທາງ ໄປກອງພັນທີສອງຈຳຕ້ອງບຸກປ່າຜ່າດົງ, ຂຶ້ນພູລົງຫ້ວຍ, ທັງ ຕ້ອງສູ້ຮົບເພື່ອຕີວົງປິດລ້ອມຂອງສັດຕູ. ການໄລ່ຕີທາງໜ້າ ດິນ ແລະ ທາງອາກາດຂອງພວກສັດຕູ (ທະຫານຫຸ່ນວຽງຈັນ).

- ການປົກປັກຮັກສາກຳລັງປ້ອງກັນເອົາຄອບຄົວລູກເມຍຂອງພະນັກງານນັກຮົບໃຫ້ເດີນທາງໄປຢ່າງປອດໄພ, ໃຊ້ເວລາຫຼາຍວັນ. ສຸດທ້າຍ ກໍໄປເຖິງເຂດທີ່ໝັ້ນຂອງການປະຕິວັດຢ່າງສະຫງ່າງາມ.

+ ເຫຼັ້ມ III ພັນລະນາເຖິງການປັບປຸງກຳລັງຂອງ ອອກໄປ ເພື່ອສືບຕໍ່, ຕໍ່ສູ້ຢູ່ທຸກຫົນແຫ່ງຂອງປະເທດ. ກອງພັນທີ່ໄດ້ແຕກອອກເປັນຫຼາຍກອງ, ຈຳນວນໜຶ່ງເຂົ້າໄປ ເຄື່ອນໄຫວຢູ່ແນວຫຼັງຂອງສັດຕູໃນຕົວເມືອງວຽງຈັນ ທັງເປັນສາຍຕິດຕໍ່ລັດໃຫ້ບັນດາທ່ານ ຜູ້ນຳທີ່ພວມຖືກກັງຂັງ ຢູ່ຄຸກໂພນເຄັງຂອງສັດຕູພ້ອມທັງຂົນຂວາຍປະຊາຊົນ ແລະ ຊັ້ນຄົນຕ່າງໆຜູ້ກ້າວໜ້າເພື່ອເຂົ້າຮ່ວມຂະບວນການ ຮັກຊາດ ຕ້ານຈັກກະພັດ ແລະພວກລູກມືຂາຍຊາດ.

ຈຳນວນໜຶ່ງຖືກຄັດເລືອກປະກອບເປັນກອງພິເສດຍາງລັດໄປຕາມປ່າໄປຮັບຕ້ອນ ແລະ ປ້ອງກັນເອົາທ່ານຜູ້ນຳ ທີ່ໄດ້ແຮກຄຸກອອກໄປ, ກອງດັ່ງກ່າວສາມາດປ້ອງກັນ ແລະ ຕ້ອນເອົາທ່ານຜູ້ນຳກັບຄືນສູ່ເຂດທີ່ໝັ້ນໄດ້ຢ່າງປອດໄພ.

ຈຳນວນໜຶ່ງຖືກຈັດຕັ້ງເປັນກອງ 500 ເພື່ອເຂົ້າໄປວຽງຈັນສູ້ຮົບຊ່ວຍກຳລັງລັດຖະປະຫານ ເພື່ອໂຄ່ນລົ້ມລັດຖະບານປະຕິການ ຜຸຍຊະນະນິກອນ, ພູມີ ໜໍ່ສະຫວັນ 1960 (9-8-1960).

ສ່ວນຈຳນວນຫຼາຍໄດ້ກັບຄືນມາປົດປ່ອຍທົ່ງໄຫຫີນ-ຊຽງຂວາງ ໃນວັນທີ 1 ມັງກອນ 1961.

+ ເຫຼັ້ມ IV ພັນລະນາປົດປ່ອຍທົ່ງໄຫຫີນ ຂອງຝ່າຍແນວລາວຮັກຊາດ ແຕ່ກອງພັນທີສອງຍັງຕ້ອງໄດ້ສູ້ກັບກຳ ລັງປະຕິວັດການຂວາຈັດ ແລະ ພວກເປັນກາງອ່ຽງຂວາ ທີ່ກຳລັງພັດແຍກອອກຈາກກຳລັງເປັນກາງ ພ້ອມທັງເຂົ້າໄປ ເຄື່ອນໄຫວປິດລັບ ແລະ ເປີດເຜີຍຢູ່ເມືອງຫຼວງວຽງຈັນ ປະກອບສ່ວນເຂົ້າໄຊຊະນະຂອງການສ້າງຕັ້ງລັດຖະບານປະສົມ ສາມຝ່າຍທີ່ນາມອນ.

**2.1 ເຄົ້າກຳເນີດຂອງນະວະນິຍາຍ ກອງພັນທີສອງ**

ນະວະນິຍາຍ ກອງພັນທີສອງ ແມ່ນນະວະນິຍາຍວິລະກຳກຳປະຫວັດສາດ. ດັ່ງນັ້ນ, ກໍຕ້ອງສ່ອງແສງເຫດການ ຄືວຈິງຂອງປະຫວັດສາດຢ່າງແນ່ນອນເຊິ່ງແມ່ນປະຫວັດສາດແຕ່ປີ 1958-1961 ເປັນໄລຍະມີຈັກກະພັດອາເມລິກາ ແລະ ລູກແລ້ງຕີນມືລະເມີດສັນຍາວຽງຈັນທີ່ໄດ້ຕົກລົງກັນລະຫວ່າງກຳລັງຝ່າຍວຽງຈັນ ແລະ ແນວລາວປະຕິວັດ. ສະພາບນັບມື້ນັບເຄັ່ງຕຶງ ຮອດປີ 1961 ກອງພັນທີສອງຈຶ່ງໄດ້ສົມທົບກັບກຳລັງປະຕິວັດກອງອື່ນໆຕີປົດປ່ອຍທົ່ງໄຫຫີນຊຽງຂວາງສຳເລັດ ປີ 1962 ໄດ້ຈັດຕັ້ງລັດຖະບານປະສົມ 3 ຝ່າຍ (ປະຕິວັດ-ເປັນກາງ-ຝ່າຍຂວາ) ກອງພັນທີສອງ ໄດ້ຕໍ່ສູ້ກັບພວກເປັນກາງປອມ (ອ່ຽງຂວາ) ແລະ ພວກປະຕິການຂວາຈັດວຽງຈັນ.

ປະຫວັດສາດຕົວຈິງແມ່ນ ປີ 1954 ຝຣັ່ງຍອມເຊັນສັນຍາເຊີແນວແລ້ວໜີອອກຈາກອິນດູຈີນ ຈາກນັ້ນ, ບໍ່ພໍເທົ່າໃດອາເມລິກາໄດ້ຊ້ອນມືເຂົ້າມາອິນດູຈີນ ກ່ອນອື່ນພວກເຂົາໄດ້ຄຸບເອົາອຳນາດການປົກຄອງທີ່ເປັນໄມ້ຂອງຝຣັ່ງ ແລ້ວໃຊ້ພວກປະຕິວັດກົນອຸບາຍປາບປາມຂະບວນການປະຕິວັດນັບມື້ນັບຮຸນແຮງ ແລະ ເປີດແປນຂຶ້ນ. ເວລານັ້ນ, ຝ່າຍ ປະຕິວັດຍັງຍຶດໝັ້ນຕາມສັນຍາຢູ່ສອງແຂວງຊຳເໜືອ ແລະ ຜົ້ງສາລີ ເພື່ອລໍຖ້າຍເຈລະຈາປອງດອງຊາດຕໍ່ໄປ. ແຕ່ ລັດຖະບານຫຸ່ນມີກະຕາຍເປັນຫົວໂປ້ທີ່ເປັນລູກຈ້າງຂອງອາເມລິການັ້ນໄດ້ໃຊ້ກຳລັງອາວຸດບຸກໂຈມຕີຄືນ ເຮັດໃຫ້ພວກ ເຂົາຕ້ອງປະລາໄຊຢ່າງເຈັບແສບຈົນພວກເຂົາຍອມເຊັນສັນຍາຮັບຮູ້ຝ່າຍປະເທດລາວ ແລ້ວສ້າງຕັ້ງລັດຖະບານປະສົມຂຶ້ນ ໃນປີ 1957.

ຈາການປະລາໄຊແລ້ວນັ້ນ ພວກເຂົາຊໍ້າພັດຄິດກົນອຸບາຍໃໝ່ຂຶ້ນມາ ການຍອມເຊັນສັນຍາຖືວ່າເປັນການຫລອກເສືອອອກຖໍ້າ. ບໍ່ພໍເທົ່າໃດເດືອນພວກເຂົາໄດ້ສັ່ງໃຫ້ລູກມືຂອງພວກມັນມາຈັບບັນດາທ່ານຜູ້ນຳກັກຂັງຢ່າງບັງອາດ ພວກມັນຍັງໄດ້ບີບຫັດກອງພັນທີສອງ ຫວັງເຮັດໃຫ້ກຳລັງປະຕິວັດດັບມອດລົງເຖິງວ່າກອງພັນທີສອງຈະຕົກຢູ່ ໃນວົງປິດລ້ອມອັນໜາແໜ້ນ ແຕ່ກໍຍັງໄດ້ຮັບຄຳສັ່ງໃຫ້ຕໍ່ສູ້ເພື່ອຜ່າວົງປິດລ້ອມໃນທີ່ສຸດປີ 1962.

**2.2 ເນື້ອໃນຄວາມໝາຍ**

ນະວະນິຍາຍເລື່ອງ "ກອງພັນທີສອງ" ນັກຂຽນໄດ້ເລົ່າຄືນເຫດການປະຫວັດສາດສາດໜຶ່ງທີ່ເກີດຂຶ້ນໃນໄລຍະ ລວມລາວຄັ້ງທີ 1 ແລະ ການຫັນທິດຕໍ່ສູ້ທາງດ້ານການເມືອງ, ດ້ານກົດໝາຍຄືນມາສູ່ການຕໍ່ສູ້ດ້ານອາວຸດ ແລະ ການສູ້ ຮົບອັນພິລະອາດຫານຂອງນັກຮົບປະເທດລາວ ໃນກອງພັນທີສອງທີ່ຜ່າວົງປິດລ້ອມຂອງກຳລັງສັດຕູຕັ້ງ 6 ກອງພັນ ໂດຍປົກປັກຮັກສາກຳລັງໄວ້ຢ່າງຄົບຖ້ວນ ເຊິ່ງໃນນັ້ນມີທັງແມ່ຍິງ-ເດັກນ້ອຍ-ແມ່ມານ ເພື່ອອອກໄປຫາເຂດທີ່ໝັ້ນຂອງ ການປະຕິວັດ ເຫດການທີ່ກອງພັນທີສອງຖອຍທັບອອກຈາກທົ່ງໄຫຫີນໄດ້ຢ່າງປອດໄພນັ້ນເປັນເລື່ອງທີ່ໜ້າອັດສະຈັນ ເຊິ່ງບໍ່ພຽງແຕ່ເຮັດໃຫ້ປະຊາຊົນລາວໃນທົ່ວປະເທດຮູ້ສຶກທະນົງໃຈເທົ່ານັ້ນ ແຕ່ຍັງເຮັດໃຫ້ຊາວໂລກງຶດງໍ້ ແລະ ຊົມເຊີຍ. ເຮັດໃຫ້ພວກສັດຕູຖືກສັ່ນສະເທືອນຢ່າງໜັກ, ຖືກເສຍຂວັນ ແລະ ສະທ້ານຢ້ານກົວກວ່າເວລາໃດໆທັງໝົດ.

ການຖອນທັບຂອງກອງພັນທີສອງກັບຄືນຫາເຂດທີ່ໝັ້ນໄດ້ຢ່າງປອດໄພນັ້ນ ໄດ້ກາຍເປັນວິລະກຳອັນຮຸ່ງໂລດ ແລະ ມະຫັດສະຈັນໃນປະຫວັດສາດການຕໍ່ສູ້ກູ້ຊາດຂອງປະຊາຊົນລາວ. ກອງພັນທີສອງ ໄດ້ກາຍເປັນແນວປູກສີແດງ ໃນຄີມເຫຼັກຂອງສັດຕູຢູ່ທົ່ງໄຫຫີນ ແລະ ໄດ້ຫວ່ານລົງໃສ່ພື້ນແຜ່ນດິນອັນອຸດົມສົມບູນຂອງປະເທດຊາດ

ແນວປູກນັ້ນ ໄດ້ອອກໜໍ່ຈໍດອກ ແລ້ວເກີດເປັນຫຼາຍກອງຮ້ອຍ-ເປັນຫຼາຍພັນເມັດແນວປຸກສີແດງໃຫ້ແກ່ປະເທດຊາດ.

ອີກແງ່ໜຶ່ງ ນະວະນິຍາຍ ກອງພັນທີສອງ ແມ່ນແນ່ໃສ່ສັນລະເສີນຄຸນທາດອັນດີເດັ່ນຂອງນັກຮົບປະຕິວັດ ເຖິງ ແມ່ນໄລຍະທ່າມກາງຂອງການປະຕິວັດ ສະພາບເຫຼັກຫຼາຍກວ່າຖ່ານ ແຕ່ນັກຮົບກອງພັນທີສອງກໍຍັງຢືນຢັນຄຸນທາດ ປະຕິວັດອອກໃຫ້ເຫັນໄດ້ຄວາມອົງອາດກ້າຫານເດັດດ່ຽວໜຽວແໜ້ນ ແລະ ມີຍຸດທະວິທີໃນການສູ້ຮົບສູງສົ່ງ.

ບົດເລື່ອງໄດ້ສ່ອງແສງຢ່າງຊື່ຕົງ ເພື່ອໃຫ້ຜູ້ອ່ານຮູ້ວ່າການປະຕິວັດກໍມີໄລຍະທ່າມກາງ ແຕ່ຍ້ອນມີນັກຮົບຜູ້ມີຄຸນສົມບັດປະຕິວັດ, ມີນໍ້າໃຈຮັກຊາດ, ຮັກປະຊາຊົນ ແລະ ມີນໍ້າໃຈເສຍສະຫຼະອັນສູງສົ່ງ, ມີມານະຈິດໃຈປະຕິວັດ, ມີ ຄວາມສະຫຼາດຫຼັກແຫຼມ ຍ້ອນແນວນັ້ນ ຈຶ່ງສາມາດຍາດໄດ້ຮັບໄຊຊະນະເປັນຂັ້ນໆມາ.

ເລື່ອງຍັງໄດ້ຍົກໃຫ້ເຫັນເຖິງພຶດຕິກຳຂອງພວກຮຸກຮານ, ພວກຂາຍຊາດນັ້ນ ແມ່ນທາດແທ້ຂອງພວກປະຕິການທີ່ໂຫດຮ້າຍເລີກແລບ ເຊິ່ງເປັນສັນດານຂອງຮຸກຮານ, ພວກເລວຊາມຮັບຈ້າງ ແຕ່ເຖິງເຂົາຈະມີກຳລັງຫຼາຍ, ມີອາວຸດທີ່ທັນສະໄໝກໍຕາມ, ສຸດທ້າຍກໍໜີບໍ່ພົ້ນຈາກການປະລາໄຊຢ່າງແສນເຈັບແສບນັ້ນໄດ້.

**2.3 ຄຸນຄ່າດ້ານເນື້ອໃນຂອງນະວະນິຍາຍ ກອງພັນທີສອງ**

ກອງພັນທີສອງ ໄດ້ສະແດງເຖິງລັດທິວິລະຊົນປະຕິວັດ ນັກປະພັນ ສ. ບຸບ ຜານຸວົງ ໄດ້ພະຍາຍາມສ່ອງແສງ ຈຸດມຈກາງຂອງທາດແທ້ຄຸນສົມບັດຂອງນັກຮົບປະຕິວັດ ເຮັດໃຫ້ຕົວຂອງວິກຳປະຕິວັດ ວິລະຊົນລວມໝູ່ (ກົມກອງ ວິລະຊົນ) ໄດ້ປາກົດອອກດ້ວຍຮູບພາບຢ່າງມີຊີວິດຊີວາ ເມື່ອອ່ານກອງພັນທີສອງແລ້ວ ຜູ້ອ່ານຮູ້ສຶກວ່າຕົນເອງໄດ້ອ່ານ ປະຫວັດສາດໜ້າທີ່ສຳຄັນທີ່ສຸດ ເຊິ່ງບັນທຶກກ່ຽວກັບປະຫວັດສາດໂດຍຫຍໍ້-ວິລະຊົນຂອງຊາດ ເຫັນໄດ້ໜ້າ ປະຫວັດສາດນັ້ນຢ່າງລະອຽດເລິກເຊິ່ງ ແລະ ມີຊີວິດຊີວາ.

ວິລະກຳກອງພັນທີສອງ ໄດ້ກາຍເປັນແວ່ນແຍງອັນໃສແຈ້ງຂອງການຕໍ່ສູ້ກູ້ຊາດ, ຂອງກອງທັບປະຊາຊົນໃນ ໄລຍະຕໍ່ມາ ໃນສະພາບແວດລ້ອມທີ່ເຕັມໄປດ້ວຍຄວາມອັນຕະລັດ, ກັນດານ, ຊີວິດຂອງນັກຮົບພວມຖືກນາບຂູ່ຈາກ ປາຍປືນ ເໝືອນກັບໄຂ່ອຍຫີນ ແຕ່ຢ່າງນັ້ນກໍຕາມນັກຮົບຍັງທຸ່ນທ່ຽງ, ບໍ່ລັງເລຄອນແຄນ ຍິ່ງໄປກວ່ານັ້ນເຂົາເຈົ້າຍັງ ເຊື່ອໝັ້ນຕໍ່ໄຊຊະນະຂອງຕົນເອງ ແລະ ຂອງການປະຕິວັດ, ບໍ່ຫຼົງໄຫຼນຳການຕົວະຍົວະຫຼອງລວງ, ການຊື້ຈ້າງຈອບອອຍ ຫຼື ການນາບຂູ່ໃດໆຂອງສັດຕູຜູ້ຮຸກຮານ.

ແບບແຜນການເຮັດວຽກ, ການດຳລົງຊີວິດ, ການສູ້ຮົບຂອງກອງພັນທີສອງ ແມ່ນແບບແຜນທີ່ດີງາມແມ່ນແບບແຜນຂອງຄົນແບບໃໝ່, ເຂົາເຈົ້າມີສິດສະເໝີພາບ, ມີລະບຽບຮຽບຮ້ອຍ ເຮັດວຽກເພື່ອຜົນປະໂຫຍດສ່ວນລວມ ບໍ່ຄິດຄ່າຕອບແທນ, ກ້າເສຍສະຫຼະຊີວິດເລືອດເນື້ອຂອງຕົນເອງ ເພື່ອຊາດ, ເພື່ອປະຊາຊົນຢ່າງແທ້ຈິງ.

ການສູ້ຮົບ, ການອອກແຮງງານເພີ່ມພູນຜະລິດຜົນ, ການຂົນຂວາຍປະຊາຊົນແມ່ນໜ້າທີ່ ແລະ ແມ່ນໂຮງຮຽນ ຂອງນັກຮົບປະຕິວັດ ຍ້ອນແນວນັ້ນ, ຈຶ່ງເຮັດໃຫ້ເຂົາເຈົ້າເຕີບໃຫຍ່ຂະຫຍາຍຕົວຢ່າງຮອບດ້ານ. ເຖິງວ່າສະພາບສັດຕູຈະ ໜີບຮັດ ແຕ່ນັກຮົບປະຕິວັດຍັງຫາເວລາເຮັດຮົ້ວເຮັດສວນປູກຜັກ ໂດຍຍຶດຖືຄຳເວົ້າທີ່ວ່າ: ເພິ່ງຕົນເອງ, ກຸ້ມຕົນເອງ ເຊິ່ງກົງກັບຄຳຂວັນ "ພະລາທິການກັບທີ່ ” ຂອງກອງທັບເຮົາ. ນອກຈາກສະແດງເຖິງແບບແຜນຂອງນັກຮົບແລ້ວ ຍັງ ສະແດງໃຫ້ເຫັນເຖິງແບບແຜນຂອງນັກຮົບແລ້ວ ຍັງສະແດງໃຫ້ເຫັນເຖິງມູນເຊື້ອອັນດຸໝັ້ນໃນການອອກແຮງງານຂອງ ປະຊາຊົນລາວບັນດາເຜົ່າກໍຄືນັກຮົບປະຕິວັດລາວ ເຊິ່ງເຄີຍມີມູນເຊື້ອດຸໝັ່ນມາແຕ່ບູຮານນະການ. ສິ່ງນັ້ນຢັ້ງຢືນໄດ້ວ່າ ການປະຕິວັດບໍ່ໄດ້ຫ່າງເຫີນຈາກປະຊາຊົນ.

ທາດແທ້ອັນຕົ້ນຕໍໜຶ່ງອີກແມ່ນ ຄວາມອົງອາດກ້າຫານ, ເດັດດ່ຽວໜຽວແໜ້ນບໍ່ຍອມໃຫ້ສັດຕູເອົາຊະນະ, ເຖິງ ວ່າສັດຕູຈະກາຍປືນໃສ່ຮົ້ວຄ້າຍ ແລະ ປິດລ້ອມຮອບດ້ານກໍຕາມ, ນັກຮົບກອງພັນທີສອງກໍບໍ່ໄດ້ສະເທືອນໃຈ, ຍິ່ງໄປ ກວ່ານັ້ນ, ຍັງເພີ່ມຄວາມເດັດດ່ຽວເຂັ້ມແຂງ ແລະ ເພີ່ມກຳລັງໃຈຢາກຕີສັດຕູໃຫ້ມຸ່ນທະລາຍໄປຈົນໝົດກ້ຽງ. ແຕ່ເພື່ອ ເອົາຊະນະສັດຕູທີ່ມີກຳລັງແຮງເໜືອກວ່າຕົນນັ້ນ ກອງພັນທີສອງໄດ້ໝູນໃຊ້ຄວາມສາມາດຂອງຕົນໃຫ້ຖືກກັບຄວາມຈິງ ຂອງສະໜາມຮົບ ແລະ ໃຊ້ຄວາມກ້າຫານເພື່ອຕີຕ້ານກັບສັດຕູ ເພາະເຂົາເຈົ້າຮູ້ຄິດໄລ່ຜົນໄດ້ຜົນເສຍໝາຍຄວາມວ່າບໍ່ ລົງທຶນດ້ານກຳລັງແຕ່ເອົາຊະນະໃຫ້ໄດ້.

ເລື່ອງຍັງໄດ້ສັນລະເສີນນໍ້າໃຈອັນບໍລິສຸດຜຸດຜ່ອງ ນັ້ນແມ່ນຄວາມຮັກຊາດ, ຮັກປະຊາຊົນ, ເຄົາລົບຮັກທ່ານ ຜູ້ນຳຂອງຕົນເອງກໍ່ຄືຂອງຊາດ, ຄວາມຮັກອັນບໍລິສຸດຂອງຄູ່ບ່າວສາວ, ຜົວເມຍ, ມິດສະຫາຍຢ່າງສຸດຊຶ້ງ ແລະ

ໝັ້ນ ໜຽວ ໄດ້ກ່າຍເປັນກໍາແຮງເຊິ່ງບໍ່ມີສັດຕູຕົວໃດ ຫຼື ອຸປະສັກໃດໆມາທໍາລາຍມ້າງເພ ແລະ ເອົາຊະນະໄດ້. ຕໍ່ກັບ ປະຊາຊົນພວກເຂົາເຈົ້າຖືວ່າຄືກັບພໍ່ແມ່ຄີງຂອງຕົນ, ຊ່ວຍເຫຼືອດ້ວຍຄວາມຈິງໃຈ ທັງປຸກລະດົມສະຕິຊາດໃຫ້ພໍ່ແມ່ ປະຊາຊົນ (ຊ່ວຍເຮັດວຽກ, ສອນໜັງສືໃຫ້ພໍ່ແມ່ປະຊາຊົນ) ຈຶ່ງເຮັດໃຫ້ປະຊາຊົນໄວ້ເນື້ອເຊື່ອໃຈຕະຫຼອດໄປ.

ຕໍ່ກັບທ່ານຜູ້ນໍາຂອງການປະຕິວັດ ຕັ້ງແຕ່ຜູ້ບັນຊາກອງພັນຂອງຕົນຂຶ້ນເຖິງຜູ້ນໍາພັກ-ລັດ ແມ່ນນັກຮົບກອງພັນ ທີສອງໄດ້ນັບຖືເໝືອນດັ່ງພໍ່ແມ່ຄອບຄົວດຽວກັນ ບໍ່ແມ່ນການນັບຖືແບບນາຍ ດັ່ງທະຫານຝ່າຍສັດຕູ. ເຂົາເຈົ້າຍອມເອົາ ຊີວິດແລກ ເພື່ອຄວາມຍືນຍົງຂອງທ່ານຜູ້ນໍາ (ໃນເວລາມາຕ້ອງເອົາທ່ານຜູ້ນໍາອອກຈາກຄຸກໂພນເຄັງເຫຼັ້ມ III).

ຕໍ່ກັບຄອບຄົວລູກເມຍ ແລະ ຄູ່ບ່າວ-ສາວແລ້ວ ເຫັນວ່ານັກຮົບປະຕິວັດແມ່ນ ຜູ້ທີ່ມີຄວາມຮັກສ່ວນຕົວຢ່າງ ດູດດື່ມທີ່ສຸດ. ເຊິ່ງຄວາມຮັກນັ້ນ, ໄດ້ຕີຖ້ອຍທໍານອງ ໃສ່ຮ້າຍປ້າຍສີຂອງພວກປະຕິການຂວາຈັດທີ່ວ່າ: ຄົນປະຕິການແມ່ນພວກທີ່ປາສະຈາກຄວາມຮັກສ່ວນຕົວອ່ອມລູກເມຍ (ບໍ່ມີຜົນປະໂຫຍດສ່ວນຕົວ). ໃນຕົວຈິງຂອງເລື່ອງໄດ້ພັນລະ ນາຢ່າງມີຊີວິດຊີວາ ເຖິງອາລົມຈິດ ແລະ ການກະທໍາຂອງຕົວລະຄອນເຊັ່ນ: ການຕັດສິນໃຈຜ່າວົງປິດລ້ອມຂອງສັດຕູ ເຊິ່ງມີທັງຄອບຄົວລູກເມຍ ແລະ ເດັກນ້ອຍ, ແມ່ມານນັ້ນ, ແມ່ນການກະທໍາທີ່ມີມະນຸດສະທໍາອັນສູງສົ່ງ.

ຄວາມຮັກອັນຫວານຊື່ນ ແລະ ມີຄວາມໝາຍອັນເລີກເຊິ່ງຂອງຄູ່ບ່າວ-ສາວ ກໍໄດ້ພັນລະນາຕະຫຼອດໄລຍະທາງ ທັງສີເຫຼັ້ມເຊັ່ນ: ຄູ່ຂອງ ຄໍາແດງ-ໂສພາ, ຄໍາໝັ້ນ-ສົມພອນ ເຊິ່ງເຂົາເຈົ້າຮັກກັນບົນເສັ້ນທາງຕໍ່ສູ້, ຮັກກັນກາງສະໜາມ ຮົບອັນດຸເດືອດ. ນອກຈາກຄວາມຮັກຄວາມເຂົ້າໃຈ ແລະ ຄວາມເປັນຫວ່ງເປັນໄຍກັນແລ້ວ, ພວກເຂົາຍັງຮັກອຸດົມ ການຂອງກັນ ແລະ ກັນ. ພວກເຂົາໄດ້ເອົາຄວາມຮັກສ່ວນຕົວຕິດພັນກັບໜ້າທີ່ວຽກງານສ່ວນລວມ, ຍິ່ງຮັກກັນເທົ່າໃດ ກໍ່ຍິ່ງຊຸກຍູ້ກໍ່ສ້າງເຊິ່ງກັນ ແລະ ກັນໃຫ້ມີຄວາມກ້າວໜ້າ ແຂ່ງຂັນກັນສ້າງຜົນງານໃຫ້ຫຼາຍ, ພວກເຂົາຮູ້ສຶກມີຄວາມສຸກ, ຄວາມພາກພູມໃຈ ເມື່ອເຫັນຄູ່ຮັກຂອງຕົນມີຄວາມກ້າວໜ້າໃນວຽກງານ. ສິ່ງນີ້ໄດ້ກົງກັນຂ້າມກັບຄວາມຮູ້ແບບ ຊະຊາຍ, ຫຼິ້ນກິນຟຸມເຟືອຍຂອງທະຫານຝ່າຍຂວາ.

ການພົວພັນກັບໝູ່ເພື່ອນສະຫາຍເຫັນວ່າ ນັກຮົບກອງພັນທີສອງ ໄດ້ເປັນແບບຢ່າງໃຫ້ທຸກຄົນທີ່ພົວພັນກັນໃນ ສັງຄົມໃໝ່ ສະແດງໃຫ້ເຫັນຄົນ 7 ກອງຮ້ອຍຖືຄືຄອບຄົວດຽວກັນ, ມີຄວາມເຂົ້າໃຈ ແລະ ປອງດອງກັນ, ນັບຖືເຊິ່ງ ກັນ ແລະ ກັນ ເຊິ່ງນັບແຕ່ຂັ້ນນໍາຮອດນັກຮົບທັງຊາຍ ແລະ ຍິງທຸກຊົນຊາດຊົນເຜົ່າ. ສິ່ງນັ້ນ, ເຮັດໃຫ້ນັກຮົບທຸກຄົນມີ ຄວາມເບີກບານມ່ວນຊື່ນ, ມີກໍາລັງແຮງ, ມີຄວາມສາມາດທັບມ້າງຄົມເຫຼັກຂອງສັດຕູອອກໄປສູ່ເຂດທີ່ໝັ້ນ ແລ້ວສືບຕໍ່ ຕໍ່ສູ້ຍາດເອົາໄຊຊະນະຢ່າງລຽນຕິດ.

**2.4 ໂສມໜ້າທາດແທ້ຂອງທະຫານສັດຕູທີ່ຖືກພັນລະນາຢ່າງເປີດເຜີຍ**

ນະວະນິຍາຍ “ ກອງພັນທີສອງ " ທັງສີເຫຼັ້ມຈະເຫັນໄດ້ການປະທະກັນທັງສອງຝ່າຍ ເຊິ່ງນັກປະພັນໄດ້ພັນລະ ນາໃຫ້ເຫັນຢ່າງຈະແຈ້ງເຖິງກໍາລັງຂອງແຕ່ລະຝ່າຍ. ສໍາລັບກໍາລັງຂອງຝ່າຍທີ່ເປັນຕີນມືຂອງອາເມລິກາທີ່ຂາຍຊາດນັ້ນ, ໄດ້ເປີດອອກໃຫ້ເຫັນ ນັບແຕ່ຮູບນອກຈົນຮອດເນື້ອແທ້ ເຊິ່ງເລີ່ມແຕ່ການປະພຶດຈົນເຖິງແນວຄິດຈິດໃຈແລະ ຄວາມ ສິ້ນເຄີຍຂອງຜູ້ທີ່ຮັບຈ້າງຂາຍຊາດ, ເພື່ອແລກເອົາຜົນປະໂຫຍດສ່ວນຕົວອັນເລັກນ້ອຍຢ່າງຊົ່ວຊາມທີ່ສຸດ. ພວກເຂົາ ເຫັນແກ່ເງິນໂດຣາ, ເຫັນແກ່ການຫຼິ້ນກິນຟູມເຟືອຍ ເຊິ່ງເຂົາຖືວ່າແມ່ນຄວາມສຸກຂອງເຂົາ, ພວກເຂົາມັກອວດອ້າງທະ ນົງຕົວ ແລະ ຝາກຄວາມຫວັງໄວ້ກັບຈັກກະພັດອາເມລິກາຜູ້ຮັ່ງມີ, ເຊິ່ງພວກເຂົາຖືວ່າແມ່ນການຊ່ວຍເຫຼືອອ່ອມມື ຂອງມະຫາມິດ ໂດຍບໍ່ຄໍານຶງເຖິງຄວາມເສື່ອມເສຍຂອງຕົນ ດັ່ງຄໍາເວົ້າທີ່ວ່າ “ ກອງທັບເຮົາມີອາເມລິກາ ເຊິ່ງເປັນ ປະເທດທີ່ຮັ່ງມີ ແລະ ເຂັ້ມແຂງກວ່າໝູ່ໃນໂລກຊ່ວຍເຫຼືອ ຢາກໄດ້ຫຍັງອາເມລິກາສົ່ງມາໃຫ້ໂລດ ດຽວນີ້ປືນໃຫຍ່, ລົດ ຫຸ້ມເກາະ, ເຮືອບິນຂັບໄລ່ຖິ້ມລະເບີດຂະໜາດບັດໄຫຼເຂົ້າມາ... "

ນອກນັ້ນ, ພວກມັນຍັງຍາດຊີງ, ແກ່ງແຍ້ງກັນ ເພື່ອຜົນປະໂຫຍດສ່ວນຕົວ ດ້ວຍການຍາດເປັນໝາພານ, ເປັນ ມ້າທີ່ບອກໄດ້ໃຊ້ຟັງຂອງຈັກກະພັດອາເມລິກາ ກົງກັນຂ້າມຕໍ່ກັບປະຊາຊົນຊໍ້າພັດເປັນປໍລະປັກ, ບໍ່ຍອມຮັບຮູ້ບົດບາດ ຂອງການປະຕິວັດ, ຍາມໃດພວກເຂົາກໍຫວັງດັບມອດກໍາລັງປະຕິວັດຢູ່ວຽງຈັນພວກມັນຍັງໄດ້ຈັບກຸມຄຸມຂັງບັນດາ ທ່ານຜູ້ນໍາເຮົາເຂົ້າຄຸກ.

ເວົ້າລວມແລ້ວທາດແທ້ອັນຊົ່ວຊ້າ ແລະ ໄຮ້ສິນທໍາຂອງສັດຕູ, ນອກຈາກນາຍ ແລະ ທະຫານຮັບຈ້າງແລ້ວ, ທາດແທ້ຂອງນາຍເໜືອຫົວຂອງອາເມລິການັ້ນ ເຖິງຜູ້ແຕ່ງບໍ່ໄດ້ ພັນລະນາແຈ້ງກໍຕາມ ແຕ່ຜູ້ອ່ານກໍຮູ້ໄດ້ທາດແທ້

ການ ຮຸກຮານຫວັງມ້າງເພຄວາມເປັນຊາດ, ດັບສູນການປະຕິວັດນັ້ນ, ແມ່ນໂຫດຮ້າຍປ່າເຖື່ອນທີ່ສຸດ ແຕ່ຄວາມສາມາດຂອງ ພວກມັນກໍບໍ່ປະສົບຜົນສຳເລັດຕາມທີ່ຄາດຫວັງ. ສິ່ງທັງໝົດເລົ່ານີ້ໄດ້ເພີ່ມທະວີໄຟແຄ້ນໃຫ້ແກ່ປະຊາຊົນລາວຜູ້ຮັກຊາດ ນັບມື້ນັບສູງຂຶ້ນ.

## 3. ສິລະປະການປະດິດແຕ່ງ

ເລື່ອງໄດ້ພັນລະນາໄປຕາມລວງຍາວຂອງປະຫວັດສາດຢ່າງຊື່ຕົງແຕ່ກໍ່ໄດ້ປະດິດສ້າງມູນພາກປັ້ນແຕ່ງຢ່າງຄ່ອງແຄ້ວ ເຮັດໃຫ້ຮູ້ອ່ານໄດ້ຮູ້ເຖິງໜ້າປະຫວັດສາດຢ່າງຈະແຈ້ງ ແລະ ມີຊີວິດຊີວາເລິກເຊິ່ງການສ້າງຕົວລະຄອນໃນແຕ່ລະຝ່າຍ ລ້ວນແຕ່ສາມາດສະແດງໃຫ້ເຫັນລັບສະນະລວມທີ່ເປັນຕົວແທນຂອງຕົວຈິງ ນັ້ນແມ່ນເນື້ອແທ້ຂອງແຕ່ລະຝ່າຍ. ການ ພັນລະນາຮູບນອກຂອງຕົວລະຄອນຖືວ່າເດັ່ນກວ່າໝູ່, ສ່ວນການພັນລະນາດ້ານແນວຄິດຈິດໃຈສ່ວນຫຼາຍແມ່ນ ສະແດງຜ່ານການເຄື່ອໄຫວ, ການສົນທະນາຂອງຕົວລະຄອນ.

ທ່ານ ສຸວັນທອນ ບຸບຜານຸວົງ ໄດ້ຍົກໃຫ້ເຫັນຕົວລະຄອນໃນຫຼາຍປະເພດຄົນ, ແຕ່ລະປະເພດລ້ວນແຕ່ມີລັກສະນະ ສະເພາະຂອງຕົນ, ເປັນຕົ້ນແມ່ນຕົວລະຄອນນັກຮົບກອງພັນທີສອງ ເຊິ່ງມີຈຸດລວມແມ່ນອຸດົມຄະຕິປະຕິວັດ, ນ້ຳໃຈຕໍ່ສູ້ ບໍ່ຍອມຈຳນົນ, ບໍ່ທໍ້ຖອຍ ຕັ້ງໜ້າຜ່ານຜ່າອຸປະສັກ ແລະ ຕໍ່ສູ້ເພື່ອປະເທດຊາດ.

**+ ສະຫຼຸບລວມ**

ໂດຍອີງຕາມເຫດການທີ່ມີຈິງຂອງປະຫວັດສາດ, ນັກປະພັນ ສຸວັນທອນ ບຸບຜານຸວົງ ໄດ້ປັ້ນແຕ່ງມາເປັນນະວະ ນິຍາຍປະຫວັດສາດ. ເຖິງເຫດການປະຫວັດສາດທີ່ແທ້ຈິງກັບນະວະນິຍາຍມີບ່ອນບໍ່ຄືກັນກໍຕາມ, ນັ້ນກໍຍ້ອນວ່ານັກ ປະພັນໄດ້ສັງລວມເອົາຫຼາຍເຫດການທີ່ເກີດຂຶ້ນໃນສັງຄົມລາວ ແລະ ການຕໍ່ສູ້ຂອງກອງທັບ ແລະປະຊາຊົນລາວ.

ນັກປະພັນໄດ້ຊ່ວຍໃຫ້ຜູ້ອ່ານຮູ້ໄດ້ເຖິງເຫດການປະຫວັດສາດທີ່ສຳຄັນ ແລະ ການຫັນທິດຕໍ່ສູ້ດ້ານການເມືອງມາ ຕໍ່ສູ້ດ້ວຍອາວຸດ.

ເລື່ອງ " ກອງພັນທີສອງ " ໄດ້ສະແດງເຖິງມູນເຊື້ອລັດທິວິລະຊົນປະຕິວັດຂອງກອງທັບເຮົາ (ກົມກອງວິລິຊົນ, ບຸກຄົນວິລະຊົນແຫ່ງຊາດ) ເຫັນໄດ້ຄົນໃໝ່ທີ່ມີຄຸນຄ່າໃໝ່, ມີຄວາມງາມຂອງລັດທິວິລະຊົນປະຕິວັດ-ລັດທິລວມໝູ່. ດ້ວຍວິທີສະແດງໃໝ່ ສຸວັນທອນ ບຸບຜານຸວົງ ບໍ່ພຽງແຕ່ສ່ອງແສງໃຫ້ເຫັນເຖິງເນື້ອໃນຕໍ່ສູ້ຂອງກອງພັນນີສອງ ແລະ ກອງທັບປະຊາຊົນລາວເທົ່ານັ້ນ. ແຕ່ຍັງສາມາດສ່ອງແສງຂອບເຂດກວ້າງຂວາງເຊັ່ນ: ບົດບາດຂອງການປະຕິວັດຕໍ່ຊີວິດ ຂອງປະຊາຊົນລາວ ແຕ່ກອງພັນທີສອງ ຍັງໄດ້ຂົນຂວາຍ, ຊ່ວຍເຫຼືອລູກເມຍຂອງພວກສັດຕູນຳອີກ.

ເວົ້າລວມແລ້ວ ນະວະນິຍາຍ " ກອງພັນທີສອງ " ໄດ້ຮັບຜົນສຳເລັດດ້ານເນື້ອໃນ, ຮູບການດີສົມຄວນ, ສາມາດປຸ ພື້ນໃຫ້ແກ່ວັນນະຄະດີຂອງຊາດລາວເຮົາ, ທັງໄດ້ເປັນບົດຮຽນໃຫ້ແກ່ການປະດິດແຕ່ງ, ວິທີສ່ອງແສງຕາມທັດສະນະທີ່ ກ້າວໜ້າຂອງວັນນະຄະດີໃນຕໍ່ມາ.

# ບົດຕົວຢ່າງ
# ວິໄຈບົດເລື່ອງ "ກຸຫຼາບປ່ຽນສີ"

## 1. ທີ່ມາຂອງເລື່ອງ

ບົດເລື່ອງ "ກຸຫຼາບປ່ຽນສີ" ໂດຍ ນາງ ຄອນມະນີ ອຸດົມສຸກ ເປັນບົດເລື່ອງທີ່ແຕ່ງຕາມຊີວິດຕົວຈິງ ເຊິ່ງເພິ່ນພົບພໍ້ໃນຊ່ວງໄລຍະເວລາ 5 ປີຜ່ານມາທີ່ໄດ້ເຂົ້າມາຮຽນຢູ່ວິທະຍາໄລຄູຫຼວງພະບາງ ໂດຍສະເພາະແມ່ນເລື່ອງຄວາມຮັກລະຫວ່າງບ່າວ-ສາວ ອັນພາໃຫ້ບາງຄັ້ງຕ້ອງເກີດຄວາມໂສກເສົ້າໝົ່ນໝອງ ນໍ້າຕາໄຫຼຍ້ອນຄວາມຮັກ ແລະ ຄວາມບໍ່ເຂົ້າໃຈກັນນັ້ນເອງ.

## 2. ເນື້ອໃນລວມຂອງເລື່ອງ

ເວົ້າເຖິງຄວາມຮັກອັນຊື່ສັດບໍລິສຸດຂອງຍິງສາວທີ່ມີຕໍ່ຄົນຮັກຂອງຕົນ ເຊິ່ງຍອມທຸ້ມເທທຸກສິ່ງທຸກຢ່າງເພື່ອເຂົາ ແຕ່ຊໍ້າພັດຖືກສະໜອງກັບດ້ວຍນໍ້າຕາ ເນື່ອງມາຈາກເຂົາເປັນຄົນມັກປິດບັງເຫດການຊີວິດຕົວຈິງ ແລະ ທັງເປັນຄົນຫຼາຍໃຈເຮັດໃຫ້ຊີວິດຂອງຍິງສາວຄົນໜຶ່ງຕ້ອງໂສກເສົ້າ. ນອກນັ້ນຍັງເວົ້າເຖິງຄວາມຮັກຂອງບ່າວ-ສາວໃນສະໄໝປັດຈຸບັນ ທີ່ຕ່າງຝ່າຍກໍ່ສະແດງຄວາມຮັກ ແລະ ຄວາມສາມາດໃນການຍາດແຍ່ງຄວາມຮັກກັບຄືນມາ ໂດຍການໃຊ້ທ່າທີລີລາ ຫຼື ຄໍາເວົ້າເພື່ອບັງບຽດສຽດສີຜູ້ຍິງຄົນອື່ນທີ່ຖານະຕໍ່າຕ້ອຍກວ່າຕົນ ໂດຍຍົກຖານະຄອບຄົວມາປຽບທຽບວ່າໃຜມີຄວາມເໝາະສົມກວ່າກັນ ເພື່ອເຮັດໃຫ້ຝ່າຍໜຶ່ງເປັນຄົນຫຼີກທາງໄປເອງ.

## 3. ແບ່ງຕອນ

**ບົດເລື່ອງ "ກຸຫຼາບປ່ຽນສີ" ແບ່ງອອກເປັນ 3 ຕອນຄື:**

➢ ຕອນທີ 1 ແຕ່ຕົ້ນ ຈົນເຖິງ ກັບການປາກົດຕົວຂອງຜູ້ຍິງທີ່ມີຊື່ວ່າ ເມ

ເນື້ອໃນ ຕອນນີ້ເວົ້າເຖິງການອອກຈາກບ້ານມາຮຽນຂອງຍິງສາວຊື່ ນ້ອຍ ທີ່ໄດ້ພົບພໍ້ກັບຄູ່ແຂ່ງຊື່ ເມ ແລະ ໄດ້ ຕອບໂຕ້ກັນກັບເລື່ອງທີ່ເຂົາທັງສອງຮັກຊາຍຄົນດຽວກັນ.

➢ ຕອນທີ 2 ແຕ່ຈາກນັ້ນບໍ່ພໍເທົ່າໃດ ຈົນເຖິງ ເພາະຕົນເອງເລືອກເກີດເອງບໍ່ໄດ້

ເນື້ອໃນ ເວົ້າເຖິງການມາຄອບລານາງນ້ອຍ ເພື່ອໄປຮຽນຕໍ່ຢູ່ຫວຽດນາມຂອງຊາຍໜຸ່ມຊື່ ຕ່ອບ ແລະ ການນັດກັນເພື່ອສົ່ງ ຕ່ອບ ອອກເດີນທາງໄປຮຽນລະຫວ່າງ ຕ່ອບ ແລະ ນາງນ້ອຍ ອັນກາຍເປັນໝາກນັດເນົ່າ.

➢ ຕອນທີ 3 ແຕ່ມື້ນັ້ນນາງນ້ອຍບໍ່ກັບບ້ານ ຈົນເຖິງ ສຸດທ້າຍ

ເນື້ອໃນ ເວົ້າເຖິງຄວາມໂສກເສົ້າເສຍໃຈຂອງນາງນ້ອຍ ຫຼັງຈາກເຫັນຄົນຮັກຂອງຕົນເປັນຂອງຄົນອື່ນ ແລະ ກໍ່ຄາດບໍ່ເຖິງວ່າຕ່ອບຍັງຮັກຕົນເໝືອນເດີມ.

## 4. ວິເຄາະ

ສັງຄົມບ່າວ-ສາວໃນສະໄໝປັດຈຸບັນ ມັກຈະເປັນຄົນທີ່ມີຄວາມສາມາດໃນເລື່ອງທີ່ຕົນເອງພູມໃຈ ເຮັດໂດຍບໍ່ຄໍານຶງເຖິງບັນຫາທີ່ຈະຕາມມາ, ມັກໃຊ້ອາລົມເຂົ້າໃນການແກ້ໄຂບັນຫາ, ຮັກ-ຫຶງຫວງຄົນຮັກຂອງຕົນເອງເກີນໄປຈົນບາງຄັ້ງເດີນເຂົ້າໄປຫາຄູ່ແຂ່ງແລ້ວກໍ່ຕອບໂຕ້, ກ່າວປະນາມສຽດສີ ໂດຍອ້າງເຖິງເລື່ອງຖານະເສດຖະກິດ, ຄວາມຮູ້ຄວາມສາມາດ, ສາຍພົວພັນລະຫວ່າງພໍ່ແມ່ທັງສອງຝ່າຍ... ເພື່ອໃຫ້ຝ່າຍໜຶ່ງເປັນຜູ້ຍອມແພ້ ຫຼື ເປັນຜູ້ຫຼີກທາງແກ່ຕົນເອງໂດຍບໍ່ຄິດເລີຍວ່າເຮົາທຸກຄົນເປັນເພື່ອນມະນຸດດ້ວຍກັນ. ດັ່ງຕົວລະຄອນ ນາງ ເມ ເປັນຕົວລະຄອນທີ່ໂມໂຫ, ມັກ ເອົາຖານະມາປຽບທຽບເພື່ອບີບບັງຄັບຜູ້ຍິງຄົນອື່ນທີ່ຕໍ່າຕ້ອຍກວ່າຕົນໃຫ້ຫຼີກທາງແກ່ຕົນເອງ...

ການທີ່ເຮົາເປັນຄົນມັກປິດບັງບັນຫາ, ຕົວະຍົວະຫຼອກລວງຄົນອື່ນ, ຮັກກັບຜູ້ຍິງຫຼາຍໆຄົນໃນຂະນະດຽວກັນ, ໄປຫາຄົນໃດກໍ່ບອກວ່າຮັກຄົນນັ້ນ, ໃຫ້ຄວາມຫວັງແກ່ຜູ້ຍິງທຸກໆຄົນອັນພາໃຫ້ພວກເຂົາຕ້ອງຜິດຖຽງກັນ, ໂສກເສົ້າຫງ່ອມເຫງົາ, ເສຍໃຈຫ້ອງໄຫ້ຫຼັ່ງໄຫຼນໍ້າຕາຍ້ອນຕົນເອງນັ້ນມັນບໍ່ດີ. ດັ່ງຕົວລະຄອນ ຕ່ອບ ເປັນຕົວລະຄອນທີ່ມີຖານະດີ, ມີກຽດສັກສີ, ສະຫຼາດສ່ອງໃສ ແຕ່ເປັນຄົນທີ່ມັກຕົວະຍົວະຜູ້ຍິງສະເໝີມາ ແລະ ແກ້ຕົວເກັ່ງນັ້ນມັນສາມາດເຮັດໃຫ້ ສັງຄົມມີຄວາມສັບສົນ, ເກີດມີບັນຫາການປະຖະກັນ, ເພື່ອກາຍເປັນສັດຕູກັນກໍ່ເປັນໄປໄດ້. ດັ່ງນັ້ນ, ເຮົາບໍ່ຄວນນໍາເອົາມາເປັນແບບຢ່າງແກ່ຄວາມຮັກຂອງເຮົາ.

ຄວາມຊື່ສັດບໍລິສັດ, ຮັກດຽວໃຈດຽວ, ເຊື່ອໝັ້ນໃນຄວາມຮັກທີ່ມີຕໍ່ກັນເປັນຄວາມຮັກທີ່ຖືກຕ້ອງຕາມຮີດຄອງປະເພນີ. ຫາກວ່າອີກຝ່າຍໜຶ່ງບໍ່ເຕັມໃຈທີ່ຈະສ້າງຄວາມຝັນດ້ວຍກັນເຮົາກໍ່ຄວນປ່ອຍໃຫ້ເຂົ້າໄປຕາມທາງທີ່ເຂົາເລືອກເອົາ ແລະ ບໍ່ຄວນຢຸດຢັ້ງເຂົ້າໄວ້ ແຕ່ກໍຄວນທີ່ຈະຕ້ອງພິສູດໃຫ້ລະອຽດແນ່ນອນເສຍກ່ອນ ຈຶ່ງຄ່ອຍລົງມືປະຕິບັດມັນຈິງບໍ່ສວາຍແກ່ເຮົາ ເພາະການເວລາມັນມີຄຸນຄ່າທີ່ສຸດສຳລັບຄົນເຮົາ.

**5. ສະຫຼຸບ**

**1. ດ້ານເນື້ອໃນ**

ຜູ້ແຕ່ງໄດ້ສ່ອງແສງໃຫ້ພວກເຮົາເຫັນເຖິງສະພາບສັງຄົມປັດຈຸບັນທີ່ບ່າວ-ສາວມັກຈະມີຄວາມສາມາດໃນການຍາດແຢ່ງຄວາມຮັກດ້ວຍການໃຊ້ທ່າທີລີລາ ຫຼື ຄຳເວົ້າເພື່ອບັງບຽດສຽດສີເພື່ອນມະນຸດດ້ວຍກັນ ແລະ ຍັງສ່ອງແສງໃຫ້ເຫັນຄວາມຮັກອັນຊື່ສັດບໍລິສຸດຂອງຍິງສາວທີ່ມີຕໍ່ຄົນທີ່ຕົນຮັກ ເຊິ່ງຍອມທຸ້ມເທທຸກສິ່ງທຸກຢ່າງເພື່ອເຂົາ ແຕ່ຊໍ້າພັດຖືກສະໜອງກັບດ້ວຍນໍ້າຕາເນື່ອງມາຈາກເຂົາເປັນຄົນມັກປິດບັງເຫດການຊີວິດຕົວຈິງ ແລະ ທັງເປັນຄົນຫຼາຍໃຈເຮັດໃຫ້ ຊີວິດຂອງຍິງສາວຄົນໜຶ່ງຕ້ອງໂສກເສົ້າ.

**2. ດ້ານສິລະປະການແຕ່ງ**

ຜູ້ແຕ່ງໄດ້ໃຊ້ສັບພາສາທຳມະດາເຂົ້າໃນການປະດິດຄິດແຕ່ງ, ອ່ານງ່າຍເຂົ້າໃຈໄວ, ການສ້າງໂຄງເລື່ອງແມ່ນສ້າງໄປຕາມແຕ່ລະຂັ້ນຕອນ ຫຼື ເວລາຕົວຈິງທີ່ເພິ່ນພົບພໍ້, ຈັດຮຽງຄຳສັບໄດ້ດີ, ມີເນື້ອໃນເລິກເຊິ່ງ, ສາມາດສ້າງຄວາມດຶງດູດຈິດໃຈແກ່ຜູ້ອ່ານຜູ້ຟັງໄດ້.

## ບົດເລື່ອງ ກຸຫຼາບປ່ຽນສີ

ລົດເມສາຍອຸດົມໄຊ-ຫຼວງພະບາງຖ້ຽວນີ້ເຕັມໄປດ້ວຍຄົນໂດຍສານ ໂດຍສະເພາະກໍແມ່ນນັກສຶກສາວິທະຍາໄລຄູຫຼວງພະບາງ, ນາງນ້ອຍ ແມ່ນໜຶ່ງໃນຈຳນວນນັກສຶກສາທີ່ມານຳລົດເມຖ້ຽວນັ້ນ, ນາງໄປຍາມພໍ່ກັບແມ່ຢູ່ແຂວງອຸດົມໄຊມາ, ພໍດີລົດມາຮອດ ແລະ ຈອດຢູ່ຄິວລົດສາຍເໜືອ ເມືອງຫຼວງພະບາງ ແຂວງຫຼວງພະບາງ ຄົນໂດຍສານກໍທະຍອຍກັນລົງຈາກລົດ, ນາງນ້ອຍຫິ້ວກະເປົາ ພວມຊອກຫາລົດເພື່ອຈະຈ້າງໃຫ້ໄປສົ່ງຢູ່ເຮືອນຂອງນ້າສາວ ເຊິ່ງເປັນບ່ອນທີ່ຕົນເອງມາພັກຢູ່ນຳ ເພື່ອສຶກສາຮໍ່າຮຽນໄດ້ເປັນເວລາ 4-5 ແລ້ວ. ແຕ່ກໍມີລົດເກັງສີດຳຄັນໜຶ່ງແລ່ນມາຈອດຢູ່ໃກ້ໆກັບນາງ, ຜູ້ຍິງຄົນໜຶ່ງຢູ່ໃນລົດຫັນແວ່ນລົງແລ້ວເວົ້າຂຶ້ນວ່າ:

ຂໍໂທດ… “ເຈົ້າຊື່ນາງນ້ອຍແມ່ນບໍ່”

ນາງນ້ອຍ ຢືນງຶງຕໍ່ຄຳຖາມຂອງຜູ້ຍິງແປກໜ້າຄົນນັ້ນ, ນາງລັ່ງເລບໍ່ຮູ້ແນວຊິຕອບ, ເມື່ອບໍ່ມີຄຳຕອບ ຜູ້ຍິງຄົນ ນັ້ນກໍໄຂປະຕູລົດຍ່າງມາຫາແລ້ວເວົ້າຂຶ້ນວ່າ:

“ຂ້ອຍຮູ້ວ່າ ເຈົ້າຊື່ນາງນ້ອຍ ເປັນແຟນຂອງອ້າຍຕ່ອນ, ຂໍໂທດເດີທີ່ຂ້ອຍຕ້ອງຮູ້ເລື່ອງພວກເຈົ້າ, ຖ້າບໍ່ເປັນການລົບກວນຂ້ອຍຂໍໄປສົ່ງເຈົ້າຢູ່ເຮືອນນຳສາວເຈົ້າໄດ້ບໍ່, ຂ້ອຍມີແນວຈະປຶກສາຫາລືເລື່ອງຂອງເຈົ້າກັບອ້າຍຕ່ອນ”

ນາງນ້ອຍກໍຢາກຮູ້ຄືກັນວ່າ ນາງຄົນນີ້ແມ່ນໃຜ ແລະ ເປັນຫຍັງຈຶ່ງມາເວົ້າເລື່ອງນີ້ກັບຕົນເອງ. “ຂອບໃຈເອື້ອຍຫຼາຍໆ, ເຮືອນຂອງນ້ອງຢູ່ບໍ່ໄກຈາກບ່ອນນີ້ປານໃດຈ້າງລົດໄປບໍ່ຮອດ 20 ນາທີ ກໍເຖິງແລ້ວ” “ນາງນ້ອຍ ! ຖືວ່າຂ້ອຍຂໍຮ້ອງ, ຂ້ອຍໄປສົ່ງເຈົ້າແລ້ວ ຂ້ອຍກໍຈະໄປ, ເພາະຂ້ອຍມີເລື່ອງຈຳເປັນແທ້ໆທີ່ຢາກເວົ້າກັບເຈົ້າສອງຕໍ່ສອງ”

ເມື່ອຖືກຂໍຮ້ອງ, ນາງນ້ອຍກໍບໍ່ກ້າປະຕິເສດ ນາງໄດ້ຂຶ້ນລົດຄັນນັ້ນດ້ວຍຄວາມຝືນໃຈ. ເມື່ອລົດແລ່ນໄປ, ຜູ້ເປັນເຈົ້າຂອງລົດກໍແນະນຳຕົນເອງວ່າ:

“ຂ້ອຍຊື່ ເມ ເປັນຮອງຜູ້ຈັດການບໍລິສັດລາວໂທລະຄົມ ເຊິ່ງແມ່ນບໍລິສັດຂອງອ້າຍຕ່ອນ ກັບຂອງພໍ່ຂ້ອຍຫຸ້ນສ່ວນນຳກັນ”

ຈາກນັ້ນ, ຄົນທີ່ຊື່ເມ ກໍເວົ້ານັ້ນເວົ້ານີ້ ກ່ຽວກັບຄວາມຮັ່ງມີສີສຸກຂອງຕົນເອງ ແລະ ແລ້ວກໍຖາມນາງນ້ອຍກ່ຽວກັບຖານະຄອບຄົວພໍ່ແມ່, ຮຽນຢູ່ໃສ, ເຮັດແນວໃດຈຶ່ງຮູ້ຈັກກັບອ້າຍຕ່ອນ. ຄຳຖາມນັ້ນນາງນ້ອຍບໍ່ທັນໄດ້ຕອບ ໂດຍສະເພາະແມ່ນເລື່ອງກ່ຽວກັບຕ່ອນ ພໍດີລົດມາເຖິງເຮືອນ, ນາງນ້ອຍ ເຊີນໃຫ້ເມເຂົ້າໄປໃນເຮືອນຕາມມາລະຍາດ, ເຮືອນຂອງນຳສາວນາງນ້ອຍ ແມ່ນເຮືອນຊີງລາວ, ຢູ່ແຄມໜອງ, ມີເດີ່ນເຕະບານ, ບໍລິເວນເດີ່ນບ້ານມີຕົ້ນດອກໄມ້ທີ່ສວຍສົດງົດງາມ ເປັນຕົ້ນແມ່ນດອກກ້ວຍໄມ້ ແລະ ດອກກຸຫຼາບ. ສ່ວນຖານະຄອບຄົວຂອງນາງນ້ອຍຢູ່ທາງບ້ານນັ້ນແມ່ນຄອບຄົວທີ່ທຸກຍາກ, ຫາເຊົ້າກິນຄໍ່າ ນຳອາຊີບທີ່ພໍ່ກັບແມ່ຂອງນາງນ້ອຍເຮັດຮ່ວມກັນມາ

ແຕ່ເປັນໜຸ່ມນັ້ນກໍຄື ເຮັດເຮືອນຜ້າ, ເຮັດເຄື່ອງທານຂາຍ ນາງນ້ອຍເປັນລູກສາວຜູ້ທີ 2 ຂອງຄອບຄົວ ນາງນ້ອຍ ຍັງມີອ້າຍ ແລະ ນ້ອງຊາຍຢູ່ທາງບ້ານພຸ້ນ ຫຼັງຈາກທີ່ນາງເສັງໄດ້ທຶນຄູ ກໍເລີຍໄດ້ມາຮຽນຢູ່ທີ່ ວິທະຍາໄລຄູຫຼວງພະບາງ ພໍ່ກັບແມ່ຂອງນາງນ້ອຍ ໄດ້ເອົານາງມາຝາກຢູ່ນໍານໍາສາວ ຢູ່ບ້ານຊຽງເຫຼັກ ເມືອງຫຼວງພະບາງ ແຂວງຫຼວງພະບາງ, ນາງນ້ອຍອາໄສແຕ່ນ້າສາວ ຂາຍເຄື່ອງດື່ມຂອງແກ້ມຢູ່ເດີນເຕະບານພູທອງ ພໍກຸ້ມແລງກຸ່ມງາຍໄປແຕ່ລະມື້ລະວັນເທົ່ານັ້ນ. ເພາະພໍ່ກັບແມ່ຢູ່ທາງບ້ານຕ້ອງສົ່ງອ້າຍກັບນ້ອງໄປຮຽນຕໍ່. ປີນີ້ນາງນ້ອຍພວມຮຽນຢູ່ປີທີ 5 ລະບົບ 11+3+2 (ຕໍ່ເນື່ອງ) ສາຍພາສາລາວ-ວັນນະຄະດີ ຢູ່ຂະແໜງ ວິທະຍາສາດສັງຄົມ ທີ່ວິທະຍາໄລຄູຫຼວງພະບາງ ແລະ ເປັນປີສຸດທ້າຍຂອງນາງນ້ອຍແລ້ວ. ສິ່ງ ທີ່ນາງນ້ອຍຊ່ວຍນໍາສາວໄດ້ກໍຄືວຽກເຮືອນການຊານ ແລະ ແຕ່ງຢູ່ຄົວກິນໃນຍາມເລີກຮຽນ. ທຸກໆແລງນາງໄດ້ໄປ ຂາຍເຄື່ອງຊ່ວຍນ້າສາວຈົນເລີກ ແລະ ປິດຮ້ານຊ່ວຍນໍາ. ນາງເຮັດຄືແນວນີ້ທຸກໆວັນເຖິງວ່າຍາກແດ່ ບໍ່ມີເວລາພັກຜ່ອນ ແຕ່ກໍມີຄວາມສຸກ ເພາະຢ່າງໜ້ອຍນາງກໍ່ຍັງໄດ້ຊ່ອຍນໍາເທົ່າທີ່ເຮັດໄດ້. ນາງນ້ອຍ ແລະ ເມ ນັ່ງເຊິ່ງໜ້າກັນໃນຫ້ອງ ຮັບແຂກນ້ອຍໆສໍາລັບຄອບຄົວ, ເມ ໄດ້ເວົ້າຂຶ້ນກ່ອນວ່າ:

"ຂ້ອຍມາຫາເຈົ້າມື້ນີ້ມີແຕ່ເລື່ອງດຽວ, ຂ້ອຍຮູ້ວ່າເຈົ້າ ແລະ ອ້າຍຕ່ອບ ພິວພັນ ໄປມາຫາສູ່ກັນ ແຕ່ເລື່ອງຮັກ ຫຼື ບໍ່ຮັກນັ້ນຂ້ອຍບໍ່ຮູ້, ຮູ້ແຕ່ວ່າຂ້ອຍ ແລະ ອ້າຍຕ່ອບໄດ້ຕິດຕໍ່ພົວພັນ ແລະ ຮັກມັກກັນມາຫຼາຍປີແລ້ວ, ມື້ນີ້ຂ້ອຍມາເຫັນສະພາບຄວາມເປັນຢູ່ຂອງເຈົ້າແລ້ວ ຂ້ອຍກໍອິດອິດສົງສານບໍ່ໄດ່ ແຕ່ຂ້ອຍພັດຄິດວ່າຄົນທີ່ໜ້າສົງສານກ່ອນເຈົ້າກໍຄື ອ້າຍຕອບ"

"ເປັນຫຍັງເອື້ອຍຈຶ່ງເວົ້າຄືແນວນັ້ນ" ນາງນ້ອຍ ຖາມຄືນ.

"ຂ້ອຍເວົ້າຄືແນວນັ້ນກໍເພາະຖານະຄອບຄົວຂອງເຈົ້າ ແລະ ອ້າຍຕ່ອບແຕກຕ່າງກັນປານຟ້າກັບດິນ, ລາວມີທຸກຢ່າງ, ມີຄົນຮອບຂ້າງເອົາອົກເອົາໃຈ, ມີບໍລິສັດ ມີເຮືອນໃຫ້ຄົນເຊົ່າຫຼາຍຫຼັງ, ມີດິນຫຼາຍຕອນ, ມີລົດຫຼາຍຄັນ ແລະ ມີກິດຈະການຫຸ້ນສ່ວນກັບຕ່າງປະເທດຫຼາຍແຫ່ງ. ຂ້ອຍຄິດວ່າເຈົ້າກັບອ້າຍຕ່ອບບໍ່ເໝາະສົມກັນດອກ, ຖ້າຈະເອົາແຕ່ຄວາມງາມມາເດີມພັນມັນກໍກິນບໍ່ໄດ້ ເພາະຄວາມງາມຂອງຄົນເຮົາເຖົ້າແລ້ວມັນກໍໝົດໄປເອງ"

ຄໍາເວົ້ານັ້ນບໍ່ຄ່ອຍບໍ່ແຮງ ແຕ່ກໍເຮັດໃຫ້ນາງນ້ອຍຢາກຮ້າຍ ແລະ ເວົ້າຕັດຄວາມຂຶ້ນວ່າ: "ນ້ອງພົວພັນກັບອ້າຍຕ່ອບມາເກືອບ 5 ປີແລ້ວລາວກໍທຽວໄປທຽວມາຄືຈັ່ງຊີ້ ແລະ ນ້ອງກໍບໍ່ໄດ້ຍິນລາວເວົ້າ ຮອດເອື້ອຍຈັກເທື່ອ, ຖ້າເອື້ອຍບໍ່ເວົ້ານ້ອງກໍຄົງບໍ່ຮູ້ຊໍ້າ ວ່ານອກຈາກນ້ອງແລ້ວໃນຫົວໃຈຂອງລາວຍັງມີເອື້ອຍຢູ່ອີກ"

"ນາງນ້ອຍ ເມື່ອຮູ້ແນວນີ້ແລ້ວ ເຈົ້າກໍຄົງຮູ້ຕົວວ່າຕົນເອງຄວນເຮັດແນວໃດ, ດີທີ່ສຸດແມ່ນຄວນຫຼີກທາງໃຫ້ລາວ ແລ້ວລາວຈະໄດ້ຢູ່ກັບຄົນທີ່ລາວຮັກ ເຊິ່ງພຽບພ້ອມທຸກຢ່າງ ແລະ ຊີວິດຂອງລາວກໍຈະມີຄວາມສຸກ, ຖ້າຫາກລາວຕັດສິນໃຈເອົາເຈົ້າ, ສັງຄົມຈະເບິ່ງລາວຄືແນວໃດ? ລາວເປັນຄົນມີໜ້າມີຕາໃນສັງຄົມ, ຂ້ອຍບໍ່ຢາກໃຫ້ລາວຕ້ອງອັບອາຍຂາຍໜ້າເພາະເຈົ້າ...ເວົ້າແນວນີ້ນ້ອງຄົງເຂົ້າໃຈແລ້ວວ່າ...ຄວາມຮັກຄືການໃຫ້, ຖ້າເຈົ້າຮັກລາວແທ້, ເຈົ້າກໍຄວນເສຍສະຫຼະ...ຂ້ອຍກໍຮັກລາວເຊັ່ນກັນ, ຕໍ່ກັບການເສຍສະຫຼະຂອງເຈົ້າຄັ້ງນີ້ ຂ້ອຍຈະສົມມະນາບຸນຄຸນເຈົ້າຢ່າງງາມ.

ຄໍາເວົ້າຂອງເມເຖິງບໍ່ຄິດ ແຕ່ກໍເໝືອນປາຍມີດທີ່ແຫຼມຄົມລອຍມາປັກສຽບໃສ່ກາງດວງໃຈຂອງຜູ້ຟັງ. "ຄົນໜ້າຈົບຕາດີມີກຽດສັກສີ ແລະ ເປັນຜູ້ດີມີເງິນທັງໂດດເດັ່ນໃນສັງຄົມບໍ່ຄິດເລີຍວ່າຈະເປັນຄົນເຫັນແກ່ຕົວຄືແນວນີ້". ນາງນ້ອຍຈົ່ມ ຄິດຊັງຜູ່ຍິງຄົນນີ້ຢູ່ໃນໃຈ ແຕ່ໃຈໜຶ່ງນາງກໍຄິດຄຽດໃຫ້ແກ່ອ້າຍຕ່ອບ ເພາະຜ່ານມາລາວບໍ່ເຄີຍບອກເລື່ອງນີ້ໃຫ້ແກ່ນາງຮູ້ແມ່ນແຕ່ຄວາມດຽວ.

"ນາງນ້ອຍເອີຍ, ຜູ້ຊາຍເຫັນສາວງາມເຂົາກໍເວົ້າໄປຄືຈັ່ງຊັ້ນແລະ ຊິເອົາຫຍັງມາຈິງຈັງກັບເລື່ອງແບບນີ້ບໍ່ໄດ້ດອກ, ຜູ້ຊາຍສະໄໝນີ້ເຫັນຜູ້ໃໝ່ມັກໜ້າ, ຖ້າຫາກວ່າລາວຮັກເຈົ້າແທ້ໆ ເປັນຫຍັງລາວບໍ່ບອກເລື່ອງນີ້ໃຫ້ເຈົ້າຮູ້ ແລະ ຂ້ອຍກໍບໍ່ຮູ້ຄືກັນວ່ານອກຈາກເຈົ້າແລ້ວ ບາງທີອາດມີຜູ້ຍິງຄົນອື່ນບໍ່ຈັກວ່າເທົ່າໃດຄົນອີກ ທີ່ລາວໄປຕິດພັນຄືກັນກັບເຈົ້າ".

ເມ ເວົ້າລອຍໆ ແຕ່ພັດເຊື່ອງຊ້ອນໄປດ້ວຍຄໍາເວົ້າທີ່ເຢາະເຢີ້ຍສຽດສີຄູ່ສົນທະນາ ຈຶ່ງເຮັດໃຫ້ນາງນ້ອຍຄຽດຊັງນາງຄົນນີ້ ແລະ ກໍ່ເລີ່ມບໍ່ເຊື່ອໝັ້ນໃນຕົນເອງ ໂດຍສະເພາະແມ່ນຄົນທີ່ຊື່ຕອບ. "ເປັນຫຍັງເຂົາຈິ່ງຫຼອກຫຼວງຂ້ອຍ, ເປັນຫຍັງເຂົາຈິ່ງເປັນຄົນຄືແນວນີ້, ທາງປາກບອກວ່າຮັກແຕ່ຈິດໃຈພັດເປັນໄປແນວອື່ນ, ຜູ້ຊາຍນີ້ເວົ້າແທ້ແມ່ນບໍ່ດີຄືເມເວົ້າກໍເປັນໄດ້. ນາງນ້ອຍຈົ່ມພຶມພໍາກັບຕົນເອງດ້ວຍຄວາມຢາກຮ້າຍ ແຕ່ນາງກໍບໍ່ປາກບໍ່ເວົ້າຫຍັງອອກມາພໍ່ຄວາມນອກຈາກນັ່ງຈ້ອງເບິ່ງໜ້າກັນຄືຄູ່ສັດຕູ, ແຕ່ເມື່ອບໍ່ປາກບໍ່ເວົ້າເມຈິ່ງເວົ້າຂຶ້ນວ່າ:

"ເວົ້າແທ້ຖານະຂ້ອຍ ແລະ ອ້າຍຕ໋ອບກໍ່ເໝາະສົມກັນ, ພໍ່ແມ່ ແລະ ຄອບຄົວພວກຂ້ອຍກໍເປັນເພື່ອນຮັກແພງກັນ, ນາງນ້ອຍເອີຍເຮົາແມ່ນຫົວອົກຜູ້ຍິງຄືກັນ, ເປັນຫຍັງຈຶ່ງບໍ່ຊັ່ງຊາເບິ່ງຕົນເອງແດ່ວ່າອັນໃດຄວນ ແລະ ອັນໃດບໍ່ຄວນ, ຂ້ອຍຮັກອ້າຍຕ໋ອບ ແລະ ອ້າຍຕ໋ອບກໍຄືຜູ້ຊາຍຄົນດຽວໃນຫົວໃຈຂອງຂ້ອຍ, ເວົ້າແທ້ໆເທາະນາງນ້ອຍ, ມີຫຍັງພວກເຮົາອາດຕົກລົງກັນໄດ້ໃນມື້ນີ້, ເປັນເພື່ອນຮັກແພງກັນກໍ່ໄດ້, ຂ້ອຍຮັບຮອງວ່າຂ້ອຍສາມາດຊ່ວຍເຫຼືອເຈົ້າໄດ້ໃນທຸກດ້ານ ນັບທັງຊີວິດການເປັນຢູ່, ທຶນການສຶກສາ ຫຼື ອາດຈະຫຼາຍກວ່ານັ້ນຖ້າເຈົ້າຕ້ອງການ"

ນາງນ້ອຍບໍ່ປາກບໍ່ເວົ້າ ແຕ່ໃນສ່ວນເລິກຂອງຫົວໃຈນາງແມ່ນພວມຈະແຕກສະຫຼາຍ, ນາງເບື່ອໜ່າຍຕໍ່ຄວາມຮັກທີ່ຫຼອກຫຼວງຈອມປອມຂອງຄົນທີ່ຊື່ຕ໋ອບ, 5 ປີທີ່ຜ່ານມາສຳລັບນາງມີແຕ່ຄວາມບໍລິສຸດຈິງໃຈ, ຂະໜາດວ່າເຄີຍໃຫ້ຄຳໝັ້ນສັນຍາຕໍ່ນາງວ່າ "ຈະຮັກດຽວໃຈດຽວ ແລະ ຈະໃຫ້ພໍ່ແມ່ມາສູ່ຂໍຕາມຮີດຄອງປະເພນີ ເມື່ອນາງຮຽນຈົບການສຶກສາ, ແຕ່ມາມື້ນີ້ມີແຕ່ການຫຼອກຫຼວງຕົວະຕົ້ມຂອງຜູ້ຊາຍໜ້າດີໃຈບໍ່ຊື່ເທົ່ານັ້ນ

ເຖິງຈະຕົກລົງກັນໄດ້ຫຼືບໍ່ໄດ້ ເມກໍຈາກໄປພ້ອມໆ ກັບການປະວາງຄວາມເວົ້າທີ່ແຕກດັ່ນນັ້ນໄວ້ກັບນາງ, ນາງບໍ່ອາດຮັບຂໍ້ສະເໜີໃດໆໄດ້ນອກຈາກຄວາມເສຍດາຍ ທີ່ຕົນເອງໄດ້ທຸ່ມເທຈິດໃຈ ແລະ ເວລາໃຫ້ແກ່ຜູ້ຊາຍຄົນນັ້ນມາຕະຫຼອດ ເຊິ່ງນາງບໍ່ຄິດບໍ່ຝັນເລີຍວ່າຕອບຈະມີຍິງຄົນອື່ນຢູ່ແລ້ວ. ຄືນນັ້ນ ນາງນ້ອຍຮ້ອງໄຫ້ຢູ່ໃນຫ້ອງນອນພຽງຄົນດຽວ, ນາງຮ້ອງໄຫ້ກັບທຸກສິ່ງທຸກຢ່າງທີ່ຜ່ານເຂົ້າມາ ແລະ ກໍພວມຈະຜ່ານໄປ ແຕ່ໃນຫົວໃຈທີ່ບໍລິສຸດຜຸດຜ່ອງນັ້ນນາງ ກໍມີແຕ່ຢ້ານວ່າ ຕົນເອງຈະສູນເສຍຄົນຮັກໄປກັບການປາກົດຕົວຂອງຜູ້ຍິງທີ່ຊື່ວ່າເມ.

ຈາກນັ້ນບໍ່ພໍເທົ່າໃດ, ພໍ່ແມ່ຂອງຕ໋ອບກໍໄດ້ສົ່ງລູກໄປສຶກສາຕໍ່ປະລິນຍາໂທ ທີ່ປະເທດຫວຽດນາມດ້ວຍທຶນສ່ວນຕົວເປັນເວລາ 3 ປີ. ຂ່າວນັ້ນໄດ້ສ້າງຄວາມເຈັບປວດໃຫ້ແກ່ນາງນ້ອຍ, ນາງບໍ່ຢາກສືບຕໍ່ຮໍ່າຮຽນ ແລະ ບໍ່ຢາກຫວັງຫຍັງໄປຫຼາຍກວ່ານັ້ນອີກ.

ຄືນນີ້, ຕອບມາຄອບລານຳສາວ ແລະ ນາງນ້ອຍຢູ່ເຮືອນ, ເດິກແລ້ວສອງໜຸ່ມສາວຍັງນັ່ງລົມກັນຢູ່ຫ້ອງຮັບແຂກ, ແຕ່ເທື່ອນີ້ຕອບຮູ້ວ່າທ່າທາງຂອງນາງນ້ອຍປ່ຽນແປງໄປ, ຖາມຄວາມໃດຈຶ່ງໄດ້ຄວາມນັ້ນ, ນາງບໍ່ຄ່ອຍຢອກລໍ້ຍິ້ມຫົວຄືເມື່ອກ່ອນ ອັນໄດ້ສ້າງຄວາມສົງໄສໃຫ້ແກ່ຕ໋ອບ, ເມື່ອເປັນຄືແນວນັ້ນຕ໋ອບຈຶ່ງຖາມນາງນ້ອຍວ່າ:

"ນາງນ້ອຍ, ນ້ອງບໍ່ດີໃຈບໍ່ທີ່ອ້າຍໄປສຶກສາຮໍ່າຮຽນ, ອ້າຍໄປກໍ່ໄປເພື່ອອານາຄົດຂອງພວກເຮົາສອງຄົນ"

ນາງນ້ອຍ ແນມເບິ່ງໜ້າຊາຍໜຸ່ມ ແລ້ວຕອບວ່າ:

"ຖ້າອ້າຍໄປເພື່ອອະນາຄົດຂອງພວກເຮົາສອງຄົນ ນ້ອງກໍສຸດທີ່ພູມໃຈຫາອັນປຽບບໍ່ໄດ້ແລ້ວ, ແຕ່ໜ້າເສຍດາຍ ນ້ອງບໍ່ມີວາດສະໜາທີ່ຈະອາດເອື້ອມສູງໄປກວ່ານີ້, ນ້ອງເປັນຄົນທຸກຈົນຫາເຊົ້າກິນຄ່ຳ, ເວົ້າແທ້ຄອບຄົວນ້ອງກໍຄືໝູ່ກາແຕ່ອ້າຍປຽບດັ່ງຫົງ, ຫົງກັບກາຢູ່ຮ່ວມກັນບໍ່ໄດ້ດອກ

ຄຳເວົ້ານັ້ນເຮັດໃຫ້ຊາຍໜຸ່ມງົງ, 5 ປີ ຜ່ານມາເຂົາບໍ່ເຄີຍໄດ້ຍິນຄຳເວົ້າຄືແນວນີ້ມາກ່ອນເຂົາຈຶ່ງເວົ້າຂຶ້ນວ່າ:

"ເປັນຫຍັງນ້ອງຈຶ່ງເວົ້າຄືແນວນີ້, ອ້າຍໄປກໍໄປເພື່ອນ້ອງ ແລະ ແຕ່ໃດໆມາອ້າຍກໍບໍ່ໄດ້ລັງກຽດຕິຕຽນຄວາມເປັນຢູ່ຂອງນ້ອງເລີຍ...ອ້າຍຄິດສະເໝີວ່າເງິນຄຳເປັນພຽງຂອງນອກກາຍ..."

ນາງນ້ອຍ ຊື່ງຕາເບິ່ງຊາຍໜຸ່ມ ແລ້ວເວົ້າຂຶ້ນດ້ວຍນ້ຳສຽງທີ່ແຄ້ນເຄືອງວ່າ:

"ເປັນຫຍັງ ອ້າຍຈຶ່ງຫຼອກຫຼວງນ້ອງ, ຖ້າບໍ່ຮັກ ແລະ ບໍ່ຈິງໃຈຕໍ່ນ້ອງ ເປັນຫຍັງອ້າຍບໍ່ບອກນ້ອງໂດຍດີ, ນ້ອງຈະບໍ່ເສຍໃຈໃຫ້ອ້າຍເລີຍ ເພາະນ້ອງກໍ່ຮູ້ຕົວນ້ອງດີວ່າອັນໃດຄວນ ຫຼື ບໍ່ຄວນເປັນຫຍັງຈຶ່ງໃຫ້ຄົນອື່ນມາເວົ້າຈາຢຽບຫຍາມນ້ອງ, ຖ້າອ້າຍເວົ້າກັບນ້ອງຄວາມດຽວ, ນ້ອງກໍ່ຈະຫຼີກທາງໃຫ້ອ້າຍທັນທີ

ຍິ່ງເວົ້າກໍຍິ່ງເປັນໄປເລື່ອງໃໝ່, ໂດຍທີ່ຕ໋ອບບໍ່ເຂົ້າໃຈໃນຄວາມເວົ້ານັ້ນເລີຍ ເຂົາຈຶ່ງຖາມວ່າ:

"ຜູ້ຍິງຄົນນັ້ນແມ່ນໃຜ ເຂົາມາເວົ້າຫຍັງໃຫ້ນ້ອງ"

"ຜູ້ຍິງຄົນນັ້ນຊື່ວ່າ ເມ ເປັນແຟນຂອງອ້າຍ, ນາງມາຂໍຮ້ອງໃຫ້ນ້ອງຫຼີກທາງໃຫ້ອ້າຍເພາະອ້າຍ ແລະ ນາງຮັກກັນມາແຕ່ດົນນານ, ຖານະກໍ່ເທົ່າທຽມກັນ ພໍ່ແມ່ທັງສອງກໍ້າສອງຝ່າຍກໍເຫັນດີເຫັນພ້ອມນໍາ"

ເວົ້າມາຮອດບ່ອນນີ້ ຕ໋ອບຈຶ່ງເຂົ້າໃຈໃນຄວາມເວົ້ານັ້ນເຂົາຈຶ່ງເວົ້າຂຶ້ນວ່າ:

"ຄວາມຈິງແລ້ວ ເມກໍເຄີຍໄປມາຫາສູ່ຄອບຄົວຂອງອ້າຍແທ້, ອ້າຍກໍຮັກແພງຄື ນ້ອງຄືນຸ່ງ ນອກເໜືອໄປຈາກ ນັ້ນ ອ້າຍກໍບໍ່ໄດ້ຄິດຫຍັງໄປຫຼາຍກວ່ານັ້ນອີກ, ເຊື່ອອ້າຍເທາະນ້ອງເອີຍ, ໃນຫົວໃຈຂອງອ້າຍກໍມີແຕ່ຄວາມບໍລິສຸດຈິງໃຈ ແຕ່ໃດໆມາອ້າຍບໍ່ເຄີຍເຮັດສິ່ງໃດຜິດຕໍ່ນ້ອງນ້ອງກໍຮູ້, ສ່ວນເລື່ອງໄປຮຽນອ້າຍບໍ່ໄປກໍໄດ້ ແຕ່ອ້າຍຕັດສິນໃຈໄປເທື່ອນີ້ກໍເພື່ອນ້ອງ ແລະ ເພື່ອອະນາຄົດຂອງພວກເຮົາ"

ຄຳເວົ້ານີ້ ໄດ້ເຮັດໃຫ້ນາງນ້ອຍມີທ່າທີປ່ຽນແປງໄປ, ຄວາມຈິງກໍເປັນຄືຕອບເວົ້າມາແທ້ ເພາະແຕ່ໃດໆມາເຂົາບໍ່ໄດ້ເຮັດສິ່ງໃດຜິດຕໍ່ນາງອີຫຼີ.

"ເຊື່ອອ້າຍບໍ່ນ້ອງ, ຖ້າບໍ່ເຊື່ອ ອ້າຍຈະບໍ່ໄປຮຽນຕໍ່, ອ້າຍຈະໃຫ້ພໍ່ແມ່ມາສູ່ຂໍມື້ອື່ນນີ້ກະໄດ້"

ຄຳເວົ້ານັ້ນ ຄ້າຍຄືປອກໄຍຍິ້ມຫົວ ແຕ່ເຂົາກໍເວົ້າດ້ວຍຄວາມຈິງໃຈ, ອັນເຮັດໃຫ້ນາງສາວຍິ້ມອອກມາແລ້ວກໍເວົ້າຂຶ້ນວ່າ:

"ນ້ອງຈະເຊື່ອອ້າຍລອງເບິ່ງ ເພາະຢ່າງໜ້ອຍກໍເປັນຄັ້ງທຳອິດທີ່ເຮົາສອງຄົນບໍ່ເຂົ້າໃຈກັນຄືແນວນີ້, ແຕ່ເລື່ອງໄປຮຽນອ້າຍກໍຕ້ອງໄປຮຽນ ແລ້ວນ້ອງຈະລໍອ້າຍກັບມາ

ເມື່ອໄດ້ຍິນນາງເວົ້າຄືແນວນັ້ນ ຊາຍໜຸ່ມກໍເວົ້າຂຶ້ນວ່າ:

"ວາແຕ່ນ້ອງຈະໄປສົ່ງອ້າຍຢູ່ສະໜາມບິນຫຼືບໍ່"

"ໄປແນ່ນອນ, ນ້ອງຈະໄປສົ່ງອ້າຍຂຶ້ນເຄື່ອງບິນ" ນາງຕອບດ້ວຍຄວາມໝັ້ນໃຈ.

ທັງສອງເວົ້າລົມກັນມ່ວນຊື່ນ ຄ້າຍຄືວ່າບໍ່ມີຫຍັງເກີດຂຶ້ນ. ຕ່ອບໄປແລ້ວແຕ່ນາງນ້ອຍຍັງນອນບໍ່ຫຼັບ, ນັບຈາກຄືນນີ້ຈະແກ່ຍາວໄປອີກ 3 ປີ, ຄວາມຈິງແລ້ວແຕ່ໃດມາເຂົາ ແລະ ນາງກໍບໍ່ເຄີຍພັດພາກຈາກກັນນານຄືເທື່ອນີ້, ຄິດມາແລ້ວຖ້າຫາກເອົາເລື່ອງນີ້ມາຕໍ່ໃສ່ເລື່ອງຂອງເມ, ນາງນ້ອຍກໍບໍ່ສະບາຍໃຈເລີຍ ແຕ່ເຖິງຢ່າງໃດກໍຕາມ, ຕອບກໍໄດ້ ຢັ້ງຢືນຢ່າງຈິງຈັງຕໍ່ນາງແລ້ວວ່າບໍ່ມີຫຍັງກັບເມ.

ຄືນນັ້ນ, ນາງນ້ອຍນອນບໍ່ຫຼັບ ນາງພວມຄິດເຖິງເຫດການຕ່າງໆ ທີ່ຜ່ານກາຍມາແລ້ວ ກໍຄິດເຖິງອະນາຄົດຈາກເລື່ອງນີ້ແລ້ວຕໍ່ໃສ່ເລື່ອງໃໝ່ ແລະ ສຸດທ້າຍກໍແມ່ນເລື່ອງໄປສົ່ງຕອບຢູ່ສະໜາມບິນ, ບໍ່ຮູ້ວ່າຕົນຈະໃສ່ເຄື່ອງຊຸດໃດຈຶ່ງຈະງາມທີ່ສຸດ ແລະ ຈະວາງຕົວຄືແນວໃດ ຈຶ່ງຈະເໝາະສົມ ໂດຍສະເພາະແມ່ນຢູ່ຕໍ່ໜ້າພໍ່ແມ່ພີ່ນ້ອງຂອງຕ່ອບ. ຈົນເວລາລ່ວງເລີຍໄປ ນາງນ້ອຍຈຶ່ງເຊືອບຫຼັບໄປພ້ອມໆຄຳຖາມ ແລະ ຄຳຕອບທີ່ສັບສົນວຸ້ນວາຍໃນຫົວໃຈນັ້ນ.

ເຊົ້າມື້ນີ້, ນາງນ້ອຍ ເອົາໃຈໃສ່ແຕ່ງຕົວໃຫ້ງາມທີ່ສຸດ ແລະ ແມ່ນຄັ້ງທຳອິດ ທີ່ນາງພິຖີພິຖັນກັບການແຕ່ງກາຍຄືແນວນັ້ນ, ນາງຮີບໂຮມເງິນທີ່ມີຢູ່ໄປຊື້ຊໍ່ດອກກຸຫຼາບສີແດງທີ່ງາມທີ່ສຸດ ແລະ ແພງທີ່ສຸດສຳລັບນາງ ຢູ່ຂ້າງໂຮງຮຽນມັດທະຍົມສົມບູນສັນຕິພາບ. ນາງນ້ອຍຟ້າວໄປສົ່ງຫຼານຢູ່ໂຮງຮຽນຮຸ່ງອາລຸນ ແລ້ວກໍຂັບລົດຈັກມຸ່ງໜ້າໄປສະໜາມບິນ ຫຼວງພະບາງ. ຕາມເສັ້ນທາງ ຈິດໃຈນາງຮ້ອນຮົນກະວົນກະວາຍ ຢ້ານບໍ່ທັນເຄື່ອງບິນ, ນາງໄດ້ຂັບລົດຢ່າງຟ້າວຟັ່ງ, ຈິດໃຈນັ້ນນາງພໍຢາກເຫາະ, ຢາກບິນ ແລະ ຢາກຫຍໍ້ແຜ່ນດິນໃຫ້ນ້ອຍເຂົ້າ, ພໍດີລົດຈອດ ນາງກໍຫອບຊໍ່ດອກໄມ້ແລ່ນ ກະຟຸບກະຟາບແຂ່ງກັບເວລາບຽດແຫຍ້ຝູງຊົນເຂົ້າໄປເບື້ອງໃນຕຶກສະໜາມບິນ, ນາງຊອກຫາຜູ້ທີ່ນາງຢາກພົບທີ່ສຸດ ແລະ ໃນຊ່ວງເວລາທີ່ສັບສົນປົນເປຢູ່ນັ້ນ, ສາຍຕາຂອງນາງກໍໄປຢຸດຢູ່ທີ່ກຸ່ມຄົນທີ່ພວມຢືນຢູ່ມຸມໜຶ່ງ, ນາງຕົກຕະລຶງຢືນງຶງ ແລະ ບໍ່ສາມາດຈະກ້າວຂາໃຫ້ຍ່າງຕໍ່ໄປໄດ້, ນາງເຫັນພາບຕ່ອບ ແລະ ເມຢືນຄຽງຂ້າງກັນຖ່າຍຮູບມືໜຶ່ງຫອບຊໍ່ ດອກໄມ້ທັງສອງຍິ້ມຫົວດ້ວຍບັນຍາກາດທີ່ມີຄວາມສຸກມ່ວນຊື່ນ ແລະ ໃນຊ່ວງເວລາສັ້ນໆນັ້ນ, ເມໄດ້ຫອມ ແກ້ມຕ໊ອມກ່ອນເຂົາຈະໄປສູ່ເບື້ອງໃນ, ທຸກຄົນໂບກມືອຳລາເປັນຄັ້ງສຸດທ້າຍ. ນາງຮູ້ວ່າ ຕ່ອບພວມຊອກຫາໃຜຜູ້ໜຶ່ງ ດ້ວຍຫົວໃຈກະວົນກະວາຍ ທ່າມກາງສຽງປະກາດໃຫ້ຄົນໂດຍສານອອກໄປຂຶ້ນເຄື່ອງບິນ, ພາບນັ້ນເໝືອນກັບຟ້າຜ່າລົງ ກາງຫົວໃຈຂອງຜູ້ຍິງທີ່ຫາກໍມາທີ່ຫຼັງ, ນ້ຳຕາຂອງຄວາມເຈັບປວດໄດ້ໄຫຼອອກມາຈາກໜ່ວຍຕາຜ່ານພວງແກ້ມໂດຍທີ່ ນາງບໍ່ໄດ້ເຊັດມັນ ແລະ ກໍບໍ່ຢ້ານວ່າຈະອາຍໃຜ, ນາງເມັມຮີບສືບຖ້ຳກືນເອົາຄວາມເຈັບປວດນັ້ນລົງສູ່ເບື້ອງໃນ, ຫົວໃຈ ທີ່ມີແຕ່ຄວາມບໍລິສຸດຜຸດຜ່ອງໃນເວລານີ້ພວມຈະແຕກສະຫຼາຍ, ຊໍ່ດອກໄມ້ທີ່ງົດງາມທີ່ນາງທະນຸຖະໜອມ ເຊິ່ງຕັ້ງໃຈວ່າຈະເອົາມາໃຫ້ຄົນທີ່ຕົນຮັກກ່ອນອອກເດີນທາງນັ້ນ ໄດ້ຫຼຸດຫຼົ່ນລົງຈາກອຸ້ງມື ຕົກລົງສູ່ພື້ນໂດຍທີ່ບໍ່ໄດ້ສົນໃຈກັບຊໍ່ ດອກໄມ້ນັ້ນ, ນາງສະອື້ນໄຫ້ຄ່ອຍໆຖອຍຫ່າງຫັນຫຼັງ ແລ້ວຕັດສິນໃຈແລ່ນຜ່າຝູງຊົນອອກໄປຈາກນະທີ່ແຫ່ງນັ້ນ. ມາຮອດເວລານີ້ ແລະ ນາງຈຶ່ງຮູ້ຊຶ້ງເຖິງຄວາມເຈັບປວດຍ້ອນຄວາມຮັກ. "ທຸກໃດຈະທຸກເທົ່າກັບຄວາມສູນເສຍຄົນຮັກຕໍ່ ໜ້າຕໍ່ຕາ, ຄວາມເຈັບປວດໃດຈະເຈັບປວດເທົ່າເຫັນຄົນຮັກຢູ່ໃນອອ້ມອົກຂອງຄົນອື່ນ

"ແມ່ນແລ້ວ ເມເວົ້າຖືກ, ມີແຕ່ນາງເທົ່ານັ້ນທີ່ຈະຄູ່ຄວນກັບຕ່ອບ, ເຮົາສອງຄົນລະຊັ້ນ, ແມ່ນແລ້ວ ຂ້ອຍບໍ່ຄູ່ຄວນກັບເຂົາ "ນາງນ້ອຍ ນ້ອຍໃຈຕໍ່ກັບຄວາມຕ່ຳຕ້ອຍຂອງຕົນເອງທີ່ເກີດມາບໍ່ຄືໝູ່, ນາງທັງຍ່າງທັງຄິດໄປເລື້ອຍໆ ຕາມສາຍທາງອອກຈາກສະໜາມບິນທ່າມກາງສາຍລົມແສງແດດທີ່ຮ້ອນອົບເອົ້ານັ້ນ. ໃນເວລາຕໍ່ມາເຄື່ອງ

ບິນກຳທະຍານ ຂຶ້ນສູ່ທ້ອງຟ້າ ພ້ອມໆ ກັບສຽງແຜດຮ້ອງເນື່ອງນັບ ແລະ ສິ່ງນັ້ນກໍ່ເປັນສັນຍາລັກແຫ່ງການຈາກໄປຂອງຊາຍຄົນໜຶ່ງ. ນາງຢຸດບາດຕີນ ແລ້ວຫຼຽວແນມເບິ່ງເຄື່ອງບິນລຳນັ້ນເປັນຄັ້ງສຸດທ້າຍກ່ອນຈະກ່າວຄຳອຳລາ.

"ລາກ່ອນ ອ້າຍຕ໋ອບ, ລາກ່ອນຄວາມຫຼັງ, ລາກ່ອນທຸກສິ່ງທຸກຢ່າງ" ຄຳອຳລານັ້ນໄດ້ເຈືອປົນກັບສຽງສະອື້ນໄຫ້ , ນາງຢາກອົດກັ້ນ, ຢາກລືມມັນ, ຢາກຕັດຂາດກັບທຸກສິ່ງທຸກຢ່າງ ແຕ່ນາງກໍເຮັດບໍ່ໄດ້, ຍິ່ງຄິດກໍຍິ່ງເຈັບປວດ, ນາງ ນ້ອຍເລີ່ມໂທດຕົວເອງທີ່ອາດເອື້ອມໃນສິ່ງທີ່ເປັນໄປບໍ່ໄດ້, ນາງຮັກເຂົາຈົນໝົດຫົວໃຈເຊິ່ງນອກຈາກເຂົາແລ້ວ ກໍບໍ່ມີຜູ້ ຊາຍຄົນໃດອີກຈະມາແທນເຂົາໄດ້, ຕະຫຼອດຊີວິດຂອງນາງບໍ່ເຄີຍເສຍໃຈຫຼາຍເທົ່າກັບເທື່ອນີ້, ນາງຢາກເປັນຄົນມີ ຖານະເງິນຄຳ ແຕ່ສິ່ງນັ້ນກໍເປັນພຽງແຕ່ຄວາມຄິດຝັນ ເພາະຕົນເອງເລືອກເກີດເອງບໍ່ໄດ້.

ມື້ນັ້ນ, ນາງນ້ອຍບໍ່ກັບບ້ານ ແລະ ບໍ່ໄປໂຮງຮຽນ, ນາງຕັດສິນໃຈຂັບລົດຈັກຜ່ານແສງແດດໄປຍັງສະຖານທີ່ແຫ່ງໜຶ່ງ ນັ້ນກໍຄືຮ້ານສ່ວນພ້າວຢູ່ແຄມຂອງ ເຊິ່ງເມື່ອກ່ອນເຂົາ ແລະ ນາງເຄີຍມາບ່ອນນີ້ເລື້ອຍໆ, ຢູ່ບ່ອນນີ້ ຕອບເຄີຍ ບອກຮັກກັບນາງເປັນຄັ້ງແຮກ ແລະ ຈາກນັ້ນເວລາມີບັນຫາຫຍັງທັງສອງຈະມາລະບາຍ ແລະ ແກ້ຂໍ້ຂ້ອງໃຈນຳກັນຢູ່ບ່ອນນີ້. ແຕ່ເທື່ອນີ້ບໍ່ມີເຂົາຄົນນັ້ນ, ທຸກຢ່າງອ້ອມກາຍມີແຕ່ຄວາມຫວ່າງເປົ່າມິດງຽບ ທັງໆທີ່ມີຜູ້ຄົນເຂົ້າອອກຮ້ານຢ່າງລຽນຕິດ, ນາງບໍ່ຮ້ອງໄຫ້ ແຕ່ນ້ຳຕາຫາກໄຫຼອອກມາ, ນາງພະຍາຍາມອົດກັ້ນບໍ່ຢາກຄິດເຖິງພາບເກົ່າໆ, ເວລານີ້ ແລະ ນາງຈິ່ງເລີ່ມຄິດເຖິງນຳສາວ ແລະ ຫຼານ ເພາະດວງຕາເວັນພວມຈະລາລັບອັບແສງ, ນ້າສາວຄົງຈະໄປຂາຍເຄື່ອງຢູ່ເດີນເຕະບານແລ້ວ ແລະ ຫຼານເດ! ຄົງຍັງບໍ່ມີຜູ້ໄປຮັບເທື່ອ ນາງຟ້າວລຸກຂຶ້ນ ແລະ ຫັນຫຼັງອຳລາກັບສະຖານທີ່ແຫ່ງນັ້ນ, ທຸກຢ່າງຢູ່ບ່ອນນີ້ ນາງຄຸ້ນເຄີຍກັບມັນດີ, ມາມື້ນີ້ ແລະ ນັບແຕ່ວິນາທີນີ້ ນາງຈະມາບ່ອນນີ້ເປັນຄັ້ງສຸດທ້າຍ.

ນາງຟ້າວກັບຄືນໄປຮັບຫຼານແລ້ວກໍກັບບ້ານໄປຫານຳຂອງນາງ ເຊິ່ງແມ່ນບ່ອນສຸດທ້າຍທີ່ຄູ່ຄວນກັບນາງ. ນາງນ້ອຍເຜີຍຍິ້ມອອກມາແລ້ວງຶກຫົວກັບຕົນເອງ "ແມ່ນແລ້ວ ຂ້ອຍຈະໄປຢູ່ບ່ອນທີ່ຄູ່ຄວນກັບຂ້ອຍ"

ນັບແຕ່ມື້ນັ້ນ, ນາງນ້ອຍເລີ່ມປັບຕົວເອງ ຕັ້ງໃຈຮ່ຳຮຽນສຶກສາເພື່ອອານາຄົດຂອງຕົວນາງ ແລະ ຄອບຄົວ, ເຖິງຈະເຈັບປວດທໍລະມານ, ເຖິງວັນເວລາຈະຜ່ານໄປແບບເຊື່ອງຊ້າລ້າເມື່ອຍ ແຕ່ນາງກໍກ້ຳກືນຝືນທົນ ແລະ ອົດບໍ່ໃຫ້ຄິດເຖິງຜູ້ຊາຍຄົນນັ້ນ. ມາເຖິງມື້ນີ້ ເຂົາອາດລືມນາງ, ແຕ່ຈະລືມ ຫຼື ບໍ່ລືມນັ້ນ ນາງກໍ່ໄດ້ປະວາງທຸກຢ່າງໄວ້ຢູ່ເບື້ອງຫຼັງໝົດແລ້ວ.

ແລະແລ້ວເດືອນໜຶ່ງຕໍ່ມາ, ໂດຍທີ່ນາງບໍ່ຄິດຝັນມາກ່ອນ, ນາງນ້ອຍກໍໄດ້ຮັບຈົດໝາຍຈາກແດນໄກ, ແຜຫົວໃຈທີ່ເປື່ອຍເນົ່າພວມຈະຫາຍວັນຫຼາຍຄືນນັ້ນກໍເຈັບປວດຄືນມາອີກ.

"ເປັນຫຍັງຈິ່ງມີຈົດໝາຍມາ, ເປັນຫຍັງບໍ່ເປັນຕາມທີ່ຂ້ອຍຄິດ"

ນາງນ້ອຍຈົ່ມພຶມພຳກັບຕົນເອງກ່ອນນາງຈະຈີກຊອງຈົດໝາຍສະບັບນັ້ນອອກມາອ່ານ. ຈົດໝາຍຂຽນມາວ່າ: ນ້ອງນາງທີ່ອ້າຍຮັກ ແລະ ຄິດເຖິງຢູ່ທຸກລົມຫາຍໃຈ, ຕະຫຼອດເວລາທີ່ອ້າຍຈາກມາ, ມັນເໝືອນກັບວ່າເຮົາສອງຢູ່ກັນຄົນລະຟາກຟ້າ, ອ້າຍບໍ່ຢາກນັບເດືອນ, ນັບປີແຕ່ອ້າຍຢາກນັບວິນາທີ ເພື່ອໃຫ້ຄວາມເປັນຢູ່ຄືແນວນີ້ຜ່ານໄປໄວເທົ່າທີ່ຈະໄວໄດ້, ນ້ອງຮູ້ບໍ່ວ່າມື້ອ້າຍອອກຈາກເມືອງຫຼວງພະບາງມາ ຫົວໃຈອ້າຍເກືອບແຕກສະຫຼາຍ, ອ້າຍລໍຖ້ານ້ອງ ແລະ ຢາກພົບນ້ອງ, ຢາກເຫັນຜູ້ຍິງທີ່ອ້າຍຮັກມາສັ່ງລາ ແຕ່ທຸກສິ່ງທຸກຢ່າງກໍເໝືອນຟ້າກັ່ນແກ້ງບໍ່ໃຫ້ພວກເຮົາໄດ້ພົບພໍ້ກັນ, ມື້ນັ້ນ ອ້າຍບໍ່ຢາກຂຶ້ນຮອດເຄື່ອງບິນ, ອ້າຍຢາກແລ່ນກັບຄືນໄປຫານ້ອງ...ນ້ອງຮູ້ບໍ່ວ່າໃນເວລາເຄື່ອງບິນຈະຍານ ຂຶ້ນສູ່ທ້ອງຟ້າ ອ້າຍພຶມພຳອຳລານ້ອງດ້ວຍຫົວໃຈທີ່ຄ່ຳຄ້ອຍຫົດຫູ່. ອ້າຍບໍ່ຮູ້ວ່າຍ້ອນສາເຫດອັນໃດນ້ອງຈິ່ງບໍ່ໄປສົ່ງອ້າຍ ຕາມການນັດໝາຍ...ແຕ່ເຖິງຢ່າງໃດກໍຕາມອ້າຍກໍເຂົ້າໃຈນ້ອງ, ນ້ອງອາດຄາວຽກຊ່ວຍນຳ ຫຼື ຕິດທຸລະຄາຮຽນ...

ນ້ອງ, ອ້າຍຄິດຮອດນ້ອງຕະຫຼອດເວລາ, ອ້າຍຢາກກັບມາຫານ້ອງ, ເຖິງຢ່າງໃດກໍຕາມອ້າຍກໍໄດ້ແຕ່ພາວະນາຂໍ ຢ່າໃຫ້ຮັກເຮົາສອງມີອັນເປັນໄປກໍພໍ. ຖ້ານ້ອງມີເວລາກໍສົ່ງຂ່າວຄາວມາຫາອ້າຍແດ່, ອ້າຍຈະເຝົ້າລໍຄອຍຢ່າງໜ້ອຍຈົດໝາຍຂອງນ້ອງຈະຊ່ວຍໃຫ້ອ້າຍມີກຳລັງໃຈໃນການສຶກສາຮ່ຳຮຽນຕໍ່ໄປ. ອ້າຍຂໍລົບກວນນ້ອງພຽງແຕ່ເທົ່ານີ້. ພົບກັນໃໝ່ກັບຈົດໝາຍສະບັບໜ້າ.

ຮັກ ແລະ ຄິດເຖິງສະເໝີ.

(ຕ໋ອບ) ເມື່ອນາງອ່ານຈົດໝາຍຈົບລົງ ຄວາມຫວັງທີ່ປຽບເໝືອນແສງທຽນພໍຮິບຂີ່ໃກ້ຈະດັບມອດນັ້ນ, ມາບັດນີ້ກໍຄ່ອຍໆ ຮຸ່ງຂຶ້ນອີກຄັ້ງໃໝ່. ເຖິງວ່າກຸຫຼາບແດງຊໍ່ນັ້ນທີ່ສະໜາມບິນຫຼວງພະບາງຈະສູນຫາຍ, ຫ່ຽວແຫ້ງ ແລະ

ຊຸຫຼົ່ນປ່ຽນສີໄປແລ້ວກໍຕາມ, ນັ້ນກໍເປັນພຽງການຮ່ວງໂຮຍໄປຕາມການເວລາ. ສໍາລັບນາງແລ້ວ ກຸຫຼາບຊໍ່ນັ້ນຍັງເບັ່ງບານສະທ້ານເຈີດຈ້າ ແລະ ຊຸ່ມເຢັນຢູ່ໃນຫົວໃຈຂອງນາງນ້ອຍຕະຫຼອດໄປ ແລະ ຕັ້ງແຕ່ມື້ນັ້ນເປັນຕົ້ນມາ, ມື້ທີ່ນາງໄດ້ຮັບຈົດໝາຍຈາກແດນໄກຊີວິດຂອງນາງກໍ່ມີແຕ່ການຈົດຈໍ່ລໍຄອຍຕໍ່ການກັບມາຂອງຄົນທີ່ນາງຮັກ.

## ບົດຕົວຢ່າງ
## ວິໄຈນະວະນິຍາຍ
## ເລື່ອງ "ສອງຟາກຝັ່ງ" ເຫຼັ້ມທີ 1 ແຕ່ງໂດຍ ສ. ບຸບຜານຸວົງ

### 1. ພາກສະເໜີ




ນະວະນິຍາຍ "ສອງຟາກຝັ່ງ" ຂອງ ທ່ານ ສຸວັນທອນ ບຸບຜານຸວົງ ໄດ້ອີງໃສ່ເລື່ອງຈິງໃນປະຫວັດສາດ ເພື່ອປະດິດ ສ້າງນະວະນິຍາຍຍາວເຖິງ 3 ເຫຼັ້ມ. ເລື່ອງໄດ້ສ່ອງແສງກ່ຽວ ກັບເຫດການຕົວຈິງໃນປະຫວັດສາດຢ່າງເລິກເຊິ່ງສົມຄວນ. ດັ່ງນັ້ນ, ນະວະນິຍາຍສອງຟາກຝັ່ງ ຈຶ່ງເປັນເລື່ອງໜຶ່ງຂອງລາວ ທີ່ມີທັງຄຸນຄ່າຄວາມໝາຍ ທາງດ້ານການສ່ອງແສງຕົວຈິງ, ທາງດ້ານປະຫວັດສາດ ແລະ ຄຸນຄ່າຄວາມໝາຍທາງດ້ານ ສິລະປະການປະດິດແຕ່ງ.

ເລື່ອງ "ສອງຟາກຝັ່ງ" ໄດ້ຄັດມາຈາກ ນະວະນິຍາຍ "ສອງຟາກຝັ່ງ" ເຫຼັ້ມ1 ເຊິ່ງປະດິດແຕ່ງໂດຍ: ທ່ານ ສຸວັນທອນ ບຸບຜານຸວົງ ພິມທີ່ໂຮງພິມແຫ່ງຊາດ ພິມໃນປີ 1982 ມີທັງ ໝົດ 175 ໜ້າ.

### 2. ເນື້ອໃນລວມ

ນະວະນິຍາຍ "ສອງຟາກຝັ່ງ" ມີເນື້ອໃນລວມເວົ້າເຖິງການໂຕນຂ້າມຝັ່ງຂອງນັກຮົບປະຕິວັດທີ່ໜີຮ້ອນໄປເພິ່ງເຢັນ ລົງຜິດເຊື່ອມິດເປັນສັດຕູ ຜົນສຸດທ້າຍກໍຕົກທຸກໄດ້ຍາກຕ້ອງໜີຕາຍກັບມາບ້ານເກີດເມືອງນອນທີ່ມີຄວາມ ອຸດົມສົມບູນຂອງຕົນ ດ້ວຍຄວາມທຸກທໍລະມານ ແລະ ເວົ້າເຖິງຄວາມໂຫດຮ້າຍປ່າເຖື່ອນຂອງພວກຕໍາຫຼວດສະຫຍາມ ທີ່ເຮັດທຸກວິທີທາງເພື່ອໂຄ່ນລົ້ມນັກຮົບປະຕິວັດຊາດລາວເຮົາ ແລະ ສ້າງຄວາມສັບສົນວຸ້ນວາຍໃຫ້ກັບປະເທດລາວເຮົານໍາເອົາການພະນັນ, ເລື່ອງໂສເພນີເຂົ້າມາເຜີຍແຜ່ໃນລາວ ເປັນຕົ້ນແມ່ນສ້າງພັບ, ສ້າງບາ ເຮັດເປັນໂຮງໂສເພນີ, ສ້າງບ່ອນຫຼິ້ນການພະນັນ ແລະ ຈອບອອຍເອົາແມ່ຍິງລາວເຮົາຂ້າມໄປຝັ່ງໄທ.

### 3. ແບ່ງຕອນ

**ຕອນທີ 1 ແລງມື້ໜຶ່ງຢູ່ເດີ່ນບ້ານ ຈິນຮອດ ຄືຄົນອັບປັນຍາ**

ເນື້ອໃນ ຕອນນີ້ເວົ້າເຖິງການກໍ່ກວນສ້າງຄວາມວຸ້ນວາຍຂອງພວກທາງການຊີໄອເອທີ່ໄດ້ສົ່ງຄົນມາຫາເລື່ອງທໍາຮ້າຍພວກແນວລາວຮັກຊາດຂອງລາວເຮົາ ແລະ ເວົ້າເຖິງການໂຕນໜີຂ້າມໄປຝັ່ງໄທຂອງປະຊາຊົນລາວເຮົາ.

**ຕອນທີ 2 ດວງຕາເວັນໃກ້ຈະລັບ ຈົນຮອດ (ok) ໂອເຄ**

ເນື້ອໃນ ຕອນນີ້ເວົ້າເຖິງຊີວິດການເປັນຢູ່ຂອງ ນາງວານິດດາ ແລະ ບົດຮຽນຊີວິດຂອງ ນາງສົມເພດ ທີ່ໄດ້ພົບພໍ້ຜ່ານຜ່າຄວາມທຸກທໍລະມານມາຢ່າງໜັກໜ່ວງ ນອກນີ້ຍັງໄດ້ເວົ້າເຖິງຄວາມຊົ່ວຊ້າຂອງທ້າວສິງ ແລະ ພວກຊີໄອເອ.

**ຕອນທີ 3 ດວງຕາເວັນໃກ້ຈະຕົກດິນ ຈົບຮອດ ເຫັນດີ**

ເນື້ອໃນ ຕອນນີ້ເວົ້າເຖິງຄວາມທຸກທໍລະມານຂອງນາງມາລີກັບລູກ ແລະ ການໂຕນຂ້າມມາຝັ່ງລາວຂອງນາງ ນອກນີ້ຍັງໄດ້ເວົ້າເຖິງຄວາມທຸກທໍລະມານຂອງທ້າວນາກ ທີ່ຖືກພວກຕຳຫຼວດສະຫຍາມທຸບຕີແລ້ວຫາແຜ່ນຈັບເຂົ້າຄຸກ ແລະ ການໂຕນໜີອອກຈາກຄຸກຂອງທ້າວນາກ ກັບໝູ່ອີກສາມຄົນ.

**ຕອນທີ 4 ນາງວະນິດດາ ຈົບຮອດ ກໍ່ຈະຮູ້ຄວາມຈິງບໍ່ໄວກໍຊ້າ**

ເນື້ອໃນ ເວົ້າເຖິງຄວາມເກັ່ງກ້າສາມາດ ແລະ ຄວາມສະຫຼາດຫຼັກແຫຼມຂອງພວກແນວລາວຮັກຊາດທີ່ສາມາດ ຈັບຄຸມເອົາພວກສັດຕູທັງຫຼາຍເຂົ້າຄຸກໄດ້ ແລະ ເວົ້າເຖິງຄວາມຮັກລະຫວ່າງທ້າວເສີດ ກັບ ນາງສົມເພດ ນອກນີ້ຍັງໄດ້ ເວົ້າການສືບສວນຂອງກອງບັນຊາການທີ່ໄດ້ສືບຖາມທ້າວນາກກ່ອນຈະຂ້າມໄປຝັ່ງລາວ.

**ຕອນທີ 5 ນາງມາລີ ຈົບຮອດ ອາຍໆດ້ອຍການແກວ່ງຫົວຄ່ອຍໆ**

ເນື້ອໃນ ຕອນນີ້ເວົ້າເຖິງຄວາມມີຫຼັກໝັ້ນຂອງນາງມາລີ ບໍ່ວ່າຈະຕົກຢູ່ໃນສະຖານະການແບບໃດ ນາງກໍ່ຍັງຊື່ສັດຕໍ່ຜົວຢ່າງບໍ່ປ່ຽນແປງ ຮັກດຽວໃຈດຽວບໍ່ຍອມຈຳນົນ ແລະ ເວົ້າເຖິງຄວາມມີນ້ຳໃຈຂອງພວກແນວລາວຮັກຊາດ ທີ່ມີຄວາມໂອບເອື້ອອາລີ ຊ່ວຍເຫຼືອປະຊາຊົນທີ່ພວມຕົກທຸກໄດ້ຍາກ ຂາດທີ່ເພິ່ງພາອາໄສ ໂດຍບໍ່ຫວັງຜົນຕອບແທນ.

**ຕອນທີ 6 ທ້າວນາກບໍ່ຮູ້ຈະເຮັດຫຍັງ ຈົບຮອດ ໄປນຳການປະຕິວັດ!**

ເນື້ອໃນ ຕອນນີ້ເວົ້າເຖິງການຫວນຄືນກັບບ້ານເກີດເມືອງນອນຂອງທ້າວນາກ ແລະ ເອື້ອຍໃຊ້ ນັ້ນກໍຄືນາງ ຄຳສອນ ທີ່ຕ່າງຝ່າຍຕ່າງກໍພາກັນໂຕນຂ້າມຂອງ ເພື່ອໜີຮ້ອນໄປເພິ່ງເຢັນ ໂດຍລົງຜິດຖືມິດເປັນສັດຕູ ແລະເວົ້າເຖິງ ຄວາມຮູ້ສຶກຜິດຂອງທັງສອງເອື້ອຍນ້ອງຕໍ່ກັບປະເທດຊາດ, ບ້ານເກີດເມືອງນອນຂອງຕົນ.

## 4. ວິເຄາະ

- **ການໂຕນໜີຂ້າມຝັ່ງຂອງປະຊາຊົນລາວ**

ປະຊາຊົນລາວເຮົາໃນສະໄໝນັ້ນ ສ່ວນຫຼາຍແລ້ວຄິດວ່າແມ່ນແນວລາວຮັກຊາດກຳລັງໂຄ່ນລົ້ມພວກຂຸນເສີກທັງຫຼາຍຈິ່ງພາກັນໂຕນໜີຂ້າມຂອງ ເພື່ອໜີຮ້ອນໄປເພິ່ງເຢັນ ໂດຍບໍ່ມີຜູ້ໃດນາບຂູ່ກົດຂີ່ຂົ່ມເຫັງ ຫຼື ໄລ່ໜີແຕ່ປະການໃດ ແຕ່ປະຊາຊົນລາວເຮົາຫາກມີຄວາມຕື່ນຢ້ານ ແລະ ຫູເບົາເຊື່ອຄົນງ່າຍ ບໍ່ວ່າເພິ່ນຈະມາຈອບອອຍດ້ວຍວິທີໃດກໍຕາມ ແມ່ນພາກັນໄປໂດຍບໍ່ມີການພິຈາລະນາເລີຍວ່າທີ່ເຂົາເວົ້າມານັ້ນຖືກ ຫຼື ຜິດວ່າແມ່ນຄວາມຈິງ ຫຼື ບໍ່ແມ່ນແຕ່ຜົນສຸດ ທ້າຍແລ້ວພວກທີ່ຂ້າມໄປນັ້ນລ້ວນແລ້ວແຕ່ຖືກພວກເຈົ້າໃຫຍ່ນາຍໂຕຈອບອອຍເອົາໄປຂາຍເພື່ອກິນຄ່າຫົວສຸດທ້າຍແລ້ວ ພວກທີ່ຫຼົງຜິດເຊື່ອມິດເປັນສັດຕູກໍໄດ້ໄປຕົກທຸກໄດ້ຍາກໃນບ້ານເພິ່ນດິນທ່ານ ຂາດທີ່ເພິ່ງພາບາງຄົນຖືກຈັບ ບາງຄົນກໍຖືກຂົ່ມເຫັງຈົນກາຍເປັນ ນາງນົກລາຕີ ຫາກິນກາງຄືນ.

ເຫດການດັ່ງກ່າວ ໄດ້ເຮັດໃຫ້ຄົນລາວເຮົາໄດ້ຮັບຮູ້ວ່າບໍ່ມີທີ່ໃດ ບ້ານໃດ, ເມືອງໃດຈະດີ ແລະ ມີຄວາມສຸກເທົ່າກັບບ້ານເກີດເມືອງນອນຂອງຕົນເອງ ເຖິງວ່າບໍ່ມີຫຍັງກິນ ເຮົາກໍຍັງຊອກເດັດຜັກຫັກໜໍ່ມາຄົວກິນໄດ້ ແຕ່ໄປຢູ່ບ້ານເພິ່ນເມືອງທ່ານຫັ້ນຕີ ບໍ່ມີເງິນແມ່ນຢູ່ບໍ່ໄດ້ ໃຜໆກໍ່ລັງກຽດ ຊ້ຳບໍ່ໜຳເຂົາຍັງຄິດປອງຮ້າຍເຮົາອີກດ້ວຍ ຄົນທີ່ບໍ່ດີຂີ້ລັກມັກຈົກກໍ່ມີຫຼາຍ ເວົ້າໄປແມ່ນອັນຕະລາຍກວ່າບ້ານເຮົາຊ້ຳ.

- **ຊີວິດການເປັນຢູ່ຂອງນາງວານິດດາກັບນາງສົມເພດ ແລະ ຄວາມຊົ່ວຊ້ຳຂອງທ້າວສິງກັບພວກຊີໄອເອ**

ພາຍຫຼັງທີ່ອາວອາທັງສອງຂອງ ນາງວານິດດາ ພາກັນອອກຈາກບ້ານໂຕນໄປເມືອງໄທ ຊີວິດຂອງນາງກໍໄດ້ປ່ຽນໄປ ນັບແຕ່ມື້ປະຊາຊົນແຂວງວຽງຈັນລຸກຮື້ຂຶ້ນຍຶດອຳນາດການປົກຄອງເປັນຕົ້ນມາ ນາງວານິດດາ ກໍໄດ້ເຂົ້າຮ່ວມໃນຂະບວນການຊາວໜຸ່ມລາວຮັກຊາດ ແລະ ຄະນະຊາວໜຸ່ມລາວຮັກຊາດກໍໄດ້ຕິດຕາມຊ່ວຍເຫຼືອນາງ ທາງດ້ານແນວຄິດຫຼັກໝັ້ນຢູ່ຕະຫຼອດມາ. ນາງເກີດທີ່ກຸງເທບ ເມືອງຫຼວງຂອງລາດຊະອານາຈັກໄທ ແລະ ໄດ້ມາໃຫຍ່ທີ່ເມືອງ ຫຼວງວຽງຈັນ. ນາງເປັນຄົນທີ່ມີຄວາມເມດຕາປານີຕໍ່ຜູ້ຄົນທີ່ພວມຕົກທຸກໄດ້ຍາກຂາດທີ່ເພິ່ງພາອາໄສ ໄຮ້ມິດເປັນຕົ້ນແມ່ນນາງສົມເພດ. ນາງສົມເພດກໍ່ເປັນຍິງສາວຄົນໜຶ່ງທີ່ເຄີຍຜ່ານຊີວິດອັນໂຫດຮ້າຍປ່າເຖື່ອນມາຫຼາຍຮູບແບບທັງທຸກທໍລະມານແບບບໍ່ມີໃຜທຽບເທົ່ານາງຕ້ອງດີ້ນດົນຫາທຸກວິທີທາງເພື່ອໃຫ້ຊີວິດຂອງຕົນອອກມາຈາກຄວາມມືດມົນ ແລະ ສັບສົນວຸ້ນວາຍນັ້ນ. ແຕ່ຟ້າເອີຍຊີວິດຂອງນາງຫຍັງມາອາພັບແທ້ ຖືກຕົວະແລ້ວຕົ້ມອີກຍ້ອນຄວາມຮູ້ບໍ່ເທົ່າທັນຈິ່ງຖືກລອກລວງໄປຂາຍກາຍເປັນນາງນົກລາຕີແບບຂ້າມຄືນ ນາງຕ້ອງຝືນໃຈຍອມຈຳນົນ

ຫົນທາງດຽວທີ່ນາງຈະອອກຈາກນີ້ໄດ້ ຄືຕ້ອງໜີກັບມາຝັ່ງລາວໃຫ້ໄດ້ ແຕ່ເຖິງຢ່າງໃດກໍຕາມ ແປ້ວແຫ່ງຄວາມທຸກທໍລະມານທີ່ນາງເຄີຍຜ່ານ ມານັ້ນບໍ່ອາດຈະລົບດ້ວຍວິທີໃດກໍບໍ່ມີວັນຈືດຈາງ ແຕ່ນາງກໍຈຳນົນທົນກັບຊີວິດແບບນັ້ນ ແລະ ກັບມາເລີ່ມຕົ້ນຊີວິດໃໝ່ທີ່ມີຄວາມສຸກຢູ່ທີ່ຝັ່ງລາວ.

ສ່ວນທ້າວສິງກໍແມ່ນພວກຊີໄອເອຕົວຮ້າຍກາດຜູ້ໜຶ່ງ ແລະ ນາງດາວວຽງ ເຊິ່ງມີສາຍານາມວ່າ ອີທ້າຍລາມ ມັນແມ່ນໄທດຳແຕກມາແຕ່ເມືອງແຖງ ພວກຊີໄອເອໄດ້ສ້າງມັນເປັນນັກສືບ ແລະ ສົ່ງມາວຽງຈັນ ກຸ່ມພວກນີ້ແມ່ນພວກທີ່ອັນຕະລາຍທີ່ສຸດພວກມັນຈະຫາເລື່ອງຈອບອອຍເອົາພວກທີ່ເປັນນາຍພົນ, ນາຍພັນ, ຮ້ອຍເອກ, ຮ້ອຍໂທ ທີ່ມີຄວາມເກັ່ງກ້າໄປຂ້າຫຼືຫາເລື່ອງໃສ່ໃຫ້ຕິດຄຸກ ເພື່ອພວກມັນຈະສະດວກໃນການເຂົ້າມາຮຸກຮານບ້ານເມືອງຂອງພວກເຮົາ. ກຸ່ມພວກນີ້ຈະບໍ່ມີຄວາມປານີ ເຊິ່ງຈະເຮັດທຸກວິທີທາງເພື່ອໃຫ້ໄດ້ເງິນມາບໍ່ວ່າຈະແລກດ້ວຍວິທີໃດກໍຕາມມັນໄດ້ ສະແດງອອກໃນບົດເລື່ອງຕອນທີ່ທ້າວສິ່ງໄດ້ໄປຈອບອອຍເອົານາງອານິດດາຢູ່ເຮືອນ ເພື່ອສົ່ງໄປຝັ່ງໄທໄລ່ເອົາຄ່າຫົວ ເປັນຈຳນວນເງິນມາເປັນຂອງຕົນເອງໂດຍບໍ່ຄິດເຫັນໃຈຫົວອົກແມ່ຍິງລາວ.

➢ **ຄວາມທຸກທໍລະມານຂອງນາງມາລີກັບທ້າວນາກ ແລະ ການໂຕນໜີກັບຝັ່ງລາວ**

ພໍແຕ່ກ້າວເຂົ້າມາໃນດິນແດນສະຫຍາມບໍ່ພໍເທົ່າໃດ ທ້າວນາກກໍຖືກຕຳຫຼວດສະຫຍາມຈັບເຂົ້າຄຸກໃນຂໍ້ຫາວ່າເປັນສາຍສືບຂອງທາງການສົ່ງມາ ສ່ວນນາງມາລີກັບລູກຕອນນີ້ແມ່ນສິ້ນເນື້ອປະດາຕົວ ນາງກຳລັງກັບຄືນມາສູ່ຄວາມພັງພິນາດ ອາຜູ້ທີ່ເພິ່ງພາຂອງນາງໄດ້ໝົດບຸນໄປແລ້ວ ນາງຈຳເປັນໄດ້ໄປເຊົ່າເຮືອນຢູ່ ຊີວິດຂອງນາງຕອນນີ້ແມ່ນຕົກຢູ່ໃນສະຖານະການຖງຕາແຈ ນາງໄດ້ພາລູກເລາະຕາມຕົວເມືອງເພື່ອຊອກຫາວຽກເຮັດງານທຳ ແຕ່ກໍບໍ່ມີແມ້ແຕ່ຜູ້ຈະຫຼຽວ ແລ ການເປັນຢູ່ຂອງນາງຕອນນີ້ຫຍຸ້ງຍາກທີ່ສຸດ ເພາະນາງມີແຕ່ລາຍຈ່າຍບໍ່ມີລາຍຮັບ ຊ້ຳບໍ່ໜຳໜໍສິມຈິດກັບປອງທຳຮ້າຍນາງຢູ່ຕະຫຼອດເວລາ ຈົນເຮັດໃຫ້ນາງຢູ່ບໍ່ໄດ້ນາງເລີຍພາລູກໜີໄປທີ່ ນະຄອນພະນົມໄປອາໄສຢູ່ນຳເກດແກ້ວ ແຕ່ຢູ່ບໍ່ພໍເທົ່າໃດ ມາລີກໍຖືກຄະດີກ່າວຫາວ່າຂ້າໜໍສິມຈິດຕາຍ ແລະ ຖືກຕຳຫຼວດສະຫຍາມສັ່ງການນຳຈັບຈຶ່ງເຮັດໃຫ້ ນາງຢູ່ທີ່ປະເທດໄທບໍ່ໄດ້ ເລີຍໄດ້ໂຕນໜີກັບປະເທດລາວຄືນມາດ້ວຍຄວາມທຸກທໍລະມານ.

ສ່ວນທ້າວນາກແມ່ນຖືກທຸບຕີຈົນໜ້າຂຽວຕາຊ້ຳຫຼັງ ແລະ ໜ້າເອິກຕະຫຼອດຮອດແຂ່ງແຂນມີແຕ່ຮອຍແຜ່ສົ່ງເສື້ອແມ່ນຂາດຫ້ຽນໝົດ ທ້າວໄດ້ແຕ່ຄິດເສຍໃຈທີ່ໄດ້ໜີຈາກບ້ານເກີດເມືອງນອນມາຄິດເສຍໃຈຕໍ່ພັກພວກທີ່ຫາເລື່ອງໃສ່ວ່າເປັນພວກແນວລາວ ທ້າວນາກມີຄວາມຄຽດແຄ້ນຢ່າງໜັກທີ່ໃຊ້ງານບໍ່ໄດ້ພັກບໍ່ໄດ້ຜ່ອນຮອດບ່ອນບໍ່ໄດ້ຢູ່ ນຳລູກນຳເມຍຄວາມເອົາໃຈໃສ່ໃນໜ້າທີ່ວຽກງານບາດສຸດທ້າຍແລ້ວແມ່ນມາຫາເລື່ອງຈັບເຂົ້າຄຸກ ທຸບຕີຢ່າງທໍລະມານ ເວລາຜ່ານໄປ ພໍແຕ່ທ້າວນາກຮູ້ຂ່າວວ່າພວກຕຳຫຼວດໄທຈະສັ່ງປະຫານທ້າວນາກກັບພັກພວກທີ່ຢູ່ໃນຄຸກກໍໄດ້ພາກັນໂຕນໜີອອກຈາກຄຸກມາ ເພື່ອຫາທາງໂຕນຂ້າມຂອງກັບມາບ້ານເກີດເມືອງນອນຂອງຕົນທີ່ຈາກໄປແລ້ວຄ່ອຍຄິດຫາວິທີກັບມາຊອກຫາລູກກັບເມຍທີ່ຮັກຂອງຕົນຕາມຫຼັງ.

➢ **ຄວາມເກັ່ງກ້າຂອງພວກແນວລາວຮັກຊາດ**

ຖືວ່າພວກແນວລາວຮັກຊາດຂອງພວກເຮົານີ້ແມ່ນມີຄວາມເກັ່ງກ້າ ມີຄວາມສະຫຼາດຫຼັກແຫຼມ ສາມາດສືບຫາທີ່ຢູ່ຂອງພວກຊີໄອເອ ແລະ ເຂົ້າຈັບຄຸມໄດ້ສຳເລັດ ບໍ່ວ່າຈະຕ້ອງເອົາຊີວິດເຂົ້າແລກ ພວກແນວລາວຂອງພວກເຮົາກໍບໍ່ຢ້ານກວ່າພ້ອມທີ່ຈະສູ້ເພື່ອລົບລ້າງພວກທີ່ບໍ່ດີຄິດຫວັງທຳລາຍຄວາມສະຫງົບສຸກຂອງບ້ານເມືອງເຮົາ ແລະ ປົດປ່ອຍ ເອົາປະຊາຊົນລາວທີ່ຖືກພວກມັນຕົວະຍົວຫຼອກລວງໄປຂາຍນັ້ນກັບມາບ້ານເກີດເມືອງນອນຂອງຕົນຢ່າງປອດໄພ. ພວກແນວລາວຂອງພວກເຮົານີ້ແມ່ນມີຄວາມຮອບຄອບບໍ່ວ່າຈະເຮັດວຽກງານໃດຈະນ້ອຍ ຫຼື ໃຫຍ່ກໍມີການວາງແຜນໄວ້ເປັນລະບຽບ ແລະ ປະຕິບັດໄປຕາມຂັ້ນຕອນ ໂດຍທີ່ພວກມັນບໍ່ຮູ້ຕົວ ພວກແນວລາວຮັກຊາດນີ້ເພີ່ນຕໍ່ສູ້ເພື່ອຄວາມເປັນເອກະລາດ ແລະ ສິດອະທິປະໄຕອັນແທ້ຈິງໃຫ້ແກ່ປະເທດ ອັນແສນຮັກຂອງພວກເຮົາ.

➢ **ຄວາມມີຫຼັກໝັ້ນຂອງນາງມາລີ**

ເຖິງວ່ານາງມາລີຈະໄປຕົກຢູ່ຝາກຟ້າແຫ່ງຫົນໄດ້ ຢູ່ຕາມລຳພັງກັບໃຜ ແຕ່ນາງກໍບໍ່ເຄີຍຄິດທໍລະຍົດກັບຄົນທີ່ຕົນຮັກ ນາງຍັງມີຫຼັກໝັ້ນຮັກໜຶ່ງໃຈດຽວເຖິງມີຊາຍອື່ນມາກ່ຽວ ເປັນຊາຍທີ່ມີທຸກສິ່ງທຸກຢ່າງພ້ອມທີ່ຈະມອບໃຫ້ນາງໄດ້ ແຕ່ນາງກໍຍັງຢືນຢັນພ້ອມທີ່ຈະເກັບຄວາມຮັກ ແລະ ຄວາມບໍລິສຸດທີ່ຕົນມີນັ້ນໄວ້ມອບໃຫ້ສາມີຂອງຕົນພຽງຄົນດຽວ ບໍ່ວ່າຈະທຸກຍາກຂາດເຂີນປານໃດນາງກໍສູ້ຢ່າງບໍ່ທໍ້ຖອຍ ເຖິງນາງຕ້ອງແລກດ້ວຍຊີວິດນາງກໍ່ຍອມເພື່ອປົກປ້ອງກຽດສັກສີຂອງລູກແມ່ຍິງໄວ້ ນາງເປັນຍິງສາວທີ່ມີຄວາມສວຍງາມ ແຕ່ນາງໄດ້ໂຕນໜີຂ້າມໄປຝັ່ງໄທກັບຜົວ ແຕ່ສຸດທ້າຍນາງກໍໄດ້ພັດພາກຈາກຜົວຊັດເຊພະເນຈອນລ້ຽງລູກຢູ່ຜູ້ດຽວ ດ້ວຍການເລາະຫາຍາດຕິພີ່ນ້ອງ

ທີ່ຕົນມີຢູ່ສະຫຍາມ ແຕ່ຄົນເລົ່ານັ້ນກັບລັງກຽດສຽດສີ ຫວັງຈະທຳຮ້າຍນາງ ເລີຍເຮັດໃຫ້ນາງຕ້ອງເອົາລູກໜີໄປເລື້ອຍໆໂດຍບໍ່ມີຈຸດໝາຍປາຍທາງ ແລະ ນາງຫວັງຢ່າງດຽວວ່າສັກວັນນາງຕ້ອງກັບໄປທີ່ປະເທດລາວ ເຊິ່ງເປັນບ້ານເກີດເມືອງນອນຂອງຕົນ ເຖິງວ່າຈະທຸກຍາກຍາກ ແຕ່ຄົນລາວເຮົາກໍມີນ້ຳໃຈບໍ່ໄດ້ລັງກຽດແບບຄົນສະຫຍາມກະທຳກັບເຮົາແບບນີ້.

ນາງກັບລູກໄດ້ພາກັນຍ່າງເລາະໄປຕາມຖະໜົນມຸ່ງໜ້າໄປສູ່ນອກເມືອງ ນາງຫວັງວ່າອີກບໍ່ນານຕົວເອງຄົງຈະໄດ້ພົບກັບຜົວ ນາງມາລີທັງຢາງທັງຄິດວ່າ ທີ່ຜ່ານມາຊີວິດຂອງນາງໄດ້ປະສົບກັບຄວາມຂັດສົນຈົນໃຈ ແຕ່ນາງຍອມຕາຍດີກວ່າ ນາງບໍ່ຍອມໃຫ້ຕົນຕົວຂອງນາງຕ້ອງມາເປື້ອນເປິເປັນອັງຂາດ ນາງຈະຮັກສາຄວາມບໍລິສຸດສັດຊື່ຕໍ່ຜົວຈົນເຖິງທີ່ສຸດ.

➢ **ການກັບໝູ່ບ້ານເກີດເມືອງນອນຂອງທ້າວນາກ ແລະ ເອື້ອຍໃພ້**

ພາຍຫຼັງທີ່ທ້ວນາກ ກັບເອື້ອຍໃພ້ຕ່າງຝ່າຍຕ່າງພາກັນໂຕນຂ້າມຂອງ ເພື່ອໜີຮ້ອນໄປເພິ່ງເຢັນ ແຕ່ທ້າວນາກໄດ້ປະສົບກັບເຄາະຮ້າຍພັດພາກຈາກຄອບຄົວ ເວລານີ້ທ້າວນາກບໍ່ຮູ້ເລີຍວ່າເມຍ ແລະ ລູກຂອງຕົນພາກັນກິນຢູ່ແນວໃດ? ທ້າວນາກຮູ້ສຶກຜິດທີ່ຜ່ານມາລາວຊ້ຳພັດຫຼົງເຊື່ອພວກຂຸນເສິກປະຕິການຂາຍຊາດ ໂຕນໜີຈາກບ້ານເກີດເມືອງນອນອັນແສນຮັກຂອງຕົນໄປເປັນຂ້ອຍຂ້າມ້າຕ່າງໃຫ້ພວກປະຕິການຂຸນເສິກດັ່ງກ່າວຍອມໃຫ້ພວກມັນຂຸດເນື້ອເກືອໜັງ ຜົນສຸດທ້າຍທີ່ຕົນໄດ້ຮັບກໍຄືໄດ້ຊີມລົດແຫ່ງຄວາມເຈັບແສບມາ ແຕ່ຕອນນີ້ສຸດທີ່ດີໃຈທີ່ໄດ້ກັບຄືນມາຫາບ້ານເກີດເມືອງນອນຂອງຕົນ.

## 5. ສະຫຼຸບ

❖ **ດ້ານເນື້ອໃນ**

ນະວະນິຍາຍ ສອງຟາກຝັ່ງນີ້ ມີເນື້ອໃນເວົ້າເຖິງການໂຕນຂ້າມຝັ່ງຂອງນັກຮົບປະຕິວັດທີ່ໜີຮ້ອນໄປເພິ່ງເຢັນລົງຜິດເຊື່ອມິດເປັນສັດຕູ ຜົນສຸດທ້າຍກໍຕົກທຸກໄດ້ຍາກຕ້ອງໜີຕາຍກັບມາບ້ານເກີດເມືອງນອນຂອງຕົນດ້ວຍຄວາມທຸກທໍລະມານ ແລະ ເວົ້າເຖິງຄວາມໂຫດຮ້າຍປ່າເຖື່ອນຂອງພວກຕຳລວດສະຫຍາມທີ່ເຮັດທຸກວິທີທາງເພື່ອໂຄ່ນລົ້ມນັກຮົບປະຕິວັດຊາດລາວເຮົາ ແລະ ຂົ່ມເຫັງແມ່ຍິງລາວ ສ້າງຄວາມສັບສົນວຸ້ນວາຍໃຫ້ກັບປະເທດລາວເຮົານຳເອົາການພະນັນ, ເລື່ອງໂສເພນີເຂົ້າມາເຜີຍແຜ່ໃນລາວເປັນຕົ້ນແມ່ນສ້າງພັບ, ສ້າງບາເຮັດເປັນໂຮງໂສເພນີ, ສ້າງບ່ອນຫຼິ້ນການພະນັນ ແລະ ຈອບອອຍເອົາແມ່ຍິງລາວຂ້າມໄປຝັ່ງໄທ.

❖ **ດ້ານສິລະປະການແຕ່ງ**

ນະວະນິຍາຍເຫຼັ້ມນີ້ເປັນເລື່ອງທີ່ຍາວແຕ່ງຕາມເຫດການປະຫວັດສາດຕົວຈິງທີ່ທ່ານໄດ້ຜ່ານ ແລະ ພົບພໍ້ມາຢ່າງມີຊີວິດຊີວາ. ການສ້າງຕົວລະຄອນໃນແຕ່ລະຝ່າຍລ້ວນແຕ່ສາມາດສະແດງໃຫ້ເຫັນລັກສະນະລວມທີ່ເປັນຕົວແທນຂອງຕົວຈິງນັ້ນ ມີການພັນລະນາຮູບຮ່າງພາຍນອກ ແລະ ແນວຄິດຈິດໃຈຂອງຕົວລະຄອນຢ່າງລະອຽດ. ຜູ້ແຕ່ງໄດ້ຍົກໃຫ້ຜູ້ອ່ານໄດ້ເຫັນຕົວລະຄອນໃນຫຼາຍປະເພດຄົນ ສ່ວນການໃຊ້ສັບພາສາແມ່ນອຸດົມສົມບູນ ເປັນຕົ້ນແມ່ນສັບສຳນວນບອກເລົ່າ, ສຳນວນເຈລະຈາ ການພັນລະນາຊີວິດການເປັນຢູ່ ການນຸ່ງຖື ແລະ ນິດໄສໃຈຄໍພ້ອມທັງຄວາມສົ້ມເຄີຍຂອງ ຕົວລະຄອນ ແຕ່ສັບສ່ວນຫຼາຍຈະຊອດກະຈາອອກໄປທາງສັບໄທຫຼາຍ

# ນະວະນິຍາຍເລື່ອງ
# "ສອງຟາກຝັ່ງ" ໂດຍ ສ. ບຸບຜານຸວົງ
## ຕອນທີ 1

ແລງມື້ໜຶ່ງຢູ່ເດີນບ້ານ ນາຍພົນເທີດ ມີລົດຫຼາຍແບບຫຼາຍສີ ຈອດຮຽງລາຍກັນຢູ່. ຫຼຽວຂຶ້ນໄປເທິງເຮືອນ ເຫັນແສງໄຟຟ້າສະຫວ່າງສະໄຫວຢູ່ປານກາງເວັນ. ມີນາຍພັນນາຍພົນເອົາເມຍເອ້ອ້ອຍກັນ, ຄູ່ໃຜຄູ່ລາວ, ກົດເພດໃສ່ກັນ. ເບິ່ງພວກທີ່ເອີ້ນວ່າ "ຍາມອມຍານາງ" ຜູ້ໃດກໍ່ແປະແຈະແປດແຈດຍິ້ມໆແຍ້ມໆ ອວ່າຍໜ້າໄປເຫັນໃຜກໍ່ຕອມຫົວຍໍມືໄຫວ້ຍິ້ມແຍ້ມແຈ່ມໃສ ຄືຈັ່ງວ່າໃຈດີເອົາແທ້ເອົາວ່າ. ເບິ່ງເພິ່ນຜູ້ເຕີບເບີດໜ້າເອີກເປັນທະເລີ ຈັກຄວາມຝຣັ່ງອັງກິດ ໄຫຼອອກປານຂີ້ແບ້. ບາງຄົນເມຍບໍ່ຢູ່ກໍ່ມາເຮັດອໍເຊາະໃສ່ເມຍໝູ່ເບິ່ງເພິ່ນສົ່ງສາຍຕາຫວານໃສກັນປານຕາແມວຫຼຽວເຫັນປາຢ້າງ. ສ່ວນຍາມອມຍານາງເມື່ອຮູ້ວ່າມີຄົນສົນໃຈນຳຕົນກໍຍິ່ງກົດເພດບາດຢ່າງພໍເປັນສິນອຍນາຍ ເກີບປ່ອງສົນ ສູງພໍພຸດແລ້ວ ກໍຍັງຢາກແຢງຢີຂຶ້ນຕື່ມ ເພື່ອຢາກໃຫ້ຮ່າງຄີງອ້ອນແອ້ນຂຶ້ນກວ່າເກົ່າ ອາໂກຍ ! ຈັ່ງແມ່ນຊາດເປັນຕາເບື່ອ.

ນາຍພົນເທີດຜູ້ເປັນເຈົ້າພາບເອົາເມຍມາຢືນຮຽງ ເພື່ອຕ້ອນຮັບແຂກ, ເມຍຂອງເພິ່ນຊື່ວ່ານາງເປັນຄົນຕໍ່ເຖິງຄົ້ວດົກແຕ່ງຕົວແບບນົກເປົ້າຂຽວອ່ອນ. ສິ້ນ, ເສື້ອຕະຫຼອດຮອດແພບຽງໂຕ່ງລ້ວນແຕ່ເປັນສີຂຽວອ່ອນ ສ່ວນນາຍພົນເຈົ້າພາບເປັນຄົນສູງໃຫຍ່ຫວີຜົມແປງຕິດຊຸດລາຕີສົ່ງດຳ, ເສື້ອຂາວມັດເນັສີຟ້າຖືແວ່ນຕາຂາວຂອບຄຳບັນດາແຂກ ທີ່ຖືກເຊີນຫຼັ່ງຈາກຈັບມືນາຍພົນ ແລະ ຍໍມືນົບນາງພັນລະຍາເຈົ້າພາບແລ້ວກໍ່ພາກັນກາຍເຂົ້າໄປຫາຫ້ອງໃນເຊິ່ງເປັນຫ້ອງກວ້າງປະດັບປະດາແບບຊາວຕາເວັນຕົກ. ພວກນາຍທະຫານທັງຫຼາຍ ພາກັນຢືນລົມກັນເປັນໝູ່ສີໝູ່ຫ້າສ່ວນຍາມອມຍານາງບາງຄົນກໍຢືນບາງຄົນກໍນັ່ງ ຕາມກ້າວອີ້ນວມທີ່ລຽນກັນເປັນແຖວອ້ອມຫ້ອງຖັດຈາກຫ້ອງນີ້ຍັງມີຫ້ອງ ພິເສດຫ້ອງໜຶ່ງອີກນ້ອຍກວ່າຫ້ອງນີ້ນ້ອຍໜຶ່ງ. ໃນຫ້ອງນີ້ມີເຈົ້າໃຫຍ່ເຈົ້າໂຕນັ່ງລົມກັນຢູ່. ຜູ້ທີ່ມີສຽງກວ່າໝູ່ໃນຫ້ອງນີ້ ແມ່ນທ້າວສຸກທີ່ພວກເພິ່ນຍ້ອງວ່າ ເປັນນັກການເມືອງຊັ້ນຢ້ຽມ. ທ້າວສຸກຕິດຊຸດລາຕີຢ່າງໜຶ່ງຜາຍທີ່ສຸດເຂົາເປັນຄົນຕໍ່ເກິ່ງໜ້າມົນຕານ້ອຍ ປາກສຽງລາວໃຕ້ເມຍຂອງເຂົາ ຊື່ວ່ານາງມອມນັ່ງຢູ່ຄຽງຂ້າງປາກສຽງເມືອງຫຼວງພະບາງຫົວຂອງ ເມຍສູງກວ່າຜົວປະມານສອງນິ້ວ.

ທ້າວສຸກມັກປາກພາສາຝຣັ່ງກວ່າພາສາລາວ. ເມື່ອກ່ອນນີ້ຄືໄດ້ຂ່າວວ່າ ທ້າວສຸກເອົາຄົນໜັງຂາວ ມີອາຊີບແນວໃດນັ້ນບໍ່ແຈ້ງ, ຮູ້ແຕ່ວ່າມັນແຫ້ນທ້າວສຸກຈົນເກືອບຫຼ້ອນໝາກກະແຕ້ ແລະ ຍ້ອນອິ່ມນ້ຳເຜີ້ງພະເຈົ້າເລີຍປະຮ້າງກັນ ແລ້ວທ້າວສຸກຈິ່ງຖືກແພປຽງໂຕ່ງສາວເມືອງຫຼວງຮັດຄໍຈົນມືນຕາກົບຢູ່ລ້ອກລໍ້. ພວກທີ່ນັ່ງຢູ່ອ້ອມຂ້າງທ້າວສຸກລ້ວນແຕ່ແມ່ນຜູ້ເຕີບ ເບິ່ງຜູ້ໃດກໍມີຕຸ້ບພີຕຶງປານຮູບໃນຝາແອບຢາກາພະນັ່ງຟັງທ້າວສຸກເວົ້າຢ່າງເອົາໃຈໃສ່. ສ່ວນທ້າວ ສຸກເຫັນໝູ່ສົນໃຈນຳຄຳເວົ້າຂອງຕົນກໍແຮງຂຶ້ນຂຶ້ນໝາດມືຊ້ຽງຫົວເຂົ່າພໍເປັນຈັ່ງຈະມືຂວາຊີ້ພຸ້ນຊີ້ພີ້ໄປຕາມຈັ່ງຫວະຂອງຄຳເວົ້າ.

ທ້າວສຸກເວົ້າວ່າ: ພວກເຮົາມີກຳລັງເຖິງ ເຈັດໝື່ນຄົນຢູ່ໃນກຳມືອຳນາດທາງດ້ານກົດໝາຍ ຢູ່ໃນກຳມືເຮົາມີແຕ່ຄົນທີ່ມີເສັ້ນປະສາດຂີ້ກະເດືອນທໍ່ນັ້ນລະ ຫົວໃຈຈິງສັ່ນຕໍ່ສະພາບການສຸມື້ນີ້. ຂ້ອຍຫວະ? ຫຸຍ ! ຍັງໝັ້ນຄືເສົາຊີມັງ. ຂ້ອຍບໍ່ທັນເວົ້າເຖິງກຳລັງອັນມະຫາສານຂອງສະຫະລັດ. ພວກທ່ານຫຼຽວເບິ່ງແຜນທີ່ແດ່ແມ້ ! ທາງຕາເວັນຕົກແມ່ນປະເທດໄທໃຜກໍຮູ້ແລ້ວຕີ ຖານທັບຂອງສະຫະລັດຢູ່ໄທ ເຂັ້ມແຂງເຖິງພຽງໃດ? ຢູ່ກຳພູຊາເຖິງວ່າພວກແດງຍິງປືນໃຫຍ່ ເຂົ້າໃສ່ເດີ່ນຍົນໂປຈັນຕົງກໍ່ຕາມແຕ່ທ່ານລອນໂນນກໍ່ຈະປາບພວກແດງໃນທີ່ສຸດ. ຢູ່ຫວຽດນາມໃຕ້ ເຖິງວ່າຫວ່າງນີ້ ພວກແດງບຸກລຸກແຮງແຕ່ ແຕ່ທ່ານຫງ້ຽນວັນທ້ຽວກໍຈະແກ້ມືຄືນ ຈິ່ງເຊື່ອໝັ້ນ ! ສະຫະລັດລົງທຶນມາທໍ່ໃດແລ້ວ ພວກເພິ່ນຈະບໍ່ປະຫວຽດນາມໃຕ້ເດັດຂາດ. ຢູ່ທະເລຈີນມີກອງເຮືອຮົບທີເຈັດ ເຊິ່ງເປັນກອງທັບທີ່ຊະນະເລີດຂອງ ສະຫະລັດ. ຖ້າຄອມມຸນິດ ເອະ ອະ ແຮງຂຶ້ນເບິ່ງແມ້ ! ເຄື່ອງບິນຍຸດທະສາດ ເບ 52 ຂອງສະຫະລັດຢູ່ເກາະກວາມ ແລະ ຢູ່ອູຕະເພົາໄຫຼອອກເທື່ອນີ້ບອກວ່າເສັດອີແຕນໂລດລະ ! ທຶກເບິ່ງ ! ຄັນຢາກເຫັນໂຕແມ່ມັນແມ່ນບໍ? ເຫີເອີ !

ພໍເວົ້າສຸດຄວາມ ທ້າວສຸກຫົວຂຶ້ນເອີອກໆ ຄືວ່າແຊບວ່ານົວເອົາແທ້ເອົາວ່າ, ພໍດີໃນເວລານັ້ນ ນາງເຈົ້າພາບຢ່າງ ເຂົ້າມາດອມຫົວລົງ ຍໍມືນົບຕໍ່ທຸກຄົນພ້ອມທັງເວົ້າວ່າ:

- ເຊີນທ່ານຍິງທ່ານຊາຍເຂົ້າຮ່ວມພານເຂົ້າຂ້ານ້ອຍ! ແຫ່ ! ແຫ່ ! ເຊີນ ! ເຊີນ ແຫ່ ! ແຫ່ !

ທຸກຄົນລຸກຂຶ້ນ ບາງຄົນແປງຄໍເສື້ອບາງຄົນແປງຊິງຜົມ ນາງເຈົ້າພາບຈັບມືນາງຟອນເມຍທ້າວສຸກ ຍ່າງອອກໜ້າພາໄປຫາຫ້ອງກໍ້າຂວາເຊິ່ງເປັນຫ້ອງໃຫຍ່ ດອກໄຟຟ້າປະດັບປະດາຢ່າງງາມຕາ ມີໂຕະອາຫານຈັດວາງຢ່າງເປັນລະບຽບຢູ່ຕໍ່ໜ້າໂຕະ ມີນາງສາວຢືນຄອຍຮັບໃຊ້ ຢ່າງນອບນ້ອມ. ຖ້າໃຜກ້າວໄປຮອດນາງສາວດັ່ງກ່າວກໍຍື່ນຈານທີ່ມີຊ້ອມບ່ວງຢອງຢູ່ແລ້ວ, ແຂກພຽງແຕ່ຕັກເອົາອາຫານຕາມໃຈຊອບ ໃສ່ຈານຂອງໃຜລາວແລ້ວໄປຫາບ່ອນນັ່ງກິນຕາມສະບາຍ.

ງານລ້ຽງນີ້ເປັນງານລ້ຽງທີ່ຈັດຂຶ້ນຫຼັງຈາກເມຍນາຍພົນເຈົ້າພາບກັບມາແຕ່ພາກໃຕ້. ຕາມຂ່າວເປົ່າປີວ່າເມຍ ນາຍພົນເຈົ້າພາບ ໄດ້ຮັບຜົນກຳໄລຢ່າງລົ້ນເຫຼືອໃນການສົ່ງຄວາມຂ້າມຝາກ. ສະນັ້ນ ຫຼັງຈາກຍົກຈອກດື່ມເພື່ອສຸຂະພາບ, ຂອງນາຍທະຫານທຸກຄົນ ນາຍພົນເຈົ້າພາບກໍ່ບໍ່ເວົ້າຫຍັງຫຼາຍພຽງແຕ່ສະແດງຄວາມຄອບໃຈຕໍ່ໝູ່ເພື່ອນທີ່ ສະລະເວລາອັນມີຄ່າມາມ່ວນຊື່ນອົບອຸ່ນຄອບຄົວໃນໂອກາດພັນລະຍາສຸດທີ່ຮັກຂອງເພິ່ນກັບຄືນມາແຕ່ພາກໃຕ້ຢ່າງ ປອດໄພ. ຕໍ່ຈາກນັ້ນກໍ່ມີການເຊີນລົງມືຮັບປະທານອາຫານ. ບັນດາແຂກທີ່ຖືກເຊີນມາຮອມລວມມີແຕ່ນາຍທະຫານ ຊັ້ນນາຍຮ້ອຍຂຶ້ນໄປ ລວມທັງໝົດປະມານສາມສິບຄົນ.

ຄູ່ຜົວເມຍທີ່ສົມຜົວສົມເມຍກວ່າໝູ່ໃນງານລ້ຽງນີ້ແມ່ນຄູ່ຜົວເມຍຮ້ອຍເອກນາກ ເຂົາທັງສອງເປັນຄົນສູງສະຫງ່າມີແວວຕາອັນແຫຼມຄົມ. ນາງມາລີຜູ້ເປັນເມຍກໍ່ສົມຊາວ່າເປັນຄົນງາມໃນວົງການສັງຄົມ ເມຍນາຍຮ້ອຍທະຫານ ແຫ່ງລາດຊະອານາຈັກລາວ. ນາງມາລີຖືແອນຕາຂາວ,ນາງທັງກິນທັງເຫຼືອດເບິ່ງໝູ່ບາງເທື່ອນາງຍິ້ມຢ່າງມີສະເໜ່ ນາງດື່ມໄດ້ແຕ່ເຫຼົ້າທີ່ມີອຸນຫະພູມຕໍ່າເຊັ່ນ ເຫຼົ້າ, ເບຍເປັນຕົ້ນ. ນາງມັກຟັງໝູເວົ້າ ແລະ ເກັບຕົວຢູ່ຢ່າງງຽບໆ. ນາງຮັກ ແລະ ບູຊາຜົວ. ຫຼຽວເບິ່ງຜົວເທື່ອໃດນາງມັກຍິ້ມເສຍກ່ອນຈິ່ງເວົ້າ ແລະ ເວົ້າດ້ວຍນອບນ້ອມ.

ອ້າຍນາກ, ໃບໜ້າຂອງນ້ອງເປັນແນວໃດ?

ທ້າວ ນາກ ຫຼຽວເບິ່ງໃບໜ້າອັນຂາວນວນຂອງເມຍແລ້ວເວົ້າວ່າ:

ແດງຂຶ້ນເລັກນ້ອຍ.

ຄວາມຮ້ອນຂອງເຫຼົ້າໄດ້ເຮັດໃຫ້ໃບໜ້າ ທີ່ຂາວນວນຂອງນາງແດງອົ່ງຕົ່ງຂຶ້ນກວ່າເກົ່າ ຜົວຂອງນາງກໍ່ດື່ມເຫຼົ້າຫຼາຍຈອກແຕ່ຍັງຮັກສາທ່າທີ່ສະຫງົບສະຫງ່ຽມດັ່ງເດີມ. ເວລານັ້ນຢູ່ໂຕະກໍ້າຂວາປະກົດມີສຽງກວ່າໝູ່. ໄດ້ຍິນສຽງເວົ້າສຽງຫົວເປັນແຊວໆ ຈົນບໍ່ເຂົ້າໃຈວ່າໃຜເວົ້າຫຍັງຕໍ່ຫຍັງ. ນາງເຈົ້າພາບດີໃຈ ຫົວແທ້ຫົວວ່າຈົນສະມັກຄັກແຄ້ນ. ໃນເວລາງານລ້ຽງພວມດຳເນີນໄປຢ່າງຄຶກຄື້ນນັ້ນ ມີສຽງຮ້ອງດ້ວຍຄວາມຕົກໃຈ ແລະ ໝົດຫວັງດັ່ງຂຶ້ນເຮັດໃຫ້ທຸກຄົນສຸມສາຍຕາໄປໃສ່, ນາງມອມເມຍຂອງທ້າວສຸກພວມເປັນລົມ ດ້ວຍຄວາມຕົກໃຈຕໍ່ຈາກສຽງມະໂລໂຈເຈໄດ້ຟົດສະນັ່ນຂຶ້ນ ທຸກຄົນຫຸ້ມໄປຫານາງມອມ. ສ່ວນທ້າວສຸກລົງເຮືອນຂຶ້ນລົດໄປໃສບໍ່ມີໃຜຮູ້ ນາງມອມໄດ້ຮ້ອງຂຶ້ນ ແລະ ເປັນລົມໄປເມື່ອຮູ້ຂ່າວວ່ານ້າບ່າວຂອງຜົວຖືກຄົນຮ້າຍລອບຂວາງ ໝາກແຕກໃສ່ໃນເວລາເພິ່ນຂີ່ລົດກັບມາແຕ່ໄປກິນຕົ້ມກະປຸທະເລຢູ່ທີ່ໂຮງເຕັ້ນລຳນຶກແກ້ວວ່າຊັ້ນ.

ງານລ້ຽງທີ່ພວມຄຶກຄື້ນໄດ້ຖືກປິດລົງຕາມແບບໄມ້ຮ້ອຍຂຽດຂາດ. ພວກແຂກທີ່ມາຮ່ວມໃນງານບໍ່ທັນລາເຈົ້າພາບກູກ່ອນມືງລຸນອອກຈາກຫ້ອງໄປໂດຍບໍ່ໄດ້ເອີ້ນສັ່ງກັນພໍຄວາມ. ທັງນີ້ກໍ່ເພາະພວກເຂົາອຸບປະໂຫຼກຄິດເອົາເອງ ວ່າ: "ແນວລາວຮັກຊາດເລີ່ມລົງມືໂຄນລົ້ມພວກເຂົາ" ເປັນໜ້າຢາກຫົວ ແມ່ນເວລາລົງຂັ້ນໄດໄປຢ່າງຟ້າວຟັ່ງນັ້ນ ມີຍາ ມອມຍານາງຈຳນວນໜຶ່ງຄວ້າພຸ້ນຄວ້ານີ້ຍ້ອນເກີບຢ່ອງສົ້ນສູງ, ເວົ້າໃສ່ເຈົ້າໃຫຍ່ນາຍໂຕຈຳນວນໜຶ່ງຕາດີໆກໍ່ໃສ່ແອນ ຕາຂາວເພື່ອແອັກທ່າໃຫ້ຍົດຂອງເພິ່ນເພີ່ມນໍ້າເພີ່ມຕ່ອນຂຶ້ນຕື່ມ ນັ້ນກໍ່ຖຸຍພຸ້ນຄວາພີ້ຊອກຫາແອນຕາຂອບຄຳຂອງເພິ່ນ. ໂອຍ ! ຈັ່ງແມ່ນມັນເປັນຕາເບິ່ງ.

ຮ້ອຍເອກນາກໄດ້ຖືກເອີ້ນໄປສຳນັກງານເສນາທິການກອງທັບດ່ວນສະນັ້ນຈິ່ງຟ້າວໄປສົ່ງເມຍແລ້ວຂັບລົດອອກຈາກເຮືອນໄປທັນທີ ນາງມາລີກ້າວຂຶ້ນເຮືອນດ້ວຍທ່າທີຢຸດໆຢ່ອນໆ ຄອຍເບິ່ງລົດຂອງຜົວ ແລ່ນອອກຈາກເດີນ ບ້ານໄປດ້ວຍຄວາມເປັນຫ່ວງ. ຫຼັງຈາກລົດຂອງຜົວໄປຫວິດແລ້ວນາງຈິ່ງໄຂປະຕູເຂົ້າໄປໃນຫ້ອງຖ່າຍເຄື່ອງນຸ່ງແລ້ວຈັບ ເອົາແອບເຄື່ອງຖັກແສ່ວ ມານັ່ງຖັກເສື້ອຖ້າຜົວຢູ່ໃນຫ້ອງນອນຢ່າງງຽບໆ ນາງເປັນຫ່ວງນຳຜົວ ແລະ ສົນໃຈນຳສະພາບ ການຂອງບ້ານເມືອງ ເຊິ່ງນາງເຫັນວ່າມັນເຄັ່ງຮ້ອນຂຶ້ນທຸກມື້.

ໄລຍະໜຶ່ງຕໍ່ມາມີສຽງລົດແລ່ນມາຈອດ ແລະ ບີບແກຢູ່ຕໍ່ໜ້າປະຕູຮົ້ວ. ນາງລຸກຂຶ້ນຍ່າງໄປຫາປ່ອງຢ້ຽມເປີດ ຜ້າກັ້ງແຍງສອງອອກໄປເບິ່ງເຫັນນາງວະນິດດາຜູ້ເປັນຫຼານພວມແລ່ນໄປໄຂປະຕູຮົ້ວ. ຄາວໜຶ່ງລົດຟຶກສີຟ້າ

ແລ່ນເຂົ້າມາໜ້າບ້ານ. ນາງມາລີເຂົ້າໃຈໂລດວ່າ ແມ່ນນາງແສງເດືອນມາຫາ ເພາະນາງຮູ້ເຈົ້າຂອງລົດຄັນນັ້ນໄດ້ດີ ນາງຈຶ່ງຍ່າງອອກ ໄປຫາຫ້ອງຮັບແຂກ. ນາງແສງເດືອນມາພ້ອມທັງຫ້ອງດ້ວຍຄວາມສົນໃຈວ່າ:

ໂຕກຽມນອນເສີຍຢູ່ຫວະ !

ຮ້ອຍເກືອບສິບສອງໂມງແລ້ວເດ !

ອ້າຍນາກຢູ່ເຮືອນຫວະ !

ເພິ່ນມາສົ່ງເຮົາແລ້ວຂັບລົດອອກໄປໂລດ. ບອກວ່າບໍ່ຕ້ອງຖ້າ ອາດຈະເດິກຈຶ່ງມາ ແຕ່ເຮົາຕ້ອງຖ້າເພິ່ນມາພຸ້ນ ລາຈຶ່ງນອນໄດ້ ຈັກເປັນຈັ່ງໃດຫູ ຫົວໃຈຂອງເຮົາເປັນສີສັ້ນໆຢ້ານໆ ຄືຈັ່ງວ່າຈະມີເຫດຮ້າຍອັນໃດ ອັນໜຶ່ງເກີດຂຶ້ນ. ໂຕມາຊວນເຮົາໄປທ່ຽວຫວະ? ເຮົາໄປໃສບໍ່ໄດ້ແລ້ວເດິກດຶນແນວນີ້ ເຮົາຢ້ານເຫັນທະຫານອ້າຍນ້ອງ ເຮົາຫັນໃຈບໍ່ທົ່ວທ້ອງ ໂລດ. ເອີ ! ເປັນແນວໃດ ເລື່ອງນຳປາວທ້າວສຸກ? ເຮົາມີແຕ່ເວົ້າ ລືມຮອດເອົານ້ຳຊາເຢັນມາສູ່...

ໄດ້ແລ້ວ ! ເຮົາຄິດວ່າໂຕກຽມໄປແລ້ວຊັ້ນດອກ.

ກຽມໄປໃສ?

ນາງມາລີ ຖາມຂຶ້ນດ້ວຍຄວາມສົນໃຈ.

ຮວາຍ ! ໂຕບໍ່ທັນຮູ້ຫຍັງຫວະ? ເສືອບ້ານກັບເສືອປ່າ ຊິກັດກັນແລ້ວໄດ !

ໂຕເອົາສັງມາເວົ້າໃຫ້ເຮົາຢ້ານແທ້. ອ້າຍ ນາກ ກໍບໍ່ຢູ່ຈະໃຫ້ເຮົາເຮັດແນວໃດ?

ເຮົາເຊື່ອວ່າຈັກໜ່ອຍອ້າຍນາກ ຈະກັບມາໂຕກຽມເຄື່ອງໄວ້ຖ້າ ເພິ່ນມາແລ້ວພ້ອມກັນໄປໂລດ.

ຊິໄປໃນຄືນນີ້ໂລດຫວະ !

ໂຕພັດຍັງຖ້າໄປຮອດມື້ໃດອີກ !

ນາງ ມາລີ ນັ່ງຄິດຢູ່ຄາວໜຶ່ງ ແມ່ຍ່າ ກໍບໍ່ທັນໄປຫາເພິ່ນມະລຸບປຸບປັບໄປໂລດແນວນີ້ຈະທັນເອົາຫຍັງໄປນຳ. ນາງ ແສງເດືອນ ເດົາຄວາມສົນໃຈຂອງນາງ ມາລີ ໄດ້, ເລີຍຢ້ຳວ່າ:

ໂຕເປັນຫ່ວງນຳເຄື່ອງຂອງຊັ້ນຫວະ? ຫືງ ! ບໍ່ຕາຍຍັງຫາໄດ້. ພວກເຮົາພ່າຍໃນເວລາຮ້ອນນີ້ຊື່ໆດອກ ໄລ່ພວກ...ນັ້ນອອກຈາກເມືອງແລ້ວ ເຮົາກໍກັບຄືນມາອີກເຫັນບໍ່ ! ບ່າວທ້າວສຸກຖືກລອບສັງຫານແລ້ວເດ !

ໂຕກໍຊິໄປບໍ່, ແສງເດືອນ !

ເຮົາຫວະ ! ເຮົາບໍ່ຢູ່ເດິກ ຈັກໜ້ອຍລູກທອງບິນຂ້າມຫົວຈິວຈ່າວເຮົາທົນບໍ່ໄດ້ດອກ.

ໂຕມາຊວນເຮົາໄປຫວະ, ນີ້ !

ບໍ່ດອກ ເຮົາເຫັນພວກເພິ່ນກຽມພົບພັບ ພົບພັບ ເຮົາເລີຍມາຫາໂຕຄິດວ່າໂຕກໍພວມກຽມຊັ້ນດອກ.

ໄປຫຼືຢູ່ເຮົາເວົ້າບໍ່ທັນໄດ້, ເອົາແຕ່ຄວາມເຫັນຂອງອ້າຍນາກ.

ຄັນຊັ້ນອ້າຍນາກຍັງບໍ່ທັນເວົ້າຫຍັງນຳໂຕຫວະ?

ບໍ່

ອ້າຍນ້ອງເພິ່ນ ນີ້ຈັ່ງແມ່ນໃຈເຢັນ ອ່ານເນດ ກໍໃຈເຢັນເອົາແທ້ເອົາວ່າຈີນເຮົາເກີດທົນຫວາຍກ່ອນຈະມາຫາໂຕ ເຮົາກໍໄປຫາເພິ່ນພຸ້ນລະ ໂຕຮູ້ບໍ່ວ່າເພິ່ນພວມເຮັດຫຍັງ? ເພິ່ນພວມຂຸດໜອງປານິນເສີຍຢູ່ ທັງບ້ານທັງເມືອງເພິ່ນຕື່ນ ເພິ່ນເຕັ້ນຢ້ານເສີກຢ້ານເສືອ ອ້າຍເນດນຸ່ງແພອາບນ້ຳຈ້ອນຕູດຂຸດດິນເສີຍຢູ່. ບໍ່ໃຫ້ເຮົາເຫຼືອອີກເຫຼືອໃຈແນວໃດ. ຄັນຊິເວົ້າຫຼາຍ ຄວາມແມ່ຍ່າໂຕພັດງອຍປ່ອງຢ້ຽມເບິ່ງຢູ່ເຮົາເຫຼືອໃຈ ເລີຍຂຶ້ນລົດຂັບວິນມາຫາໂຕນີ້ລະເພື່ອໃຫ້ເບົາສະໝອງແດ່.

ນາງ ມາລີ ຍິ້ມຫົວແລ້ວເວົ້າວ່າ:

ບໍ່ແມ່ນແມ່ຍ່າຂອງເຮົາຜູ້ດຽວໄດ ແສງເດືອນ ເອີຍ !

ຫຸ້ຍ! ເພິ່ນໝັ້ນເຮົາໄວ້ ຍັງບໍ່ທັນຜູກຂໍ່ຕໍ່ແຂນເຮົາໃສ່ອ້າຍເນດໄດເດີ !

ຄັນຊັ້ນ ພວກໂຕຊິແຕ່ງດອງກ່ອນຈຶ່ງໄປ, ຫຼືວ່າເປີດໂລດ.

ເຮົາຫວະ? ເຮົາຢາກເປີດໂລດລະ ແຕ່ອ້າຍເນດນັ້ນຕີໃຈເຢັນຄືໝາກເຫັບ ເຮົາມານີ້ກໍຢາກພົບອ້າຍນາກແດ່ແດ່ ເພິ່ນບໍ່ຢູ່ ເຮົາຂໍໃຫ້ໂຕເວົ້າຊ່ວຍເຮົາແດ່ ຄັນອ້າຍນາກບໍ່ບອກອ້າຍເນດບໍ່ຕິງດອກ. ໂອ້ຍ ! ເດິກເຕີບແລ້ວຕະຫວ່ານີ້ ! ເຮົາ ລາເມື່ອກ່ອນເດີ, ເປັນແນວໃດຂ່າວໃຫ້ເຮົາຮູ້ແດ່ ກ່ອນຫຼືລຸນເຮົາກໍບໍ່ຢູ່ໄດ້ດອກເຮົາຢ້ານເສີກ.

ພໍເວົ້າສຸດຄວາມ ນາງ ແສງເດືອນຜຸດລຸກຂຶ້ນ ສະແດງຄວາມອຳລາໂດຍຟ້າວຟັ່ງແລ້ວຍ່າງອອກເຮືອນໄປ, ນາງ ມາລີ ອອກໄປສົ່ງ ແລ້ວກັບເຂົ້າໄປນັ່ງຖັກເສື້ອ ຖ້າຜົວຢູ່ໃນຫ້ອງນອນ ຕໍ່ໄປໄດ້ຍິນສຽງລົດຄັນໃດແລ່ນຜ່ານມາ ນາງກໍຢືດ ຄໍຫຼວງເບິ່ງ. ຈົນຮອດປາຍໜຶ່ງໂມງ ຜົວຂອງລາວຈຶ່ງກັບມາ. ນາງມາລີ ໄດ້ເວົ້າເລື່ອງທີ່ ນາງແສງເດືອນ ມາຫາສູ່ຜົວຟັງ, ຜົວຂອງນາງມິດຟັງດ້ວຍທ່າທີ່ສະງົບສະງຽມສຸດທ້າຍນາງເລີຍຖາມວ່າ:

ພວກເຮົາຈະເຮັດແນວໃດ?

ທ້າວນາກ ດູດຢາມິດຢູ່ຄາວໜຶ່ງຈຶ່ງຍົກໂມງຕໍ່ມືຂຶ້ນມາເບິ່ງແລ້ວເວົ້າວ່າ: ນອນເທາະເດິກແລ້ວ, ສະພາບການເຄັ່ງຕຶງທີ່ສຸດ ແຕ່ຖ້າຟັງໄປນີ້ລະ.

ສອງຜົວເມຍພາກັນຂຶ້ນຕຽງມອດໄຟນອນ. ນາງມາລີ ເໜັບຕົວເຂົ້າໃກ້ຜົວ ນາງຮູ້ສຶກສະບາຍໃຈ ແລະ ເຊື່ອໝັ້ ນເມື່ອມີຜົວຢູ່ຄຽງຂ້າງ. ນາງໄດ້ເຊືອບຫຼັບໄປດ້ວຍຄວາມສຸກ.

ມີແລງມື້ໜຶ່ງ ທ້າວນາກກັບມາແຕ່ການຊຳກວ່າທຸກເທື່ອພໍກ້າວເຂົ້າເຮືອນກໍ່ເວົ້າຕໍ່ເມຍວ່າ:

ມາລີ ເອີຍ ! ພວກເຮົາຢູ່ວຽງຈັນຕໍ່ໄປບໍ່ໄດ້ແລ້ວຕ້ອງໂຕນຂ້າມໄປຝັ່ງໄທໄວທໍ່ໃດຍິ່ງດີ ເອົາແຕ່ເຄື່ອງຕິດຕົວໄປ ນຳເລັກນ້ອຍເພາະພວກເຮົາຍັງຈະຕີເອົາຄືນ. ກ່ຽວກັບເລື່ອງນີ້ອ້າຍໄດ້ເປີກສາກັບອາວເນດແລ້ວ ເຄື່ອງຂອງເຮືອນຊານ ມອບໄວ້ໃຫ້ແມ່. ອາວເນດຈະຢູ່ມ້ຽນເຄື່ອງຂອງ ແລະ ເຮັດໜັງສ້ຽນໜັງສືຊ່ວຍແມ່. ພວກເຮົາເອົາແຕ່ເຄື່ອງພັດຖ່າຍ ເລັກນ້ອຍໄປຈັກໜ່ອຍຈະມີລົດມາຕ້ອນເອົາ. ລົດພວກເຮົາເອົາໄວ້ໃຫ້ອານິດາໃຊ້.

ເວົ້າແລ້ວທ້າວນາກລຸກຂຶ້ນຍ່າງໄປຫາລູກທີ່ພວມຫຼິ້ນຢູ່ກັບນາງອານິດາ. ທ້າວນາກອຸ້ມເອົາລູກແລ້ວບອກໃຫ້ຫຼານຮູ້ວ່າຕົນຈະໄດ້ຈາກໄປ. ນາງອານິດາບໍ່ເຂົ້າໃຈເລີຍຖາມດ້ວຍຄວາມສົນໃຈວ່າ:

ພວກອາວຈະໄປໃສ?

ພວກອາວຈະຜ່າຍໄປເມືອງໄທຊົ່ວຄາວ ບໍ່ດົນດອກພວກອາວຈະກັບມາ ຫຼານຮັກສາເຮືອນເຮົາໄວ້ຖ້າ.

ນາງອານິດາເຮັດຊຶງຈຶ່ງຢູ່ຄາວໜຶ່ງ ຈຶ່ງເວົ້າຂຶ້ນດ້ວຍຄວາມຕົກໃຈວ່າ:

ພວກອາວໄປແລ້ວຫຼານຈະຢຸ່ນຳໃຜ?

ທ້າວນາກພະຍາຍາມ ປະເລົ່າປະໂລມຫຼານ ດ້ວຍຖອຍຄຳອ່ອນຫວານວ່າ:

ອາວເນດຈະມາຢູ່ເປັນເພື່ອນຫຼານ ເຄື່ອງຂອງໃນເຮືອນແມ່ນຂອງຫຼານທັງນັ້ນ. ສະນັ້ນຫຼານຕ້ອງເບິ່ງແຍງເອົາ ຢ່າງຮອບຄອບ.

ນາງອານິດາບໍ່ປາກ ກົ້ມຫົວຮັບເອົາຄຳເຕືອນຂອງທ້າວນາກ. ຕໍ່ມານາງມາລີອອກມາຫາເພື່ອໃຫ້ອາຫຼານເຂົ້າລົມ ກັນຢ່າງສະດວກ ທ້າວນາກອູ້ມລູກອອກໄປຫ້ອງນອກເຫັນຫີບສອງໜ່ວຍລຽນກັນຢູ່ ທ້າວນາກຍົກລອງເບິ່ງແຕ່ລະໜ່ ວຍເຫັນວ່າມັນໜັກພໍຄວນ. ເວົ້າແທ້ນາງມາລີເປັນແມ່ເຮືອນທີ່ຮອບຄອບກະກຽມຫຍັງກໍໄວ. ທ້າວນາກຮູ້ສຶກເປັນສີ ສອບວອບວາດໃດວາດໜຶ່ງພາຍໃນໃຈເມື່ອຫຼຽວເບິ່ງບ່ອນຢູ່ບ່ອນກິນ, ໄປຢູ່ບ້ານເພິ່ນເມືອງທ່ານຈະຢູ່ກິນແນວໃດ. ທ້າວນາກຈຳໄດ້ດີໃນຄາວຍັງເປັນນັກສຶກສາຢູ່ປະເທດນອກ. ໂອຍເຈົ້າແມ່ຂ້ອຍເອີຍ! ຄິດຮອດບ້ານຈົນເກືອບຈະຮຽນໜັ ງສືກໍບໍ່ໄດ້ ຄິດຮອດແກງໜໍ່ໄມ້ໃສ່ຢານາງ ຄິດຮອດບຸນສົງພະ ແລະ ບຸນບັ້ງໄຟ ຄິດຮອດດິນຟ້າອາກາດຂອງເມືອງລາວ, ຍາມຟ້າຮ້ອງເດືອນສາມໂອຍ! ຄິດຮອດບ້ານຈົນງ່ວມຈົນເຫງົາ ໃນເວລາທີ່ທ້າວນາກອຸ້ມລູກຢືນຢູ່ຕໍ່ໜ້າປາກປະຕູ ປ່ອງຢ້ຽມ ຄິດສິງກະສິງເກິ້ງຕໍ່ການໂຕນໄປຝັ່ງໄທນັ້ນ ນາງມາລີກ້າວເຂົ້າມາຮັບເອົາລູກຈາກອ້ອມອົກຂອງຜົວພ້ອມທັງ ເວົ້າວ່າ:

ທຸກສິ່ງທຸກຢ່າງກຽມພ້ອມໝົດແລ້ວ.

ຫຼານອານິດາເວົ້າແນວໃດຕໍ່ນ້ອງ?

ມັນສັ່ງຄວາມຫາພໍ່ ແລະ ແມ່. ອີຕົນມັນຍັງນ້ອຍພັດໄກພໍ່ແມ່, ບັດນີ້ພັດໄກພວກເຮົາອີກ.

ນ້ອງລອງຄິດເບິ່ງດູ, ເຮົາເອົາມັນໄປນ່ບໍ່ດີບໍ?

ບໍ່ດອກອ້າຍ ເອົາມັນໄປນຳ ແມ່ນໃຜຈະເບິ່ງເຮືອນເຮົາ ! ແຕ່ນ້ອງຍັງໜັກໃຈເລື່ອງໜຶ່ງ ພວກເຮົາໄປແລ້ວ " ພວກອ້າຍນ້ອງ" ຈະບໍ່ເອົາເຮືອນພວກເຮົາບໍ່?

ທ້າວນາກຄິດຢູ່ຄາວໜຶ່ງແລ້ວເວົ້າວ່າ:

ພວກເພິ່ນເອົາບໍ່ໄດ້ດອກ, ຕາດິນ ແລະ ເຮືອນລ້ວນແຕ່ອອກຊື່ແມ່ຂອງພວກເຮົາທັງນັ້ນ. ຈົນກະທັ້ງວ່າລົດທີ່ພວກເຮົາຂີ່ຢູ່ນີ້ ກໍແມ່ນຂອງແມ່ມອບໃຫ້ຍັງອອກຊື່ແມ່ຢູ່ ເຄື່ອງຂອງເລົ່ານີ້ ກໍຢູ່ໃນກຳມະສິດຂອງແມ່ ໃຜຊິມາແຕະຕ້ອງໄດ້ ແຕ່ນ້ອງໄດ້ເອົາເງິນໄວ້ໃຫ້ຫຼານອານິດາແດ່ບໍ່?

ນ້ອງໄດ້ເອົາໃຫ້ມັນແລ້ວ.

ນ້ອງກໍ່ບອກມັນແລ້ວຕີວ່າ ມີຫຍັງໃຫ້ເວົ້ານຳອາວເນດ?

ນ້ອງບອກໝົດແລ້ວ. ໄປເທາະລົດມາຕ້ອນເອົາພວກເຮົາແລ້ວໃດຫັ້ນ.

ການໂຕນໄປຝັ່ງໄທຂອງທ້າວນາກ ແລະ ນາງມາລີກໍມີສາຍເຫດພຽງແຕ່ທໍ່ນັ້ນ ໂດຍບໍ່ມີຜູ້ໃດນາບຄູ່ກົດຂີ່ຂົ່ມເຫັງຫຼືໄລຣະຈໍາໜີແຕ່ປະການໃດ. ແຕ່ພໍກ້າວລົງເຮືອຟ້າມືດລົມແຮງ ຟອງນໍ້າຂອງຟາກຝັ່ງຄອຍໄປສູ່ຝັ່ງໄທມີເຜື້ອມືດໜັ ກ ກ້ອນເຟື້ອທີ່ສະຫຼູບສັບຊ້ອນກັນຢູ່ນັ້ນຄືຮູບພະຍາຄຸດກິ້ງຕາອໍາປາກດ້ວຍຄວາມໂກດແຄ້ນ. ບັກກິນ້ອຍທີ່ບໍ່ທັນຮູ້ ດຽງສາຫຍັງ ຫຼຽວເຫັນເຟື່ອດໍາດັ່ງກ່າວ ໄຫຼເລື່ອນມາຕາມທ້ອງຟ້າກໍ່ຢ້ານ ຟ້າວອວ່າຍໜ້າຄືນມາຫາວຽງຈັນພ້ອມທັງ ແອ່ວແມ່ກັບຄືນບ້ານ. ນາງມາລີເອົາມືລູບຫຼັງລູກດ້ວຍຄວາມອ່ອນຫວານພ້ອມທັງອອຍລຸກ. ບັກກິບໍ່ຮູ້ຈັກຈະເຮັດ ແນວໃດ ເລີຍມຸບໜ້າເຂົ້າຊຶ້ນຢູ່ໃນຊ່ວງອົກຂອງແມ່.

ທ້າວເນດໃນຊຸດສີຂາວນັ່ງຢູ່ຫ້ອງເຮັດວຽກຂອງຕົນຕາມປົກກະຕິ. ຄາວໜຶ່ງ ສຽງໝາກກະດິງໂທລະສັບດັງຂຶ້ນ. ທ້າວເນດຈັບເອົາໂທລະສັບມາຟັງ ແຕ່ທາງຕາຍັງສໍາລວອເອກະສານຢູ່. ອາໂລ! ໂອນ້ອງແສງເດືອນຫວາ? ສະບາຍດີບໍ່ນ້ອງ ຄອບໃຈ ສະບາຍດີຕາມເຄີຍ. ແມ່ນຫຍັງເກາະ? !...ໂອ....

ອ້າຍຫວ່າງຢູ່ສະເໝີສໍາລັບນ້ອງ. ໄດ້! ໄດ້! ອ້າຍຈະລໍຖ້ານ້ອງ. ສະຫວັດດີ!...ຕອນເລີກການ!

ປະມານ 11 ໂມງປາຍໜ້ອຍໜຶ່ງຂອງມື້ນັ້ນ ນາງແສງເດືອນ ຂັບລົດຝີກລ້ຽວເຂົ້າໄປຈອດຢູ່ຕໍ່ໜ້າກະຊວງສຶກ ສາ. ປະມານ 15 ນາທີຕໍ່ມາ ທ້າວເນດລົງມາຫາ ແລ້ວເຂົາທັງສອງຂັບລົດຄົນຄັນຕາມຫຼັງກັນໄປ ຕົນດາວວຽງເຊິ່ງເປັນ ຮ້ານອາຫານທັນສະໄໝແຫ່ງໜຶ່ງທີ່ເມືອງຫຼວງວຽງຈັນ.

ຂຶ້ນໄປຊັ້ນສອງນ໋ອ້າຍ!

ເວົ້າແລ້ວນາງແສງເດືອນຈັບມືທ້າວເນດຂຶ້ນໄປຊັ້ນສອງ, ລ້ຽວເຂົ້າຫ້ອງກໍ້າຊ້າຍທີ່ເປັນຫ້ອງນ້ອຍສໍາລັບສອງຄົນ. ພາຍໃນຫ້ອງມືດ ມີແສງໄຟຟ້າສີອອນສະຫວ່າງພໍປານກາງ. ພາຍໃນຫ້ອງເປັນສະບາຍ. ນາງແສງເດືອນເປັນຜູ້ສັ່ງ ອາຫານ ເຊິ່ງລ້ວນແລ້ວແຕ່ຊະນິດແພງໆ ມີທັງກຸ້ງ ແລະ ປູທະເລພ້ອມທັງເຫຼົ້າວິດສະກີ, ໂສດາ. ດູທ່າທາງນາງແສງ ເດືອນເປັນຜູ້ທີ່ສໍານານກັບຊີວິດອັນໂອ້ໂຖງຂອງລູກສາວ ຂ້າລາຊະການຊັ້ນຜູ້ໃຫຍ່ໃນເມືອງຫຼວງ. ນາງຍົກຈອກຊວນດື່ມພ້ອມທັງເວົ້າວ່າ:

ເພື່ອຄວາມສຸກຂອງພວກເຮົາແຫ່ງມື້ສຸດທ້າຍໃນເມືອງຫຼວງວຽງຈັນ.

ທ້າວເນດກໍຍົກຈອກແຕ່ດທ່າທີຂອງທ້າວເນດຄືບໍ່ຈູບຈ້າວ, ເປັນສີຈາງໆວາດໃດວາດໜຶ່ງ ນາງແສງເດືອນຈຶ່ງຖາມວ່າ:

ອ້າຍຄືຈະຄິດຮອດວຽງຈັນຫຼາຍນໍ?

ທ້າວເນດບໍ່ຕອບມີແຕ່ຍິ້ມພໍເປັນຮອຍ. ນາງແສງເດືອນຊໍ້າພັດຢໍ້າເຂົ້າຕື່ມ.

ອ້າຍຈະໄປນໍານ້ອງບໍ່? ຫຼືບໍ່ໄປ? ມື້ນີ້ອ້າຍຕ້ອງຕອບໃຫ້ນ້ອງຮູ້ຢ່າງລະອຽດ.

ທ້າວເນດເຫຼືອດເບິ່ງນາງແສງເດືອນແບບໜຶ່ງແລ້ວຄີບເອົາອາຫານມາໃສ່ຖ້ວຍຢ່າງບໍ່ຟ້າວບໍ່ຝັ່ງ ຈຶ່ງເວົ້າຂຶ້ນຊ້າໆວ່າ:

ຈະໄປໃສມາໃສກໍໃຫ້ອ້າຍຄິດໜ້າຄິດຫຼັງເສຍກ່ອນ.

ຈະຄິດຫຍັງອີກຄົນທັງເມືອງແຕກກັນໄປໝົດແລ້ວເດ? ນ້ອງບໍ່ຢູ່ໄດ້ເດີ! ຊິບອກໃຫ້.

ເອີ! ຢູ່ບໍ່ໄດ້ກໍ່ໄປ! ແຕ່ນ້ອງຄິດດັກແລ້ວບໍ່? ຈັກໜ່ອຍກິນແໜງໄດ!

ຄັນຊັ້ນອ້າຍຈະບໍ່ໄປນໍານ້ອງແທ້ບໍ່?

ໃນເວລານີ້ອ້າຍຍັງໄປບໍ່ໄດ້.

ເວລາໃດຈຶ່ງໄປໄດ້?

ອ້າຍກໍບໍ່ທັນຮູ້!

ໝາຍຄວາມວ່າອ້າຍບໍ່ໄປນຳນ້ອງແມ່ນບໍ່?

ບໍ່ແມ່ນບໍ່ໄປ,ອ້າຍຂໍຟັງເບິ່ງກ່ອນ.

ຫຸ້ຍ! ອ້າຍມີແຕ່ເຮັດໃຫ້ນ້ອງເສຍເວລາເປົ່າໆ. ຮູ້ແນວນີ້ນ້ອງໄປນຳອ້າຍນາກສະບາຍລ້າ.

ໃຜຊິໄດ້ຫ້າມນ້ອງ.

ອຸ້ຍ! ຍາກຮ້າຍແລ້ວໃດນີ້!

ໃບໜ້າອັນຂາວນວນຂອງ ນາງແສງເດືອນ ມືດເຂົ້າ ນາງວາງໄມ້ດູ່ ແລະ ຖ້ອຍເຂົ້າລົງແລ້ວນັ່ງເຮັດໜ້າບຶ້ງຢູ່ດ້ວຍຄວາມບໍ່ພໍໃຈ. ສ່ວນທ້າວເນດຄີບເອົາຕ່ອນໄກ່ມາກິນເສີຍມີແຕ່ເຫຼືອດເບິ່ງນາງແສງເດືອນໜ້ອຍໜຶ່ງແລ້ວຍົກຈອກ ເຫຼົ້າວິດສະກີມາດື່ມ ເອົາແພເຊັດສົບຊ້າໆຕາມສະບາຍຄືບໍ່ມີຫຍັງເກີດຂຶ້ນ. ນາງແສງເດືອນແຮງເປັນເດືອດເປັນແຄ້ນ ນາງຜຸດລຸກຂຶ້ນພ້ອມທັງເວົ້າວ່າ:

ເຊີນອ້າຍກິນຕໍ່ໄປເດີ ນ້ອງເມືອລະ

ທ້າວເນດເງີຍໜ້າຂຶ້ນແສງຕາຂອງເຂົາເຈົ້າກັນ. ເຫັນນາງແສງເດືອນຮ້າຍຢ່າງບໍ່ມີເຫດຜົນ ທ້າວເນດອິດຫົວບໍ່ໄດ້ ເລີຍຫົວຂຶ້ນດ້ວຍຄວາມລ້າເລີງ. ນາງແສງເດືອນທົ່ງຄວາມຮ້ອນເອົ້າພາຍໃນໃຈອອກຈາກປາກດັ່ງຮີບາດໜຶ່ງແລ້ວວ່າຈະ ຍ່າງອອກຈາກຫ້ອງໄປ ພໍດີໃນເວລານັ້ນປະຕູເປີດອອກ ນາງສາວແລ່ນໂຕະ ກົ້ມຫົວຄຳນັບດ້ວຍຄວາມນອບນ້ອມພ້ອມ ທັງເວົ້າຂຶ້ນດ້ວຍສຽງສຸພາບວ່າ:

ຍານາງຕ້ອງການຫຍັງອີກນໍ?

ນາງແສງເດືອນ ບໍ່ຮູ້ຈັກແນວຊິເວົ້າຫຼຽວມາຫາທ້າວເນດ. ເຫັນນາງຕົກຢູ່ໃນທ່າກືນບໍ່ເຂົ້າຄາຍບໍ່ອອກແນວນັ້ນທ້າວເນດເລີຍເວົ້າວ່າ:

ເພິ່ນຕ້ອງການອາຫານຕື່ມ. ອາດຈະເອົາກະປູທະເລກໍໄດ້.

ສາວແລ່ນໂຕະກົ້ມຫົວ ແລ້ວຖອຍຫຼັງອອກໄປ ປະຕູອັດຄືນຄືເກົ່າ ພາຍໃນຫ້ອງຍັງພຽງແຕ່ສອງຄົນ. ນາງແສງເດືອນກັບຄືນມານັ່ງບ່ອນເກົ່າ. ທ້າວເນດເລີຍເວົ້າດ້ວຍສຽງເຍືອກເຢັນວ່າ: ນ້ອງເຊີນອ້າຍມາລ້ຽງ, ນ້ອງພັດຊິໜີປະອ້າຍ, ນ້ອງຄິດວ່ານ້ອງເຮັດແນວນັ້ນຖືກຕ້ອງຊັ້ນຫວະ?

ນາງແສງເດືອນ ນັ່ງກົ່ງຂ້າງໃສ່ ເຮັດອິງຕິງຢູ່ດ້ວຍຄວາມບໍ່ພໍໃຈ. ທ້າວເນດເວົ້າຕໍ່ໄປວ່າ:

ອ້າຍມີແຕ່ຖາມນ້ອງວ່າ ນ້ອງຄິດຄັກແລ້ວບໍ່? ນ້ອງຊ້ຳພັດເກີດໝົກເຫັດຂຶ້ນຈົນຕືນສົ້ນສັ່ນອັກໆ. ເວົ້າແທ້ອ້າຍ ກໍອັບປັນຍາ ວ່າຊິພາກັນໄປແນວໃດໄດ້ ງານສົມລົດຂອງພວກເຮົາກໍຍັງບໍ່ທັນໄດ້ຈັດຂຶ້ນເທື່ອ ການຊັກຊ້າກ່ຽວກັບເລື່ອງ ນີ້ກໍແມ່ນນ້ອງເອງເປັນຜູ້ຮຽກຮ້ອງໃຫ້ອ້າຍໂຈະໄວ້ຊົ່ວຄາວເພື່ອຟັງເບິ່ງສະພາບການຂອງບ້ານເມືອງ ອ້າຍກໍປະຕິບັດ ຕາມ. ບັດນີ້ນ້ອງພັດຊວນອ້າຍໂຕນຂ້າມຂອງ. ພວກເຮົາຈະພາກັນໄປແບບໃດ? ບ້ານອີ່ພໍ່ ເມືອງອີແມພວກເຮົາຢູ່ພຸ້ນ ຫວະ? ອ້າຍນາກ ແລະ ເອື້ອຍມາລີ ຕ່າງພວກເຮົາໄດເພິ່ນມີຍາດຕິພີ່ນ້ອງຢູ່ພຸ້ນ. ສ່ວນພວກເຮົາຈະໄປເພິ່ງພາອາໄສໃຜ? ວ່າຈະພາກັນໄປເມືອງຝຣັ່ງ ອັງກິດຊັ້ນຫວະ? ໂອ້ຍ! ໃນສະໄໝພວກເຮົາໄປຮຽນຢູ່ເມືອງຝຣັ່ງ ພໍ່ແມ່ຝາກເງິນໄປໃຫ້ຄູ່ ເດືອນ ປານນັ້ນກໍບໍ່ພໍໃຊ້ພໍຈ່າຍ, ໃຫ້ອ້າຍໄປຮັບຈ້າງເກັບໝາກແຮແຊງ, ຍາມຜີປ່າຊ້າ ຫຼືເຊັດແກ້ວ ເຊັດແວ່ນ ຢູ່ຕາມ ສະຖານີລົດໄຟ ນັ້ນອ້າຍເຮັດບໍ່ໄດ້ ເປັນຕາຍແນວໃດ ອ້າຍຂໍຕາຍຢູ່ບ້ານເກີດເມືອງນອນນຳພໍ່ແມ່ ແລະ ພີ່ນ້ອງບ້ານເມືອງ ເຮົາພີ້.

ນາງແສງເດືອນຄິດຊືງລຶງຢູ່ຄາວໜຶ່ງແລ້ວເວົ້າວ່າ:

ຖ້າອ້າຍບໍ່ໄປ, ເພິ່ນຈັບແດກໄປສຳມະນາຢູ່ເມືອງວຽງໄຊ ອ້າຍຈະເຮັດແນວໃດ?

ທ້າວເນດ ຄີບເອົາເຄື່ອງໃນໄກ່ໂມ່ມເຂົ້າປາກຫຍ້ຳາຊ້າໆແລ້ວເອົາເຫຼົ້າວິດສະກີລ່ອງເຂົ້າມິດຢູ່ຄາວໜຶ່ງຈຶ່ງເວົ້າວ່າ:

ມີຫຼາຍຄົນເຂົ້າໃຈວ່າ ໄປສຳມະນາຢູ່ເມືອງວຽງໄຊແມ່ນໄປສູ່ໜົ້ມນາຮົກ. ແຕ່ສຳລັບອ້າຍ, ອ້າຍພັດເຫັນເປັນກົງກັນຂ້າມ.

ອ້າຍເຫັນວ່າເປັນສະຫວັນຊັ້ນຫວະ?

ແສງເດືອນຖາມຂຶ້ນດ້ວຍສຽງເຍາະເຍີ້ຍແລ້ວຫຼັບຕາຊ້າຍພ້ອມທັງເບະສົບນຳດ້ວຍ.

ອ້າຍກໍບໍ່ວ່າ ແຕ່ຄໍາທີ່ວ່າສໍາມະນາແມ່ນດີໄດ. ສໍາມະນາແມ່ນອົບຮົມຄົນໃຫ້ໄປທາງດີ ມີປະໂຫຍດແກ່ຊາດ ມີ ຄຸນສົມບັດອັນຖືກຕ້ອງ ໃຫ້ຮູ້ຮັກການອອກແຮງງານ ມັນກໍດີລະບໍ່? ເພິ່ນບໍ່ໄດ້ອົບຮົມໃຫ້ເອົາຕີນຊີ້ມືຊີ້ ບໍ່ໃຫ້ ໂລບມາກ ໂລພາ ແລະ ກົດຂີ່ຂົ່ມເຫັງໝູ່. ຕາມອ້າຍນ້ອງພະນັກງານເວົ້າແມ່ນແນວນັ້ນໄດ! ອົບຮົມຄົນແນວນັ້ນກໍດີ ລະບໍ່?

ທ້າວເນດ ເນັ້ນໜັກຄໍາທີ່ວ່າມັນກໍດີລະບໍ! ແຮງສົມຄວນ. ນາງແສງເດືອນຖືກການກະທົບທາງດ້ານຈິດໃຈ ແຮງ ຈົນເຮັດໃຫ້ເລືອດຂຶ້ນໜ້າ, ຮີມສົບງໍຂຶ້ນອັດຣູດັງລືມຮອດປາກຮອດທ້ອງ. ບັດນີ້ຖືກເຫດຜົນຂອງທ້າວເນດ ແຫຍ່ເຂົ້າ ຄຸງຕາແຈ. ນາງບໍ່ມີທາງແກ້ເຮັດຊື່ງ ໆຢູ່ຄາວໜຶ່ງ, ຈັກຄິດໄດ້ຄິດດີແນວໃດຫັນໜ້າເຂົ້າມາໃສ່ພານອາຫານ ຄຸ້ຍວັບຄຸ່ຍ ວັບ ຈຶ່ງເອົາເຫຼົ້າເບຍລ່ອງລົງພ້ອມທັງຫຼັກເຫຼືອດເບິ່ງທ້າວເນດ, ນາງແສງເດືອນອາດຜ່ອນຄາຍຄວາມຮ້າຍ ລົງແດ່ຈຶ່ງ ຊວາດຮູ້ເມື່ອວ່າມີດແດງກັດໄສ້. ສ່ວນທ້າວເນດເສີຍມັ່ງຄ່ອຍກິນຄ່ອຍຫຍໍ້. ຄາວໜຶ່ງຕໍ່ມານາງແສງເດືອນ ຈຶ່ງຖາມວ່າ:

ອ້າຍວ່າແນວໃດເກາະເມື່ອກີ້ນີ້? ອ້າຍວ່າໄປສໍາມະນານັ້ນເປັນການດີຊັ້ນບໍ່? ຫຸ້ຍ! ໜ້າບໍ່ອາຍ! ເພິ່ນໃຊ້ຄືງົວ ຄື ຄວາຍກໍຍັງວ່າດີຢູ່ຫວະ! ນ້ອງບໍ່ເຫັນດີນໍາເດີ.

ທ້າວເນດປະໃຫ້ນາງແສງເດືອນເວົ້າຕາມໃຈມັກ ແລະ ມິດຟັງດ້ວຍຄວາມທຸ່ນທ່ຽງ. ນາງແສງເດືອນຈັກ ໄດ້ງິນ ມາແຕ່ໃສ! ພວກໄປສໍາມະນາຖືກຂ້າຕາຍ, ຖືກໝາກແຕກຕາຍ. ຝົນຕົກແຮງນໍ້າລົ້ນຝັ່ງນໍ້າແອດພັດທັ່ງພວກ ໄປສໍາມະນາຕາຍດຶກນໍ້າເປັນສິບເປັນຊາວ, ກິນເຂົ້າປົນດິນຊາຍ ຕາຍຄາຊຸມເຜືອກ, ຊຸມມັນສາລະພັດ ສຸດທ້າຍນາງ ແສງເດືອນຈໍາຖາມທ້າວເນດດ້ວຍຄວາມເຄັ່ງຂຶມວ່າ:

ແນວນັ້ນອ້າຍກໍຍັງວ່າດີຢູ່ຫວະ? ຫູຍ

ທ້າວເນດກິນເຂົ້າເສີຍຢູ່ຄາວໜຶ່ງຈຶ່ງຖາມວ່າ:

ໃຜເວົ້າໃຫ້ນ້ອງຟັງເລື່ອງນີ້?

ຈັກໃຜເວົ້າແລ້ວນ້ອງຫາກໄດ້ງິນ

ບໍ່ຄວນເຊື່ອ

ເປັນຫຍັງຈຶ່ງບໍ່ຄວນເຊື່ອ?

ເພາະມັນບໍ່ແມ່ນຄວາມຈິງ

ເຫດໃດອ້າຍຈຶ່ງຮູ້

ອ້າຍຮູ້ພວກທີ່ປ່າວຂ່າວທີ່ບໍ່ມີຄວາມເປັນຈິງດັ່ງນ້ອງເວົ້າມານັ້ນລ້ວນແຕ່ແມ່ນພວກຂີ້ໂຫດສາມານລົບລົ້ນ ປີ້ນ ຄວາມ, ເສກສັ້ນ ັ້ນເລ່ອງ ຫຼອກລວງປະຊາຊົນເຮົານັບບໍ່ຖ້ວນມາແລ້ວນ້ອງໄປເຊື່ອຟັງພວກໝາຕາຍຂາຍຊາດໝູ່ ນີ້ບໍ່ມີ ປວງຊຶດແກງເດີກ.

ບໍ່ເຊື່ອຄວາມຄົນຊິເຊື່ອຄວາມໃຜ

ມັນບໍ່ແມ່ນຄວາມຄົນ! ມັນແມ່ນຄວາມເວົ້າຂອງສັດຕູ, ແມ່ນຄວາມເວື້ອຂອງແມ່ມົດ! ນ້ອງກໍ່ທຸ່ນທ່ຽງແດ່ ແມ້ ແສງເດືອນ ນ້ອງກໍ່ເປັນນັກສຶກສາທັງຂະໜາດ ຈັກໜ່ອຍຖືກຕາມຄວາມບູຮານກ່າວໄວ້ວ່າ ຄວາມຮູ້ຖ້ວມຫົວ ເອົາຕົວບໍ່ ລອດໄດ້ເດີ.

ສຽງເວົ້າຂອງທ້າວເນດ ຂ້ອນຂ້າງເຮັດໃຫ້ນາງແສງເດືອນຕົກສະເງີ້. ເພາະເທື່ອນີ້ເປັນເທື່ອທໍາອິດທີ່ນາງຖືກ ທ້າວ ເນດບໍ່ເອົາໃຈ. ທ້າວເນດມິດຢູ່ຄາວໜຶ່ງແລ້ວເວົ້າຕໍ່: ຈິງຢູ່ວ່າພວກເຮົາຍັງບໍ່ທັນໄດ້ຜູກແຂນໃສ່ກັນ ແຕ່ຍາດຕິ ພີ່ນ້ອງ ເພື່ອນຝູງ ທາງສອງກໍ້າສອງຝ່າຍຮູ້ດີວ່າພວກເຮົາໝັ້ນກັນແລ້ວ ພວກເຮົາຈະເປັນຄູ່ຊີວິດ ເມື່ອເປັນແນວນັ້ນກໍ່ ຕ້ອງຟັງ ຄວາມກັນແດ່ແມ້ ເຖິງແນວໃດອ້າຍກໍ່ເປັນ...........ທ້າວເນດມິດຢູ່ຄາວໜຶ່ງ ເມື່ອບໍ່ເຫັນ ນາງແສງເດືອນ ຕ້ານຄືນຈຶ່ງ ເວົ້າຕໍ່: ນ້ອງບໍ່ເຊື່ອ ຄວາມອ້າຍເວົ້າແລ້ວ ນ້ອງຈະໄປເຊື່ອໃຜ? ຜູ້ໃດຮັກນ້ອງກວ່າອ້າຍ? ອ້າຍເວົ້າກໍ່ຟັງ ແດ່ແມ້. ພວກທີ່ ໄປສໍາມະນາ ແມ່ນໃຜ? ນ້ອງກໍ່ຍັງຈື່ຕີ? ກະດຽວນ້ອງເອງກໍ່ເຄີຍໄປແຫ່ຂະບວນປະທ້ວງພວກນາຍ ທະຫານ ແລະ ນາຍ ຕໍາຫຼວດດັ່ງກ່າວ. ບັດນີ້ພວກອ້າຍນ້ອງແນວລາວຮັກຊາດ ເອົາພວກນາຍທະຫານ, ນາຍ ຕໍາຫຼວດເຫຼົ່ານັ້ນໄປສໍາມະນາ ກໍ ເພື່ອສ້າງໃຫ້ພວກເພິ່ນ ກາຍເປັນຄົນໃໝ່ ເປັນຄົນໃສສະອາດ ມີນໍ້າໃຈຮັກຊາດ ແລະ ຮັກແພງປະຊາຊົນ. ເຫັນບໍ່ຄວາມ ເປັນທໍາຂອງອ້າຍນ້ອງ. ຄັນເວົ້າໃສ່ພວກເພິ່ນ ໃນເວລາພວກເພິ່ນກໍາອໍານາດ ໃນເມື່ອກ່ອນນັ້ນ, ນ້ອງຍັງຈື່ຕໍ່ ພວກເພິ່ນ ປະພຶດຕໍ່ຄົນຂອງແນວລາວຮັກຊາດແນວໃດ? ຕີນແດກເຂົ້າຄຸກ, ບາງຄົນ

ຍັງຮ້າຍກາດເຖິງຂັ້ນເຈາະເອົາຕັບເອົາບີມາກິນ ແກ້ວເຫຼົ້າ. ນ້ອງຄິດເຖິງ, ຄິດໃຫ້ຄັກໆ ເບິ່ງແມ່ນໃຜເຮັດດີ ແມ່ນໃຜເຮັດຮ້າຍ. ອ້າຍເປັນຄົນລາວ ຖືສາດສະໜາພຸດ ອ້າຍຖືສິນຫ້າ ອ້າຍເວົ້າເປີດອົກເປີດໃຈແນວນີ້ລະ.

ນາງແສງເດືອນ ຖືກແຫຍ່ເຂົ້າຖຽງຕາແຈ ບໍ່ຮູ້ຈັກທາງອອກມີແຕ່ເຮັດໜ້າຊີງລີງຢູ່ຄືໝາກິນຄວາມຄິດ. ທ້າວເນດ ໄດ້ທ່າກໍ່ເລີຍແຖມເຂົ້າຕື່ມ:

ນ້ອງກໍຍັງຈື່ຕີ ມື້ພວກເຮົາໄປໂຮມກັນຟັງຢູ່ເດີ່ນວັດບ້ານເຮົາ. ມີພະນັກງານອ້າຍນ້ອງຜູ້ໜຶ່ງເວົ້າວ່າ: ພະນັກງານ ຊັ້ນກາງຂອງແນວລາວຮັກຊາດຢູ່ເມືອງວຽງໄຊຜູ້ໜຶ່ງມີອັດຕາກິນມື້ໜຶ່ງພຽງແຕ່ 30 ກີບ. ແຕ່ພວກນາຍທະຫານຕຳ ລວດທີ່ເລີ່ມໄປຮັບການສຳມະນາ ໄດ້ກິນມື້ໜຶ່ງໆຜູ້ລະສອງຮ້ອຍກີບ. ນ້ອງຄິດເບິ່ງຈະໃຫ້ເພິ່ນເຮັດດີນຳປານໃດອີກ. ຈິງ ຢູ່ ຊີວິດຄວາມເປັນຢູ່ຂອງພວກທີ່ໄປສຳມະນາຖ້າທຽບໃສ່ຍາມພວກເພິ່ນຍັງເປັນເຈົ້າໃຫຍ່ນາຍໂຕ ເປັນລູກມືໃຫ້ຈັກກະພັດອາເມລິການັ້ນ ມີອັນລົດຜ່ອນລົງແທ້ ເພາະເວລານີ້ຕົນໂຕຢ່າງ ບາໂຕແບກ ໂຕເຮັດ. ເທື່ອກ່ອນນີ້ພວກເພິ່ນ ບໍ່ເຄີຍອອກແຮງງານ ມີແຕ່ເອົາເງິນຊື້ມີຊີ້ໃຫ້ຜູ້ອື່ນເຮັດ. ແຕ່ດຽວນີ້ກໍອາດຫຍຸ້ງຍາກແດ່. ແຕ່ພວກເພິ່ນເຮັດເພື່ອພວກ ເພິ່ນເອງ. ເຊັ່ນຢາກຢູ່ດີກໍຕັດໄມ້ມາເຮັດເຮືອນ ຢາກມີຜັກກິນ ກໍເຮັດຮົ້ວເຮັດສວນ; ເລື່ອງທີ່ອ້າຍເວົ້າມານີ້ ກໍບໍ່ມີຫຍັງ ແປກ. ພວກເຮົາຕ່າງກໍໄດ້ໄປຟັງເພິ່ນເຜີຍແຜ່ມາແລ້ວ ສຳຄັນແຕ່ວ່າຈະຕັ້ງໃຈຟັງຫຼືບໍ່ທໍ່ນັ້ນ.

ນາງແສງເດືອນປາກບໍ່ໄດ້ມີນຕາລົກໂລ້ຢູ່ ຄືຄົນອັບປັນຍາໂຕ້ຕອບຄຳເວົ້າຂອງທ້າວເນດ ກໍບໍ່ມີຄວາມເວົ້າ. ນາງ ສາລະພາບວ່າຄຳເວົ້າຂອງທ້າວເນດມີເຫດຜົນແທ້. ແຕ່ໃຫ້ນາງລືມຄວາມຄິດຢາກໄປເມືອງໄທນັ້ນ ນາງບໍ່ລືມຈັກເທື່ອ ນາງຍັງເຊື່ອວ່າພວກທີ່ໂຕນໄປເມືອງໄທນັ້ນມີຄວາມສຸກ, ຍູ້ທາງເຈີດເວີດໄປຕາມໃຈຊອບ. ນາງເຫຼືອໃຈທີ່ສຸດທີ່ຄູ່ຮັກ ຂອງຕົນມີອຸດົມຄະຕິບໍ່ຄ້າຍຄືກັນກັບນາງ. ສຸດທ້າວຄຳເວົ້າສິ່ງດຽວ ທີ່ນາງເຄີຍໃຊ້ເປັນອາວຸດຕໍ່ທ້າວເນດກໍຄື:

ອ້າຍເນດ! ອ້າຍຍັງຮັກນ້ອງຢູ່ຫວະ?

ເຮັດໃດນ້ອງຈິ່ງຖາມອ້າຍແນວນັ້ນ?

ນ້ອງເຫຼືໃຈທີ່ອ້າຍບໍ່ຟັງຄວາມນ້ອງ

ນ້ອງຮັກອ້າຍທີ່ສຸດ ພ້ອມແລ້ວທີ່ຈະມອບທຸກສິ່ງທຸກຢ່າງທີ່ນ້ອງມີເພື່ອສ້າງຄວາມສຸກໃຫ້ອ້າຍເຫດໃດອ້າຍຈິ່ງ ຢາກປະຢາກຖິ້ມນ້ອງ.

ພາຍໃນຫ້ອງງຽບລົງ ບໍ່ມີໃຜສົນໃຈນຳພາອາຫານເຂັ້ນຈ້ອງມອງກັນຢູ່ດົນເຕີບ. ນາງແສງເດືອນ ຈິ່ງຢ້ຳເຂົ້າຕື່ມ.

ນ້ອງລົ້ງວອນໃຫ້ອ້າຍເຊື່ອຟັງນ້ອງແດ່ເທາະ ຄົນດີຂອງນ້ອງ. ພວກເຮົາແຕ່ງດອງສອງຕໍ່ສອງຢູ່ຕ່າງປະເທດພຸ້ນກໍ່ ໄດ້. ເລື່ອງນີ້ພໍ່ແມ່ຂອງນ້ອງກໍເຫັນດີແລ້ວ. ທີ່ໃດມີອ້າຍທີ່ນັ້ນພວກເພິ່ນເຊື່ອວ່ານ້ອງຈະມີຄວາມສຸກ ພານ້ອງໜີເທາະອ້າຍ.

ສຽງປາກຂອງນາງແສງເດືອນພໍ່ເປັນນວຍນາຍຄືປາຍໄມ້ອ່ອນຖືກສາຍລົມພັດໃນຍາມບຸນເຂົ້າຈີ່. ທ້າວເນດຊິດນ້ຳແກງເພື່ອທຸເລົາຄວາມອຶບເອົ້າພາຍໃນໃຈແລ້ວເວົ້າວ່າ:

ໃຫ້ອ້າຍພານ້ອງໜີໄປໃສ?

ໄປໃສກໍໄດ້ທະແນມແຕ່ໜີຈາກວຽງຈັນ.

ອ້າຍຮັກນ້ອງທີ່ສຸດ ແຕ່ອ້າຍເຮັດຕາມໃຈມັກຂອງນ້ອງກ່ຽວກັບເລື່ອງນີ້ບໍ່ໄດ້.

ດ້ວຍເຫດໃດ?

ນາງແສງເດືອນ ຖາມຈໍ່ເຂົ້າຕື່ມໃບໜ້າຂອງນາງແດງຂຶ້ນຍ້ອນຄວາມຮ້ອນ ຄິດໃນໃຈວ່າ ໃຊ້ຄວາມອະລິອະລອບບໍ່ໄດ້ນາງຕ້ອງໃຊ້ຄວາມຮຸນແຮງ. ທ້າວເນດຮູ້ສຶກເບື່ອໜ່າຍຕໍ່ແນວຄິດຂອງນາງແສງເດືອນເສຍແລ້ວ. ເຮັດໃດບ້ານເກີດເມືອງນອນຂອງຕົນແທ້ໆ ພັດບໍ່ຢາກຢູ່. ຢາກໄປຢູ່ບ້ານເພິ່ນເມືອງທ່ານ ມືນຕາບໍ່ເຫັນພີ່ຕີ່ຕາບໍ່ເຫັນນ້ອງຈະໄປ ຢູ່ໄປກິນແນວໃດໄດ້. ເວົ້າແທ້ກົນອຸບາຍຂອງຈັກກະພັດອາເມລິການີ້ເລິກແລບໂຫດຫ້ຽມສົມກັບຄຳຈຳແນກຂອງອ້າຍ ນ້ອງພະນັກງານແນວລາວຮັກຊາດເວົ້າໃນມື້ນັ້ນແທ້. ມັນເຮັດໃຫ້ຄົນລາວລືມຊາດແລ້ວຂ້າຟັນຂັນເນື້ອກັນເອງ. ທ້າວ ເນດກໍຢາກປະເຈົ້າປະໂລມຄູ່ຮັກຂອງຕົນທີ່ສຸດ ແຕ່ເຫັນວ່າບໍ່ມີທາງເສຍແລ້ວ. ເວົ້າມາຫຼາຍຄັ້ງຫຼາຍທົນແລ້ວວ່າໃຫ້ຄອຍ ຟັງໄປກ່ອນ ແຕ່ຫູ້ກໜັ້ນມັນແຕກຕ່າງກັນປານຟ້າກັບດິນ ບ້ານຢູ່ເມືອງຢ່າຂອງຕົນແທ້ໆ ພັດຢາກໜີປະເອີ! ຄັນມີຜູ້ໄລ່ຣະຈໍາໜີ ກໍຍັງອີກສະຖານໜຶ່ງ. ສຳລັບທ້າວເນດແລ້ວ ຂໍເອົາແຜ່ນດິນທີ່ເປັນບ້ານເກີດເມືອງ

ນອນຂອງປູ່ຍ່າຕານາຍນີ້ມາ ຖົມໜ້າ. ໃນເວລາທ້າວເນດທັງຄິດທັງກິນຢູ່ຢ່າງງຽບໆນັ້ນ ນາງແສງເດືອນ ນໍາຄໍາຖາມຂອງຕົນອີກວ່າ:

ດ້ວຍເຫດໃດໜີອ້າຍ?

ຈະຕອບແນວໃດດີນໍ! ທ້າວເນດ ເຮັດຊຶງລຶງຢູ່ຄາວໜຶ່ງແລ້ວເວົ້າວ່າ:

ດ້ວຍເຫດວ່າອ້າຍເປັນຄົນລາວ. ອ້າຍຮັກດິນແດນແຫ່ງນີ້ທີ່ສຸດ. ອ້າຍເກີດຂຶ້ນໃນດິນຕອນນີ້ ອ້າຍຢາກຕາຍຢູ່ ບົນດິນຕອນນີ້. ອ້າຍຈະໜີຈາກດິນຕອນນີ້ ກໍຕໍ່ເມື່ອອ້າຍສູ້ບໍ່ໄດ້ມີຄົນເອົາກະບີ່ຈີ້ກົ້ນໄປ. ເວລານີ້ບໍ່ມີໃຜເຮັດຮ້າຍໃຫ້ ອ້າຍ. ພວກອ້າຍນ້ອງແນວລາວຮັກຊາດ ເຊິ່ງນ້ອງຢ້ານຈົນຫົວໃຈສັ່ນນັ້ນ, ອ້າຍກໍຍັງບໍ່ທັນເຫັນ ພວກເພິ່ນເຮັດຮ້າຍ ຫຍັງໃຫ້ນ້ອງ. ພວກເພິ່ນຍັງດີຕໍ່ນ້ອງອີກຊໍ້າ. ເລື່ອງນີ້ນ້ອງເອງກໍຄົງຮູ້.

ທ້າວເນດເວົ້າຍັງບໍ່ທັນສຸດ. ນາງແສງເດືອນອົດຟັງຕໍ່ໄປບໍ່ໄດ້ ລຸກຈາກບ່ອນນັ່ງດ້ວຍທ່າທີ່ບໍ່ພໍໃຈແລ້ວຍ່າງອອກ ຈາກຫ້ອງໄປ ໂດຍບໍ່ໄດ້ສັ່ງລາທ້າວເນດພໍຄວາມ. ທ້າວເນດຫຼຽວນໍາໜ້ອຍໜຶ່ງ ແລ້ວນັ່ງກິນອາຫານຄົນດຽວຕໍ່ໄປຫຼັງ ຈາກໃຊ້ຄ່າອາຫານແລ້ວ ທ້າວເນດອອກຈາກຫ້ອງໄປພໍດີເຈກັບຮ້ອຍເອກສິ່ງ. ທ້າວເນດ ທ້ວງດ້ວຍທ່າທີ່ຖືເປັນກັນ ເອງວ່າ:

ອ້າຍສິງ! ໄປໃສຄືມາຟ້າວຮີບແທ້?

ເຮົາລົງໄປຊື້ຢາດູດ. ໂຕກິນງາຍແລ້ວຫວະ?

ຫາກໍກິນມາດຽວນີ້!

ໂຕຍັງມີເວລາຢູ່ຕີ? ມາ! ມາ! ມາສໍາລະຊ່ວຍເຮົາແດ່.

ທ້າວສິງທັງເວົ້າທັງດຶງແຂນ ທ້າວເນດເຂົ້າໄປໃນຫ້ອງກໍ້າຊ້າຍ. ພໍເຂົ້າຫວິດປະຕູ ທ້າວເນດແລເຫັນນາງສາວຄົນ ໜຶ່ງເປັນຄົນຄີງບາງຮ່າງສູງນຸ່ງສິ້ນຂາບານສີຂາວ ແລະ ເສື້ອລາຍດອກຜັກແວ່ນສີມອນໄຂ່ ພວມກົ້ມເຊັດນໍ້າຕາຢູ່. ທ້າວ ເນດຮູ້ນາງສາວຄົນນີ້ໄດ້ດີ ເຂົາຊື່ວ່າສົມເພດເປັນນາງນົກມາຕິຫາກິນກາງຄືນຢູ່ຕາມໂຮງບາ, ເຫດໃດໝໍສິງຈຶ່ງເອົາມາ ລ້ຽງໃນຍາມກາງເວັນແນວນີ້? ເຖິງວ່າມີຄວາມສົນໃຈທ້າວເນດກໍຮັກສາສີໜ້າຢ່າງຄ່ຽມຄົມຮັບເອົາເກົ້າອີ້ຈາກມືຂອງ ສົມເພດ. ຮ້ອຍເອກສິ່ງທັງດີດມືທັງເວົ້າວ່າ:

ເອີໂບຍ! ວິດສະກີໂສດາ!

ທ່ານເນດກວັກມືຫ້າມພ້ອມທັງເວົ້າວ່າ:

ເຮົາຫາກໍກິນມາດຽວນີ້ ມີເລື່ອງຫຍັງກັນຄືມີບັນຍາກາດຜິດປົກກະຕິ, ປາກົດວ່າ ພານອາຫານທີ່ມີເຕັມໂຕະແຕ່ບໍ່ມີໃຜຕ້ອງ.

ສົມເພດອວ່າຍໜ້າມາຫາທ້າວເນດພັບຕາເປັນສີໄວໆແລ້ວອວ່າຍໜ້າຄືນໄປຫາທ້າວສິ່ງ. ທ້າວສິງມິດຢູ່ຄາວໜຶ່ງແລ້ວເວົ້າວ່າ:

ເຮົາເຫຼືອໃຈ ເຮົາຮັກສົມເພດ ເຮົາຢາກດຶງລາວອອກຈາກຕົມ ເອົາຊື່ສຽງຂອງເຮົາ ລ້າງສ່ວຍຄວາມເປິະເປື້ອນ ຂອງລາວທັງໝົດເຮົາຈະເອົາເປັນເມຍຮັກຢູ່ຮ່ວມກັບເຮົາຈົນຕະຫຼອດຊີວິດ ເຖົ້າລອງຄິດເບິ່ງດູເຮົາມີຄວາມຫວັງດີຕໍ່ສົມ ເພດເຖິງພຽງໃດ? ແຕ່ສົມເພດບໍ່ທັນເຊື່ອຄວາມຫວັງດີຂອງເຮົາ.

ທ້າວເນດອວ່າຍໜ້າໄປຫາສົມເພດ ໃນທໍານອງເປັນຄົນກາງຢາກຖາມຄວາມເຫັນຂອງສົມເພດເປັນແນວໃດ? ສົມເພດຍັງຄົງເອົາແພມົນເຊັດນໍ້າຕາຢູ່ດ້ວຍຄວາມທຸກລະທົມຂົມຂື່ນທີ່ສຸດ. ເຫັນເປັນແນວນັ້ນ ທ້າວເນດຈຶ່ງອວ່າຍໜ້າ ໄປເວົ້າຕໍ່ທ້າວສິ່ງວ່າ:

ໂຕເວົ້າດ້ວຍນໍ້າໃສໃຈຈິງບໍນີ້?

ທ້າວສິ່ງຍົກຄໍ້ວເພື່ອບບາດໜຶ່ງ ແລະ ຍິ້ມບໍ່ໃຫ້ເຫັນແຂ້ວຄໍາແລ້ວເວົ້າວ່າ:

ເຮົາຈະເອົາສົມເພດເປັນເມຍແທ້! ຊີວິດເບື້ອງຫຼັງຂອງນາງເປັນແນວໃດເຮົາບໍ່ກ່ຽວ. ເຮົາຄິດວ່າມື້ແລງນີ້ເຮົາຈະ ເອົາສົມເພດຂ້າມຂອງໄປເມືອງໄທແລ້ວຈະພາກັນເດີນທາງໄປປະເທດຝະລັ່ງ ໄປນໍາອ້າຍເຂີຍຂອງເຮົາຢູ່ເມືອງປາຣີ. ໂຕ ຍັງຈືອ້າຍເຂີຍຂອງເຮົາຢູ່ຕີ້? ເລີຟາເມີກັບປີແຕນໂປຈີເອ?

ທ້າວເນດບໍ່ເຊື່ອຄວາມເວົ້າຂອງທ້າວສິງແຕ່ບໍ່ຮູ້ວ່າຈະເວົ້າແນວໃດດີ. ນັ່ງສູບຢາເສີຍນັ່ງຢູ່ ຕາມເຄີຍແຕ່ໃນໃຈ ລາວຄິດວ່າ: ທ້າວຊານີ້ຫຼອກຕົ້ມຮອດໂສເພນີ ເພາະທ້າວເນດເຄີຍເຫັນພວກນາຍທະຫານ ອັນທີ່ເອີ້ນວ່າກອງທັບແຫ່ງ ຊາດນັ້ນອອກເງິນແຕ່ງດອງ ເອົາພວກນາງສາວຢູ່ຕາມຊົນນະບົດວ່າຈະເອົາເຮັດເມຍແກ້ວຜົວທຶບກັນ

ແທ້. ແຕ່ຟ້າເອີຍ! ເມື່ອເອົາມາຮອດເມືອງຫຼວງກໍເອົາໄປຂາຍໃຫ້ໂຮງເຕັນລໍາ. ພວກເຂົາບໍ່ສະເພາະແຕ່ບໍ່ໄດ້ຫຼຸບທຶນແຕ່ງດອງທີ່ນັ້ນ ແຕ່ຍັງ ໄດ້ກໍາໄລງາມອີກຊໍ້າ. ທ້າວເນດຮູ້ສຶກເບື່ອໜ່າຍຕໍ່ແນວຄິດອັນຂີ້ໂຫດສາມານດັ່ງກ່າວ ທີ່ສຸດຈົນບໍ່ສາມາດຈະນັ່ງຢູ່ໃນຫ້ອງນັ້ນຕໍ່ໄປອີກ. ທ້າວເນດລຸກຂຶ້ນພ້ອມທັງເວົ້າວ່າ:

ເລື່ອງຂອງພວກເຈົ້າ ພວກເຈົ້າເວົ້າກັນເອົາເອງເທາະ!

ຣວາຍ! ເວົ້າຊ່ວຍເຮົາແດ່ແມ້!

ໃຫ້ເຮົາເວົ້າແນວໃດ?

ຣວາຍ! ກະອະທິບາຍໃຫ້ສົມເພດເຈົ້າໃຈເຖິງຄວາມຫວັງດີຂອງເຮົາແດ່ລະບໍ່!

ເຮົາເຫັນວ່າມັນເປັນເລື່ອງລະຫວ່າງສອງຄົນເຮົາບໍ່ຄວນຫຍຸ້ງກ່ຽວການມີໜ້າຂອງເຮົາອາດຈະບໍ່ເໝາະ! ໝໍສິ່ງຜຸດລຸກຈາກບ່ອນນັ່ງມາຈັບແຂນ ທ້າວເນດໄວ້ ແລ້ວເວົ້າດ້ວຍພາສາຝຣັ່ງທີ່ມີຄວາມໝາຍວ່າ:

ເວົ້າຊ່ວຍເຮົາແດ່ແມ້! ເຮົາຊິປັນກໍາໄລດອກກ

ທ້າວເນດພໍຢາກຄາກຂີ້ກະເທີ່ ຖົ້ມໃສ່ໜ້າໝໍສິງພຸ້ນລະແໜ້ແຕ່ອົດກັ້ນໄວ້ໄດ້. ຄິດຢູ່ຄາວໜຶ່ງຈຶ່ງເວົ້າຂຶ້ນຊ້າໆດ້ວຍພາສາຝຣັ່ງວ່າ:

ສິງ! ເຮົາເປັນຄົນມັກເວົ້າຊື່ເຮົາເບື່ອແນວຄິດອັນຕໍ່າຊ້າຂອງໂຕ, ໂຕເປັນຜູ້ຊາຍທັງຂະນາດ ຫາເງິນລ້ຽງຊີບດ້ວຍມະໂນທໍາແດ່ບໍ່ໄດ້ບໍ?

ໝໍສິງຫຼຽວເບິ່ງໃບໜ້ານາງສົມເພດ ດ້ວຍສີໜ້າຫລ່າໆ ແຕ່ເມື່ອສໍານຶກເຫັນວ່ານາງສົມເພດບໍ່ຮູ້ຄວາມຝຣັ່ງມັນຈຶ່ງຍິ້ມພໍເປັນກາລະບໍ ແລ້ວລົມດ້ວຍພາສາຝຣັ່ງກັບທ້າວເນດຕໍ່ໄປ:

ໂຕຈະເອົາທໍາມະມາຖອກໃສ່ຫົວເຮົາຫວະ? ບໍ່ໄດ້ດອກກ່ອນນີ້ເຮົາເຄີຍທໍາບຸນແຕ່ບໍ່ເຫັນໄດ້ຫຍັງ? ບັດນີ້ເຮົາຊິຮຽນຂ້າຄົນໂຕຮູ້ໄວ້ສາ. ຜູ້ໃດຂວາງທາງເຮົາຜູ້ນັ້ນຈະຕ້ອງພິນາດ. ທ້າວເນດຊັງນໍ້າໜ້າ ຈົນເຖິງຂັ້ນອົດກັ້ນຢູ່ຕໍ່ໄປບໍ່ໄດ້. ທ້າວເນດຜຸດລຸກຂຶ້ນແລ້ວເວົ້າວ່າ:

ເຮົາບໍ່ທັນເຫັນໃຜຊົ່ວຄືໂຕ!

ເຮົາຊົ່ວ! ໝໍສິງຫົວແຮງຂຶ້ນຄືຄົນເປັນບ້າ. ນາງສົມເພດບໍ່ເຂົ້າໃຈວ່າສອງຄົນເວົ້າກັນຫຍັງຮູ້ແຕ່ວ່າເຂົາທັງສອງບໍ່ ລົງລອຍກັນ. ສ່ວນທ້າວເນດອວ່າຍໜ້າໄປຫານາງສົມເພດແລ້ວເວົ້າຢ່າງໜັກແໜ້ນວ່າ:

ສົມເພດເຈົ້າຢ່າເຊື່ອມັນ, ອັນຊິພາເຈົ້າໄປຕາຍໄດ.

ເວົ້າແລ້ວທ້າວເນດອອກຈາກຫ້ອງໄປ ສ່ວນໝໍສິງຫຍັງຄຶງຫົວຢ່າງຄົນເສຍຈິດ ຢູ່ໃນຫ້ອງຈົນເຮັດໃຫ້ນາງສົມ ເພດເກີດຄວາມຢ້ານແຕ່ບໍ່ຮູ້ຈະເຮັດແນວໃດມີແຕ່ນັ່ງຊຶກງຶກຢູ່ຄືຄົນອັບປັນຍາ.

## ຕອນທີ 2

ດວງຕາເວັນໃກ້ຈະລັບລ່ຽມພູໝູ່ງົວຄວາຍ, ໝູ່ສິບໝູ່ຊາວພວມອວາຍກັບຄືນມາແຫຼ່ງ. ສຽງຂຶກສຽງໂປ່ງສຽງ ງົວເຖິກຮ້ອງ "ຫົບເອ໊ອກ ! ຫົບເອ໊ອກ" ພ້ອມທັງຄຸດດິນແລ້ວກິ່ງຂ້າງໃສ່ກັນຫວງແກ່ວ. ສຽງຮ້ອງ "ອິມໍ ! ອິມໍ" ຂອງງົວ ນ້ອຍທີ່ຊອກຫາແມ່ ເພາະຖືກງົວເຖິກໄລ່ເພີ່ນຜູ້ເຈົ້າຂອງໝູ່ງົວຄວາຍຖືໄມ້ແສ້ຄັນຍາວອັດພຸ້ນ, ອັດນີ້ພ້ອມທັງຮ້ອງເປັນ ສີແໜ້ນໆຮ້າຍໆວ່າ ຫຸ້ຍ ! ຫຸ້ຍ ! ເມືອແຫຼ່ງ.

ຫຼຽວເຂົ້າໄປໃນບ້ານ ຜູ້ຄົນທີ່ກັບມາແຕ່ໄຮ່ແຕ່ນາເປັນສ່ວນສິບຜູ້ນີ້ແບກຟື້ນ ຜູ້ນັ້ນພາຍກະຕາຫຼືຫາບຜືນລະປູກຕ່າງໆ. ພວກເຂົາຮ້ອງຖາມວຽກງານຂອງກັນແລະກັນ. ແມ່ເຈົ້າເຮືອນທີ່ຢູ່ບ້ານມືຊ້າຍອຸ້ມລູກມືຂວາຈັບກະບຸງ ຮໍາຖອກໃສ່ຮາງທາງປາກຮ້ອງຫາໝູ "ຕູບ ! ຕູບ ! ເຫີ! ພ້ອມທັງເສີະໄລ່ໄກ່ທີ່ມາວົນ.

ພວກນາງສາວໝູ່ມີໝູ່ຫ້າກັບມາແຕ່ໄປອາບນໍ້າ ຫຼັງຈາກກັບມາແຕ່ໄປເຮັດວຽກ, ໃຜກໍນຸ່ງເຄື່ອງອ່ອນແອ້ນພາກັນຫາບນໍ້າເມືອເຮືອນຟັງສຽງໄມ້ຄານສີກັບງວງຄຸດັ່ງອອດແອດ ອອດແອດ. ຈັກພວກເຂົາລົມກັນຫຍັງພໍເປັນຊຸບໆ ! ຊິບໆ ບຶດໜຶ່ງພັດຫົວແຊວຂຶ້ນດ້ວຍຄວາມຊື່ນຊົມພວກເຂົາເວົ້າຂວັນອ້າຍບ່າວທິດ ຫຼື ອ້າຍບ່າວຈານໃດເດນໍ? ເດືອນແຮມໜຶ່ງຄໍ່າ ພວມສ່ິງແສງນວນ ຂຶ້ນດາດຟ້າ. ຕົ້ນພ້າວທີ່ມີໃບດົກໜາ ສູງສັ່ງລັງ ຢູ່ທົ່ວບ້ານໂອນເອ່ນໄປ ມາຕາມສາຍລົມສຽງເວົ້າ ສຽງຫົວທີ່ລອດ ອອກຈາກຊາຍຄາເຮືອນ ຂອງຊາວບ້ານທີ່ພວມ ກຽມພາເຂົ້າ ເຕົ້າພາແລງ ໄດ້ເປັນສຽງມະໂຫລີແຫ່ງສັນຕິສຸກ ໃນໝູ່ບ້ານຕາມຊານເມືອງຫຼວງວຽງຈັນຫຼັງຈາກອໍານາດການປົກຄອງແຂວງວຽງຈັນໄດ້ຕົກຢູ່ໃນກໍາມືຂອງກໍາລັງປະຕິວັດ.

ຫຼັງຈາກກິນເຂົ້າແລງແລ້ວ, ນາງ ວານິດດາ ອອກມານັ່ງເບິ່ງລົມ ໂດຍລຳພັງຄົນດຽວຢູ່ເຄີຍເຮືອນແມ່ເຖົ້າຄຳດີ ປີນີ້ ນາງວານິດດາ ພວມສອນສາວ ມີອາຍຸ 16 ປີ ເປັນນັກຮຽນຊັ້ນອຸດົມປີທີໜຶ່ງ. ນັບແຕ່ມື້ປວງປະຊາຊົນແຂວງວຽງ ຈັນລຸກຮື້ຂຶ້ນຢຶດອຳນາດການປົກຄອງເປັນຕົ້ນມາ ນາງວານິດດາ ໄດ້ເຂົ້າຮ່ວມໃນຂະບວນຊາວໜຸ່ມ ລາວຮັກຊາດ ເຖິງ ວ່າ ນາງວານິດດາ ແລະ ທ້າວນາກ ເຊິ່ງເປັນອາວອາຂອງນາງໂຕນໄປເມືອງໄທແລ້ວກໍຕາມ, ຄະນະຊາວໜຸ່ມ ລາວຮັກ ຊາດ ກໍຍັງຕິດຕາມ ຊ່ວຍເຫຼືອນາງ ທາງດ້ານ ແນວຄິດຫຼັກໝັ້ນຢູ່ຕະຫຼອດມາ. ນາງໄດ້ຫ້າວຫັນໃນການເຮັດອານາໄມ ຕາມແຫ່ງຕ່າງໆ ໃນເມືອງຫຼວງວຽງຈັນ. ຕໍ່ມານາງໄດ້ຖືກຄັດເລືອກ ເຂົ້າໃນກອງຂົນຂວາຍປຸກລຸກປະຊາຊົນ ຢູ່ຕາມໝູ່ ບ້ານ ໃນບໍລິເວນທົ່ງຮາບ ວຽງຈັນ. ນາງວານິດດາ ເກີດທີ່ກຸງເທບ ເມືອງຫຼວງຂອງລາດຊະອານາຈັກໄທ ແລະ ໄດ້ມາ ໃຫຍ່ຂຶ້ນທີ່ເມືອງຫຼວງວຽງຈັນບໍ່ທັນໄດ້ຊົມລົດຊາດ ແຫ່ງຄວາມງາມຂອງທຳມະຊາດ ຢູ່ຕາມຊົນນະບົດ. ມື້ນີ້ນາງມີ ໂອກາດໄປກ່ຽວເຂົ້ານຳປະຊາຊົນ. ໂອຍ ! ມ່ວນທີ່ສຸດ. ກິນເຂົ້າກໍແຊບເບິ່ງອັນໃດກໍເປັນຕາອອນຊອນທັງນັ້ນ. ທົ່ວທົ່ງ ນາມີຮວງເຂົ້າສຸກເຫຼືອງຄືຄຳກົ້ມກອງເປັນຄູ່ຄອງແມ່ນເລືອໄປຕາມສາຍລົມ. ຢູ່ຕາມທ້ອງຟ້າສີຄາມ ມີໝູ່ນົກແອ່ນບິນ ແລ້ວສ່ວານສົນ. ອອນຊອນທີ່ສຸດແມ່ນຄວາມວິວອນຂອງທຳມະຊາດ ເຊິ່ງປະກອບມີສຽງນົກເຂົາຂັນກາເວົ້າວອນ ແລະ ສຽງຈິກຈອກຈໍແຈ ຂອງໝູ່ນົກນາງໆ ສະໜິດໃນລະດູເກັບກ່ຽວ.

ນາງວານິດດາ ສຸດທີ່ເບີກບານໃຈ ເມື່ອໄດ້ສູບເອົາກິ່ນຫອມ ຂອງຮວງເຂົ້າ ທີ່ສຸກເຫຼືອງຄືຄຳຢູ່ຕາມທົ່ງນາກວ້າງ ຈົນສຸດສາຍຕາ. ນາງໄດ້ກວາດສາຍຕາຊົມພູມີພາບອັນສວຍງາມ ຂອງທຳມະຊາດ. ແຕ່ສິ່ງທີ່ເຮັດໃຫ້ ນາງວານິດດາ ສົມ ເພດເວດທະນາ ບໍ່ແລ້ວນັ້ນ ແມ່ນການເລົ່າທຸກຂອງນາສົມເພດໃນຄືນທີ່ຜ່ານມາ. ປາກົດວ່າຄຳເວົ້າຂອງນາງ ຍັງກ້ອງ ອ້ອມໃບຫູຂອງນາງຢູ່ ນາງສົມເພດກໍເປັນຄົນທີ່ເກີດຢູ່ ຝັ່ງຂອງກຳນັ້ນ ຄືກັນກັບນາງ ແຕ່ຊີວິດຂອງສົມເພດສຸດທີ່ທຸກ ຍາກກາກກຳທັງກາຍ ແລະ ໃຈ. ຄິດມາຮອດນີ້ ຮູບພາບຂອງການເລົ່າທຸກໄດ້ປະກົດຂຶ້ນໃນມັນສະໝອງຂອງນາງຢ່າງ ຈະແຈ້ງທີ່ສຸດ. ນາງວານິດດາໄດ້ປ່ອຍໃຫ້ຮູບພາບດັ່ງກ່າວ ເປັນການສາຍຮູບເງົາໃນກະແສແຫ່ງແນວຄິດຂອງນາງ.

ນາງສົມເພດເປັນຄົນຄິງກົມສູງຂາວນໍ້າກວ້າງຕາຄົມຜົມດຳເຫຼື້ອມກ້າວອອກຢືນຕໍ່ໜ້າມວນຊົນ ດ້ວຍທ່າທີທຸ່ນທ່ຽງ. ນາງກົ້ມຫົວສະແດງຄວາມເຄົາລົບຕໍ່ຄະນະກອງຂົນຂວາຍແລ້ວເລີ່ມຕົ້ນເວົ້າ ແຕ່ຫົວທີນາງເວົ້າກະຕຸກກະຕັກວ່າ:

ຂ້ານ້ອຍຊື່ສົມເພດ.......ໂອ້ຍ ! ລືມ.......ນ້ອງຊື່ສົມເພດ. ນາງເຫຼືອດໄປຫາຄະນະກອງຂົນຂວາຍທີ່ໄດ້ເຕືອນ ໃຫ້ນາງຫຼາຍເທື່ອບໍ່ໃຫ້ເວົ້າວ່າ “ຂ້ານ້ອຍ” ໃຫ້ເວົ້າວ່າ “ເຮົາ” ຫຼື “ນ້ອງ” ກໍໄດ້. ນາງຍິ້ມຫົວເປັນສີອາຍໆ ແລະເປັນຢຸດໆ ຢ່ອນໆຢູ່ຄາວໜຶ່ງ ນາງຈິ່ງຕັ້ງສະຕິໄດ້. ນາງເວົ້າຕໍ່ໄປດ້ວຍສຽງອັນສົດໃສວ່າ:

ຕາມພໍ່ບອກໃຫ້ຮູ້. ພໍ່ເປັນຄົນເຊໂປນ ແຂວງສະຫວັນນະເຂດ. ພໍ່ໄດ້ພັດເພພະເນຈອນໄປເອົາເມຍຢູ່ເມືອງເລນ ບໍ່ໄກຈາກຫາດພະນົມປານໃດ ແລະ ນ້ອງກໍ່ໄດ້ເກີດຢູ່ທີ່ນັ້ນ. ພໍ່ແມ່ຂອງນ້ອງເປັນຊາວນາທຸກຍາກ. ນ້ອງມີເອື້ອຍນ້ອງນຳ ກັນພຽງສອງຄົນ. ແມ່ຂອງນ້ອງໄດ້ໝົດບຸນໄປໃນເວລາທີ່ນ້ອງມີອາຍຸພຽງ 6 ປີ. ສ່ວນນ້ອງຊາຍພວມຮູ້ຄານ. ພໍ່ໄດ້ພາພວກນ້ອງ ໜີອອກຈາກເມືອງເລນ ພາກັນຫາເຊົ້າກິນຄໍ່າໄປຕາມມີຕາມເກີດ. ມື້ນີ້ນອນຢູ່ແຈຕະຫຼາດເບື້ອງນີ້ ມື້ອື່ນ ນອນຢູ່ແຈຕະຫຼາດເບື້ອງນັ້ນ. ນ້ອງຍັງນ້ອຍບໍ່ທັນຮູ້ເຮັດຫຍັງຊ່ວຍພໍ່ ມີແຕ່ອຸ້ມນ້ອງຄອຍຖ້າພໍ່. ມີບາງມື້ພວກເຮົາໄດ້ກິນ ເຂົ້າບາງມື້ມີເຂົ້າພໍແຕ່ໃຫ້ນ້ອງນ້ອຍສອງພໍ່ລູກພວກເຮົາຕ້ອງອົດ ! ໂອຍ ! ເວລານັ້ນເຫັນເດັກນ້ອຍສໍ່າຮາວຄາວດຽວກັນ ໄດ້ນຸ່ງດີກິນແຊບ. ນ້ອງກໍ່ກືນນໍ້າລາຍເຕັມທີແຕ່ຕ້ອງອົດ, ອົດຈົນນໍ້າຕາຊິອອກເປັນເລືອດ. ຫິວເຂົ້າແລ້ວພັດໜາວບໍ່ມີ ຫຍັງຫົ່ມ ເສື້ອຂາດໜ້າຜ້າຂາດຫຼັງສາມພໍ່ລູກພວກເຮົາ ໄດ້ພັດເຊພະເນຈອນໄປຫຼາຍບ້ານຫຼາຍເມືອງ ບາງເທື່ອກໍຈົກເຂົ້າ ວັດນອນຢູ່ນຳຫໍແຈກ ຂໍເອົາຜ້າຖຸມຂາດຂອງຍາຄູມາຫົ່ມ. ສຸດທ້າຍພໍ່ຂອງພວກນ້ອງໄດ້ພາພວກນ້ອງມາຮອດເມືອງ ຫຼວງວຽງຈັນ. ນ້ອງຊາຍຂອງນ້ອງ ກໍໃຫຍ່ຂຶ້ນມາພາຍໃຕ້ລົມພະຍຸແຫ່ງຄວາມຫິວໂຫຍ ແລະ ໄດ້ມີອາຊີບພັດເກີບ ໃຫ້ ເຈົ້າໃຫຍ່ນາຍໂຕຕາມແຫ່ງຕ່າງໆ ສ່ວນນ້ອງເອງຮັບຈ້າງລ້າງຖ້ວຍໃນໂຮງເຂົ້າແກງແຫ່ງໜຶ່ງ ໃນຕະລາດເຊົ້າ ເມືອງຫຼວງ ວຽງຈັນ. ສ່ວນພໍ່ຂອງພວກນ້ອງ ຮັບຈ້າງເຮັດນາໃຫ້ເພິ່ນຊີວິດການເປັນຢູ່ຂອງພວກເຮົາຈິ່ງຄ່ອຍປະຕູບ ປະຕາບຂຶ້ນມາ ແດ່. ນ້ອງ ແລະ ພໍ່ຈິ່ງເປີກສາກັນຊອກວິທີໃຫ້ນ້ອງຊາຍໄດ້ເຂົ້າຮຽນໜັງສືນຳເພິ່ນ. ສ່ວນນ້ອງເອງບໍ່ຮູ້ໜັງສືພໍ່ໂຕກໍ່ຕາມ ແຕ່ນ້ອງຊາຍທຸກປານໃດກໍ່ຈະຊຸດຫົວເລົາເກົາຫົວຫຍ້າຫາເງິນລ້ຽງໃຫ້ໄດ້ຮໍ່າຮຽນນຳເພິ່ນ.

ໃນເວລາຄອບຄົວນ້ອຍຂອງພວກນ້ອງຄ່ອຍໆມີນຫູມືນຕາຂຶ້ນມາເຈົ້າຂອງນາ ບ່ອນພໍ່ພວກນ້ອງຮັບຈ້າງເຮັດ ນາໃຫ້ເພິ່ນນັ້ນ ພັດທຸລັງທຸເລ ຍັງຄັບໃຫ້ນ້ອງອອກຈາກໂຮງເຂົ້າແກງ ເພື່ອເອົາໄປເປັນຂ້ອຍຮັບໃຊ້ຢູ່ໃນເຮືອນຂອງເພິ່ນ. ນ້ອງເຮັດວຽກສັບພະທຸກ. ພໍ່ແມ່ຕັ້ງຊື່ໃຫ້ນ້ອງວ່າສີມເພດ. ແຕ່ພວກເພິ່ນຊ້ຳພັດຮ້ອງນ້ອງວ່າ ອີເພດ. ລູກໜຶ້ງເຂົ້າແຕ່ໄກ່ ຂັນກົກ ເພື່ອໃຫ້ເພິ່ນທັນໃສ່ບາດກໍ່ແມ່ນອີເພດ. ແລ່ນໄປຊື້ເຂົ້າຈີ່ ແລະ ຊົງກາເຟນົມໃຫ້ພວກເພິ່ນປັ້ນເຂົ້າເຊົ້າກໍແມ່ນອີ ເພດ. ຊັກເຄື່ອງໃຫ້ເຂົາກໍແມ່ນອີເພດ, ກວາດເຮືອນໃຫ້ກ້ຽງຕະຫຼອດຮອດແຕ່ງຢູ່ຄົວກິນກໍ່ແມ່ນອີເພດ. ໂອຍ! ນັບບໍ່ ຖ້ວນ. ແຕ່ນ້ອງກັດແຂ້ວອົດເພື່ອໃຫ້ນ້ອງຊາຍໄດ້ຮຽນໜັງສືນຳເພິ່ນ. ແຕ່ຟ້າເອີຍ! ຫວິດປາກຊ້າງພັດມາພໍ້ປາກເສືອ. ເວລານັ້ນນ້ອງມີອາຍຸພຽງ 16 ປີ. ມີຄືນໜຶ່ງເພິ່ນຜູ້ຍາພໍ່ເຈົ້າເຮືອນບອກໃຫ້ນ້ອງເອົານ້ຳອຸ່ນ ຂຶ້ນໄປລ້າງຕີນໃຫ້ເພິ່ນຢູ່ທີ່ ຫ້ອງນອນ. ນ້ອງທຳຕາມແຕ່ເຈົ້າແມ່ຂ້ອຍເອີຍ! ບັກເຖົ້າໝວດແບ້ຕາຍເວນນັ້ນ ພັດຢາກຂົ່ມຂືນທຳສຳເລົານ້ອງ. ນ້ອງສູ້ ຄືນຢ່າງເດັດຂາດຕີນນ້ອງທຳໜ້າເອິກມັນໜົດແຮງ ເຮັດໃຫ້ມັນຫງາຍໜ້າລົງພື້ນເຮືອນ. ມັນຮ້ອງໂອຍອາຍ. ບັກລູກ ຊາຍມັນໃຫຍ່ກວ່ານ້ອງສອງຕໍ່ ແລ່ນມາຊ່ວຍເອົາກຳປັ້ນຊັດຂະໜັບຂອງນ້ອງຈົນນ້ອງສະຫຼົບຕາຍໄປ. ແລ້ວສອງພໍ່ລູກ ເຮືອນນັ້ນ ໄດ້ພັດປ່ຽນກັນຂົ່ມຂືນທຳສຳເລົານ້ອງຄືກັນກັບໝາເດືອນ 9 ນ້ອງໄດ້ເສຍຄວາມບໍລິສຸດຂອງລູກຜູ້ຍິງນັບແຕ່ ມື້ນັ້ນເປັນຕົ້ນມາ.

ເວົ້າມາຮອດນີ້ ນ້ຳຕາແຫ່ງຄວາມແຄ້ນຂອງນາງສີມເພດໄດ້ໄຫຼລົ້ນຮົ່ມຕາ ຊຶມລົງມາອາບແກ້ມ. ນາງກັດແຂ້ວ ເພື່ອບໍ່ໃຫ້ຄວາມສະອື້ນຂຶ້ນທວງ ຂອງນາງ ດັງແຮງເກີນໄປ. ມິດຢູ່ຄາວໜຶ່ງ ນາງຈຶ່ງຕັ້ງສະຕິໄດ້ ແລ້ວເວົ້າຕໍ່ດ້ວຍນ້ຳຕາ ອາບແກ້ມ.

ທີ່ນັ້ນຍັງບໍ່ພໍພວກຂີ້ໂຫດສາມານທີ່ທາງນອກອ້າງຕົນວ່າເປັນຄົນຮູ້ຜູ້ດີນັ້ນ ໄດ້ຈາກຄໍນ້ອງໄປຂາຍໃຫ້ໂຮງແມ່ຈ້າງເພື່ອອັດປາກ. ພວກມັນຍັງນ້ອງໄວ້ຢູ່ຫ້ອງແຫ່ງໜຶ່ງໃນຄຸ້ມສຸມກ້ອຍ. ໃສ່ກະແຈທາງນອກ, ຄົນທີ່ເສຍຄ່າແລ້ວ ໄດ້ຮັບລູກກະແຈ ນຳເຈົ້າຂອງໂຮງແມ່ຈ້າງ ໄຂເຂົ້າໄປຫານ້ອງ ເພື່ອບີບຄັ້ນຍ່ອງຍີນ້ອງຕາມໃຈມັກ. ແຕ່ນ້ອງຈະໄຂປະຕູ ອອກບໍ່ໄດ້. ໃນມື້ທຳອິດ ມີຄົນຜູ້ໜຶ່ງເຂົ້າໄປຫານ້ອງ. ນ້ອງປະຕິເສດ ບໍ່ຍອມມອບຕົວໃຫ້ມັນ. ມັນຮ້ອງເຈົ້າຂອງ ໂຮງແຮມມາ. ຄາວໜຶ່ງອີນາຍຕາເສື້ອງໜ້າໄຂ່ໜຶ່ງໜຶ່ງຈັບໄມ້ແສ້ເຂົ້າມາຕີນ້ອງ ຈົນນ້ອງຈຳຕ້ອງຍອມຂໍເຮັດຕາມຄຳສັ່ງ ມັນຈຶ່ງເຊົາ. ແຕ່ຟ້າເອີຍ! ຫຼັງຖືກແສ່ປານນັ້ນ ມັນຍັງໃຫ້ບັກຕາຍເວນນັ້ນເຂົ້າມາຂົ່ມຂືນນ້ອງ. ເພື່ອຄວາມມີຊີວິດຢູ່ສືບ ມື້ໄປ ນ້ອງໄດ້ອົດກັ້ນ ລູບຕາມຕົມ ແຫ່ງສະໜົມໂລກ.

ນາງສີມເພດເວົ້າມາຮອດນີ້ ອົດກັ້ນຕໍ່ຄວາມລະທົມຂົມຂື່ນບໍ່ໄດ້ນາງເກືອບຈະເປັນລົມໄປ. ນາງວານິດດາໄດ້ ຟ້າວລຸກຂຶ້ນໄປໂຊມເອົາໄວ້ ແລະ ມີນາງໜຶ່ງເອົານ້ຳໃສ່ຈອກຍື່ນໃຫ້ນາງສີມເພດ ຮັບເອົາຈອກນ້ຳມາດື່ມ. ຈຶກເອົາ ແພມົນໃນຖົງເສື້ອມາເຊັດນ້ຳຕາ ພະຍາຍາມຕັ້ງສະຕິໃຫ້ດີແລ້ວຈຶ່ງເລີ່ມເລົ່າຕໍ່.

ໃນເວລາທີ່ນ້ອງ ພວມຈົມຢູ່ໃນສະໜົມໂລກຢູ່ນັ້ນ ນ້ອງຊ້ຳພັດໄດ້ຂ່າວວ່າ ພໍ່ຜູ້ບັງເກີດເກົ້າຜູ້ເປັນຮົ່ມໂພຮົ່ມໄຮ ໃຫ້ແກ່ພວກນ້ອງນັ້ນໄດ້ໝົດບຸນໄປເສຍແລ້ວ. ນ້ອງຂອງນ້ອງທີ່ຮຽນຢູ່ ຊັ້ນມັດທະຍົມ ໄດ້ສິ່ງສະການພໍ່ ດ້ວຍການ ຊ່ວຍເຫຼືອຂອງເພື່ອນຝູງ ແລະ ພີ່ນ້ອງບ້ານເມືອງທີ່ໃກ້ຄຽງຂ່າວນີ້ເຮັດໃຫ້ນ້ອງອຸກໃຈ ຈົນເກືອບຈະຜູກຄໍຕາຍໃນຄຸກ ໂລກີດັ່ງກ່າວ. ແຕ່ມີກັບປີແຕນຜູ້ໜຶ່ງນ້ອງຂໍສະຫງວນຊື່ໄວ້ກ່ອນ, ໄດ້ມາຂໍຂອດຮັກຂອດແພງກັບນ້ອງ ວ່າຈະເອົາເຮັດ ລູກເຮັດເມຍແທ້ ແລະ ໄດ້ໄຖ່ເອົານ້ອງອອກຈາກຄຸກແຫ່ງໂລກີດັ່ງກ່າວ. ໄດ້ວ່າພວມລຸຍຢູ່ໃນສະໜົມແຫ່ງຄວາມຕໍ່ ຕ້ອຍນ້ອຍໜ້າເນາະ? ມີຄົນຍື່ນມືມາໃສ່. ນ້ອງກໍ່ຟ້າວມອບກາຍທະຫວາຍເນື້ອໃຫ້ແກ່ຊາຍຄົນນັ້ນ. ແຕ່ເອົາກັນແບບ ສອງຕໍ່ສອງ ໄດ້ປະມານສອງອາທິດ ມັນເລີຍຊວນນ້ອງໂຕນຂ້າມໄປເມືອງໄທ ວ່າຈະພານ້ອງໄປເມືອງຝຣັ່ງວ່າຊັ້ນ. ນ້ອງ ປະຕິເສດ ເພາະຖ້ານ້ອງໄປແລ້ວ ນ້ອງຊາຍຂອງນ້ອງຈະກິນນຳໃຜ? ໃນຄືນມື້ນັ້ນ ຈັກມັນເອົາຫຍັງໃຫ້ນ້ອງກິນນ້ອງ ນອນຫຼັບຢ່າງຄົນຕາຍ. ບາດຕື່ນຕົວຂຶ້ນມານ້ອງຮູ້ສຶກວ່ານ້ອງນອນຢູ່ບ່ອນທີ່ ນ້ອງບໍ່ເຄີຍໄດ້ນອນຈັກເທື່ອ. ນ້ອງຖາມ ຄົນຢູ່ອ້ອມແອມນັ້ນຈຶ່ງຮູ້ວ່າ ແມ່ນໂຮງໂສເພນີແຫ່ງໜຶ່ງ ທີ່ເມືອງໜອງຄາຍ ຝາກຂອງນັ້ນ ສ່ວນກັບປີແຕນໃຈບາບ ຄົນນັ້ນຫາຍໜ້າໄປຈ້ອຍ. ເບິ່ງແມ້ ບ້ານເມືອງເອີຍ! ນາຍທະຫານຊັ້ນຮ້ອຍເອກລໍ້ເອົານ້ອງເຮັດເມຍ ເອົາຢານອນຫຼັບ ໄລຍະຍາວໃຫ້ນ້ອງກິນ ແລ້ວເອົານ້ອງຂ້າມຂອງໄປຂາຍໃຫ້ໂຮງໂສເພນີ. ນ້ອງຈຳຕ້ອງເປັນໂສເພນີຢູ່ດິນໄທຕໍ່ໄປຫຼາຍມື້ ຈຶ່ງຊອກໂອກາດໂຕນຄືນມາຫາປິຕຸພູມ ອັນແສນຮັກຂອງພວກເຮົາ. ໂອຍ! ມື້ລອຍຂ້າມຂອງນ້ຳພວມເຕັມຝັ່ງ ນ້ອງໄດ້ ເປົ່າລົມໃສ່ຖົງຢາງເພື່ອເອົາເປັນສິ່ງຊູແຮງແລ້ວຕັດສິນໃຈເປັນແນວໃດກໍຂໍເອົາດິນລາວຖົມໜ້າ ລອຍອອກຈາກຝັ່ງໄທ ໄດ້ປະມານຮ້ອຍແມດ ພວກຕຳຫຼວດໄທ ຊ້ຳພັດຍິງປືນມາໃສ່ ລູກປືນ

ສິວໜ້າສິວຫຼັງ ແຕ່ນ້ອງບໍ່ຍອມກັບຄືນດິນໄທ ຄິດ ວ່າຕາຍກໍໃຫ້ຕາຍປີ້ນໜ້າມາຫາດິນລາວ ແຕ່ນ້ອງບໍ່ຕາຍ ນ້ອງໄດ້ໄຫຼໄປຄ້າງຢູ່ເຟືອຍໄມ້ແຫ່ງໜຶ່ງ ແລ້ວມີທະຫານອ້າຍ ນ້ອງໄປດຶງເອົານ້ອງຂຶ້ນຈາກນໍ້າ.

ໃນເວລາທີ່ນາງອານິດດາ ພວມລະເມີໄປຕາມກະແສແນວຄິດ ຄືກັນກັບຊົມຮູບເງົາ ທີ່ສະດຸງເຖິງຮູບພາບ ອັນ ເປັນໜ້າສົມເພດເວດທະນາ ເຊິ່ງເປັນປະກົດການໃໝ່ໃນຊີວິດຂອງນາງນັ້ນ. ສຽງຮ້ອງຂອງປ້າຄໍາດີ ໄດ້ເຮັດໃຫ້ນາງ ອານິດດາສະດຸ້ງຕົວ. ນາງຍິ້ມຫົວເປັນສີອາຍໆອວາຍໜ້າໄປຫາປ້າຄໍາດີແລ້ວເວົ້າດ້ວຍຄວາມສຸພາບວ່າ:

ໃຜຮ້ອງຫຼານຫຼືປ່າ?

ອ້າວ! ຫຼານບໍ່ໄດ້ຫງີນຫວະ? ອານິດດາ! ອານິດດາ! ຢູ່ປະຕູຮົ້ວຫັ້ນເດ! ບໍ່ແມ່ນພວກໝູ່ຂອງຫຼານມາຮ້ອງໄປ ປະຊຸມຫວາ?

ເອະ! ມື້ນີ້ບໍ່ມີປະຊຸມນາ ນາງອານິດດາທັງຄິດທັງຫຼຽວອອກໄປຫາປະຕູຮົ້ວ ເຫັນຄົນຜູ້ໜຶ່ງນຸ່ງເຄື່ອງຂາວທັງຮ້ອງ ທັງກັວກມືເອີ້ນາງ. ນາງເລີຍລົງເຮືອນໄປຫາຄົນຜູ້ນັ້ນ ນາງບໍ່ລື້ງແຕ່ຫາກເຄີຍເຫັນ ນາງເລີຍຖາມວ່າ: - ອາວຮ້ອງຫຼານຫວາ?

ແມ່ນແລ້ວ ອາວເນດຂອງຫຼານ ແຕ່ງໃຫ້ອາວມາຕ້ອນເອົາຫຼານເມືອບ້ານ ເພາະມື້ນີ້ເພິ່ນເຮັດບຸນເຮືອນມື້ອື່ນເຊົ້າຈະໄດ້ໃສ່ບາດ.

ເຫດໃດຫຼານຈິງຈະເມືອໄດ້?

ນາງອານິດດາເວົ້າຂຶ້ນດ້ວຍຄວາມສົນໃຈ ຊາຍຄົນນັ້ນຍິ້ມຫົວແລ້ວເວົ້າດ້ວຍສຽງອະລິອະລອຍ.

ເປັນຫຍັງບໍ່ໄດ້ ອາວເອົາລົດມາຕ້ອນຈອດຢູ່ນອກທາງຫັ້ນເດ! ໄປຄອບຄະນະຮັບຜິດຊອບ ແລ້ວອອກໄປຫາອາວບໍ່ເອົາເຄື່ອງຫຍັງເມືອກໍໄດ້. ເມື່ອເຫັນນາງອານິດດາອວາຍໜ້າໄປ ວ່າຈະໄປຄອບຄະນະ ຊາຍຄົນນັ້ນເວົ້າຕື່ມອີກວ່າ ໄປຄອບເພິ່ນວ່າມີພີ່ນ້ອງມາຕ້ອນເອົາເມື່ອເຮັດບຸນເຮືອນຊັ້ນເດີ! ຕອນທ່ຽງມື້ໜ້າຈະກັບຄືນມາ.

ນາງອານິດດາງຶກຫົວຄ່ອຍໆແລ້ວຍ່າງໄປຫາເຮືອນຄະນະຮັບຜິດຊອບກອງຂົນຂວາຍດ້ວຍຄວາມສົນໃຈ “ກ່ອນ ຈະມາ ອາວເນດໄດ້ເຕືອນແລ້ວເຕືອນອີກວ່າໃຫ້ລະວັງຕໍ່ກົນລວງຂອງພວກປອງຮ້າຍມີເລື່ອງຫຍັງກໍໃຫ້ເປີກສານໍາໝູ່ຄະນະ ກາງຄໍ່າກາງຄືນບໍ່ໃຫ້ໄປມາໃສຜູ້ໜຶ່ງຜູ້ດຽວ” ນາງອານິດດາຄິດເຖິງເລື່ອງນີ້ຂຶ້ນມາ ນາງຮູ້ສຶກເປັນສີສິງກະ ສິງເຄິ່ງຢູ່ໃນໃຈ ແຕ່ຄວາມຢາກເມືອເຮືອນ ເພື່ອໄດ້ພົບກັບເພື່ອນຝູງແຮງກວ່າ ນາງພຶມພໍາອອກມາວ່າ ແມ່ນອາວເນດແຕ່ງຄົນ ມາຮັບເອົານີ້ນາ!

ຄະນະຮັບຜິດຊອບກອງຂົນຂວາຍບໍ່ຢູ່ ຢູ່ແຕ່ນາງຄໍາສອນເລຂາຂອງຄະນະ ເມື່ອຮູ້ວ່າມີຍາດພີ່ນ້ອງແຕ່ງຄົນມາຮັບເອົາ ນາງຄໍາສອນໄດ້ອະນຸຍາດ ໃຫ້ນາງອານິດດາ ກັບບ້ານ.

ນາງອານິດຕາ ກ້າວຂຶ້ນລົດໂຕໂຢຕາ ສີເຫຼືອງອ່ອນ ດ້ວຍຄວາມຊື່ນຊົມ. ມີພຽງແຕ່ນາງກັບຜູ້ມາຕ້ອນ ບໍ່ນາງ ອັດປະຕູລົດສຽງຈັກກໍດັງຂຶ້ນ ແລ້ວລົດຄັນນັ້ນກໍ່ແລ່ນອອກຈາກບ້ານໄປໄດ້ໄລຍະໜຶ່ງຊາຍຄົນນັ້ນເວົ້າຂຶ້ນດ້ວຍສີໜ້າ ຍິ້ມແຍ້ມວ່າ:

ອານິດຕາ ຫຼານບໍ່ຄິດຮອດເມືອງໄທຫວາ?

ນາງອານິດດາ ຫຼຽວເບິ່ງໃບໜ້າຂອງຊາຍຄົນນັ້ນແບບໜຶ່ງແລ້ວເວົ້າດ້ວຍສຽງໜັກແໜ້ນວ່າ:

ຄິດຮອດເຮັດຫຍັງ? ຫຼານແມ່ນຄົນລາວ

ບໍ່ແມ່ນຕີ

ເປັນຫຍັງ?

ກະດຽວວ່າພໍ່ແມ່ຂອງຫຼານເປັນຄົນໄທ

ບໍ່ແມ່ນຄົນໄທ! ແມ່ນຄົນລາວຮ້ອຍເປີເຊັນເຕັມ

ບ່ອນເກີດຂອງຫຼານກໍຢູ່ກຸງເທບພຸ້ນຕວາ?

ບ່ອນເກີດນັ້ນບໍ່ສໍາຄັນ ແຕ່ຫຼານແມ່ນສາຍເລືອດລາວ ລາວວຽງຈັນແທ້ໆ.

ພໍ່ແມ່ຂອງຫຼານ ຢູ່ເມືອງໄທພຸ້ນໝົດ ເຫດໃດຫຼານພັດເປັນຄົນລາວໄດ້. ລືມຊາດຕົນເອງແລ້ວໃດຫັ້ນ

ຫຸ້ຍ! ພໍ່ແມ່ຕະຫຼອດຮອດອາວອາ ຂອງຫຼານຕ່າງກໍບອກໃຫ້ຫຼານ ຮູ້ວ່າຫຼານແມ່ນລາວ ແມ່ນລາວທັງກາຍແລະ ໃຈ. ເຊື້ອສາຍຂອງຫຼານແມ່ນຄົນວຽງຈັນ.

ຊາຍຄົນນັ້ນງຶກຫົວຫຼາຍເທື່ອຂັບລົດເສີຍຢູ່ຄາວໜຶ່ງແລ້ວເວົ້າວ່າ:

ຫຼານບໍ່ຢາກເມືອຢາມພໍ່ແມ່ແດ່ຫວາ?

ນາງອານິດຕາ ບໍ່ຮູ້ແນວຕອບ ນາງໄດ້ມາຢູ່ນຳອາວອາຕັ້ງແຕ່ອາຍຸ 8 ປີ ບັດນີ້ກໍສອນສາວແລ້ວ ເວົ້າເຖິງພໍ່ແມ່ຂຶ້ນມາເທື່ອໃດນາງພໍຢາກບິນໄປຫາພໍ່ແມ່ໂລດ. ຊາຍຄົນນັ້ນຍິ້ມຢ່າງອ່ອນຫວານແລ້ວເວົ້າດ້ວຍສຽງອະລີອະລອຍວ່າ:

ເມື່ອບໍ່? ອາວຊິຊ່ວຍ!

ເລື່ອງນີ້ຕ້ອງຖາມອາວເນດກ່ອນ!

ຖາມເພິ່ນເຮັດຫຍັງ ເພິ່ນບໍ່ໃຫ້ເມືອດອກ. ຖ້າຫຼານຢາກເມື່ອ ຕ້ອງລັກເມືອ ຈຶ່ງໄດ້ເມື່ອບໍ? ເມື່ອດຽວນີ້ໂລດກາໄດ້.

ນາງອານິດດາຖາມຄືນດ້ວຍຄວາມຕົກໃຈ

ເອີ! ເມື່ອດຽວນີ້ໂລດແລ້ວ. ໂອກາດດີແລ້ວເດ.

ຫຸ້ຍ! ບໍ່ເມື່ອດອກ.

ຫຼານບໍ່ຄິດຮອດພໍ່ແມ່ຫວາ? ເພິ່ນຈົ່ມຫາທຸກມື້ເປັນຕົ້ນແມ່ນວ່າອາມາລີຂອງຫຼານ ໄປຢາມພວກເພິ່ນ ເພິ່ນໄດ້ຮ້າຍໃຫ້ອາຂອງຫຼານວ່າ ເປັນຫຍັງ ບໍ່ເອົາຫຼານໄປນຳ?

ຕົວະ! ບໍ່ເຊື່ອດອກ.

ນາງອານິດດາ ຫຍັບອອກ ດ້ວຍຄວາມລະມັດລະວັງ ພ້ອມທັງສັກສາຍຕາໃສ່ຊາຍຄົນນັ້ນດ້ວຍຄວາມສົງໄສ.

ຫຼານບໍ່ເມືອແທ້ຫວາ?

ບໍ່ເມື່ອໃສໝົດ

ນາງອານິດດາ ເວົ້າດ້ວຍສີໜ້າເຄັ່ງຂຶມ, ຊາຍຄົນນັ້ນຍັງຍິ້ມເສີຍພ້ອມທັງເວົ້າວ່າ:

ບໍ່ສະເພາະແຕ່ອາວຈະຊ່ວຍໃຫ້ຫຼານໄດ້ເມື່ອພົບພໍ່ແມ່ເທົ່ານັ້ນ ອາດຍັງຈະຊ່ວຍໃຫ້ຫຼານມີຄວາມສຸກອີກໃດ. ເມື່ອບໍ່? ອາວຈະຊື້ສາຍຄໍເສັ້ນງາມໆ, ສາຍແອວທອງນາກເສັ້ນໃຫຍ່ໆໃຫ້ຫຼານເອ້ຕາມໃຈຊອບ. ອາວມີເງິນໃດ! ຊິບອກ ໃຫ້.

ຫຸ້ຍ! ໜ້າບໍ່ອາຍ! ບໍ່ໄປໃສໝົດ

ນາງອານິດຕາ ເນັ້ນຄວາມເກົ່າ ເວົ້າມາຮອດນີ້ ພໍດີຮອດທາງສາມແຍກ ແທນທີ່ຈະແລ່ນເຂົ້າໄປຫາເມືອງຊາຍ ຄົນນັ້ນຊໍ້າພັດລ້ຽວໄປທາງໃໝ່ ນາງອານິດດາເຫັນແນວນັ້ນ ເລີຍຖາມວ່າ:

ຮ່ວາຍ! ໄປຫຍັງທາງນີ້? ໄປທາງນີ້ແຮງໃກ້

ມັນຕອບນາງ ດ້ວຍທ່າທີຍິ້ມອາດໃດອາດໜຶ່ງ ເອ! ເຊື່ອໃຈບໍ່ໄດ້ແລ້ວລະ ບໍ່ໄດ້ຕ້ອງລົງຈາກລົດຄັນນີ້ດ່ວນນີ້ ຄືຄຳສັ່ງທີ່ປະກົດຂຶ້ນໃນມັນສະໝອງຂອງນາງ

ຈອດລົດໃຫ້ຂ້ອຍລົງຂ້ອບບໍ່ໄປນຳດອກຄັນໄປທາງນີ້ນາ

ລົດກໍບໍ່ຈອດຍິ່ງແລ່ນໄວ. ເອົາແລ້ວຊິເຮັດແນວໃດບາດນີ້? ນາງອານິດດາຕັດສິນໃຈໄຂປະຕູ ວ່າຈະໂດດລົງຈາກລົດແຕ່ຊາຍຄົນນັ້ນຄວາມືມາກອດແອວນາງໄວ້.

ຈະໄປໃສ? ໄປບໍ່ໄດ້ດອກ

ມັນເວົ້າຂຶ້ນດ້ວຍທ່າທີເຍາະເຍີ້ຍ ແລ້ວຫົວຂຶ້ນດ້ວຍສຽງອັນປ່າເຖື່ອນ ນາງອານິດດາຢຶດຕົວອອກກຸມຕີມັນຄືນ ເຮັດໃຫ້ມັນບໍ່ສາມາດຂັບລົດຕໍ່ໄປໄດ້ ທີ່ນັ້ນເປັນປ່າຍອມແຍມແຄມທົ່ງນາຊ່າວໃໝ່ ມັນເລີຍລ້ຽວລົດເຂົ້າຈອດແລ້ວ ຄວາມືທັງສອງມາກອດຮັດເອົານາງອານິດດາ. ໃນເວລານັ້ນຄຳເວົ້າຂອງນາງສິດເພດ ໃນເວລາກ່າວທຸກທີ່ວ່າ: "ພວກມັນ ໄດ້ຂົ່ມຂືນສຳເລົານ້ອງຄືກັນກັບໝາເດືອນເກົ້ານ້ອງໄດ້ເສຍຄວາມບໍລິສຸດຂອງລູກຜູ້ຍິງ ນັບແຕ່ມື້ນັ້ນເປັນຕົ້ນມາ ໄດ້ ປະກົດຂຶ້ນໃນມັນສະໝອງຂອງນາງ ນາງອານິດດາກັດແຂ້ວສູ້ຄືນ ພ້ອມທັງຮ້ອງຂໍຄວາມຊ່ວຍເຫຼືອບັກຕາຍເວນນັ້ນຍິ່ງ ຫົວດັງຂຶ້ນແລ້ວເວົ້າວ່າ:

ຮ້ອງໄຫ້ເຮັດຫຍັງໃຫ້ເສຍແຮງ ບໍ່ມີໃຜມາຊ່ວຍດອກ ມອບຕົວເສຍດີກວ່າ ຈະຊີ້ແຫວນເພັດວົງງາມໆໃຫ້ເປັນ ສິ່ງຕອບແທນ.

ນາງອານິດດາ ທັງໝົດທັງຖີບແຕ່ກໍ່ບໍ່ຫຼຸດອອກຈາກວົງແຂນອັນແຂງແກ່ນຂອງບັກຕາຍເວນນັ້ນໄດ້. ນາງຮູ້ສຶກ ວ່າແຮງຂອງນາງ ອ່ອນລົງທຸກທີ ນາງພວມຄິດຫາຊ່ອງທາງທີ່ຈະເອົາຕົວລອດ ໃນເວລານັ້ນໃບໜ້າອັນຂີ້ດຽດຂອງມັນ ຫຍັບເຂົ້າມາໃກ້ ໃບໜ້າອັນຂາວນວນຂອງນາງ ພ້ອມທັງກອດຮັດນາງເຂົ້າຈົນເກືອບຈະຫາຍໃຈບໍ່ໄດ້ ກຸຕາຍຄັກບາດນີ້ ນາງຫັນໃຈບັກແຮງໆ ວ່າຈະຢຶດຕົວອອກເປັນເທື່ອສຸກທ້າຍໃຫ້ມັນແຮງທີ່ສຸດເທົ່າທີ່ຈະແຮງໄດ້ ໃນເວລານັ້ນປະຕູລົດ ເປີດອອກ ນາງອານິດດາ ງວາກໄປເຫັນຊາຍຄົນໜຶ່ງ ເປັນຄົນສູງຮຽວພາຍຂ້ອງ ແລະ ຈັບຄັນເບັດປັກເຕັມກຳ ນາງຟ້າວ ຮ້ອງຂຶ້ນວ່າ:

ຊ່ວຍເອົານ້ອງແດ່!

ຊາຍຄົນນັ້ນວາງຄັນເບັດປົດຂ້ອງ ອອກຈາກປາແລ້ວດຶງລາກນາງອານິດດາ ອອກຈາກວົງແຂນ ຂອງບັກຕາຍ ເວນນັ້ນທັນທີພ້ອມທັງເວົ້າຂຶ້ນດ້ວຍສຽງເຄັ່ງຂຶມວ່າ:

ມຶງສັງມາຊົ່ວແທ້! ປະໄດ! ຄັນບໍ່ປະຊິເອົາມີດຍອກຄໍແທ້ໃດນີ້.

ບັກຕາຍເວນນັ້ນຈຳຕ້ອງໄດ້ວາງນາງອານິດຕາເພື່ອຕັ້ງທ່າໃໝ່ມັນຈົກປືນພົກອອກມາຈີ່ໃສ່ຊາຍຫາປາ

ວາງມີດ! ຍົກມືຂຶ້ນ ຄັນບໍ່ຢາກຕາຍ

ຈຳຕ້ອງວາງມີດ ແລະ ຍົກມືຂຶ້ນ ບັກຕາຍເວນນັ້ນເມົາແຕ່ຈີ້ປືນໃສ່ຊາຍຫາປາ ບໍ່ຮູ້ວ່າ ນາງອານິດດາພວມຊອກຫາໄມ້ຄ້ອນ ຊອກໄດ້ແລ້ວກໍແຢ່ງປີ້ຟາດໃສ່ກະບານຫົວຂອງມັນດັງໂພະ! ບາດໜຶ່ງຈົນມັນເຊຖືນຫຼັງ ຊາຍຫາປາສວາຍ ໂອກາດນັ້ນເຕະມືມັນຈົນຢືນຟົ້ງອອກຈາກ ແຕ່ໄມ້ຄ້ອນນາງອານິດດາເປັນໄມ້ໂດກແດ່ແລ້ວ ພຽງແຕ່ຕີບາດດຽວກໍ ຫັກເຄິ່ງບັກຕາຍເວນນັ້ນ ພັດເປັນຄົນກ້າວກຶງ ດ້າມສໍ່ານັ້ນບໍ່ພໍແຈ່ວຫຍັງມັນຕັ້ງສະຕິໄດ້ມຸ່ງໝັດຜ່າໃສ່ໃບໜ້າຊາຍຫາ ປາ ບຸນແຕ່ຫຼີກທັນ ຄັນບໍ່ທັນລະແມ່ນຫງາຍໜ້າ ນາງອານິດດາກໍສູ້ແບບຫົວຂາດຄາ ແຢ່ງຂີ້ໂມງໄມ້ຄ້ອນກິດໃສ່ກາງຫຼັງ ມັນດັງອີກບາດໜຶ່ງ ມັນງວາກໜ້າມາຈະຕົບໜ້າແຕ່ນາງຫຼີກທັນ ຊາຍຫາປາໂຢ້ໂດດທຳສ່ວງມັນໝົດແຮງ ເຮັດໃຫ້ມັນ ເສຍຫຼັກ ຫງາຍໜ້າຕົກທວາມລົງບວກຄວາຍແຄມທາງ. ນາງອານິດດາວ່າຈະໂດດລົງເອົາຕີນສົ້ນງຸມຫົວມັນໄວ້ແຕ່ຊາຍ ຫາປາຟ້າວຄວາເອົາຂ້ອງ ແລະ ຄັນເບັດຈັບແຂນນາງອານິດດາແລ່ນຢ່າງບໍ່ມີທີບເຂົ້າໄປໃນປ່າ. ໄປໄດ້ສຸດຊົ່ວແຮງຊາຍ ຫາປາຈິ່ງພານາງອານິດດາໝຸບລົງທັງຫຼຽວຫຼັງສັງເກດເບິ່ງວ່າ ບັກຕາຍເວນນັ້ນແລ່ນນຳມາຫຼືບໍ່? ຟັງສຽງຫາຍໃຈຈັກ ແມ່ນໃຜຕໍ່ໃຜດັງຫືດຫາດ! ຫືດຫາດຢູ່. ຄາວໜຶ່ງອາດແມ່ນໝູ່ແລນຊອກຫາກິນດັງຊວາດ! ຊວາດມາໃກ້. ນາງອານິດ ດາເປີດກ່ອນຈົນວ່າເກີບຊັງດານເຣ່ຍຈິ່ງອ່ວາຍມາຊອກຫາ ພໍດີຊາຍຫາປາແລ່ນໄປທັນເລີຍບອກວ່າ:

ເຊົາຢ່າແລ່ນ!

ບໍ່ແມ່ນບັກຕາຍເວນນັ້ນບໍ່ຊັ້ນນາ?

ມັນໜີໄປແລ້ວລະ ຟັງແມ້ສຽງລົດມັນແລ່ນໜີໄປແລ້ວເດ!

ນາງອານິດດາ ສະຫງັດຟັງ ໄດ້ຫງິນສຽງລົດແລ່ນໄປແທ້ ນາງຍິ້ມຫົວແລ້ວນັ່ງໂຍບລົງໃກ້ໆຊາຍຫາປາ. ເອົາມື ເສີຍຜົມແລ້ວເອົາປີກເສື້ອຂຶ້ນມາເຊັດນ້ຳເຫື່ອ ແລະ ຕົມທີ່ຕິດໜ້າພ້ອມທັງເວົ້າດ້ວຍຄວາມສະໜິດສະໜົມວ່າ:

ຄັນບໍ່ມີອ້າຍ ນ້ອງເຊັດ!

ຄັນບໍ່ມີນ້ອງ ອ້າຍກໍເຊັດຄືກັນ. ກະດຽວວ່າແມ່ນໃຜຊັ້ນດອກອ້າຍພວມຍ່າງອອກມາແຕ່ໜອງປ່າໄລ່ ເລີຍໄປຫງິນສຽງຮ້ອງພໍ່ເປັນຫວ່າໆ ອ້າຍຈືໂລດວ່າແມ່ນສຽງຂອງນ້ອງ ອ້າຍເລີຍແລ່ນໄປຫາໂລດແມ່ນແທ້! ເຫດໃດນ້ອງຈິ່ງຖືກກົນລວງຂອງມັນເຖິງຂັ້ນນັ້ນ!

ນ້ອງກໍຄືກັນ ອ້າຍເປີດປະຕູລົດອອກ ນ້ອງຫຼຽວເບິ່ງກໍ່ຮູ້ໂລດວ່າແມ່ນອ້າຍ

ບໍ່ແມ່ນຕົວບໍ່?

ຫຸ້ຍ! ຄົນຄີງບາງຮ່າງສູງຄືອ້າຍໃຜຊິບໍ່ຈື່.

ຄັນນ້ອງບໍ່ເອົາໄມ້ຄ້ອນໂມງໃສ່ຫົວມັນອ້າຍກໍອັບປັນຍາຈັກວ່າເມືອເມືອງໄກ່ບໍ່ຂັນແທ້ບໍ່ຈັກ ເຂົາສອງຄົນຫຼຽວເບິ່ງໜ້າກັນແລ້ວຕ່າງຝ່າຍຕ່າງກໍອ່ວາຍໜ້າໄປລັກຍິ້ມຢູ່ພໍໃຜພໍລາວ ມິດຢູ່ຄາວໜຶ່ງ ນາງ ອານິດດາ ຈິ່ງຖາມວ່າ:

ອ້າຍເກດ ພວກເຮົາຊິເຮັດແນວໃດ?

ນ້ອງລອງເລົ່າເຫດການ ທີ່ພາໃຫ້ນ້ອງຂຶ້ນລົດມານຳບັກຕາຍເວນນັ້ນເບິ່ງດຸ?

ນາງອານິດຕາ ເລົ່າສູ່ທ້າວເກດຟັງຢ່າງລະອຽດສຸດທ້າຍທ້າວເກດເລີຍເວົ້າວ່າ:

ນ້ອງກໍ່ໂພດ ບໍ່ຮູ້ຮອດຊິມັນນ້ອງກະຍັງເຊື່ອມັນ ບຸນລະບໍ່!

ອ້າຍວ່ານ້ອງຄວນເຮັດແນວໃດ?

ຟ້າວກ່ອນ ອ້າຍໄປຊອກຫາມິດ ຂອງອ້າຍກ່ອນ ນ້ອງຖ້າຢູ່ນີ້

ໄປຊອກບ່ອນມື້ກີ້ນີ້ຫວາ?

ໄປຊອກຢູ່ບ່ອນນັ້ນແລ້ວ ອ້າຍຍັງເຫັນປືນມັນຫຼຸດມືບາງທີມັນປະປືນມັນບໍ່ຈັກ

ເຊົາກ່ອນເທາະອ້າຍ ມັນບໍ່ປະປືນມັນດອກ ເລື່ອງມິດເປັນເລື່ອງເລັກນ້ອຍຊື້ແທນໃຫ້ອ້າຍຈັກດວງກໍໄດ້ ນ້ອງຂໍ ໃຫ້ອ້າຍພານ້ອງໜີຈາກນີ້ໄກທໍ່ໃດຍິ່ງດີ ນ້ອງຢ້ານມັນໄປນຳເອົາໝູ່ມາຊອກຫານ້ອງອີກ.

ອ້າຍກໍອັບປັນຍາຄືກັນ ອ້າຍຈະພານ້ອງໄປຫາໝູ່ທີ່ມາໃສ່ເບັດນຳກັນ ແລ້ວເປີກສາຫາລືກັນເບິ່ງວ່າຄວນຈະ ເຮັດແນວໃດດີ.

ອຸຍ! ບໍ່ໄປແລ້ວ! ຫຼາຍຄົນຮູ້ເລື່ອງນີ້ ນ້ອງຊິເອົາໜ້າໄປໄວ້ໃສ

ນາງອານິດດາທັງເວົ້າທັງປິ່ນຫຼັງຕຶກໃສ່ ທ້າວເກດພະຍາຍາມອະທິບາຍດ້ວຍຄວາມຫວັງດີວ່າ:

ມັນບໍ່ເປັນຈັ່ງຊັ້ນອານິດດາ ໝູ່ທີ່ມາໃສ່ເບັດນຳອ້າຍຊິມີໃຜ? ມີແຕ່ໝໍເລີງທໍ່ນັ້ນ ໝໍເລີງກໍ່ແມ່ນໝູ່ຫ້ອງຮຽນ ດຽວກັນ ນ້ອງພັດຊິອາຍມັນຫຍັງ ອ້າຍຄິດວ່າໄປຫາມັນແລ້ວພ້ອມກັນຊອກຫາວິທີເອົານ້ອງເມື່ອຫາອາວເນດ ມີແຕ່ ອາວເນດທໍ່ນັ້ນ ຈະຊ່ວຍນ້ອງໄດ້.

ເອີ! ຄັນມີແຕ່ອ້າຍເລີງທໍ່ນັ້ນ ນ້ອງບໍ່ວ່າຫຍັງໄປກໍໄປ ລາວຢູ່ໃສ?

ພວກອ້າຍນັດກັນວ່າຈະໄປຫາກັນຢູ່ຖຽງນາລຸງພາຢູ່ໃກ້ນີ້ດອກ

ເວົ້າແລ້ວເຂົາທັງສອງກໍຍ່າງຕາມຫຼັງກັນໄປ ພໍໃກ້ຈະຮອດ ເລີຍຫຼຽວເຫັນກອງໄຟພວມລຸກເປັນແປວຢູ່ໃກ້ ກັບ ກົກທົ່ມນ້ອຍແຄມໜອງ ມີສອງຄົນພວມນັ່ງຜີງໄຟລົມກັນຢູ່ເຫັນແນວນັ້ນນາງອານິດຕາເລີຍຖາມວ່າ:

ອ້າຍເກດ ແມ່ນໃຜນັ່ງລົມອ້າຍເລີງຢູ່ນັ້ນຄືແມ່ຍິງ

ໂອ! ແມ່ນເອື້ອຍຂອງອ້າຍ ເພິ່ນມາເຮັດຫຍັງນໍ!

ທ້າວເລີງຫຼຽວເຫັນທ້າວເກດກໍຟ້າວຮ້ອງຖາມວ່າ:

ເປັນແນວໃດເຖົ້າ? ໂຊກໝານແດ່ຫວາ?

ທ້າວເກດປິ່ງຂ່ອງ ແລະ ຄັນເບັດແລ້ວເວົ້າດ້ວຍຄວາມນ້ອຍໃຈວ່າ:

ຊິທັນໄດ້ໃສ່ເບັດໃສ່ກ້າງຫຍັງແດ່! ເບິ່ງແມໜ້າຜາກນ້ອງນີ້ເກືອບເສຍແຂ້ວໃຫ້ບັກຕາຍເວນນັ້ນລະບໍ່?

ນາງສົມເພດ ແລະ ທ່າວເລີງຫຼຽວເບິ່ງໜ້າຜາກທ້າວເກດທີ່ແດງຮຸນໆຢູ່ ແລ້ວຫຼຽວໄປເບິ່ງສິ້ນເສື້ອຂອງນາງ ອານິດດາທີ່ຂາດຢູ່ເທິງປາ ແລະ ເປື້ອນເປິໄປດ້ວຍຕົມ ທ້າວເລີງເລີຍຖາມວ່າ:

ມີເລື່ອງຫຍັງເຖົ້າ? ໂຕໄປໜ້ອຍໜຶ່ງເຮົາກໍລົງໃສ່ເບັດແລ້ວຂຶ້ນມາດັງໄຟຜີງ ພໍໄຟລຸກເອື້ອຍສົມເພດກໍມາ ຮອດ ແລ້ວ ພວກໂຕກໍມາຮອດນີ້ລະ ເອື້ອຍສົມເພດກໍ່ບໍ່ທັນໄດ້ເວົ້າຫຍັງ ມື້ນີ້ຕັ້ງແມ່ນການໂຮມກັນຢ່າງບໍ່ໄດ້ນັດ ລ່ວງໜ້າ.

ນາງອານິດດາບໍ່ກໍາເງີຍໜ້າ ກົ້ມຢູ່ດ້ວຍຄວາມອາຍ ຫຼັງຈາກຫາບ່ອນນັ່ງແລ້ວ ທ້າວເກດຈຶ່ງເລີ່ມເລົ່າ ເຫດການທີ່ ເກີດຂຶ້ນຢ່າງລະອຽດ ທ້າວເກດເວົ້າຍັງບໍ່ທັນສຸດ ນາງສົມເພດຖາມຊ້ອນຂຶ້ນທັນທີວ່າ:

ມັນເປັນຄົນໃຫຍ່ສູງແມ່ນບໍ່?

ແມ່ນແລ້ວ

ມັນມີແປ້ວຢູ່ແກ້ມເບື້ອງຂວາ

ບໍ່ໄດ້ໄວ້ໃຈເບິ່ງ

ທ້າວເກດຕອບດ້ວຍຄວາມຈິງໃຈພ້ອມທັງອວາຍໜ້າໄປຫານາງອານິດດາ ໂດຍມີຈຸດປະສົງຢາກຖາມກ່ຽວ ກັບ ຮອຍແປ້ວດັ່ງກ່າວ ແຕ່ນາງອານິດດາເວົ້າຂຶ້ນກ່ອນດ້ວຍຄວາມຕື່ນເຕັ້ນວ່າ:

ແກ້ວເບື້ອງຂວາຂອງມັນມີແປ້ວແທ້!

ແມ່ນບັກຕາຍເວນນີ້ລະລໍ້ຕົ້ມເອື້ອຍໃນເມື່ອກ່ອນກາດາຍ! ມັນຊື່ວ່າ ສີງ

ບັກສີງຫວະ? ບັກກັບປີແຕນສິ່ງຫວະ? ມັນຢູ່ໃສ?

ທ້າວເລີງທັງຖາມທັງລຸກຂຶ້ນດ້ວຍທ່າທີຄຽດແຄ້ນ ບັນຍາກາດແຫ່ງການລືມກັນສຸດທີ່ຫັດໜ່ວງ ນາງອານິດດາ ໜຶດຫຼຽວເບິ່ງທ້າວເລີງແລ້ວຫຼຽວເບິ່ງນາງສີມເພດ ທ້າວເກດເຫັນແນວນັ້ນເລີຍເວົ້າວ່າ:

ມັນໄປແລ້ວ! ເຖົ້າເອີຍ! ແຕ່ເຮົາເຊື່ອວ່າມັນຄົງວົນວຽນຢູ່ແຖວນີ້ ເພື່ອປອງເອົານາງອານິດດາໃຫ້ໄດ້ ສະນັ້ນພວກເຮົາຈະເອົານາງອານິດດາໄປເຊື່ອງໄວ້ຢູ່ໃສ?

ນາງສີມເພດ ຫຼຽວເບິ່ງໜ້ານາງອານິດຕາ ພ້ອມທັງເວົ້າວ່າ:

ເອື້ອຍແລ່ນມານີ້ ກໍຍ້ອນລູກນ້ອງຂອງບັກຕາຍເວນນັ້ນລະໄປວົນເອື້ອຍ ພວກມັນອາດຢາກຫຼອກເອົາເອື້ອຍໄປຂາຍອີກ ແຕ່ເອື້ອຍຮູ້ກ່ອນເລີຍຟ້າວໜີມານີ້ລະ.

ທ້າວເລີງຜຸດລຸກທັນທີພ້ອມທັງຖາມວ່າ:

ພວກໝາຕາຍເລົ່ານັ້ນ ຍັງເຣຣອນຢູ່ໃນບ້ານພວກເຮົາຫັ້ນຫວະ? ໄປເກດ! ຊາຍໜຸ່ມທັງສອງ ຈັບມືກັນຢ່າງແໜ້ນວ່າຈະພາກັນເຂົ້າໄປໃນບ້ານ ເພາະເຊື່ອວ່າບັກສີງຄົງຍັງວົນວຽນຢູ່ແຖວນີ້ ແຕ່ນາງສີມເພດດຶງແຂນທ້າວເລີງໄວ້ແລ້ວເວົ້າວ່າ:

ຢຸດກ່ອນພວກນ້ອງ ພວກມັນມີພັກພວກຫຼາຍໃດ! ພວກນ້ອງສອງຄົນຈະສູ້ກັບພວກມັນບໍ່ໄດ້ດອກ

ເປັນຫຍັງຈິ່ງສູ້ບໍ່ໄດ້ ພວກນ້ອງຊິພາກັນໄປຫາອ້າຍເລີດ

ທ້າວເລີງເວົ້າຂຶ້ນດ້ວຍຄວາມເຊື່ອໝັ້ນ ພໍໄດ້ຍິນຊື່ທ້າວເລີດ ໃບໜ້າຂອງນາງສີມເພດປະກົດວ່າສົດໃສຂຶ້ນຜິດ ປົກກະຕິ ໃນໄລຍະຈັກເປັນຫຍັງຫູ ຄັນເວົ້າເຖິງທ້າວເລີດ ນາງສີມເພດມັກຍິ້ມຫວານກວ່ານໍ້າຕານ ໃບໜ້າບານກວ່າ ດອກບົວຍາມເຊົ້າ ນາງຖາມທ້າວເລີງດ້ວຍສຽງແຜ່ວເບົາວ່າ:

ອ້າຍເລີດມາບ້ານຫວະ?

ເພິ່ນມາກິນແລງຢູ່ບ້ານ ເພິ່ນເຄີຍບອກນ້ອງວ່າ ຄັນເຫັນພັກພວກຂອງກັບປີແຕນສິ່ງຢູ່ໃສ ໃຫ້ຟ້າວບອກໃຫ້ເພິ່ນຮູ້.

ນາງສີມເພດຍິ້ມຢ່າງມີຄວາມໝາຍແລ້ວເວົ້າຂຶ້ນດ້ວຍສຽງສົດໃສວ່າ:

ເພິ່ນກໍ່ເຄີຍບອດເອື້ອຍແນວນັ້ນ, ເອື້ອຍເຫັນວ່ານ້ອງເກດບໍ່ຄວນໄປ ເອື້ອຍຈະໄປເປັນເໝືອນກັບນ້ອງເລີງເພາະ ຖ້າພວກມັນເຫັນເກດຈະມີເລື່ອງບໍ່ດີເກີດຂຶ້ນ

ແມ່ນແທ້ໄດອ້າຍເລີງ! ນາງສານິດຕາເວົ້າຂຶ້ນດ້ວຍຄວາມຈິງໃຈ ທຸກຄົນເຫັນດີນຳຄວາມເຫັນຂອງນາງສີມເພດ ໝາຍຄວາມວ່າໃຫ້ນາງອາຣິດດາ ແລະ ທ້າວເກດຄອຍຖ້າຢູ່ຖຽງນາພີ້ກ່ອນ ມີແນວໃດຈະຕິດຕໍ່ຕາມທີຫຼັງແຕ່ນາງອານິດ ດາຍັງສັ່ງທ້າວເລີງໃຫ້ພະຍາຍາມຂ່າວໃຫ້ອາວເນດຮູ້ເລື່ອງນີ້ໄວເທົ່າໃດຍິ່ງດີໃນເວລາຄອຍຖ້າທ້າວເກດເວົ້າຕໍ່ນາງອານິດ ດາວ່າ:

ນ້ອງຖ້າຢູ່ນີ້ເດີ! ອ້າຍໄປອາບນໍ້າກ່ອນ

ນ້ອງຄັນຖາຍເຕັມທີນໍ້າສະອາດດີຕີ?

ໃຫ້ສະອາດຄືນໍ້າປະປານັ້ນບໍ່ໄດ້ແລ້ວ, ແລ້ວ, ແຕ່ວ່າພໍ່ອາບໄດ້ເພາະແມ່ນນໍ້າຫ້ວຍ, ຄັນຊັ້ນອ້າຍຈະຂຶ້ນໄປອາບຢູ່ ທ່າເໜືອພຸ້ນເດີ.

ແດງເດືອນລອດຮົ່ມໄຜ່ ສອງລີງໄປຫາໜ້ານໍ້າທີ່ເໜັງຕີງເຫຼື້ອມຍິບຍັບຢູ່. ນາງອານິດດາລຸຍລົງນໍ້າລຸຍໄວ້ເນື້ອ ກາຍອັນສົມສ່ວນ ແລະ ເຕັມງາມຂອງນາງຢ່າງບໍ່ຟ້າວບໍ່ຟັງ ຮຸກໄປທົ່ວຕົວ ພ້ອມທັງເຫຼືອດໄປຫາທ້າວເກດທີ່ອາບຢູ່ທ່າ ເໜືອ ນາງລັກຍິ້ມຢູ່ຜູ້ດຽວດ້ວຍຄວາມພໍໃຈ.

ນາງອານິດດາ ແລະ ທ້າວເກດເປັນເພື່ອນນັກຮຽນໃນຫ້ອງອຸດົມປີທີໜຶ່ງ ຢູ່ໂຮງຮຽນ ເຂົ້ນບໍ່ໃກ້ຊິດກັນປານໃດເພາະທ້າວເກດ ເປັນຄົນສຸຂຸມບໍ່ມັກໂອ້ເອ້ ເຮຮາກັບພວກເພື່ອນນັກຮຽນຍິງປານໃດ ມັກເກັບຕົວຢູ່ຢ່າງງຽບໆ ແລະ ມັກຫຼິ້ນກິລາ ໃນໄລຍະຜ່ານມາເຂົາລຶ້ງກັນພຽງແຕ່ເປັນນັກຮຽນຫ້ອງດຽວ ສ່ວນນາງອານິດດາ ໄດ້ໃຊ້ຄວາມສັງເກດທ້າວ ເກດຢ່າງລັບໆ ມາຕົນແລ້ວ ທ້າວເກດເປັນລູກຄົນທຸກຍາກ ແຕ່ເປັນນັກຮຽນດີຮຽນເກັ່ງກິລີຍາ

ສຸພາບ ຖ້າເຂົາໄດ້ນຸ່ງຖືດີ ຄືໝູ່ ໃຫ້ສົມກັບເນື້ອກາຍອັນສູງສະງ່າຂອງທ້າວເກດ ຣອາຍຢ້ານຫຼາຍຄົນນໍ້າລາຍອອກຢູ່ໃດເດີ!

ມິລິດໂຕໂຍຕາສີເຫຼືອງອ່ອນຄັນໜຶ່ງແລ່ນດ້ວຍລະດັບຄວາມໄວສູງມາແຕ່ດົງປາຍນາ ລ້ຽວເຂົ້າຮ່ອມແຫ່ງໜຶ່ງທີ່ ຄຸ້ມດົງປ່າລານ ເຂົ້າໄປຈອດຢູ່ຕໍ່ໜ້າເຮືອນ ວິລາຊັ້ນດຽວຫຼັງໜຶ່ງ ເຊິ່ງຖ້າເບິ່ງມາແຕ່ຈຸດສູງໃດໜຶ່ງກໍ່ຈະເຫັນວ່າ ວິລາຫຼັງນີ້ ຊີ້ນຢູ່ໃຕ້ພຸ່ມໄມ້ ໝໍສິງກ່າວລົງຈາກລົດສິ່ງເສື້ອເຕັມ ແຕ່ຕົມບອກຄວາຍ ມັນອັດປະຕູລົດດັງກົບບາດໜຶ່ງ ແລ້ວຍ່າງບາດ ໄວໆ ໄປຫາຮ່ອມກໍ້າຂວາ ເຊິ່ງເປັນຮ່ອມເຂົ້າໄປໃນ, ໄປຮອດປະຕູແປ້ນສີດໍາເຫຼື້ອມມີດອກໄຟສີຂຽວ ມັນລ້ຽວຊ້າຍເຂົ້າ ໄປຫາຫ້ອງນໍ້າ. ມັນແກ້ເຄື່ອງນຸ່ງຢ່າງໄວຖິ້ມໃສ່ຊາມໃບໃຫຍ່ ແລ້ວເຂົ້າໄປນອນຢູ່ໃນອ່າງນໍ້າສຸສະບຸລຸບໄລ້ເນື້ອກາຍຢ່າງ ຟ້າວຟັ່ງສະຫົວປັບແປບແລ້ວຈິ່ງເອົາຜ້າພຸ້ນສີຂາວຜືນໃຫຍ່ມາຕຸ່ມເຊັດໜ້າ ແລະ ເນື້ອກາຍ ເລັກນ້ອຍກໍ່ມແຍງແວ່ນ ພ້ອມ ທັງຫວີຜົມ ສອງສາມບາດແລ້ວກາຍໄປຫາຫ້ອງແຕ່ງກາຍ ມັນເອົາສົ້ງຂາຊ້າງແພດາ ປຽກມານຸ່ງ ກັບເສື້ອແຂນຍາວສີຕັບ ໝູ ສິບເກີບໜັງສີດໍາ ຄໍາສູງຢ່າງພວກພາດອອກຈາກຫ້ອງໄປເຂາະປະຕູສີດໍາ ເຫຼື້ອມປະຕູເປີດອອກ ພາຍໃນຫ້ອງອຶກເອົາ ໄປດ້ວຍຄວນຢາ ໝໍສິ່ງເຫຼືອດເບິ່ງພັກພວກຂອງມັນ ທີ່ພວມຫຼິ້ນໄມ້ຢູ່ນັ້ນນ້ອຍໜຶ່ງແລ້ວເອີ້ນວ່າ:

ຫ້ອມ! ເອື້ອຍມີງມາແລ້ວຫວະ?

ເພິ່ນມາແລ້ວເດ! ເພິ່ນຖາມຫາອ້າຍຢູ່.

ໝໍສິງຍ່າງເຂົ້າໄປຫາຫ້ອງໃນ. ແມ່ຍິງຄົນໜຶ່ງເປັນຄົນຄຶງໃຫຍ ນຸ່ງເຄື່ອງບາງຈົນເກືອບຈະເວົ້າໄດ້ວ່າບໍ່ໄດ້ນຸ່ງຫຍັງ, ມັນລຸກຈາກເສືອຟອງນໍ້າ ຍ່າງມາຫາໝໍສິງດ້ວຍທ່າທີອ້ອນແອ້ນ ຍິ້ມຫົວພ້ອມທັງເຮັດຕາສີຫຼີ່ວໆລົງເບິ່ງຫົວສິ່ງຂອງໝໍສິງ, ມັນກອດມັນຈູບໝໍສິງ ຢ່າງດູດດື່ມແລ້ວຖາມວ່າ:

ເປັນແນວໃດ ອ້າຍຂັງອີ່ນ້ອຍນັ້ນໄວ້ຢູ່ໃສ?

ບັກເນດເອົາທະຫານ "ອ້າຍນ້ອງ" ຮັກສາອິວານິດດາຢ່າງເຄັ່ງຄັດ ອ້າຍເກືອບເສຍແຂ້ວໃຫ້ພວກມັນ ຄັນອ້າຍບໍ່ ໂຕນລົງລີ້ຢູ່ບອກຄວາຍແຄມບ້ານອ້າຍຄົງເມືອເມືອງໄກ່ບໍ່ຂັນແລ້ວ

ແທ້ຫວະ?

ພໍສິງກໍ່ມຫົວລົງໃຫ້ເຫັນບ່ອນຖືກຄ້ອນອີ່ນັ້ນຍິ່ງກອດໝໍສິງແໜ້ນກວ່າເກົ່າ ຄາວໜຶ່ງອີ່ນັ້ນວາງໝໍສິງມັນຢ່າງໄປຫາຕູ້ເຄື່ອງນຸ່ງຈົກເອົາຂໍກະແຈແລ້ວຍ່າງໄປຫາຕູ້ເຊັບໄຂເອົາເງິນອອກມາເຕັມກໍາມອບໃຫ້ໝໍສິງພ້ອມທັງເວົ້າວ່າ:

ອ້າຍເອົາເງິນນີ້ໄປໃຫ້ເທົ່າຫ້ອມ, ພ້ອມທັງສັ່ງໃຫ້ເທົ່າຫ້ອມເອົາບັກເນດໄປເຊື່ອງ ໄວທີ່ສຸດເທົ່າທີ່ຈະໄວໄດ້ອ້າຍ ໄປຫາເທົ່າຫ້ອມດຽວນີ້ແລ້ວຟ້າວກັບຄືນມາຫານ້ອງ

ພໍໝໍສິງກ້າວອອກໄປຈາກຫ້ອງ ອີ່ນັ້ນກໍເຂົ້າໄປຫາຫ້ອງແຕ່ງກາຍ ພໍໝໍສິງກັບຄືນມາອີ່ນັ້ນກໍແຕ່ງຕົວແລ້ວມັນ ຕິດຊຸດສີຂາວເສື້ອແຂນສັ້ນ ແລະ ສິ່ງຂາຍາວໝໍສິງຢາງໄປແປງຄໍເສື້ອໃຫ້ອີ່ນັ້ນພ້ອມທັງເວົ້າວ່າ:

ພໍໄດ້ນັບຄໍາສັ່ງເທົ່າຫ້ອມກໍ່ອອກໄປປະຕິບັດໜ້າທີ່ທັນທີ ສ່ວນເງິນມັນບໍ່ຮັບມັນເວົ້າວ່າ ນ້ອງເອົາໃຫ້ມັນຫຼາຍແລ້ວ

ອີ່ນັ້ນຍິ້ມຢ່າງມີສະເໜ່ເອົາມືຕ່ອຍແກ້ມໝໍສິງເບົາໆແລ້ວເວົ້າວ່າ:

ພວກເຮົາຕ້ອງໄປລາຍງານໃຫ້ເຈົ້ານາຍດ່ວນອ້າຍພ້ອມແລ້ວຕີ

ພ້ອມແລ້ວ

ຄັນຊັ້ນໄປໂລດລະ

ພວກມັນພາກັນ ຂີ່ລົດໂມໂຕອອກໄປ ທາງຫຼັງບ້ານມຸ້ງໜ້າໄປຫາເດີ່ນທາດຫຼວງ ລ້ຽວຊ້າຍ ແວ່ເຂົ້າໄປຫາເຮືອນວິລາຫຼັງໜຶ່ງ ໝໍສິ່ງຖ້າຢູ່ນອກມີແຕ່ອີ່ນັ້ນເຂົ້າໄປຜູ້ດຽວປະມານສາມສິບນາທີ ອີ່ນັ້ນກັບອອກມາແລ້ວຊິບໃສ່ຫູສິງວ່າ:

ທາງການພວກເຮົາ ຈະຈັດການໝໍນາກຄືກັນກັບນ້ອງຂອງມັນ.

ໝໍນາກມັນໄປເມືອງໄທແລ້ວໄດ້?

ຢູ່ເມືອງໄທນັ້ນແລ້ວ ມັນແຮງງ່າຍ ສອງອ້າຍນ້ອງພວກນີ້ໃຊ້ການບໍ່ໄດ້ ຕ້ອງຄັດຫົວງຕັ້ງແຕ່ມື້ເລີ່ມຕົ້ນ ໄປ! ໄປ ທ່ຽວເບີຍລົມ ແຕ່ປານນີ້ເທົ່າຫ້ອມ ຄົງສໍາເລັດໜ້າທີແລ້ວລະ.

ພວກມັນໂດດຂຶ້ນລົດໂມໂຕ ແຟດສຽງປານຍິນແອບຮ້ອຍຫ້າມຸ້ງໜ້າໄປສູ່ຄຸ້ມສີສັງວອນ ແລ້ວລັດອອກໄປໃສ່ ດົງປາຍນາ ພໍໄປຮອດຮ່ອມແຫ່ງໜຶ່ງໜໍສິງ ຫຼຽວເຫັນໃຜຜູ້ໜຶ່ງ ໝູອາບຟາບຢູ່ຂອກທາງ ສ່ວນລົດໂມໂຕຫງາຍທ້ອງລ່າງງ່າງຢູ່ ຫ່າງຈາກນັ້ນ ປະມານສິບແມດ. ໜໍສິງຫຼຸດລົດໂດຍໄວ ອີ່ນັ້ນກໍຕຸດເຊັ່ນດຽວກັນ.

ອ້າວ! ບໍ່ແມ່ນເທົ່າຫ້ອມວາຫັ້ນນາ?

ອີ່ນັ້ນເວົ້າຂຶ້ນຖ້ວນຄວາມຕົກໃຈ ໜໍສິ່ງລິງລົດໄປໂຊມລຸກນັ່ງແລ້ວຖາມວ່າ:

ເຫດໃດຈິ່ງເສຍທ່າໜັກປານນີ້ ຫຼື! ເທົ່າຫ້ອມ.

ໜໍເທົ່າຫ້ອມ ເປັນຄົນໃຫຍ່ສູງ ສີຫຼູຽມຈົດຫາຍໃຈຫອບປານໝາຮ້ອນແດດ ຂໍກິນນ້ຳແລ້ວເວົ້າຢ່າງຂາດເຄິ່ງຂາດຕອນວ່າ:

ໂອຍ! ກະດູກສັນຫຼັງຄອນໝົດທຸກຂໍ້, ຕັ້ງຕົວບໍ່ໄດ້

ພວກມັນມີຫຼາຍແທ້ຫວະ?

ໂອຍ! ໂອຍ, ບໍ່ຫຼາຍດອກ

ຈັກຄົນ?

ຜູ້.......ຜູ້ດຽວ!

ຜູ້ດຽວຫວະ? ຮວາຍ!

ອີ່ທ້າຍລ່າມເນັ້ນຄຳວ່າຮວາຍ! ດ້ວຍຄວາມຕື່ນເຕັ້ນເພາະມັນຄິດວ່າໃຕ້ຟ້າວຽງຈັນນີ້ ຈະມີໃຜຫານຊົນກັບເຫຼົ່າ ຫ້ອມລຸກແຫຼ່ງຊັ້ນຈຳຂອງພວກມັນໄດ້. ໜໍສິງຄິດຢູ່ຄາວໜຶ່ງແລ້ວເວົ້າວ່າ:

ພວກເຮົາຈະເຮັດແນວໃດຫໍ, ນ້ອງທີ່ຮັກ?

ເອົາເທົ່າຫ້ອມເມືອກ່ອນຈຶ່ງພິຈາລະນາກັນໃໝ່ ພໍ່ເມືອຮອດເຮືອນ ພວກມັນກໍພາກັນ ບີບຄັ້ນໜໍເທົ່າຫ້ອມເປັນ ການໃຫຍ່ ໜໍສິງນັ່ງຢູ່ກ້ຳຊ້າຍອີ່ທ້າຍລາມນັ່ງຢູ່ກ້ຳຂວາຕິດຕາມພວກລູກນ້ອງຂອງມັນ ບີບຄັ້ນເອົາໜໍເທົ່າຫ້ອມດ້ວຍ ຄວາມເອົາໃຈໃສ່ ຕໍ່ມາພໍເທົ່າຫ້ອມລຸກນັ່ງໄດ້ແລ້ວເລົ່າເຫດການທີ່ເກີດຂຶ້ນວ່າ:

ນ້ອງລັດເລາະຫາບັກເນດ ຢູ່ທີ່ຄຸ້ມບ້ານມັນນັ້ນລະ, ເລີຍມີຕຳຫຼວດ “ອ້າຍນ້ອງ” ຜູ້ໜຶ່ງຂີ່ລົດໂມໂຕສວນທາງ ມາ. ນ້ອງກໍປ່ອຍໃຫ້ມັນກາຍໄປ ແຕ່ມັນກາຍໄປໄດ້ໄລຍະໜຶ່ງ ມັນເລີຍລ້ຽວລັດກັບມາໄລຕິດຕາມນ້ອງອີກ. ນ້ອງເລັ່ງ ລົດໃຫ້ໄວຄິດວ່າທາງຍາກ ມັນອາດບໍ່ກຳໄປໄວຄືນ້ອງໄດ້ດອກ ແຕ່ມັນກໍຍັງໄລ່ທັນນ້ອງປັບໆ ຮວາຍ! ບັກນີ້ເອົາມັນໄປ ເຊື່ອງສາເປັນຫຍັງ? ນ້ອງຄິດແນວນັ້ນແລ້ວນ້ອງກໍປິ້ນລົດກັບຄືນຫຼັງແບບເກົ້າສິບອົງສາ ມົງຕ້ອງຫງາຍໜ້າ ນ້ອງອ້ຕີນ ຂຶ້ນວ່າຈະທຳໜ້າເອິກມັນໃຫ້ສົມນ້ຳໜ້າແຕ່ມັນ ພັດຖືກມັນເອົາຕີນສິດຂຶ້ນຈົນນ້ອງເສຍທາຫງາຍໜ້າລົງຈາກລົດ ພຸດ ໂທ! ມັນເຮັດແທ້ໃດນີ້! ນ້ອງຖອດມີດເປັງໃສ່ມັນວ່າຈະຊວະທ້ອງມັນໃຫ້ສົມແຄ້ນ ແຕ່ກຳປັ້ນມັນຍັດໃສ່ຂະໜັບຂອງນ້ອງ ຈົນແມງຫິ່ງຫ້ອຍແຕກຂ່າວຮວາຍ! ເອົາມັນໄວ້ເຮັດຫຍັງ? ນ້ອງກັດແຂ້ວແກ່ວງມີດໃສ່ຕາບເອິກຂອງມັນແຮງປາ ນ້ຳແບບຄືວ່ານັ້ນລະ! ມື້ນີ້ໄດ້ແກ່ວງມີດໃກ້ບໍ່ໄກປະມານສອງສາມກ້າວບອກວ່າເສັດໂລດລະ ແຕ່ຈັກເປັນແນວໃດຫຼືວ່າມັນມີພິດສະຫຼີກບໍ່? ມັນຈຶ່ງໂດດມາຊັດນ້ອງຈົນນ້ອງໝູບອາບຝາບ ນ້ອງພວມຄວາໃສ່ປືນແຕ່ບໍ່ທັນມັນຈັບຕົວນ້ອງ ຍົກຂຶ້ນຖ້ວມຫົວໂຍນແດກໃສ່ຫຼັກປ້າຍແຄມທາງ ນ້ອງສະຫຼົບໄປຢູ່ຄຶ່ງນີ້ງ ຕີງບໍ່ໄດ້ພໍຂະຫຍັບ.

ໜໍສິ່ງຜຸດລຸກຈາກບ່ອນນັ່ງ ດ້ວຍຄວາມຮ້າຍ, ອວາຍໜ້າໄປຫາລູກນ້ອງທີ່ຢືນຊົບລົບຢູ່ແລ້ວເວົ້າວ່າ:

ໃຜຊິໄປລ້າງແຄ້ນນຳກຸ. ເອົາແຕ່ຜູ້ໜຶ່ງ. ມີໜໍໜຶ່ງຕ່ຳຕຸກປຸກ ກາກະທຳເຕັ້ນອອກຈາກໝູ່ພ້ອມທັງເວົ້າວ່າ:

ນ້ອງຂໍຂັນອາສາ

ໜໍສິງອວາຍໜ້າໄປຫາອີ່ທ້າຍລ່າມ ເພື່ອຖາມຄວາມເຫັນອີ່ທ້າຍລ່າມຍິ້ມພ້ອມທັງລຸກຂຶ້ນດ້ວຍທ່າທີອ່ອງແຫ່ງຄື ເຮືອແຊມ ມັນເຮັດສັນຍານໃຫ້ທຸກຄົນພັກຜ່ອນແລ້ວເວົ້າວ່າ:

ຫ້ອມໄປພັກຜ່ອນ. ການລ້າງແຄ້ນປະໃຫ້ເຮົາ! ອີ່ທ້າຍລ່າມຊີ້ມືໃສ່ນຳເອິກຂອງຕົນດ້ວຍທ່າທີໜັກແໜ້ນແລ້ວຟ້າວຢ່າງ ເຂົ້າໄປໃນຫ້ອງສ່ວນຕົວຂອງມັນໂດຍທັນທີ ໜໍສິງຍ່າງເຂົ້າໄປນຳແຕ່ບໍ່ເວົ້າຫຍັງຢືນເບິ່ງອີ່ທ້າຍລ່າມແຕ່ງຕົວຢ່າງງຽບໆ. ອີ່ທ້າຍລາມ ນຸ່ງສົ້ນສຳເລັດສີຕັບໝູສວມເສື້ອຄໍເປີດສົມອນໄຂ່ແຂນສັ້ນ. ກ້າວມາຈູບແກ້ວໜໍສິງເບົາໆ ບໍ່ເວົ້າຫຍັງຫຼາຍ ຄວາມ ອີ່ທ້າຍລາມໄຂປະຕູອອກຫ້ອງໄປ ແຕ່ຍັງອວາຍໜ້າມາຍິ້ມຫວານໆຕື່ມອີກນ້ອຍໜຶ່ງແລ້ວປະຕູອັດກັບ. ໜໍສິງຈຳ ຕ້ອງຖິ້ມຕົວລົງຕຽງນອນກັດແຂ້ວອົດກັ້ນຕໍ່ຄວາມຫຶງຫວງຂອງມັນ.

ອີ່ທ້າຍລ່າມຂີ່ລົດໂຕໂຍຕາສີເຫຼືອງອ່ອນ ເບັດໜ້າໄປຫາອີງການຍຸຍເສັດ ລ້ຽວຜ່ານໂຮງບາລັບແຫ່ງໜຶ່ງ ເຊິ່ງເປັນໂຮງບາ ສະເພາະລູກເມຍເຈົ້າໃຫຍ່ນາຍໂຕ ໃນເມືອງຫຼວງວຽງຈັນ ແວ່ໄປຕາມເສັ້ນກ້ຳຊ້າຍ ເຂົ້າໄປຫາເຮືອນວິລາ ຫຼັງໜຶ່ງ ເຊິ່ງມີດອກໄຟພໍເປັນສີອຸ່ມທຸ່ມ. ອີທ້າຍລາມລົງຈາກລົດຍ່າງອອກມາຫາປະຕູຮົ້ວ ສັງເກດເບິ່ງວ່າມີໃຜຕິດຕາມ ມາຫຼືບໍ່? ເມື່ອບໍ່ເຫັນໃຜມັນຈຶ່ງກ້າວເຂົ້າໃນເຮືອນ.

ອີ່ທ້າຍລາມເຂົ້າໄປໃນຫ້ອງກ້ຳຂວາທີ່ມີແສງໄຟສີອິດເຄິ່ງກາງຫ້ອງມີຕຽງນອນ ເຊິ່ງມີຊາຍຄົນໜຶ່ງຜິມຄືໜອຍ ໜາກສາລິຕາລວກດັງໂມນອນຖ້າຢູ່ແລ້ວມັນແມ່ນໃຜ? ຂໍໃຫ້ທ່ານນັກອ່ານຈົ່ງຢ່າຟ້າວຮ້ອນໃຈ, ຫາກຈະຮູ້ຊື່ມັນດອກ. ພໍຫຼຽວເຫັນອີ່ທ້າຍລາມເຂົ້າມາມັນລຸກຂຶ້ນທັນທີແສງຕາຂອງມັນລຸກຂຶ້ນ ຄືຕາໝາໄນຫຼຽວເຫັນກະຕ່າຍນ້ອຍ. ມັນ ຊວາງມືໄປຫາອີ່ທ້າຍລາມຄືຊິກັດກິນເອົາແທ້ເອົາວ່າ. ອີ່ທ້າຍລາມກໍກ້າວໄປຫາມັນດ້ວຍສີໜ້າຍິ້ມແຍ້ມພ້ອມທັງເດມືໄປ ດຶງເອົາຜ້າກັ້ງມາບັງ. ປະມານ 5 ນາທີມີສຽງປາກພໍເປັນອຸ່ມໆດັງລອດຜ້າກັ້ງອອກມາດ້ວຍພາສາອາເມລິກາວ່າ:

ອ້າຍ! ເຫົ່າຫ້ອມຖືກຕີຈິນຢູ່ຄັ້ງນຶ້ງ

ໃຜຕີມັນ

- ແມ່ນພັກພວກຂອງໜໍເນດ, ເອີ! ຈັດການກັບໜໍນາກແລ້ວຫວະ? ປ່ອຍພວກນີ້ໄວ້ດົນບໍ່ໄດ້ມັນຈະເສຍຄວາມ ລັບຂອງພວກເຮົາໄດອ້າຍ

ເລື່ອງນັ້ນນ້ອງບໍ່ຕ້ອງສົນໃຈ ອ້າຍໄດ້ບອກໄປຫາສາຂາຂອງພວກເຮົາຢູ່ໜອງຄາຍໃຫ້ຈັບໜໍນາກຕັ້ງແຕ່ນ້ອງໂທມາບອກພຸ້ນແລ້ວດຽວນີ້ທຸກສິ່ງທຸກຢ່າງຮຽບຮ້ອຍໝົດແລ້ວນ້ອງຈົ່ງເຊື່ອໝັ້ນ

ນ້ອງຢາກໄດ້ເງິນຕື່ມ

ຫຼາຍທໍ່ໃດ?

ສອງລ້ານ

ໄດ້! ນ້ອງຈະເອົາດຽວນີ້ໂລດຫວະ.......ຄືນນີ້ຢູ່ນຳອ້າຍໄດ້ຕິ?

ອ້າຍຕ້ອງສົ່ງຄົນໄປຂ້າໜໍເນດໃຫ້ນ້ອງ!

ໂອ! ເລື່ອງນັ້ນບໍ່ຍາກ ແມ່ນຫຍັງເກາະ? ບໍ່ໃຫ້ກາຍ 12 ໂມງ.........ນ້ອງຕ້ອງຄືນໄປຫາມິດສະເຕີສົງ!

ໂອເຄ! ( ຈົບ )

# ບົດອ່ານເພີ່ມ
# ບົດເລື່ອງ "ເສັ້ນທາງແຫ່ງຊີວິດ"
# ເຫຼັ້ມທີ I
# (ຄັດຕອນ)
# ເພຍຕົງ




*ແຕ່ງໂດຍ: ຈັນທີ ເດືອນສະຫວັນ*

ພໍຢາງເຂົ້າໄປຮອດແຄມບ້ານ, ທັງໃດນັ້ນໝາສິບກວ່າໂຕ ໄດ້ຫຼັ່ງໄຫຼກັນມາຈາກເຮືອນໃຫຍ່ຫຼັງໜຶ່ງ, ພວກມັນໄດ້ຫຸ້ມມາໃສ່ ສອງແມ່ລູກພວກຂ້ອຍຢ່າງກະທັນຫັນ, ແມ່ຟ້າວດຶງແຂນຂ້ອຍຖືກໄປທາງຂ້າງຫຼັງ, ແຕ່ບໍ່ທັນແລ້ວ, ເວລານັ້ນ ມີໝາໂຕໜຶ່ງບັກໃຫຍ່ໆ ກະໂດດເຂົ້າມາຫວັງ ຈະສວບຂະນ່ອງຂອງແມ່. ສ່ວນໂຕອື່ນທັງເກົ່າທັງເຕັ້ນເຂົ້າ ອອກ ຢ່າງປ່ວງບ້າ, ທັນໃດແມ່ຄວາເອົາໄມ້ທ່ອນໜຶ່ງຟາດ ໃສ່ໝາດຳໂຕນັ້ນໝົດແຮງ ເຮັດໃຫ້ມັນຮ້ອງໄຫຼ ແລະ ປັບຕາຍໄປທັບໃດບໍ່ຈັກ. ສ່ວນໝາໂຕອື່ນໆກໍແຕກຕື່ນໄປ ທົ່ງທົບ. ໃນຂະນະທີ່ພວກຂ້ອຍ ຍັງຢືນຢູ່ເກິງ ເຂີນໆ ຢູ່ຫັນ ກໍເຫັນຄົນຈຳນວນໜຶ່ງຍ່າງອອກມາຈາກເຮືອນແປ້ນຫຼັງ ໃຫຍ່, ຄົນເຫຼົ່ານັ້ນສ່ວນຫຼາຍນຸ່ງສົ້ງເສື້ອສີດຳ, ສົ້ງຂາໃຫຍ່, ເສື້ອແຂນຕົບ, ນອກຈາກນັ້ນ ກໍ່ມີພວກແມ່ຍິງ ທີ່ຫົ່ມແພ ສີດຳ, ແຕ່ມີອັນຕ່າງຢູ່ບ່ອນວ່າແອວຂອງເຂົາເຈົ້າມີແພສີແດງ, ສີມຸ່ຍຄຽນອ້ອມ, ມີຜ້າກະຕ່ຽວຍາວເກືອບເທົ່າດຽວກັບ ສິ່ງປົກທາງໜ້າທາງຫຼັງ, ຢູ່ເທິງຫົວມີແພສີດຳຄຽນອ້ອມ ແລະ ທັງມີແພລາຍສາຍໜຶ່ງຄຽນປະດັບຢູ່ທາງນອກ. ນອກຈາກນັ້ນຍັງມີປອກຄໍເງິນແຂວນຊາມຊະຕາມລຳຄໍ, ແຕ່ໜ້າແປກປະຫຼາດລະແມ່ນໄດ້ມີສຽງຮ້ອງໄຫ້ສຽງຕີກອງ ແລະ ເປົ່າແຄນດັງອຶກກະທຶກຢູ່ໃນເຮືອນມຸງແປ້ນຫຼັງນັ້ນຢູ່ໃນກຸ່ມຄົນທີ່ພວມສົ່ງສາຍຕາມາເບິ່ງພວກຂ້ອຍນັ້ນ ມີຕາເຖົ້າ ຜອມຈ່ອຍຜູ້ໜຶ່ງ, ມືເບື້ອງໜຶ່ງຂອງມັນພວມກຳ ກອກ " ກຸລູ " (ແປວ່າ:ກອກສູບຢາຝິ່ນ) ອັນໜຶ່ງໃຫຍ່ສໍໝາກຄາຍ ໃຫຍ່, ຄືຊິແມ່ນມັນຫາກໍ່ອອກມາແຕ່ພານຕົນຢາຝິ່ນ. ຕາເຖົ້າເບິ່ງພວກຂ້ອຍແບບໜຶ່ງແລ້ວເວົ້າ ເປັນພາສາຂອງມັນວ່າ:

ອໍເນຍຕູບລໍ ໃດ້ຍໍຄໍຕື້ຕົວມຸຣຸລຫໍ່ໃດ້ນໍ (ແປວ່າ: ສອງແມ່ລູກຄົນລາວຫັນມາແຕ່ໃສ ເອີ້ນມາດູ)

ເຂົາໄດ້ເອົາສອງແມ່ລູກພວກຂ້ອຍເຂົ້າໄປຢູ່ເຮືອນໃຫຍ່ຫຼັງນັ້ນ. ເວລາຍ່າງຜ່ານເຮືອນຫຼັງໃຫຍ່, ຂ້ອຍຮູ້ສຶກວ່າ ມີກິ່ນເຫັນຄືກິ່ນງູເນົ່າ. ຂ້ອຍເຫຼືອບແສງຕາເຂົ້າໄປໃນເຮືອນໃຫຍ່ເຫັນມີຜູ້ຄົນນຸ່ງເຄື່ອງສີສັນຕ່າງກັນພວມຫຸ້ມຫໍ່ຊາກ ສົບຄົນຕາຍຜູ້ໜຶ່ງ ທີ່ແຂວນນອນທາງຂວາງຢູ່ເມິງຝາພະນັ່ງດ້ານເໜືອ, ເຂົາເຈົ້າຕ່າງກໍ່ສົ່ງສຽງຮ້ອງໄຫ້ອັນເປັນສຽງເຍືອງ ແລະ ສະທ້ອນໃຈຄົນ, ຄົນຕາຍນຸ່ງເຄື່ອງຊຸດສີດຳໃໝ່ໆ, ແອວຄຽນແພແດງ, ແພສື່ວ, ຕີນສວມເກີບຫອນນາກ. ແຕ່ ໃບໜ້າຂອງຜູ້ຕາຍດຳແຫຼ້ຈົນບໍ່ເປັນຮູບໜ້າຄົນອີກ. ຢູ່ຂ້າງຄົນຕາຍບ່ອນມີເສົາເຮືອນ ມີກອງໜ່ວຍໜຶ່ງແຂວນໂດຍ ແມ່ນຊາຍໜຸ່ມຜູ້ໜຶ່ງ ພວມໃຊ້ຄ້ອນສອງອັນຕີເປັນເປັນຈັງຫວະກັບ ຜູ້ເປົ່າແຄນຢູ່ທາງຂ້າງ.

ພວກຂ້ອຍເຂົ້າໄປຊິ້ນຢູ່ຕູບນ້ອຍຫຼັງໜຶ່ງ ທີ່ແປະກັບເຮືອນໃຫຍ່ບໍ່ພໍສາມສີ່ກ້າວ. ທີ່ຈິງແລ້ວຕູບນ້ອຍຫຼັງນີ້ແມ່ນບ່ອນບັນຈຸຫຍ້າມ້າຂອງເຈົ້າຂອງເຮືອນ, ເມື່ອເບິ່ງທົ່ວຫ້ອງແລ້ວ ບໍ່ມີຫຍັງຈະສະແດງວ່າມີຄວາມສະອາດສະອ້າງພໍ ເມັດ, ບໍ່ຈັກວ່າຂີ້ໝູ ແລະ ຂີ້ເຫຍື້ອ ສິກກະປິກອື່ນໆ. ສາດປູນອນທີ່ເຂົາໃຫ້ທານພວກຂ້ອຍນັ້ນ ແມ່ນໜັງງົວແຫ້ງແຜ່ນ ໜຶ່ງຍາວ ວາປາຍ ແຕ່ຊ້ຳຖືກໝູແຫ້ນໝົດໄປແຈໜຶ່ງ.

ຄາບເຂົ້າ ຄ່ຳຂອງມື້ນັ້ນ ເຂົາຕ້ອນຮັບພວກຂ້ອຍດ້ວຍສາລີຜິງກະໂປະ ເຊິ່ງເວລາກິນຕ້ອງຈານໃສ່ນ້ຳ ແລະເອົາ ປວງຊິດກິນ. ນາງເຈຍ ເມຍນ້ອຍຜູ້ທີ່ສີ່ຂອງເພຍຕົງ ເປັນຜູ້ມາສົ່ງເຂົ້າ ແລະ ນ້ຳໃຫ້ພວກຂ້ອຍ.

ຜູ້ຕາຍນັ້ນ ແມ່ນໃຜນໍ ? ແມ່ຂ້ອຍຖາມນາງເຈຍ

ນາງຕອບ:

ໂອ ເມຍນ້ອຍຜູ້ທີສາມຂອງຍາເພຍຕົງລະບໍ່ ເພິ່ນຫາກໍຕາຍໄດ້ສິບປາຍມື້, ບາງທີທ່ຽງມື້ອື່ນຈະໄປສົ່ງສະການ.

ເພິ່ນເຈັບຫຍັງນໍ ?

ເພິ່ນຂ້າຕົນເອງດ້ວຍກິນຢາຝິ່ນ. ກ່ອນມື້ຈະຕາຍນັ້ນ ນາງໄດ້ຜິດຖຽງກັບຍາເພຍ ແລະ ຖືກຍາເພຍທຸບຕີຈົນຄີງຊໍ້າໝົດ... ເວົ້າຮອດຕອນນັ້ນ ນາງກໍ່ຟ້າວຢາງອອກ ເພາະມີສຽງເອີ້ນນາງຢູ່ຂ້າງນອກ.

ຊີວິດຂອງສອງແມ່ລູກພວກຂ້ອຍ ໄດ້ເລີ່ມຕົ້ນຈາກບ່ອນນີ້ແຫຼະເປັນຊີວິດໃນຖານະເປັນຂ້ອຍຮັບໃຊ້ຂອງເຂົາ. ຄົນຜູ້ທີ່ຈົ່ງຜົມຈອຍ ຢູ່ເທິງຈອມຂວັນນັ້ນ ແມ່ນປະມຸກຂອງເຮືອນຫຼັງໃຫຍ່, ມັນຊື່ຍາເພຍຕົງ ເພຍຕົງເປັນຄົນຈ່ອຍສູງ, ເຖິງວ່າການກິນຢູ່ຂອງມັນຈະໝຸກສະໝານພຽງໃດກໍບໍ່ອາດເຮັດໃຫ້ໃບໜ້າທີ່ຫລ່າເຫຼືອງຂອງມັນມີສີ ມີຊີງນໍາເຂົາໄດ້, ຕາທັງສອງເບື້ອງເວລາໃດກໍໃຫ້ເປັບຕູບຢູ່ຕູບຍຸບ. ຈຸດພິເສດຂອງມັນອີກອັນໜຶ່ງແມ່ນ ບໍ່ວ່າຍາມກິນເຂົ້າຍາມເຮັດວຽກ ຫຼື ຍາມລົມກັບແຂກຄົນ, ຕາຂອງມັນຫຼັບເສືອບປານດຽວກັບຕາໄກ່ເປັນຮ່າ, ນັ້ນກໍຍ້ອນລິດຂອງຢາຝິ່ນຫັ້ນແລ້ວ. ເກີມ ເປັນມື້ມາ, ພວກລູກຈ້າງຊັ້ນຈໍາຂອງມັນຕ້ອງເປັນປ່ວງ ເປັນເມົານໍາການຕີຢາຝິ່ນໃຫ້ມັນສູບ, ສູບແລ້ວສູບອີກຢູ່ພໍປານ ນັ້ນ, ປາກົດວ່າຢູ່ໃນສ້ວມຂອງເພຍຕົງເວລາໃດກໍອິບເອົ້າແຕ່ຄວັນຢາ, ອາດຈະເວົ້າໄດ້ວ່າມັນພັກສູບຢາແຕ່ເວລາກິນເຂົ້າ ແລະ ມີວຽກອັນໃດອັນໜຶ່ງທີ່ຈໍາເປັນ ມີບາງຄັ້ງ ການກິນເຂົ້າກໍຕ້ອງຫາເປັນພານມາວາງໄວໃຫ້ຢູ່ກັບບ່ອນສູບຢາ, ເມື່ອ ສຸບແລ້ວ ກອກໃດກໍເດ່ມືທີ່ເຕັມແຕ່ຂີ້ຢາໄປຈົກຂາໄກ່ມາຍັດໃສ່ປາກໃນທ່ານອນສະແຄງ. ຜູ້ເປັນເພື່ອທຽມຂ້າງ ຂອງ ມັນທຸກເຊົ້າຄໍ່າວັນຄືນແມ່ນອີ່ນາຍເລົາຊົ່ວ ເຊິ່ງແມ່ນເມຍຫຼວງຂອງເພຍຕົງ ອີ່ນາຍເຖົ້ານີ້ ມີອາຍຸ 40 ກວ່າປີ, ແຕ່ເວົ້າ ເລື່ອງສູບຢາຝິ່ນກໍບໍ່ແມ່ນຫຼູດລິ່ນຜົວມັນ.

ຜົວໄດ້ສາມກອກ, ມັນກໍ່ຕ້ອງໃຫ້ໄດ້ສອງກອກ. ເລົ່າຊົ່ວ ນອກຈາກສູບຢາ ແຂ່ງກັບຜົວແລ້ວ, ມັນຍັງເປັນເອກໃນການປາກດັງນາບຂູ່ຜູ້ຄົນເກັ່ງ, ຈົນເຮັດໃຫ້ພວກຄົນໃຊ້ ແລະ ພວກເມຍນ້ອຍຕ້ອງຢ້ານມັນ ຄືຢ້ານຜີປອບ.

ຕາມນາງເຈຍເລົ່າໃຫ້ຮູ້, ກ່ອນເພຍຕົງຈະເຂົ້າໃຈຜິດກັບເມຍກາງກໍຍ້ອນການຍຸແຍ້ຂອງອີນາຍເລົາຊົ່ວ. ຫວ່າງບໍ່ເທິງນີ້, ເລົ່າຊົ່ວພັດເກີດລຸກໃໝ່ອີກແຮງເຮັດໃຫ້ ໝົດທຸກຄົນຕ້ອງເປັນທຸກນໍາແຕ່ມັນຜູ້ດຽວ, ເກີດເປັນມື້ມາໄດ້ ຍິນ ແຕ່ສຽງປ້ອຍດ່າຂອງມັນປານກັບນໍ້າຕົກຕາດ.

ຊື່ສຽງຂອງເພຍຕົງສາມາດເຮັດໃຫ້ປະຊາຊົນເຜົ່າມົ້ງແຖບນັ້ນຢ້ານກົວ ແລະ ຖືມັນຄືເຈົ້າຟ້າ, ສະນັ້ນ ເມື່ອມີເຫດການຮ້າຍອັນໃດ ອັນໜຶ່ງເກີດຂຶ້ນເຊັ່ນວ່າ ຟ້າລົມຝົນຕົກແຮງ, ມີຄົນລົ້ມຄົນເຈັບ ຫຼື ບ້ານໃດຢາກບະຜີບ້ານ ຜີເມືອງແມ່ນຕ້ອງມາເຊື້ອເຊີນເພຍຕົງໄປເຢົາ ໄປເປັນ ເພື່ອແກ້ລາງຮ້າຍດັ່ງກ່າວ ເພາະຊາວບ້ານ ຊາວເມືອງໃຜໆ ກໍເຊື່ອຖື ວ່າຍາຫຼວງເພຍຕົງ ເປັນຄົນເຂັດຄົນຢ່າ ມີລິດ ມີເດດທາງດ້ານ ວິຊາຜາບຜີ ທຸກເທື່ອທີ່ກັບມາແຕ່ໄປເຢົາ, ຕ້ອງເຮັດໃຫ້ ພວກຄົນໃຊ້ຂອງມັນໜັກໜ່ວງ ຍ້ອນການເປ້ຫົວໝູ, ຂາໝູ, ຢາຝິ່ນ ແລະ ເງິນຂັນມານໍາເປັນຈໍານວນຫຼວງຫຼາຍ. ແຕ່ ໃນຕົວຈິງແລ້ວ, ໃນໄລຍະທີ່ຜ່ານມາກໍມີຄົນເຈັບປ່ວຍເປັນຈໍານວນຫຼວງຫຼາຍທີ່ໄດ້ຮັບເພຍຕົງໄປເຢົາແກ້ແຕ່ສຸດທ້າຍກໍ ຕາຍຄືກັນ ຄົນຕາຍ ແລ້ວຍັງບໍ່ພໍ, ຊໍ້າພັດເຮັດໃຫ້ເຂົາເຈົ້າຕ້ອງທຸກຍາກ, ຍ້ອນວ່າໄດ້ເສຍງົວຄວາຍ, ແບ້, ໝູ ບໍ່ຈັກວ່າ ເທົ່າໃດໂຕແລ້ວ.

ເທິງຮ້ານລ້ຽງຜີຂອງເພຍຕົງ ນອກຈາກປະດັບເອ້ໄປດ້ວຍເຈ້ຍເງິນເຈ້ຍຄໍາ, ເຂົາແບ້ 4 ຄູ່ແລ້ວ, ຍັງມີຮອດກະດູກຄາງໝູທີ່ຫ້ອຍຊາມຊະຄືພວງມະໄລ. ນັ້ນແມ່ນການສະແດງຜົນງານຂອງການໄປເສັນໃນປີໜຶ່ງ ມີຈັກເທື່ອເສັນ,

ຖ້າໃຜຢາກຮູ້ແມ່ນນັບຄາງໝູແມ່ນຈະຮູ້ເອົາເອງ. ມີມື້ໜຶ່ງເວລາເຂົ້າໄປປັກທູບໃສ່ຮ້ານຜີ, ຂ້ອຍກໍ່ເລີຍສວຍໂອກາດນັບ ເບິ່ງ, ມີຄາງໝູ ທັງໝົດ 37 ຄາງ, ນັ້ນແມ່ນສະເພາະແຕ່ ສາມເດືອນ ຕົ້ນປີຂອງປີນັ້ນ. ມີບາງຄືນພວກຂ້ອຍບໍ່ໄດ້ຫຼັບ ໄດ້ນອນ, ເພາະໃນສອງສາມມື້ໃດ ເພຍຕົງຕ້ອງເຢົາບະຜີເທື່ອໜຶ່ງ, ກ່ອນຈະເຢົາເທື່ອໃດມັນຕ້ອງໄດ້ທຸບປັກໃສ່ຮ້ານຜີ ແລະ ເອົາໝາກກະດິງເກາະໃສ່ນີ້ວມືທັງສອງ ແລ້ວກໍ່ນັ່ງລົງຕັ່ງມ້າ. ຈາກນັ້ນ, ບໍ່ເທິງເທົ່າໃດສຽງໝາກກະດິງກໍ່ດັ່ງ ຂຶ້ນຄອງໆ, ແຮ່ງເທິງເທົ່າໃດ ສຽງເຕັ້ນກໍຍິ່ງແຮງຂຶ້ນ. ບາດນັ້ນ ຈຶ່ງໄດ້ຍິນສຽງໜໍເຢົາຈົ່ມໆຂຶ້ນໄປຕາມຈັ່ງຫວະມ້າ ແລ່ນ, ນານໆກໍມີສຽງຮ້ອງກະແທກຂຶ້ນໝົດແຮງ. ຕາມໄທເຮືອນເຄີຍເວົ້າສູ່ຟັງວ່າ ນັ້ນແມ່ນທ່ານເພຍຕົງພວມສູ້ຮົບກັບ ພະຍາຜີປ່າວ່າສັ້ນ.

ເມື່ອມີຄະດີຜິດຂ້ອງຕ້ອງຖຽງ ຫຼື ກ່າວຟ້ອງເຊິ່ງກັນ ແລະ ກັນ ລະຫວ່າງບ້ານຕໍ່ບ້ານ, ຄອບຄົວຕໍ່ຄອບຄົວແລ້ວ , ບ່ອນຕັດສິນສຸດທ້າຍກໍ່ແມ່ນນໍາຂຶ້ນໄປຫາພະຍາເພຍຕົງເປັນຜູ້ຕັດສິນ, ເວົ້າແທ້ສານຂອງເພຍຕົງກໍ່ບໍ່ມີຫຍັງຈະຫຍຸ້ງຍາກສັບສົນ, ທະແນມແຕ່ຝ່າຍໃດຖອກ ເຫຢາຝິ່ນ ແລະ ເງິນຂັນໃຫ້ມັນແລ້ວ, ແນ່ນອນຝ່ານນັ້ນ ຕ້ອງເປັນຜູ້ຊະນະຮ້ອຍສ່ວນຮ້ອຍ ໂດຍບໍ່ຈໍາເປັນໂຕ້ຖຽງກັນພໍຄໍາຊໍ້າ, ກົງກັນຂ້າມ ສ່ວນຝ່າຍບໍ່ມີເງິນບໍ່ມີຄໍາຍື່ນຖວາຍໃຫ້ມັນແລ້ວ, ເຖິງວ່າຕົນເປັນຝ່າຍຖືກ ແຕ່ກໍຕ້ອງຂ້ຽນຢ່າງໜັກ, ບໍ່ພໍຍັງປັບໄໝເງິນຄໍາທົບເຄິ່ງອີກ, ຖ້າບໍ່ມີເງິນ ຫຼື ຢາຝິ່ນເສຍ ໃຫ້ມັນແລ້ວ ກໍມີຫວັງໄປເປັນຂ້ອຍຖາງໄຮ່ໃຫ້ເພຍຕົງຢ່າງບໍ່ມີກໍານົດເວລາ.

ຄໍາເວົ້າໃນມື້ທໍາອິດຂອງເພຍຕົງ ທີ່ວ່າໃຫ້ສອງແມ່ ລູກພວກຂ້ອຍເຮັດວຽກຊ່ວຍໃນຄອບຄົວຂອງມັນນັ້ນທີ່ແທ້ກໍ ແມ່ນ ເປັນໃຊ້ນັ້ນແຫຼະ, ເຊົ້າມື້ໃດ, ກ່ອນຈະພາຍເປົ້າໃສ່ຫຼັງໄປໄຮ່ແມ່ຕ້ອງລຸກແຕ່ໄກ່ຂັນກົກ ເພື່ອທັນຕັກນໍ້າເຕັມຖັງ, ຊອຍຫຍ້າໝູ ແລະ ດັງໄຟຫຸງຕົ້ມຕ່າງໆເຫຼົ່ານີ້, ວັນໃດກໍຄືກັນ, ພໍໄກເຂົ້າລົກ ກໍ່ເຫັນແມ່ພ້ອມທັງພວກຄົນໃຊ້ ທັງຫຼາຍເປ້ຟືນມາແຕ່ໄຮ່. ສ່ວນຂ້ອຍເອງກໍບໍ່ແມ່ນວ່າໄດ້ຢູ່ລ້າ, ໜ້າທີ່ຕົ້ນຕໍ ທີ່ເຈົ້າຂອງ ເຮືອນມອບໃຫ້ເຮັດນັ້ນຄື: ມື້ ໃດກໍຕ້ອງ ເຂົ້າໄປໃນສ່ວມຂອງເພຍຕົງ ເພື່ອບີບແຄງ ບີບແອວໃຫ້ມັນ, ສ່ວມອັບປີນັ້ນກໍດາຍ, ເຂົ້າໄປເທື່ອໃດຂ້ອຍກໍ ຮູ້ສຶກຫັນໃຈຝືດຍ້ອນຄວັນຢາຝິ່ນອຸດ. ເຊົ້າໃດຂ້ອຍກໍຕ້ອງລຸກແຕ່ເດິກ ເພື່ອທັນຕົ້ມນໍ້າອຸ່ນໃຫ້ສອງຜົວເມຍເພຍຕົງສ່ວຍ ໜ້າ, ມີບາງມື້ ຍ້ອນພວກມັນນານຕື່ນ, ນໍ້າໃນແອງທີ່ບໍ່ໄປໃຫ້ນັ້ນ ກໍ່ເຢັນເຫັນເຊັ່ນນັ້ນພວກມັນກໍ່ຮ້ອງໃຫ້ໄປຕົ້ມ ຄືນໃໝ່ອີກ. ວຽກເບົາກວ່ານັ້ນແມ່ນການກວາດແຜ້ວເຮືອນຊານ, ສ້ວມນອນ, ອັນສໍາຄັນແມ່ນ ຕ້ອງໝັ່ນເຊັດແກ້ວ ຕະກຽງ ແລະ ພານຕີຢາໃຫ້ເພຍຕົງຢູ່ເລື້ອຍໆ. ສ່ວນເພຍຕົງເອງສາມເດືອນໃດຈຶ່ງອາບນໍ້າເທື່ອໜຶ່ງ, ຮ່າງຄີງຂອງມັນ ເຫັນສາບເຫັນຄາວ, ເລັບມືພັດຍາວຄືເລັບຮຸ້ງ ແລະ ດໍາປື້ໆ, ປານນັ້ນ ມັນຍັງບັງຄັບໃຫ້ຄົນອື່ນເຊັດຖູພານຕີຢາ ແລະ ກວາດແຜ້ວເຮືອນຊານໃຫ້ມັນ, ເລື່ອງນີ້ເຮັດໃຫ້ຂ້ອຍເຂົ້າໃຈຍາກຫຼາຍ ແຕ່ວຽກທີ່ຂ້ອຍ ອຶດອັດໃຈກວ່າເພິ່ນໝົດແມ່ນ ເຈຍລູກນ້ອຍໃຫ້ອີ່ນາຍເລົ່າຊົ່ວ.

ມີຄືນໜຶ່ງ, ເດິກດື່ນທ່ຽງຄືນແລ້ວ, ຢູ່ບໍ່ຢູ່ ມີສຽງຮ້ອງໄຫ້ຂອງເດັກນ້ອຍຢູ່ ໃນຫ້ອງຂອງອີ່ນາຍເລົາຊົວ, ບໍ່ພໍຄາວ ຂ້ອຍຕ້ອງຕື່ນຍຸບບາດໜຶ່ງ ເມື່ອໄດ້ຍິນສຽງຮ້ອງອອກມາໝົດແຮງຈົນເຮັດໃຫ້ໝໍທີ່ນອນເຝົ້າຢູ່ປະຕູເຮືອນຫຼັງໃຫຍ່ຕື່ນ ສະເດີດ ແລະ ເຫຼົ່າຂຶ້ນດ ທີ່ແທ້ສຽງຮ້ອງອອກມານັ້ນແມ່ນສຽງຂອງອີ່ນາຍເລົ່າຊົ່ວທີ່ເອີ້ນໃສ່ຂ້ອຍ.

- ບັກແຫຼ້ !

ພໍໄດ້ຍິນສຽງເອີ້ນຂອງມັນ, ຂ້ອຍກໍ່ຮູ້ສຶກຄືວ່າມີເຂັມມາແທງແຕ່ກໍບໍ່ຖ້າໃຫ້ມັນເອີ້ນເປັນເທື່ອທີສອງ, ຂ້ອຍຟ້າວແລ່ນເຂົ້າໄປຫາມັນໂລດ ເພາະບົດຮຽນທີ່ຜ່ານມາ, ຄັນຖືກຊັກໜ້ອຍໜຶ່ງ ຫຼື ຖືກເອີ້ນຊື່ຮອດສອງເທື່ອ ກໍມີຫວັງ ໄດ້ກິນຝາມືຂອງອີ່ນາຍເລົາຊົວຢ່າງບໍ່ຕ້ອງສົງໄສ ພໍເຫັນໜ້າ, ມັນກໍອອກຄໍາສັ່ງຢ່າງບໍ່ເງີຍໜ້າເບິ່ງຂ້ອຍພໍດີ:

ໄປຕົ້ມນໍ້າອຸ່ນໃຫ້ແດ່, ແລ້ວໆ ກັບມາອຸ່ມແອນ້ອຍອາບ...ໄດ້ຍິນບໍ່ ?

ກ່ອນຈະຍ່າງອອກໄປເຮັດໜ້າທີ່, ຂ້ອຍເສືອກຕາໄປເບິ່ງລູກນ້ອຍຂອງເລົ່າຊົ່ວ, ຈັ່ງແມ່ນຊາດ ບັກນ້ອຍອາບເຕັມແຕ່ຂີ້, ຜ້າຫົ່ມ ຜ້າປູກໍເຕັມແຕ່ຂີ້ເຣຍຊະຊາຍ " ຈັ່ງແມ່ນເວນກຸນໍ ", ມື້ເຊົ້າຊິໄດ້ຫອບໄປຊັກໃຫ້ມັນອີກແລ້ວ.

ໄປທະແມ່ ບັກຈໍຕໍ່ (ເສືອຂົບ).

ບໍ່ເຫິງປານໃດ, ທໍ່ນໍ້າອຸ່ນພໍດີໃຫ້ເດັກນ້ອຍອາບ ເມື່ອເອົານໍ້າຖອກໃສ່ແອ່ງແລ້ວຂ້ອຍກໍກັບເຂົ້າໄປອຸ້ມເອົາລູກນ້ອຍຂອງເລົ່າຊົ່ວທີ່ຫາກໍ່ໄດ້ຫົກເດືອນອອກມາ. " ໂອຍຈັ່ງແມ່ນຂີ້ບັກນ້ອຍຕິດຕົນໂຕຂອງຂ້ອຍໝົດ, ເມື່ອອາບນໍ້າ ໃຫ້ແອນ້ອຍແລ້ວໆ ຕົນກໍຕ້ອງງົມມືໄປທ່າອີກ !. ຄິດແລ້ວຂ້ອຍກໍຟ້າວເອົາກົ້ນເດັກນ້ອຍປິງໃສ່ແອ່ງນໍ້າອຸ່ນ, ທັນໃດບັກນ້ອຍກໍ່ຮ້ອງໄຫ້ຂຶ້ນຄືໃຈຊິຂາດ, ຂ້ອຍຕົກໃຈຟ້າວຍົກຂຶ້ນ, ແຕ່ມັນກໍຍັງໄຫ້ບໍ່ເຊົາ. ຊົ່ວພິບຕາດຽວກໍ່ໄດ້ຍິນສຽງບາດຕີນ ຂອງແມ່ມັນຍ່າງມາທາງຫຼັງ ແລະ ກະໂດດເຂົ້າມາຮັບເອົາແອນ້ອຍໄປປິງໄວ້ທາງຂ້າງນັ້ນ. ຂ້ອຍຄິດວ່າເຈົ້າຊົ່ວ ຈະເຮັດ ຫຍັງສັ້ນດອກ, ທັນໃດມັນກົ້ມລົງຍໍແອ່ງນໍ້າຂຶ້ນຖອກໃສ່ຫົວຂ້ອຍພ້ອມທັງຈັບເອົາໄມ້ຄັນຍຸຕີໜ້າຕີຕາ ແລະ ຫົວອີກກະ ຕຶກ. ຄາວນີ້ຕົນໂຕຂອງຂ້ອຍທັງປຽກທັງເຈັບ, ຂ້ອຍເອົາມືທັງສອງເບື້ອງມູບໜ້າໄວແນວໃດກໍບໍ່ຫຼີກຈາກໄມ້ຄັນຍຸ ອັນເປື້ອນເປິະຂອງອີ່ນາຍເລົາຊົ່ວໄດ້. ມັນທັງຕີທັງດ່າ:

ບັກເສືອຫຍໍ້, ມຶງຢາກຂ້າລູກກູຊັ້ນບໍ່ບັກຂີ້ທຸກ ບັກຈໍ ! ເຖິງວ່າຈະເຈັບປວດປານໃດ ແຕ່ຂ້ອຍກໍບໍ່ຮ້ອງໄຫ້, ໄຫ້ກໍບໍ່ມີຜູ້ໃດມາຊ່ວຍ ເພາະແມ່ບໍ່ຢູ່, ເພິ່ນຍັງໄປນອນ ເສຍຫຍ້າໄຮ່ຢູ່ເທິງພູ.

ເວລາກັບມານອນໃນຕູບນ້ອຍຜູ້ດຽວ, ຂ້ອຍຄິດຮອດແມ່ຫຼາຍ ຈົນນໍ້າຕາຊຶມອອກເວລາໃດກໍບໍ່ຮູ້, ຂ້ອຍຄິດຢູ່ ຜູ້ດຽວວ່າ ເປັນຫຍັງບໍເຂົາຈຶ່ງຕີຕົນພິລຶກປານນີ້, ຕົນກໍແມ່ນຄົນຄືເຂົາ, ມີເນື້ອມີໜັງ, ມີໜ້າ, ມີຕາ ແລະ ມີເລືອດຄືເຂົາ ... ແຕ່ດ້ວຍເຫດໃດ ເຂົາຈຶ່ງບໍ່ຄິດເຫັນຄວາມເຈັບປວດຂອງຕົນ, ເປັນຫຍັງແມ່ຈຶ່ງພາມາຢູ່ນີ້ ". ຕໍ່ມາ, ຂ້ອຍໄດ້ນໍາເອົາ ເລື່ອງດັ່ງກ່າວ ເລົ່າໃຫ້ແມ່ຟັງ, ຂ້ອຍທັງເລົ່າ ທັງກົ້ມໜ້າໄຫ້ສະອື້ນຢູ່ໃນຊວງເອິກຂອງເພິ່ນ, ແມ່ບໍ່ປາກບໍ່ເວົ້າຫຍັງມີແຕ່ ເອົາມືທີ່ຫ່ຽວແຫ້ງມາລູບແກ້ມ, ລູບຫົວຂອງຂ້ອຍ ແລະ ນໍ້າຕາຂອງເພິ່ນ ກໍ່ໄຫຼຊຶມອອກມາໄຫຼຜ່ານໃບໜ້າທີ່ໝົ່ນ ໝອງ. ເຫິງເຕິບ ເພິ່ນຈຶ່ງເວົ້າດ້ວຍຄວາມແຄ້ນວ່າ:

ລູກເອີຍໄມ້ແສ້ຢູ່ນໍາມືຂອງເຂົາ, ເຂົາຢາກຂ້າ ຢາກຕີເຮົາເວລາໃດກໍໄດ້... ເພາະເຂົາແມ່ນເຈົ້າຟ້າເຈົ້າແຖນ!

ຈະປະໃຫ້ເຂົາເຕະຕີພວກເຮົາຢູ່ຈັ່ງຊີ້ຕໍ່ໄປຫວະແມ່...ລູກທົນບໍ່ໄດ້ແລ້ວ !

ທັນໃດ ແມ່ມູບໜ້າລົງໃສ່ຫົວຂ້ອຍ ພ້ອມທັງໄຫ້ອີກໆຂຶ້ນ:

ບໍ່, ແມ່ບໍ່ຢາກໃຫ້ເຂົາຕີພວກເຮົາ, ບໍ່ຢາກໃຫ້ເຂົາຕີລູກຂອງແມ່...ແຕ່ຈະເຮັດແນວໃດລູກເອີຍ ! ແມ່ເຊົາໜ້ອຍໜຶ່ງແລ້ວເວົ້າຕໍ່

ຍັງອີກບໍ່ເທິງແມ່ຈະພາລູກກັບຄືນເມືອ ຫາບ້ານເກົ່າຂອງພວດເຮົາ ເວົ້າມາຮອດນີ້ແມ່ເງີຍໜ້າຂຶ້ນ ແລະ ຖອດສາຍຕາໄປທາງທິດຕາເວັນອອກດ້ວຍທ່າທີລະເມີ ແລະ ເວົ້າວ່າ:

ແມ່ໄດ້ຍິນຂ່າວວ່າດຽວນີ້ ຢູ່ບ່ານນາຂອງພວກເຮົາໄດ້ມີພວກອາວທະຫານລາວອິດສະຫຼະ ກັບຄືນມາຢູ່ເຕັມບ້ານ!

- ແມ່ນແທ້ຫວະແມ່ ? ເມື່ອດຽວນີ້ເທາະ, ລູກກັບຄືນເມືອຫາອາວຈັນທາ ແລະ ທະຫານລາວອິດສະຫຼະ ເພື່ອຈະພາເຂົ້າມາຂ່າຄອບຄົວເພຍຕົງ ! ຂ້ອຍເວົ້າບໍ່ທັນສຸດຄວາມແມ່ຟ້າວເອົາມືຊຸ້ມປາກຂ້ອຍ.

ຕາຍ ! ຢ່າເວົ້າແນວນັ້ນ.. ເພິ່ນໄດ້ຍິນແມ່ນຄໍຂາດ ລູກເອີຍ !

# ບົດທີ 4
# ເລື່ອງ "ຜູ້ສືບທອດ"

## 1. ຊີວະປະຫວັດຫຍໍ້ ແລະ ຜົນງານການປະດິດແຕ່ງຂອງ ທ່ານ ບົວແກ້ວ ຈະເລີນລັງສີ

ທ່ານ ບົວແກ້ວ ຈະເລີນລັງສີ ມີນາມປາກກາແມ່ນ ແກ້ວມະນີ ສີວົງໄຊ ຫຼື ແກ້ວຈະເລີນໄຊ, ເກີດເມື່ອວັນທີ 28 ພຶດສະພາ ປີ 1941 ທີ່ ບ້ານຈອມທອງ, ເມືອງຄຳ, ແຂວງຊຽງຂວາງ ໃນຄອບຄົວຊາວຄ້າຂາຍຍ່ອຍ. ພໍ່ຊື່ວ່າ ທ້າວ ອອນ ຈະເລີນລັງສີ ແລະ ແມ່ຊື່ວ່າ ນາງ ລິນ.

ທ່ານ ບົວແກ້ວ ຈະເລີນລັງສີ ເປັນປັນຍາຊົນຜູ້ໜຶ່ງທີ່ມີຄວາມຮັກຊາດ ແລະ ໄດ້ເຂົ້າຮ່ວມເຮັດການປະຕິວັດແຕ່ປີ 1960 ໃນສະໄໝການປະຕິວັດຊາດ ປະຊາທິປະໄຕ. ພາຍຫຼັງສຳເລັດການສຶກສາຂັ້ນມະຫາວິທະຍາໄລຂະແໜງຄົ້ນຄວ້າ ວັນນະຄະດີ ແລະ ອັກສອນສາດຈາກຕ່າງປະເທດແລ້ວ, ທ່ານກໍ່ໄດ້ກັບຄືນປະເທດ ແລະ ໄດ້ຮັບໜ້າທີ່ເປັນບັນນາທິການ ແລະ ເປັນນັກຂຽນຢູ່ສຳນັກພິມຈຳໜ່າຍ "ລາວຮັກຊາດ" ທີ່ຂຶ້ນກັບຄະນະໂຄສະນາອົບຮົມ ແລະ ວັດທະນະທຳ ທີ່ເມືອງ ວຽງໄຊ, ແຂວງ ຫົວພັນ.

ໃນປີ 1973 ເປັນຕົ້ນມາ ທ່ານໄດ້ເປັນອາຈານສອນວິຊາທິດສະດີວັນນະຄະດີ, ເປັນຫົວໜ້າພະແນກວັນນະຄະດີ- ພາສາຣັດເຊຍ ເປັນຮອງອຳນວຍການມະຫາວິທະຍາໄລສ້າງຄູວຽງໄຊຕາມລຳດັບ.

ປີ 1977 ເປັນຫົວໜ້າພະແນກວັນນະຄະດີພາສາຕ່າງປະເທດ, ເປັນຫົວໜ້າຫ້ອງການວິຊາການ ແລະ ເປັນຮອງຜູ້ອຳນວຍການມະຫາວິທະຍາໄລສ້າງຄູວຽງຈັນ.

ປີ 1980 ເປັນຮອງຫົວໜ້າສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.

ປີ 1989 ເປັນເລຂາ ປະຈຳລັດຖະມົນຕີກະຊວງສຶກສາທິການ ແລະ ທັງເປັນຫົວໜ້າຫ້ອງການກະຊວງສຶກສາທິການ.

ປີ 1993 ທ່ານໄດ້ເປັນເລຂາປະຈຳສະພາແຫ່ງຊາດ ທັງເປັນຫົວໜ້າບັນນາທິການວາລະສານ "ຜູ້ແທນປະຊາຊົນ" ຈົນເຖິງປັດຈຸບັນນີ້.

❖ **ຜົນງານການປະດິດແຕ່ງ**

ທ່ານ ບົວແກ້ວ ຈະເລີນລັງສີ ແມ່ນໜຶ່ງໃນຈຳນວນນັກຂຽນຫຼາຍທ່ານໃນສະໄໝເຮັດການປະຕິວັດຊາດປະຊາທິປະໄຕ ທີ່ໄດ້ຫັນປ່ຽນວິທີປະດິດແຕ່ງຈາກບົດບັນທຶກເລື່ອງຈິງຄົນແທ້ໄປສູ່ການປະດິດແຕ່ງເລື່ອງສັ້ນ.

ບົດເລື່ອງຕ່າງໆທີ່ທ່ານໄດ້ແຕ່ງອອກມາໄດ້ເປັນຕົວແທນທີ່ດີ ນັບທັງທາງດ້ານເນື້ອໃນ ແລະ ສິລະປະການແຕ່ງໃຫ້ ແກ່ນັກຂຽນຮຸ່ນໜຸ່ມຕໍ່ໆມາ. ເຊິ່ງປະກອບມີຫຼາຍເລື່ອງທີ່ໂດ່ງດັງເຊັ່ນ ບົດເລື່ອງ "ພາສາແມ່" (1970), ບົດເລື່ອງ "ນ້ອງ ອານຸ" (1973), ບົດເລື່ອງ "ໂຮງຮຽນໃຕ້ສຸມໄມ້ໄຜ່" (1973), ບົດເລື່ອງ "ບົນເສັ້ນທາງປົດປ່ອຍ" (1973), ບົດເລື່ອງ "ຜູ້ສືບທອດ" (1973), ບົດເລື່ອງ "ຄວາມສຸກ" ແລະ ເລື່ອງອື່ນໆ.

ນອກຈາກ, ຜົນງານການປະດິດແຕ່ງເລື່ອງສັ້ນ ແລະ ບົດບັນທຶກແລ້ວ, ທ່ານຍັງເປັນຜູ້ລິເລີ່ມໃນການນຳໃຊ້ທິດ ສະດີວັນນະຄະດີເຂົ້າສູ່ການວິຈານວັນນະຄະດີອີກດ້ວຍເຊັ່ນ ປຶ້ມ " ການປະຕິວັດລາວ ແລະ ວັນນະຄະດີປະຕິວັດ " (1973) ແລະ ປຶ້ມ " ວັນນະຄະດີລາວ " (1987) ເຊິ່ງຂຽນກັບນັກຄົ້ນຄວ້າຫຼາຍທ່ານ.

## 2. ເຄົ້າກຳເນີດ ຫຼື ທີ່ມາຂອງບົດເລື່ອງ "ຜູ້ສືບທອດ"

ບົດເລື່ອງ " ຜູ້ສືບທອດ " ແມ່ນຜົນງານການປະດິດແຕ່ງຂອງທ່ານ ບົວແກ້ວ ບົວແກ້ວຈະເລີນລັງສີ ເປັນເລື່ອງສັ້ນທີ່ ແຕ່ງຂຶ້ນໃນສະໄໝເຮັດການປະຕິວັດຕໍ່ສູ້ກູ້ຊາດຕ້ານການຮຸກຮານຂອງຈັກກະພັດຕ່າງດ້າວ ເຊິ່ງປະດິດແຕ່ງເປັນບົດຮ້ອຍ ແກ້ວ ແລະ ຂະຫຍາຍຕົວໃນໃຈກາງຂອງການປະຕິວັດ ໂດຍໄດ້ອີງໃສ່ເຫດການຕົວຈິງທີ່ເກີດຂຶ້ນໃນທ້ອງຖິ່ນຊຽງຂວາງເພື່ອມາປະດິດແຕ່ງ ໂດຍສະເພາະແມ່ນການຕໍ່ສູ້ເພື່ອປ້ອງກັນການບຸກໂຈມຕີບຽດຍຶດເຂດປົດປ່ອຍຂອງຈັກກະພັດ ອາເມລິກາ ແລະ ລູກແຫຼ່ງຕີນມືຜູ້ຂາຍຊາດຕໍ່ກັບຈອມພູກູດ, ແຕ່ງຂຶ້ນໃນປີ 1973.

### ກ. ເນື້ອໃນລວມ

ບົດເລື່ອງ " ຜູ້ສືບທອດ " ມີເນື້ອໃນລວມເວົ້າເຖິງການພັດພາກຈາກບ້ານເກີດເມືອງນອນ, ຄອບຄົວ, ລູກເມຍ ເພື່ອໄປເຮັດໜ້າທີ່ຕໍ່ສູ້ປົກປັກຮັກສາປະເທດຊາດຕ້ານພວກຈັກກະພັດຕ່າງດ້າວ, ສ່ອງແສງໃຫ້ເຫັນເຖິງໂທດກຳອັນ ໂຫດຮ້າຍປ່າເຖື່ອນຂອງຈັກກະພັດອາເມລິກາ ແລະ ລູກແຫຼ່ງຕີນມືຂອງພວກມັນທີ່ມີຕໍ່ຈອມພູກູດ, ນອກນັ້ນ,

ຍັງຍືກ ໃຫ້ເຫັນເຖິງນ້ຳໃຈພິລະອາດຫານໃນການຕໍ່ສູ້ຂອງນັກຮົບປະຕິວັດລາວ ແລະ ການສືບທອດພາລະກິດແຫ່ງການຕໍ່ສູ້ກູ້ ຊາດຈາກຮຸ່ນບໍ່ສູ່ຮຸ່ນລູກ ເຊິ່ງແມ່ນໜ້າທີ່ຂອງຄົນຮຸ່ນໜຸ່ມທີ່ຕ້ອງໄດ້ສືບທອດພາລະກິດຂອງຄົນຮຸ່ນກ່ອນໃຫ້ສຳເລັດຜົນ.

**ຂ. ການແບ່ງຕອນ**

**ເລື່ອງສັ້ນ ຜູ້ສືບທອດ ແປງອອກເປັນ 3 ຕອນຄື:**

ຕອນທີ 1 ແຕ່ ພວກໂຈນອາເມລິກາ ເຖິງ ຂົງເຂດພູກູດຢ່າງເສຍຂວັນ

ເນື້ອໃນ ເວົ້າເຖິງ ບັນຍາກາດເທິງຈອມພູກູດ

ຕອນທີ 2 ພາຍຫຼັງສັດຕູຖືກໂຈມຕີແຕກສະລາຍ ເຖິງ ບັນດາສະຫາຍຂອງລູກ ແລະ ສະໜາມຮົບກຳລັງລໍຖ້າລູກ

ເນື້ອໃນ ເວົ້າເຖິງ ການພົບປະທີ່ຄາດບໍ່ເຖິງ

ຕອນທີ 3 ຕອນເຊົ້າຂອງມື້ຕໍ່ມາ ...ເຖິງ ເທິງທ້ອງຟ້າສີຄາມທີ່ສົດໃສ ເນື້ອໃນ ການສືບທອດແມ່ນພາລະກິດຂອງຄົນຮຸ່ນໜຸ່ມ.

**ຄ. ວິເຄາະຕົວລະຄອນ**

**❖ ຕົວລະຄອນຝ່າຍສິນທຳ**

**1. ວິເຄາະຕົວລະຄອນ " ບົວໄລ "**

ສະຫາຍ ບົວໄລ ແມ່ນຕົວລະຄອນຝ່າຍສິນທຳ ເປັນຕົວແທນໃຫ້ແກ່ຜົວ, ພໍ່ຂອງໃນສະໄໝນັ້ນ ທີ່ຍອມເສຍ ເສຍສະຫຼະຄວາມສຸກສ່ວນຕົວເພື່ອສ່ວນລວມແລະປະກອບສ່ວນເຂົ້າໃນການຕໍ່ສູ້ປະຕິວັດຊາດປະຊາທິໄຕ ບໍ່ຍອມໃຫ້ ສັດຕູເຂົ້າມາບຽດຍຶດດິນແດນລາວໄດ້, ໃນເບື້ອງຕົ້ນສະຫາຍ ບົວໄລໄດ້ອາໄສຢູ່ດົງບົວລະເວນພ້ອມກັບຄອບຄົວ ລູກ ເມຍ ແຕ່ຍ້ອນການຮຸກຮານຂອງຈັກກະພັດຕ່າງດ້າວທີ່ນັບມື້ນັບຮຸນແຮງຂຶ້ນຊຸກໄສ ເຂົາຈຶ່ງໄດ້ສະໝັກເຂົ້າເປັນທະຫານ ແລະ ຄັ້ງນັ້ນກໍ່ແມ່ນການຈາກຄອບຄົວເພື່ອໄປປະກອບສ່ວນເປັນຮົ້ວປ້ອງກັນຊາດຂອງເຂົາ, ເຂົາໄດ້ຈາກຄອບຄົວໄປ ເປັນເວລາ 14 ປີ, ບົນເສັ້ນທາງແຫ່ງການຕໍ່ສູ້ ສະຫາຍບົວໄລຖືກເຄື່ອນຍ້າຍໄປທາງໜ້າຊຸກໄສ ຄືຈາກຖານທີ່ໝັ້ນເກົ່າ ທ່ານກໍຖືກຍ້າຍມາປະຈຳການທີ່ເມືອງ ນ້ຳບາກ ແລ້ວກໍ່ຖືກຍ້າຍຂຶ້ນມາປະຈຳການຢູ່ເທິງຈອມພູກູດ, ສະຫາຍບົວໄລເປັນ ພໍ່ກອງ (ຫົວໜ້າກອງບັນຊາການ) ທີ່ມີຄວາມສົນໃຈທຸກສຸກຂອງອ້າຍນ້ອງຮ່ວມເສັ້ນທາງດຽວກັນ ແລະ ໄດ້ ໃກ້ຊິດຕິດແທດກັບພວກເຂົາເປັນຢ່າງດີ ສະແດງອອກຢູ່ບ່ອນວ່າ "ບົວໄລກອດເອົານັກຮົບໜຸ່ມນ້ອຍທັງສອງ:

ເຊົາ ຢ່າຖຽງກັນອີກ ອິດສະຫຼະປັດແຂນ ແລະຄິດຈະຍ່າງໜີ ແຕ່ບົວໄລໄດ້ຈັບແຂນອິດສະຫຼະໄວ້" ບົວໄລແມ່ນຄົນ ທີ່ມີແນວຄິດຫຼັກໝັ້ນໃນການຕໍ່ສູ້ຍັນກັບສັດຕູ, ມີນ້ຳໃຈພິລະອາດຫານເດັດດ່ຽວໜຽວແໜ້ນ ແລະເປັນຜູ້ບັນຊາການທີ່ ເກັ່ງກ້າສາມາດ, ບໍ່ຍອມທໍ້ຖອຍຈົນໄດ້ຮັບບາດເຈັບ ເຊິ່ງເຫດການນີ້ໄດ້ເຮັດໃຫ້ເຂົາໄດ້ພົບເຈີກັບຄອບຄົວທີ່ຈາກກັນ ເຖິງ 14 ປີ, ນອກນັ້ນ, ບົວໄລຍັງແມ່ນພໍ່ທີ່ເປັນແບບຢ່າງທີ່ດີຂອງລູກ ເມື່ອສະຫາຍໄດ້ພົບລູກກໍ່ໄດ້ສັ່ງສອນອຸດົມການ, ອຸດົມຄະຕິ ໃຫ້ລູກເດີນຕາມຮອຍຂອງຕົນເອງຄື ສືບຕໍ່ເປັນນັກຮົບປະຕິວັດຕໍ່ສູ້ຕ້ານສັດຕູຜູ້ຮຸກຮານຢ່າໃຫ້ເຂົາເຂົ້າມາ ບຽດຍຶດດິນແດນລາວໄດ້.

**2. ວິເຄາະຕົວລະຄອນ " ອິດສະຫຼະ "**

ອິດສະຫຼະເປັນຕົວລະຄອນຝ່າຍສິນທຳ ເປັນຕົວລະຄອນເອກໃນເລື່ອງ ແລະ ເປັນຕົວແທນຂອງນັກຮົບໜຸ່ມນ້ອຍ, ລູກຜູ້ທີ່ສືບທອດພາລະກິດປົກປັກຮັກສາປະເທດຊາດຈາກພໍ່, ອິດສະຫຼະກຳເນີດຢູ່ດົງບົວລະເວນ ໃນຄອບຄົວສາມັນຊົນ ພໍ່ຊື່ບົວໄລ ແລະ ແມ່ຊື່ສີພອນ ຍ້ອນສະພາບສັງຄົມໃນສະໄໝນັ້ນເກີດມີເສິກສົງຄາມພໍ່ຂອງອິດສະຫຼະຈຶ່ງອອກພັນທະ ເປັນທະຫານ ແລະ ໄດ້ຈາກຄອບຄົວໄປ ອັນເປັນເຫດເຮັດໃຫ້ສອງແມ່ລູກ (ສີພອນ, ອິດສະຫຼະ) ຕ້ອງໄດ້ເດີນທາງຂຶ້ນ ເມື່ອຊຽງຂວາງເພື່ອຕາມຫາພໍ່ແຕ່ບໍ່ກັບບໍ່ໄດ້ພົບດັ່ງຫວັງ ຈາກນັ້ນ, ອິດສະຫຼະໄດ້ເບິ່ງແຍງດູແລຊ່ວຍເຫຼືອແມ່ທຸກຢ່າງ ແລະ ໄດ້ສະໝັກເຂົ້າເປັນະຫານຢູ່ເທິງຈອມພູກູດ, ເຂົາເປັນນັກຮົບໜຸ່ມນ້ອຍຮຸ່ນສືບທອດທີ່ມີກ້າຫານໃນການສູ້ຮົບ, ບໍ່ ຍອມຈຳນົນສັດຕູ, ບໍ່ຍອມປະຖິ້ມເພື່ອນຮ່ວມຮົບຂອງຕົນໄດ້ ແລະ ບໍ່ແມ່ນຄົນທີ່ເອົາຕົວລອດເປັນຍອດດີ ສະແດງອອກ ຢູ່ບ່ອນວ່າ " ເມື່ອສະຫາຍບົວໄລ ແລະ ເພື່ອນຮ່ວມຮົບອີກສອງຄົນໄດ້ຮັບບາດເຈັບ ອິດສະຫຼະກໍ່ໂຈມເອົາສະຫາຍທັງ ສອງຄົນທີ່ໄດ້ຮັບບາດເຈັບລຸກຂຶ້ນນັ່ງ ແລະ ພັນປາກບາດ

ໃຫ້ ເມື່ອສະຫາຍບົວໄລຕັ້ງສະຕິໄດ້ຈຶ່ງບອກໃຫ້ທິດທອງ ແລະ ອິດສະຫຼະຖອຍກັບກ່ອນ ແຕ່ທັງສອງບໍ່ຍອມປະຖິ້ມບົວໄລໄດ້ ອິດສະຫຼະກໍ່ສືບຕໍ່ພັນປາກບາດໃຫ້ນັກຮົບທີ່ບາດເຈັບ" ຜ່ານບັ້ນຮົບການຕໍ່ສູ້ອັນດຸເດືອດຂອງທະຫານປະຕິວັດລາວ ແລະ ອາເມລິກາໄດ້ສະຫງົບລົງກໍມີເຫດການບໍ່ຄາດຝັນເກີດ ຂຶ້ນຄື ອິດສະຫຼະໄດ້ພົບພໍ່ຂອງຕົນທີ່ໂຮງໝໍ ຫຼັງຈາກທີ່ບໍ່ໄດ້ເຈີກັນເປັນເວລາ 14 ປີ ແລະ ພໍ່ຂອງອິດສະຫຼະກໍ່ແມ່ນພໍ່ ກອງທີ່ບັນຊາກອງທັບອິດສະຫຼະສັງກັດຢູ່ ເມື່ອໄດ້ພົບພໍ່ອິດສະຫຼະກໍມີຄວາມອ່ອນນ້ອມທ່ອມຕົນ ແລະ ສິ່ງສຳຄັນທີ່ສຸດ ຄືອິດສະຫຼະໄດ້ປະຕິບັດຕາມອຸດົມການ, ແນວທາງ, ຄຳສັ່ງສອນຂອງພໍ່ຄື ສືບຕໍ່ພາລະກິດເຮັດການປະຕິວັດຊາດຕໍ່ຕ້ານ ສັດຕູທີ່ເຂົ້າມາຣຸນຮານລາວຕາບໃດທີ່ປະເທດຊາດຍັງບໍ່ໄດ້ຮັບເອກະລາດ ນັກຮົບເຮົາກໍຕ້ອງຕໍ່ສູ້ໃຫ້ເຖິງທີ່ສຸດ, ເມື່ອ ຢ້ຽມຢາມພໍ່ແລ້ວ ອິດສະຫຼະກໍ່ຈາກພໍ່ແມ່ເພື່ອກັບຂຶ້ນເມືອຈອມພູກູດເພື່ອເຮັດໜ້າທີ່ສືບຕໍ່ປົກປັກຮັກຊາດປະເທດຊາດ ຕາມອຸດົມການຂອງຜູ້ເປັນພໍ່.

❖ **ຕົວລະຄອນຝ່າຍອະທຳ**

**3. ວິເຄາະຕົວລະຄອນ “ *ທະຫານອາກາດອາເມລິກາ* “**

ທະຫານອາເມລິກາ ຫຼື ໂຈນອາກາດອາເມລິກາ ແມ່ນຕົວລະຄອນອະທຳເປັນຕົວແທນໃຫ້ແກ່ຊົ້ນຊັ້ນທີ່ມີອຳ ນາດສູງ, ມີເງິນຄຳ ແລະ ໃຊ້ເງິນຊື້ຈ້າງຈອບອອຍປະຊາຊົນໃຫ້ເປັນລູກແຫຼ່ງຕີນມືຂອງຕົນ, ພວກມັນໄດ້ສ້າງວິລະກຳ ຢ່າງຫຼວງຫຼາຍໃນແຜ່ນດິນລາວ ໂດຍສະເພາະແມ່ນຈອມພູກູດ ພວກມັນໄດ້ໃຊ້ຍົນຖິ້ມລະເບີດ, ລູກປືນ, ລູກຈະລວດ ລົງທຳລາຍພູກູດເມື່ອດັ່ງທ່າຝົນ ຈົນເຖິງຂັ້ນໝົດໂຕໜຶ່ງກໍບໍ່ອາດສາມາດຢູ່ໄດ້ ພວກມັນໄດ້ພັດປ່ຽນກັນມາຖອກເທທຳ ລາຍພູກູດ ຈົນເຫຼືອສະພາບຄວາມເປັນທຳມະຊາດສິ່ງທີ່ຍັງຄົງຄ້າງຄືສາກສົບ, ເຮືອບິນ, ພູໂປກໂລ້ນ, ຕົ້ນໄມ້ຢືນຕົ້ນ ຕາຍ ທຸກສິ່ງຢ່າງທີ່ເກີດຂຶ້ນນັ້ນແມ່ນຍ້ອນຄວາມຢາກເປັນໃຫຍ່, ຕ້ອງການຄອບຄອງ ແລະ ຢາກໃຫ້ດິນແດນຕ່າງໆຕົກ ເປັນຫົວເມືອງຂຶ້ນຂອງຕົນ ຍ້ອນຄວາມໂລບມາກໂລພາ ພວກມັນຈຶ່ງບໍ່ຄິດປານີ ແລະ ບໍ່ເຫັນໃຈໃຜທັງນັ້ນ.

**4. ວິເຄາະຕົວລະຄອນ “ *ທະຫານຫຸ່ນ* "**

ທະຫານຫຸ່ນ ແມ່ນຕົວລະຄອນຝ່າຍອະທຳ ເປັນຕົວແທນໃຫ້ທະຫານປະຕິການອາເມລິກາທີ່ເປັນລູກແຫຼ່ງຕີນມ ຂອງຈັກກະພັດຕ່າງດ້າວ ພວກມັນໄດ້ເຮັດໜ້າທີ່ເປັນແນວຮົບທາງໜ້າດິນທີ່ຄ່ອຍພະຍາຍາມຕໍ່ສູ້ຍັນຜະເຊີນໜ້າກັບ ນັກຮົບປະຕິວັດລາວ ພວກມັນໄດ້ໃຊ້ປືນໃຫຍ່ຍິງໃສ່ພູກູດຈົນຖືກເຜົາໄໝ້ປານພູໄຟ ພວກມັນໄດ້ຍິງປືນໃຫຍ່ເຂົ້າໃສ່ ເພື່ອທຳລາຍພູກູດຢ່າງດຸເດືອດຈົນສັດສາວາສິ່ງ ແລະ ຕົ້ນໄມ້ຖືກເຜົາໄໝ້ ແມ້ກະທັ່ງຫຍ້າກໍຍັງບໍ່ເຫຼືອພວກທະຫານຫຸນ ເຊື່ອວ່າການຕະລຸມບອນຄັ້ງນີ້ແນ່ນອນຈອມພູກູດຕ້ອງຕົກຢູ່ໃນກຳມືຂອງພວກມັນ. ດັ່ງນັ້ນ, ພວກມັນຈຶ່ງຖືທຸງຊາດ ແລ່ນຂຶ້ນຈອມພູກູດເພື່ອຍາດຊິງເອົາຜົນງານ ທ່າມກາງເຫດການດັ່ງກ່າວນັ້ນຈຶ່ງມີສຽງປືນດັງຂຶ້ນ ຜູ້ຈັບທຸງມື້ມຟຸບລົງ ກ່ອນໝູ່ ໃນຖັນແຖວຂອງພວກເຂົາແມ່ນຖືກແຕກແຍກສັບຊົນຄົນເລ, ແຕກທະລາຍລົງບາງຄົນກິ້ງລົງ, ບາງບັກຄານຂຶ້ນ ແລະ ບາງຄົນກໍນັ່ງຄຸເຂົ່າຍົກມືຍອມຢູ່ຕີນພູ ຍ້ອນພວກມັນມີແນວຄິດຊົ່ວຊ້າ, ໂຫດຮ້າຍປ່າເຖື່ອນ ດັ່ງນັ້ນການ ຕໍ່ສູ້ຈຶ່ງບໍ່ຊະນະຝ່າຍແນວລາວຮັກຊາດ ດັ່ງຄຳສອນທາງພຸດທະສາດສະໜາເພິ່ນໄດ້ເວົ້າວ່າ “ ສິນທຳຍ່ອມຊະນະອະທຳ " ສະເໝີ.

**ງ. ສະຫຼຸບ**

ເນື້ອໃນບົດເລື່ອງສັ້ນ “ ຜູ້ສືບທອດ " ໄດ້ສ່ອງແສງໃຫ້ເຫັນເຖິງນ້ຳໃຈຮັກຊາດ, ຄຽດແຄ້ນສັດຕູຂອງຄອບຄົວໜຶ່ງ ທີ່ໄດ້ປະກອບສ່ວນເຂົ້າໃນການປະຕິວັດສູ້ຢັນກັບສັດຕູ, ຍອມເສຍສະຫຼະເລືອດເນື້ອ, ຊີວິດເພື່ອປົກປັກຮັກສາປິຕຸພູມ ອັນແສນຮັກຂອງຕົນ ແລະ ຍອມເສຍສະຫຼະຄວາມສຸກສ່ວນຕົວເພື່ອສ່ວນລວມ ດ້ວຍການສືບທອດພາລະກິດຈາກພໍ່ ລູກ, ນອກນັ້ນ, ຍັງຍົກໃຫ້ເຮົາເຫັນເຖິງສາຍໄຍຄວາມຮັກຂອງຄອບຄົວ, ຜົວ-ເມຍ, ພໍ່ແມ່-ລູກ ເຖິງວ່າຈະພັດພາກຈາກ ກັນຫຼາຍປີ ແຕ່ຕ່າງຄົນກໍ່ຍັງຮັກ ແລະ ຊື່ສັດຕໍ່ກັນ ເຊິ່ງທັງໝົດນັ້ນມັນໄດ້ກາຍເປັນບົດຮຽນອັນລ້ຳຄ່າໃຫ້ແກ່ຄົນຮຸ່ນໜຸ່ມ ແລະ ນັກຮຽນ, ນັກສຶກສາປັນຍາຊົນໄດ້ຮ່ຳຮຽນເອົາບົດຮຽນຈາກຄົນຮຸ່ນໃໝ່ຕໍ່ໆໄປ

### 3. ດ້ານສິລະປະການແຕ່ງ

ຜູ້ແຕ່ງໄດ້ໃຊ້ສັບພາສາທີ່ອຸດົມສົມບູນທາງດ້ານເນື້ອໃນ ແລະ ສິລະປະເປັນຕົ້ນແມ່ນໄດ້ໃຊ້ສຳນວນພາສາບອກເລົ່າ, ເຈລະຈາ, ພັນລະນາ ໃນການພັນລະນາຮູບພາບພາຍນອກແມ່ນໄດ້ໃຊ້ຄຳເວົ້າທຳມະດາ ເຮັດໃຫ້ບົດເລື່ອງມີ ລັກສະນະພັກ, ລັກສະນະຊາດ, ລັກສະນະມະຫາຊົນຢ່າງຈະແຈ້ງ. ເມື່ອໄດ້ອ່ານໄດ້ຟັງແລ້ວສາມາດສຳນຶກເຫັນພາບ ແລະ ເຂົ້າໃຈເຫດການໃນເລື່ອງໄດ້. ນອກນັ້ນ, ການໃຊ້ສັບພາສາບາງບ່ອນໃນການສົນທະນາຍັງໄດ້ໃຊ້ສັບທ້ອງຖິ່ນເຂົ້າມາ ປົນເປ່ຢູ່ນຳເຊັ່ນ ເຊບໂປນ, ໜ້າແດ່ນ....ເຊິ່ງເຮັດໃຫ້ຜູ້ອ່ານ, ຜູ້ຟັງ ເມື່ອໄດ້ອ່ານ, ຟັງແລ້ວເກີດມີອາລົມຄ້ອຍຕາມ ແລະ ສາມາດສຳນຶກເຫັນພາບການເຄື່ອນໄຫວຂອງຕົວລະຄອນໄດ້.

# ບົດເລື່ອງ “ຜູ້ສືບທອດ”

ພວກໂຈນອາກາດ ອາເມລິກາ ຍັງຄົງສືບຕໍ່ຍິງທຳລາຍພູກູດຢ່າງປ່າເຖື່ອນ, ລູກບົ່ມ ແລະ ລູກຈະຫຼວດຂອງພວກມັນໄດ້ຖອກເທລົງເໝືອນດັ່ງຫາຝົນ. ປະກົດເທິງຈອມພູດິນແດງແຫ່ງນີ້ທຸກສິ່ງທຸກຢ່າງທີ່ມີຊີວິດຈົນເຖິງມົດຕົວໜຶ່ງກໍ່ຄົງບໍ່ອາດສາມາດຢູ່ໄດ້ ແຕ່ບັນດານັກຮົບປະຕິວັດພວກເຮົາຍັງຄົງສືບຕໍ່ສູ້ຮົບຕ້ານກັບພວກຈັກກະພັດອາເມລິກາ ແລະ ກໍ່ຕ່າວໂຈມຕີພວກທະຫານຫຸ່ນຢ່າງພິລະອາດຫານ. ພາຍຫຼັງທີ່ບັ້ນຮົບດຸເດືອດ, ເຂົາເຈົ້າພັດພາກັນນັ່ງອ້ອມເປັນວົງມົນ, ພົນຢາສູບ, ເລົ່າເລື່ອງ ແລະ ເວົ້າຢອກໄຍກັນ, ສຽງກອງລຳວົງທີ່ສົດຊື່ນເບີກບານໄດ້ດັ່ງກ້ອງຂຶ້ນເທິງຈອມພູທົ່ວຂົງເຂດ ແລະ ທົ່ວທ້ອງຟ້າທີ່ສົດໃສ. ນັກຮົບສອງສາມຄົນໜ້າໝອງ, ໜ້າມົນເຕັມໄປນ້ຳເຫື່ອ ແລະ ດິນແດງ ພາຍປືນອາກາດຟ້ອນກ່ຽວກັນດ້ວຍຄວາມເບີກບານໃຈ, ປາກົດວ່າບັ້ນຮົບທີ່ດຸເດືອດກ່ອນນີ້ສິຫ້ານາທີໄດ້ກາຍໄປໃນອາດີດແຕ່ດົນແລ້ວ.

ສະຫາຍບົວໄລ ຫົວໜ້າກອງຮ້ອຍທີ່ຫາກໍ່ຂຶ້ນມາບັນຊາຢູ່ເທິງພູກູດນີ້ສອງເດືອນໄດ້ໄປກວດສະໜາມຮົບຄືນມາກໍ ນັ່ງພົນຢາສູບນຳອ້າຍນ້ອງນັກຮົບ, ບົວໄລ ທັງສູບຢາເຂົ້າເປັນບາດຍາວໆ, ທັງສິ່ງສາຍຕາສັງເກດເບິ່ງອ້າຍນ້ອງນັກຮົບ ແຕ່ລະຄົນ. ອ້າຍນ້ອງນັກຮົບຢູ່ພີ້ມີແຕ່ໝູ່ດຽວ (ໝູ່ໜຶ່ງ) ເບິ່ງແລ້ວທ່າທີຮູບຮ່າງຂອງແຕ່ລະຄົນແມ່ນແຕກຕ່າງກັນ, ແຕ່ ເຂົາເຈົ້າພັດເປັນນັກຮົບຜູ້ໜຸ່ມນ້ອຍ, ມັກມ່ວນ, ມີອຸດົມຄະຕິສູງ, ອາດຫານໃນການສູ້ຮົບ ຫຼຽວເບິ່ງຜູ້ໃດກໍເປັນຕາໜ້າ ຮັກ ແລະ ດູດດື່ມໃຈ. ສາຍຕາຂອງສະຫາຍບົວໄລຄ່ອຍຫຼຽວມາຫານັກຮົບຜູ້ໜຸ່ມນ້ອຍກວ່າໝູ່ມີສອງຄົນທີ່ກຳລັງຕາບ ເສື້ອໃຫ້ກັນຢູ່ຂ້າງເບື້ອງຫຼັງຂອງສະຫາຍບົວໄລ, ເຂົາຫາກໍ່ຂຶ້ນມາເພີ່ມຈຳນວນມາປະຈຳຢູ່ປ້ອມພູກູດໃນຕອນແລງວານນີ້ , ບົວໄລຍ່າງມາ ແລະ ນັ່ງລົງຂ້າງນັກຮົບຜູ້ໜຸ່ມນ້ອຍທັງສອງລາວຍິ້ມຫົວ ແລະ ຖາມ:

ທິດທອງ ນ້ອງລອງເວົ້າເບິ່ງ, ຢູ່ເທິງນີ້ກັບລຸ່ມພຸ້ນບ່ອນໃດມ່ວນກວ່າກັນ? ທິດທອງປີ້ນມາວ່າຈະຕອບສະຫາຍບົວໄລແຕ່ທັນໃດ ທິດທອງ ຮ້ອງເລີຍຮ້ອງຂຶ້ນອຸ້ຍ! ບາດໜຶ່ງ ອິດສະຫຼະ ນັ່ງ ຕາບເຄື່ອງໃຫ້ໝູ່ຈົ່ມພຶມພໍາ

ແນ່! ບອກວ່າໃຫ້ນັ່ງມັນດີແດ່, ເອົ້າຊິເວົ້າຫຍັງກໍ່ເວົ້າຍັງຊິຫຼຽວໄປຫຼຽວມາເຮັດຫຍັງ? ນັ່ງຊຶງຈັກບຶດຈັກຄາວຊິ ບໍ່ໄດ້? ຄືຈັ່ງວ່າ...

ເອົາໄດ້ແລ້ວ! ໄດ້ແລ້ວ! ເຮົາຂໍຮັບຜິດແລ້ວ, ຢ່າເວົ້າໃຫ້ມັນຍືດມັນຍາວຄືພິສັງ, ຟັງເຈົ້າເວົ້າມັນຄືແມ່ເຖົ້າຫົກ- ເຈັດສິບປີທີ່ມັກລຳໄລ. ທິດທອງທັງເວົ້າທັງຍິ້ມຫົວຕໍ່ໝູ່.

ບົວໄລກອດເອົານັກຮົບໜຸ່ມນ້ອຍທັງສອງ.

ເຊົ່າ! ຢ່າຖຽງກັນອີກ... ບົວໄລເວົ້າຍັງບໍ່ທັນສຸດຄວາມ, ອິດສະຫຼະເລີຍຍົກແຂນບົວໄລອອກຈາກປາຄິດຈະຍ່າງ ໜີເຫັນຄືແນວນັ້ນສະຫາຍບົວໄລເລີຍຈັບແຂນອິດສະຫຼະໄວ້.

ນ້ອງອິດສະຫຼະ! ນ້ອງຊິໄປໃສນັ່ງຢູ່ນີ້ມ່ວນຊື່ນຈັກເລັກໜ້ອຍ.

ຂໍລາຍງານພໍ່ກອງ, ນ້ອງຂໍກັບຄືນປະຈຳຂຸ່ມສູ້ຮົບ

ທິດທອງຫຼຽວເບິ່ງອິດສະຫຼະແລ້ວຍິ້ມຫົວທັງເວົ້າເຢີ້ຍອິດສະຫຼະ:

ພໍ່ກອງຈົ່ງປະໃຫ້ມັນເມືອສາ! ນິດໄສຄືເດັກນ້ອຍນີ້. ພໍ່ກອງລອງຄິດເບິ່ງປີກາຍເພິ່ນຂໍສະໝັກເຂົ້າເປັນທະຫານ ປົດປ່ອຍ, ທາງກອງບັນຊາການບໍ່ໃຫ້ຮັບເພາະເພິ່ນຍັງນ້ອຍແດ່, ເພິ່ນໂລດຊູຊິຈົນໄດ້ໄປ. ບາດໄດ້ໄປແລ້ວເວລາຊິຈາກ ແມ່ມາພັກໄຫ້ຊິໆ. ຖ້າຢາກກິນນົມແມ່ເປັນຫຍັງບໍ່ຢູ່ເຮືອນອີກຈັກສອງປີກ່ອນດ ຟ້າວຂໍໄປເຮັດພິສັງ?...ອິດສະຫຼະຂຶງຕາ ເບິ່ງທິດທອງ

ໂຢ໋! ໂຕວ່າປັດຈຸບັນບໍ່ໄປເປັນທະຫານຕີອາເມລິກາຖ້າຈັກປີ, ສອງປີເດີພວກອາເມລິກາຖືກດັບແລ້ວ, ໂຕວ່າຊິ ໄປຕີໂຕໃດອີກ, ເວລານັ້ນເອກະລາດລະບໍ? ເຮົາເຮັດແນວໃດຈຶ່ງຊິລ້າງແຄ້ນໃຫ້ພໍ່ເຮົາໄດ້. ສ່ວນເຮົາໄຫ້ນຳແມ່ຂອງເຮົາ ນັ້ນມັນແມ່ນເລື່ອງສ່ວນຕົວຂອງເຮົາ, ທຳມະດາແລ້ວຈາກພໍ່, ຈາກແມ່ໃຜຊິບໍ່ຄິດຮອດຄິດເຖິງ, ຄັນເວົ້າມາແລ້ວເຮືອນ ເຮົາກໍ່ຕ່າງເຮືອນໂຕ, ເຮືອນເຮົາຄັນຖ້າເຮົາໄປແລ້ວຍັງເຫຼືອແຕ່ແມ່ຜູ້ດຽວເທົ່ານັ້ນແມ່ນໃຜຊິໄປໄຮ່ໄປນານຳແມ່, ຄາບ ເຊົ້າ-ຄາບແລງໃຜຊິນັ່ງກິນເຂົ້າຮ່ວມພາເວລາເພິ່ນຫາກເຈັບປ່ວຍໄຂ້ໃນຍາມກາງຄໍ່າ-ກາງຄືນແມ່ນໃຜຊິເບິ່ງແຍງເພິ່ນຫຼື! ແມ່ນຫຍັງກໍ່ເປັນຍ້ອນຈັກກະພັດອາເມລິການັ້ນແລ້ວ, ຖ້າຫາກບໍ່ມີພວກຮ່ານີ້ເຮົາກໍ່ຄົງຢູ່ດົງບໍລະ

ເວນທີ່ອຸດົມສົມບຸນ ຂອງເຮົາພຸ້ນແລ້ວຊິຂຶ້ນມາປຽມດິນຊຽງຂວາງໝາວກະດ້າງຂອງໂຕນີ້ເຮັດຫຍັງ, ໄດ້ຍິນ ອິດສະຫຼະເວົ້າວ່າດົງບໍລະເວນ ສະຫາຍບົວໄລ ຟ້າວຖາມນ້ອງຢູ່ດົງບໍລະເວນຫວະ?

ເຈົ້າ! ແຕ່ກ່ອນຄອບຄົວນ້ອງຢູ່ດົງບໍລະເວນ.

ໂຫ! ໄທບ້ານໄທເມືອງກັນເດເຮົາ ເອົາ! ນັ່ງລົງນີ້ເຮົາລົມກັນສາກ່ອນ, ບໍ່ຟ້າວໄປໃສ, ຄອບຄົວພໍ່ກອງກໍຢູ່ດົງ ບໍ່ ລະເວນຄືກັນແຕ່ເປັນຫຍັງນ້ອງຈຶ່ງຂຶ້ນມາຢູ່ພີ້ມານໍາຄອບຄົວ ຫຼື ແນວໃດ? ເບິ່ງຊົງຄືຊິມາແຕ່ດົນບໍ? ຟັງສຽງປາກພໍ່ ກອງ ຄິດວ່ານ້ອງແມ່ນຄົນຊຽງຂວາງຊັ້ນດອກ.

ຖ້າເວົ້າມາເລື່ອງມັນກໍຍາວ, ນ້ອງກໍ່ບໍ່ຄັກແຕ່ເພາະວ່າເວລານັ້ນນ້ອງຍັງນ້ອຍ, ນ້ອງໄດ້ຍິນແຕ່ແມ່ເພິ່ນເລົ່າສູ່ ຟັງວ່າ: ແຕ່ກ່ອນຄອບຄົວຂອງນ້ອງຢູ່ດົງບໍລະເວນພຸ້ນ, ເວລາຍັງນ້ອຍອາຍຸໄດ້ປະມານ 3-4 ປີພໍ່ນ້ອງໄດ້ເປັນທະຫານ ອິດສະຫຼະ, ຢູ່ເຮືອນເຫຼືອແຕ່ແມ່ ແລະ ນ້ອງເທົ່ານັ້ນ, ນັບແຕ່ພໍ່ຈາກໄປຈົນມາເຖິງ 1957-1958, ເວລາເຂົ້າໂຮມລາວ ມີ ພະນັກງານຈໍານວນໜຶ່ງກັບຄືນເມືອບ້ານແມ່ຈຶ່ງຮູ້ຂ່າວວ່າພໍ່ຂອງນ້ອງຢູ່ກອງພັນທີ່ສອງຂອງຝ່າຍປະເທດລາວ ແລະ ໄດ້ ມາປະຈໍາຢູ່ທົ່ງໄຫຫີນ, ປຕກ່ອນພວດສັດຕູກໍ່ຮູ້ວ່າພໍ່ຂອງນ້ອງໄປເປັນທະຫານອິດສະຫຼະ, ສະນັ້ນ ມັນຈຶ່ງ ມານາບຂູ່ແມ່ ຂອງນ້ອງຢູ່ເລື້ອຍໆຈຸດໜັກແມ່ນເວລາເຂົ້າໂຮມລາວ, ພວກມັນຮູ້ວ່າພໍ່ຂອງນ້ອງຢູ່ກອງພັນທີ່ສອງ ສະນັ້ນ ພວກມັນຈຶ່ງ ນາບຂູ່ຢູ່ທຸກເວລາ, ບັກເຊຸບໂປດ ມັນມານາບຂູ່ໃຫ້ແມ່ຂອງນ້ອງຂຶ້ນເມືອຢູ່ເທິງຄ້າຍໄປເປັນ ເມຍນ້ອຍຂອງມັນ... ບໍ່ ສາມາດຢູ່ໃນບ້ານໄດ້ອີກແມ່ນ້ອງຕ້ອງຂາຍງົວ, ຄວາຍ, ເຮືອນຊານ, ໄຮ່ນາ, ສວນແລ້ວພາ ນ້ອງມາຢູ່ໄຫຫີນເພື່ອ ຊອກຫາພໍ່, ເສັ້ນທາງແຕ່ດົງບໍລະເວນຂຶ້ນເມືອທົ່ງໄຫຫີນໄກຄືແນວໃດກໍ່ຄືງຈະຮັບຮູ້, ແມ່ນ້ອງ ພັດເປັນຄົນບ້ານນອກບໍ່ ເຄີຍເດີນທາງໄກເວລານັ້ນນ້ອງຍັງນ້ອຍແດ່, ສະນັ້ນ ການເດີນທາງຫຍຸ້ງຍາກທີ່ສຸດໄປຮອດ ບ່ອນໃດກໍ່ບໍ່ມີຜູ້ລື້ງເຄີຍ, ບໍ່ ມີຍາດຕິພີ່ນ້ອງເພື່ອເພິ່ງພາອາໄສ... ບົວໄລ ຕັ້ງໃຈຟັງອິດສະຫຼະເລົ່າເລື່ອງຄອບຄົວລາວ ທັງຄົ້ນຄິດຄອບຄົວຂອງສະຫາຍ ກໍຢູ່ດົງບໍລິເວນ. ເວລາລາວອອກຈາກຄອບຄົວເຂົ້າເປັນທະຫານອິດສະຫຼະລູກ ຊາຍຂອງລາວຫາກໍ່ໄດ້ 2-3 ປີ, ເສັ້ນທາງ ກູ້ຊາດນັບມື້ນັບດົນນານລາວສູ້ຮົບແຕ່ເຂດໃຕ້ ແລະ ຂຶ້ນມາເຂດກາງແລ້ວ ຂຶ້ນມາເຕົ້າໂຮມສອງແຂວງ ຊໍາເໜືອ ແລະ ຜົ້ງສາລີ ເວລາເຂົ້າໂຮມລາວ, ບົວໄລຢູ່ກອງພັນທີ່ສອງເຂົ້າປະຈໍາຢູ່ທົ່ງໄຫ ຫີນ, ໃນຊີວິດທີ່ຍາກແຄ້ນ ແລະ ດຸເດືອດໃນ ລະຫວ່າງໃນການຕໍ່ສູ້ຄວາມເປັນ ແລະ ຄວາມຕາຍຮູບພາບຂອງເມຍ ແລະ ລູກທີ່ແສນຮັກເວລາໃດກໍປະກົດອອກມາຢູ່ຕໍ່ ໜ້າຂອງລາວບາງເທື່ອມີການສູ້ຮົບດຸເດືອດບັ້ນໜຶ່ງ ແລະ ໄດ້ກັບ ຄືນມາເພື່ອປັບປຸງກໍາລັງຢູ່ແນວຫຼັງ, ບົວໄລ ມັກນັ່ງຄິດ ຫາລູກ ແລະ ເມຍ ຫຼື ໃນເວລາຍ່າງກາຍບ້ານປະຊາຊົນບ້ານ ໃດ-ບ້ານໜຶ່ງເຫັນພວກນ້ອງແລ່ນນໍາ ບົວໄລເຄີຍລູບຄໍາ ແລະ ອຸ້ມເອົາພວກນ້ອງເໝືອນດັ່ງລູກຊາຍຂອງຕົນ. ແຕ່ ກ່ອນ ບົວໄລ ກໍເຄີຍສົ່ງຂ່າວຄາວຫາຄອບຄົວຢູ່ເລື້ອຍໆເວລາ ລາວມາປະຈໍາຢູ່ທົ່ງໄຫຫີນໝູ່ຂອງລາວພະນັກງານເກົ່າ ກັບເມືອຢູ່ທ້ອງຖິ່ນໄດ້ສົ່ງຂ່າວໃຫ້ລາວຮູ້ວ່າ: ເມຍຂອງລາວຍັງ ບໍລິສຸດຕໍ່ລາວ-ລູກຊາຍຂອງລາວກໍ່ໃຫຍ່ສູງແລ້ວ, ແຕ່ຫຼັງຈາກມີການທັບທິດ ສະຫາຍ ບົວໄລໄດ້ຂຶ້ນເມືອຢູ່ທັງນໍ້າບາກ ເພື່ອຈັດຕັ້ງກໍາລັງໃໝ່ຂຶ້ນຕື່ມ, ອີກຢ່າງໜຶ່ງລາວ ມັກເຄື່ອນທັບຢູ່ເລື້ອຍໆບໍ່ຄ່ອຍມີໂອກາດກັບຄືນເມືອບ້ານແນວຫຼັງເພື່ອ ສືບຂ່າວຄອບຄົວສຽງປາກຂອງອິດສະຫຼະ ກ້ອງມາໃສ່ຫູຂອງສະຫາຍບົວໄລ ຍັງສະໜໍ່າສະເໝີ... ເວລາຂຶ້ນມາທົ່ງໄຫຫີນ ຈັ່ງແມ່ນມັນຊວຍສະພາບໃນເວລາ ນັ້ນເຄັ່ງຕຶງທີ່ສຸດພໍ່ຂອງນ້ອງພ້ອມກັບກອງພັນທີສອງຖອນອອກຈາກທົ່ງໄຫຫີນກ່ອນສອງແມ່ລູກພວກນ້ອງມາເຖິງ ປະມານສີ່-ຫ້າມື້ເວລານັ້ນສອງແມ່ລູກພວກນ້ອງຈະແນວໃດດີ, ຈະກັບຄືນເມືອບ້ານກໍ່ບໍ່ ໄດ້ອີກເພາະເງິນໄດ້ຈ່າຍມາ ຕາມທາງໝົດແລ້ວສອງແມ່ລູກນໍ້າຕ້ອງຫາກິນຢູ່ທົ່ງໄຫຫີນ...

ຊັ້ນດຽວນີ້ແມ່ນ້ອງຢູ່ໃສ? ແລະ ພໍ່ຂອງນ້ອງເດເປັນແນວໃດແລ້ວເພິ່ນເອີ້ນຊື່ວ່າແນວໃດ? ລອງເວົ້າເບິ່ງ ບາງເທື່ອພໍ່ກອງຊິຮູ້ບໍ່ຈັກເພາະແຕ່ກ່ອນພໍ່ກອງກໍ່ຢູ່ກອງພັນທີສອງຄືກັນ... ສະຫາຍບົວໄລຖາມດ້ວຍຄວາມເປັນ ຫ່ວງ ເປັນໄຍ ແລະ ສົນໃຈ.

ເວລາທໍາອິດພວກນ້ອງມາຢູ່ແປະກັບຕະຫຼາດໂພນສະຫວັນ, ຕໍ່ມາໄລຍະໜຶ່ງແມ່ໄດ້ແກວ່ນເຄີຍກັບແມ່ປ້າ ແຖວໆນັ້ນຈໍານວນໜຶ່ງຢູ່ຕາແສງເຄິ່ງພາຍຫຼັງເພິ່ນສືບຮູ້ຄອບຄົວຂອງພວກນ້ອງ, ພວກແມ່ປ້າໄດ້ມາຕ້ອນເອົາສອງ ແມ່ ລູກພວກນ້ອງໄປຢູ່ນໍາ, ພວກເພິ່ນພ້ອມກັນປຸກເຮືອນໃຫ້ ແລະ ແປງດິນນາໃຫ້ເພື່ອທໍາມາຫາກິນ, ປັດຈຸບັນນີ້ ເຮືອນ ຂອງພວກນ້ອງຢູ່ໃກ້ກັບຕີນພູນີ້ລະຫວ່າງເຈັດ-ແປດຫຼັກກໍ່ຮອດແລ້ວ. ເວລານ້ອງເປັນຕິດເປັນຕໍ່ຂອງກອງພັນ ທີ່ສອງ ນ້ອງເຄີຍໄດ້ຂໍເມືອຢາມແມ່ເລື້ອຍໆ, ສ່ວນພໍ່ຂອງນ້ອງ... ເວົ້າຮອດບ່ອນນີ້ປະກົດວ່າມີສິ່ງໃດສິ່ງໜຶ່ງຂຶ້ນມາ ຕັນເອົາຄໍ ຂອງອິດສະຫຼະ, ສີໜ້າຂອງອິດສະຫຼະໂສກເສົ້າຫງ່ວມເຫງົາ. ນ້ອງຢຸດຄາວໜຶ່ງແລ້ວເວົ້າຕໍ່... ສ່ວນພໍ່ຂອງ

ນ້ອງໄດ້ເສຍໄປ ແລ້ວຕາມພວກອາວໄດ້ໃຫ້ຮູ້ວ່າພໍ່ຂອງນ້ອງໄດ້ຂຶ້ນເມື່ອປົດປ່ອຍຫຼວງນ້ຳທາແຕ່ພໍດີເຈັບໜັກ ແລະ ອາດເສຍສະຫຼະແລ້ວ ເພາະນັບແຕ່ນັ້ນມາພວກນ້ອງບໍ່ໄດ້ຮັບຂ່າວເພິ່ນອີກ...

ຮື່... ສະຫາຍບົວໄລ ຫາຍໃຈໃຫຍ່ບາດໜຶ່ງ... ເລື່ອງນີ້ມັນເປັນທຳມະດານ້ອງເອີ້ຍ, ເຮັດການປະຕິວັດຕ້ອງມີ ການເສຍສະຫຼະ... ໃບໜ້າຂອງສະຫາຍບົວໄລປະກົດວ່າມີສີໂສກເສົ້າ ແລະ ເວລາລາວຄິດເຖິງເພື່ອນສູ້ຮົບຂອງກອງພັນ ທີ່ສອງທີ່ໄດ້ເສຍສະຫຼະເຂົາທັງສອງພາກັນອິດງຽບ ແລະ ປະກົດວ່າສະໜາມຮົບໄດ້ມີດງຽບປົກຄຸ້ມໄປດ້ວຍຄວາມງຽບ ສະງັດ, ຄາວໜຶ່ງສະຫາຍບົວໄລ ຈຶ່ງຖາມຕໍ່ວ່າພໍ່ຂອງນ້ອງຊື່ວ່າ... ຄຳຖາມຂອງສະຫາຍບົວໄລບໍ່ທັນສຸດ, ທັນໃດນັ້ນສຽງ ເອີ້ນຂອງສະຫາຍຢືນສັງເກດເຮືອບິນໄດ້ດັງກ້ອງຂຶ້ນ.

ຂໍລາຍງານພໍ່ກອງ, ເຮືອບິນຂອງໂຈນອາກາດອາເມລິກາພັດປາກົດອີກແລ້ວມີທັງໝົດ 4 ບິນມາທາງທິດໃຕ້, ຕາເວັນຕົກສຽງໃຕ້.

ສຽງລາຍງານຂອງສະຫາຍສັງເກດການຫາກໍ່ຢຸດຕິລົງ, ເມັດດໍ 4 ເມັດ ຢູ່ທາງທິດຕາເວັນຕົກສຽງໃຕ້ໄດ້ປະກົດ ແຈ້ງ ອອກຢ່າງທັນໃດ ແລະ ເມື່ອໄດ້ຮັບຄຳສັ່ງ, ທຸກຄົນກໍຟ້າວແລ່ນໄປປະຈຳຂຸມສູ້ຮົບ.

ບັ້ນຮົບທີ່ດຸເດືອດທັນໃດກໍ່ໄດ້ເລີ່ມຕົ້ນ. ພູກູດກ່ອນນີ້ສິບກວ່ານາທີຍັງເຈືອຈານໄປດ້ວຍສຽງຮ້ອງລຳບົດເພງ ຢ່າງ ມ່ວນຊື່ນເບີກບານຂອງນັກຮົບປົດປ່ອຍ ແລະ ປັດຈຸບັນໄດ້ປົກຄຸມໄປດ້ວຍແປວໄຟ ແລະ ຄວັນລູກລະເບີດເປັນສາຍ ຫວ່ານລົງດັ່ງສະເທືອນທົ່ວໜ່ອຍພູດິນແດງເປັນກ້ອນພຸ່ງສະເດັນຂຶ້ນ ແລະ ຄວັນມົວເປັນທົ່ງໆບິນຂຶ້ນປົດເອົາທ້ອງຟ້າທີ່ ສົດໃສທີ່ຢູ່ອ້ອມຕີນພູ. ກອງປ້ອງກັນອາກາດຂອງກອງທັບປົດປ່ອຍກໍເລີ່ມຕົ້ນພົ່ນລູກປືນຢ່າງບໍ່ຂາດສາຍເພື່ອຊ່ວຍ ສະຫາຍທີ່ກຳລັງສູ້ຮົບຢູ່ເທິງຈອມພູກູດ, ທ່າມກາງສຽງບົ່ມລູກຈະຫຼວດຈອງເຮືອບິນອາເມລິກາຖິ້ມລົງມາ ແລະ ສຽງປືນ ຕອບໂຕ້ຂອງນັກຮົບເຮົາ, ບັນດານັກຮົບປະຈຳພູກູດຍັງໄດ້ຍິນສຽງຮ້ອງທີ່ແຈ້ງໃສຂອງບັນຊາ:

ບັນດາສະຫາຍຈົ່ງລະມັດລະວັງ ແລະ ທຸ່ນທ່ຽງພວກສັດຕູກຳລັງສວຍໂອກາດໃຊ້ຄວັນມືດເພື່ອໂຈມຕີພວກເຮົາ. ພວກເຮົາຈົ່ງພາກັນຕິດຕາມໃຫ້ຄັກບັກໃດບິນລົງມາຕໍ່ຫັກຄໍມັນໂລດ... ການສູ້ຮົບທີ່ດຸເດືອດຍາວມາເປັນເວລາປະມານສິບຫ້ານາທີ, ພວກໂຈນອາເມລິກາປ່ຽນກັນມາຖອກເທທຳລາຍ

ສອງລຳຈຳຕ້ອງປະຊາກສິບຢູ່ຕີນພູ, ສ່ວນທີ່ຍັງເຫຼືອປົບຕາຍໄປທາງທິດຕາເວັນຕົກ, ການສູ້ຮົບທາງອາກາດຫາກໍຢຸດຕິ ລົງ, ພວກທະຫານຫຸ່ນພວກປະຕິການໄທຢູ່ທາງເມືອງສຸຍພັດຍິງປືນໃຫຍ່ມາໃສ່ຈົນຈອມພູກູດຖືກເຜົາໄໝ້ປານພູໄຟ, ບັນດານັກຮົບປົດປ່ອຍຍັງຄົງທຸ່ນທ່ຽງຫຼີກເວັ້ນກະສຸນປືນໃຫຍ່ຂອງສັດຕູດ້ວຍທ່າທີວ່ອງໄວ ແລະຄ່ອງແຄ້ວ, ເຄື່ອງນຸ່ງ ແລະ ຕົນຕົວຂອງເຂົາເຈົ້າຈາກສີຂຽວໃບໄມ້ໄດ້ຄ່ອຍໆກາຍມາເປັນສີແດງ, ຍ້ອນດິນແດງຕົກໃສ, ສຽງດັງກ້ອງສະໜັ່ນ ຫວັ່ນໄຫວຂອງລູກກະສູນປືນໃຫຍ່ຂອງສັດຕູຍັງບໍ່ທັນຢຸດຕິລົງ, ຢູ່ຕີນພູທິດຕາເວັນຕົກ, ທະຫານລາບຂອງພວກທະຫານຫຸ່ນໄດ້ເຄື່ອນເໜັງຄືໝູ່ໝົດບຸກໂຈມຕີເຂົ້າມາອີກ, ຕາທັງຄູ່ຂອງສະຫາບົວໄລເຂັ້ມຂຸ້ນຂຶ້ນຄືກັນກັບໄຟແດງ ຫຼຽວລົງເບິ່ງທາງຕີນພູການເຄື່ອນເໜັງຂອງພວກທະຫານຫຸ່ນ ແລະ ການໃຫ້ຄຳສັ່ງ:

ພວກສະຫາຍຈົ່ງລະວັງ, ພວກທະຫານຫຸ່ນກຳລັງບຸກໂຈມຕີພວກເຮົາຂະໜາດໃຫຍ່, ທິດທອງ ແລະ ອິນແປງ ເຂົ້າປະຈຳປັ່ນຈັກ, ບຸນປອນຈົ່ງໂທລະສັບລາຍງານຫາຜູ້ບັນຊາການ, ສ່ວນບັນດາສະຫາຍຈົ່ງເຂົ້າປະຈຳຂຸມຄອງສູ້ຮົບ ຂອງຕົນ.

ສຽງລູກປືນຂອງສັດຕູກໍຢຸດຕິລົງພວກສັດຕູປຸກມາກາຍພູແລ້ວຍັງໄກຈາກຂຸມຂອງນັກຮົບປະມານຮ້ອຍແມັດ, ຫ້າ ສິບແມັດ, ຊາວແມັດ ໝວກເຫຼັກເຫຼືອງຂອງພວກສັດຕູປົ່ນອ້ອມວົງປືນຈັກຂອງທິດທອງ, ທິດທອງຄຶງຕາຢ່າງບໍ່ພັບ ລາວຫາຍໃຈໃຫຍ່ແລ້ວກັດແຂ້ວສອງມືລາວກໍປືນຈັກຢ່າງແໜ້ນກຽມລັ່ນໄກ, ຄາວໆສອງມືລາວພັດລູບໄປລູບມາ ແລະ ເຊັດນ້ຳເຫື່ອລົງໃສ່ຂາໂສ້ງຄືຈັ່ງວ່າລາວປວດຕີນປວດມືຄັນຖາຍ ແລະ ຖາໃຈ ທິດທອງລໍຖ້າຄຳສັ່ງຂອງສະຫາຍບົວ ໄລ ແຕ່ຍັງບໍ່ທັນໄດ້ຍິນສຽງປືນສັນຍານ ແລະ ຄຳສັ່ງໃດໆເວລາຜ່ານພົ້ນໄປປະກົດວ່າຍືດເຍື້ອຍາວນານທິດທອງ ແລະ ນັກຮົບທັງຫຼາຍຄາວໆພັດຈ້ອງຕາມາຫາສະຫາຍບົວໄລໃນເວລານັ້ນສັດຕູໄດ້ຄານຂຶ້ນມາໄກຈາກຂຸມນັກຮົມພຽງແຕ່ສິບ ກວ່າແມັດເທົ່ານັ້ນ, ມີບາງບັກຫຼັງໝູ່ກໍໄດ້ເລີ່ມຕົ້ນລຸກຢ່າງເບີຍເອີກຂຶ້ນມາເພາະເຂົ້າຄິດວ່າຜ່ານການຍິງທຳລາຍຢ່າງ ດຸເດືອດຂອງເຮືອບິນ ແລະ ປືນໃຫຍ່ຂອງພວກມັນຈອມພູກູດຖືກເຜົາຜານ, ສັດສາວາສິ່ງ ແລະ ຕົ້ນໄມ້ຖືກເຜົາຜານ ໄ ໝ້ໝົດຈົນກະທັ້ງວ່າຫຍ້າຕົ້ນໜຶ່ງກໍຍັງບໍ່ເຫຼືອອີກ, ພວກມັນເຊື່ອວ່າ: ເມື່ອພວກມັນຕະລຸມບອນຂຶ້ນເທິງພູກູດບໍ່ຕ່າງ ຫຍັງກັບພ້າຟັນຂີ້ຕົມຈະບໍ່ມີສິ່ງໃດຂັດຂວາງຕ້ານພວກມັນອີກ, ພູກູດແນ່ນອນຕົກ

ຢູ່ໃນກຳມືຂອງພວກມັນທຸງຂອງມັນ ຈະປິວຢູ່ເທິງຈອມພູກູດພວກມັນແລ່ນຂຶ້ນເມືອຍາດຊີງເອົາຜືນງານ, ໃນທ່າມກາງທີ່ທະຫານຫຸ່ນເຜີຕົວ! ສຽງປືນ ສັນຍານ ແລະ ຄຳສັ່ງຂອງສະຫາຍບົວໄລໄດ້ດັ່ງໄປທົ່ວຈອມພູກູດ:

ຍິງ!

ພ້ອມກັນນັ້ນສຽງປືນຈັກ, ປືນກົນກາງ, ປືນອາກາດ ແລະ ໝາກແຕກ, ໄດ້ພົ່ນອອກມາຈາກຂຸທຄອງຂອງບັຍດາ ນັກຮົບປົດປ່ອຍ, ບັກທະຫານຫຸ່ນທີ່ຈັບທຸງຂຶ້ນກ່ອນໝູ່ນັ້ນລົ້ມລົງພ້ອມກັບຄັນທຸງຂອງມັນ ແລະ ທະຫານຜູ້ອື່ນໆກໍລົ້ມ ລົງເປັນແຖວໆເໝືອນລົມພະຍຸພັດທົ່ງຫຍ້າແຫ່ງໜຶ່ງ, ຖັນຂອງພວກທະຫານຫຸ່ນຖືກແຕກແຍກສັບປົນຄົນເລ, ພວກຢ່າງ ຕາມຫຼັງຮີບແລ່ນລົງພູ, ມີບາງບັກແລ່ນບໍ່ທັນຕ້ອງສຸດດູກິ້ງລົງຕາມສັນພູພວກສັດຕູມັນຕື່ນກະວົນກະວາຍຢ້ານກົວ ແລະ ພວກມັນບໍ່ເຂົ້າໃຈວ່າຖືກພວກນັກຮົບປົດປ່ອຍໂຈມຕີ ຫຼື ຖືກຜູ້ຫຼອກ, ສະຫາຍບົວໄລເຫັນຖັນແຖວຂອງພວກທະຫານ ຫຸ່ນຖືກແຕກແຍກ, ສັບສົນຄົນເລສະຫາຍກໍໃຫ້ຄຳສັ່ງຕະລຸມບອນໃຊ້ກະບໍ່ໄລ່ແທງພວກສັດຕູ, ໃນເວລານັ້ນພວກສັດຕູ ຢູ່ຕີນພູໄດ້ຕິສາຍເອົາຍົນມາຍິງ ແລະ ເອົາປືນໃຫຍ່ຢູ່ທາງເມືອງສຸຍມາຕີຊ່ວຍ ແຕ່ພວກແຫ້ງເຫຼັກຂອງອາເມລິກາ ຕາບອດ, ເພາະສະນັ້ນມັນແນໃສ່ທະຫານນໍຫຼັງສ່ວນນັກຮົບປົດປ່ອຍເວລານັ້ນຄືດັ່ງດາວດວງໜຶ່ງທີ່ແຫຼມຄົມແທງ ເຂົ້າໃຈກາງຂອງພວກທະຫານຫຸ່ນແຕ່ໃຈກາງຂອງພວກມັນຕີທັບອອກສອງຂ້າງ, ເຮັດໃຫ້ຖັນແຖວຂອງມັນຍິ່ງແຕກ ສະຫຼາຍລົງ, ມີບາງບັກກິ້ງລົງພູ, ບາງບັກຄານຂຶ້ນ, ບາງບັກນັ່ງຂຸເຂົ່າຍົກມືຍອມກາງພູ.

ໃນເວລາທີ່ກຳລັງຕີສັດຕູ,ບົ່ມໜ່ວຍໜຶ່ງແຕກຢູ່ໃກ້ສະຫາຍບົວໄລ ແລະ ສະຫາຍອື່ນໆອີກສອງຄົນ,ສະຫາຍບົວໄລ, ສະເດັນລົ້ມຟຸບລົງເປັນເລືອດແດງເປັນສາຍຜ່ານແກ້ມ ແລະ ຊຶມອອກມາແຕ່ທາງໜ້າເອິກ, ທິດທອງ ແລະ ອິດສະຫຼະຢູ່ ເບື້ອງໜ້າຫຼຽວຄືນເຫັນຟ້າວແລ່ນມາໂຈມເອົາຜູ້ກອງ, ທິດທອງຈັບປາສະຫາຍບົວໄລສັ່ນ ແລະ ຮ້ອງໜ້າຕາຂອງບົວໄລ ມ້ານເຂົ້າຕາສອງເບື້ອງອັດແຈບທິດທອງສັ່ນຮ້ອງຂຶ້ນຄາວໜຶ່ງຕາທັງສອງຂອງສະຫາຍບົວໄລຈຶ່ງໄດ້ຄ່ອຍໆມືນອອກ ອິດສະຫຼະກຳລັງໂຈມເອົາສະຫາຍທັງສອງຄົນທີ່ໄດ້ຮັບບາດເຈັບລູກນັ່ງ ແລະ ພັນປາກບາດໃຫ້ເຂົ້າ, ສະຫາຍບົວໄລນອນ ຢູ່ໄດ້ຄາວໜຶ່ງຈຶ່ງຄ່ອຍໆຕັ້ງສະຕິໄດ້, ຕາທັງຄູ່ສະຫາຍຍັງບໍ່ທຸ່ນທ່ຽງແຈ້ງໃສ່ລາວກັດແຂ້ວພະຍາຍາມລຸກນັ່ງເມັດເຫືອ ແກ້ມເມັດເລືອດຍັງໄຫຼບໍ່ເຊົ່າທິດທອງຟ້າວຈີກເອົາບັງພັນບາດໃຫ້ສະຫາຍບົວໄລແຕ່ກໍ່ພັນສີ - ຫ້າຮອບ, ສະຫາຍບົວໄລ ຈັບມືທິດທອງໄວ້ ແລະ ເວົ້ານຳສະຫາຍທິດທອງ:

ທິດທອງ! ສະຫາຍຈົ່ງບັນຊາຕາງເຮົາ, ສືບຕໍ່ຂັບໄລສັດຕູໃຫ້ແຕກສະຫຼາຍ.

ທິດທອງເຮັດໜ້າຂຶມປະຕິເສດ. - ບໍ່! ດຽວນີ້ພໍ່ກອງໄດ້ຮັບບາດເຈັບ, ນ້ອງບໍ່ອາດປະພໍ່ກອງໄດ້.

ທິດທອງ! ນີ້ແມ່ນຄຳສັ່ງສະຫາຍຈົ່ງປະຕິບັດ.

ເຈົ້າ! ແລ້ວທິດທອງປິ່ນໜ້າມາຫາອິດສະຫຼະ, ອິດສະຫຼະພັນປາກບາດຊ່ວຍເຮົາແດ່...

ສຽງຮ້ອງໂຮຕະລຸມບອນ! ອັນດັບສູນນັກຮົບປົດປ່ອຍດັງກ້ອງທົ່ວສະໜາມຮົບ, ພວກສັດຕູປົບຕາຍຄານອອກຈາກຄົງເຂດພູກູດຢ່າງເສຍຂວັນ.

ພາຍຫຼັງພວກສັດຕູຖືກໂຈມຕີແຕກສະຫຼາຍໝົດແລ້ວ, ທິດທອງໄດ້ສັ່ງໃຫ້ອິດແປງ ແລະ ທອງຈັນສົ່ງສະຫາຍບົວ ໄລ ແລະ ອ້າຍນ້ອງສອງ - ສາມຄົນທີ່ໄດ້ຮັບບາດເຈັບໄປປິ່ນປົວຢູ່ໂຮງໝໍເຄື່ອນທີ່ຂອງກອງບັນຊາການ

ໄດ້ຍິນຂ່າວວ່າມີອ້າຍນ້ອງນັກຮົບຢູ່ພູກູດໄດ້ຄືນມາປິ່ນປົວຢູ່ໂຮງໝໍເຄື່ອນທີ່ຂອງກອງບັນຊາການເຂດ, 2-3 ມື້ຕໍ່ມາປະຊາຊົນຢູ່ໃກ້ໆເຂດນັ້ນໄດ້ພ້ອມກັນມາຢ້ຽມຢາມ. ໃນນັ້ນແມ່ຂອງອິດສະຫຼະກໍ່ໄດ້ມານຳ ເມື່ອພວກເພິ່ນກ້າວ ເຂົ້າໂຮງໝໍບັນດາແພດຢູ່ໂຮງໝໍກໍ່ໄດ້ມາຕ້ອນຮັບພໍ່ແມ່ປະຊາຊົນ ແລະ ໄດ້ພາພວກເພິ່ນເຂົ້າໄປຫາຫ້ອງນອນຂອງຄົນ ເຈັບ. ກ່ອນອື່ນໝົດແພດໄດ້ພາພວກເພິ່ນເຂົ້າຢ້ຽມຢາມສະຫາຍບົວໄລເຊິ່ງເປັນຜູ້ທີ່ໄດ້ຮັບບາດເຈັບໜັກວ່າໝູ່, ເທິງ ຕຽງນອນຂອງຄົນເຈັບ, ສະຫາຍບົວໄລກຳລັງນອນຫຼັບ. ສາຍລົມອັນຫາຍໃຈອັນອິດເມື່ອຍ ແລະ ເຈັບປວດໄດ້ຄ່ອຍໆພຸ່ງອອກມາຈາກເອິກ, ນາງ ຈັນດອນແພດຊັ້ນກາງໄດ້ຄ່ອຍໆຊົມແນະນຳພວກເພິ່ນ:

ສະຫາຍນີ້ໄດ້ເປັນຜູ້ບັນຊາຢູ່ເທິງພູກູດ, ເພິ່ນໄດ້ຮັບບາດເຈັບໜັກກວ່າໝູ່ໃນບັນຮົບກ່ອນນີ້ສອງສາມມື້ນີ້.

ຊື່ເພິ່ນວ່າແນວໃດນໍ? ປ້າຄົນໜຶ່ງຖາມ.

ຕາມອ້າຍນ້ອງເພິ່ນສົ່ງມາໃຫ້ຮູ້ວ່າ: ເພິ່ນຊື່ບົວໄລ, ເພິ່ນແມ່ນຄົນຢູ່ທາງບໍລະເວນ, ນັບແຕ່ເວລາຢ່າງມາເຖິງຕຽງ ນອນຂອງສະຫາຍບົວໄລ ແມ່ຂອງອິດສະຫຼະພະຍາຍາມຕິດຕາມໃບໜ້າຂອງບົວໄລ ແລະ ພະຍາຍາມຄົ້ນຄິດ ... ເບິ່ງໃບ ໜ້າແມ່ນຄືແທ້, ແຕ່ຢາກເຖົ້າກວ່າ ແລະ ຈ່ອຍຕ່ຳກວ່າ... ໃນເມື່ອໄດ້ຍິນນາງແພດຈັນດອນເວົ້າວ່າ: ເພິ່ນ

ຊື່ບົວໄລຢູ່ທາງ ບ້ານບໍລະເວນ ຄຳເວົ້າຂອງນາງແພດຈັນດອນຍັງບໍ່ທັນສຸດທັນໃດນັ້ນແມ່ຂອງອິດສະຫຼະເລີຍຮ້ອງຂຶ້ນໂອ໋! ບາດໜຶ່ງ, ແຂນທັງສອງຂອງລາວກອດໜ້າເອິກຢືນຊື່ແນມເບິ່ງສະຫາຍບົວໄລ, ນ້ຳຕາໄຫຼລົງອາບແກ້ມ. ຍ້ອນສຽງຮ້ອງຂອງແມ່ ອິດສະຫຼະຈຶ່ງເຮັດໃຫ້ບົວໄລຕື່ນຈາກຄວາມຫລັບນອນ, ຕາທັງຄູ່ຈ້ອງເບິ່ງກັນ, ສະຫາຍບົວໄລບໍ່ເຊື່ອໃນສາຍຕາຂອງຕົນໄດ້ເອົາຖູໆຕາແລ້ວເບິ່ງອີກ.

ສີພອນ! ແມ່ນສີພອນບໍ່?

ແມ່ຂອງອິດສະຫຼະຫຼູບເຂົ້ານັ່ງຊຸເຂົາລົງຂ້າງຕຽງນອນຂອງສະຫາຍບົວໄລ ແລະ ເວົ້າດ້ວຍສຽງສະອຶກສະອື້ນ.

ອ້າຍບົວໄລ! ອ້າຍບົວໄລ! ອ້າຍຍັງຢູ່ຫວະ? ແມ່ນອ້າຍແທ້ໆ ຫຼື ເປັນລາງຝັນຊື່ໆ... ຄືດັ່ງມີກຳລັງແຮງກຳຂຶ້ນມາເພີ່ມໃຫ້ສະຫາຍບົວໄລທັນໃດລາວບິນຕົວລຸກຂຶ້ນ, ແຕ່ຄວາມເຈັບປວດໄດ້ດຶງຈ່ອງຕົວລາວລົງ. ເມັດເຫື່ອເປັນເມັດໆໄດ້ຊຶມອອກມາຈາກໜ້າຜາກ. ລາວຄ່ອຍໆຈັບປາຂອງເມຍ.

ສີພອນ! ສີພອນ! ແມ່ນອ້າຍແທ້ນາ! ບໍ່ແມ່ນລາງຝັນດອກ, ເປັນຫຍັງນ້ອງຈຶ່ງມາຢູ່ນີ້? ອ້າຍບໍ່ນຶກວ່າຈະໄດ້ພົບນ້ອງ...

ດ້ວຍການກະທົບແຮງເກີນໄປແບບບັງເອີນສົມທົບກັບຄວາມເຈັບປວດຢູ່ປາກບາດໄດ້ເຮັດໃຫ້ສະຫາຍບົວໄລ ສະຫລົບໄປ ສີພອນເຊັ່ນຢ້ານທັງສັ່ນເອີ້ນຫາຜົວນາງແພດກົ້ມລົງຊູເອົາມືສີພອນ.

ບໍ່ເປັນຫຍັງດອກເອື້ອຍເອີຍ! ເພິ່ນກະທົບບັງເອີນສະຫຼົບໄປໜ້ອຍໜຶ່ງກໍ່ຈະຄືນ.

ເວົ້າແລ້ວນາງແພດຈັນດອນຈົກເອົາຢາດົມມາເປາະໃສ່ດັງຂອງສະຫາຍບົວໄລຄາວໜຶ່ງສະຫາຍບົວໄລຮູ້ເມື່ອຄິງຄືນ ມາ. ສ່ວນພວກປ່າ, ພວກອາ, ພວກເອື້ອຍທີ່ມາພ້ອມກັບເອີ້ນສີພນໃຜໆກໍຕົກສະເຫງີ້ຢືນມິດຢູ່ສຸດທ້າຍພວກເພິ່ນ ກໍ່ຄ່ອຍໆເຂົ້າໃຈ ແລະ ໃຜໆກໍສະແດງຄວາມຍິນດີ ດີໃຈເມື່ອເຫັນຜົວ-ເມຍບົວໄລກັບສີພອນທີ່ຈາກກັນສິບປີຈົນຮອດ ມື້ນີ້ຈຶ່ງໄດ້ພົບກັນ.

ເຫັນຜົວຮູ້ເມື່ອຄືນມາສີພອນທັງຊື່ນໃຈທັງໂສກເສົ້າ, ເພິ່ນບໍ່ຮູ້ຈະເຮັດແນວໃດຈະເວົ້າອັນໃດນຳຜົວ, ມີແຕ່ຈ້ອງຕາ ຫຼຽວເບິ່ງຜົວປອດນ້ຳຕາແຫ່ງຄວາມເຊື່ອໃຈຄ່ອຍໄຫຼອອກອາບແກ້ມ ແລະ ຢາດລົງຜ້າຫົ່ມສີຂາວທີ່ສະຫາຍບົວໄລກຳລັງ ຫົ່ມຊົ່ວໄລຍະໜຶ່ງ ສີພອນປາກົດວ່າຫາກໍຕື່ນຈາກລາງຝັນເພິ່ນຟ້າວຖາມຜົວ.

ອ້າຍຢູ່ພູກູດບໍ່ເຫັນບັກອິດສະຫຼະບໍ ?

ອິດສະຫຼະ... ສະຫາຍບົວໄລທັງເວົ້າທັງຄິດ, ຄິ້ວຂອງລາວທັງສອງຊົນເຂົ້າກັນ... ອິດສະຫຼະພົບແທ້ອິດສະຫຼະຢູ່ບໍລະເວນນັ້ນແມ່ນບໍ ?

ໂອຍ! ແມ່ນແລ້ວອ້າຍບໍ່ທັນຮູ້ມັນຫວະມັນແມ່ນລູກຊາຍຂອງເຮົາແຕ່ກ່ອນອ້າຍໃສ່ຊື່ມັນວ່າບົວໄທ ແຕ່ເມື່ອ ຂຶ້ນມາຢູ່ຊຽງຂວາງພີ້ເມື່ອໄດ້ຮູ້ຂ່າວວ່າອ້ານສະຫຼະຢູ່ຫຼວງນ້ຳທາ ພວກນ້ອງທຸກໃຈຫຼາຍພໍດີນ້ອງເລີຍປ່ຽນຊື່ໃຫ້ມັນເອີ້ນ ວ່າ: ອິດສະຫຼະ.

ໃນເມື່ອເວລາທີ່ຜົວ-ເມຍລົມກັນບັນດາຄົນເຈັບ ແລະ ແພດປະຈຳໂຮງໝໍເມື່ອຮູ້ເຫດການຄືແນວນັ້ນກໍ່ໄດ້ພ້ອມກັນ ຫຼັ່ງໄຫຼກັນເຂົ້າມາຫຸ້ມເບິ່ງ ແລະ ສະແດງຄວາມຊື່ນໃຈຕໍ່ຜົວ-ເມຍສະຫາຍບົວໄລ, ຄືນນັ້ນບັນດາແພດປະຈຳໂຮງໝໍໄດ້ ເຊີນສີພອນພັກກາເຊົ່າຢູ່ໂຮງໝໍ ແລະ ສະຫາຍຜູ້ຮັບຜິດຊອບໂຮງໝໍໄດ້ຕີສາຍລາຍງານໃຫ້ກອງບັນຊາການເຂດຮູ້ພ້ອມ, ຍ້ອນອາການເຈັບຂອງສະຫາຍບົວໄລເຈັບໜັກສົມຄວນຈຳຕ້ອງໄດ້ສົ່ງກັບຄືນໄປປິ່ນປົວຢູ່ແນວຫຼັງໂດຍຜ່ອນ, ລາວໄດ້ ສະເໜີສະພາບຄອບຄົວຂອງສະຫາຍບົວໄລ ແລະ ຂໍກອງບັນຊາການເຂດອະນຸຍາດໃຫ້ອິດສະຫຼະມາພົບພໍ່.

ຕອນເຊົ້າມື້ຕໍ່ມາອິດສະຫຼະຍ່າງລົງພຸເປັນບາດກ້າວສີອິດເມື່ອຍ ແລະ ໜັກໜ່ວງທິດທອງສິ່ງໝູ່ລົງຮອດເຄິ່ງພູແລ້ວຈັບມືອິດສະຫຼະ.

ເຊົາ! ຢ່າຄິດຫຼາຍຫາລະເມື່ອລອງເບິ່ງເປັນແນວໃດຈຶ່ງຂໍຂຶ້ນມາສູ່ຮົບຕື່ມອີກ. ອິດສະຫຼະຕອບໝູ່ດ້ວຍສີໜ້າໂສກເສົ້າ.

ເອີ! ເພື່ອປະຕິບັດຕາມຄຳສັ່ງເຮົາຈຳຕ້ອງໄດ້ກັບຄືນເມືອແຕ່ເຮົາກໍ່ບໍ່ຮູ້ວ່າກອງບັນຊາການສັ່ງໃຫ້ເຮົາກັບເຮັດຫຍັງ? ໂຕລອງຄິດເບິ່ງດຸ ! ເຮົາໄດ້ເຮັດຜິດຫຍັງແດ່ກອງບັນຊາການຈຶ່ງສັ່ງໃຫ້ເຮົາລົງໄປ ເປັນຫຍັງເພິ່ນຈຶ່ງບໍ່ໃຫ້ເຮົາຢູ່

ຊີ້ນຳພວກໂຕ...ເວົ້າມາຮອດນີ້ສຽງປາກຂອງອິດສະຫຼະຄືວ່າອັ່ງແຄນລາວບີບຕົວໝົດແຮງຢ່າງພຶດໆລຶງພູຈົນບໍ່ໄດ້ຈັບມືລາໝູ່.

ເມື່ອເຂົ້າເຖິງຫ້ອງການກອງບັນຊາການ, ອິດສະຫຼະຢືນກົງລາຍງານ:

ຂໍລາຍງານກອງບັນຊາການນ້ອງ... ເອີ! ເຮົາອິດສະຫຼະນັກຮົບປະຈຳພູກູດມາຮອດ, ສະຫາຍຜູ້ຕາງໜ້າກອງບັນຊາການຫຼຽວເບິ່ງອິດສະຫຼະດ້ວຍສາຍຕາທີ່ຮັກໄຄ່.

ນ້ອງອິດສະຫຼະ ! ນ້ອງຈົ່ງຮີບໄປໂຮງໝໍເຄື່ອນທີ່ຂອງກອງບັນຊາການເຂດ...! ອິດສະຫຼະແປກໃຈ, ມືນຕາບັກໃຫຍ່ໆຫຼຽວເບິ່ງສະຫາຍຜູ້ຕາງໜ້າກອງບັນຊາການ.

ຂໍລາຍງານສະຫາຍ ! ເຮົາບໍ່ໄດ້ບາດເຈັບ, ເບິ່ງນີ້ແມ່ສະຫາຍບ່ອນນີ້ແຕ່ຫຼຸ້ນໜ້ອຍດຽວເທົ່ານັ້ນ, ນ້ອງຖືກແພພັນຫົວອອກ... ນີ້ສະຫາຍເບິ່ງໃຫ້ຄັກແມ່ບາດເຈັບພຽງເທົ່ານີ້ໜຶ່ງກໍຈຳຕ້ອງໄປໂຮງໝໍຫວະ... ? ສະຫາຍຜູ້ຕາງໜ້າກອງບັນຊາການຫຼຽວເບິ່ງອິດສະຫຼະດ້ວຍຄວາມຮັກແພງ ແລະ ອີດູ.

ບໍ່ນ້ອງ ! ຫາໄປລະໄປ, ໄປຮອດໂຮງໝໍແລ້ວນ້ອງຈະຮູ້ດອກ... ອິດສະຫຼະແຄ້ນໃຈ! ເຈົ້າ ! ໝົດແຮງບາດໜຶ່ງ ແລະ ຢ່າງພຶດໆອອກຈາກຫ້ອງການບັນຊາການ. ພໍຢຽບເຂົ້າໂຮງໝໍອິດສະຫຼະ ຈົ່ມສີໜ້າຢາກຮ້າຍຕໍ່ບັນດາແພດ.

ພວກອ້າຍເອື້ອຍນ້ອງເບິ່ງແມ່ເປັນພຽງເທົ່ານີ້ກໍສັ່ງໃຫ້ມາໂຮງໝໍ, ບຶດໜຶ່ງສ້ຽນປັກໜາມແທງກໍ່ຊິບອກໃຫ້ມາໂຮງໝໍກໍບໍ່ຈັກ.

ນາງແພດຈັບດອນຢ່າງອອກມາຈັບມືອິດສະຫຼະ

ນ້ອງເອີ້ນຊື່ວ່າ: ອິດສະຫຼະແມ່ນບໍ່ ?

ເອີ ! ແມ່ນແລ້ວ ! ອິດສະຫຼະ ແມ່ນນ້ອງລະ ເອື້ອຍຖາມເຮັດຫຍັງ ?

ບໍ່ ! ເອື້ອຍຖາມມີວຽກນ້ອຍໜຶ່ງ, ເຊີນນ້ອງເຂົ້າມາພີ້ຈັກໜ້ອຍ... ນາງຈັບດອນທັງເວົ້າທັງຈູງແຂນອິດສະຫຼະ ຍ່າງເຂົ້າເມືອຫ້ອງນອນຂອງຄົນເຈັບ.

ເຂົ້າໄປເຮັດຫຍັງ ? ກໍຈັ່ງວ່າມັນເຈັບພຽງເທົ່ານີ້ໜຶ່ງນ່າ... ອິດສະຫຼະເອົາມືໃສ່ຊີ້ໜ້າແດ່ນ... (ໜ້າພາກ) ມັນພຽງແຕ່ໜັງຫຸ້ນໄປໜ້ອຍດຽວໜຶ່ງເທົ່ານັ້ນດອກນາ, ບໍ່ປົວມັນກໍຊິດີເອົາເອງດອກ...

ແຕ່ເມື່ອຍ່າງເຂົ້າໄປຫ້ອງນອນຄົນເຈັບ, ທັນໃດອິດສະຫຼະໄດ້ຮ້ອງຂຶ້ນ: ແມ່ເອີຍ ! ອິດສະຫຼະແລ່ນມາຫາແມ່ແຕ່ຍັງບໍ່ທັນໂອ້ລົມຫຍັງກັບແມ່ອິດສະຫຼະຫຼຽວມາເບິ່ງເຫັນຄົນເຈັບທີ່ນອນຢູ່ເທິງຕຽງ. - ໂອ ! ພໍ່ກອງນອນປົວຢູ່ນີ້ຫວະ ! ເປັນແນວໃດ ? ປາກບາດຂອງພໍ່ກອງກໍ່ໄຄແດ່ແລ້ວບໍ່ ?

ສະຫາຍບົວໄລອິດກັ້ນຕໍ່ຄວາມເຈັບ, ພະຍາຍາມຍິ້ມຫົວ ແລະ ຈ້ອງຕາເບິ່ງອິດສະຫຼະປະກົດວ່າເທື່ອນີ້ເປັນເທື່ອທຳ ອິດທີ່ລາວພົບອິດສະຫຼະ, ລາວແນມເບິ່ງຕັ້ງແຕ່ຫົວຈົນຮອດຕີນແລ້ວພັດຄ່ອຍໆແນມຂຶ້ນທັງເບິ່ງສະຫາຍບົວໄລທັງຈົ່ມ ພຶມພຳ... ໂອ ! ໃຫຍ່ປານນີ້ແລ້ວບໍ ! ສ່ວນອິດສະຫຼະຢືນຊື່ງຢູ່ບໍ່ເຂົ້າໃຈວ່າເປັນຫຍັງສະຫາຍບົວໄລຈິ່ງເບິ່ງໜ້າໂຕ ເອົາແທ້ເອົາວ່າ, ອິດສະຫຼະພະຍາຍາມຍິ້ມຫົວຕໍ່ສະຫາຍບົວໄລ ແລະ ທັນໃດກໍປິ່ນມາເວົ້ານຳແມ່.

ນີ້ແມ່... ເພິ່ນນີ້ໄດ່ເປັນພໍ່ກອງຂອງພວກລູກ, ເພິ່ນບັນຊາພວກລູກຢູ່ເທິງພູກູດ, ເພິ່ນບັນຊາເກັ່ງອີຫຼີ... ອິດສະຫຼະເວົ້າບໍ່ທັນສຸດຄວາມພໍດີສີພອນເລີຍຮ້ອງຂຶ້ນ ແລະ ກອດເອົາລູກຊາຍຢອດນໍ້າໃສສະອື້ນໃຈໄດ້ຄ່ອຍໆໄຫຼອາບແກ້ມ.

ອິດສະຫຼະ ! ລູກບໍ່ຮູ້ຫວະວ່າເພິ່ນເປັນພໍ່ຂອງລູກ ! ບົວໄລ ທີ່ແມ່ເຄີຍເລົ່າສູ່ລູກຟັງຄາວກ່ອນ...

ອິດສະຫຼະອ້າປາກຟັງແມ່ເວົ້າຫຼຽວເບິ່ງແມ່ພັດຫຼຽວເບິ່ງບົວໄລ, ຫຼຽວໄປຫຼຽວມາດ້ວຍສາຍຕາເຊື່ອແດ່ບໍ່ເຊື່ອແດ່ ແລະ ນ້ອງກໍບໍ່ຮູ້ເລື່ອງລາຍສາຍເຫດມັນແມ່ນແນວໃດແທ້... - ພໍ່ຂອງລູກ ! ອິດສະຫຼະຖາມ ແລະ ຄົ້ນຄິດ.

ແມ່ນແລ້ວ ! ພໍ່ຂອງລູກນັ້ນນາ, ເອີ້ນພໍ່ສາແມ່ ! ສະຫາຍບົວໄລຍິ້ມຫົວທັງເວົ້າ

ອິດສະຫຼະ ! ລູກຍັບມາຫາພໍ່ ສິບກວ່າປີທີ່ຜ່ານພົ້ນໄປຈົນມາເຖິງມື້ນີ້ພໍ່ລູກເຮົາຈຶ່ງໄດ້ພົບກັນ, ອິດສະຫຼະຫຍັບ ເຂົ້າມາຫາພໍ່...

ສະຫາຍບົວໄລທັງເວົ້າທັງເດີນອອກມາຫາອິກສະຫຼະສ່ວນວ່າອິດສະຫຼະຍັງຢືນຊຶງຢູ່ລາວຢາກຫຍັບເຂົ້າໄປໃກ້ ສະຫາຍບົວໄລແຕ່ຄືວ່າເປັນສີແນວໜຶ່ງ, ລາວຈຶ່ງບໍ່ຫຍັບເຂົ້າ, ມີແຕ່ຢືນຊຶ່ງຢູ່ຄາວໜຶ່ງຈຶ່ງກະໂດດເຂົ້າກອດເອົາສະຫາຍ ບົວໄລ.

ພໍ່ ! ພໍ່ເອີຍ ! ອິດສະຫຼະບໍ່ເວົ້າຫຍັງໄດ້ອີກ, ປະກົດວ່າມີສິ່ງໃດສິ່ງໜຶ່ງມາອັ່ງແຄ້ນຢູ່ໃນຮູຄໍ, ສະຫາຍບົວໄລຄ່ອຍໆລຸບຫົວ ແລະ ບາລູກຊາຍລາວຫາຍໃຈຍິ້ມຫົວດ້ວຍຄວາມຊື່ນໃຈ.

ອິດສະຫຼະ ! ລູກຊາຍຂອງພໍ່, ລູກໃຫຍ່ປານນີ້ແລ້ວນໍ, ມື້ພົບລູກຢູ່ເທິງພູກູດພຸ້ນ, ພໍ່ກໍບໍ່ນຶກວ່າແມ່ນລູກ... ສະຫາຍບົວໄລຢຸດຢູ່ຄາວໜຶ່ງແລ້ວເວົ້າຕໍ່... ບໍ່ດີໃຈຫຼາຍທີ່ເຫັນລູກໄດ້ໄປຕາມເສັ້ນທາງທີ່ພໍ່ໄປ, ລູກໄດ້ກາຍເປັນນັກຮົບ ປົດປ່ອຍລູກຈຶ່ງສືບຕໍ່ເສັ້ນທາງເດີນຂອງພໍ່, ຈົ່ງສືບຕໍ່ພາລະກິດຂອງພໍ່ແມ່ລຸງປ້າອາວອາຈົ່ງຕັດສິນໃຈສູ້ຮົບໃຫ້ເກັ່ງກ້າ...

ເຈົ້າ ! ຂໍຮຽນພໍ່ກອງ... ເອີ ! ຂໍຮຽນພໍ່, ລູກຂໍປະຕິຍານປະຕິບັດຕາມຄຳສັ່ງສອນຂອງພໍ່, ຫຼັງຈາກມາຢາມພໍ່ແລ້ວລູກຈະຂໍກັບຄືນເມືອປະຈຳພູກູດຄືເກົ່າ, ພ້ອມກັບໝູ່ຄູ່, ຕັດສິນໃຈປົກປັກຮັກສາດິນແດນທີ່ແສນຮັກ ແລະ ຫວງ ແຫນ.

ສະຫາຍບົວໄລງຶກຫົວ:

ແມ່ນ ! ມື້ນີ້ພົບລູກພໍ່ກໍຄິດວ່າຈະເວົ້ານຳລູກຄືແນວນັ້ນເພາະບາງເທື່ອມື້ນີ້ພໍ່ຈະໄດ້ໄປປິ່ນປົວຢູ່ແນວຫຼັງ. ສ່ວນລູກຈົ່ງໄດ້ສືບຕໍ່ເສັ້ນທາງສູ້ຮົບ, ຈົ່ງກັບຄືນເມືອພູກູດ, ບັນດາສະຫາຍຂອງລູກ ແລະ ສະໜາມຮົບກຳລັງລໍຖ້າລູກ...

ຕອນເຊົ້າຂອງມື້ຕໍ່ມາແສງລັດສະໝີຄ່ອຍໆພົ້ນພູກູດທິດຕາເວັນສົ່ງແສງເປັນສາຍໆລອດກີບເມກຂາວຂຶ້ນເມືອສູ່ ທ້ອງຟ້າສີຄາມ, ເຊົ້າມື້ນີ້ທ້ອງຟ້າເຂດພູກູດປະກົດວ່າແຈ້ງສົດໃສ ແລະ ກວ້າງກວ່າທຸກໆມື້, ບັນຍາກາດມິດງຽບມີແຕ່ ຕົ້ນຫຍ້າ ແລະ ໃບໄມ້ຄ່ອຍໆເໜັງຕີງຕາມສາຍລົມພັດ. ບົນເສັ້ນທາງໄປຫາພູກູດມີແຕ່ຂຸມບົ່ມ, ບາງຂຸມຍັງໃໝ່ໆ, ປະກົດວ່າຍັງມີກິ່ນໝື້ຂອງລູກບົ່ມແຕ່ບາງຂຸມມີດິນແດງຢູ່ເທິງປາກຂຸມໄດ້ຄ່ອຍໆເຈື່ອນລົງເພື່ອລົບລ້າງຮ່ອງຮອຍຂອງ ຂຸມບົ່ມ, ຮອງຮອຍຂອງສົງຄາມ, ຫຍ້າ ແລະ ຕົ້ນໄມ້ນ້ອຍເກີດຢູ່ຕາມແຄມປາກຂຸມເຫຼົ່ານັ້ນກຳລັງອອກກໍ່ອອກຈາວ ແລະ ກຳລັງປົ່ງໃບທີ່ຂຽວງາມ. ຄາວໆມີນົກນ້ອຍຄູ່ໜຶ່ງບິນຂ້າມເມືອສູ່ທິດຕາເວັນອອກ ເພື່ອອາບແສງອາລຸນຍາມເຊົ້າ. ຕົ້ນໄມ້ຖືກບົ່ມນາປານຕັດຂາດ ແລະ ເຜົາໄໝ້ດຳປົກຍັງເຫຼືອແຕ່ລຳຕັ້ງຊີ້ຂຶ້ນຟ້າ ແລະ ງ່າຖືກຫັກກຸດຂາດສ້ອຍຫັກທົບລົງ , ແຕ່ຂ້າງຕົ້ນໄມ້ໃຫຍ່ທີ່ຖືກຍິງທຳລາຍເຜົາຜານນັ້ນ, ຂຸມຕົ້ນໄມ້ນ້ອຍກຳລັງຂຽວງາມ ແລະ ເຕີບໃຫຍ່ນັບມື້ນັບສູງຂຶ້ນ ແລະ ມີຊຸມໄມ້ນ້ອຍຊຸດໜຶ່ງເກີດຂຶ້ນສືບແແທນຕໍ່ກັນເປັນຊັ້ນເປັນຊັ້ນປົກຫຸ້ມໄປດ້ວຍໃບຂຽວອັນດົກໜາ.

ສີພອນຈັບເອົາບາໂລຂອງອິດສະຫຼະຍາງອອກຈາກໂຮງໝໍແຕ່ພໍໄປໄດ້ 4-5 ບາດກ້າວອິດສະຫຼະເລີຍເວົ້າວ່ານຳແມ່ ວ່າ:

ໄດ້ແລ້ວແມ່ ! ລູກຈະໄປເອງກໍ່ໄດ້, ແມ່ບໍ່ຕ້ອງໄປສົ່ງລູກອີກເສັ້ນທາງອອກໄປຫາພູກູດກັນດານຫຼາຍແມ່ບໍ່ຄວນ ໄປອີກແລ້ວມາໃຫ້ລູກຂໍບາໂລສາ !...

ບໍ່ ! ລູກປະໃຫ້ແມ່ໄປສົ່ງລູກຮອດຕີນພູກູດແລ້ວແມ່ຈະກັບຄືນເຮືອນ, ແມ່ຢາກເຫັນລູກໄປຮອດບ່ອນສູ້ຮົບ ຂອງລູກ...

ແມ່ ! ຈົ່ງເຊື່ອໝັ້ນລູກຊາຍຂອງແມ່, ລູກໃຫຍ່ແລ້ວທາງເສັ້ນນີ້ລູກເຄີຍໄປມາຕັ້ງຫຼາຍເທື່ອແລ້ວ, ລູກໄປຄາວ ດຽວກໍ່ຮອດມັນໂລດນາ...

ອິດສະຫຼະ ! ທຸກເທື່ອແມ່ບໍ່ໄດ້ໄປສົ່ງລຸກແຕ່ເທື່ອນີ້ລຸກຈົ່ງປະໃຫ້ແມ່ສົ່ງລູກໄປຮອດຢາມໜຶ່ງ !

ອິດສະຫຼະຂືນຄວາມແມບໍ່ໄດ້, ເລີຍໃຫ້ແມ່ໄປສົ່ງຮອດຍາມໜຶ່ງ. ແຕ່ເມື່ອໄປຮອດເຄິ່ງຫຼັກອິດສະຫຼະພັດເວົ້ານຳ ແມ່ເປັນສຽງຢ່າງເດັດດ່ຽວ:

ໄດ້ແລ້ວແມ່ ! ດຽວນີ້ກ້າວເຂົ້າສູ່ເຂດກັນດານແລ້ວ, ເຮືອບິນອາເມລິກາມາຍິງເວລາໃດກໍ່ບໍ່ຮູ້, ລຸກບໍ່ໃຫ້ແມ່ໄປຕື່ມອີກ.

ສີພອນຫາຍໃຈໃຫຍ່ແລ້ວສັ່ງລູກ:

ລູກຍັງຈື່ບໍ່ຄຳສັ່ງສອນຂອງພໍ່ ? ແມ່ຈະບໍ່ເວົ້າຫຍັງຕື່ມອີກມີແຕ່ໃຫ້ລູກຈົ່ງລະມັດລະວັງ... ສຽງປາກຂອງສີພອນ ສັ້ນໆ ແລະ ຄ່ອຍໆເຂົ້າ, ສຸດທ້າຍກໍເລີຍເວົ້າບໍ່ອອກສຽງອີກ, ມີແຕ່ຫຼຽວເບິ່ງໜ້າລູກຊາຍ.

ອິດສະຫຼະພາຍບາໂລສອງມືຈັບປີ້ນອາກາ.

ແມ່ຈົ່ງອຸ່ນອ່ຽນໃຈ, ຢ່າເປັນຫ່ວງນຳລູກຫຼາຍ, ຖ້າມີເວລາລູກຈະກັບມາຢາມແມ, ເວົ້າແລ້ວອິດສະຫຼະຄ່ອງໆ ຢ່າງເປັນບາດກ້າວຢ່າງໜັກແໜ້ນຄືນເມືອຫາພູກູດເຫຼັກກ້າທີ່ເຕັມໄປດ້ວຍບາດແຜຂອງຊຸມຂົ່ມດ ຮູບຮ່າງຂອງລາວນັບ ມື້ນັບໄກໄປສີພອນແນມຢູ່ກາງທາງແນມເບິ່ງຕາມຫຼັງລູກຊາຍ, ຄາວໆອິດສະຫຼະພັດປິ່ນໜ້າມາກວັກມືຫາແມ່ຈົນວ່າ ຮູບເງົາຂອງອິດສະຫຼະລັບໄປໃນປ່າໄມ້ສີຂຽວເບື້ອງໜ້າແຕ່ດົນແລ້ວສີພອນຍັງຢືນຊື່ເບິ່ງຕາມເສັ້ນທາງ, ລາວປາກົດເຫັນ ພາບລູກຊາຍກຳລັງປີນຂຶ້ນພູກູດ, ຮູບຮ່າງລູກຊາຍນັບມື້ນັບສູງຂຶ້ນຕາມລວງສູງຂອງພູ, ແພຈ້ອງແຊມກາຍປິວສະບັດ ຕາມສາຍລົມພັດ, ສຸດທ້າຍສີພອນປະກົດເຫັນເຫງົາຂອງອິດສະຫຼະກຳລັງຢືນຢູ່ພູສູງຢ່າງສະຫງ່າອົງອາດ, ຮູບຮ່າງຂອງ ອິດສະຫຼະຄືດັ່ງໄດ້ຕິດຢູ່ເທິງທ້ອງຟ້າສີຄາມທີ່ສົດໃສ.

# ບົດຕົວຢ່າງ
# ບົດວິໄຈບົດເລື່ອງ "ແຍກທາງຄືແຍກຮັກ"

## 1. ທີ່ມາຂອງເລື່ອງ

ບົດເລື່ອງ " ແຍກທາງຄືແຍກຮັກ " ແມ່ນຜົນງານການປະດິດແຕ່ງຂອງ ທ້າວ ບົ່ງຖໍ່, ແຕ່ງຂຶ້ນເມື່ອປີ 2012 ເຊິ່ງ ເປັນບົດເລື່ອງທີ່ສ່ອງແສງເຖິງຄູ່ບ່າວສາວທີ່ໄດ້ຈາກກັນໄປຮໍ່າຮຽນຄົນລະຫົນແຫ່ງຈົນກວ່າໃນທີ່ສຸດຕ່າງຄົນກໍມີຄົນໃໝ່ ແລະ ຈາກກັນໄປຢ່າງບໍ່ເຄີຍຄາດມາກ່ອນເລີຍ.

## 2. ເນື້ອໃນລວມ

ເວົ້າເຖິງຄວາມຮັກຂອງຄູ່ບ່າວສາວຄູ່ໜຶ່ງທີ່ຕ້ອງໄດ້ຈາກກັນໄປຄົນລະແຫ່ງຫົນເພື່ອການສຶກສາຮໍ່າຮຽນ ຍ້ອນ ຄວາມບໍ່ເຂົ້າໃຈກັນ ແລະ ບໍ່ເຊື່ອໝັ້ນກັນຈຶ່ງເປັນສາເຫດເຮັດໃຫ້ຄວາມຮັກຕ້ອງແຕກແຍກກັນ, ຕ່າງຝ່າຍກໍມີຄົນຮັກ ໃໝ່ ແລະ ຈາກກັນໄປຢ່າງບໍ່ມີວັນກັບຄືນມາຮັກກັນ.

## 3. ແບ່ງຕອນ

ບົດເລື່ອງ " ແຍກທາງຄືແຍກຮັກ " ແປງອອກເປັນສອງຕອນຄື:

- ຕອນທີໜຶ່ງ ແຕ່ຕົ້ນຈົນຮອດ ໄດ້ເຂົ້າຮຽນເປັນປົກກະຕິ.

ເນື້ອໃນເວົ້າເຖິງ ການຈາກກັນໄປຮຽນຄົນລະຫົນແຫ່ງຂອງຄູ່ບ່າວ-ສາວລະຫວ່າງຕາດໍາ ກັບ ຄໍາແພງ.

- ຕອນທີສອງ ແຕ່ຈາກວັນເປັນເດືອນ ຈົນເຖິງສຸດທ້າຍ.

ເນື້ອໃນເວົ້າເຖິງ ຄວາມບໍ່ເຂົ້າໃຈກັນ ແລະ ບໍ່ເຊື່ອໃຈກັນຂອງຄູ່ບ່າວສາວຈົນເຖິງຂັ້ນຕ່າງຝ່າຍຕ່າງມີຄົນຮັກໃໝ່ແຍກທາງກັນໄປ.

## 4. ວິເຄາະ

ການສຶກສາໃນປັດຈຸບັນແມ່ນໄດ້ພັດທະນາຫຼາຍພໍສົມຄວນເມື່ອທຽບກັບສິບປີກ່ອນໜ້ານີ້ ເພາະວ່າ ອຸປະກອນ ທີ່ນໍາໃຊ້ເຂົ້າໃນການຮຽນ-ການສອນກໍທັນສະໄໝ, ໂຮງຮຽນກໍແຜ່ຫຼາຍມີຄົບຕາມແຕ່ລະບ້ານ. ດັ່ງນັ້ນ, ບໍ່ວ່າຈະແມ່ນຜູ້ ທີ່ຢູ່ໃນຕົວເມືອງ ຫຼື ຜູ້ທີ່ຢູ່ເຂດຫ່າງໄກສອກຫຼີກກໍລ້ວນແລ້ວແຕ່ໄດ້ຮັບການສຶກສາຮໍ່າຮຽນເຊັ່ນດຽວກັນ. ເນື່ອງຈາກວ່າ ທຸກຄົນໄດ້ເລັ່ງໃສ່ດ້ານການສຶກສາຈຶ່ງເຮັດໃຫ້ພໍ່ແມ່ກັບລູກໆ ຫຼື ຄູ່ບ່າວສາວຕ້ອງໄດ້ພັດພາກຈາກກັນໄປຄົນລະຫົນ ແຫ່ງ. ເຊິ່ງມັນໄດ້ສະແດງອອກໃນບົດເລື່ອງຄື ຕາດໍ ແລະ ຄໍາແພງໄດ້ພັດພາກຈາກກັນໄກຮຽນຢູ່ຄົນລະຫົນແຫ່ງເຊັ່ນ ຕາດຖືກໄປຮຽນທີ່ມະຫາວິທະຍາໄລແຫ່ງຊາດ ( ວຽງຈັນ ) ສ່ວນຄໍາແພງພັດຖືກໄປຮຽນທີ່ວິທະຍາໄລຄູຫຼວງພະບາງ. ຄົນເຮົາເມື່ອຢູ່ໄກກັນຍອມຄິດອດຄິດເຖິງເຊິ່ງກັນ ແລະ ກັນ. ແຕ່ຈະເຮັດແນວໃດໄດ້, ຖ້າຈະຢູ່ແຕ່ບ້ານ, ອາຊີບກໍບໍ່ມີ, ຄວາມຮູ້ກໍ່ມີໜ້ອຍ, ອາໄສແຕ່ຫາກິນຕາມທໍາມະຊາດມັນກໍເປັນບັນຫາຍາກທີ່ຈະເຮັດໃຫ້ຊີວິດການເປັນຢູ່ຂອງເຮົາມີຄຸນ ນະພາບ. ສະນັ້ນ, ຈຶ່ງເວົ້າໄດ້ວ່າບັນຫາດັ່ງກ່າວມັນໄດ້ຮຽກຮ້ອງໃຫ້ຄົນເຮົາຈໍາຕ້ອງພັດພາກຈາກຄອບຄົວ, ພີ່ນ້ອງໂດຍ ສະເພາະແມ່ນຄົນຮັກເພື່ອໄປສຶກສາຫາວິຊາຊີບໃສ່ຕົນເອງໃຫ້ຫຼຸດພົ້ນຈາກຄວາມທຸກຍາກລໍາບາກ.

ເມື່ອທຸກຄົນໄດ້ພັດພາກຈາກກັນໄປຄົນລະບ່ອນແລ້ວ ແນ່ນອນວ່າສະພາບແວດລ້ອມທີ່ຢູ່ອ້ອມຂ້າງຍອມມີຄວາມແຕກຕ່າງກັນ. ເຊິ່ງສະພາບແວດລ້ອມດັ່ງກ່າວມັນມີຜົນສະທ້ອນເຖິງແນວຄິດຈິດໃຈຂອງຄົນເຮົາຈາກສິ່ງທີ່ບໍ່ທັນ ຮູ້-ເຫັນ ກໍ່ຮັບຮູ້ ແລະ ໄດ້ນໍາໃຊ້ຈົນໃນທີ່ສຸດແນວຄວາມຄິດແບບດັ່ງເດີມຂອງຄົນເຮົາກໍປ່ຽນແປງໄປ. ອີກບັນຫາໜຶ່ງຜູ້ ຄົນທີ່ເຄີຍເປັນຄູ່ຮັກຄູ່ແພງກໍເກີດມີຄວາມລະແວງກັນ, ຍ້ອນບາງຄັ້ງຫຼົງເຊື່ອຄໍາເວົ້າຂອງຄົນອື່ນ, ບໍ່ເຊື່ອໝັ້ນຄົນຮັກຂອງ

ຕົນຈຶ່ງເຮັດໃຫ້ບໍ່ເຂົ້າໃຈກັນ ແລະ ແຕກແຍກຄວາມຮັກໄປຄົນລະທາງ. ເຊິ່ງສະແດງອອກໃນບົດເລື່ອງຄື ວັນເວລາຜ່ານ ໄປຫຼາຍປີຕາດໍາ ແລະ ຄໍາແພງເກີດມີຄວາມບໍ່ເຂົ້າໃຈກັນຈົນເຖິງຂັ້ນຕ້ອແຍກກັນໄປຄົນລະທາງເຊິ່ງໃຜໆກໍບໍ່ເຄີຍຄາດວ່າ ມັນຊິເປັນໄປແບບນີ້ໄດ້.

## 5. ສະຫຼຸບ

- **ດ້ານເນື້ອໃນ**

ບົດເລື່ອງໄດ້ສ່ອງແສງໃຫ້ເຫັນເຖິງສະພາບສັງຄົມລາວໃນປັດຈຸບັນ ເຊິ່ງການສຶກສາໄດ້ເຮັດໃຫ້ຄົນຮັກພັດພາກ ຈາກກັນໄປຄົນລະທິບແຫ່ງ ແລະ ກໍເປັນຕົ້ນເຫດເຮັດໃຫ້ຄວາມຮັກຂອງຄູ່ບ່າວສາວຖືກແຕກແຍກກັນຍ້ອນຄວາມບໍ່ ເຂົ້າໃຈກັນ ແລະ ຄວາມບໍ່ເຊື່ອໃຈກັນນັ້ນເອງ.

- **ດ້ານສິລະປະ**

ບົດເລື່ອງນີ້ຂ້າພະເຈົ້າໄດ້ນໍາໃຊ້ຄໍາສັບທໍາມະດາເຂົ້າໃນການປະດິດແຕ່ງ, ອ່ານແລ້ວເຂົ້າໃຈງ່າຍ, ຈັບໃຈຄວາມໄດ້ ດີ, ການພັນລະນາຮູບພາບການເຄື່ອນໄຫວຂອງຕົວລະຄອນແມ່ນບໍ່ສັບສົນ, ບົດເລື່ອງຕໍ່ເນື່ອງກັນດີ, ສາມາດສ້າງຄວາມ ສະເທືອນໃຈ ແລະ ດຶງດູດຈິດໃຈຜູ້ອ່ານ-ຜູ້ຟັງບໍ່ຫຼາຍກໍໜ້ອຍ.

## ບົດເລື່ອງ
## "ແຍກທາງຄືແຍກຮັກ"

ຕອນເຊົ້າມື້ໜຶ່ງຂອງຕົ້ນເດືອນ 10 ອາກາດປອດໂປ່ງ ຕາເວັນພວມສ່ອງແສງພົ້ນຈາກຂອບຟ້າລອດຈາກກີບເມກ ຂາວເຮັດໃຫ້ທ້ອງຟ້າແຈ້ງສະຫວ່າງເປັນສີຄາມໂອບອ້ອມໄປທົ່ວບ້ານໜ້ອຍແຫ່ງໜຶ່ງ ທີ່ຕັ້ງຢູ່ເທິງສັນພູ ຊື່ບ້ານຜາຂາວ ເຊິ່ງຢູ່ເຂດຫ່າງໄກຊອກຫຼີກຈາກຕົວເມືອງຫຼວງພະບາງປະມານ ຮ້ອຍກວ່າຫຼັກ ໃນມື້ນັ້ນແມ່ນມີບັນບັນຍາກາດອັນ ເບີກບານມ່ວນຊື່ນເປັນພິເສດຍ້ອນວ່າ ມີທັງສຽງນົກນ້ອຍຮ້ອງ, ສຽງໄກ່ຂັນ, ສຽງຂັບສຽງລໍາ-ຮ້ອງເພງຂອງໜຸ່ມສາວ ປະຊາ ຊົນທີ່ພວມຫຼັ່ງໄຫຼອອກຈາກບ້ານໄປເຮັດໄຮ່ເຮັດນາ ນອກນັ້ນ ຍັງເຫັນພວກນ້ອງນ້ອຍນັກຮຽນປະຖົມອະນຸບານ ພວມຍ່າງເປັນໝູ່ຄະນະໄປໂຮງຮຽນຢ່າງຄຶກຄື້ນ ສ່ວນຄອບຄົວຂອງ ຄໍາແພງກໍາລັງກິນເຂົ້າເຊົ້າຢູ່ກໍຫຼຽວເຫັນ ຕາດໍາທີ່ ເປັນເພື່ອນຮ່ວມຫ້ອງຮຽນ ແລະ ຄູ່ຮ່ວມຊີວິດໃນຝັນ ເຊິ່ງຕ່າງຝ່າຍລ້ວນແຕ່ໄດ້ຮັບຄວາມເຫັນດີເຫັນພ້ອມຈາກພໍ່ແມ່ ພີ່ນ້ອງ ພຽງແຕ່ຄອຍມື້ທີ່ທັງສອງໄປຮຽນຕໍ່ວິຊາຊີບ ແລະ ຈົບຈາກການສຶກສາເທົ່ານັ້ນ ຍ່າງເຊິ່ງໜ້າປະຕູມາແຕ່ໄກ ບວກກັບໃບໜ້າຍິ້ມແຍ້ມແຈ່ມໃສ ແລະ ນຸ່ງຊຸດເປັນລະບຽບຮຽບຮ້ອຍຄືຊິແມ່ນໄປງານ ພໍ່ມາເຖິງເຮືອນເພິ່ນກໍຖາມວ່າ:

ຕາດໍາ. ອ້າຍຄໍາແພງ ອ້າຍບໍ່ໄປຮຽນຕໍ່ບໍ?

ຄໍາແພງ. ສໍາລັບເລື່ອງນັ້ນ ແມ່ນຍັງບໍ່ທັນຮູ້ເທື່ອ ເພາະຜົນການສອບເສັງຂອງອ້າຍຍັງບໍ່ທັນອອກເທື່ອ, ບໍ່ຮູ້ວ່າ ອ້າຍຊິເສັງຕິດຫຼືບໍ່ ແລະ ນ້ອງເດ?

ຕາດໍາ. ມື້ນີ້ນ້ອງກະກຽມຊິອອກເດີນທາງໄປວຽງຈັນແລ້ວໄດ໋ ອ້າຍບໍ່ຮູ້ບໍ?

ຄໍາແພງ. ນ້ອງໄປວຽກຫຍັງ? ຄືວ່າຟ້າວແທ້!

ຕາດໍາ. ນ້ອງໄດ້ຕົວເລກຂອງເມືອງໄປຮຽນຢູ່ມະຫາວິທະຍາໄລແຫ່ງຊາດ 5 ປີ ດ້ວຍເຫດນັ້ນນ້ອງຈຶ່ງກະກຽມ ອອກເດີນໄປມື້ນີ້ ເພາະທາງຫ້ອງການສຶກສາເມືອງເພິ່ນບອກວ່າໃຫ້ປະກອບເອກະສານແລ້ວໄປສະເໜີຕົວເຂົ້າຮຽນຢ່າງຮີບດ່ວນຖ້າກາຍອາທິດນີ້ແມ່ນທາງໂຮງຮຽນພຸ້ນຊິປິດຮັບຄໍາຮ້ອງແລ້ວ. ເວົ້າມາ ຮອດນີ້ຄໍາແພງກໍຕັດຄວາມບາງ ແລະ ເວົ້າວ່າ:

ຄໍາແພງ. ອ້າຍຂໍສະແດງຄວາມດີໃຈນໍາເດີ ນ້ອງຈົ່ງຟັງເອົາໄວ້ ນໍ້າບໍ່ໄດ້ຖ້າປາ ການເວລາບໍ່ໄດຖ້າຄົນເຮົາສະນັ້ນ, ນ້ອງຈົ່ງຕັ້ງໃຈດໍາເນີນໜ້າວຽກຂອງຕົນໃຫ້ສໍາເລັດດັ່ງຄວາມຫວັງຂອງສອງເຮົາ ເຖິງວ່າອ້າຍບໍ່ໄດ້ໄປ

ຮຽນອ້າຍກໍດີໃຈແລ້ວ ພິເສດ ຂໍພຽງນ້ອງບໍ່ລືມຄໍາໝັ້ນສັນຍາຂອງເຮົາ, ຄວາມຝັນຂອງເຮົາຈະຍືນຍົງ ຄົງຕົວນັ້ນມັນຂຶ້ນຢູ່ທີ່ໃຈຂອງເຮົາເທົ່ານັ້ນ ໄປ! ດຽວຊິບໍ່ທັນລົດໂດຍສານ.

ຕາດໍາຄອບພໍ່ແມ່ຂອງຄໍາແພງແລ້ວທາງສອງເລີຍຍ່າງໄປຖ້າລົດ ສາຍຫຼວງພະບາງ-ວຽງຈັນທີ່ແຄມທາງ ບໍ່ພໍເທົ່າໃດຊົ່ວໂມງກໍ່ເຫັນລົດເມແລ່ນຕາມສາຍທາງອັນຄົດໂຄ້ງຈາກເປີ້ນພູທາງທິດເໜືອ ອັນເຮັດໃຫ້ຈິດໃຈຂອງເຂົາທັງສອງເຕັ້ນເປັນບາດ ເປັນບາດຢ່າງແຮງ ຄືແຕ່ວ່າມີສິ່ງໃດໜຶ່ງມາກະທົບໃສ່ ນີ້ເປັນຄັ້ງທໍາອິດທີ່ເຂົາໄດ້ພັດພາກຈາກກັນ ເຊິ່ງຕ່າງຝ່າຍບໍ່ມີໃຜທີ່ຈະກັ້ນນໍ້າຕາໄຫຼໄວ້ໄດ້ເຮັດໃຫ້ ນໍ້າຕາໄຫຼເປັນສາຍລົງອາບແກ້ມ ໂດຍບໍ່ໄດ້ອັບອາຍໃຫ້ຄົນໆອ້ອມ ຂ້າງ ຍ້ອນຄວາມເປັນຫ່ວງເປັນໃຍ ແລະ ຄວາມຮັກນັ້ນເອງ. ກ່ອນນາງຈະຈາກນາງໄດ້ມອບຜ້າເຊັດນ້ອຍຜືນ

ໜຶ່ງ ແລະ ໃຫ້ຄຳໝັ້ນສັນຍາກັບຄຳແພງວ່າ ຈະຊື່ສັດບໍລິສຸດ, ຕັ້ງໃຈຮຽນເພື່ອນຳເອົາໃບປະກາດມາສູ່ພໍ່ແມ່ກໍຄືອ້າຍ, ໃຫ້ອ້າຍຈື່ງ ຄອຍຖ້າວັນທີ່ນ້ອງກັບມາເດີ ແລະ ແລ້ວພວກເຂົາກໍອຳລາຈາກກັນໄປ.

ໜຶ່ງອາທິດຜ່ານໄປ ຄຳແພງຢູ່ດ້ວຍຄວາມໂສກເສົ້າຫງອມເຫງົາ ເຖິງຢ່າງໃດກໍຕາມ ພວກເຂົາກໍຕິດຕໍ່ສົ່ງຂ່າວຫາ ກັນທາງໂທລະສັບພາຍໃນແຕ່ລະມື້ຢ່າງບໍ່ຂາດສາຍ. ເຊົ້າວັນຕໍ່ມາສຽງໂທລະສັບຕັ້ງໂຕະດັງເປັນບາດເປັນບາດຢູ່ເທິງໂຕະ ໃຫຍ່ ອ້າຍຂອງຄຳແພງຮັບສາຍ ອາໂລ ນ້ອງຕ້ອງການລົມກັບ ຄຳແພງແມ່ນບໍ? (ຄາດແນ່ວ່າແມ່ນແຟນຂອງນ້ອງຕົນ) ແຕ່ຊໍ້າພັດຍິນສຽງຜູ້ຊາຍຕອບ ເຈົ້າແມ່ນແລ້ວ ຂໍລົມກັບລາວແດ່ ອັນພາໃຫ້ຜູ້ເປັນອ້າຍຕົກສະເງີ້ຢຸດໄປດົນເຕີບເພາະກຳ ລັງຄິດວ່າ ແຕ່ລະຄັ້ງລ້ວນແຕ່ແມ່ນສາຍຂອງແຟນຄຳແພງ ບໍ່ເຄີຍມີໃຜໂທຫາແຕ່ຄັ້ງນີ້ຄືແປກແທ້ ຄິດແລ້ວກໍ່ຮ້ອງຄຳ ແພງມາລົມນຳ ໝູ່ຮັກຂອງລາວຊື່ປານທີ່ເສັງຕິດສ້າງຄູທີ່ຫຼວງພະບາງຊຸດທຳອິດໄດ້ບອກວ່າລາຍຊື່ເສັງເຂົ້າຮຽນສ້າງຄູ ຊຸດທີ 2 ອອກແແລ້ວ ມີຊື່ໂຕອອກນຳ, ໂຕຊິມາຮຽນບໍ່ ຖ້າຕົກລົງຮຽນໃຫ້ລົງມາໄວໆເດີ. ຄຳແພງຕອບ ເອົາໄວ້ເປີກສາ ນຳພໍ່ແມ່ອ້າຍເອື້ອຍກ່ອນເປັນແນວໃດຊິໂທຫາ ຂອບໃຈເດີທີ່ໂທມາບອກ. ຫຼັງຈາກຂໍຄວາມເຫັນນຳພໍ່ແມ່ອ້າຍເອື້ອຍ ແລ້ວແພງກໍກະກຽມເຄື່ອງໃຊ້ຂອງສອຍຕ່າງໆ ລວມທາງເອກະສານປະກອບການສະເໜີຕົວເຂົ້າຮຽນ ແລ້ວອອກ ເດີນທາງໄປຫຼວງພະບາງ. ພໍໄປເຖິງ ປານກໍ່ເປັນຜູ້ໜຶ່ງທີ່ຄອຍໃຫ້ຄວາມຊ່ວຍເຫຼືອຢ່າງເຕັມທີ່ໃນທຸກໆໜ້າວຽກຈົນສຳ ເລັດ ແລະ ໄດ້ເຂົ້າຮຽນເປັນປົກກະຕິ.

ຈາກວັນເປັນເດືອນ ຈາກເດືອນເປັນພາກຮຽນ ແຕ່ຮັກຂອງຕາດຳ ແລະ ຄຳແພງກໍຍັງເໝືອນ ເດີມ, ຍັງຕິດຕໍ່ຫາ ກັນເໝືອນເດີມ ສິ່ງທີ່ເຂົາທັງສອງປາຖະໜາ ແລະ ຄິດໄວ້ໃນໃຈສະ ເໝີຄື ວັນໃດໜຶ່ງທີ່ໄດ້ຢູ່ໃກ້ກັນ ຊິຫາໂອກາດດີໆ ນັ່ງລະບາຍຄວາມຮູ້ສຶກຂອງຕົນກ່ຽວກັບການຢູ່ຫ່າງໄກກັນອອກສູ່ກັນຟັງວ່າໃຜຊິຄິດຮອດໃຜຫຼາຍກວ່າກັນ ພິເສດກວ່າ ນັ້ນແມ່ນວັນທີ່ໄດ້ຢູ່ຮ່ວມບ່ອນ-ນອນຕຽງດຽວກັນເທົ່ານັ້ນ.

ພາຍຫຼັງທີ່ຄຳແພງເສັງພາກຮຽນທີໜຶ່ງແລ້ວ ພວກເຂົາກໍນັດກັນວ່າຊິກັບບ້ານພາຍໃນມື້ດຽວກັນເພື່ອຈະໄດ້ພົບ ກັນໃນມື້ນັ້ນ ແຕ່ເມື່ອຄິດໄປຫາເລື່ອງການຮຽນແລ້ວ ຕາດຳຄົງຊິບໍ່ໄດ້ກັບເທື່ອ ເພາະກຳລັງກະກຽມສອບເສັງ ຕາດຳຈິ່ງ ໄດ້ບອກກັບຄຳແພງ ເປັນສຽງຈືດໆຈາງວ່າ:

ຕາດຳ. ໂດຍອີງໃສ່ສະຖານະການຂອງນ້ອງແລ້ວ ບາງເທື່ອນ້ອງຊິບໍ່ໄດ້ກັບເພາະອາທິດໜ້ານ້ອງຊິເສັງພາກຮຽນທີ່ໜຶ່ງແລ້ວ ໄວ້ໃຫ້ນ້ອງເສັງແລ້ວ ເຮົາຈິ່ງຄ່ອຍນັດກັບບ້ານອີກ ຫວັງວ່າອ້າຍຄົງຈະເຂົ້າໃຈດີ.

ຄຳແພງ. ບໍ່ເປັນຫຍັງ ຈົ່ງຕັ້ງໃຈຮຽນ-ເສັງໃຫ້ໄດ້ ຕໍ່ກັບບັນຫາທີ່ເຮົາຈະພົບກັນນັ້ນ ມັນແມ່ນເລື່ອງສ່ວນຕົວເທົ່ານັ້ນ ເພື່ອອະນາຄົດທີ່ດີ ນ້ອງຕ້ອງດຳເນີນໜ້າວຽກຂອງຕົນໃຫ້ສຳເລັດກ່ອນ.

ຕາດຳ. ຝາກບອກພໍ່ແມ່ຂອງສອງເຮົາດ້ວຍວ່ານ້ອງບໍ່ທັນກັບເມືອຢາມເພິ່ນເທື່ອ ແລ້ວເຂົາກໍວາງສາຍລົງ. ສອງອາທິຜ່ານໄປຕາດຳເສັງແລ້ວແຕ່ກໍບໍ່ໄດ້ກັບບ້ານເນື່ອງຈາກວ່າໂຮງຮຽນມະຫາວິທະໄລແຫ່ງຊາດ ເປີດຮຽນ ເທີມຕໍ່ໄປອີກແລ້ວ ຈາກຄວາມເປັນຈິງດັ່ງກ່າວເຮັດໃຫ້ພວກເຂົາທັງສອງບໍ່ໄດ້ພົບກັນ ຍ້ອນວ່າຝ່າຍໜຶ່ງກັບບ້ານສ່ວນ ອີກຝ່າຍໜຶ່ງຍັງດຳການຮຽນບໍ່ທັນສິ້ນສຸດ ແລະ ເມື່ອຝ່າຍໜຶ່ງດຳເນີນໜ້າວຽກສຳເລັດໄດ້ກັບບ້ານ ແຕ່ອີກຝ່າຍໜຶ່ງພັດອອກຈາກບ້ານໄປຮຽນແລ້ວ. ຈົນເຖິງຍາມພັກແລ້ງກໍ່ເຊັ່ນດຽວກັນ ຄຳແພງໄດ້ກັບບ້ານ ແຕ່ ຕາດຳຍັງຄາຮຽນຢູ່ ແລະ ຍັງຈະຕ້ອງໄດ້ໄປລົງປະສົບການເກັບກຳຂໍ້ມູນໃນຊ່ວງພັກແລ້ງອີກ ໝາຍວ່າພວກເຂົາຊິບໍ່ໄດ້ພົບໜ້າສົບຕາຄືເກົ່າ ປຽບ ເໝືອນກັບຫົນທາງທີ່ແຍກອອກເປັນສອງທາງທີ່ນັບມື້ນັບໄປໄກເລື້ອຍໆບໍ່ລ້ຽວກັບມາຊອດກັນ.

ວັນເວລາແກ່ຍາວໄປສອງປີສາຍພົວພັນລະຫວ່າງຕາດຳ ແລະ ຄຳແພງນັບມື້ນັບໜ້ອຍຖອຍລົງ, ການຕິດຕໍ່ສົ່ງ ຂ່າວໂທຫາກັນກໍຈືດໆຈາງໆກ້າວໄປເຖິງຄວາມບໍ່ເຂົ້າໃຈກັນເຊິ່ງໃຜໆກໍຄິດວ່າເຂົາຄົງຈະມີຄົນອື່ນມານັ່ງໃນຫົວໃຈແທນ ແລ້ວ ແຕ່ເນື້ອແທ້ຕອນນີ້ຮັກຂອງເຂົາທັງສອງຍັງຝັງເລິກຢູ່ໃນຫົວໃຈຕະຫຼອດເວລາ ຍ້ອນການຫົງຫ່ວງເກີນໄປຈຶ່ງເກີດ ມີບັນຫາຖົກຖຽງກັນ ແລະ ຕ່າງຝ່າຍເກີດຄວາມບໍ່ເຊື່ອໝັ້ນຕໍ່ກັນຕະຫຼອດມາ.

ໄລຍະຕໍ່ມາຄຳແພງໄດ້ໄປສະມັກເຮັດວຽກຢູ່ຮ້ານອາຫານແຫ່ງໜຶ່ງທີ່ຕົນພູສີ ເລີຍພົບເພື່ອນຍິງຄົນໜຶ່ງຊື່ບົວຄຳ ເຊິ່ງເຂົາຮູ້ຈັກກັນດ້ວຍການຊ່ວຍເຫຼືອກັນມຽນເຄື່ອງຂອງໃນເວລາປິດຮ້ານ ເມື່ອໝູ່ຮ່ວມຫ້ອງຮຽນຂອງລາວຮັບຮູ້ເລື່ອງ ເຊັ່ນນັ້ນ ຈິ່ງມັກເວົ້າຢື້ເຢີ້ຍລາວວ່າ “ ແອບມີກິກແລ້ວຫຼືງລືມແຟນເກົ່າບໍ່ດີ! " ແຕ່ລາວກໍພະຍາຍາມອະທິບາຍໃຫ້ພວກ ເຂົາເຂົ້າໃຈກ່ຽວກັບການພົວພັນຂອງລາວກັບ ບົວ ຄຳວ່າ ນາງເປັນພຽງເພື່ອນຮ່ວມງານ ແລະ ນາງກໍມີແຟນທີ່ ໃກ້ຊິດຕິດແທດແລ້ວ ຊິໃຫ້ເຮົາແອບມັກເຂົາໄດ້ດ້ວຍວິທີໃດ ອີກດ້ານໜຶ່ງ ຕົວເຮົາກໍມີຜູ້ທີ່ຢູ່ໃນຄວາມຝັນເຊິ່ງບໍ່ສາມາດ ຈະແປງຮັກໃຫ້ໃຜໄດ້ອີກ ແຕ່ກໍບໍ່ມີໃຜເຊື່ອໃນສາຍຕາ ແລະ ຄຳເວົ້າຂອງລາວ ເຫດການ

ດັ່ງກ່າວຈຶ່ງເນື່ອງນັ້ນໄປຮອດຫູ ຂອງຕາດຳເຮັດໃຫ້ຕາດຳເຂົ້າໃຈວ່າຄຳແພງມີແຟນແທ້ໆແລ້ວຈຶ່ງຕັດສິນໃຈຕັດຂາດ ຄວາມຜູກພັນ ແລະ ຄວາມຮັກຂອງ ເຂົາທັງສອງທີ່ເຄີຍມີໃຫ້ກັນອັນເປັນເວລາ ຫ້າ ກວ່າປີນັ້ນລົງໂດຍບໍ່ໄດ້ຄິດ ພິຈາລະນາຫຍັງເລີຍ ເຖິງຄຳແພງຈະອະທິບາຍ ຈົນໝົດຄວາມສາມາດແຕ່ນາງກໍບໍ່ຍອມຟັງຢ່າງເດັດຂາດ ນາງຮັກ ສາ ຄຳເວົ້າຄຳດຽວຄື "ນັບແຕ່ມື້ນີ້ເປັນຕົ້ນໄປບໍ່ຕ້ອງ ຮູ້ຈັກກັນອີກ ຄິດແຕ່ວ່າເຮົາບໍ່ເຄີຍຮູ້ຈັກກັນກໍພໍ". ແລ້ວນາງກໍເປີດ ໃຈໄປຮັກກັບຊາຍຄົນອື່ນທັງຍັງໃຫ້ແຟນຂອງນາງ ເປັນຜູ້ຮັບສາຍແທນນາງທຸກຄັ້ງທີ່ຄຳແພງໂທຫາ ແລະ ຍັງບອກ ວ່າພວກເຂົາໄດ້ຕົກລົງກັບພໍ່ແມ່ຂອງຕາດແລ້ວວ່າຊິໄປ ສູ່ຂໍນາງໃນຊ່ວງພັກແລ້ງປີນີ້. ທັ້ງໆທີ່ຄຳແພງຍັງບໍ່ທັນມີໃຜ ເລີຍ ແຕ່ຄຳແພງກໍເຮັດຫຍັງບໍ່ໄດ້ເພາະພວກເຂົາຢູ່ຄົນລະ ຂອບຟ້າ ສິ່ງທີ່ລາວໄດ້ມາຄືຄວາມໂສກເສົ້າຫງອມເຫງົາ, ຮ້ອງໄຫ້ເສຍນໍ້າຕາຈົນຂາດວຽກຂາດໂຮງ ຮຽນໄດ້ໄລຍະໜຶ່ງ ຈຶ່ງເຂົ້າໃຈຄວາມເປັນຈິງຂອງຊີວິດ ແລ້ວຈຶ່ງອະໄພໃຫ້ ຕາດຳ ທັງອວຍໄຊໃຫ້ພອນແກ່ຕາດຳ ຈົ່ງພົບພໍ້ແຕ່ສິ່ງທີ່ດີໆ, ມີ ຄວາມສຸກຕະຫຼອດການ ແລະ ນຳເອົາໃບປະກາດ ມາສູ່ພໍ່ແມ່ຂອງນາງໃຫ້ໄດ້ດັ່ງທີ່ຕັ້ງໄວ້.

ນັບແຕ່ມື້ນັ້ນເປັນຕົ້ນມາຄວາມຮັກແບບຊູ້ສາວລະຫວ່າງຕາດຳ ແລະ ຄຳແພງຈຶ່ງກາຍເປັນຄວາມຮັກແບບ ອ້າຍໆ ນ້ອງໆ ແລະ ກໍ່ບໍ່ມີໃຜເຂົ້າໃຈເລີຍວ່າຊີວິດຂອງເຂົາທັງສອງເປັນໄປແບບນີ້ໄດ້ແນວໃດ.

# ບົດອ່ານເພີ່ມ
# ເລື່ອງ ບ່າວລາວ-ສາວຫວຽດ

*ຊາຍເຊໂປນ*

ແລງມື້ໜຶ່ງ ຟ້າມືດຄືຝົນຊິຕົກ ທ້າວເດັດ ນຸ່ງເຄື່ອງແບບສີໝາກກະເບົາ, ສູບໝາກເວ້ກວກ (ປ້ອງກັນຊາດ) ໃສ ເກີບຢາງຕີນລົດ ຂີ່ເຮືອຂ້າມເຊຕໍ່ໜ້າເມືອງພູຖ້ຳ ແຂວງຮ່າຕິນ, ປະເທດຫວຽດນາມ ພໍເຮືອງຝັ່ງ ຜູ້ຄົນທີ່ຂີ່ເຮືອດັ່ງກ່າວ ເຊິ່ງລວມມີທະຫານ ແລະ ພວກແມ່ຄ້າຊາວຂາຍ ກໍຊີງກັນອອກຈາກເຮືອ, ບໍ່ຈັກຫາບກະຕ່າ ພາຍກະບຸງ ມະມຸ້ງປຸ້ງໄຈ້ ແລະ ຮ້ອງໂວຍວາຍເປັນອຶກກະທຶກ, ໃຜກໍ່ຢາກອອກກ່ອນໝູ່ ເພາະລົມພັດແຮງ ແລະ ຝົນກໍ່ຊິຕົກລົງມາແລ້ວ ທ້າວເດັດ ຢືນຈັບລົດຖີບຢູ່ກາງເຮືອ, ຜູ້ຄົນອອກໄປໝົດແລ້ວ ຈຶ່ງແບກລົດຖີບອອກເຮືອແລ້ວຊຸກລົດຖີບຂຶ້ນຝັ່ງ, ຫວິດຝັ່ງ ທ້າວ ເດັດ ກໍ່ຂຶ້ນລົດຖີບໄປຕາມທາງແຄບໆທີ່ລຽບຕາມຄີມຄັນຄູກັ້ນນ້ຳ ພໍໄປຮອດທົ່ງນາ ຝົນຫ່າໃຫຍ່ກໍຕົກ, ລົມກໍ່ຍິ່ງພັດ ແຮງຈົນຖີບລົດຂຶ້ນໜ້າເກືອບບໍ່ໄດ້, ອ້າວ ຊິເນັດແນວໃດກັນບາດນີ້, ທົ່ງນາກໍກວ້າງຈົນສຸດສາຍຕາ, ດວງຕາເວັນກໍຫຼົບ ຂອບຟ້າໄປແລ້ວ ຈະໄປຂໍພັກເຊົາຢູ່ໃສກັນ, ຄາວໜຶ່ງພັດມີຄົນຫາບກະຕາມາທາງຫຼັງຈົນວ່າລົດຖີບລົ້ມລ່າງງ່າງ, ທ້າ ວເດັດ ກໍຕີລັງກາມາເລງເຄງຄາງ ຕົກອີ່ລົງຂອກທາງ, ເຈັບເອີ້ຍ ຄຶດຢາກຮ້າຍ ກໍພໍພຸດເຮັດໃດພັດມາຕໍ່ທາງຫຼັງ ! ແຕ່ ຕ້ອງອົດ ເພາະຕົນເປັນທະຫານປົດປ່ອຍຊາດ.

ຊິນໂຈ້ຍຫຍະ ! ແອງໂບໂດຍ. (ຂໍໂທດເດີອ້າຍທະຫານ).

ຟັງສຽງປາກ ຄືແມ່ນສຽງນາງສາວ ທ້າວເດັດ ລຸກຂຶ້ນປັດຂີ້ຝຸ່ນອອກຈາກໃບໜ້າ, ຄວ້າມືໄປດຶງເອົາລົດຖີບພ້ອມ ທັງອວ່າຍໜ້າ ໄປເວົ້າຕໍ່ນາງສາວ.

ແອມຄົງວຽກຍີ່ຈື່ ? (ນ້ອງບໍ່ເປັນຫຍັງບໍ່ ?).

ຄົງວຽກເດົາແອງອະ (ບໍ່ເປັນຫຍັງດອກອ້າຍ).

ນາງສາວຖືກຸບ ຕຸ້ມສະນົດ ພະລຶງພະລັງເຕັມທີ ເວົ້າໃສ່ຫາບຢູ່ເທິງປາກໍຄືວ່າໜັກເອົາແທ້ເອົາວ່າ, ບຸດໜຶ່ງຫົວປ້ຳ ໄປເບື້ອງໜ້າ, ບຸດໜຶ່ງພັດມະໂງ່ງມະເງ່ງມາທາງຫຼັງ, ຝົນກໍຕົກແຮງເອົາແທ້ເອົາວ່າຈົນເກືອບມືນຫູມືນຕາບໍ່ໄດ້ພຸ້ນລະແ ໜໍ, ເວົ້າໃສລົມທີ່ພັດມາມັນກໍຄືວ່າ ມັນຊິພັດໃຫ້ປິວໄປທັງຄົນ.

ນ້ອງມາຈູງລົດໃຫ້ອ້າຍ, ອ້າຍຈະຫາບຊ່ວຍນ້ອງ.

ໃນເວລາທີ່ນາງສາວລັ່ງໆເລງຢູ່ ບໍ່ຮູ້ຈະຕັດສິນໃຈແນວໃດນັ້ນ ລົມໄດ້ພັດກຸບ ແລະ ສະນັດຂອງນາງປິວຂວ້ຳປີ້ນ ຫງາຍ ປິວໄປຕາມສາຍລົມ. ທ້າວເດັດ ວາງລົດຖີບແລ່ນໄປເກັບເອົາກຸບ ແລະ ສະນັດມາມອບໃຫ້ ພ້ອມທັງປົດເອົາ ຫາບອອກຈາກປາຂອງນາງມາຫາບ ນາງສາວຕຸ່ມສະນັດ ສຸບກຸບ ແລ້ວເມືໄປຈັບເອົາລົດຖີບຍ່າງອອກໜ້າເຂົາ ທັງສອງ ພາກັນແຂ່ງຝົນໄປຈົນຮອດປ່າໄຜ່ຢູ່ທາງເບື້ອງໜ້າ.

ເຮືອນຂອງພວກນ້ອງຢູ່ກ້ອງສຸມໄຜ່ກ້ຳຂວານັ້ນ ! ຄ່ຳຄືນຝົນຕົກລົມແຮງແນວນີ້ ອ້າຍຊິໄປໃສໄດ້ອີກ ແວ່ພັກ ແຮມຢູ່ເຮືອນນ້ອງກ່ອນ ຕື່ນເຊົ້າມາຈຶ່ງເດີນທາງຕໍ່.

ທ້າວເດັດ ຫາບກະຕ່າຕາມຫຼັງນາງສາວ ເຂົ້າໄປໃນເດີ່ນບ້ານ ເຊິ່ງມີການປູດິນຈີ່ຢ່າງດີ ມີສຸມກົກດອກສະບາອັນໜາແໜ້ນ ແລະ ຕັດຕອນເປັນຮົ້ວຢ່າງດີ. ພາຍໃນເຮືອນ ມີແສງໂຄມໄຟອັນອົບອຸ່ນ.

ເອົ້າ ! ລົດຂອງອ້າຍ, ສິ່ງຫາບມາໃຫ້ນ້ອງ ! ນ້ອງຈະເຂົ້າໄປທາງເຮືອນຄົວ. ສ່ວນອ້າຍ ຖ້າຢູ່ລະບຽງເຮືອນຫຼັງໃຫຍ່.

ມີສຽງລົມກັນຢູ່ໃນເຮືອນຄົວ ຕໍ່ມາມີຊາຍນ້ອຍໜ້າຮັກຜູ້ໜຶ່ງໂຟໜ້າອອກມາເວົ້າວ່າ:

ເມີຍອັນໂບໂດຍວາວຢາ (ເຊີນອ້າຍທະຫານເຂົ້າເຮືອນ).

ທ້າວເດັດ ເຂົ້າໄປໃນຫ້ອງກາງ ເຊິ່ງເປັນຫ້ອງຮັບແຂກ ໃນຫ້ອງນີ້ມີຮ້ານບູຊາ ທ່ານປະທານ ໂຮຈິມິງ, ຕໍ່ລົງມາມີ ຕູ້ໄວ້ເຄື່ອງ, ມີຕຽງນອນເຮັດດ້ວຍໄມ້ແກ່ນສີດຳ, ຖັດຈາກຕຽງມີໂຕະ ແລະ ມີເກົ້າອີ້ສີໜ່ວຍ ເທິງໂຕະມີໂຄມໄຟ, ມີເຕົ້າ ນ້ຳຊາ ມີເຕົ້າສູບຢາຫຽດ ທຸກສິ່ງທຸກຢ່າງມີການຜັດຖູ ແລະ ຈັດວາງຢ່າງສະອາດງາມຕາ. ນາງສາວຜັດຖ່າຍເຄື່ອງນຸ່ງ ແລ້ວນຳໜ້າພໍ່ແມ່ ແລະ ນ້ອງຊາຍນ້ອຍອອກມາຂໍ່ານັບຮັບຕ້ອນອ້າຍທະຫານດ້ວຍທ່າທີສຸພາບອ່ອນນ້ອມ, ແລ້ວນາງກັບອອກໄປຫາເຮືອນຄົວ ຍັງແຕ່ພໍ່ແມ່ຂອງນາງນັ່ງລົມອ້າຍປາວທະຫານ ເພິ່ນຜູ້ພໍ່ເວົ້າກ່ອນວ່າ:

ເຮືອນພວກເຮົາກໍມີລູກຊາຍໄປເປັນທະຫານກູ້ຊາດສອງຄົນ, ເຂົາຊື່ວ່າ ກວາງ ແລະ ຕຽນ ຢູ່ກອງພົນ 308, ລູກເດ ! ຢູ່ກອງພົນໃດ ?

ທ້າວເດັດ ຍິ້ມຢ່າງອ່ອນຫວານ ພ້ອມທັງເວົ້າວ່າ:

ລູກເປັນທະຫານກູ້ຊາດລາວ ຢູ່ກອງຟ້າງຸ່ມ ແມ່ຂອງນາງດີໃຈຈົນຫຼົງຕົບມືແປະບາດໜຶ່ງ ຈຶ່ງເວົ້າເປັນຄວາມວ່າ:

ລູກເປັນທະຫານກູ້ຊາດລາວ ! ຊິນເຊີຍ !

ເຫ້ລາ, ແອ່ງໂບໂດຍລາວ !

ນ້ອງຊາຍຂອງນາງເວົ້າຂຶ້ນດ້ວຍຄວາມດີໃຈແລ້ວແລ່ນລົງໄປບອກໃຫ້ເອື້ອຍຢູ່ເຮືອນຄົວຮູ້ຂ່າວດັ່ງກ່າວ.

ພາແລງມື້ນັ້ນມີແກງປາ, ຜັກບົ້ງລວກ ແລະ ໝາກເຂືອດອງ, ແຈ່ວກະປິ ພິເສດແມ່ນເຂົ້າ ເຂົ້າຈ້າວປະເພດໜຶ່ງ ຂອງຫວຽດນາມ. ມີແຕ່ທ້າວເດັດ ແລະ ພໍ່ແມ່ ກິນເຂົ້າຮ່ວມກັນ ສ່ວນນາງສາວ ແລະ ນ້ອງກິນຢູ່ເຮືອນຄົວ, ກ່ອນຈະລົງ ມືກິນເຂົ້າ ພໍ່ຂອງນາງເທຢັ້ນເຫຼົ້າລ້ວເມີ້ຍໃສ່ຈອກ ພ້ອມກັນຍົກຈອກດື່ມອວຍພອຍໃຫ້ອ້າຍນ້ອງທີ່ມາຢ້ຽມ.

ໃນເວລາກິນເຂົ້ານັ້ນ ເພິ່ນຜູ້ພໍ່ບໍ່ໄດ້ເວົ້າຫຍັງຫຼາຍ ເວົ້າພຽງແຕ່ວ່າ:

ເຊີນໄດລູກ, ພໍ່ແມ່ກິນເຂົ້າແລ້ວ ມານັ່ງເປັນເພື່ອນລູກ.

ສ່ວນເພິ່ນຜູ້ແມ່ ເວົ້າຄວາມລາວເຄິ່ງຄວາມຫວຽດ ເພິ່ນເວົ້າວ່າ:

ພໍ່ເຈົ້າເປັນອາຊີບເຕັກນິກເຮັດທາງ, ເຄີຍເຮັດວຽກນຳເຈົ້າສຸພານຸວົງ. ຂ້ອຍຢູ່ເມືອງພົນ, ເຊໂປນ, ນາງທ່ຽນລູກ ສາວຂ້ອຍແມ່ນແພດອີຊີ (ຊັ້ນກາງ) ເປັນທັນນຽນຊຸງຟອງ (ຊາວໜຸ່ມຕະລຸມບອນ) ຢູ່ເຄື່ອງໜ່ອນໂຮມີງ,

ຜູ້ເປັນພໍ່ເວົ້າຄວາມລາວແຈ້ງກວ່າແມ່, ເພິ່ນເວົ້າໜ້ອຍ ເພິ່ນເວົ້າທັງຫົວວ່າ:

ຢ່າລົມຫຼາຍ ! ລູກກິນເຂົ້າກ່ອນຈຶ່ງລົມກັນ ຂອງກິນຖືກປາກ, ທ້າວເດັດ ກິນເຂົ້າໄດ້ເຖິງຫ້າຖ້ວຍ, ກິນເຂົ້າແລ້ວນາງທຽນ ມາຍົກພານເຂົ້າອອກໄປ ແລ້ວນັ່ງລົມກັນຕໍ່, ລົມກັນບໍ່ດົນປານໃດ ພໍ່ແມ່ຂໍຕົວເຂົ້ານອນກ່ອນ ເພື່ອປະໃຫ້ລູກເຕົ້າເຂົ້າລົມກັນ ຍ້ອນຄວາມຮ້ອນຂອງເຕົາໄຟ ໃບໜ້າທີ່ຂາວນວນຂອງນາງທ່ຽນ ແດງອົ່ງຕົ່ງປານໝາກເຂືອເຄືອສຸກ, ນາງນັ່ງເປັນສີອາຍໆຢູ່ຕໍ່ໜ້າທ້າວເດັດ. ນາງຍິ້ມກ່ອນຈຶ່ງເວົ້າ:

ນ້ອງຄິດວ່າອ້າຍເປັນຄົນຫວຽດ, ອ້າຍເວົ້າຄວາມຫວຽດແຈ້ງດີບໍ່ຕ່າງຫຍັງກັບຄົນຫວຽດ. ທ້າວເດັດ ຍິ້ມພໍມີຮອຍ ລັກເຫຼືອດເບິ່ງນາງທ່ຽນຕັ້ງແຕ່ຫົວເຖິງຕີນ ພ້ອມທັງເວົ້າວ່າ:

ຄາວຍັງເປັນຫົວເມືອງຂຶ້ນຂອງຝຣັ່ງ ອ້າຍມາຮຽນທີ່ເມືອງເຫວ້ຫຼາຍປີ ອ້າຍຈຶ່ງເວົ້າຄວາມຫວຽດແຈ້ງ.

ແຕ່ອ້າຍເວົ້າສຽງຮ່າໂນ້ຍນີ້ນາ.

ອ້າຍເວົ້າສຽງພາກເໜືອ, ພາກກາງ ແລະ ພາກໃຕ້ໄດ້ໝົດ, ເພາະອ້າຍໄປຮຽນການເມືອງຢູ່ເມືອງຫວຽດບັກ, ມີ ນັກຮຽນພາກເໜືອ ພາກກາງ ແລະ ພາກໃຕ້ເຂົ້າຮ່ວມ.

ນາງທ່ຽນເຫຼືອດຕາໄປຫາທ້າວເດັດແວັບໜຶ່ງດ້ວຍຄວາມອ່ຽງອາຍ ຈຶ່ງເວົ້າວ່າ:

ນ້ອງເກີດທີ່ເມືອງລາວ ແຕ່ບໍ່ຮູ້ຄວາມລາວພໍຄວາມ ເພາະພໍ່ແມ່ສົ່ງມາຮຽນໜັງສືຢູ່ບ້ານຕັ້ງແຕ່ນ້ອຍ ດຽວນີ້ພັດໄປປະຕິບັດໜ້າທີ່ຢູ່ຮ່ວມພູອ້າຍລາວອີກ.

ກອງພົນຂອງພວກອ້າຍກໍເຄື່ອນໄຫວຢູ່ຕາມຮ່ອມພູອ້າຍລາວຄືກັນ.

ແທ້ຫວະ ?

ແທ້ລະບໍ ! ອ້າຍຢູ່ແຖບບ້ານດົງ ບ້ານແຈນ ແລະ ພູກະເລິງ !

ອ້າຍຢູ່ແຖວຫ້ວຍກາກີ ໄປຫາພູນາງມານ. - ຊັ້ນຫວະ ? ຄັນຊັ້ນພວກເຮົາຕ່າງກໍ່ເປັນນັກຮົບສອງຝັ່ງ ເຊໂປນຄືກັນ.

ເວົ້າຮອດນີ້ເຂົາທັງສອງພາກັນມິດ ເພາະຄິດຮອດບັນດາສະຫາຍຂອງຕົນທີ່ນອນດິນກິນເຂົ້າຫຼາ ບຸປ່າຜ່າດົງຫຼົບ ຫຼີກການຫວ່ານລູກລະເບີດຂອງ ເບ 52 ຂອງພວກໂຈນອາກາດ. ນາງທຽນຍິ້ມເປັນສີອາຍໆແລ້ວເວົ້າວ່າ:

ນ້ອງພັກວຽກມາຢາມບ້ານ, ຫວ່າງແລ້ວນີ້ນ້ອງໄປຢາມເອື້ອຍ ແລະ ອ້າຍເຂີຍທີ່ເວີເທືອງ (ຕະຫຼາດເທືອງ) ເພິ່ນຝາກເຄື່ອງມາໃຫ້ພໍ່ແມ່ບໍ່ຈັກຂອງກິນຂອງໃຊ້ຄືອ້າຍເຫັນນັ້ນແລ້ວ ແລະ ຕຳໃສ່ອ້າຍເອົາແທ້ເອົາວ່າ:

ກໍດີເໝືອນກັນ ຖ້ານ້ອງບໍ່ຕອ້າຍ, ພວກເຮົາກໍບໍ່ຮູ້ຈັກກັນ.

ເຂົາທັງສອງພາກັນຍິ້ມ, ເວົ້າແທ້ທ້າວເດັດ ເຄີຍເຫັນສາວງາມໆມາແລ້ວຫຼາຍຄົນ, ບໍ່ຈັກລາວ, ບໍ່ຈັກຫວຽດ ບໍ່ຈັກກຳປູເຈຍ, ແຕ່ບໍ່ທັນໄດ້ເຫັນໃຜງາມຄື ນາງທ່ຽນ ນາງທັງງາມທັງໜ້າຮັກ ທັງມີສະເໜ່. ແມ່ນໃຜເດໂຊກດີ ຊິໄດ້ມາເປັນ ຜົວຂອງນາງ. ໃນເວລາທີ່ທ້າວເດັດ ພວມຄິດຢູ່ແນວນັ້ນ ນາງທຽນໄດ້ເວົ້າຂຶ້ນວ່າ:

ອ້າຍໄປພັກຜ່ອນຢູ່ຫ້ອງກ້ຳຊ້າຍນັ້ນ, ນ້ອງປຸສາດ ກາງມຸ້ງມີໝອນໝູນ ໝອນປ້ອງຂ້າງ ຂໍໃຫ້ອ້າຍ ນອນຫຼັບຝັນດີ, ມື້ອື່ນເຊົ້າປັ້ນເຂົ້າແລ້ວຈິ່ງເດີນທາງໄປຫາເມືອງນ້ຳດ່ານ ບ້ານເກີດເມືອງນອນຂອງລຸງໂຮ່ ແລະ ລຸງຫາງວຽນຢູ ນັກ ກະວີຜູ້ຍິ່ງໃຫຍ່ຂອງຫວຽດນາມ.

ໃນປີ 1970 ທ້າວເດັດໄດ້ຖືກກອງບັນຊາການດ້ານຮົບ ສົ່ງໄປເຄື່ອນໄຫວຢູ່ບໍລິເວນບ້ານຫ້ວຍສານ ເຊິ່ງເປັນຖານທີ່ໝັ້ນຂອງກອງທະຫານຝ່າຍວຽງຈັນທີ່ແຕກຝ່າຍມາຈາກຄ້າຍເມືອງເຊໂປນ ມີຄືນໜຶ່ງເດືອນແຈ້ງສະຫວ່າງດີ, ທ້າວເດັດໄດ້ຮັບຄຳສັ່ງໃຫ້ຂ້າມນ້ຳເຊໂປນ ໄປຫາບ້ານເຟືອງເກົ່າ ເຊິ່ງເປັນຖານທີ່ໝັ້ນຂອງກອງທະຫານຫວຽດນາມໃຕ້. ທ້າວເດັດ ໄດ້ແບ່ງປັນໜ້າທີ່ໃຫ້ແຕ່ລະສະຫາຍ, ສ່ວນຕົນເອົາຮັບໜ້າທີ່ເຂົ້າໄປຄ້າຍລາວບາວ, ທ້າວເດັດ ລອຍຂ້າມນ້ຳ ຈາກຕີນພູນາງມານໄປຫາເບື້ອງໃຕ້ຂອງບ້ານເຟືອງ, ເມື່ອໄປຮອດຝັ່ງນັ້ນ ທ້າວເດັດ ໄດ້ນຸ່ງເຄື່ອງແບບທະຫານພາກ ໃຕ້, ປືນ ແລະ ເປ້ຕ່າງໆ ກໍ່ແມ່ນຂອງທະຫານຫວຽດນາມໃຕ້ທັງນັ້ນ, ຍ່າງເຂົ້າໄປປະປົນກັບທະຫານຫວຽດນາມໃຕ້ ແບບເສີຍໆ ຫຼຽວເຫັນລົດຈິບຄັນໜຶ່ງຈອດຢູ່ຕໍ່ໜ້າທີ່ທຳງານຂອງຫົວໜ້າຄ້າຍ, ກໍຫຼຽວໜ້າຫຼຽວຫຼັງ ເມື່ອບໍ່ເຫັນໃຜຢາງ ມາຕາມແຖວນັ້ນ, ທ້າວເດັດ ຫຍັບເຂົ້າໄປໃກ້ລົດຈິບ ໝໍທະຫານທີ່ຂັບລົດຫຼູບຕາບຟາບໃສ່ພວງມະໄລລົດ ນອນກົນ ຊອດໆຢູ່ ສຳຫຼວດເບິ່ງບໍລິເວນແວດລ້ອມຕື່ມອີກ. ຈຶ່ງຖອດມີດຢ້ຳລົງໃສ່ສັນຫຼັງຂອງບັກຕາຍເວນນັ້ນ, ຖອດມີດອອກ ຢ້ຳລົງໃສຫງ່ອນມັນຕື່ມອີກ, ມັນທັນຮ້ອງພຽງແຕ່ ເອີ່ ! ບາດໜຶ່ງຊັກຕາຍວັບໆສອງສາມເທື່ອ ແລ້ວກໍ່ມິດອ້ອຍຊ້ອຍ, ທ້າວເດັດຈັບຄໍເສື້ອ ແລະ ສາຍແອວ ຖິ້ມອີອອກນອກຮົ້ວໜາມໜາກຈັບ, ໂດດຂຶ້ນລົດ ເຮັດຕີໝຸບອາບຟາບຢູ່ພວງມະ ໄລລົດ.

ຄາວໜຶ່ງຕໍ່ມາ ບັກພັນໂທຫາຍ ໃສ່ເຄື່ອງແບບເຕັມຍົດ ຍ່າງມາໂດດຂຶ້ນລົດ.

ດີບົດລາວເລືອກ ບ້ານຫ້ວຍສານເມົາ ! (ໄປປົດລາວຕໍ່ໜ້າບ້ານຫ້ວຍສານໄວ !).

ລົດແລ່ນຫວິໄປ, ຂີ້ຝຸ່ນຖົມກົ້ນລົດ ປະມານສາມສິບນາທີ ລົດຈິບຄັນດັ່ງກ່າວ ຟຸ່ງເຂົ້າໄປໃນຄ້າຍ ແລ້ວຈອດລິກຢູ່ຕໍ່ໜ້າທີ່ທຳງານຂອງຫົວໜ້າຄ້າຍ, ບັກພັນໂທຫາຍ ໂຕນຈຸດລົງລົດ; ອອກຄຳສັ່ງ:

ໄກວ່ແສເຈີເຕົ່າ ຄົງດີເດົາເຫັດ ! ຫ້ຽວເຈືອ ? (ຕ່າວລົດຖ້າກູ ບໍ່ໄປໃສໝົດ ! ເຂົ້າໃຈແລ້ວບໍ່ ?).

ຢາ ! (ໂດຍຂ້ານ້ອຍ !).

ທ້າວເດັດ ກ່າວລົດ ຫັນຫົວລົດອອກໄປສູ່ທາງເມືອ ແລ້ວຄ່ອຍຍ້ອງແຍ້ງລົງຈາກລົດ ໄປຢືນຟັງພວກມັນລົມກັນຢູ່ ໃນຫ້ອງ, ມີສຽງລອດປ່ອງຢ້ຽມອອກມາວ່າ:

ພວກເຮົາຈັບຫວຽດມິນໄດ້ສາມຄົນ ຍິງໜຶ່ງຊາຍສອງ ທີ່ທາງເຂົ້າບ້ານດົງ.

ໂອເຄ ! ມອບໃຫ້ພວກເຮົາໄປສືບສວນ.

ທ່ານທີ່ເປີກສາ ໄດ້ສັ່ງພວກເຮົາແນວນັ້ນ !

ຢູ່ໃສ ? ເອົາມາໃຫ້ເຮົາດຽວນີ້ໂລດ.

ທ້າວເດັດ ເຕັ້ນຂຶ້ນລົດຈິບເພື່ອນັ່ງຖ້າ, ບຸດໜຶ່ງຕໍ່ມາ ບັກພັນໂທຫາຍ ນຳໜ້າພວກຄົນໂທດສາມຄົນ ໂດຍມີທະຫານລາວສອງຄົນຄຸມຕົວມາ.

ອາເລເທີບ ! ລານແສເມົາ !

ພວກຄົນໂທດຊ່ວຍກັນຊຂຶ້ນລົດ, ໝໍພັນໂທຝ່າຍລາວຖາມໝໍພັນໂທຫາຍດ້ວຍພາສາຝຣັ່ງໂບ້ຍທີ່ມີຄວາມໝາຍວ່າ:

ນາຍບໍ່ເອົາທະຫານໄປນຳຈັກຄົນແດ່ຫວະ ?

ໝໍພັນໂທຫາຍຫົວຂຶ້ນດ້ວຍຄວາມອວດອີ່ງວ່າ:

ຄົນໂທດຊ້ຳໜີ້ ຫຼີກຂັນແຂ່ງເຮົາກະບໍ່ໄດ້ດອກ ແມ່ນບໍ່ບັກຕ້ຽນ ! ອາເລ, ໂອເຮີວາ ! ມັນອວ່າຍມາອອກຄຳສັ່ງໂດຍພາສາຫວຽດນາມວ່າ: ເລືອກຖັງ !

ລົດຂະໂຫຍງໄປເບື້ອງໜ້າ ພຽງອອກຈາກຄ້າຍຂີ້ຝຸ່ນຖົມກົ້ນໄປໄກເຕີບ ລົດຢຸດຖືກ ບັກພັນໂທ ຫົວໂດນໄປເບື້ອງໜ້າ ຂີ້ຝຸ່ນມືດກຸບທິບ.

ກາຍບິເຖ້ ? (ມັນແມ່ນຫຍັງກັນ ?)

ມິດທີ່ປັກໃສ່ຫງ່ອນບັກຂັບລົດກ່ອນຈະອອກໄປນັ້ນໄດ້ປັກໃສ່ຫງືອນຂອງບັກພັນໂທຫາຍ, ຖອດແລ້ວປັກ ! ຖອດແລ້ວປັກ ! ຈົນຫຼັງບັກພັນໂທມຸ່ນຍ່ອຍໄປຍ້ອນຄົມມິດ.

ແອ່ງແອັມສ່ວງແສດີ ! (ອ້າຍນ້ອງລົງລົດໄປ !)

ພວກອ້າຍນ້ອງພາກັນລົງລົດໄວບໍ່ຄ້ານ ໃນເວລານັ້ນ ມີໂຄມໄຟລົດແລ່ນມາທາງເບື້ອງໜ້າ.

ດີເມົ້າ ! (ໄປໄວ !)

ທ້າວເດັດ ອອກຄໍາສັ່ງ ອ້າຍນ້ອງສາມຄົນກໍຈູງແຂນກັນແລ່ນເຂົ້າປ່າໄປໄດ້ໄກເຕີບ ສຽງປືນຄົກ ສຽງປືນກົນລັດ ໜ້າລັດຫຼັງ ອັນຕະລາຍທີ່ສຸດແມ່ນສຽງເຫົ່າຂອງໝາແບັກເຊ, ທ້າວເດັດ ບອກໃຫ້ອ້າຍນ້ອງແລ່ນໄປກ່ອນ ສ່ວນຕົນທັງ ແລ່ນທັງຫຼຽວຫຼັງ ບັກໃດແລ່ນຕາມມາໃກ້ ອັ່ງ ! ຢັ້ງ ! ເສັດອີ່ແຕນ ! ແລ່ນຕໍ່ໄປເລີຍໄປຕໍາເອົາປ່າໄມ້ທີ່ຫັກລົງມາທັບ ຍ້ອນລູກປືນຄົກ, ທ້າວເດັດ ຍົກງ່າໄມ້ອອກ ເຫັນສະຫາຍຜູ້ໜຶ່ງນອນຢູ່ດ້ວຍຄວາມເຈັບປວດ. ສະຫາຍເດັດບໍ່ເວົ້າຫຼາຍ ຄວາມ, ອຸ້ມເອົາສະຫາຍດັ່ງກ່າວ ແລ້ວແລ່ນໄປເບື້ອງໜ້າ, ສຽງຮ້ອງ ຈັບໃຫ້ໄດ້ ດັງສະໜັ່ນມາຕາມຫຼັງ ບໍ່ຈັກສຽງລາວ ສຽງຫວຽດ ສຽງແມກສາໂລ ກໍມີ. ແລ່ນລ້ຽວຊ້າຍລ້ຽວຂວາ ເພື່ອຫຼົບຫຼີກລູກປືນທີ່ສຸມມາໃສ່ປານຫ່າຝົນ, ບຸດໜຶ່ງຕົນ ຫວິດດິນຕົກປຸລົງໃສຫີນແຮ່ ທັງເຈັບທັງຢາກຫົວ ຫຼຽວເບິ່ງສະຫາຍທີ່ຕົນຄຸ້ມມາເລືອດອາບໜ້າ ຕົນມືສັ່ນວັບໆຢູ່ປານ ລູກນົກ.

ເວົ້າສໍ່າຂີງ ? (ເຈັບຫຼາຍບໍ່ ?)

ເວົ້າລໍ້າແອ່ງເອີຍ ! (ເຈັບຫຼາຍແທ້ອ້າຍເອີຍ !)

ກັກດົງຈີຂາກ ດີເດົາຮ່ວຍ ? (ສະຫາຍອື່ນໄປໃສແລ້ວ ?)

ແອມຄົງບຽດ (ນ້ອງບໍ່ຮູ້)

ຝູງຄວາຍທີ່ແໜບຢູ່ໜອງນໍ້ານ້ອຍກາງເຫຼົ່າຕື່ນສຽງປືນ ແລະ ຖືກໝາແບັກເຊໄລ່, ໂຜດລົງມາດັ່ງປານລົດຕັງຝູງຄວາຍໂຕນຕວາມລົງນໍ້າ, ທ້າວເດັດ ອູ້ມເອົາສະຫາຍຂອງຕົນໂຕນຕວາມລົງນໍາຝູງຄວາຍ ເອົາຝູງຄວາຍທີ່ມີເປັນສິບໆໂຕ ເປັນສິ່ງກໍາບັງລອຍນໍ້າໄປຫາຕົນພູນາງມານ ເມື່ອໄປຮອດຝັ່ງແລ້ວ ທ້າວເດັດ ອວ່າຍໜ້າຄືນໄປເບິ່ງພວກທີ່ໄລ່ຕິດຕາມ ມາ ພວກມັນຍັງຄົງຮ້ອງສັ່ງຈັບໃຫ້ໄດ້ ແລະ ສຽງປືນຍັງຄົງດັງຄັບດົງດອນແຫ່ງນັ້ນ ທ້າວເດັດ ຄິດໃນໃຈວ່າ "ພວກມຶງ ຫາກຊິຍິງກັນເອງ"

ທ້າວເດັດ ອຸ້ມສະຫາຍຂອງຕົນຂຶ້ນຝັ່ງ ແລ້ວປົງໄວ້ຢູ່ຮ່ອມຫ້ວຍແຫ່ງໜຶ່ງ, ທ້າວເດັດ ສົງໄສວ່າສະຫາຍຂອງຕົນ ເປັນຜູ້ຍິງ ເພາະຕົນຕົວນຸ້ມເປັນພິເສດ. ບັດນີ້ຈຶ່ງມີໂອກາດເບິ່ງໃບໜ້າ ແລະ ໜ້າອົກ, ສະຫາຍເປັນຍິງແທ້ ທ້າວເດັດເອົາແພມົນໃນຖົງໂສ້ງອອກມາບິດໃຫ້ນໍ້າອອກໝົດ ຈຶ່ງເຊັດໃບໜ້າໃຫ້ ປາກົດວ່າຄືເຄີຍເຫັນໜ້າມາກ່ອນ, ສະຫາຍຜູ້ນີ້ຄ້າຍຄືກັບນາງຫ່ຽນ ຜູ້ທີ່ທ້າວເດັດພົບຢູ່ ດົກຖໍ້ ໃນສອງປີກ່ອນນີ້.

ດົງຈີລາໂກຫຽນ ຝ່າຍຂີງ ? (ສະຫາຍແມ່ນນາງຫຽນແມ່ນບໍ່ ?) ສະຫາຍຍິງມືນຕາຂຶ້ນ ເພັ່ງເລັງສາຍຕາຂຶ້ນໃສ່ໃບໜ້າຜູ້ທີ່ພະຄຸນຕໍ່ນາງ ແລ້ວຮ້ອງຂຶ້ນວ່າ:

ເຕຣີຍ ! ແອ່ງເດັດ (ຟ້າເຮີຍ ! ອ້າຍເດັດ)

ເຂົາສອງຄົນໂດດກອດກັນຢ່າງແໜ້ນ, ນໍ້າຕາອັນອຸ່ນໆຂອງນາງໄດ້ໄຫຼອາບແກ້ມທ້າວເດັດ, ແສງເດືອນສາດສ່ອງ ນວນອາບດິນຟ້າອາກາດແຫ່ງຮ່ອມພູອ້າຍລາວ ແລະ ສຽງປືນອັນປ່ວງບໍາຂອງສັດຕູໄດ້ມິດງຽບລົງແລ້ວ.

## + ເນື້ອໃນລວມ

ເລື່ອງ "ບ່າວລາວ-ສາວຫວຽດ" ມີເນື້ອໃນເວົ້າເຖິງສາຍພົວພັນອັນງົດງາມ ແລະ ຍາວນານລະຫວ່າງລາວ-ຫວຽດ ນາມ ການພົວພັນດັ່ງກ່າວສະທ້ອນເຖິງຄວາມຮັກ ຄວາມຜູກພັນອັນດູດດື່ມ ແລະ ຈົບງາມ ຄວາມຮ່ວມມືຮອບດ້ານ ຜ່ານໄລຍະປະຫວັດສາດ ແລະ ສະໜໍລະພູມຮົບຮ່ວມກັນຄືຮ່ອມພູອ້າຍລາວ. ພ້ອມນັ້ນ ເລື່ອງຍັງໄດ້ສະທ້ອນໃຫ້ເຫັນ ໃຈອັນເດັດດ່ຽວ ແລະ ເສຍສະຫຼະອັນສູງສົ່ງຂອງນັກຮົບປະຕິວັດລາວ-ຫວຽດນາມທີ່ຍຶດໝັ້ນຕໍ່ການປະຕິບັດພາລະໜ້າທີ່ ຂອງຕົນເອງເໜືອສິ່ງອື່ນໃດ.

# ບົດຕົວຢ່າງ "ບົວໃນຕົມ"

## 1. ທີ່ມາຂອງເລື່ອງ

ເລື່ອງນີ້ແຕ່ງຂຶ້ນໂດຍອີງຕາມສະພາບຄວາມເປັນຈິງຂອງສັງຄົມປັດຈຸບັນ ເຊິ່ງຍາມໃດສະພາບແວດລ້ອມ ກໍ ຍ່ອມ ພົວພັນກັບການດຳລົງຊີວິດຂອງຄົນຢູ່ສະເໝີ, ໃນນັ້ນບົວກໍ່ແມ່ນຄົນໜຶ່ງທີ່ຕ້ອງດີ້ນຣົນສູ້ຊີວິດ ເພື່ອຄວາມຢູ່ລອດ. ສະນັ້ນ, ສູ້ຊີວິດນີ້ໄດ້ນຳພາໃຫ້ນາງພົບກັບບັນຫາໃນຊີວິດຈາກການເປັນສາວເສີບ ໄດ້ເຮັດໃຫ້ນາງພົບພໍ້ຜູ້ຊາຍຫຼາຍ, ກໍ ມີທັງຄົນດີ ແລະ ຄົນບໍ່ດີປົນເປກັນໄປ ພົບກັບຄວາມສົມຫວັງ ແລະ ຄວາມຜິດຫວັງ.

## 2. ເນື້ອໃນລວມ

ເວົ້າເຖິງຄວາມພະຍາຍາມອົດທົນ, ມີສະຕິລະວັງຕົວໃນການໃຊ້ຊີວິດໂດຍທີ່ບໍ່ຝືນກັບຮີດຄອງປະເພນີ ແລະ ຍັງເວົ້າ ເຖິງຄວາມຮັກອັນບໍລິສຸດທີ່ທັງສອງມີໃຫ້ຕໍ່ກັນ.

## 3. ແບ່ງຕອນ

ບົດເລື່ອງ "ບົວໃນຕົ້ມ" ໄດ້ແບ່ງອອກເປັນສອງຕອນຄື:

ຕອນທີ1: ແຕ່ຕົ້ນ ຈົນເຖິງ ມີທີ່ຢູ່ທີ່ກິນແລ້ວຈຶ່ງໄປຮັບເອົາແມ່ມາຢູ່ນຳ

ເນື້ອໃນ: ເວົ້າເຖິງຄວາມຂາດເຂີນ ແລະ ການຊ່ວຍເຫຼືອເພື່ອນມະນຸດດ້ວຍກັນ.

ຕອນທີ2: ຕັ້ງແຕ່ ຫຼັງຈາກນັ້ນ ຈົນເຖິງ ສຸດທ້າຍ

ເນື້ອໃນ: ເວົ້າເຖິງການໃຫ້ດ້ວຍຄວາມຮັກ ແລະ ຮັກບໍລິສຸດ.

## 4. ວິເຄາະ

ຄົນເຮົາເກີດມາມີເກີດກໍ່ຕອ້ງມີຕາຍ ມີພົບກໍ່ຕ້ອງມີຈາກ. ສະນັ້ນ, ຖ້າໂຊກສະຕາຂອງເຮົາເກີດມາພ້ອມຄວາມທຸກຈົນກໍ່ຕ້ອງທົນທຸກລຳບາກ, ພະຍາຍາມ, ອົດທົນຫາກິນດ້ວຍເຫື່ອແຮງບໍ່ໃຫ້ຫາກິນແນວຜິນສິນທຳ, ຕ້ອງຮູ້ຈັກການໃຫ້ຊ່ວຍເຫຼືອເຊິ່ງກັນ ແລະ ກັນບໍ່ວ່າເຮົາຈະຕ້ອງພະເຊີນກັບອຸປະສັກໃດກໍຕາມກໍຕ້ອງຫາມາກຸ້ມປາກກຸ້ມທ້ອງ ຕົນເອງເຖິງແມ່ນວ່າຈະມີຮອຍລາຄີມາແລ້ວກໍ່ຕາມເຮົາກໍຕ້ອງສູ້ທົນໃຊ້ຊີວິດຕໍ່ໄປເພື່ອວ່າຈະມີສັກວັນໜຶ່ງທີ່ເຮົາຕ້ອງມີ ຄວາມສຸກ ແລະ ໃຊ້ຊີວິດຢູ່ແບບສະບາຍໄດ້. ໂດຍທີ່ບໍ່ໄດ້ຈົມປັກກັບຮອຍອະດີດອີກເລີຍ. ຄວາມຮັກກໍຄືເຂັມທິດທີ່ ຄອຍນຳທາງໃຫ້ເຮົາໄປສູ່ແສງສະຫວ່າງໄດ້.

ຄົນເຮົາມີຊີວິດຢູ່ກໍເພື່ອຫຼາຍສິ່ງຫຼາຍຢ່າງສິ່ງສຳຄັນແມ່ນເລື່ອງຄວາມຮັກ, ກຳລັງໃຈ ເວລາຄົນເຮົາທໍ້ຖອຍກໍຕ້ອງການກຳລັງໃຈຈາກຄົນອ້ອມຂ້າງທັງນັ້ນຄວາມຮັກບໍ່ແມ່ນວ່າຈະໃຫ້ໄດ້ສະເພາະແຕ່ແຟນເທົ່ານັ້ນແຕ່ມັນກໍໃຫ້ໄດ້ເຊັ່ນວ່າ: ພໍ່ແມ່, ໝູ່ເພື່ອນ ແລະ ຄົນອື່ນໆທີ່ຢູ່ອ້ອມຕົວເຮົາ. ແຕ່ວ່າໃນສັງຄົມເຮົາເລີ່ມມີຄວາມຜູກພັນ, ເພື່ອນມິດສະຫາຍ, ມີການຕິດຕໍ່ພົວພັນເຊິ່ງກັນ ແລະ ກັນ, ມາກໜ້າຫຼາຍຕາ. ສະນັ້ນ, ຈຶ່ງມີຄົນດີບໍ່ດີປົນເປກັນໄປເມື່ອເຮົາຄົບຫາ ຄົນທີ່ບໍ່ຮັກຈິງໃຈເຮົາກໍມີແຕ່ເສຍກັບເສຍເພາະສະໄໝນີ້ສາມາດໃຊ້ຄຳນີ້ໄດ້ວ່າ: ເພດສຳພັນບໍ່ໄດ້ຢືນຢັນເຖິງຄວາມຮັກ ແທ້. ນັ້ນກໍເປັນສາເຫດໜຶ່ງທີ່ເຮັດໃຫ້ຕົວລະຄອນຄິດເຖິງແຕ່ຄວາມເສຍຫາຍທີ່ເກີດຂຶ້ນກັບຕົວເອງເວລາໃດກໍຈົມເລິກ ຢູ່ກັບອາດີດ, ໄດ້ແຕ່ຄິດວ່າເມື່ອໃດຈະພົ້ນອອກຈາກໝໍ້ໃນຮົກນີ້ເວລາທີ່ເຮົາໂສກເສົ້າຫງ່ອມເຫງົາກໍຢາກມີຄົນຄຽງຂ້າງ, ປອບໃຈໃຫ້ຄວາມຮັກ, ກຳລັງໃຈຄວາມຮັກທີ່ບໍລິສຸດນັ້ນສະໄໝນີ້ຫາຍາກ ແຕ່ເມື່ອຕົວລະຄອນໄດ້ມາພົບກັບຊາຍຄົນ ໜຶ່ງທີ່ສາມາດເຮັດໃຫ້ຊີວິດຂອງຕົວລະຄອນໄດ້ພົບກັບແສງສະຫວ່າງກໍເປັນສາເຫດໜຶ່ງທີ່ເຮັດໃຫ້ຕົວລະຄອນມີກຳລັງ ໃຈຕໍ່ສູ້ກັບອຸປະສັກສ້າງຊີວິດອັນໃໝ່ເພື່ອປົກປິດຊີວິດອັນເກົ່າ.

## 5. ສະຫຼຸບ

### ກ. ດ້ານເນື້ອໃນ

ເລື່ອງ "ບົວໃນຕົມ" ນີ້ຜູ້ແຕ່ງໄດ້ສ່ອງແສງໃຫ້ເຫັນເຖິງການໃຊ້ຊີວິດຢູ່ໃນສັງຄົມ ຕ້ອງມີສະຕິລະວັງຕົວ, ມີຄວາມອົດທົນ, ຮູ້ພິຈາລະນາເຮົາຈຶ່ງຈະມີຊີວິດທີ່ດີ ແລະ ກໍບໍ່ເປັນພາລະຂອງສັງຄົມອີກ. ສະນັ້ນ, ໃນນາມເປັນນັກຮຽນ ນັກສຶກສາຈະຂໍເອົາເປັນບົດຮຽນເຂົ້າໃນຊີວິດປະຈຳວັນ.

**ຂ. ດ້ານສິລະປະ**

ຜູ້ໄດ້ໃຊ້ສັບພາສາທຳມະດາ, ແຕ່ງຕາມເຫດຕົວຈິງໃນສັງຄົມ, ໃຊ້ຕົວລະຄອນບໍ່ຫຼາຍ, ອ່ານແລ້ວສາມາດຈື່ຈຳໄດ້ ໄວ ເຮັດໃຫ້ຜູ້ອ່ານ, ຜູ້ຟັງສາມາດຈິນຕະນາການໄດ້.

## ບົດເລື່ອງ "ບົວໃນຕົມ"

ຟ້າ ແລະ ດິນສຸດທີ່ກວ້າງໃຫຍ່ໄພສານ ບົວຢາກມີປີກບິນເໝືອນດັ່ງນົກ ນາງຈະບິນໄປໃຫ້ໄກແສນໄກ ເພື່ອຈະ ໄດ້ລືມເຫດການເລື່ອງລາວຕ່າງທີ່ສັບສົນວຸ້ນວາຍ ເມື່ອກ່ອນພໍ່ເຄີຍບອກບົວວ່າ ເກີດເປັນຄົນຕ້ອງສະຫງຽມຈຽມຕົວຫາ ກິນດ້ວຍຄວາມສຸຈະລິດບໍ່ໃຫ້ຫາກິນດ້ວຍຜິນສິນທຳເພິ່ນຈະໝິ່ນປະໝາດເອົາ ແຕ່ຕອນນີ້ບົວກຳລັງຝືນຄຳສອນຂອງພໍ່ ແຕ່ກ່ອນບົວເປັນຄົນສະຫງຽມຈຽມຕົວຍ້ອນຄວາມຜິດຫັວງຈິ່ງເຮັດໃຫ້ບົວມາເປັນສາວຂາຍເບຍທຳອິດກໍຄິດວ່າບໍ່ພາດ ທ່າເສຍຕົວໃຫ້ໃຜ ແຕ່ເມື່ອພົບກັບຊາຍປາກຫວານໃຈສິ້ມຄົນໜຶ່ງ ຄິດວ່າເຂົາເປັນຄົນຈິງໃຈບົວເລີຍເທທັງກາຍ ແລະ ໃຈໃຫ້ແກ່ເຂົາ ສຸດທ້າຍບົວກໍ່ໄດ້ຮັບຄວາມຂົມຂື່ນເປັນການຕອບແທນ ບົວນັ່ງຈົ່ມຢູ່ຄົນດຽວວ່າເມື່ອໃດຈະພົ້ນອອກ ຈາກນາຮົກນີ້ ຊີວິດຂ້ອຍເກີດມາຄືອາພັບແທ້ນໍ ບົວຕື່ນຢຸບບາດໜຶ່ງ ເມື່ອໄດ້ຍິນສຽງເຈົ້າຂອງຮ້ານຮ້ອງໃສ່ຢ່າງແຮງບົວ ...ບົວ ອອກມາຮັບແຂກລະແມ້ລະເມີເພີ້ຝັນເຖິງໃສ ຫ້າວຫັນແນຕິ ຊິນັ່ງຖ້ານອນຖ້າໃຫ້ເງິນບິນມາຫາເອງຫວາ ພໍ່ບົວ ອອກມາ ແຂກທີ່ວ່າກໍຫ້ວງຂຶ້ນ ອ່າວ ບົວຄືວ່າສີໜ້າບໍ່ຄ່ອຍເບີກບານເລີຍມີເລື່ອງຫຍັງບໍ່ບອກອ້າຍໄດ້ເດີ ອ້າຍຊິຊ່ວຍ ນ້ອງເອງ. ບົວ ອ້າວ ອ້າຍກໍຮູ້ດີກະດຽວວ່າຜູ້ຊາຍມາທີ່ນີ້ກໍເພື່ອມາຫາຄວາມສຸກສຳລານບໍ່ແມ່ນຫວາ ນີ້ຄືສະຫວັນຂອງ ຄົນມີເງິນ ແຕ່ມັນເປັນນາຮົກຂອງຄົນທຸກຈົນ. ເວົ້າແລ້ວບົວກໍ່ນັ່ງໃຈລອຍ ພ້ອມດ້ວຍນ້ຳຕາໄຫຼຜ່ານສອງພວງແກ້ມ ຊາຍທີ່ນັ່ງຢູ່ຕໍ່ໜ້າເຂົາກໍເວົ້າຂຶ້ນວ່າ ບົວນ້ອງເປັນຫຍັງ ມື້ນີ້ອ້າຍຍັງບໍ່ທັນໄດ້ເວົ້າຫຍັງຈັກຄຳ ບົວ ຊັ້ນບໍ່ແມ່ນຄວາມຂ້ອຍ ດອກຫວາ ວ່າຜູ້ຊາຍມານີ້ເພື່ອຫຍັງ. ແຕ່ວ່າອ້າຍມາມື້ນີ້ເພາະເລື່ອງນີ້ແຫລະ ແຕ່ບໍ່ຮູ້ວ່າຄວາມຫວັງດີຂອງອ້າຍຊິຊ່ວຍ ນ້ອງໄດ້ບໍ່ຄືວ່າອ້າຍຢາກຊ່ວຍບົວອອກຈາກທີ່ນີ້ ທີ່ໆບົວຄິດວ່າມັນເປັນນາຮົກຂອງຄົນທຸກຈົນ ເມື່ອບົວໄດ້ຍິນແນວນັ້ນ ນ້ຳຕາຂອງຄວາມດີໃຈກໍໄຫຼອອກມາ ເຂົາບອກວ່າໃຫ້ບົວຄິດຄືນນີ້ ມື້ອື່ນອ້າຍຈະມາຮັບບົວ. ພໍຕົກຄ່ຳຄືນມາແສງເດືອນ ສອດສ່ອງລົງຊອດປ່ອງຢ້ຽມບົວເອົາມືກາຍໜ້າຜາກແລ້ວຄິດເຖິງຄຳເວົ້າຂອງຊາຍຄົນນັ້ນເຂົາເປັນໃຜ ຊື່ ຫຍັງ, ເຮັດ ອາຊີບຫຍັງ ບົວກໍ່ຍັງບໍ່ຮູ້ຕະຫຼອດຄືນນັ້ນ ບົວເກືອບບົວໄດ້ນອນເລີຍ. ອາລຸນວັນໃໝ່ທ້ອງຟ້າກໍແຈ່ມໃສດີ. ເພັດລຸກແຕ່ ເຊົ້າຊັກເຄື່ອງ, ລີດເຄື່ອງເບິ່ງອາລົມດີແຕ່ເຊົ້າຈົນໝູ່ຂ້າງຕຽງອົດຖາມບໍ່ໄດ້ ເພັດສຽວໂຕວ່າມື້ນີ້ທ້ອງຟ້າສົດໃສດີເນາະ ເບິ່ງຄົນຄືວ່າຍິ້ມແຍມແຈ່ມໃສ ຫຼື ວ່າມື້ຄືນນີ້ໂລກປັ່ນໄວກ່ວາປົກກະຕິບໍ່ຈັກເນາະ ກໍ່ຄືວ່າແຫລະເນາະແນວຄົນມີຄວາມ ຮັກມັນກໍເປັນເລື່ອງທຳມະດາ ເວົ້າແລ້ວເພັດກໍຂີ່ລົດຈັກມຸ້ງໜ້າໄປຍັງທີ່ຈຸດໝາຍ ບົວ: ຄືມາຊ້າແທ້ນັ່ງຖ້າຕັ້ງດົນ ແຕ່ເຂົາ ບໍ່ເວົ້າຫຍັງຍ່າງເຂົ້າໄປຫາເຈົ້າຂອງຮ້ານບຶດໜຶ່ງກໍ່ອອກມາຊວນບົວເກັບເຄື່ອງຂອງອອກຈາກທີ່ນັ້ນແລ້ວພາມາເຮືອນອີກ ຫຼັງໜຶ່ງ ຈຶ່ງເຮັດໃຫ້ບົວແປກໃຈ ບົວເລີຍຖາມຂຶ້ນວ່າ ນີ້ແມ່ນເຮືອນຂອງໃຜ ແລ້ວເຈົ້າຊື່ຫຍັງ ລາວຕອບວ່າ ອ້າຍຊື່ເພັດ ນີ້ຄືເຮືອນອ້າຍເຊົ່າໃຫ້ບົວ ມື້ວານນີ້ອ້າຍໄດ້ມາອານາໄມແລ້ວ. ມື້ອື່ນບົວຍ້າຍມາຢູ່ໄດ້ເລີຍ ມັນອາດຈະຄັບແຄບກ່ວາ ບ່ອນທີ່ບົວເຄີຍຢູ່ແຕ່ບົວຕ້ອງອົດທົນເອົາສ່ວນທາງຮ້ານອ້າຍໄດ້ຕົກລົງກັບເຈົ້າຂອງຮ້ານແລ້ວ. ອ້າຍຫວັງວ່າບົວຄົງເປັນ ບົວຄົນໃໝ່ໄດ້ເມື່ອບົວມີທີ່ຢູ່ທີ່ກິນແລ້ວບົວຈິງໄປຮັບເອົາແມ່ມາຢູ່ນຳ. [09:04, 10/4/2566] Soulixay SYPHARATH: ຫຼັງຈາກນັ້ນເພັດກໍມາຫາບົວເລື້ອຍໆບາງເທື່ອກໍ່ພາບົວໄປທ່ຽວສະຖານທີ່ທ່ອງທ່ຽວຕ່າງໆເພື່ອຈະໄດ້ຮູ້ນິດໄສ ໃຈຄໍຜູກຄວາມສຳພັນໃຫ້ເລິກເຊິ່ງຂຶ້ນຫຼາຍ ເຂົາທັງສອງຄົບຫາກັນມາກໍເປັນເວລາສາມເດືອນແລ້ວແຕ່ເພັດກໍບໍ່ເຄີຍຂໍ ບົວເປັນແຟນຈັກເທື່ອຈຶ່ງເຮັດໃຫ້ບົວຄິດໜັກ ແລະ ຫວັ່ນໄຫວເວລາຢູ່ໃກ້ເຂົ້າມາຮອດຊ່ວງເດືອນກຸມພາຢູ່ບ້ານຂັນຄຳກໍ ໄດ້ເປີດງານບຸນຢູ່ວັດເຊິ່ງເຮືອນບົວໄປຫາວັດກໍບໍ່ໄກກັນປານໃດ

ເພັດ: ໂທຫາບົວ ກະລິງໆໆ

ບົວ: ອາໂຫລ ອ້າຍເພັດມີຫຍັງກັບນ້ອງບໍ່

ເພັດ: ຄືວ່າ ບົວຫວ່າງບໍ່ອ້າຍຈະພາບົວໄປທ່ຽວງານວັດທີ່ຢູ່ໃກ້ກັບເຮືອນບົວຫັ້ນນາ

ບົວ: ຫວ່າງຫວາໄປກໍໄປນ້ອງກໍ່ຢາກເຫັນຄືກັນ

ເພັດ: ຄັນຊັ້ນຖ້າອ້າຍບຶດດຽວເດີ ເພັດກໍ່ວາງສາຍໄປ

ແລ້ວເຂົາທັງສອງກໍພາກັນອອກໄປທ່ຽວງານວັດດ້ວຍກັນຢ່າງມີຄວາມສຸກໃນງານດັ່ງກ່າວນັ້ນກໍຈະມີການກິນ ເຫຼົ້າຊຸມແຊວ, ມີຍິງໝາກປຸ້ມເປົ້າ, ສາຍຮູບເງົາ, ຊິງຊ້າສະຫວັນ, ມີເຄື່ອງຫຼິ້ນສໍາລັບເດັກນ້ອຍ ແລະ ສໍາລັບຜູ້ໃຫຍ່, ມີ ພໍ່ຄ້າ ແລະ ແມ່ຄ້າຂາຍເຄື່ອງຈົນວ່າເຕັມທົ່ວເດີ່ນວັດ

ເພັດ: ເອີ ບົວຢາກກິນຫຍັງບໍ່

ບົວ: ບໍ່ດອກພຽງແຕ່ໄດ້ມາເຫັນຫຼາຍສິ່ງຫຼາຍຢ່າງພຽງໄດ້ໄປໄຫວ້ພະສໍ່ານີ້ກໍພໍໃຈແລ້ວ

ບົວ: ຂອບໃຈເດີອ້າຍເພັດ ທີ່ພານ້ອງມາທ່ຽວມື້ນີ້ນ້ອງມີຄວາມສຸກຫຼາຍແຕ່ຕອນນີ້ມັນເດິກແລ້ວນ້ອງວ່າເຮົາກັບເຮືອນກັນເທາະ.

ມື້ອື່ນແມ່ນວັນທີ 14 ກຸມພາພັດ ເປັນວັນແຫ່ງຄວາມຮັກຂອງຄົນທົ່ວໂລກ

ເພັດ: ບົວມື້ອື່ນຕອນຄໍ່າຢູ່ເຮືອນຖ້າເດີອ້າຍຊິມາຮັບ

ບົວ: ອ້າຍຊິພານ້ອງໄປໃສ

ເພັດ: ເຖິງເວລານັ້ນນ້ອງກໍ່ຈະຮູ້ເອງ.

ພໍຕົກຄໍ່າຄືນມາເພັດກໍມາຮັບບົວແລ້ວພາໄປທີ່ຮ້ານກິນດື່ມແຫ່ງໜຶ່ງລຽບຕາມແຄມຂອງບັນຍາກາດທີ່ນັ້ນອາກາດເຢັນ ເຕັມໄປດ້ວຍໄຟແສງສີ ຫຼຽວລົງໄປຂ້າງຮ້ານເຫັນນໍ້າຂອງໄຫຼຜ່ານຢ່າງສຸດສາຍຕາບັນຍາກາດໂຣແມນຕິກຂະໜາດ ເໝາະກັບຄູ່ບ່າວສາວທີ່ກໍາລັງອິນເລີບ

ບົວ: ບັນຍາກາດທີ່ນີ້ດີເນາະ

ເພັດ: ກໍຍັງວ່າຫັ້ນລະ ອ້າຍຈຶ່ງພານ້ອງມາ

ເພັດ: ບົວສັ່ງຫຍັງກິນຖ້າອ້າຍເດີ ຊິອອກໄປນອກພິດດຽວ ເວົ້າແລ້ວເພັດກໍອອກໄປ

ບົວ: ອ້າຍໆ! ຂໍນໍ້າປັ່ນໜຶ່ງຈອກ

ບົວນັ່ງຖ້າຄາວໜຶ່ງ ກໍເຫັນເພັດມາພ້ອມດອກກຸຫລາບສີຂາວໜຶ່ງຊໍ່ ແລະ ກະເປົານ້ອຍໜ່ວຍໜຶ່ງ

ເພັດ: ເອົາບົວ ອ້າຍໃຫ້ເປັນຂອງຂັວນ

ບົວ: ງາມແທ້ ອ້າຍຊື້ຢູ່ໃສ? ຂອບໃຈເດີອ້າຍເພັດ ແຕ່ບົວບໍ່ມີຫຍັງໃຫ້ອ້າຍໄດ່

ຫຼັງຈາກນັ້ນເຂົາທັງສອງກໍພາກັນຂີ່ລົດເລາະຕາມຫົນທາງຢ່າງມີຄວາມສຸກ ໂດຍທີ່ບົວບໍ່ເຄີຍມີມາກ່ອນ ເມື່ອ

ພົບກັບຊາຍຄົນນີ້ເຮັດໃຫ້ບົວສາມາດຍິ້ມແຍ້ມແຈ່ມໃສ ຄວາມສຸກນີ້ບົວຄົງບໍ່ມີວັນລືມ ຈະເກັບໄວ້ຢູ່ໃນໃຈສະເໝີ ມື້ອື່ນເພັດຈະໄປເກັບກໍາຂໍ້ມູນຢູ່ທີ່ແຂວງສາລະວັນພຸ້ນ ແຕ່ເພັດກໍ່ບໍ່ຄິດຈະບອກບົວເລີຍ ຕະຫຼອດຄືນນັ້ນເພັດຄິດແລ້ວຄິດອີກວ່າ ເປັນຫຍັງຕົນເອງຈຶ່ງຊ່ອຍນາງຂະໜາດນີ້ ຮຸ່ງເຊົ້າມາເພັດໄປຫ້ອງການ.

ທຸມພັນ: ມາພໍດີຫົວໜ້າຖາມຫາຢູ່.

ເພັດ: ເພິ່ນຊິເຮັດຫຍັງ.

ທຸມພັນ: ເອີ! ເພັດຫົວໜ້າໃຫ້ເຮົາໄປເກັບກໍາຂໍ້ມູນຢູ່ສາລະວັນພຸ້ນ ໃນນັ້ນມີໂຕ, ມີເຮົາ, ແລະ ສົມໃຈ ແຕ່ໂຕເປັນຜູ້ນໍາພາ.

ເພັດ: ເອີ ຂອບໃຈ.

ເມື່ອເພັດໄປເຖິງກອງບັນຊາການທີ່ແຂວງສາລະວັນ ກໍດໍາເນີນຕາມແຜນການທີ່ຖືກມອບໝາຍໃຫ້. ສ່ວນບົວ ທາງນີ້ບໍ່ເຫັນເພັດມາຫາກໍຕັ້ງໜ້າຕັ້ງຕາລໍຄອຍ ລະຫວ່າງທີ່ຄອຍຖ້ານັ້ນບົວໄດ້ເຮັດວຽກຢູ່ທີ່ໂຮງງານແຫ່ງໜຶ່ງ ນີ້ກໍຜ່ານ ໄປສາມເດືອນແລ້ວຍັງບໍ່ມີວີ່ແວວຂ່າວຄາວຂອງເພັດເລີຍ ບົວມີແຕ່ພາວັນນາວ່າ ຢາກໃຫ້ເຂົາຮັບຮູ້ວ່າຜູ້ຍິງທີ່ເຂົາ ຊ່ວຍເຫຼືອນັ້ນໄດ້ກາຍເປັນບົວຄົນໃໝ່ແລ້ວ ເຖິງອະດີດຈະມີຮອຍລາຄີມາແລ້ວກໍຕາມ ບົວຈະບໍ່ໃຫ້ປະຫວັດສາດ ຮອຍ ແລະ ຈະບໍ່ເຮັດໃຫ້ອ້າຍເພັດຜິດຫວັງເດັດຂາດ. ມີມື້ໜຶ່ງລະຫວ່າງທາງທີ່ບົວກໍາລັງຖີບລົດກັບເຮືອນ ພາດໄປເຫັນ ຜູ້ຊາຍຄົນໜຶ່ງຂີ່ລົດສວນທາງໄປແລ້ວຍັງມີຜູ້ຍິງຊ້ອນທ້າຍອີກ ບົວຄິດໃນໃຈວ່າ ເອ! ນັ້ນແມ່ນອ້າຍເພັດນີ້ລາວມາແຕ່ ເມື່ອໃດ ແລ້ວຜູ້ຍິງຊ້ອນທ້າຍນັ້ນແມ່ນໃຜ ຄິດແລ້ວບົວກໍນໍາໄປເບິ່ງກໍເຫັນເພັດພາຜູ້ຍິງຄົນນັ້ນເຂົ້າເຮືອນໄປ. ບົວທັງຖີບ ລົດທັງຄິດຕ່າງໆນາໆຈົນວ່າຮອດເຮືອນຕອນໃດກໍ່ບໍ່ຮູ້ ບົວນັ່ງຄິດແລ້ວຈົ່ມຢູ່ຄົນດຽວລາວມາແຕ່ເມື່ອໃດ ແລ້ວເຂົາຈະ ຮູ້ບໍ່ວ່າຕະຫລອດເວລາເຮົາລໍຄອຍເຂົາຢູ່ ເຂົາຈະຮູ້ບໍ່ວ່າຜູ້ຍິງຄົນນີ້ຕັ້ງຕົວໃໝ່ໄດ້ກໍຍ້ອນເພາະເຂົາ ແລ້ວເຂົາຮູ້ສຶກແນວໃດ ຕໍ່ກັບເຮົາ ເຂົາເຂົ້າມາໃນຊີວິດເຮົາ, ຊ່ວຍເຫຼືອເຮົາຍ້ອນຫຍັງ ບົວນັ່ງມິດຢູ່ຄາວໜຶ່ງ ເພັດກໍ່ເວົ້າຂຶ້ນ: ບົວເປັນຫຍັງ! ນ້ອງ ເປັນຫຍັງຄືໄຫ້ ນ້ອງມີຫຍັງທຸກໃຈບໍ່ ຄືວ່າ....ເອີ....ມື້ເຊົ້ານ້ອງເຫັນ

ອ້າຍເພັດໄປກັບໆ.....ເພັດກໍຫົວຂຶ້ນແລ້ວເວົ້າວ່າ: ນີ້ ບົວກາຍເປັນຄົນຂີ້ຫຶງຕັ້ງແຕ່ຕອນໃດ ອາຊີບອ້າຍເປັນຕຳຫລວດ ຫົວໜ້າໃຫ້ໄປເກັບກຳຂໍ້ມູນ ອ້າຍບໍ່ທັນໄດ້ມາຫາບົວ ເພາະຕ້ອງມອບວຽກໃຫ້ຫົວໜ້າກ່ອນ.

ເພັດ: ບົວຄືໃຈນ້ອຍແທ້.

ບົວ: ອ້າວ ໃຜຊິໃຈແຂງໃຈຊາຄືກະດາດຊາຍລະ

ເພັດ: ຕອນນີ້ອ້າຍມາຫາບົວແລ້ວ ອ້າຍກໍມີຂ່າວດີຈະມາບອກອ້າຍມາຂໍບົວແຕ່ງງານ ແຕ່ງກັບອ້າຍເທາະ. ຄຳ ເວົ້ານີ້ເຮັດບົວຈົນນ້ຳຕາໄຫຼບໍ່ຄິດເລີຍວ່າຜູ້ຍິງທີ່ມີຮອຍລາຄີໃນອະດີດ ຈະມີຄົນມາຂໍແຕ່ງງານ ແລ້ວເຂົາທັງສອງກໍຕົກລົງ ປົງໃຈໃຊ້ຊີວິດຢູ່ນຳກັນຢ່າງມີຄວາມສຸກ.

# ເອກະສານອ້າງອີງ


- ປື້ມ ໄວຍາກອນ ຂອງທ່ານ ພູມີ ວົງວິຈິດ (ປີ 1967).
- ເອກະສານວັນນະຄະດີປັດຈຸບັນ 2, ຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ ສຶກສຶກສາ 2007.
- ປື້ມແບບຮຽນວັນນະຄະດີ ມ.6, ກະຊວງສຶກສາທິການສະຖາບັນຄົ້ນຄວ້າວິທະຍາສາດການສຶກສາປີ 1999.
- ໂຮມປື້ມບົດເລື່ອງ-ບົດກອນຕົວຢ່າງ ຂອງ ນັກສຶກສາລະບົບຕໍ່ເນື່ອງລະບົບ 11+3+2 ສົກຮຽນ 2011-2012.
- ປື້ມບົດເລື່ອງ ເສັ້ນທາງແຫ່ງຊີວິດ ເຫຼັ້ມທີ 1 (ຄັດຕອນ)

| ແຜນການສອນລາຍວິຊາ<br>ຊື່ວິຊາ ວັນນະຄະດີປັດຈຸບັນ :<br>ຫຼັກສູດສ້າງຄູມັດທະຍົມ ລະບົບ 12+4<br>ລະຫັດວິຊາ: 0907706 | |
|---|---|
| ພາກຮຽນ | ລະບົບ 4 ປີ ພາກຮຽນທີ I ປີ 4 |
| ຈຳນວນຊົ່ວໂມງ | 64 ຊົ່ວໂມງ |
| ຄ່າໜ່ວຍກິດ | 3(2-2-0) |
| ອະທິບາຍຄ່າໜ່ວຍກິດ | ວິຊານີ້ ມີ ອາທິດ ເທົ່າ 16 ອາທິດ ໃນ 1 ຊົ່ວໂມງບັນຍາຍຕໍ່ 2 ໜ່ວຍກິດ ໃນນັ້ນ 3 ,ໜ່ວຍກິດ 2 ກັບ2 ຊົ່ວໂມງພາກປະຕິບັດຕໍ່ ໜ່ວຍ 1 ອາທິດ ເທົ່າກັບ 16 ອາທິດ ໃນ 1 .ຊົ່ວໂມງ 64 ອາທິດ ລວມມີ 16 ໃນ ,ກິດ |
| ຈຸດປະສົງ | ເມື່ອຮຽນວິຊານີ້ແລ້ວນັກສຶກສາຈະສາມາດ:<br><br>• ວິເຄາະ, ວິໄຈ ວັນນະຄະດີທີ່ເປັນຄຳຮ້ອຍກອງ - ຄຳຮ້ອຍແກ້ວໄດ້.<br>• ກຳໄດ້ບົດວັນນະຄະດີແຕ່ລະບົດພ້ອມດ້ວຍຜົນງານຂອງຜູ້ປະດິດແຕ່ງ, ໄລຍະການກຳເນີດ ແລະ ຂະຫຍາຍຕົວຂອງວັນນະຄະດີ.<br>• ວິເຄາະບົດ ແລະ ຈຳແນກບົດແຕ່ງແຕ່ລະບົດໄດ້.. |
| ເນື້ອໃນຫຍໍ້ | ວິຊານີ້ແມ່ນແນໃສ່ການວິເຄາະ ວິໄຈ ບົດກອນ ,"ເມືອງລາວສວຍງາມຮັ່ງມີ"ບົດ , ກອນ"ຫອມກິ່ນຈຳປາ" ບົດນະວະນິຍາຍ ,"ກອງພັນທີສອງ" ແລະ ບົດເລື່ອງສັ້ນ "ຜູ້ສືບທອດ". |
| ການດຳເນີນການສອນ | ວິຊານີ້ຮຽນຢູ່ 16 ອາທິດ ມີ 4 ບົດແຕ່ລະບົດມີຫຼາຍຫົວເລື່ອງຍ່ອຍໆ ທີ່ຈະສອນໃນແຕ່ລະອາທິດ ການສິດສອນຈະສົມທົບກັບຫຼາຍໆວິທີການ ແລະ ຕິດພັນກັບພາກປະຕິບັດຕົວຈິງ ໂດຍນຳໃຊ້ຫຼາຍວິທີປະສົມປະສານກັນ ເຊັ່ນ ອະທິບາຍ, ຮຽນຮ່ວມກັນເປັນກຸ່ມສົມທຽບ, ສົນທະນາ, ອ່ານ ແລະ ສັງເກດການວິໄຈບົດ ແລະ ວິເຄາະບົດ. |
| ແຜນການສອນ<br><br>ອາທິດທີ 1 | **ບົດທີ 1**<br><br>**ບົດກອນ "ເມືອງລາວສວຍງາມຮັ່ງມີ"**<br><br>1.1. ປະຫວັດຫຍໍ້ ແລະ ພາລະກິດປະດິດແຕ່ງຂອງນັກກະວີ (ພູມີ ວົງວິຈິດ)<br>1.2. ເຄົ້າກຳເນີດ ຫຼື ທີ່ມາຂອງບົດກະວີ "ເມືອງລາວສວຍງາມຮັ່ງມີ" |
| ອາທິດທີ 2 | 1.3. ການວິໄຈບົດກະວີ "ເມືອງລາວສວຍງາມຮັ່ງມີ"<br>• ຄູແນະນຳອ່ານບົດກະວີ "ເມືອງລາວສວຍງາມຮັ່ງມີ", "ບົດກອນກ່ຽວສາວແບບໃໝ່"... |

| | |
|---|---|
| ອາທິດທີ 3 | • ຄູໃຫ້ນັກຮຽນແບ່ງຕອນ ແລະ ວິໄຈບາງບົດຢູ່ໃນຫ້ອງ |
| ອາທິດທີ 4 | **ບົດທີ 1 (ຕໍ່)**<br>**ບົດກອນ "ເມືອງລາວສວຍງາມຮັ່ງມີ"**<br>1.4. ສິລະປະການປະດິດແຕ່ງ |
| ອາທິດທີ 5 | **ບົດທີ 2**<br>**ບົດກະວີ "ຫອມກິ່ນຈຳປາ"**<br>2.1. ປະຫວັດຫຍໍ້ ແລະ ພາລະກິດປະດິດແຕ່ງຂອງນັກກະວີ ພ. ພວງສະບາ<br>2.2. ເຄົ້າກຳເນີດ ຫຼື ທີ່ມາຂອງບົດກະວີ "ຫອມກິ່ນຈຳປາ" |
| ອາທິດທີ 6 | **ບົດທີ 2 (ຕໍ່)**<br>**ບົດກະວີ "ຫອມກິ່ນຈຳປາ"**<br>2. ການວິໄຈບົດກະວີ 3"ຫອມກິ່ນຈຳປາ"<br>• ຄູແນະນຳອ່ານບົດກະວີ "ຫອມກິ່ນຈຳປາ", "ແດນລາວບໍ່ລືມເຕົ້າ", " ປອງດອງໃຈຈຶ່ງໄດ້ວຽກ"... |
| ອາທິດທີ 7 | • ຄູໃຫ້ນັກຮຽນແບ່ງຕອນ ແລະ ວິເຄາະບາງບົດຢູ່ໃນຫ້ອງ |
| ອາທິດທີ 8 | **ບົດທີ 2 (ຕໍ່)**<br>**ບົດກະວີ "ຫອມກິ່ນຈຳປາ"**<br>3. ສິລະປະການປະດິດແຕ່ງ |
| ອາທິດທີ 9 | **ບົດທີ 3**<br>**ບົດນະວະນິຍາຍ "ກາງຜົນທີສອງ"**<br>1. ປະຫວັດຫຍໍ້ ແລະ ພາລະກິດປະດິດແຕ່ງຂອງນັກປະພັນ ສ.ບຸບຜານຸວົງ<br>1.1 ປະຫວັດຫຍໍ້ຂອງທ່ານ ສ.ບຸບຜານຸວົງ<br>1.2 ພາລະກິດປະດິດແຕ່ງ |

| | |
|---|---|
| | 1.3 ທ່າອ່ຽງດ້ານແນວຄິດໃນວິວັດການປະດິດແຕ່ງຂອງທ່ານ ສຸວັນທອນ ບຸບຜານຸວົງ |
| ອາທິດທີ 10 | **ບົດທີ 3 (ຕໍ່)**<br>**ບົດນະວະນິຍາຍ "ກອງພົນທີສອງ"**<br>2. ເນື້ອໃນກອງພົນທີສອງ 4 ເຫຼັ້ມໂດຍຫຍໍ້<br>1.1 ເຄົ້າທຳເນີດຂອງນະວະນິຍາຍ "ກອງພົນທີສອງ"<br>1.2 ເນື້ອໃນຄວາມໝາຍ<br>1.3 ຄຸນຄ່າດ້ານເນື້ອໃນຂອງນະວະນິຍາຍ "ກອງພົນທີສອງ" |
| ອາທິດທີ 11 | ຄູແນະນຳນັກຮຽນອ່ານບົດນະວະນິຍາຍ "ສອງຟາກຝັ່ງ", "ເສັ້ນທາງແຫ່ງຊີວິດ", "ສອງເອື້ອຍນ້ອງ", "ສີນ້ອຍ"... |
| ອາທິດທີ 12 | **ບົດທີ 3 (ຕໍ່)**<br>**ບົດນະວະນິຍາຍ "ກອງພົນທີສອງ"**<br>1.4 ໂສມໜ້າທາດແທ້ຂອງທະຫານສັດຕູທີ່ຖືກພັນລະນາຢ່າງເປີດເຜີຍອອກໃຫ້ເຫັນ<br>3. ສີລະປະການແຕ່ງ |
| ອາທິດທີ 13 | **ບົດທີ 4**<br>**ບົດເລື່ອງ "ຜູ້ສືບທອດ"**<br>3.1. ປະຫວັດຫຍໍ້ ແລະ ພາລະກິດປະດິດແຕ່ງຂອງນັກປະພັນ (ແກ້ວມະນີ ສີວົງໄຊ)<br>3.2. ເຄົ້າກຳເນີດ ຫຼື ທີ່ມາຂອງບົດ "ຜູ້ສືບທອດ" |
| ອາທິດທີ 14 | • ຄູແນະນຳນັກຮຽນອ່ານບົດເລື່ອງສັ້ນ "ຜູ້ສືບທອດ", "ແຫກຄຸກ", "ກອງພົນທີສອງ"...<br>• ໃຫ້ນັກຮຽນແບ່ງຕອນ ແລະ ວິເຄາະບາງບົດໃນຫ້ອງ |

| | |
|---|---|
| | |
| ອາທິດທີ 15 | 3.3. ສີລະປະການປະດິດແຕ່ງ |
| ອາທິດທີ 16 | ***ດູສະຫຼຸບບົດຮຽນ ແລະ ທົບທວນບົດຮຽນທົ່ນ*** |
| ການປະເມີນ | • ການມາຮຽນ 10%<br>• ກິດຈະກໍາບຸກຄົນ/ກຸ່ມ 30%<br>• ການກວດການການບ້ານ 20%<br>• ສອບເສັງຈົບໜ່ວຍກິດ 40% |
| ເອກະສານອ້າງອີງ | 1. ປຶ້ມ ໄວຍາກອນ ຂອງທ່ານ ພູມີ ວົງວິຈິດ (ປີ 1967)<br>2. ເອກະສານວັນນະຄະດີປັດຈຸບັນ 2<br>3. ປຶ້ມແບບຮຽນວັນນະຄະດີ ມ.6 ພິມປີ 1999. |
| ຊື່ຄູສອນ | ອາຈານ ໃພໄຊ ເພັດຄໍາພູ 9979 9629 020<br>ອາຈານ ພອນສະຫວັນ ກໍາກ້ຽງຍິມ 020 2222 6226<br>ອາຈານ ປະຢັດ ລັດຕະນາ 020 9815 0505<br>ອາຈານ ພິມມາ ສໍສີມມີ 020 9958 6896<br>ອາຈານ ມະນີວັນ ອິນທິລາດ 5828 5544 020 |